ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

DRAFT

"ຮ່າງສະບັບທີ 3"

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015)

ກະຊວງແຜນການ ແລະ ການລົງທຶນ

ວຽງຈັນ, ວັນທີ 6 ພຶດສະພາ 2010

# ສາລະບານ


ອະລຳພະບົດ ..... IX

ພາກທີໜຶ່ງ: ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010) ..... 1

I. ສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ ..... 1

*1. ສະພາບແວດລ້ອມສາກົນ ແລະ ພາກພື້ນ ..... 1*

[1]. ຂໍ້ສະດວກ ..... 1

[2]. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ ..... 1

*2. ສະພາບແວດລ້ອມພາຍໃນປະເທດ ..... 2*

[1]. ຂໍ້ສະດວກ ..... 2

[2]. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ ..... 2

II. ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VI ..... 4

*1. ການຂະຫຍາຍຕົວດ້ານເສດຖະກິດມະຫາພາກ ..... 4*

1.1. ການເຕີບໂຕທາງດ້ານເສດຖະກິດ ..... 4

1.2. ການປ່ຽນແປງໂຄງປະກອບທາງດ້ານເສດຖະກິດ. ..... 5

1.3. ການຂະຫຍາຍຕົວຂອງຂະແໜງເງິນຕາ ..... 6

*2. ການດຸ່ນດ່ຽງພື້ນຖານເສດຖະກິດ ..... 8*

2.1. ການດຸ່ນດ່ຽງແຮງງານ ແລະ ສ້າງວຽກເຮັດງານທຳ ..... 8

2.2. ການດຸ່ນດ່ຽງແຫລ່ງທຶນເພື່ອການພັດທະນາ ..... 9

2.3. ການດຸ່ນດ່ຽງງົບປະມານແຫ່ງລັດ ..... 11

2.4. ການດຸ່ນດ່ຽງຂາເຂົ້າ-ຂາອອກ ..... 12

*3. ການພັດທະນາຕາມຂະແໜງການຕົ້ນຕໍ, ຂົງເຂດ ແລະ ເຂດແຄວ້ນ ..... 15*

3.1. ການພັດທະນາຂະແໜງການ ..... 15

3.1.1. ດ້ານກະສິກຳ-ປ່າໄມ້ ..... 15

3.1.2. ດ້ານອຸດສາຫະກຳ ..... 19

3.1.3. ດ້ານການບໍລິການ ..... 22

3.1.4. ການເຊື່ອມໂຍງເສດຖະກິດ ເຂົ້າກັບພາກພື້ນ ແລະ ສາກົນ ..... 29

3.1.5. ການກໍ່ສ້າງພື້ນຖານໂຄງລ່າງ: ..... 32

3.2. ການພັດທະນາພາກ ແລະ ເຂດແຄວ້ນ ..... 34

[1]. ອັດຕາສ່ວນເສດຖະກິດ ຂອງພາກເໜືອ, ກາງ ແລະ ໃຕ້ ..... 34


DRAFT

[2]. ການຫັນປ່ຽນໂຄງປະກອບເສດຖະກິດຂອງເຂດແຄ້ວ ..... 35
[3]. ການຈັດຕັ້ງປະຕິບັດບັນດາໂຄງການ ແລະ ກິດຈະກຳທີ່ພົ້ນເດັ່ນ ..... 36
**3.3. ການພັດທະນາຂົງເຂດສັງຄົມ ..... 38**
3.3.1. ການພັດທະນາຊົນນະບົດ-ລົບລ້າງຄວາມທຸກຍາກ ແລະ ການພັດທະນາເຂດຈຸດສຸມ ..... 38
3.3.2. ດ້ານການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ ..... 45
3.3.3. ດ້ານສາທາລະນະສຸກ ..... 45
3.3.4. ດ້ານວິທະຍາສາດ ແລະເຕັກໂນໂລຊີ ..... 46
3.3.5. ດ້ານຊັບພະຍາກອນ ແລະ ສິ່ງແວດລ້ອມ ..... 46
3.3.6. ດ້ານແຮງງານ ແລະ ສະຫວັດດີການສັງຄົມ ..... 47
3.3.7. ດ້ານຖະແຫຼ່ງຂ່າວ ແລະ ວັດທະນະທຳ ..... 49
3.3.8. ດ້ານກິລາການຍະກຳ ..... 51
3.3.9. ດ້ານການສະກັດກັ້ນ ແລະ ຕ້ານໄພສັງຄົມ ..... 52
**3.4. ການສົມທົບລະຫວ່າງການພັດທະນາເສດຖະກິດ-ສັງຄົມກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ..... 53**
***4. ການຄຸ້ມຄອງບໍລິຫານລັດ ໃນທົ່ວໄກເສດຖະກິດຕະຫຼາດຕາມທິດ ສັງຄົມນິຍົມ ..... 54***
**ກ. ດ້ານການບູລະນະກົງຈັກ ແລະ ບໍລິຫານຄຸ້ມຄອງລັດ: ..... 54**
**ຂ. ດ້ານນິຕິບັນຍັດ: ..... 54**
**ຄ. ດ້ານຕຸລາການ: ..... 55**
**ງ. ທົ່ວໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ: ..... 55**
***5. ການພັດທະນາພາກເອກະຊົນ ..... 56***
***6. ການປະຕິບັດ 11 ແຜນງານ ແລະ 111 ໂຄງການ ..... 59***
***7. ສັງລວມຜົນສຳເລັດທີ່ພົ້ນເດັ່ນ ແລະ ສາຍເຫດພາໃຫ້ບັນລຸຜົນ ..... 59***
**7.1. ຜົນສຳເລັດທີ່ພົ້ນເດັ່ນ: ..... 59**
**7.2. ສາເຫດທີ່ພາໃຫ້ໄດ້ຮັບຜົນສຳເລັດ: ..... 60**
**III. ຈຸດອ່ອນ, ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 2006-2010 ແລະ ສາເຫດ ..... 60**
***1. ຈຸດອ່ອນ ແລະ ຂໍ້ຄົງຄ້າງ ..... 60***
**1.1. ຂໍ້ຄົງຄ້າງທີ່ຕິດພັນກັບບາງຄາດໝາຍມະຫາພາກ ..... 60**
**1.2. ຂໍ້ຄົງຄ້າງທີ່ຕິດພັນກັບບັນດາຂະແໜງການ ແລະ ການພັດທະນາທ້ອງຖິ່ນ ..... 61**
**1.3. ຂໍ້ຄົງຄ້າງການຈັດຕັ້ງປະຕິບັດ 11 ແຜນງານ ແລະ 111 ໂຄງການ ..... 63**
**1.4. ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດການແກ້ໄຂອຸທົກກະໄພ ໃນປີ 2009 ..... 63**

DRAFT

1.5. ສັງລວມຈຸດອ່ອນ-ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ..... 63
*2. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ:* ..... *64*
IV. ບົດຮຽນທີ່ຖອດຖອນໄດ້ ..... 64
ພາກທີ ສອງ: ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ..... 68
I. ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ..... 68
*1. ຄາດຄະເນສະພາບແວດລ້ອມທີ່ອຳນວຍ ແລະ ສິ່ງທ້າທາຍ* ..... *68*
1.1. ສະພາບແວດລ້ອມທີ່ອຳນວຍ(ຂໍ້ສະດວກ): ..... 68
1.2. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ ..... 70
*2. ຈຸດໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII* ..... *72*
*3. ທິດທາງ ແລະ ໜ້າທີ່ລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII* ..... *72*
*4. ຄາດໝາຍສູ້ຊົນ ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII* ..... *74*
4.1. ຄາດໝາຍສູ້ຊົນດ້ານເສດຖະກິດມະຫາພາກ ..... 74
4.2. ຄາດໝາຍສູ້ຊົນດ້ານຂະແໜງການເສດຖະກິດ ..... 74
4.3. ຄາດໝາຍສູ້ຊົນດ້ານສັງຄົມ ..... 75
4.4. ຄາດໝາຍສູ້ຊົນດ້ານສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ..... 76
4.5. ຄາດໝາຍສູ້ຊົນການເຊື່ອມໂຍງສາກົນ ..... 77
*5. ຄາດຄະເນການດຸ່ນດ່ຽງມະຫາພາກ* ..... *77*
5.1. ການດຸ່ນດ່ຽງການເງິນ ..... 77
5.2. ການດຸ່ນດ່ຽງງົບປະມານແຫ່ງລັດ ..... 79
5.3. ການດຸ່ນດ່ຽງການຊົມໃຊ້ ແລະ ການສະສົມ ..... 80
5.4. ການດຸ່ນດ່ຽງຂາອອກ-ຂາເຂົ້າ ..... 80
5.5. ການດຸ່ນດ່ຽງແຮງງານ ..... 80
II. ທິດທາງ ແລະ ໜ້າທີ່ຕົ້ນຕໍ ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ..... 81
*1. ການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ຫລຸດຜ່ອນຄວາມດ້ອຍພັດທະນາ* ..... *81*
*2. ການພັດທະນາຂະແໜງການ* ..... *84*
2.1. ການພັດທະນາຂົງເຂດເສດຖະກິດ ..... 84
2.1.1. ກະສິກຳ-ປ່າໄມ້ ..... 84
2.1.2. ອຸດສາຫະກຳ ແລະ ການຄ້າ ..... 88
2.1.3. ພະລັງງານ-ບໍ່ແຮ່ ..... 91
2.1.4. ການຄຸ້ມຄອງ ແລະ ການພັດທະນາທີ່ດິນ ..... 93

DRAFT

2.1.5. ໂຍທາທິການ-ຂົນສົ່ງ ..... 94
2.1.6. ໄປສະນີ ແລະ ໂທລະຄົມມະນາຄົມ ..... 98
2.1.7. ການທ່ອງທ່ຽວ ..... 100
2.1.8. ການເງິນ-ການທະນາຄານ ..... 101
**2.2. ການພັດທະນາຂົງເຂດສັງຄົມ ..... 104**
2.2.1. ການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ ..... 104
2.2.2. ສາທາລະນະສຸກ ແລະ ໂພຊະນາການ ..... 106
2.2.3. ແຮງງານ ແລະ ສະຫວັດດີການສັງຄົມ ..... 109
2.2.4. ຖະແຫຼ່ງຂ່າວ ແລະ ວັດທະນະທຳ ..... 111
2.2.5. ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ ..... 114
2.2.6. ການພັດທະນາເຍົາວະຊົນ ແລະ ຊາວໜຸ່ມ ..... 117
2.2.7. ການພັດທະນາກິລາການາຍະກຳ ..... 118
2.2.8. ວິທະຍາສາດ ແລະ ເຕັກໂນໂລຊີ ..... 119
2.2.9. ການເສີມສ້າງຄວາມສາມັກຄີທົ່ວປວງຊົນ ..... 120
2.2.10.ການແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມ ..... 121
**2.3. ການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການພັດທະນາແບບຍືນຍົງ ..... 123**
***3. ການພັດທະນາວິສາຫະກິດ ..... 127***
**3.1. ວິສາຫະກິດຂອງລັດ ..... 127**
**3.2. ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs): ..... 129**
**3.3. ວິສາຫະກິດປະຊາຊົນ, ວິສາຫະກິດປະສົມ ແລະ ຫຸ້ນສ່ວນ ..... 130**
***4. ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ ..... 132***
**4.1. ການພັດທະນາຕາມພາກ ..... 132**
4.1.1. ເຂດພາກເໜືອ ..... 133
4.1.2. ເຂດພາກກາງ ..... 139
4.1.3. ເຂດພາກໃຕ້ ..... 143
**4.2. ການພັດທະນາຕາມພູມສັນຖານ ..... 147**
**4.3. ການພັດທະນາຕົວເມືອງ ..... 148**
**4.4. ການສ້າງບ້ານພັດທະນາ ແລະ ເຂດຈຸດສຸມ ..... 150**
4.4.1. ການສ້າງບ້ານພັດທະນາ ..... 150
4.4.2. ການພັດທະນາເຂດຈຸດສຸມ ..... 152
**4.5. ການພັດທະນາເຂດເສດຖະກິດພິເສດ ..... 152**
***5. ການພັດທະນາຂົງເຂດລັດ ..... 155***

DRAFT

5.1. ຂົງເຂດບໍລິຫານ ..... 155
5.1.1. ການສ້າງຄວາມຍຸຕິທຳ ແລະ ຄວາມສະເໝີພາບໃນສັງຄົມ ..... 155
5.1.2. ການຍົກສູງປະສິດທິພາບໃນການຄຸ້ມຄອງລັດ ..... 156
5.1.3. ການສົ່ງເສີມຄວາມສາມາດ ແລະ ຄວາມເປັນເຈົ້າການຂອງການບໍລິຫານຂັ້ນເມືອງ ແລະ ບ້ານ ..... 157
5.1.4. ການກໍ່ສ້າງ ແລະ ຝຶກອົບຮົມຍົກລະດັບຄວາມສາມາດຂອງຜູ້ບໍລິຫານຂັ້ນຕ່າງໆ ..... 157
5.2. ຂົງເຂດການປົກປ້ອງກົດໝາຍ ..... 158
5.2.1. ດ້ານໄອຍະການ ..... 158
5.2.2. ດ້ານສານປະຊາຊົນ ..... 159
5.3. ຂົງເຂດນິຕິບັດຍັດ ..... 160
*6. ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ..... 161*
6.1. ການປ້ອງກັນຊາດ ..... 161
6.2. ການປ້ອງກັນຄວາມສະຫງົບ ..... 163
*7. ການຮ່ວມມືກັບສາກົນ ແລະ ພາກພື້ນ ..... 164*
7.1. ການຮ່ວມມືກັບປັນດາຄູ່ຮ່ວມພັດທະນາ: ..... 164
7.2. ການຮ່ວມມືໃນຂອບອາຊຽນ: ..... 165
7.3. ການຮ່ວມມືໃນຂອບຂອງການພັດທະນາອະນຸພາກພື້ນແມ່ນ້ຳຂອງ ( GMS ) ..... 166
7.4. ການກະກຽມເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ..... 167
7.5. ການພັດທະນາສາມຫລ່ຽມລາວ-ຫວຽດນາມ-ກຳປູເຈຍ ແລະ ຂົງເຂດອື່ນໆໃຫ້ສຸມໃສ່ປະຕິບັດຍຸດທະສາດໂດຍຮອດປີ 2020 ແລະ ພັນທະອື່ນໆທີ່ໄດ້ກຳນົດໄວ້ກັບປະເທດພາຄີດັ່ງກ່າວ. ..... 168
*8. ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ..... 168*
III. ມາດຕະການ ແລະ ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ..... 171
*1. ການລະດົມທຶນ ແລະ ຍົກສູງປະສິດທິຜົນຂອງການນຳໃຊ້ທຶນ ..... 171*
*2. ຍຶດໝັ້ນແນວທາງປ່ຽນແປງໃໝ່ທາງດ້ານເສດຖະກິດຮັບປະກັນທິດສັງຄົມນິຍົມ ..... 173*
*3. ປະຕິບັດນະໂຍບາຍການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສົ່ງເສີມການນຳໃຊ້ວິທະຍາສາດເຕັກໂນໂລຊີ ..... 173*
*4. ພັດທະນາຊັບພະຍາກອນມະນຸດ, ສ້າງພະນັກງານບຸກຄະລະກອນ ..... 174*
*5. ເພີ່ມຄວາມສາມາດ ແລະ ປະສິດທິພາບຂອງການຄຸ້ມຄອງລັດ ຕໍ່ເສດຖະກິດ ..... 175*
*6. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ແລະ ການແບ່ງຂັ້ນຄຸ້ມຄອງ ..... 176*

DRAFT

6.1. ການແບ່ງຂັ້ນຄຸ້ມຄອງ ແລະ ຄວາມຮັບຜິດຊອບຂອງແຕ່ລະຂັ້ນ ..... 176
6.2. ການປະສານງານລະຫວ່າງສາຍຕັ້ງ-ສາຍຂວາງໃນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການ ..... 177
6.3. ການຕິດຕາມ ແລະ ການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ຄັ້ງທີ VII ..... 178
*7. ເພີ່ມທະວີການພົວພັນຮ່ວມມືເສດຖະກິດສາກົນຍາດແຍ່ງການຊ່ວຍເຫລືອ ສະໜັບສະໜູນຈາກ ເພື່ອນມິດ ແລະ ຄູ່ຮ່ວມພັດທະນາ ..... 179*
*8. ຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ໃຫ້ເຂົ້າສູ່ພາກຕົວຈິງຂອງ ຂະແໜງການ ແລະທ້ອງຖິ່ນ-ຮາກຖານ ..... 180*

DRAFT

# ຂໍ້ມູນຄົ້ນຄ້ວາ ແລະ ຕາຕະລາງຊ້ອນທ້າຍ

## ຕາຕະລາງ


ຕາຕະລາງ 1: ສົມທຽບອັດຕາການເຕີບໂຕຂອງ ລວມຍອດຜະລິດຕະພັນພາຍໃນ ລະຫວ່າງການຈັດຕັ້ງ ປະຕິບັດ ແລະ ຄາດໝາຍຂອງແຜນການ 5 ປີ ຄັ້ງທີ VI(2006-2010) ..... 4
ຕາຕະລາງ 2: ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນ (ສົມທຽບແຜນ ແລະ ປະຕິບັດ) ..... 5
ຕາຕະລາງ 3: ອັດຕາສ່ວນແຮງງານຕາມຂະແໜງການ ..... 9
ຕາຕະລາງ 4: ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ແຕ່ 2006-2010 ..... 10
ຕາຕະລາງ 5: ໂຄງປະກອບການສົ່ງອອກ ຂອງ ສປປ ລາວ ແບ່ງຕາມຜະລິດຕະພັນ ..... 12
ແຕ່ປີ 2005-2009 (%) ..... 13
ຕາຕະລາງ 6: ໂຄງປະກອບການນຳເຂົ້າ ຂອງ ສປປ ລາວ ແບ່ງຕາມຜະລິດຕະພັນ ..... 13
ແຕ່ປີ 2005-2009 (%) ..... 13
ຕາຕະລາງ 7: ສົມທຽບການເປີດປະເທດທາງດ້ານການຄ້າ ຫຼື ການເຊື່ອມໂຍງ ໃນໄລຍະ 2006-2008 ..... 31
ຕາຕະລາງ 8: ໂຄງປະກອບຂອງຕະຫຼາດສົ່ງອອກ ກັບປະເທດຄູ່ຄ້າຫຼັກ ປີ 2008 ..... 32
ຕາຕະລາງ 9: ໂຄງປະກອບເສດຖະກິດ ແລະ ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ຕາມພາກ ສະເລ່ຍ ແຕ່ 2006-2010 ..... 36


## ຮູບສະແດງ


ຮູບສະແດງ 1: ຮູບທາດອາຍຸຂອງພົນລະເມືອງລາວ ປີ 2010 ..... 3
ຮູບສະແດງ 2: ໂຄງປະກອບທາງດ້ານເສດຖະກິດ ແຕ່ 2006-2010 ..... 6
ຮູບສະແດງ 3: ມູນຄ່າການສົ່ງອອກ ແລະ ນຳເຂົ້າສິນຄ້າ ແຕ່ປີ 2005-2009 ..... 14
ຮູບສະແດງ 4: ຂະໜາດ ສະເລ່ຍຂອງເນື້ອທີ່ກະສິກຳ ຕໍ່ຄົວເຮືອນ ..... 16
ຮູບສະແດງ 5: ໂຄງປະກອບມູນຄ່າເພີ່ມຂອງຂະແໜງອຸດສາຫະກຳ ສະເລ່ຍ ແຕ່ 2006-2010 ..... 19
ຮູບສະແດງ 6: ໂຄງປະກອບການຜະລິດຂົງເຂດຂະແໜງບໍລິການ ແຕ່ 2006-2010 ..... 23
ຮູບສະແດງ 7: ອັດຕາສ່ວນຄວາມທຸກຍາກ ແຕ່ປີ 1992-1993 ຫາ 2007-2008 ..... 40
ຮູບສະແດງ 8: ຮູບທາດອາຍຸ ພົນລະເມືອງໃນປີ 2015 ..... 70


DRAFT

# ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 1: ສົມທຽບຄາດໝາຍ ລະຫວ່າງ ການການຈັດຕັ້ງປະຕິບັດ ແລະ ແຜນການ 5 ປີ ຄັ້ງ ທີ VI .....182
ເອກະສານຊ້ອນທ້າຍ 2: ຕາຕະລາງສັງລວມຄວາມທຸກຍາກ, ຊ່ອງຫວ່າງ, ຄວາມຮຸນແຮງຂອງຄວາມທຸກຍາກ ແລະ ຄວາມແຕກໂຕນຂອງສັງຄົມ.....188
ເອກະສານຊ້ອນທ້າຍ 3: ຄາດໝາຍແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015).....190
ເອກະສານຊ້ອນທ້າຍ 4: ບັນດາເປົ້າໝາຍ, ຄາດໝາຍ ແລະ ຕົວຊີ້ວັດໃນ MDGs.....192
ເອກະສານຊ້ອນທ້າຍ 5: ຕາຕະລາງສັງລວມຄວາມຕ້ອງການທຶນເປັນແຂວງ ແລະ ກະຊວງ-ອົງການ.....201

DRAFT

# ອະລຳພະບົດ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VI (2006-2010) ສ້າງຂຶ້ນບົນເປົ້າໝາຍ ລວມ ຂອງຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຮອດປີ 2020 ແລະ ມະຕິ 8 ຂອງພັກ, ໂດຍໄດ້ ຖືກຮັບຮອງເອົາໂດຍກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດຊຸດທີ VI ໃນເດືອນ ກໍລະກົດ 2006; ແຜນດັ່ງກ່າວຖືໄດ້ວ່າເປັນແຜນບຸກທະລຸ ແລະຕອບສະໜອງທັດສະນະຂອງພັກທີ່ຍຶດໝັ້ນໃນການພັດທະນາ, ຖືເອົາເສດຖະກິດເປັນໃຈກາງ ແລະ ຍູ້ການເຕີບໂຕຂອງເສດຖະກິດ ໃຫ້ບັນລຸສະເລ່ຍ 7,5% ຕໍ່ປີ; ຈາກນັ້ນ, ລັດຖະບານກໍ່ໄດ້ຂະຫຍາຍອອກເປັນແຜນງານ ແລະ ໂຄງການລະອຽດເພື່ອຈັດຕັ້ງປະຕິບັດໃນແຕ່ລະສົກປີ. ພາຍໃຕ້ການຊີ້ນຳນຳພາຂອງພັກ ແລະ ລັດຖະບານ, ເຖິງແມ່ນວ່າຈະມີສິ່ງທ້າທາຍທົດສອບຫຼາຍປະການກໍ່ຕາມ, ດ້ວຍຄວາມບຸກບືນພະຍາຍາມສູງຂອງບັນດາຂະແໜງການ, ທ້ອງຖິ່ນ ແລະ ປະຊາຊົນທົ່ວປະເທດ ເຮັດໃຫ້ແຜນດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ສາມາດບັນລຸຜົນຕາມຄາດໝາຍໃຫຍ່ທີ່ກຳນົດໄວ້. ຄຽງຄູ່ກັນນັ້ນ, ກໍ່ຍັງມີບາງບັນຫາທີ່ຍັງຄ້າງຄ້າ ເຊິ່ງຈະຕ້ອງສືບຕໍ່ແກ້ໄຂໃນຕໍ່ໜ້າ. ບົດຮຽນໃນການຈັດຕັ້ງ ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ຈະເປັນພື້ນຖານທີ່ດີໃຫ້ແກ່ການພັດທະນາເສດຖະ ກິດ-ສັງຄົມ ໃນໄລຍະ 5 ປີຕໍ່ໜ້າ (2011-2015).

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015) ເປັນແຜນສືບຕໍ່ໜ້າກ ຜົນທີ່ຍາດມາໄດ້ໃນແຜນການ 6 ຄັ້ງຜ່ານມາ, ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ເປັນມາດຕະການຈັດຕັ້ງປະຕິບັດຍຸດທະສາດພັດທະນາເສດຖະກິດ-ສັງຄົມຮອດປີ 2020 ແລະ ຍຸດທະສາດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສ້າງໃຫ້ມີການຫັນປ່ຽນໃໝ່ຢ່າງໜັກແໜ້ນໃນ ການນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020, ເປີດກວ້າງການ ເຊື່ອມໂຍງກັບພາກພື້ນ-ສາກົນ.

ຄຸນລັກສະນະຂອງແຜນການ 5 ປີຄັ້ງນີ້ ຍັງເປັນແຜນສືບຕໍ່ **“ ບຸກທະລຸ ”**, ຊຶ່ງມີເປົ້າໝາຍສ້າງໃຫ້ໄດ້ ອັດຕາການເຕີບໂຕຂອງເສດຖະກິດແຫ່ງຊາດໄວ ແລະ ບັນລຸ 8% ຕໍ່ປີຂຶ້ນໄປ, ຮັກສາສະຖຽນລະພາບ ຄວາມໝັ້ນຄົງຂອງປະເທດ, ເປັນການພັດທະນາທີ່ເນັ້ນຫນັກຄຸນນະພາບ, ຄວາມຍືນຍົງ, ສູ້ຊົນບັນລຸເປົ້າ ໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ໃນປີ 2015 ແລະ ສ້າງປະຖົມປັດໄຈເບື້ອງຕົ້ນໃຫ້ການ ຫັນປະເທດເປັນອຸດສາຫະກຳ ແລະ ທັນສະໄໝໃນອານາຄົດ.

ໂຄງປະກອບຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ປະກອບ ດ້ວຍ: ພາກສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010), ແລະ ພາກແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015), ໃນພາກນີ້ປະກອບດ້ວຍ ການຄຳນວນສະພາບແວດລ້ອມພາຍໃນ ແລະ ຕ່າງປະເທດ, ກຳນົດຈຸດໝາຍ ແລະ ໜ້າທີ່ລວມ, ຄາດໝາຍ ດ້ານມະຫາພາກ, ໜ້າທີ່ການພັດທະນາຂະແໜງການ ແລະ ທ້ອງຖິ່ນ, ມາດຕະການ ແລະ ກົນໄກຈັດ ຕັ້ງ ປະຕິບັດ. ເບິ່ງລວມແລ້ວໂດຍຮ່າງສ່ວນໃຫຍ່ແມ່ນຍັງຮັກສາຕາມປະເພນີທີ່ເຄີຍເຮັດຜ່ານມາ. ສຳລັບບັນຫາ ໃ ໝ່ໄດ້ກຳນົດຕື່ມ :

- ການດຸ່ນດ່ຽງຕ່າງໆ ໃນແຜນຄັ້ງທີ VII ໄດ້ກຳນົດແຈ້ງຕື່ມທຽບໃສ່ແຜນຄັ້ງທີ VI.
- ການພັດທະນາອີສາຫະກິດ, ການພັດທະນາເຂດເສດຖະກິດພິເສດ, ການພັດທະນາເຂດຈຸດຈຸມ ,
- ໄດ້ເພີ່ມຄາດໝາຍການເຊື່ອມໂຍງກັບສາກົນ, ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ;

ພ້ອມກັນນັ້ນ, ໃນແຜນຄັ້ງທີ VII ນີ້ຈະພະຍາຍາມຫລຸດຜ່ອນບັນດາແຜນງານທີ່ກວມເອົາຫຼາຍຂະແໜງ ການມາເປັນແຜນງານ ຫລື ໂຄງການ ຂອງຂະແໜງການ ຕາມກົດໝາຍການລົງທຶນຂອງລັດເປັນຫລັກ .

ໃນວິທີການຂຽນແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນໄດ້ໃຊ້ຄວາມພະຍາຍາມໃຫ້ຕິດພັນກັບ ແຜນວຽກ, ແຜນທຶນ ແລະ ແຜນຄົນຮັບຜິດຊອບໄປພ້ອມໆກັນ (ມີທິດທາງ, ແຜນງານ-ໂຄງການ ແລະ ມາດ ຕາການຈັດຕັ້ງປະຕິບັດ)...

ໃນການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VII ຄາດວ່າຈະມີຂໍ້ສະດວກກວ່າເກົ່າ: ປະເທດເຮົາມີສະ ຖຽນລະພາບທາງດ້ານການເມືອງ, ມີຄວາມເປັນລະບຽບຮຽບຮ້ອຍດ້ານສັງຄົມ, ປະຊາຊົນ ແລະ ເພື່ອນມິດໃຫ້ ການສະໜັບສະໜູນໜຽວແໜ້ນ, ພື້ນຖານໂຄງລ່າງ, ວັດຖຸເຕັກນິກ, ບຸກຄະລາກອນ, ລະບຽບກົດໝາຍ.... ທີ່ສ້າງຂຶ້ນໄລຍະຜ່ານມາເປັນພື້ນຖານກ້າວຂຶ້ນໄດ້ດີກວ່າ. ແຕ່ເຖິງຢ່າງໃດກໍ່ຕາມ, ການຈັດຕັ້ງປະຕິບັດແຜນ 5 ປີຄັ້ງທີ VII ຄາດວ່າຈະພົບກັບສິ່ງທ້າທາຍທົດສອບ ແລະ ຂໍ້ຫຍຸ້ງຍາກຫລາຍປະການ: ການທົດຖອຍຂອງ ເສດຖະກິດໂລກຈາກວິກິດການການເງິນໂລກຄັ້ງໃຫຍ່, ອາດມີໄພພິບັດທາງທຳມະຊາດ, ໜີ້ສິນເກົ່າທີ່ຍັງຄຸມ ເຄືອ, ໜີ້ສິນໃໝ່ເກີດຂຶ້ນ...

ສັງລວມແລ້ວການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ເປັນແຜນການໜຶ່ງທີ່ມີຄວາມກົມກຽວລະຫວ່າງຈຸດປະສົງຄາດໝາຍ, ພາຫະນະ ແລະ ມາດຕະການປະຕິບັດ, ຕ້ອງການການລົງທຶນເທົ່າຕົວທຽບໃສ່ແຜນການ 5 ປີຄັ້ງທີ VI, ບົດຮຽນທີ່ສະສົມໄດ້, ສົມທົບກັບຄວາມຮຽກ ຮ້ອງຕ້ອງການ, ຄວາມບຸກບືນທ່ວມສັງຄົມຈະເຮັດໃຫ້ພື້ນຖານເສດຖະກິດແຫ່ງຊາດຈະໄດ້ຮັບການປັບປຸງໃຫ້ໜັກ ແໜ້ນເຂັ້ມແຂງຂຶ້ນຕື່ມ, ການພັດທະນາວັດທະນະທຳ-ສັງຄົມ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າຈະ ໄດ້ຮັບການຍົກລະດັບໃຫ້ດີຂຶ້ນຕື່ມອີກກ້າວໜຶ່ງ ແລະ ຈະສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການຫັນເປັນອຸດ ສາຫະກຳ ແລະ ທັນສະໄໝ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບດີຂຶ້ນກວ່າເກົ່າ. ປະເທດເຮົາຈະສາ ມາດບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໃນປີ 2015 ແລະ ຈະນຳອົາພາລະກິດປົກປັກຮັກ ສາແລະສ້າງສາປະເທດຊາດບັນລຸຜົນອີກຂັ້ນໜຶ່ງໄດ້.

DRAFT

# ພາກທີໜຶ່ງ: ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010)

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VI (2006-2010) ໄດ້ຖືກຮັບຮອງໂດຍກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດຊຸດທີ VI ຕາມມະຕິເລກທີ 11/ສພຊ-VI, ລົງວັນທີ 3 ກໍລະກົດ 2006; ແຜນການດັ່ງກ່າວນີ້ໄດ້ກຳນົດຄາດໝາຍຕົ້ນຕໍ ແລະ ເປົ້າໝາຍລວມຄື: ການເຕີບໂຕທາງດ້ານເສດຖະກິດຂອງປະເທດສະເລ່ຍ 7,5-8,0% ຕໍ່ປີ; ໃນນັ້ນ, ກະສິກຳ-ປ່າໄມ້ 3,0-3,4%, ອຸດສາຫະກຳ 13,0-14,0% ແລະ ການບໍລິການ 7,5-8,0%..., ໄດ້ຈັດຕັ້ງປະຕິບັດໃນສະພາບທີ່ມີທັງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຫລາຍປະການ, ດ້ວຍຄວາມຕັດສິນໃຈບຸກບືນຂອງທົ່ວພັກ, ລັດ, ປະຊາຊົນ ແລະ ການສະໜັບສະໜູນຈາກບັນດາເພື່ອນມິດ, ຄູ່ຮ່ວມພັດທະນາເຮັດໃຫ້ພວກເຮົາຍາດໄຊຊະນະມາໄດ້ຫລາຍປະການ, ພ້ອມນັ້ນກໍ່ມີຈຸດອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນສຳຄັນຈຳນວນໜຶ່ງ.

## I. ສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ

### 1. ສະພາບແວດລ້ອມສາກົນ ແລະ ພາກພື້ນ

#### [1]. ຂໍ້ສະດວກ

(1) ການຮ່ວມມືກັບສາກົນຂອງ ສປປ ລາວ ເຮົາຍັງຢູ່ໃນສະພາບທີ່ດີ ແລະ ເພີ່ມຂຶ້ນ ໂດຍສະເພາະແມ່ນການເຊື່ອມໂຍງເສດຖະກິດກັບອາຊຽນ.

(2) ປະເທດເຮົາມີຕະຫຼາດສາກົນກວ້າງກວ່າເກົ່າ, ການຊ່ວຍເຫລືອລ້າ ແລະ ກູ້ຢືມດ້ວຍອັດຕາດອກເບ້ຍຜ່ອນຜັນມີຫລາຍຂຶ້ນ ແລະ ການລົງທຶນໂດຍກົງຂອງຕ່າງປະເທດກໍ່ເພີ່ມຂຶ້ນທຽບໃສ່ໄລຍະຜ່ານມາ.

(3) ຂະບວນການວິວັດທາງດ້ານວິທະຍາສາດເຕັກໂນໂລຊີ ໂດຍສະເພາະແມ່ນ ດ້ານຂໍ້ມູນຂ່າວສານ ແລະ ຊີວະພາບວັດສະດຸໃໝ່ ໄດ້ມີການຂະຫຍາຍຕົວຢ່າງແຂງແຮງ, ຂະບວນການຫັນໄປສູ່ເສດຖະກິດພູມປັນຍາມີທ່າອ່ຽງຂະຫຍາຍຕົວຢ່າງກວ້າງຂວາງໃນທົ່ວໂລກນີ້.

(4) ບັນດາປະເທດເພື່ອນມິດຍຸດທະສາດມີພື້ນຖານເສດຖະກິດຂະຫຍາຍຕົວແຮງ, ໄດ້ສືບຕໍ່ໃຫ້ການສະໜັບສະໜູນປະເທດເຮົາໃນຫຼາຍດ້ານຂຶ້ນກວ່າເກົ່າ.

#### [2]. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ

(1) ຄວາມຂັດແຍ່ງດ້ານການເມືອງຢູ່ໃນໂລກ ແລະ ສົງຄາມຢູ່ບາງພູມີພາກ ໄດ້ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງບັນດາປະເທດຕ່າງໆໃນໂລກ ລວມທັງ ສປປ ລາວ.

(2) ພື້ນຖານເສດຖະກິດຂອງປະເທດເຮົາຍັງອ່ອນນ້ອຍ ແຕ່ຢູ່ໃນທ່າມກາງການແຂ່ງຂັນສູງໃນເວທີເສດຖະກິດໂລກ ເຮັດໃຫ້ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ມີຫລາຍອັນຫຍຸ້ງຍາກ.

(3) ໃນໄລຍະ 5 ປີຜ່ານມານີ້ ໂລກໄດ້ປະສົບກັບພາວະເສດຖະກິດຖົດຖອຍ ແລະ ວິກິດການ ການເງິນໂລກທີ່ເປັນປະຫວັດການ ໄດ້ສົ່ງຜົນກະທົບໜັກໜ່ວງຕໍ່ປະເທດຕ່າງໆ ລວມທັງ ສປປ ລາວ ໂດຍສະເພາະຂະແໜງການສົ່ງອອກ ແລະ ໂຄງການລົງທຶນໃຫຍ່ຈຳນວນໜຶ່ງ.

(4) ຄວາມຮຽກຮ້ອງຕ້ອງການທາງດ້ານແຫລ່ງວັດຖຸດິບຂອງພາກພື້ນ ແລະ ບັນດາປະເທດໃກ້ຄຽງຢູ່ໃນລະດັບສູງ ເຮັດໃຫ້ການຊອກຄົ້ນ ແລະ ນຳໃຊ້ແຫຼ່ງຊັບພະຍາກອນຢູ່ ສປປ ລາວ ມີຄວາມເຄັ່ງຕຶງຂຶ້ນ ທັງ ສົ່ງຜົນກະທົບຕໍ່ສະພາບແວດລ້ອມ.

## 2. ສະພາບແວດລ້ອມພາຍໃນປະເທດ

### [1]. ຂໍ້ສະດວກ

(1) ແນວທາງນະໂຍບາຍພາຍໃນ ແລະ ຕ່າງປະເທດ ທີ່ກຳນົດຢູ່ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ ແມ່ນຖືກຕ້ອງ ແລະ ແທດເໝາະກັບສະພາບຕົວຈິງ.

(2) ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010) ໄດ້ຖືກຮັບຮອງໂດຍສະພາແຫ່ງຊາດຢ່າງເປັນທາງການ ໃນປີ 2006.

(3) ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ຫັນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ເປັນແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງນຳພາປະຕິບັດແຜນງານ ແລະ ໂຄງການດັ່ງກ່າວເປັນຢ່າງດີ.

(4) ແຜນພັດທະນາໄດ້ຮັບການສະໜັບສະໜູນຈາກພາຍໃນ ແລະ ຕ່າງປະເທດ ຢ່າງສະເໝີຕົ້ນສະເໝີປາຍ.

(5) ປະເທດເຮົາມີສະເຖຍລະພາບທາງດ້ານການເມືອງຢ່າງໜັກແໜ້ນ ແລະ ມີຄວາມສະຫງົບຮຽບຮ້ອຍທາງສັງຄົມ ເຮັດໃຫ້ການຈັດຕັ້ງປະຕິບັດແຜນການໄດ້ຮັບຜົນດີພໍສົມຄວນ.

(6) ສູນກາງພັກ, ລັດຖະບານ ແລະ ສະພາແຫ່ງຊາດ ມີຄວາມເປັນເອກະພາບສູງໃນການພິຈາລະນາແຜນທີ່ເໝາະສົມ ແລະ ແທດເໝາະກັບສະພາບການຕົວຈິງຂອງປະເທດ.

### [2]. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ

(1) ໄພທຳມະຊາດເກີດຂຶ້ນຮ້າຍແຮງ 2 ຄັ້ງ (ປີ 2008 ແລະ 2009) ແລະ ມີພະຍາດລະບາດ ເຊັ່ນ: ໄຂ້ຫວັດສັດປີກ ແລະ ໄຂ້ຫວັດສາຍພັນໃໝ່ H1N1 ເຊິ່ງໄດ້ສົ່ງຜົນກະທົບຫລາຍສົມຄວນຕໍ່ການພັດທະນາປະເທດ.

(2) ວິກິດການການເງິນໂລກ ໄດ້ສົ່ງຜົນກະທົບຕໍ່ພາກທຸລະກິດ ເປັນຕົ້ນແມ່ນ ລາຄາສົ່ງອອກ, ການລົງທຶນໃສ່ໂຄງການໃຫຍ່ຈຳນວນໜຶ່ງ, ໃນນັ້ນວິກິດການທາງດ້ານວັດຖຸດິບ ໂດຍສະເພາະແມ່ນ ເຊື້ອເພີງ ໄດ້ສົ່ງຜົນກະທົບໂດຍກົງຕໍ່ການດຳເນີນງານຂອງຫ້ວໜ່ວຍທຸລະກິດ.

(3) ການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010) ຊ້າກວ່າ 1 ປີ ພ້ອມກັນນັ້ນ ການຂັນຂະຫຍາຍໃຫ້ເປັນແຜນງານ ແລະ ໂຄງການກໍ່ຊ້າອອກໄປຕື່ມອີກ ຈຶ່ງເຮັດໃຫ້ການປະຕິບັດຕົວຈິງພົບຄວາມຫຍຸ້ງຍາກ.

(4) ຫລາຍແຜນງານ ແລະ ຫລາຍໂຄງການຂາດແຫລ່ງທຶນໃນການຈັດຕັ້ງປະຕິບັດ, ມີຫລາຍໂຄງການໄດ້ມີການດັດແກ້ໄປສູ່ໂຄງການຟື້ນຟູຜົນກະທົບຈາກໄພພິບັດທຳມະຊາດ ຈຶ່ງເຮັດໃຫ້ຂາດທຶນຮອນໃນການຈັດຕັ້ງປະຕິບັດແຜນ; ນອກຈາກນັ້ນ, ການຄຸ້ມຄອງ ແລະ ບໍລິຫານເສດຖະກິດມະຫາພາກຂອງອົງການລັດຍັງຈຳກັດ, ຍັງມີການລະເມີດວິໄນແຜນການ ແລະ ການເງິນ ຢູ່ບາງພາກສ່ວນ.

(5) ພົນລະເມືອງເປັນປັດໄຈກະຕຸ້ນເສດຖະກິດທີ່ດີ ແລະ ເຮັດໃຫ້ເສດຖະກິດມີການເຕີບໂຕ, ແຕ່ການເພີ່ມຂຶ້ນຂອງກຳລັງແຮງງານ ແລະ ຜູ້ອາຍຸສູງກໍ່ເປັນສິ່ງທ້າທາຍ ເຊິ່ງຮຽກຮ້ອງໃຫ້ມີນະໂຍບາຍ ແລະ ມາດຕະການທີ່ເໝາະສົມ ເພື່ອຮັບປະກັນການສ້າງຄວາມອາດສາມາດ ແລະ ສະຫວັດດີການສັງຄົມ, ໃນການປັບປຸງທັກສະຄວາມສຳນານງານຂອງແຮງງານທີ່ມີໃນປະຈຸບັນ ແລະ ແຮງງານໃຫມ່ ເພື່ອຮັບປະກັນການກະຈາຍຜົນປະໂຫຍດແບບຍືນຍົງ ( ກ່ອງ1).

(6) ຂາດການຕິດຕາມປະເມີນຜົນທີ່ທັນເວລາ ແລະ ເປັນລະບົບແຕ່ສູນກາງລົງຮອດທ້ອງຖິ່ນ ແລະ ມີປະສິດທິຜົນ. ຂໍ້ມູນຂ່າວສານສະຖິຕິຍັງຈຳກັດ ແລະ ບໍ່ພຽງພໍ.

**ກ່ອງ 1: ການຂະຫຍາຍຕົວ ແລະ ໂຄງປະກອບຂອງພົນລະເມືອງ**

ໃນປີ 2005 ພົນລະເມືອງເພີ່ມຂຶ້ນ 1.047.000 ຄົນ ເທົ່າກັບ 2,1 ສ່ວນຮ້ອຍຕໍ່ປີ ຖ້າທຽບກັບການສຳຫລວດຄັ້ງກ່ອນຄື ປີ 1995 ແລະ ອັດຕາການເພີ່ມແບບທຳມະຊາດ ປະມານ 2,5% ຕໍ່ປີ. ອີງຕາມຜົນການຄາດຄະເນການຂະຫຍາຍຕົວຂອງພົນລະເມືອງ ແຕ່ປີ 2005 ຫາ 2015 ເຫັນວ່າພົນລະເມືອງໃນປີ 2010 ເພີ່ມຂຶ້ນປະມານ 634.215 ຄົນ ເທົ່າກັບ 1,1% ຕໍ່ປີ. ການປະກອບສ້າງຂອງອາຍຸ ແລະ ເພດຂອງພົນລະເມືອງ ສາມາດສະແດງໃຫ້ເຫັນດ້ວຍຮູບທາດຂອງພົນລະເມືອງ, ຮູບທາດອາຍຸຂອງພົນລະເມືອງ ໃນປີ 2010 ຍັງສືບຕໍ່ມີຖານລຸ່ມສຸດທີ່ກວ້າງ, ຊຶ່ງບົ່ງບອກເຖິງອັດຕາການເກີດຂອງເດັກນ້ອຍ ແມ່ນຍັງສືບຕໍ່ສູງຂຶ້ນ ແລະ ຖ້າສັງເກດເບິ່ງຖານເທິງສຸດຂອງຮູບທາດອາຍຸ ກໍ່ເຫັນໄດ້ວ່າ ຄ່ອຍໆກວ້າງອອກ ທຽບໃສ່ປີ 2005, ເຊິ່ງສະແດງໃຫ້ເຫັນວ່າ ໃນຕໍ່ຫນ້າບັນຫາກ່ຽວກັບຜູ້ສູງອາຍຸໃນສັງຄົມຈະມີຫລາຍຂຶ້ນ, ດັ່ງນັ້ນ, ສັງຄົມຕ້ອງໄດ້ມີການຮອງຮັບທາງດ້ານການດູແລ ແລະ ປົ່ນປົວຜູ້ສູງອາຍຸ.

**ຮູບສະແດງ 1: ຮູບທາດອາຍຸຂອງພົນລະເມືອງລາວ ປີ 2010**




ແຫຼ່ງຂໍ້ມູນ: ກົມສະຖິຕິ ກະຊວງແຜນການ ແລະ ການລົງທຶນ (ການຄາດຄະເນ ໂດຍອີງໃສ່ຂໍ້ມູນການສຳຫຼວດພົນລະເມືອງ 1995 ແລະ 2005)

# II. ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VI

ຜ່ານການຈັດຕັ້ງປະຕິບັດໃນໄລຍະ 5 ປີຜ່ານມາ, ເຫັນວ່າເສດຖະກິດ-ສັງຄົມຂອງ ສປປ ລາວ ໄດ້ມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ມີຈັງຫວະໝັ້ນທ່ຽງ, ອັດຕາເງິນເຟີ້ຢູ່ໃນລະດັບຕ່ຳ, ຄັງເງິນແຮສຳຮອງຂອງປະເທດໄດ້ເພີ່ມຂຶ້ນ, ຈັດຕັ້ງປະຕິບັດງົບປະມານບັນລຸຄາດໝາຍຊຶ່ງເປັນຄັ້ງທຳອິດໃນປະຫວັດສາດຂອງຊາດ ເຮົາ. ລະດັບຄວາມທຸກຍາກຂອງປະຊາຊົນໄດ້ຫຼຸດລົງຈາກ 33,5% ໃນປີ 2003 ມາເປັນ 25,6% ໃນສົກປີ 2009-2010. ລາຍຮັບ ແລະ ລະດັບຊີວິດການເປັນຢູ່ຂອງພົນລະເມືອງໄດ້ຮັບການປັບປຸງ ແລະ ຍົກສູງຂຶ້ນ ຢ່າງຈະແຈ້ງ. ດັດຊະນີພັດທະນາ ມະນຸດຂອງ ສປປ ລາວ (HDI) ໄດ້ເພີ່ມສູງຂຶ້ນຈາກລະດັບ 137 ໃນປີ 2007 ມາຢູ່ລຳດັບ 130 ໃນສົກປີ 2008. ຜົນສຳເລັດພື້ນຖານ ແລະ ລະອຽດໃນແຕ່ລະດ້ານດັ່ງນີ້:

## 1. ການຂະຫຍາຍຕົວດ້ານເສດຖະກິດມະຫາພາກ

### 1.1. ການເຕີບໂຕທາງດ້ານເສດຖະກິດ

- ລວມຍອດຜະລິດຕະພັນພາຍໃນ ໄດ້ເພີ່ມຂຶ້ນສະເລ່ຍປະມານ 7,9% ເຊິ່ງເຫັນວ່າສົ່ນຄາດໝາຍຂອງ ແຜນການ 5 ປີ; ໃນນັ້ນ ຂະແໜງກະສິກຳ ປະມານ 4,1%, ຂະແໜງອຸດສາຫະກຳ 12,5% ແລະ ບໍລິການ 8,4%; ການເພີ່ມຂຶ້ນນີ້ ເປັນຜົນເນື່ອງມາຈາກເສດຖະກິດຂອງປະເທດໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ດັ່ງໄດ້ສະ ແດງໃນຕາຕະລາງ 1. ສາເຫດທີ່ພາໃຫ້ເສດຖະກິດມີການເຕີບໂຕໃນຈັງຫວະທີ່ໜ້າເພິ່ງພໍໃຈຍ້ອນ: ມີແນວ ທາງລວມ ກໍ່ຄືແນວທາງເສດຖະກິດອັນຖືກຕ້ອງຂອງພັກ; ມີຄວາມສະຫງົບທາງດ້ານສັງຄົມ, ມີສະເຖຍ ລະ ພາບທາງການເມືອງ ແລະ ເສດຖະກິດ; ເສດຖະກິດລາວຄ່ອຍໆເຊື່ອມໂຍງເຂົ້າສູ່ສາກົນ ແລະ ພາກພື້ນ, ພ້ອມທັງກົດໝາຍຕ່າງໆເປັນຕົ້ນກົດໝາຍການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ກໍ່ໄດ້ເຊື່ອມ ສານສູ່ສາກົນເຮັດໃຫ້ກະແສການແຂ່ງຂັນຂະຫຍາຍຕົວ. ອີງໃສ່ການຄາດຄະເນເບື້ອງຕົ້ນເຫັນວ່າ ໃນສົກປີ 2009-2010, ເສດຖະກິດຈະສືບຕໍ່ຂະຫຍາຍຕົວໃນລະດັບ 7,8% ເຊິ່ງຖ້າທຽບໃສ່ບັນດາປະເທດໃນຂົງເຂດ ກໍ່ເຫັນວ່າ ສປປ ລາວ ມີການຂະຫຍາຍຕົວໃນຈັງຫວະທີ່ສູງພໍສົມຄວນ.

**ຕາຕະລາງ 1: ສົມທຽບອັດຕາການເຕີບໂຕຂອງ ລວມຍອດຜະລິດຕະພັນພາຍໃນ ລະຫວ່າງການຈັດຕັ້ງ ປະຕິບັດ ແລະ ຄາດໝາຍຂອງແຜນການ 5 ປີ ຄັ້ງທີ VI(2006-2010)**

| ຂົງເຂດ | ຄາດໝາຍສູ້ຊົນ(2006-2010) | ຄາດໝາຍ(ສະເລ່ຍຕໍ່ປີ) | ປະຕິບັດ(ສະເລ່ຍຕໍ່ປີ[1] |
|---|---|---|---|
| ກະສິກຳ-ປ່າໄມ້ | 3~3,4% | 3,2% | 4,1% |
| ອຸດສາຫະກຳ | 13~14,0% | 13,7% | 12,5% |
| ການບໍລິການ | 7,5~8,0% | 7,3% | 8,4% |
| ລວມ | 7,5~8,0% | 7,6% | 7,9% |

*ແຫຼ່ງຂໍ້ມູນ: ແຜນພັດທະນາເສດຖະກິດ ສັງຄົມ 2006-2010 ແລະ ວາລະສານສະຖິຕິປະຈຳປີ 2005-2008.*

- ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ບໍ່ວ່າຈະຄິດໄລ່ເປັນເງິນກີບ ຫລື ເງິນໂດລາ ເຫັນວ່າໄດ້ ເພີ່ມຂຶ້ນສົ່ນຄາດໝາຍຂອງແຜນການ 5 ປີ, (2006-2010), ຊຶ່ງສະແດງອອກ ຄື: ໃນສົກປີ 2007-2008

[1] *ສຳລັບສົກປີ 2005/2006 ເຖິງ 2007/2008 ປະຕິບັດ, ສ່ວນສົກປີ 2008/2009 ແລະ 2009/2010 ແມ່ນຄາດຄະເນເບື້ອງຕົ້ນ*

ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນບັນລຸໄດ້ 818 ໂດລາສະຫະລັດ, ສົກປີ 2008-2009 ບັນລຸໄດ້ປະມານ 906 ໂດລາສະຫະລັດ. ໃນສົກປີ 2009-2010 ຄາດວ່າລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຄົນ ຈະໄດ້ປະມານ 986 ໂດລາສະຫະລັດ, ເພີ່ມຂຶ້ນປະມານ 9% ທຽບໃສ່ ສົກປີ 2008-2009. ການເພີ່ມຂຶ້ນດັ່ງກ່າວສາມາດຢັ້ງຢືນໄດ້ຈາກການເພີ່ມຂຶ້ນຂອງດັດຊະນີການຊົມໃຊ້ຕໍ່ເດືອນຂອງຄົວເຮືອນ ເຊິ່ງເພີ່ມ ຂຶ້ນ ຈາກ 1,1 ລ້ານກີບ ໃນສົກປີ 2002-2003 ມາເປັນ 2,2 ລ້ານກີບ ໃນສົກປີ 2007-2008 (ເພີ່ມຂຶ້ນ ປະມານ 2 ເທົ່າຕົວ). ໃນນັ້ນ: ການຊົມໃຊ້ໃນເຂດຕົວເມືອງ ເພີ່ມຈາກ 1,7 ລ້ານກີບ ເປັນ 2,9 ລ້ານກີບ ແລະ ຊົນນະບົດ ເພີ່ມຈາກ 9 ແສນກີບ ເປັນ 1,8 ລ້ານກີບ, ສະເລ່ຍແລ້ວການຊົມໃຊ້ຂອງຄົວເຮືອນຕໍ່ເດືອນເພີ່ມຂຶ້ນ 14,8% ຕໍ່ປີ.

**ຕາຕະລາງ 2: ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນ (ສົມທຽບແຜນ ແລະ ປະຕິບັດ)**

| ສົກປີ | ແຜນການ (ໂດລາ/ຄົນ/ປີ) | ປະຕິບັດ (ໂດລາ/ຄົນ/ປີ) | ສົມທຽບ ປະຕິບັດໃສ່ ແຜນການ (%) |
|---|---|---|---|
| 2005/2006 | 556 | 573 | 3,1 |
| 2006/2007 | 619 | 687 | 11,0 |
| 2007/2008 | 682 | 818 | 19,9 |
| 2008/2009 | 752 | 906 | 20,5 |
| 2009/2010 | 823 | 986* | 19,8 |

*ແຫຼ່ງຂໍ້ມູນ: ກົມສະຖິຕິ ກະຊວງແຜນການ ແລະ ການລົງທຶນ*

*(*) ແມ່ນຂໍ້ມູນຄາດຄະເນເບື້ອງຕົ້ນ*

## 1.2. ການປ່ຽນແປງໂຄງປະກອບທາງດ້ານເສດຖະກິດ.

ໂຄງປະກອບເສດຖະກິດ ໄດ້ປ່ຽນແປງຢ່າງແທດເໝາະກັບທ່າອ່ຽງພາວະວິໄສບົນພື້ນຖານບຸກເບີກທ່າແຮງ ແລະ ເພີ່ມຄຸນນະພາບຂອງການເຕີບໂຕທາງດ້ານສິນຄ້າ ແລະ ການບໍລິການ:

ໂຄງປະກອບເສດຖະກິດຕາມຂະແໜງການ ແລະ ການສ້າງມູນຄ່າເພີ່ມຂອງບັນດາຂະແໜງການ ໄດ້ມີການເໜັງຕີງໃນລະດັບທີ່ດີ ແລະ ຖືກຕາມທິດທີ່ກຳນົດໄວ້ພໍສົມຄວນ ເຊັ່ນ: ໃນສົກປີ 2008-2009 ຂະແໜງກະສິກຳ-ປ່າໄມ້ ກວມເອົາ 30,4% ຂອງເສດຖະກິດລວມ ແລະ ມີມູນຄ່າເພີ່ມ 14,36 ພັນຕື້ກີບ; ຂະແໜງອຸດສາຫະກຳ ກວມເອົາ 24,9% ຂອງເສດຖະກິດລວມ ແລະ ມີມູນຄ່າເພີ່ມ 11,74 ພັນຕື້ກີບ ແລະ ຂະແໜງບໍລິການ ກວມເອົາ 38,4% ຂອງເສດຖະກິດລວມ ແລະ ມີມູນຄ່າເພີ່ມ 18,14 ພັນຕື້ກີບ ແລະ ຄາດວ່າໃນສົກປີ 2009-2010 ໂຄງປະກອບດັ່ງກ່າວຈະປ່ຽນແປງເລັກໜ້ອຍ ຄື: ກະສິກຳ-ປ່າໄມ້ ຈະກວມປະມານ 29,0%, ອຸດສາຫະກຳ ຈະກວມປະມານ 25,5% ແລະ ການບໍລິການ ຈະກວມປະມານ 39,2% ຂອງເສດຖະກິດລວມ. ການວິໄຈລົງເລິກການຂະຫຍາຍຕົວຂອງຂະແໜງການ ແມ່ນຈະສະເໜີໃນຂໍ້ 3 ຂອງພາກທີໜຶ່ງນີ້.

ໂດຍລວມແລ້ວ ໃນໄລຍະ 5 ປີຜ່ານມາ ໂຄງປະກອບຂອງເສດຖະກິດ ຂອງຂະແໜງກະສິກຳ-ປ່າໄມ້ ສະເລ່ຍ ກວມເອົາ 30,4%, ອຸດສາຫະກຳ ກວມເອົາ 26,0% ແລະ ບໍລິການ ກວມເອົາ 37,2%.

**ຮູບສະແດງ 2: ໂຄງປະກອບທາງດ້ານເສດຖະກິດ ແຕ່ 2006-2010**




*ແຫລ່ງຂໍ້ມູນ: ກົມສະຖິຕິ ກະຊວງແຜນການ ແລະ ການລົງທຶນ*

*- ສຳລັບສົກປີ 2005-2006 ເຖິງ ສົກປີ 2007-2008 ແມ່ນຂໍ້ມູນປະຕິບັດ, ສ່ວນສົກປີ 2008-2009 ແມ່ນ ການຄາດຄະເນປະຕິບັດ ແລະ 2009-2010 ແມ່ນການຄາດຄະເນເບື້ອງຕົ້ນ.*

## 1.3. ການຂະຫຍາຍຕົວຂອງຂະແໜງເງິນຕາ

### [1]. ຖານະການເງິນຂອງລະບົບທະນາຄານ

ຕະຫຼາດເງິນຕາຕ່າງປະເທດ ແມ່ນມີຄວາມຄ່ອງຕົວຫຼາຍຂຶ້ນ, ເຖິງຢ່າງໃດກໍ່ຕາມ ການຮັກສາສະເຖຍ ລະພາບຂອງຕະຫຼາດເງິນຕາຕ່າງປະເທດ ຮຽກຮ້ອງໃຫ້ມີຄວາມລະມັດລະວັງທາງດ້ານນະໂຍບາຍການເງິນ ແລະ ເງິນຕາ. ຈາກການວິເຄາະຖານະການເງິນຂອງ ລະບົບທະນາຄານ ໄດ້ຊີ້ໃຫ້ເຫັນວ່າ ປະລິມານເງິນຕາມ ຄວາມໝາຍກວ້າງ ຫລື ປະລິມານການສະໜອງເງິນລວມ ໄດ້ເພີ່ມຂຶ້ນສະເລ່ຍຕໍ່ປີ ປະມານ 29% ໃນໄລຍະ 2006 ເຖິງ 2008, ມາຮອດທ້າຍໄລຍະ ເດືອນມີນາ 2009 (ຕາມການຄາດຄະເນເບື້ອງຕົ້ນ) ປະລິມານ ການສະໜອງເງິນລວມ ແມ່ນເທົ່າກັບ 13.045,0 ຕື້ກີບ ເພີ່ມຈາກ ເດືອນທັນວາ 2008 ປະມານ 13%. ປະລິມານການສະໜອງເງິນລວມ ຫຼື $M_2$ ໄດ້ເພີ່ມຂຶ້ນ ຍ້ອນການເພີ່ມຂຶ້ນຂອງຜູ້ມາລົງທຶນໂດຍກົງຂອງຕ່າງປະ ເທດ. ປະລິມານເງິນຕາມຄວາມໝາຍແຄບ (ເງິນຢູ່ນອກລະບົບທະນາຄານ ແລະ ເງິນຝາກທະແສລາຍວັນໃນ ສະກຸນເງິນກີບ) ກວມເອົາປະມານ 30%, ໃນຂະນະທີ່ປະລິມານເງິນປະເພດອື່ນໆ ກວມເອົາປະມານ 70%; ໃນນັ້ນ, ອັດຕາສ່ວນເງິນຝາກເປັນເງິນຕາຕ່າງປະເທດ ແມ່ນກວມເອົາປະມານ 80% ຂອງປະລິມານເງິນ ປະເພດອື່ນໆໃນໄລຍະ 2006-2008 (ເພີ່ມຂຶ້ນຈາກ ປີ 2005 ປະມານ 3%); ຊັບສິນຕ່າງປະເທດ ແລະ ພາຍໃນສຸດທິໄດ້ມີການເພີ່ມຂຶ້ນ. ຄັງເງິນແຮສຳຮອງເປັນເງິນຕາຕ່າງປະເທດໄດ້ເພີ່ມຂຶ້ນ ແລະ ມີເງິນຕາຕ່າງ ປະເທດທີ່ສາມາດນຳໄປຊຳລະການນຳເຂົ້າສິນຄ້າ ແລະ ການບໍລິການຈາກຕ່າງປະເທດກຸ້ມໄດ້ ປະມານ 6 ເດືອນ. ໂດຍລວມແລ້ວ ຖານະການເງິນຂອງລະບົບທະນາຄານມີຄວາມໝັ້ນຄົງໂດຍພື້ນຖານ, ຕະຫຼາດເງິນຕາ ເພີ່ມຄວາມຄ່ອງຕົວຫຼາຍຂຶ້ນ.

### [2]. ການພັດທະນາຂອງຂະແໜງທະນາຄານ

ຂະແໜງທະນາຄານ ແມ່ນຂະແໜງການໜຶ່ງທີ່ມີການຂະຫຍາຍຕົວແຮງ ແລະ ພົ້ນເດັ່ນທີ່ສຸດໃນ ແຜນການ 5 ປີ ຄັ້ງນີ້ ຍ້ອນໄດ້ມີການສ້າງເງື່ອນໄຂ ແລະ ສິ່ງເອື້ອອຳນວຍທີ່ຈຳເປັນໃຫ້ແກ່ການດຳເນີນທຸລະ

ກິດ ເປັນຕົ້ນແມ່ນ ການປັບປຸງກົດໝາຍ ແລະ ລະບຽບການຕ່າງໆເພື່ອໃຫ້ສາມາດແຂ່ງຂັນກັບສາກົນ ແລະ ຮອງຮັບຄວາມຕ້ອງການພັດທະນາທາງດ້ານເສດຖະກິດໃຫ້ໄວຂຶ້ນ. ໃນໄລຍະເວລາພຽງສັ້ນໆ ໄດ້ມີຈຳນວນທະນາຄານທຸລະກິດກໍ່ຕັ້ງໃໝ່ຂຶ້ນເປັນຈຳນວນບໍ່ໜ້ອຍ ຊຶ່ງເປັນຜົນດີໃຫ້ແກ່ສັງຄົມ ກໍ່ຄືພາກທຸລະກິດມີທາງເລືອກໃນການເຂົ້າເຖິງ ແລະ ນຳໃຊ້ການບໍລິການທີ່ມີຄຸນນະພາບ, ທັນສະໄໝຍິ່ງຂຶ້ນ ແລະ ມີລາຄາການບໍລິການທີ່ຖືກລົງ; ນອກຈາກນັ້ນ, ການກະກຽມກໍ່ຕັ້ງຕະຫຼາດຫຸ້ນແຫ່ງທຳອິດຂອງປະເທດກໍ່ພວມດຳເນີນໄປຢ່າງເຄັ່ງຮ້ອນ. ການປ່ອຍສິນເຊື່ອຂອງທະນາຄານ ໃຫ້ແກ່ພາກສ່ວນເສດຖະກິດ ໄດ້ເພີ່ມຂຶ້ນ ປະມານ 85% ໃນທ້າຍ ປີ 2008 ແລະ ໃນເດືອນ 3 ປີ 2009 ປະມານ 82,3% ເມື່ອທຽບໃສ່ ເດືອນ 3 ປີ 2008. ຜົນສຳເລັດດັ່ງກ່າວຊີ້ໃຫ້ເຫັນວ່າ ທະນາຄານໄດ້ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມຫລາຍຂຶ້ນ; ພ້ອມດຽວກັນນັ້ນ, ການ ປ່ອຍກູ້ທີ່ບໍ່ເກີດດອກອອກຜົນ ຫລື ໜີ້ເສຍ (NPL) ໄດ້ຫຼຸດລົງ, ເຖິງຢ່າງໃດກໍ່ຕາມ ການເຂົ້າເຖິງສິນເຊື່ອຢູ່ເຂດຊົນນະບົດນັ້ນກໍ່ຍັງຈຳກັດຢູ່. ໂດຍລວມແລ້ວເຫັນວ່າ ຄຸນນະພາບການບໍລິການ, ການເຂົ້າເຖິງສິນເຊື່ອ ໄດ້ຮັບການປັບປຸງ ແລະ ລະບົບທະນາຄານເພີ່ມຄວາມທັນສະໄໝ.

### [3]. ອັດຕາເງິນເຟີ້

ໃນໄລຍະຜ່ານມາ ເຫັນວ່າອັດຕາເງິນເຟີ້ໄດ້ມີການເໜັງຕີງໄປໃນທາງບວກດີພໍສົມຄວນ, ຊຶ່ງອັດຕາເງິນເຟີ້ໄດ້ຫຼຸດລົງຈາກ 8% ໃນສົກປີ 2005-2006 ມາເປັນ 4,1% ໃນສົກປີ 2006-2007, ເພີ່ມເປັນ 7,9% ໃນສົກປີ 2007-2008 ແລະ ຫລຸດລົງມາເປັນ 0,74% ໃນສົກປີ 2008-2009 ໂດຍໃນໄລຍະ 6 ເດືອນທ້າຍປີ ອັດຕາເງິນເຟີ້ ໄດ້ຕິດລົບຕິດຕໍ່ກັນ ເຊິ່ງເຫັນວ່າ ຕ່ຳທີ່ສຸດນັບແຕ່ເລີ່ມມີການເກັບກຳຂໍ້ມູນຕົວເລກດັ່ງກ່າວຕັ້ງແຕ່ປີ 1990 ເປັນຕົ້ນມາ ແລະ ສຳລັບເດືອນ ມີນາ 2010 ນີ້ ອັດຕາເງິນເຟີ້ ແມ່ນຢູ່ໃນລະດັບ 4,89% ເມື່ອທຽບໃສ່ອັດຕາເງິນເຟີ້ ຂອງປີ 2009 ເຫັນວ່າ ໃນປີ 2010 ຈະມີທ່າອ່ຽງເພີ່ມຂຶ້ນສູງພໍສົມຄວນ ແຕ່ເຖິງຢ່າງໃດກໍ່ຕາມ ໂດຍລວມແລ້ວເຫັນວ່າ ລາຄາສິນຄ້າອຸປະໂພກ ມີສະເຖຍລະພາບ ແລະ ອັດຕາເງິນເຟີ້ ຍັງຈະຢູ່ໃນລະດັບ 1 ຕົວເລກ.

### [4]. ອັດຕາແລກປ່ຽນເງິນຕາຕ່າງປະເທດ

ເງິນກີບໄດ້ຄ່ອຍໆແຂງຄ່າຂຶ້ນຕາມລຳດັບ, ໃນສົກປີ 2005-2006 ອັດຕາແລກປ່ຽນ (ສະເລ່ຍ) ເທົ່າກັບ 10.242 ກີບ/ໂດລາສະຫະລັດ ມາເປັນ 9.664,9 ກີບ/ໂດລາສະຫະລັດ ໃນສົກປີ 2006-07; ສົກປີ 2007-2008 ເທົ່າກັບ 8.979,8 ກີບ/ໂດລາສະຫະລັດ, ສົກປີ 2008-2009 ແມ່ນ 8.515,7 ກີບ/ໂດລາສະຫະລັດ ແລະ ໃນໄລຍະຕົ້ນຂອງສົກປີ 2009-2010 (ເດືອນ ກຸມພາ) ອັດຕາແລກປ່ຽນແມ່ນເທົ່າກັບ 8.470 ກີບ/ໂດລາສະຫະລັດ. ການແຂງຄ່າຂຶ້ນຂອງເງິນກີບ ແມ່ນສອດຄ່ອງກັບການອ່ອນຄ່າຂອງເງິນໂດລາສະຫະລັດໃນທົ່ວໂລກ ແລະ ຄວາມຕ້ອງການເງິນກີບທີ່ເພີ່ມສູງຂຶ້ນ ຈາກການເຂົ້າມາລົງທຶນໂດຍກົງຂອງຕ່າງປະເທດທີ່ເພີ່ມຂຶ້ນ. ການແຂງຄ່າຂອງເງິນກີບ ແມ່ນໄດ້ສົ່ງຜົນກະທົບຕໍ່ການສົ່ງອອກຂອງປະເທດໜ້ອຍເນື່ອງຈາກວ່າ ບໍລິມາດຂອງການສົ່ງອອກສ່ວນໜຶ່ງ ແມ່ນມາຈາກຂຸດຄົ້ນ ແລະ ສົ່ງອອກຊັບພະຍາກອນທຳມະຊາດ ເຊິ່ງບໍ່ໄດ້ຕິດພັນກັບອັດຕາແລກປ່ຽນ. ກົງກັນຂ້າມ ເມື່ອສົມທຽບເງິນກີບໃສ່ສະກຸນເງິນຕາຕ່າງປະເທດອື່ນໆ ໂດຍສະເພາະ ເງິນກີບຕໍ່ ເງິນບາດມີຄ່າອ່ອນລົງ; ການອ່ອນຄ່ານີ້ ສ່ວນໜຶ່ງແມ່ນຍ້ອນ ສປປ ລາວ ຍັງມີການຄ້າຂາຍກັບປະເທດໄທໃນອັດຕາທີ່ສູງ.

# 2. ການດຸ່ນດ່ຽງພື້ນຖານເສດຖະກິດ

## 2.1. ການດຸ່ນດ່ຽງແຮງງານ ແລະ ສ້າງວຽກເຮັດງານທຳ

ໂຄງປະກອບຂອງແຮງງານຕາມຂະແໜງເສດຖະກິດ ໄດ້ມີການຫັນປ່ຽນຕາມທິດຢ່າງຕັ້ງໜ້າຕາມການຫັນປ່ຽນໂຄງປະກອບເສດຖະກິດ ແລະ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ການສ້າງຄວາມອາດສາມາດໃຫ້ກຳລັງແຮງງານ, ການປັບປຸງຫຼັກສູດວິຊາຊີບ, ກົນໄກປະສານງານ ແລະ ການຈັດຫາວຽກເຮັດງານທຳທັງພາຍໃນ ແລະ ຕ່າງປະເທດ ໄດ້ຮັບການປັບປຸງຢ່າງຕັ້ງໜ້າ.

ຂະແໜງແຮງງານແມ່ນໄດ້ເອົາໃຈໃສ່ສືບຕໍ່ຊຸກຍູ້ ແລະ ປະສານສົມທົບກັບບັນດາສູນຝຶກວິຊາຊີບທັງຂອງລັດ ແລະ ເອກະຊົນ ຈັດຕັ້ງຝຶກສີມືແຮງງານລາວ ຜູ້ທີ່ບໍ່ທັນມີສີມື ເປັນຕົ້ນແມ່ນ ນັກຮຽນທີ່ຮຽນຈົບມໍຕົ້ນ ແລະ ມໍປາຍ ຕາມສາຂາວິຊາຊີບຕ່າງໆ ເພື່ອໃຫ້ແທດເໝາະກັບວຽກຕົວຈິງ. ຜ່ານການຈັດຕັ້ງປະຕິບັດຕົວເລກຄາດໝາຍສູ້ຊົນ ເຫັນວ່າຕົວເລກການຝຶກວິຊາຊີບ ແລະ ການພັດທະນາສີມືແຮງງານ ໄດ້ເພີ່ມຂຶ້ນຈາກ 5.070 ຄົນ ໃນປີ 2006 ມາເປັນ 5.374 ຄົນ ໃນປີ 2007 ມາເປັນ 16.158 ຄົນ ໃນປີ 2008 ແລະ ມາເປັນ 29.766 ຄົນ ໃນປີ 2009. ສັງລວມແລ້ວໄລຍະ 4 ປີ ຜ່ານມາ, ສາມາດຝຶກສີມືແຮງງານ ໄດ້ທັງໝົດ 56.368 ຄົນ, ທຽບໃສ່ແຜນການ 5 ປີ ເທົ່າກັບ 81,33%. ຖ້ານັບທັງຕົວເລກຄາດໝາຍສູ້ຊົນປີ 2010 ທີ່ກຳລັງຈັດຕັ້ງປະຕິບັດຢູ່ຈະສາມາດຝຶກສີມືແຮງງານໄດ້ທັງໝົດ 74.069 ຄົນ, ທຽບໃສ່ແຜນການ 5 ປີ ລື່ນຄາດໝາຍ 6,88% (ຕົວເລກຄາດໝາຍສູ້ຊົນແຜນການ 5 ປີ ແມ່ນ 69.300 ຄົນ), ເຊິ່ງໄດ້ແຍກ ອອກເປັນແຕ່ລະຂົງເຂດ ຄື: ຂົງເຂດກະສິກຳ-ປ່າໄມ້ 16.152 ຄົນ, ຂົງເຂດອຸດສາຫະກຳ ແລະ ກໍ່ສ້າງ 27.856 ຄົນ, ຂົງເຂດບໍລິການ 30.061 ຄົນ.

ການຈັດຫາວຽກເຮັດງານທຳ ກໍ່ໄດ້ປັບປຸງກົນໄກປະສານງານ ເພື່ອໃຫ້ສອດຄ່ອງກັບສະພາບຄວາມຕ້ອງການຂອງຕະຫຼາດແຮງງານ. ນອກນີ້ ຍັງໄດ້ປະສານສົມທົບທຸກພາກສ່ວນ ທັງພາກລັດ ແລະ ເອກະຊົນ ໃຫ້ມີສ່ວນຮ່ວມ ການສະໜອງຂໍ້ມູນຄວາມຕ້ອງການ ແລະ ການສະໜອງ, ການຈັດຫາງານຄ່ອຍເຂົ້າສູ່ລະບົບເທື່ອລະກ້າວ, ບັນດາບໍລິສັດຈັດຫາງານ ແລະ ສາຂາ ໄດ້ມີການຂະຫຍາຍຕົວ ຈາກ 3 ບໍລິສັດ ໃນປີ 2005 ມາເປັນ 9 ບໍລິສັດ, ໃນປີ 2006 ສາມາດຈັດຫາວຽກເຮັດງານທຳໄດ້ 6.404 ຄົນ, ປີ 2007 ໄດ້ 21.099 ຄົນ, ປີ 2008 ໄດ້ 74.992 ຄົນ ແລະ ໃນປີ 2009 ເພີ່ມຂຶ້ນເປັນ 241.949 ຄົນ.

ສັງລວມແລ້ວ, ສາມາດຈັດຫາວຽກເຮັດງານທຳໃຫ້ກຳລັງແຮງງານລາວໄດ້ ທັງໝົດ 317.444 ຄົນ, ເທົ່າກັບ 58,35% ຂອງແຜນ 5 ປີ (544.000 ຄົນ ຫລື 108.800 ຕໍ່ປີ). ຖ້ານັບທັງຕົວເລກທີ່ກຳລັງຈັດຕັ້ງປະຕິບັດ ໃນປີ 2010, ເມື່ອຮອດທ້າຍປີຄາດວ່າຈະສາມາດປະຕິບັດໄດ້ຕື່ມອີກ 325.440 ຄົນ, ລວມເປັນ 642.884 ຄົນ, ລື່ນແຜນການ 18,2% ທຽບໃສ່ ແຜນການ 5 ປີ. ໃນນີ້, ຈັດຫາວຽກເຮັດງານທຳຢູ່ພາຍໃນໄດ້ 626.691 ຄົນ, ຂົງເຂດກະສິກຳ-ປ່າໄມ້ 584.589 ຄົນ, ຂົງເຂດອຸດສາຫະກຳ ແລະ ກໍ່ສ້າງ 38.435 ຄົນ ແລະ ຂົງເຂດບໍລິການ 3.667 ຄົນ. ສາມາດຈັດສົ່ງແຮງງານຢູ່ຕ່າງປະເທດໄດ້ 16.193 ຄົນ, ເປັນຂົງເຂດກະສິກຳ-ປ່າໄມ້ 1.042 ຄົນ, ຂົງເຂດອຸດສາຫະກຳ ແລະ ກໍ່ສ້າງ 13.396 ຄົນ, ຂົງເຂດບໍລິການ 1.755 ຄົນ. ໄດ້ເອົາໃຈໃສ່ເກັບກຳ ແລະ ຂຶ້ນທະບຽນຜູ້ຕ້ອງການ ມີວຽກເຮັດງານທຳໄດ້ທັງໝົດ 298.775 ຄົນ, ໃນນີ້ ຂົງເຂດກະສິກຳ-ປ່າໄມ້ 192.904 ຄົນ, ຂົງເຂດອຸດສາຫະກຳ ແລະ ກໍ່ສ້າງ 74.194 ຄົນ ແລະ ຂົງເຂດບໍລິການ 29.677 ຄົນ, ຖ້າທຽບໃສ່ແຜນ 5 ປີ ທີ່ວາງໄວ້ 390.000 ຄົນ ແມ່ນ ປະຕິບັດ

ໄດ້ແຕ່ 76,6%. ພ້ອມກັນນີ້, ຍັງໄດ້ປະສານກັບອົງການຄຸ້ມຄອງແຮງງານ ຂອງປະເທດຕ່າງໆ ໂດຍສະເພາະ ແມ່ນ ປະເທດໄທ ແມ່ນມີຄວາມຕ້ອງການແຮງງານລາວ ຈຳນວນ 10.434 ຕຳແໜ່ງ, ຍິງ 152 ຕຳແໜ່ງ, ຍີ່ປຸ່ນຕ້ອງການ 300 ຕຳແໜ່ງ/ປີ, ມາເລເຊຍ ຕ້ອງການ 1.000 ຕຳແໜ່ງ/ປີ ແລະ ຍັງໄດ້ ຮ່ວມມືກັບ ກະຊວງແຮງງານ ສ.ເກົາຫລີ ເພື່ອກະກຽມຄວາມພ້ອມ ໃນການສົ່ງແຮງງານລາວໄປເຮັດວຽກຢູ່ ປະເທດ ດັ່ງກ່າວ.

ດ້ານໂຄງປະກອບຂອງແຮງງານຕາມຂະແໜງການເສດຖະກິດ ເຖິງແມ່ນວ່າຈະຊັກຊ້າ ແຕ່ກໍ່ໄດ້ມີການ ຫັນປ່ຽນຕາມທິດຢ່າງຕັ້ງໜ້າ ຕາມການຫັນປ່ຽນໂຄງປະກອບເສດຖະກິດ ແລະ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ. ອັດຕາສ່ວນ ແຮງງານໃນຂະແໜງກະສິກຳ-ປ່າໄມ້ ໄດ້ຄ່ອຍໆຫຼຸດລົງ ຈາກກວ່ 78,5% ໃນປີ 2005 ເປັນ 75,1% ໃນປີ 2010, ອັດຕາສ່ວນແຮງງານໃນຂະແໜງອຸດສາຫະກຳ ແລະ ກໍ່ສ້າງ ກໍ່ມີ ທ່າອ່ຽງເພີ່ມຂຶ້ນຈາກ 4,8% ມາເປັນ 5,5%, ແລະ ຂະແໜງບໍລິການຈາກ 16,7% ໃນປີ 2005 ເປັນ 19,5% ໃນປີ 2010 (ຕາຕະລາງ 3). ອັດຕາການເຄື່ອນຍ້າຍແຮງງານ ຈາກຂະແໜງກະສິກຳໄປສູ່ຂະແໜງ ທີ່ບໍ່ແມ່ນກະສິກຳ ແມ່ນຢູ່ໃນລະດັບປະມານ 0,7% ຕໍ່ປີ. ໃນນັ້ນ ຂະແໜງບໍລິການ ຈະເປັນຂະແໜງທີ່ ຮັບຮອງແຮງງານຈາກກະສິກຳຫຼາຍກວ່າ ຂະແໜງອຸດສາຫະກຳ.

**ຕາຕະລາງ 3: ອັດຕາສ່ວນແຮງງານຕາມຂະແໜງການ**

| ລ/ດ | ລາຍການ | ປີ | | ຄາດໝາຍ |
|---|---|---|---|---|
| | | 2005[2] | 2010 | 2006-2010 |
| 1 | ຂົງເຂດກະສິກຳ-ປ່າໄມ້ | 78,5% | 71,1% | 73,9% |
| 2 | ຂົງເຂດອຸດສາຫະກຳ | 4,8% | 5,5% | 9,3% |
| 3 | ຂົງເຂດບໍລິການ | 16,7% | 19,5% | 16,9% |

*ແຫຼ່ງຂໍ້ມູນ: ຄິດໄລ່ໂດຍອີງໃສ່ຜົນການສຳຫຼວດພົນລະເມືອງປີ 2005 ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010)*

## 2.2. ການດຸ່ນດ່ຽງແຫລ່ງທຶນເພື່ອການພັດທະນາ

### [1]. ການລົງທຶນຂອງລັດ

ການປະຕິບັດແຜນການລົງທຶນຂອງລັດ ໃນໄລຍະ 5 ປີຜ່ານມາ ເຫັນໄດ້ວ່າການຈັດສັນທຶນເຂົ້າໃສ່ ບັນດາໂຄງການ ຂອງຂະແໜງການ ແລະ ທ້ອງຖິ່ນຕ່າງໆ ແມ່ນມີປະສິດທິຜົນພໍສົມຄວນ ແລະ ໂດຍລວມ ແມ່ນໄປຕາມ 11 ແຜນງານ 111 ໂຄງການຈຸດສຸມຂອງລັດຖະບານ. ປະຕິບັດການລົງທຶນ ໄດ້ 24.747 ຕື້

[2] ຕົວເລກດັ່ງກ່າວແມ່ນອີງໃສ່ຜົນການສຳຫຼວດພົນລະເມືອງຄັ້ງລ້າສຸດປີ 2005, ຊຶ່ງອາດແຕກຕ່າງຈາກຕົວເລກຄາດຄະເນທີ່ລາຍງານ ໃນ ບົດສະຫຼຸບແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ VI (ແຮງງານທີ່ມີວຽກເຮັດໃນຂະແໜງກະສິກຳກວມ 76,6%, ອຸດສາຫະກຳ 7,7% ແລະ ບໍລິການ 15,6% ໃນປີ 2005.

ກີບ; ໃນນັ້ນ ສະເພາະທຶນພາຍໃນ ປະຕິບັດໄດ້ 3.982 ຕື້ກີບ ເທົ່າກັບ 98,7% ຂອງແຜນການອະນຸມັດໃນ 5 ປີ ແລະ ທຶນຕ່າງປະເທດ 20.765 ຕື້ກີບ.

### [2]. ການດຶງດູດແຫລ່ງທຶນຊ່ວຍເຫຼືອທາງການເພື່ອການພັດທະນາ

ໃນໄລຍະ 5 ປີ ຜ່ານມາ, ຍ້ອນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດຂອງໂລກ, ແຫລ່ງທຶນຊ່ວຍເຫລືອທາງການເພື່ອການພັດທະນາ (ODA) ຫຼື ຊກພ ໃນສາກົນ ແລະ ບາງຂົງເຂດ ມີທ່າອ່ຽງຫຼຸດລົງ; ແຕ່ເຖິງຢ່າງໃດກໍ່ຕາມຄູ່ຮ່ວມພັດທະນາ ແລະ ບັນດາປະເທດເພື່ອນມິດທີ່ໄດ້ໃຫ້ຄຳໝັ້ນສັນຍາໃນການຊ່ວຍເຫຼືອແກ່ ສປປ ລາວ ຍັງສືບຕໍ່ເພີ່ມຂຶ້ນ, ຍ້ອນວ່າບັນດາປະເທດເຫຼົ່ານັ້ນ ໄດ້ສະໜັບສະໜູນຕໍ່ນະໂຍບາຍພັດທະນາເສດຖະກິດ-ສັງຄົມ ຂອງພັກ ແລະ ລັດຖະບານເຮົາ, ສະນັ້ນ ໃນ 5 ປີ ຍອດທຶນ ຊກພ ປະຕິບັດຕົວຈິງທີ່ສະແດງອອກໃນບົດລາຍງານປະຈຳປີ ຂອງການຈັດຕັ້ງປະຕິບັດໂຄງການ ຊກພ ແມ່ນປະຕິບັດໄດ້ 2.251 ໂຄງການ, ຊຶ່ງມີມູນຄ່າ 2.443 ລ້ານໂດລາສະຫະລັດ, ສະເລ່ຍ 488 ລ້ານໂດລາສະຫະລັດ/ປີ; ນອກຈາກນັ້ນ, ກໍ່ມີທຶນສົມທົບຈາກລັດຖະບານ 88,66 ລ້ານໂດລາສະຫະລັດ (ສະເລ່ຍປະມານ 17,73 ລ້ານໂດລາສະຫະລັດ/ປີ). ເມື່ອເບິ່ງລວມແລ້ວປະສິດທິຜົນໃນການນຳໃຊ້ທຶນ ຊກພ ມີທ່ວງທ່າເພີ່ມຂຶ້ນ; ການປະຕິບັດໂຄງການຊ່ວຍເຫຼືອລ້າຈາກຕ່າງປະເທດໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ.

### [3]. ການດຶງດູດການລົງທຶນໂດຍກົງຂອງຕ່າງປະເທດ

ໃນໄລຍະ 5 ປີ, ສາມາດດຶງດູດການລົງທຶນຈາກຕ່າງປະເທດ ໄດ້ 761 ໂຄງການ, ມີມູນຄ່າທຶນອະນຸມັດ 9,7 ຕື້ໂດລາສະຫະລັດ (ຕົວເລກອະນຸມັດຮອດເດືອນ 12 ປີ 2009 ເຊິ່ງສາມາດເບິ່ງໄດ້ໃນຕາຕະລາງ 4 ຂ້າງລຸ່ມນີ້), ໃນນີ້; ເປັນການລົງທຶນຈາກນັກທຸລະກິດພາຍໃນ ຈຳນວນ 1,7 ຕື້ໂດລາສະຫາລັດ. ໃນທຶນອະນຸມັດດັ່ງກ່າວນັ້ນ ໄດ້ລົງທຶນໃສ່ຂະແໜງໄຟຟ້າ ກວມອັດຕາສ່ວນຫຼາຍກວ່າໝູ່ ເທົ່າກັບ 2,9 ຕື້ໂດລາສະຫະລັດ, ບໍ່ແຮ່ 2,7 ຕື້ໂດລາສະຫະລັດ ແລະ ບໍລິການ 1,2 ຕື້ໂດລາສະຫະລັດ. ສະເພາະສົກປີ 2008-2009 ໄດ້ອະນຸມັດການລົງທຶນທັງໝົດມູນຄ່າ 4,3 ຕື້ໂດລາສະຫະລັດ ແລະ ບັນດາປະເທດທີ່ເຂົ້າມາ ລົງທຶນຫຼາຍກວ່າໝູ່ ແມ່ນປະເທດ ສປ ຈີນ, ໄທ ແລະ ສສ ຫວຽດນາມ.

**ຕາຕະລາງ 4: ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ແຕ່ 2006-2010**

ຫົວໜ່ວຍ: ຕື້ໂດລາສະຫະລັດ

| ສົກປີ/ການລົງທຶນ | ການລົງທຶນທັງໝົດ | ການລົງທຶນຈາກພາຍໃນ |
|---|---|---|
| ລວມທັງໝົດ | 9,7 | 1,7 |
| ສົກປີ 2005-2006 | 2,7 | 0,4 |
| ສົກປີ 2006-2007 | 1,1 | 0,2 |
| ສົກປີ 2007-2008 | 1,2 | 0,3 |
| ສົກປີ 2008-2009 | 4,3 | 0,9 |

| | | |
|---|---|---|
| ສົກປີ 2009-2010[3] | 0,65 | 0,01 |

*ແຫລ່ງຂໍ້ມູນ: ກົມສົ່ງເສີມການລົງທຶນ, ກະຊວງ ຜທ (ເມສາ, 2010)*

ການລົງທຶນຕ່າງປະເທດໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຜະລິດສິນຄ້າ, ປະກອບສ່ວນໃນການຊຸກຍູ້ການຂະຫຍາຍຕົວ ແລະ ຫັນປ່ຽນໂຄງປະກອບເສດຖະກິດ, ເຮັດໃຫ້ສິນຄ້າມີຫຼາກຫຼາຍປະເພດ, ພ້ອມກັນນັ້ນ ກໍ່ກະຕຸກຊຸກຍູ້ໃຫ້ຂົງເຂດເສດຖະກິດເອກະຊົນພາຍໃນໄດ້ຮັບການພັດທະນາດີຂຶ້ນກວ່າເກົ່າ.

ໝາກຜົນທີ່ໄດ້ຮັບຂ້າງເທິງນັ້ນ ແມ່ນຍ້ອນລັດຖະບານໄດ້ນຳໃຊ້ຫຼາຍມາດຕາການ ແລະ ນະໂຍບາຍເພື່ອສົ່ງເສີມ ແລະ ດຶງດູດການລົງທຶນເຊັ່ນ: ປັບປຸງກົດໝາຍການລົງທຶນ, ປັບປຸງກົນໄກອະນຸມັດການລົງທຶນຜ່ານປະຕູດຽວ, ການແບ່ງສິດໃຫ້ທ້ອງຖິ່ນສາມາດອະນຸມັດ ແລະ ຄຸ້ມຄອງໂຄງການລົງທຶນຕ່າງປະເທດ ໂດຍອີງຕາມປະເພດໂຄງການ ແລະ ມູນຄ່າການລົງທຶນ, ໄດ້ຈັດຕັ້ງພົບປະກັບນັກລົງທຶນ ແລະ ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ປີລະຄັ້ງ ເພື່ອກຳສະພາບຄວາມຫຍຸ້ງຍາກ ແລະ ເພື່ອຊອກຫາວິທີທາງແກ້ໄຂ. ນອກຈາກນັ້ນ, ຍັງໄດ້ເຄື່ອນໄຫວໂຄສະນາດຶງດູດນັກລົງທຶນຢູ່ຕ່າງປະເທດ.

## 2.3. ການດຸ່ນດ່ຽງງົບປະມານແຫ່ງລັດ

ແຜນການ 5 ປີ ຄັ້ງທີ VI ໄດ້ກຳນົດລາຍຮັບສະເລ່ຍເທົ່າກັບ 14,8% ແລະ ລາຍຈ່າຍເທົ່າກັບ 21,4% ຂອງລວມຍອດຜະລິດຕະພັນພາຍໃນ; ການຂາດດຸນງົບປະມານແມ່ນໃຫ້ຢູ່ໃນລະດັບ 6,7% ຂອງ GDP.

ຜ່ານການຈັດຕັ້ງໃນໄລຍະທີ່ຜ່ານມາ ສາມາດເວົ້າໄດ້ວ່າ ຖານະທາງດ້ານງົບປະມານແຫ່ງລັດໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນເທື່ອລະກ້າວ; ໃນນັ້ນ, ສາມາດປະຕິບັດການຈັດເກັບງົບປະມານລື່ນແຜນການສາມປີຕິດຕໍ່ກັນ. ການເພີ່ມຂຶ້ນຂອງລາຍຮັບງົບປະມານສ່ວນໃຫຍ່ ແມ່ນໄດ້ມາຈາກການເກັບພາສີ ແລະ ສ່ວຍສາອາກອນໂດຍກວມປະມານ 70,6% ຂອງລາຍຮັບທັງໝົດ. ໃນໄລຍະ 2006-2010 ຄາດວ່າຈະສາມາດຈັດເກັບລາຍຮັບໄດ້ທັງໝົດ 36,87 ພັນຕື້ກີບ, ລື່ນແຜນການ ປະມານ 6,6%, ໃນນັ້ນ ລາຍຮັບພາຍໃນ 31,13 ພັນຕື້ກີບ, ລື່ນແຜນການ ປະມານ 1,2%.

ສ່ວນລາຍຈ່າຍງົບປະມານປະຕິບັດໄດ້ທັງໝົດ 46,98 ພັນຕື້ກີບ ຫຼື ເທົ່າກັບ 94,7% ຂອງແຜນການ 5 ປີ ຄັ້ງທີ VI; ດັ່ງນັ້ນ, ເຮັດໃຫ້ການຂາດດຸນງົບປະມານ ເທົ່າກັບ 10,23 ພັນຕື້ກີບ (ລວມການຊ່ວຍເຫລືອລ້າ), ຖ້າທຽບໃສ່ລວມຍອດຜະລິດຕະພັນພາຍໃນ ເຫັນວ່າການຂາດດຸນສະເລ່ຍປະມານ 4,7%. ໃນການປະຕິບັດລາຍຈ່າຍ ແມ່ນສຸມໃສ່ປະຕິບັດນະໂຍບາຍເງິນເດືອນພະນັກງານ, ລັດຖະກອນ ເຊິ່ງເປັນບູລິມະສິດອັນດັບຫນຶ່ງ ຂອງລັດຖະບານ. ດັດຊະນີເງິນເດືອນໄດ້ເພີ່ມຂຶ້ນ 3 ປີ ຕິດຕໍ່ກັນ ໂດຍສະເລ່ຍເທົ່າກັບ 18,66% ຕໍ່ປີ.

ນອກຈາກນີ້ ໃນຕົ້ນປີ 2007 ໄດ້ປະກາດນຳໃຊ້ກົດໝາຍວ່າດ້ວຍງົບປະມານແຫ່ງລັດສະບັບປັບປຸງ. ຈຸດປະສົງຫຼັກຂອງການປັບປຸງກົດໝາຍສະບັບນີ້ ແມ່ນເພື່ອປັບປຸງກົນໄກການຄຸ້ມຄອງງົບປະມານໃຫ້ມີຄວາມສອດຄ່ອງຫຼາຍຍິ່ງຂຶ້ນ ໂດຍໄດ້ຫັນເອົາ 3 ຂະແໜງ ຄື: ຄັງເງິນ, ພາສີ ແລະ ອາກອນ ໃຫ້ມາລວມສູນ

[3] *ສຳລັບສົກປີ 2009-10 ແມ່ນຕົວເລກ 6 ເດືອນຕົ້ນສົກປີເທົ່ານັ້ນ.*

ແລະ ຂຶ້ນກັບສາຍຕັ້ງ; ໃນກາງປີ 2007 ກໍ່ຍັງໄດ້ປະກາດໃຊ້ກົດໝາຍວ່າດ້ວຍການກວດສອບບັນຊີ ໂດຍໄດ້ ອະນຸຍາດໃຫ້ອົງການກວດສອບແຫ່ງລັດ ສາມາດລາຍງານໂດຍກົງຕໍ່ສະພາແຫ່ງຊາດໄດ້. ໂດຍລວມແລ້ວເຫັນ ວ່າ ຖານະທາງດ້ານງົບປະມານແຫ່ງລັດໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນເທື່ອລະກ້າວ.

## 2.4. ການດຸ່ນດ່ຽງຂາເຂົ້າ-ຂາອອກ

ແຜນການ 5 ປີ ຄັ້ງທີ VI ໄດ້ແນໃສ່ຂໍ້ໄດ້ປຽບທາງດ້ານການຄ້າ ເພື່ອກະຕຸ້ນການເຕີບໂຕທາງເສດ ຖະກິດ ໂດຍຜ່ານການແຂ່ງຂັນທີ່ເພີ່ມສູງຂຶ້ນ ແລະ ນຳໃຊ້ຂໍ້ໄດ້ປຽບທາງດ້ານເດັດຖານຂອງປະເທດ ພ້ອມທັງ ປະຕິບັດບັນດາຄຳໝັ້ນສັນຍາທາງດ້ານເສດຖະກິດກັບສາກົນ ໃຫ້ມີປະສິດທິຜົນພາຍໃຕ້ຂອບການຄ້າເສລີອາ ຊຽນ ຫຼື ອັບຕາ (AFTA), ຂອບການຄ້າສອງຝ່າຍ ແລະ ຫຼາຍຝ່າຍ ນັບທັງການກຽມເຂົ້າເປັນສະມາຊິກຂອງ ອົງການການຄ້າໂລກ (WTO). ການຂະຫຍາຍຕົວຂອງການຄ້າຕ່າງປະເທດໄດ້ສົ່ງຜົນເຮັດໃຫ້ການຄ້າພາຍໃນ ມີການຂະຫຍາຍຕົວ, ໂດຍການເປີດກວ້າງການຈໍລະຈອນສິນຄ້າ ລະຫວ່າງຕົວເມືອງ ແລະ ຊົນນະບົດ; ຄຽງ ຄູ່ກັນນັ້ນ, ກໍ່ເອົາໃຈໃສ່ຊຸກຍູ້ການຜະລິດເປັນສິນຄ້າ ແລະ ພັດທະນາການສົ່ງອອກ, ຄຸ້ມຄອງການຄ້າຊາຍ ແດນ ແລະ ຂະບວນການຜະລິດ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ ໃຫ້ມີການຂະຫຍາຍຕົວເພີ່ມຂຶ້ນ. ການ ຂະຫຍາຍຕົວທາງດ້ານການຄ້າໄດ້ສົ່ງຜົນປະໂຫຍດເຮັດໃຫ້ການພັດທະນາມະນຸດກໍ່ຄືຊີວິການເປັນຢູ່ຂອງ ປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງ ຊຶ່ງເຫັນໄດ້ໃນຫຼາຍດ້ານ ເຊັ່ນ: ການສ້າງວຽກເຮັດງານທຳ, ການ ເຄື່ອນຍ້າຍ ແຮງງານ, ການຄ້າຊາຍແດນ, ໄຟຟ້າຊົນນະບົດ ແລະ ອື່ນໆ.

ບູລິມະສິດໂດຍລວມຂອງລັດຖະບານໃນແຜນການ 5 ປີ ຄັ້ງທີ VI ໄດ້ກຳນົດໃຫ້ການສົ່ງອອກປະ ກອບສ່ວນເຂົ້າໃນຂົງເຂດເສດຖະກິດໃຫ້ເພີ່ມຫຼາຍຂຶ້ນ ດ້ວຍການເພີ່ມອັດຕາສ່ວນການສົ່ງອອກທີ່ມີມູນຄ່າເພີ່ມ ສູງ ແລະ ເຊື່ອມເຂົ້າຫາຂະແໜງການຕ່າງໆທີ່ກໍ່ໃຫ້ເກີດມີການຈ້າງແຮງງານ ແລະ ສ້າງລາຍໄດ້ພາຍໃນປະ ເທດໃຫ້ຫຼາຍເພີ່ມຂຶ້ນ.

ໃນໄລຍະ 5 ປີ 2006-2010: ມູນຄ່າການສົ່ງອອກຂອງ ສປປ ລາວ ມີລັກສະນະເພີ່ມຂຶ້ນໃນ ທຸກໆ ປີ ເປັນຕົ້ນແມ່ນ ການສົ່ງອອກ ໃນປີ 2009 ຄາດວ່າຈະມີມູນຄ່າເຖິງ 1.005,3 ລ້ານໂດລາສະຫະລັດ ຊຶ່ງ ຫຼຸດລົງເລັກໜ້ອຍຖ້າທຽບໃສ່ ປີ 2008 ແລະ ຄາດວ່າຈະມີມູນຄ່າເພີ່ມຂຶ້ນ ປະມານ 20% ຫຼື ສູງເຖິງ 1.209,0 ລ້ານໂດລາສະຫະລັດ ໃນປີ 2010 (ເບິ່ງຮູບສະແດງ 3). ສິນຄ້າທີ່ສົ່ງອອກສ່ວນໃຫ່ຍ ແມ່ນແຮ່ ທາດ (ເງິນ, ຄຳ ແລະ ທອງແດງ), ເຄື່ອງນຸ່ງຫົ່ມ, ຜະລິດຕະພັນກະສິກຳ, ກາເຟ, ໄຟຟ້າ ແລະ ໄມ້.

ໂຄງປະກອບການສົ່ງອອກ ໃນປີ 2009 ໄດ້ຊີ້ໃຫ້ເຫັນວ່າ ອັດຕາສ່ວນການສົ່ງອອກແຮ່ທາດແມ່ນ ກວມອັດຕາສ່ວນຫຼາຍກວ່າໝູ່ ຄື: 45% ຊຶ່ງໃນນັ້ນ, ການສົ່ງອອກທອງແດງແມ່ນ ກວມອັດຕາສ່ວນຫຼາຍ ກວ່າໝູ່ ຄື 33% ຂອງສັດສ່ວນການສົ່ງອອກທັງໝົດ, ສ່ວນການສົ່ງອອກຄຳ ແລະ ເງິນ ແມ່ນກວມ 9,28%. ຮອງລົງມາແມ່ນ ເຄື່ອງນຸ່ງຫົ່ມ ກວມເອົາ 12,7% ຊຶ່ງເຫັນວ່າ ອັດຕາສ່ວນດັ່ງກ່າວໄດ້ຫຼຸດລົງ ປະມານ 10-11% ເມື່ອທຽບໃສ່ 2008. ສົ່ງອອກໄຟຟ້າ ກວມ 9,97% ຊຶ່ງເພີ່ມຂຶ້ນພຽງເລັກໜ້ອຍເມື່ອທຽບໃສ່ປີ 2008. ນອກນັ້ນ ກໍ່ຍັງມີບັນດາຜະລິດຕະພັນໄມ້ ກວມ 4,90%, ກາເຟ ກວມ 2,25% ແລະ ອື່ນໆ ເຊິ່ງ ລາຍລະອຽດສາມາດເບິ່ງໄດ້ ໃນຕາຕະລາງຂ້າງລຸ່ມນີ້.

**ຕາຕະລາງ 5: ໂຄງປະກອບການສົ່ງອອກ ຂອງ ສປປ ລາວ ແບ່ງຕາມຜະລິດຕະພັນ**

**ແຕ່ປີ 2005-2009 (%)**

| ລາຍການ | 2005 | 2006 | 2007 | 2008 | 2009 |
|---|---|---|---|---|---|
| - ຜະລິດຕະພັນໄມ້ | 14.13 | 11.09 | 9.71 | 6.02 | 4.90 |
| - ກາເຟ | 1.35 | 1.11 | 3.13 | 1.69 | 2.25 |
| - ຜະລິດຕະພັນກະສິກຳ/ເຄື່ອງປ່າ | 3.65 | 2.52 | 1.80 | 4.82 | 9.06 |
| - ຜະລິດຕະພັນອື່ນໆ | 3.74 | 2.72 | 2.52 | 2.60 | 15.43 |
| - ເຄື່ອງນຸ່ງຫົ່ມ | 20.04 | 14.45 | 13.69 | 23.45 | 12.70 |
| - ໄຟຟ້າ | 17.81 | 11.47 | 9.13 | 9.89 | 9.97 |
| - ບໍ່ແຮ່ ໃນນັ້ນ: | 39.16 | 56.55 | 59.94 | 51.44 | 45.26 |
| ຄຳ ແລະ ເງິນ | 15.69 | 12.47 | 10.06 | 7.38 | 9.28 |
| ທອງແດງ | 20.40 | 41.99 | 47.89 | 40.85 | 33.51 |
| ອື່ນໆ | 3.07 | 2.08 | 1.99 | 3.21 | 2.47 |
| - ນ້ຳມັນເຊື້ອໄຟທີ່ຕ່າງປະເທດຊື້ໄປ | 0.13 | 0.09 | 0.09 | 0.09 | 0.44 |
| **ລວມສິນຄ້າຂາອອກ FOB:** | **100.00** | **100.00** | **100.00** | **100.00** | **100.00** |

*ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.*

ມູນຄ່າການນຳເຂົ້າຂອງ ສປປ ລາວ ໃນໄລຍະ 5 ປີ 2006-2010 ແມ່ນມີລັກສະນະເພີ່ມຂຶ້ນໃນທຸກໆປີ ເຊັ່ນ: ໃນປີ 2009 ການນຳເຂົ້າຄາດວ່າຈະມີມູນຄ່າເຖິງ 1.413,5 ລ້ານໂດລາສະຫະລັດ ເຊິ່ງເພີ່ມຂຶ້ນເລັກໜ້ອຍຖ້າທຽບໃສ່ປີ 2008 ແລະ ຄາດວ່າຈະມີມູນຄ່າເພີ່ມຂຶ້ນເຖິງ 1.553,5 ລ້ານໂດລາສະຫະລັດ ໃນປີ 2010 (ເບິ່ງຮູບສະແດງ 3).

ໃນໄລຍະຜ່ານມາ, ສິນຄ້າທີ່ນຳເຂົ້າສ່ວນໃຫຍ່ແມ່ນ ສິນຄ້າເພື່ອການລົງທຶນ ຊຶ່ງປະກອບມີເຄື່ອງຈັກ, ພາຫະນະການຜະລິດ ຕະຫຼອດຈົນເຖິງເຄື່ອງກໍ່ສ້າງ ແລະ ເຄື່ອງໄຟຟ້າ (ເຊັ່ນ: ໃນປີ 2008 ສິນຄ້າ ດັ່ງກ່າວ ແມ່ນກວມອັດຕາສ່ວນປະມານ 40% ແລະ ໃນປີ 2009 ກໍ່ເພີ່ມຂຶ້ນເປັນ 69,61%). ຖັດລົງມາ ແມ່ນສິນຄ້າເພື່ອການຊົມໃຊ້ ເຊັ່ນ: ອາຫານ, ຢາປົວພະຍາດ ແລະ ເສື້ອຜ້າ ( ເຊັ່ນ: ໃນປີ 2009 ກວມອັດ ຕາສ່ວນເຖິງ 21,87% ແຕ່ເຫັນວ່າສິນຄ້າດັ່ງກ່າວມີອັດຕາສ່ວນຫຼຸດລົງເທົ່າຕົວ ເມື່ອສົມທຽບໃສ່ປີ 2008); ຮອງລົງມາ ແມ່ນວັດຖຸດິບ ແລະ ເຄື່ອງທີ່ໃຊ້ສຳລັບຂະແໜງຕັດຫຍິບ ກວມອັດຕາສ່ວນ 4,72% ຂອງການ ນຳເຂົ້າທັງໝົດ (ເຫັນວ່າຫຼຸດລົງ ຈາກປີ 2008 ປະມານສາມເທົ່າຕົວ) ແລະ ອື່ນໆ ເຊິ່ງລາຍລະອຽດສາມາດ ເບິ່ງໄດ້ໃນຕາຕະລາງຂ້າງລຸ່ມນີ້.

**ຕາຕະລາງ 6: ໂຄງປະກອບການນ□ຳເຂົ້າ ຂອງ ສປປ ລາວ ແບ່ງຕາມຜະລິດຕະພັນ**
**ແຕ່ປີ 2005-2009 (%)**

| ລາຍການ | 2005 | 2006 | 2007 | 2008 | 2009 |
|---|---|---|---|---|---|
| ສິນຄ້າເພື່ອການລົງທຶນ | 44.14 | 46.75 | 55.69 | 40.45 | 69.61 |
| ເຄື່ອງຈັກ ແລະ ພາຫະນະການຜະລິດ | 14.35 | 13.44 | 16.62 | 22.46 | 47.23 |

| | | | | | |
|---|---|---|---|---|---|
| ພາຫະນະ (50% ຂອງມູນຄ່າທັງໝົດ) | 5.33 | 5.65 | 10.91 | 3.92 | 11.10 |
| ນ້ຳມັນ (50% ຂອງມູນຄ່າທັງໝົດ) | 9.75 | 9.16 | 16.31 | 10.65 | 6.28 |
| ເຄື່ອງກໍ່ສ້າງ/ເຄື່ອງໄຟຟ້າ | 14.71 | 18.50 | 11.85 | 3.42 | 5.00 |
| ສິນຄ້າຊົມໃຊ້ | 45.20 | 41.52 | 33.93 | 43.57 | 21.87 |
| ວັດຖຸດິບ ແລະ ເຄື່ອງຈັກຂະແໜງຕັດຫຍິບ | 7.92 | 9.31 | 7.55 | 12.48 | 4.72 |
| ວັດຖຸມີຄ່າ | 1.14 | 0.99 | 0.95 | 1.44 | 1.20 |
| ໄຟຟ້າ | 1.38 | 1.23 | 1.66 | 1.92 | 2.45 |
| ນ້ຳມັນເຊື້ອໄຟ | 0.23 | 0.21 | 0.22 | 0.13 | 0.14 |
| **ລວມສິນຄ້າຂາເຂົ້າ (CIF)** | **100.00** | **100.00** | **100.00** | **100.00** | **100.00** |

*ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ*

ການຂາດດຸນການຄ້າ: ການຄ້າຕ່າງປະເທດ ຂອງ ສປປ ລາວ ຍັງສືບຕໍ່ຂາດດຸນ ຊຶ່ງໃນໄລຍະ 5 ປີ 2006-2010 ມີປະມານ 1.384 ລ້ານໂດລາສະຫະລັດ (ຂາດດຸນສະເລ່ຍເທົ່າກັບ 276,80 ລ້ານໂດລາ ສະຫະລັດ ຕໍ່ປີ) ເທົ່າກັບ 27,1% ຂອງການສົ່ງອອກທັງໝົດ. ແຕ່ເຫັນວ່າການພັດທະນາການຄ້າຕ່າງປະເທດ ມີທ່າອ່ຽງດີຂຶ້ນ ເຊັ່ນ: ອັດຕາການຂາດດຸນການຄ້າຕໍ່ເສດຖະກິດລວມ ໄດ້ຫຼຸດລົງ ຈາກ 10,79% ໃນໄລຍະ ປີ 2001-2005 ມາເປັນ 5,3% ໃນໄລຍະປີ 2006-2010 (ແຜນການ 2006-2010 ໃຫ້ຢູ່ໃນລະດັບ 5,8%).

**ຮູບສະແດງ 3: ມູນຄ່າການສົ່ງອອກ ແລະ ນຳເຂົ້າສິນຄ້າ ແຕ່ປີ 2005-2009**




*ແຫຼ່ງຂໍ້ມູນ: ດຸນການຊຳລະສະສາງກັບຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ*

# 3. ການພັດທະນາຕາມຂະແໜງການຕົ້ນຕໍ, ຂົງເຂດ ແລະ ເຂດແຄວ້ນ

## 3.1. ການພັດທະນາຂະແໜງການ

### 3.1.1. ດ້ານກະສິກຳ-ປ່າໄມ້

ໃນໄລຍະຜ່ານມາ ຂະແໜງກະສິກຳ-ປ່າໄມ້ ໄດ້ຂະຫຍາຍຕົວໂດຍສະເລ່ຍ 4,1% ແລະ ກວມເອົາ ປະມານ 30,4% ຂອງລວມຍອດຜະລິດຕະພັນພາຍໃນ. ໃນນັ້ນ, ຂະແໜງປູກຝັງ-ລ້ຽງສັດ ແລະ ປ່າໄມ້ ຂະຫຍາຍຕົວ ສະເລ່ຍ 4,07% ແລະ ກວມເອົາປະມານ 88,6% ຂອງມູນຄ່າເພີ່ມໃນຂະແໜງກະສິກຳ-ປ່າໄມ້ ແລະ ຂະແໜງການປະມົງຂະຫຍາຍຕົວສະເລ່ຍ 4,03%, ກວມເອົາ 11,4% ຂອງມູນຄ່າເພີ່ມໃນ ຂະແໜງກະສິກຳ-ປ່າໄມ້. ໂດຍລວມແລ້ວ ການຜະລິດຂອງຂະແໜງກະສິກຳ-ປ່າໄມ້ ໄດ້ຮັບການພັດທະນາ ແລະ ສາມາດຕອບສະໜອງສະບຽງອາຫານ ຕໍ່ຄວາມຕ້ອງການພາຍໃນໄດ້ໂດຍພື້ນຖານ.

ເນື້ອທີ່ ແລະ ຜົນຜະລິດກະສິກຳ ໂດຍສະເພາະແມ່ນເຂົ້າ ແລະ ພືດ ສ່ວນໃຫຍ່ແມ່ນຢູ່ເຂດ ພາກ ກາງ ເຊິ່ງກວມປະມານ 55% ຂອງເນື້ອທີ່ ແລະ 57% ຂອງຜົນຜະລິດທັງຫມົດ, ຖັດລົງມາແມ່ນ ພາກໃຕ້ ກວມປະມານ 23% ແລະ ພາກເໜືອ ກວມປະມານ 22% (ເນື້ອທີ່) ແລະ 20% (ຜົນຜະລິດ) ແຂວງ ສະຫວັນນະເຂດ ເປັນແຂວງທີ່ມີເນື້ອທີ່ປູກພືດ (ເຂົ້າ) ຫລາຍກວ່າໝູ່ ກວມເອົາ 22%, ຖັດຈາກນັ້ນ ແມ່ນ ແຂວງຈຳປາສັກ (12%), ນະຄອນຫລວງວຽງຈັນ (9%) ແລະ ສາລະວັນ (9%) ແລະ ແຂວງວຽງຈັນ ປະມານ 8% ຂອງເນື້ອທີ່ປູກເຂົ້າທັງຫມົດ, ເຖິງຢ່າງໃດກໍ່ຕາມ ໂດຍສະເລ່ຍແລ້ວ ຄົວເຮືອນທີ່ເຮັດກະສິກຳ ມີເນື້ອທີ່ຜະລິດ ປະມານ 1,6 ເຮັກຕາ. ແຜນທີ່ສະແດງໃຫ້ເຫັນ ເຖິງຄວາມແຕກຕ່າງຂະຫນາດຂອງເນື້ອທີ່ ການຜະລິດກະສິກຳ ຕໍ່ຄົວເຮືອນ ລະຫວ່າງແຂວງໃນຂອບເຂດທົ່ວປະເທດ.

**ຮູບສະແດງ 4 : ຂະໜາດສະເລ່ຍຂອງເນື້ອທີ່ກະສິກຳ ຕໍ່ຄົວເຮືອນ**




ແຫລ່ງຂໍ້ມູນ: ປຶ້ມແຜນທີ່ ກ່ຽວກັບເສດຖະກິດ-ສັງຄົມ ຂອງ ສປປ ລາວ

- **ການສົ່ງເສີມການຜະລິດສະບຽງອາຫານ ແລະ ພືດຜັກ:** ໄດ້ມີການຊຸກຍູ້ສົ່ງເສີມການຜະລິດບາງຜະລິດຕະພັນ ທີ່ເປັນທ່າແຮງເປັນຕົ້ນ: ການຜະລິດເຂົ້າ, ສາລີ, ອ້ອຍ, ກາເຟ, ຊາ, ຢາສູບ, ຖົ່ວດິນ, ຖົ່ວເຫຼືອງ, ຖົ່ວຂຽວ, ມັນຕົ້ນ, ຝ້າຍ, ສັດລ້ຽງ. ການຜະລິດເຂົ້າ ນັບແຕ່ປີ 2006 ມາເຖິງປະຈຸບັນສາມາດສືບຕໍ່ ກຸ້ມຕົນ

ເອງໄດ້ ໃນຂອບເຂດທົ່ວປະເທດ ແລະ ຍັງມີສ່ວນແຮເພື່ອເປັນສິນຄ້າອີກດ້ວຍ. ໂດຍສະເລ່ຍແລ້ວ ຜົນຜະລິດເຂົ້າລວມ ໃນແຕ່ລະປີ ປະມານ 2,9 ລ້ານໂຕນ (ຜົນຜະລິດເຂົ້າໄດ້ເພີ່ມຂຶ້ນ ຈາກ 2,56 ລ້ານ ໂຕນ ໃນປີ 2005) ແລະ ປະຕິບັດໄດ້ ປະມານ 88% ທຽບກັບຄາດໝາຍທີ່ວາງໄວ້ໃນແຜນ 5 ປີ ຄັ້ງທີ VI (3,3 ລ້ານ ໂຕນ), ຄິດໄລ່ການຜະລິດເຂົ້າຕໍ່ຫົວຄົນ ໄດ້ປະມານ 470 ກລ/ຄົນ/ປີ (ເຂົ້າເປືອກ) ເຊິ່ງສາມາດ ຕອບສະໜອງໃຫ້ແກ່ສັງຄົມໄດ້ໂດຍພື້ນຖານ ແຕ່ບາງລະດູການລາຄາເຂົ້າມີການເໜັງຕີງສູງຂຶ້ນ ເນື່ອງມາຈາກ ການຈໍລະຈອນແຈກຢາຍຍັງເຮັດບໍ່ທັນໄດ້ດີ.

ສະມັດຕະພາບການຜະລິດ ກໍ່ມີການຂະຫຍາຍຕົວ, ຈາກ 3,49 ໂຕນ/ເຮັກຕາ ໃນປີ 2005 ມາເປັນ 3,54 ໂຕນ/ເຮັກຕາ ໃນປີ 2008. ໃນລະດູການຜະລິດ ປີ 2009 ການຜະລິດເຂົ້າໄດ້ 3,14 ລ້ານໂຕນ, ໃນນັ້ນ ອັດຕາສ່ວນຂອງຜົນຜະລິດເຂົ້ານາປີ ກວມເອົາ 78%, ຜົນຜະລິດເຂົ້ານາແຊງ ກວມອັດຕາສ່ວນ 14,4% ແລະ ຜົນຜະລິດເຂົ້າເຂດເນີນສູງ ກວມອັດຕາສ່ວນ 7%.

ສະຫລຸບລວມແລ້ວ, ແຕ່ປີ 2006-2010 ການຜະລິດເຂົ້ານາປີ ສາມາດບັນລຸໄດ້ໃນເນື້ອທີ່ສະເລ່ຍ 631 ພັນເຮັກຕາ/ປີ ສະເລ່ຍຜົນຜະລິດໄດ້ 2,3 ລ້ານໂຕນຕໍ່ປີ, ການຜະລິດເຂົ້ານາແຊງ ບັນລຸໄດ້ໃນເນື້ອທີ່ສະເລ່ຍ 89 ພັນກ່ວາເຮັກຕາ/ປີ ສະເລ່ຍຜົນຜະລິດໄດ້ 423 ພັນໂຕນ, ການຜະລິດເຂົ້ານາແຊງຍັງບໍ່ໄດ້ຕາມແຜນການ ເຊິ່ງສາເຫດມາຈາກປັດໄຈພາຍໃນ ແລະ ປັດໄຈພາຍນອກ ເຊັ່ນ: ຜົນກະທົບທາງທໍາມະຊາດ, ສະພາບແວດລ້ອມ, ການເໜັງຕີງຂອງລາຄານ້ໍາມັນ, ຕົ້ນທຶນການຜະລິດ, ກົນໄກຕະຫຼາດ ແລະ ອື່ນໆ..., ການຜະລິດເຂົ້າເຂດເນີນສູງ ສາມາດບັນລຸໄດ້ໃນເນື້ອທີ່ສະເລ່ຍ 110 ພັນເຮັກຕາ/ປີ ແລະ ຜົນຜະລິດສະເລ່ຍ 205 ພັນໂຕນ.

ນອກຈາກການຜະລິດເຂົ້າແລ້ວ, ຍັງມີການຜະລິດພືດສະບຽງອາຫານຕ່າງໆ ເຊິ່ງໄດ້ເພີ່ມຂຶ້ນຢ່າງ ຈະແຈ້ງ ທຽບໃສ່ໄລຍະຜ່ານມາ ແລະ ສາມາດສະໜອງໃຫ້ແກ່ການບໍລິໂພກຂອງສັງຄົມໄດ້ໂດຍພື້ນຖານ, ສະພາບການຊື້-ຂາຍ ກໍ່ປົກກະຕິ, ມີຜົນຜະລິດພຽງພໍ ແລະ ລາຄາກໍ່ບໍ່ເໜັງຕີງຫຼາຍ. ຜົນຜະລິດພືດຜັກ, ເຜືອກມັນ ແລະ ໝາກໄມ້ ຊະນິດຕ່າງໆ ເພື່ອທົດແທນການນໍາເຂົ້າໄດ້ສືບຕໍ່ຂະຫຍາຍຕົວ.

ໄປຄຽງຄູ່ກັບການສົ່ງເສີມ ການຜະລິດສະບຽງອາຫານ ສະໜອງໃຫ້ແກ່ການບໍລິໂພກຂອງສັງຄົມແລ້ວ ຍັງໄດ້ສົ່ງເສີມການຜະລິດເພື່ອເປັນສິນຄ້າປ້ອນໂຮງງານແປຮູບຕ່າງໆ ເຊັ່ນ: ການຜະລິດສາລີອາຫານສັດ ສາມາດປ້ອນໂຮງງານຜະລິດຫົວອາຫານສັດພາຍໃນຢ່າງພຽງພໍ ແລະ ມີສ່ວນອອກໄປຕ່າງປະເທດ, ຜົນຜະລິດປະຕິບັດໄດ້ຢ່າງພຽງພໍ ແລະ ມີສ່ວນສົ່ງອອກໄປຕ່າງປະເທດ, ຜົນຜະລິດປະຕິບັດໄດ້ ຄື: ເນື້ອທີ່ເພີ່ມຂຶ້ນ 167% ຈາກ 86 ພັນ ໃນປີ 2005 ມາເປັນ 229 ພັນເຮັກຕາ ໃນປີ 2008 ແລະ ທຽບໃສ່ຄາດໝາຍປີ 2010 ແມ່ນປະຕິບັດໄດ້ລື່ນ 98%. ສ່ວນຜົນຜະລິດສາລີ ແມ່ນເພີ່ມຂຶ້ນ 178% ຈາກ 373 ພັນໂຕນ ໃນປີ 2005 ມາເປັນ 1.035 ພັນໂຕນ ໃນປີ 2008 ແລະ ທຽບໃສ່ຄາດຫມາຍ ປີ 2010 ສາມາດປະຕິບັດໄດ້ລື່ນ 4 ເທົ່າຕົວ, ການຜະລິດສາລີສ່ວນຫລາຍແມ່ນຢູ່ບັນດາແຂວງພາກເໜືອ ເປັນຕົ້ນແມ່ນ ແຂວງໄຊຍະບູລີ, ບໍ່ແກ້ວ, ຫົວພັນ, ອຸດົມໄຊ, ຫລວງພະບາງ ແລະ ຊຽງຂວາງ. ການຜະລິດມັນຕົ້ນ ໄດ້ມີການສົ່ງເສີມໃຫ້ປະຊາຊົນ ຜະລິດເປັນຂະບວນຢ່າງກວ້າງຂວາງ ເພື່ອສະໜອງໃຫ້ແກ່ໂຮງງານຜະລິດແປ້ງມັນຕົ້ນສົ່ງອອກ, ໃນນີ້ ຜົນຜະລິດ ປີ 2008 ເພີ່ມຂຶ້ນເຖິງ 514% ຈາກ 51 ພັນໂຕນ ໃນປີ 2005 ມາເປັນ 315 ພັນໂຕນ, ການຜະລິດອ້ອຍ ເພື່ອສະໜອງໃຫ້ແກ່ໂຮງງານຜະລິດນ້ໍາຕານ ເພີ່ມຂຶ້ນ 282% ຈາກ 196 ພັນໂຕນ ໃນປີ

2005 ມາເປັນ 749 ພັນໂຕນ ໃນປີ 2008, ນອກຈາກນີ້, ຍັງມີການຜະລິດກາເຟ ແລະ ພືດຜັກປອດສານເຄມີຈຳນວນຫນຶ່ງຢູ່ເຂດທີ່ມີເງື່ອນໄຂອຳນວຍຄວາມສະດວກ (ເຂດປາກຊ່ອງ, ພູພຽງບໍລິເວນ) ເພື່ອສົ່ງອອກຂາຍຕ່າງປະເທດ ເຊັ່ນ: ຜັກກະລ່ຳປີ, ຫມາກຊູ, ຜັກຫອມ ແລະ ພືດອື່ນໆ....

- **ການລ້ຽງສັດ ແລະ ການປະມົງ:** ເພື່ອຄ້ຳປະກັນສະບຽງອາຫານ ກໍ່ໄດ້ລິເລີ່ມຫັນປ່ຽນລະບົບການຜະລິດຂຶ້ນເທື່ອລະກ້າວ ໂດຍໄດ້ມີການປັບປຸງທັງການລ້ຽງສັດແບບທຳມະຊາດ ແລະ ທັງການຫັນມາຜູກມັດລ້ຽງໃສ່ຄັ່ງ ແລະ ຄອກ ພ້ອມທັງມີການຄຸ້ມຄອງລ້ຽງເກືອຫລາຍຂຶ້ນ, ໄດ້ສົ່ງເສີມການລ້ຽງແບບທົ່ວປ່ອງຊົນ, ໄດ້ຄວບຄຸມການເຄື່ອນຍ້າຍສັດ ແລະ ສະຫນອງຢາກັນພະຍາດ, ໄດ້ຂະຫຍາຍສັດຕະວະແພດບ້ານ, ສາມາດສັກຢາກັນພະຍາດສັດໃຫຍ່ໄດ້ 36%, ຫມູ 26% ແລະ ສັດປີກ 24%, ສະພາບການລະບາດຂອງໄຂ້ຫວັດສັດປີກແມ່ນສາມາດຄວບຄຸມໄດ້ຢ່າງທັນການ, ການລ້ຽງສັດ ແລະ ການລ້ຽງປາແບບອຸດສາຫະກຳ ໄດ້ມີທ່ວງທ່າຂະຫຍາຍຕົວໃນຮູບແບບເປັນຟາມຫລາຍສົມຄວນຕາມຊານເມືອງໃຫຍ່ ແລະ ຢູ່ຕາມເຂດພູດອຍ ເພື່ອເປັນສິນຄ້າແລກປ່ຽນຕາມຊາຍແດນ ເປັນຕົ້ນແມ່ນ ການລ້ຽງສັດໃຫຍ່ ການລ້ຽງຫມູ, ສັດປີກ ແລະ ປາ ສັງລວມມູນຄ່າ ສະຫນອງພາຍໃນປະມານ 102,4 ລ້ານໂດລາ (ສິນຄ້າຕົ້ນຕໍແມ່ນ ງົວ ປະມານ 40 ພັນໂຕ, ຄວາຍ ປະມານ 45 ພັນໂຕ). ຂະຫຍາຍຕາຫນ່າງການຜະລິດລູກປາ ລົງສູ່ 32 ສະຖານີຂອງລັດ ແລະ ປັບປຸງຄຸ້ມຄອງການຜະລິດເພື່ອສະຫນອງລູກປາໃຫ້ສັງຄົມ ເຊິ່ງຜ່ານມາສະຫນອງລູກປາໄດ້ໃນລະລັບ 46% ຂອງຄວາມຕ້ອງການ ໃນທົ່ວປະເທດ ຫລື ປະມານ 300 ລ້ານໂຕ.

- **ການຜະລິດສິນຄ້າດ້ານປ່າໄມ້ ແລະ ເຄື່ອງປ່າຂອງດົງ:** ສາມາດສະຫນອງພາຍໃນປະເທດ ປະມານ 31,4 ລ້ານໂດລາ, ເປັນສິນຄ້າສົ່ງອອກປະມານ 74,4 ລ້ານໂດລາ. ການປູກໄມ້ ປະຈຸບັນໄດ້ມີຂະບວນແຜ່ຫລາຍ ຢູ່ທົ່ວສັງຄົມ ແລະ ເຫັນວ່າພາກລັດ, ເອກະຊົນ, ບັນດາອົງການຈັດຕັ້ງ, ພໍ່ແມ່ປະຊາຊົນບັນດາເຜົ່າ, ກໍໄດ້ຕັ້ງຫນ້າ ແລະ ເອົາໃຈໃສ່ປູກໄມ້ເປັນທຸລະກິດຫລາຍຂຶ້ນ ເປັນຕົ້ນ ການປູກໄມ້ວິກ, ການປູກໄມ້ສັກ, ການປູກໄມ້ເກດສະຫນາ ແລະ ການປູກຢາງພາລາ. ການລົງທຶນຈາກຕ່າງປະເທດ ໃສ່ການປູກໄມ້ກໍ່ມີທ່າອ່ຽງເພີ່ມຂຶ້ນເປັນລຳດັບ ເຊັ່ນ: ສສ.ຫວຽດນາມ, ໄທ ແລະ ສປ.ຈີນ, ລົງທຶນໃສ່: ປູກຢາງພາລາ ຢູ່ແຂວງພາກເຫນືອ, ພາກກາງ, ພາກໃຕ້, ປູກໄມ້ວິກ ຢູ່ພາກກາງ. ເຖິງວ່າການປູກໄມ້ໄດ້ກາຍເປັນຂະບວນ, ແຕ່ການບົວລະບັດຮັກສາຍັງບໍ່ທັນໄດ້ເອົາໃຈໃສ່ເປັນຢ່າງດີເທົ່າທີ່ຄວນ ແລະ ຍັງຂາດທຶນຮອນຈຳນວນຫນຶ່ງ ທີ່ເປັນໄມ້ງັດທາງດ້ານວິຊາການ ເປັນຕົ້ນແມ່ນ ການສົ່ງເສີມການລົງສູ່ຮາກຖານຍັງບໍ່ທັນແຂງແຮງເທົ່າທີ່ຄວນ.

- **ການຜະລິດສິນຄ້າການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ:** ໃນໄລຍະຜ່ານມາໄດ້ຮັບການເອົາໃຈໃສ່ຫັນເຂົ້າສູ່ການຄຸ້ມຄອງ ແລະ ຂຸດຄົ້ນຢ່າງມີແຜນການ, ພ້ອມທັງມີບັນດານະໂຍບາຍ ແລະ ຂໍ້ກຳນົດ, ລະບຽບການ, ຄຳສັ່ງແນະນຳສະເພາະເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດຜ່ານມາ. ການຂຸດຄົ້ນໄມ້ຈາກ ປ່າທຳມະຊາດ ແມ່ນຫລຸດລົງເປັນກ້າວໆໃນແຕ່ລະປີ ຊຸກຍູ້ໃຫ້ພາກສ່ວນທີ່ດຳເນີນທຸລະກິດໄມ້ເອົາໃຈໃສ່ ການປຸງແຕ່ງໄມ້ ເພື່ອການສົ່ງອອກຕ່າງປະເທດ, ປູກໄມ້ທົດແທນເພື່ອກ້າວໄປສູ່ການຂຸດຄົ້ນ ແລະ ປຸງແຕ່ງ ໄມ້ປູກໃນຕໍ່ຫນ້າ. ການຂຸດຄົ້ນໄມ້ສ່ວນຫລາຍ ແມ່ນເລັ່ງໃສ່ເຂດກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານ ແລະ ເຂດທີ່ໄດ້ຜ່ານການສຳຫລວດຈັດສັນປ່າຜະລິດແບບຍືນນານ.

ສຳລັບເຄື່ອງປ່າຂອງດົງທີ່ມີການເກັບກູ້ ແລະ ສາມາດເປັນສິນຄ້າຕົ້ນຕໍ ມີຄື: ຫວາຍ 8,1 ລ້ານເສັ້ນ, ໄມ້ປ່ອງ 5,1 ລ້ານລຳ, ຫລັກຮົ້ວ 38 ພັນຫລັກ, ຟືນ 178 ພັນຫລາ, ໄມ້ເກດສະໜາ 180 ໂຕນ ແລະ ເຄື່ອງປ່າຂອງດົງປະເພດ (ຢາງ, ເປືອກ, ເຄືອ, ດອກ, ຮາກ, ຫົວ ແລະອື່ນໆ) ໄດ້ທັງໝົດ 64.667 ໂຕນ. ການປູກໄມ້ ແລະ ການພັດທະນາປ່າໄມ້ ປະຈຸບັນ ໄດ້ມີຂະບວນການແຜ່ຫລາຍຢູ່ທົ່ວສັງຄົມ ຄື: ປີ 2008 ການກ້າເບ້ຍໄມ້ເພີ່ມຂຶ້ນເຖິງ 219% ຈາກ 36 ລ້ານເບ້ຍ ໃນປີ 2005 ມາເປັນ 113 ລ້ານເບ້ຍ ໃນປີ 2008, ປູກໄມ້ໄດ້ 40 ພັນເຮັກຕາ ທຽບກັບ 14 ພັນເຮັກຕາ ໃນປີ 2005 ເຫັນວ່າເພີ່ມຂຶ້ນ 191%, ສ່ວນ ການຟື້ນຟູປ່າ ຮອດປະຈຸບັນ ສາມາດປະຕິບັດໄດ້ 127 ພັນເຮັກຕາ ທຽບກັບ 57 ພັນເຮັກຕາ ໃນປີ 2005 ເພີ່ມຂຶ້ນ 124%.

### 3.1.2. ດ້ານອຸດສາຫະກຳ

ໃນໄລຍະຜ່ານມາຂະແໜງອຸດສາຫະກຳ ໄດ້ມີການຂະຫຍາຍຕົວ ໂດຍສະເລ່ຍ 12,5% ຕໍ່ປີ, ໃນນັ້ນ ການຂຸດຄົ້ນແຮ່ທາດກວມເອົາ 35,4% ຂອງລວມຍອດມູນຄ່າເພີ່ມຂອງຂະແໜງການອຸດສາຫະກຳ, ອຸດສາ ຫະກຳປຸງແຕ່ງ ກວມເອົາປະມານ 34,3% ແລະ ສ່ວນເຫລືອແມ່ນການກໍ່ສ້າງໄຟຟ້າ ແລະ ນ້ຳປະປາ. ລະອຽດເບິ່ງຮູບສະແດງ 5 ຂ້າງລຸ່ມນີ້.

**ຮູບສະແດງ 5: ໂຄງປະກອບມູນຄ່າເພີ່ມຂອງຂະແໜງອຸດສາຫະກຳ ສະເລ່ຍ ແຕ່ 2006-2010**




*ແຫລ່ງຂໍ້ມູນ: ກົມສະຖິຕິ, ກະຊວງແຜນການ ແລະ ການລົງທຶນ*

#### 1). ຂະແໜງບໍ່ແຮ່:

ລວມຍອດມູນຄ່າເພີ່ມ ຂອງຂະແໜງການບໍ່ແຮ່ ຂະຫຍາຍຕົວສູງ, ການເພີ່ມຂຶ້ນໂດຍສະເລ່ຍໃນໄລ ຍະ 2006-2010 ແມ່ນປະມານ 25% ແລະ ປະກອບສ່ວນຂອງຂະແໜງການນີ້ ຕໍ່ລວມຍອດຜະລິດຕະພັນ ພາຍໃນ ແມ່ນປະມານ 9,4%. ຍອດມູນຄ່າການຜະລິດບໍ່ແຮ່ ໃນໄລຍະ 5 ປີ 2006-2010 ມີການ ຂະຫຍາຍຕົວເພີ່ມຂຶ້ນ 13,9% ຕໍ່ປີ (ຕາມລາຄາປະຈຸບັນ) ຫຼື ເພີ່ມຂຶ້ນ 19,9% ຕໍ່ປີ (ຕາມລາຄາຄົງທີ່ ປີ 2002); ການຂຸດຄົ້ນ ແລະ ຫຼອມຄຳແທ່ງເພີ່ມຂຶ້ນ ຈາກ 9,7 ໂຕນ ໃນສົກປີ 2005-2006 ເປັນ 10,08 ໂຕນ ໃນສົກປີ 2007-2008 (ແຜນການປີ 2010 ແມ່ນ 13 ໂຕນ), ຈຳໜ່າຍຄຳແທ່ງ, ທອງແຜ່ນ ແລະ ທອງຝຸ່ນ 3 ປີ ໄດ້ 1,52 ຕື້ໂດລາ; ໃນນັ້ນ, ລັດໄດ້ຮັບຈາກການມອບພັນທະ ແລະ ແບ່ງປັນຮຸ້ນຈຳນວນ

232,62 ລ້ານໂດລາ. ນອກນັ້ນ ຍັງໄດ້ຮັບທຶນພັດທະນາທ້ອງຖິ່ນ ຈາກບໍ່ຄຳເຊໂປນ ປີລະ 5 ແສນໂດລາ, ຈາກບໍລິສັດພູເບ້ຍ ປີລະ 2 ແສນໂດລາ. ມູນຄ່າການລົງທຶນໃນຂະແໜງບໍ່ແຮ່ ໄລຍະ 2006-2009 ມີທັງໝົດ 2.545,3 ລ້ານໂດລາ ເພີ່ມຂຶ້ນ 5 ເທົ່າຕົວ ເມື່ອທຽບກັບ 5 ປີ ຜ່ານມາ (2001-2005); ປະຈຸບັນມີນັກລົງທຶນພາຍໃນ ແລະ ຕ່າງປະເທດ ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການບໍ່ແຮ່ທັງໝົດ 154 ບໍລິສັດ ມີ 269 ໂຄງການ; ໃນນັ້ນ, ເປັນໂຄງການຂຸດຄົ້ນ 49 ໂຄງການ. ໂຮງງານປຸງແຕ່ງແຮ່ທີ່ກຳລັງກໍ່ສ້າງມີຄື: ໂຮງງານປຸງແຕ່ງແຮ່ເກືອກາລີ ຢູ່ເມືອງໄຊທານີ ນະຄອນຫຼວງວຽງຈັນ ເຊິ່ງມີຄວາມສາມາດຜະລິດ 1 ແສນໂຕນຕໍ່ປີ ແລະ ພວມກະກຽມເພື່ອກໍ່ສ້າງໂຮງງານປຸງແຕ່ງຫຼັກ ຢູ່ເມືອງວັງວຽງ ແຂວງວຽງຈັນ.

ດ້ານທໍລະນີສາດ: ການສ້າງແຜນທີ່ທໍລະນີສາດ-ແຮ່ທາດ ແມ່ນສຳຄັນທີ່ສຸດ, ແຜນທີ່ມາດຕາສ່ວນໃຫ່ຍເທົ່າໃດ ຍິ່ງຈະຮູ້ລະອຽດ ກ່ຽວກັບຈຳນວນແຮ່ທາດໃນພື້ນດິນ. ຮອດປະຈຸບັນ ໄດ້ສຳເລັດການສ້າງແຜນທີ່ມາດຕາສ່ວນ 1/1.000.000 ທົ່ວປະທດແລ້ວ, ມາດຕາດສ່ວນ 1/200.000 ໄດ້ 54,86% ຂອງເນື້ອທີ່ທົ່ວປະເທດ ແລະ ແຜນທີ່ມາດຕາສ່ວນທີ່ໃຫ່ຍ 1/50.000 ແມ່ນສຳເລັດຢູ່ບາງເຂດເທົ່ານັ້ນ ເຊັ່ນ: ເຂດເຊໂປນ, ຊະນະຄາມ, ລຽບຕາມແຄມແມ່ນ້ຳຂອງ ເຂດພາກເໜືອ ແລະ ເຂດທີ່ມີເປົ້າໝາຍຂຸດຄົ້ນຂອງບໍລິສັດ.

**2). ອຸດສາຫະກຳປຸງແຕ່ງ:**

ລວມຍອດມູນຄ່າເພີ່ມຜົນຜະລິດຂອງຂະແໜງອຸດສາຫະກຳປຸງແຕ່ງ ໄດ້ຂະຫຍາຍຕົວໃນອັດຕາສະເລ່ຍປະມານ 9,4% ຕໍ່ປີ ໃນໄລຍະ 2006-2010. ອຸດສາຫະກຳປະເພດນີ້ ເປັນຂະແໜງທີ່ໃຊ້ທຶນໜ້ອຍກວ່າ ເມື່ອທຽບໃສ່ ຂະແໜງອຸດສາຫະກຳອື່ນໆ ແລະ ກາລະໂອກາດ ການຈ້າງງານພັດສູງ. ບາງຂະແໜງການຕົ້ນຕໍຂອງອຸດສາຫະກຳປຸງແຕ່ງ ທີ່ມີການຂະຫຍາຍຕົວດີ ເຊັ່ນ: ການຜະລິດແຜ່ນແພ, ຕັດຫຍິບ, ການປຸງແຕ່ງໄມ້ ແລະ ອາຫານ.

**ຂະແໜງຕັດຫຍິບ:** ເປັນຂະແໜງທີ່ມີການຂະຫຍາຍຕົວດີ ສາມາດສ້າງລາຍຮັບ, ສ້າງວຽກເຮັດງານທຳໃຫ້ແກ່ສັງຄົມໄດ້ຫລາຍພໍສົມຄວນ. ປັດຈຸບັນມີໂຮງງານ 54 ແຫ່ງ, ອຸດສາຫະກຳທີ່ກ່ຽວຂ້ອງອື່ນໆ ເຊັ່ນ: ໂຮງງານຊັກຟອກ ມີ 5 ແຫ່ງ, ໂຮງງານປັກກາ ມີ 12 ແຫ່ງ, ໂຮງງານພິມກາ ມີ 10 ແຫ່ງ, ໂຮງງານຜະລິດແກັດເຈ້ຍ ມີ 3 ແຫ່ງ, ມູນຄ່າການລົງທຶນພາກເອກະຊົນຂະແໜງຕັດຫຍິບ ໄລຍະ 2006-2009 ແມ່ນ 15.715 ພັນໂດລາ ແມ່ນເພີ່ມຂຶ້ນ 84,9% ເມື່ອທຽບກັບ 5 ຜ່ານມາ (2001-2005). ເຖິງຢ່າງໃດກໍຕາມ ການພັດທະນາຂະແໜງການຕັດຫຍິຍ ຍັງໄດ້ຮັບຄວາມກົດດັນບາງບັນຫາ ເຊັ່ນ: ການຂາດເຂີນການສະໜັບສະໜູນການເງິນ, ຂາດການເຊື່ອມຕໍ່ທາງການຜະລິດ ເພື່ອຮອງຮັບ ແລະ ສະໜັບສະໜູນການຜະລິດທີ່ຕໍ່ເນື່ອງ, ຄ່າຂົນສົ່ງແພງ ແລະ ອັດຕາພາສີການຜະລິດ.

**ການຜະລິດວັດສະດຸກໍ່ສ້າງ:** ແມ່ນໄດ້ຮັບການຂະຫຍາຍຕົວຢ່າງວ່ອງໄວຕາມສະພາບຄວາມຕ້ອງການຂອງຕະຫລາດ ໂດຍສະເພາະແມ່ນ ການຜະລິດຊີມັງສາມາດຕອບສະໜອງໄດ້ 80% ຂອງຄວາມຕ້ອງການໃນທົ່ວປະເທດ, ຜະລິດຕະພັນແມ່ນໄດ້ມາດຕະຖານສາກົນ ແລະ ເປັນທີ່ຍອມຮັບຂອງຕະຫລາດພາຍໃນ; ການລົງທຶນໃນຂະແໜງນີ້ມີທ່າອ່ຽງເພີ່ມຂຶ້ນ. ປະຈຸບັນມີໂຮງງານຜະລິດຊີມັງ 6 ແຫ່ງ (ໃນແຜນການ 5 ປີ ຄັ້ງກ່ອນມີພຽງ 2 ແຫ່ງ ຄື: ໂຮງງານຊີມັງວັງວຽງ ຫລັງ 1 ແລະ 2), ໃນນີ້ ໂຮງງານທີ່ໃຫ່ກ່ວາໝູ່ແມ່ນ

ໂຮງງານຊີມັງ ຢູ່ແຂວງຄຳມ່ວນ. ການຜະລິດຊີມັງ ໃນໄລຍະຜ່ານມາ ສາມາດຜະລິດໄດ້ 2,8 ລ້ານໂຕນ (ແຜນການວາງໄວ້ຮອດປີ 2010 ໃຫ້ບັນລຸ 1,3 ລ້ານໂຕນ) ເພີ່ມຂຶ້ນສະເລ່ຍ 44% ຕໍ່ປີ; ນອກຈາກນີ້, ການ ຜະລິດ ແລະ ສະໜອງເຫລັກກໍ່ສ້າງ (ເຫລັກເສັ້ນ ແລະ ເຫລັກຮູບປະພັນ), ກະເບື້ອງມຸງຫລັງຄາ, ຊີແພັກ, ສັງກະສີ ກໍ່ສາມາດກຸ້ມຕົນເອງໄດ້ໃນລະດັບໜຶ່ງແລ້ວ.

**ການປຸງແຕ່ງອາຫານ ແລະ ເຄື່ອງດື່ມ:** ການຜະລິດເບຍ, ເຫລົ້າ, ນ້ຳຫວານ ແລະ ຢາສູບເປັນ ຂະແ ໜງການໜຶ່ງທີ່ໄດ້ຮັບການຂະຫຍາຍຕົວຕະຫລອດມາ, ສາມາດສະໜອງພາຍໃນໄດ້ 100% ແລະ ສ່ວນ ໜຶ່ງ ໄດ້ສົ່ງອອກຕ່າງປະເທດ. ການຜະລິດເບຍ ໃນໄລຍະປີ 2006-2009 ຜ່ານມາບັນລຸໄດ້ 5.180.179 ເຮັກ ໂຕລິດ, ເພີ່ມຂຶ້ນສະເລ່ຍ 14% ຕໍ່ປີ, ໃນນີ້ ໂຮງງານຜະລິດເບຍແຫ່ງທີ 2 ທີ່ແຂວງຈຳປາສັກ ແລະ ໂຮງງານເບຍໄທເກີ ກໍ່ໄດ້ສຳເລັດການກໍ່ສ້າງ ແລະ ໄດ້ເປີດໃຊ້ຢ່າງເປັນທາງການແລ້ວ.

ຜົນການສຳຫຼວດເສດຖະກິດ ປີ 2006 ໄດ້ລະບຸໄວ້ວ່າ ຂະແໜງປຸງແຕ່ງອາຫານ ມີຫົວໜ່ວຍທຸລະ ກິດ ໄດ້ຮັບການສ້າງຕັ້ງທັງໝົດ 15.804 ແຫ່ງ, ໃນນັ້ນ 28 ແຫ່ງ ແມ່ນໂຮງງານຂະໜາດໃຫ່ຍ ທີ່ມີການ ຈ້າງງານຫລາຍກວ່າ 100 ຄົນ ຂຶ້ນໄປ ແລະ 171 ແມ່ນມີແຮງງານ 10-99 ຄົນ ຊຶ່ງຖືວ່າເປັນຫົວໜ່ວຍ ການຜະລິດຂະໜາດກາງ ແລະ ສ່ວນທີ່ເຫຼືອອີກ 15.625 ແຫ່ງ ແມ່ນຫົວໜ່ວຍການຜະລິດຂະໜາດນ້ອຍ ຊຶ່ງມີແຮງງານ ໜ້ອຍກວ່າ 10 ຄົນ ຕໍ່ຫົວໜ່ວຍ. ສະຫລຸບແລ້ວ ຂະແໜງນີ້ ມີທ່າແຮງບົ່ມຊ້ອນໃນການ ຂະຫຍາຍຕົວສູງກວ່ານີ້ ເນື່ອງຈາກວ່າ ສປປ ລາວ ມີຄວາມອຸດົມສົມບູນໄປດ້ວຍດິນ ທີ່ສາມາດສ້າງຜົນ ຜະລິດພືດອື່ນໆ ເປັນສິນຄ້າ ລວມທັງ ລ້ຽງສັດ. ເຖິງຢ່າງໃດກໍ່ຕາມ ເນື່ອງຈາກວ່າ ຊາວກະສິກອນສ່ວນໃຫຍ່ ຍັງບໍ່ທັນສຸມການຜະລິດ ເພື່ອເປັນສິນຄ້າເທື່ອ ຈຶ່ງເຮັດໃຫ້ອຸດສາຫະກຳປຸງແຕ່ງອາຫານ ພົບກັບຄວາມ ຫຍຸ້ງຍາກ. ນອກນັ້ນ ກໍ່ຍັງມີບັນຫາ ກ່ຽວກັບລະດູການ ຊຶ່ງວັດຖຸດິບພາຍໃນ ສາມາດຜະລິດໄດ້ໃນບາງລະດູ ການເທົ່ານັ້ນ ແລະ ລະບົບການຂົນສົ່ງໃນປະຈຸບັນກໍ່ຍັງບໍ່ທັນສາມາດຂົນສົ່ງວັດຖຸດິບໃນໄລຍະທາງໄກໄດ້ຢ່າງ ມີປະສິດທິຜົນ. ນອກນັ້ນ, ຊາວກະສິກອນສ່ວນໃຫ່ຍ ຍັງໄດ້ນຳເອົາຜະລິດຕະພັນຂອງຕົນໄປຂາຍຕາມແຂວງ ຊາຍແດນ ເພາະຈະໄດ້ລາຄາດີກວ່າ. ສະນັ້ນ ຖ້າຈະເພີ່ມການສົ່ງອອກຂະແໜງການນີ້ ຈຳເປັນຕ້ອງມີຄວາມ ສາມາດແຂ່ງຂັນກັບສາກົນ ທາງດ້ານມາດຖານ ແລະ ຄຸນນະພາບສິນຄ້າ.

ສະຫລຸບແລ້ວ, ຂະແໜງອຸດສາຫະກຳປຸງແຕ່ງຂອງປະເທດເຮົາ ໄດ້ຄ່ອຍໆເກີດມີໜ່ໍແໜງ ແລະ ພື້ນ ຖານການຜະລິດຈຳນວນໜຶ່ງ ສາມາດຕອບສະໜອງໃຫ້ສັງຄົມໃນລະດັບດີພໍສົມຄວນ ເປັນຕົ້ນ: ຊີມັງ, ເຫລັກ ເສັ້ນ ແລະ ເຫລັກຮູບປະພັນ, ຝຸ່ນຊີວະພາບ, ອາຫານ ແລະ ເຄື່ອງດື່ມ ແລະ ອື່ນໆ. ໃນນີ້ ພາກສ່ວນ ວິ ສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການຂະຫຍາຍຕົວ ຂອງຂະແໜງ ອຸດສາຫະກຳປຸງແຕ່ງ ໂດຍເຫັນວ່າຈຳນວນຫົວໜ່ວຍວິສາຫະກິດທີ່ດຳເນີນກິດຈະການເຄື່ອນໄຫວ ທາງອຸດສາ ຫະກຳປຸງແຕ່ງ ໄດ້ມີການຂະຫຍາຍຕົວ ເຊິ່ງຜ່ານການສຳຫລວດເສດຖະກິດທົ່ວປະເທດ ໃນປີ 2006 ມີ ຈຳນວນ 24.331 ຫົວໜ່ວຍ, ກວມ 19,2% ຂອງຈຳນວນວິສາຫະກິດທັງໝົດ.

**3). ຂະແໜງໄຟຟ້າ:**

ການຜະລິດໄຟຟ້າ ໃນໄລຍະຜ່ານມາ (2006-2009) ເທົ່າກັບ 97% ຂອງແຜນການ. ການກໍ່ສ້າງ ເຂື່ອນໄຟຟ້ານັບແຕ່ປີ 2005 ເປັນຕົ້ນມາສຳເລັດ 3 ເຂື່ອນ ຄື: ເຂື່ອນນ້ຳມັງ 3, ນ້ຳເທີນ2 ແລະ ເຂື່ອນເຊ

ເສັດ 2 (ເຊິ່ງທັງສາມເຂື່ອນມີກຳລັງຕິດຕັ້ງທັງໝົດ 1.204 ເມກາວັດ, ໃນນັ້ນ ສະໜອງພາຍໃນປະເທດ 191 ເມກາວັດ ແລະ ສົ່ງອອກຕ່າງປະເທດ 1.000 ເມກາວັດ ຫຼື ປະມານ 5.400 ລ້ານກິໂລວັດໂມງ, ລາຍຮັບຈາກການສົ່ງອອກປະມານ 272 ລ້ານໂດລາຕໍ່ປີ ເຊິ່ງລັດຈະໄດ້ຮັບຈາກ 3 ໂຄງການນີ້ປະມານ 78 ລ້ານໂດລາຕໍ່ປີ) ມາຮອດປະຈຸບັນເຂື່ອນໄຟຟ້າທີ່ມີກຳລັງຕິດຕັ້ງ 1 ເມກາວັດ ຂຶ້ນໄປມີ 12 ແຫ່ງ, ຖ້າລວມເຂື່ອນຂະໜາດນ້ອຍນຳ ທົ່ວປະເທດມີເຂື່ອນທັງໝົດ 27 ແຫ່ງ ເຊິ່ງມີກຳລັງຕິດຕັ້ງ 1.868,72 ເມກາວັດ.

ເຂື່ອນກຳລັງກໍ່ສ້າງມີ 8 ເຂື່ອນ ຄື: ເຂື່ອນເຊຂະໜານ3, ນ້ຳງື່ມ2, ນ້ຳລີກ1/2, ນ້ຳຍ້ອນ, ນ້ຳງື່ມ5, ເຫີນຫີນບູນພາກຂະຫຍາຍ, ຕາດສະແລນ ແລະ ເຂື່ອນນ້ຳຊອງ ເຊິ່ງຈະສຳເລັດແຕ່ທ້າຍປີ 2010 ຫາປີ 2012 ຕາມລຳດັບ ລວມກຳລັງຕິດຕັ້ງ 1.377 ເມກາວັດ, ສາມາດຜະລິດໄຟຟ້າໄດ້ 5.950 ລ້ານກິໂລວັດໂມງຕໍ່ປີ, ໃນນັ້ນ ຮັບໃຊ້ພາຍໃນ 317 ເມກາວັດ, ສົ່ງອອກຕ່າງປະເທດ 1.060 ເມກາວັດ ລາຍຮັບການ ຈຳໜ່າຍຈະໄດ້ປະມານ 303 ລ້ານໂດລາຕໍ່ປີ, ໃນນັ້ນ ລັດຖະບານຈະໄດ້ຮັບ 90 ລ້ານໂດລາຕໍ່ປີ.

ປະຈຸບັນທົ່ວປະເທດມີສາຍສົ່ງໄຟຟ້າທັງໝົດຍາວ 19.503 km, ໃນນັ້ນ ເປັນສາຍສົ່ງແຮງດັນສູງລະບົບ 230 kv ຈຳນວນ 246 km (ໃຊ້ເພື່ອການສົ່ງອອກ), ແຮງດັນສູງລະບົບ 115 kv ໃຊ້ເພື່ອເຊື່ອມພາຍໃນທົ່ວປະເທດ ມີ 1.112,7 km, ສາຍສົ່ງແຮງດັນກາງ 22 kv ຈຳນວນ 8.843,3 km ແລະ ແຮງດັນຕ່ຳ 0,4 kv ຈຳນວນ 9.075 km. ມາຮອດເດືອນ 6 ປີ 2009 ມີ 97,08% ຂອງບ້ານດາເມືອງ, 55,8% ຂອງບ້ານດາບ້ານ ແລະ 65,07% ຂອງຈຳນວນຄອບຄົວໃນທົ່ວປະເທດໄດ້ມີໄຟຟ້າໃຊ້.

ສາຍສົ່ງທີ່ກຳລັງກໍ່ສ້າງມີ: ໂຄງການ NARPD ຢູ່ພາກເໜືອຍາວ 1.627 km ສຳເລັດ 98%; ໂຄງການ REP1 ຢູ່ເຂດພາກໃຕ້ຍາວ 2.472 km ສຳເລັດ 93%, ໂຄງການ GMS ປາກຊ່ອງ-ຈຽງໄຊ-ບ້ຽເຍາະປະຕິບັດໄດ້ 64%; ປາກຊັນ-ທ່າແຂກ-ສະຫວັນນະເຂດຍາວ 285 km ປະຕິບັດໄດ້ 18%, ສາຍສົ່ງ 115 kv ນ້ຳງື່ມ5 ຍາວ 142 m, ສາຍສົ່ງ 230 kv ນ້ຳລີກ-ຫີນເຫີບ-ທ່າລາດ-ນະຄອນຫຼວງວຽງຈັນ, ສາຍສົ່ງ 500 kv ນາບົງ-ຊາຍແດນໄທ. ສາຍສົ່ງແຮງກາງ-ຕ່ຳ ເຂດເມືອງສຸຂຸມາ, ເມືອງມຸນລະປະໂມກ, ເມືອງພີນ-ຕາດໄຮ.

ມູນຄ່າການລົງທຶນຂອງພາກເອກະຊົນເຂົ້າໃນຂະແໜງໄຟຟ້າ ໄລຍະແຕ່ປີ 2006-2009 ມີ 2.995,5 ລ້ານໂດລາ ເພີ່ມຂຶ້ນ 88,5% ທຽບໃສ່ 5 ປີ ຜ່ານມາ 2001-2005.

### 3.1.3. ດ້ານການບໍລິການ

ຂະແໜງການບໍລິການຂະຫຍາຍໂຕໃນລະດັບທີ່ຊ້າກວ່າ ຂະແໜງອຸດສາຫະກຳ ເຊິ່ງມີອັດຕາຂະຫຍາຍຕົວ ໂດຍສະເລ່ຍ 8,4% ຕໍ່ປີ ໃນໄລຍະ 2006-2010. ການບໍລິການເປັນຂົງເຂດໜຶ່ງທີ່ສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ຊຶ່ງຜ່ານມາການບໍລິການສາມາດປະກອບສ່ວນເຂົ້າໃນເສດຖະກິດ ປະມານ 37% ຂອງ GDP; ໃນນັ້ນ, ສ່ວນໃຫຍ່ແມ່ນການຄ້າຂາຍຍົກ-ຍ່ອຍ ແລະ ສ້ອມແປງ ກວມເອົາອັດຕາສ່ວນປະມານ 51%, ການບໍລິການຂອງລັດ ກວມ 17,3%, ການຂົນສົ່ງ-ສາງ-ໄປສະນີ ແລະ ໂທລະຄົມ ກວມ 12,5% ແລະ ທີ່ເຫຼືອແມ່ນການບໍລິການດ້ານການເງິນ, ການເຊົ່າຊື້, ບໍລິການທຸລະກິດ, ການບໍລິການມວນຊົນ, ສັງຄົມ ແລະ ສ່ວນບຸກຄົນ, ໂຮງແຮມ, ຮ້ານອາຫານ ແລະ ອື່ນໆ.

**ຮູບສະແດງ 6: ໂຄງປະກອບການຜະລິດຂົງເຂດຂະແໜງບໍລິການ ແຕ່ 2006-2010**




ແຫຼ່ງຂໍ້ມູນ: ກົມສະຖິຕິ, ກະຊວງ ແຜນການ ແລະ ການລົງທຶນ

**1). ດ້ານການຄ້າພາຍໃນ**:

ໃນໄລຍະ 2006-2010, ການພັດທະນາຂະແໜງການຄ້າ ໄດ້ເລັ່ງໃສ່ການພັດທະນາຕະຫຼາດພາຍໃນ ແລະ ໄດ້ນຳໃຊ້ຫລາຍມາດຕະການ ເພື່ອຊຸກຍູ້ສົ່ງເສີມການເຄື່ອນໄຫວດ້ານການຄ້າໃນຂອບເຂດທົ່ວປະເທດ ເພື່ອເຮັດໃຫ້ສາມາດຈຳໜ່າຍບັນດາສິນຄ້າທີ່ໄດ້ຜະລິດອອກໃຫ້ສັງຄົມ ລວມທັງຕົວເມືອງ ແລະ ຊົນນະບົດ ແລະ ສາມາດສ້າງພື້ນຖານໃຫ້ຕະຫຼາດຈຳໜ່າຍຜະລິດຕະພັນ. ການພັດທະນາໂຄງລ່າງພື້ນຖານ ການຄ້າ ເຊັ່ນ: ລະບົບຕະຫຼາດ (ລວມທັງຕະຫຼາດຊາຍແດນ), ເຂດການຄ້າຊາຍແດນ, ສູນການຄ້າ, ລະບົບ ການຈຳໜ່າຍ (ຂາຍຍົກ-ຂາຍຍ່ອຍ), ຮ້ານຈຳໜ່າຍ, ລະບົບສາງ, ສະຖານີຈອດລົດ, ທ່າເຮືອໄດ້ຮັບການປັບປຸງ. ສືບຕໍ່ປັບປຸງຄຸນນະພາບຂອງການຕອບສະໜອງການບໍລິການ ສຳລັບລະບົບການຈົດທະບຽນວິສາ ຫະກິດມີຄວາມສະດວກກວ່າເກົ່າ, ຫຼຸດຜ່ອນບັນດາຂັ້ນຕອນຕ່າງໆທີ່ບໍ່ຈຳເປັນ, ເພີ່ມຄວາມສະດວກໃຫ້ແກ່ນັກ ທຸລະກິດ. ສົ່ງເສີມພາກເອກະຊົນໃຫ້ມີສ່ວນຮ່ວມຫຼາຍຂຶ້ນ ແລະ ຫ້າວຫັນຂຶ້ນໃນຂົງເຂດການບໍລິການ; ໄດ້ຈັດຕັ້ງປະຕິບັດສົ່ງເສີມການແລກປ່ຽນ, ຈຳລະຈອນສິນຄ້າໃຫ້ສະດວກວ່ອງໄວ ໃນຂອບເຂດທົ່ວປະເທດ; ມີການຈັດຕັ້ງການວາງສະແດງສິນຄ້າ ແລະ ຈັດຕັ້ງການຈຳໜ່າຍສິນຄ້າກະສິກຳໃຫ້ປະຊາຊົນຢູ່ເຂດພູດອຍ. ການຈຳລະ ຈອນສິນຄ້າຂາຍຍ່ອຍ ໃນໄລຍະປີ 2006-2010 ມີມູນຄ່າທັງໝົດ 71,1 ຕື້ກີບ ຖ້າທຽບໃສ່ໄລຍະ 2001-2005 (ມູນຄ່າ 28,6 ຕື້ກີບ) ເຫັນວ່າມູນຄ່າດັ່ງກ່າວເພີ່ມຂຶ້ນກວ່າເທົ່າຕົວ. ການເພີ່ມຂຶ້ນດັ່ງກ່າວໄດ້ເຮັດໃຫ້ມູນຄ່າເພີ່ມຂອງຂະແໜງການຄ້າມີການເພີ່ມຂຶ້ນເຊັ່ນດຽວກັນ ແລະ ມີການຂະຫຍາຍຕົວ ໂດຍສະເລ່ຍ 7,6% ຕໍ່ປີ ໃນໄລຍະ 2006-2010 ໄດ້ປະກອບສ່ວນເຂົ້າໃນລວມຍອດມູນຄ່າເພີ່ມໃນຂະແໜງບໍລິການ ປະມານ 51%.

**2). ດ້ານຄົມມະນາຄົມ-ຂົນສົ່ງ, ໄປສະນີ, ໂທລະຄົມມະນາຄົມ**:

**ກ. ການຄົມມະນາຄົມ-ຂົນສົ່ງ:**

ໃນໄລຍະປີ 2006-2010 ວຽກງານດ້ານໂຍທາທິການ ແລະ ຂົນສົ່ງ ໄດ້ສຸມໃສ່ປະຕິບັດ 25 ໂຄງການ ທີ່ເປັນຕົວຍູ້ດັນບັນດາໂຄງການຕ່າງໆທີ່ນອນໃນ 11 ແຜນງານໃຫຍ່ 111 ໂຄງການ ໂດຍ

ສະເພາະແມ່ນແຜນງານໃຫຍ່ທີ 8 ດ້ານຄົມມະນາຄົມ-ຂົນສົ່ງ ໄດ້ສຸມໃສ່ 2 ໂຄງການ ຄື: (1) ໂຄງການກໍ່ສ້າງ-ປັບປຸງດ້ານຄົມມະນາຄົມ, ຂົນສົ່ງ ແລະ ຕິດຕໍ່ສື່ສານໃນອະນຸພາກພື້ນ ແລະ ຂົງເຂດ; (2) ໂຄງການກໍ່ສ້າງ-ປັບປຸງດ້ານຄົມມະນາຄົມຂົນສົ່ງ ແລະ ຕິດຕໍ່ສື່ສານພາຍໃນປະເທດ.

ການຂົນສົ່ງໃນປະຈຸບັນປະກອບມີ 4 ຮູບແບບ ຄື: (1) ການຂົນສົ່ງທາງລົດໂອໂຕ ມີເສັ້ນທາງທັງໝົດ 37.768 ກມ (ກວມ 80% ຂອງບໍລິມາດການຂົນສົ່ງທັງໝົດ) ເຊິ່ງໃນໄລຍະ 2006-2008 ການຂົນສົ່ງສິນຄ້າ ແລະ ໂດຍສານໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໃນນັ້ນ ການຂົນສົ່ງສິນຄ້າເພີ່ມຂຶ້ນປີລະ 5-8% ແລະ ສຳລັບການຂົນສົ່ງໂດຍສານ ເພີ່ມຂຶ້ນປີລະປະມານ 8-10% ແລະ ສາມາດຂົນສົ່ງໂດຍສານໄປເຖິງທຸກໆ ເມືອງໃນຂອບເຂດທົ່ວປະເທດ, (2) ການຂົນສົ່ງທາງນ້ຳ ຫຼາຍກວ່າ 3.000 ກມ (ກວມ 18% ຂອງການຂົນສົ່ງທັງໝົດ), (3) ການຂົນສົ່ງທາງອາກາດທົ່ວປະເທດ ມີສະໜາມບິນ ທັງໝົດ 11 ແຫ່ງ (ກວມ 2%) ແລະ (4) ການຂົນສົ່ງທາງລົດໄຟ.

ວຽກງານຂົວທາງໄດ້ມີການພັດທະນາຫຼາຍກວ່າດ້ານອື່ນໆ ໂດຍສະເພາະ ຕາໜ່າງເສັ້ນທາງເພີ່ມຂຶ້ນ 17% ໃນໄລຍະ 5 ປີ (2005-2009) ຫລື ຈາກ 33.803 ກມ ມາເປັນ 39.568 ກມ. ໂດຍສະເລ່ຍ ເພີ່ມຂຶ້ນ 4,6% ຕໍ່ປີ ຫຼື ປະມານ 1.824 ກມ ຕໍ່ປີ; ໃນນັ້ນ, ທາງປູຢາງເພີ່ມຂຶ້ນ ຈາກ 4.582 ກມ ມາເປັນ 4.882 ກມ ຫຼື ປະມານ 7% ຕໍ່ປີ. ເຖິງວ່າຈະມີການປັບປຸງ ແລະ ພັດທະນາລະບົບເສັ້ນທາງຢ່າງຫຼວງຫຼາຍກໍ່ຕາມ, ແຕ່ຈາກຂໍ້ມູນຂ້າງເທິງ ກໍ່ເຫັນວ່າຄວາມຕ້ອງການໃນການພັດທະນາເສັ້ນທາງແມ່ນຍັງມີສູງ ເນື່ອງຈາກຈຳນວນເສັ້ນທາງທີ່ໄດ້ຮັບການປູຢາງແມ່ນມີໜ້ອຍ, ແຕ່ເສັ້ນທາງສ່ວນຫຼາຍເປັນເສັ້ນທາງດິນປະສົມຫີນ, ທາງດິນທຳມະຊາດ ໂດຍສະເພາະກໍ່ແມ່ນທາງຫຼວງຂອງແຂວງ, ເມືອງ ແລະ ທາງຊົນນະບົດ ເຊິ່ງມີຄວາມສ່ຽງສູງຫຼາຍໃນການເດີນທາງໃນໄລຍະລະດູຝົນ; ນອກນັ້ນ, ເສັ້ນທາງແຕ່ເທດສະບານແຂວງໄປຫາເມືອງຈຳນວນໜຶ່ງໃນທົ່ວປະເທດ ຍັງບໍ່ສາມາດໄປໄດ້ຕະຫຼອດປີ, ບັນດາເສັ້ນທາງຫຼວງແຫ່ງຊາດສາຍຫຼັກທີ່ເປັນທາງພາກພື້ນ ແລະ ຂົງເຂດ ຍັງມີມາດຖານເຕັກນິກຕ່ຳກວ່າບັນດາປະເທດອ້ອມຂ້າງ ເຊິ່ງເປັນອຸປະສັກໃນການຫັນປະເທດລາວເຮົາ ໃຫ້ເປັນປະເທດບໍລິການທາງຜ່ານດ້ານຄົມມະນາຄົມ-ຂົນສົ່ງ. ພື້ນຖານເຕັກນິກ, ວັດຖຸ, ອຸປະກອນ, ພາຫະນະການຂົນສົ່ງ ຍັງບໍ່ທັນສາມາດແຂ່ງຂັນກັບບັນດາປະເທດອ້ອມຂ້າງໄດ້ ເຮັດໃຫ້ການປະສານລະຫວ່າງຮູບແບບການຂົນສົ່ງຢູ່ພາຍໃນ ແລະ ຜ່ານແດນຍັງບໍ່ທັນສອດຄ່ອງກົມກຽວກັນ. ສະນັ້ນ, ໂດຍລວມແລ້ວພື້ນຖານໂຄ່ງລ່າງດ້ານຄົມມະນາຄົມ-ຂົນສົ່ງ ກໍ່ຄືການບໍລິການດັ່ງກ່າວນີ້ ເຫັນວ່າຍັງອ່ອນນ້ອຍຢູ່ທັງທາງດ້ານປະລິມານ ແລະ ຄຸນນະພາບ.

ດ້ານການບໍລິການການຂົນສົ່ງ ໃນໄລຍະປີ 2006-2010 ສາມາດຈັດຕັ້ງປະຕິບັດໄດ້ 111,9 ລ້ານໂຕນ, ຕ່ຳກວ່າແຜນການທີ່ຄາດໄວ້ 1%, ສ່ວນບໍລິມາດການຂົນສົ່ງໂດຍສານ ສາມາດຈັດຕັ້ງປະຕິບັດໄດ້ 210 ລ້ານຄົນ ແລະ ຫລຸດແຜນການ 2%.

### ຂ. ໄປສະນີ ແລະ ໂທລະຄົມມະນາຄົມ:

ບັນດາຕາໜ່າງໄປສະນີ-ໂທລະຄົມມະນາຄົມ ໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວດີພໍສົມຄວນ. ໄດ້ຂະຫຍາຍການບໍລິການໄປສະນີກໍ່ຄືໂທລະຄົມມະນາຄົມ, ຕອບສະໜອງການບໍລິການສົ່ງໄປສະນີພັນພາຍ

ໃນ-ຕ່າງປະເທດ, ໃບຝາກເງິນພາຍໃນ ແລະ ຕ່າງປະເທດ, ເມດ່ອນ EMS/Fedex ພາຍໃນ-ຕ່າງປະເທດ, ຈົດໝາຍພາຍໃນ-ຕ່າງປະເທດ, ການສະສົມສະແຕມພາຍໃນ-ຕ່າງປະເທດ, ຕູ້ໄປສະນີໃຫ້ກວ້າງຂວາງລວມ ທັງການພັດທະນາລົງສູ່ຊົນນະບົດເທື່ອລະກ້າວ.

ຫ້ອງການໄປສະນີ ລວມທັງໝົດທົ່ວປະເທດ ມີ 119 ແຫ່ງ ເພີ່ມຂຶ້ນ 1 ແຫ່ງ, ຈ່າມໄປສະນີ 108 ແຫ່ງ. ນອກຈາກນັ້ນ ຍັງສາມາດຄາດຄະເນວ່າ ໃນສົກປີ 2009-2010 ນີ້ ຈະສາມາດຂະຫຍາຍຕາໜ່າງໄປສະນີຂັ້ນເມືອງ ເພີ່ມອີກ 3 ແຫ່ງ ລວມທັງໝົດເປັນ 117 ແຫ່ງ. ຂະຫຍາຍສາຍກາບໄຍແກ້ວທົ່ວປະເທດໄດ້ທັງໝົດ 11.500 ກິໂລແມັດ, ສູນກາງໂທລະສັບລວມທັງໝົດມີ 99 ແຫ່ງ ເຊິ່ງໃນນີ້ ລັດວິສາຫະກິດໂທລະຄົມລາວມີ 38 ແຫ່ງ, ລັດວິສາຫະກິດປະສົມລາວໂທລະຄົມ 58 ແຫ່ງ, ບໍລິສັດສະຕາເທເລຄອມ 2 ແຫ່ງ ແລະ ບໍລິສັດ ມີລິຄອມ ລາວ 1 ແຫ່ງ.

ຄວາມສາມາດຂອງສູນກາງໂທລະສັບທັງໝົດ ມີປະມານ 3,6 ລ້ານເລກໝາຍ ເຊິ່ງໃນນີ້ ໂທລະສັບຕັ້ງໂຕະມີປະມານ 149,3 ພັນເລກໝາຍ (ນຳໃຊ້ແລ້ວ ປະມານ 99,4 ພັນເລກໝາຍ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 2,7%), ໂທລະສັບມືຖືມີ ປະມານ 3,39 ລ້ານເລກໝາຍ ນຳໃຊ້ແລ້ວ ປະມານ 2,59 ລ້ານເລກໝາຍ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 53%, ໂທລະສັບວິນໂຟນ (ຕັ້ງໂຕະບໍ່ມີສາຍ) ມີ 50 ພັນເລກໝາຍ ນຳໃຊ້ແລ້ວ 29,57 ພັນເລກໝາຍ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 5%. ໃນປີ 2009-2010 ຈະສູ້ຊົນຊຸກຍູ້ໃຫ້ບັນດາບໍລິສັດຜູ້ໃຫ້ການບໍລິການດ້ານໂທລະຄົມ ຂະຫຍາຍຕາໜ່າງໂທລະຄົມອອກສູ່ຊົນນະບົດໃຫ້ກວ້າງອອກຕື່ມ, ຍົກສູງຄຸນນະພາບ ແລະ ຂະຫຍາຍການບໍລິການໂທລະສັບທີ່ມີຢູ່ໃນຕົວເມືອງລົງສູ່ຂັ້ນບ້ານໃຫ້ໄດ້ 80% ຂອງຈຳນວນບ້ານທັງໝົດ.

ສືບຕໍ່ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມສູ່ຊົນນະບົດໃນທົ່ວປະເທດ ແລະ ກໍ່ສ້າງສາຍໄຍແກ້ວໃຫ້ໄດ້ 13,2 ພັນ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 15% ເຊິ່ງກວມເອົາບັນດາແຂວງ 90% ແລະ ບັນດາເມືອງ 80%. ຕິດຕັ້ງສະຖານີຮັບ-ສົ່ງສັນຍານມືຖື (BTS) ໃຫ້ໄດ້ທັງໝົດ 2.000 ແຫ່ງ, ຄາດຄະເນໝົດສົກປີ 2009-2010 ການນຳໃຊ້ໂທລະສັບໃນທົ່ວປະເທດ 3 ລ້ານເລກໝາຍ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 10%, ລະດັບຄວາມໜາແໜ້ນຂອງໂທລະສັບ 48 ໜ່ວຍ/100 ຄົນ. ຄາດຄະເນໝົດສົກປີ 2009-2010 ລາຍຮັບໄປສະນີ ຈະໄດ້ 40,11 ຕື້ກີບ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 2% ແລະ ຈະມອບພັນທະໃຫ້ງົບປະມານໄດ້ 4,4 ຕື້ກີບ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 2% ແລະ ລາຍຮັບຂອງຂະແໜງໂທລະຄົມມະນາຄົມ ຈະໄດ້ 2.127 ຕື້ກວ່າກີບ ທຽບໃສ່ແຜນປີຜ່ານມາ ເພີ່ມຂຶ້ນ 32% ແລະ ຈະສາມາດມອບພັນທະໃຫ້ງົບປະມານໄດ້ 600 ຕື້ກວ່າກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 7%.

ບັນດາພື້ນຖານໂຄງລ່າງ ໃນຂົງເຂດການບໍລິການໄດ້ຮັບການປັບປຸງ ແລະ ນັບມື້ນັບຂະຫຍາຍຕົວ, ເສັ້ນທາງລະດັບຕ່າງໆ, ຕາຄ່າຍໄຟຟ້າ, ລະບົບຊົນລະປະທານ, ສະໜາມບິນ ແລະ ອື່ນໆ ໄດ້ກາຍເປັນແຮງສະໜັບສະໜູນທາງກົງ ແລະ ທາງອ້ອມ ໃຫ້ແກ່ການຜະລິດ, ການຂົນສົ່ງ, ການຄ້າ-ການລົງທຶນ, ການດຳລົງຊີວິດຂອງປະຊາຊົນ ແລະ ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ໄດ້ຂະຫຍາຍການເຊື່ອມໂຍງເສັ້ນທາງບົກ ແລະ ອາກາດກັບອານຸພາກພື້ນເພີ່ມຂຶ້ນ, ໄດ້ກໍ່ສ້າງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ແລະ ຕາໜ່າງໂທລະຄົມມະນາຄົມ.

ສະຫລຸບລວມແລ້ວ ຂະແໜງຄົມມະນາຄົມ-ຂົນສົ່ງ, ສາງ, ໄປສະນີ ແລະ ໂທລະຄົມມະນາຄົມມີ ບົດບາດ ແລະ ຜົນໄດ້ຮັບແບບທະວີຄູນໄດ້ຊຸກຍູ້ໃຫ້ຂະແໜງການອື່ນໄດ້ມີການຂະຫຍາຍຕົວໂດຍສະເລ່ຍມູນ ຄ່າເພີ່ມ ຂອງຂະແໜງການຈະມີການຂະຫຍາຍຕົວ ໃນລະດັບສະເລ່ຍ 7,8% ຕໍ່ປີ ແລະ ປະກອບສ່ວນເຂົ້າ ໃນໂຄງປະກອບເສດຖະກິດແຫ່ງຊາດ ໂດຍສະເລ່ຍ 4,6%.

**3). ດ້ານການທ່ອງທ່ຽວ**:

ຂະແໜງທ່ອງທ່ຽວ ເປັນຂະແໜງໜຶ່ງທີ່ສຳຄັນທີ່ສ້າງຜົນປະໂຫຍດແບບທະວີຄູນ ແລະ ສາມາດນຳ ລາຍໄດ້ໃຫ້ປະຊາຊົນບັນດາເຜົ່າ ທັງເຂດຕົວເມືອງ ແລະ ຊົນນະບົດ, ມີການພົວພັນທາງກົງ ແລະ ທາງອ້ອມ ກັບບັນດາຂະແໜງການອື່ນໆໃນລະບົບເສດຖະກິດ. ມາຮອດປະຈຸບັນການທ່ອງທ່ຽວໃນ ສປປ ລາວ ແມ່ນມີ ການຂະຫຍາຍຕົວໄວຖ້າທຽບໃສ່ຂະແໜງການອື່ນ ເຊິ່ງຈະເຫັນໄດ້ຈາກ ອັດຕາການເພີ່ມຂອງນັກທ່ອງ ທ່ຽວ ເຂົ້າມາໃນປະເທດ ໃນປີ 2009 ມີຈຳນວນ 2.008.363 ຄົນ ເພີ່ມຂຶ້ນ 15.55% ຖ້າທຽບ ໃສ່ປີ 2008 ແລະ ຄາດວ່າໃນປີ 2010[4] ຈະເພີ່ມຂຶ້ນເປັນ 2.216.986 ຄົນ ຫຼື ເພີ່ມຂຶ້ນປະມານ 10,39%. ຖ້ານັບແຕ່ປີ 2006-2010 ຈຳນວນນັກທ່ອງທ່ຽວທີ່ເຂົ້າມາໃນ ສປປ ລາວ ມີທັງໝົດ 8.79 ລ້ານຄົນ ຫຼື ປະມານ 1,76 ລ້ານຄົນຕໍ່ປີ, ສະເລ່ຍແລ້ວເພີ່ມຂຶ້ນ 15,55% ຕໍ່ປີ ຫຼື ປະມານ 1,76 ລ້ານ ຄົນຕໍ່ປີ ແລະ ສາມາດສ້າງ ລາຍຮັບສະເລ່ຍຕໍ່ປີໄດ້ 258,04 ລ້ານໂດລາ (ເທົ່າກັບ 5,19% ຂອງ GDP) ຫຼື ເພີ່ມຂຶ້ນ 16,80%. ສົມ ທຽບການຈັດຕັ້ງປະຕິບັດໃນ 5 ປີ ຄັ້ງທີ VI (2006-2010) ໃສ່ການຈັດຕັ້ງປະຕິບັດ 5 ປີ ຄັ້ງທີ V (2001-2005) ເຫັນວ່າ ນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ແລະ ລາຍຮັບຈາກການທ່ອງທ່ຽວ ແມ່ນເພີ່ມຂຶ້ນ ເທົ່າ ຕົວ.

ຈຳນວນນັກທ່ອງທ່ຽວ ເມື່ອສັງເກດເບິ່ງເປັນພາກ ແລະ ແຂວງ[5] ແລ້ວເຫັນວ່າພາກທີ່ມີຈຳນວນນັກ ທ່ອງທ່ຽວເຂົ້າໄປທ່ອງທ່ຽວຫຼາຍກວ່າໝູ່ໃນປີ 2008 ແມ່ນພາກກາງ ກວມ 62,4% ຂອງຈຳນວນນັກທ່ອງ ທ່ຽວທັງໝົດ ເຊິ່ງໃນແຕ່ລະປີເພີ່ມຂຶ້ນ (2006-2008) ປະມານ 22,7%, ຮອງລົງມາແມ່ນພາກເໜືອ 28,2% ແຕ່ລະປີເພີ່ມຂຶ້ນ (2006-2008) 37,5% ແລະ ພາກໃຕ້ 9,4% ແຕ່ລະປີເພີ່ມຂຶ້ນ (2006-2008) ປະມານ 31,9%. ສຳລັບແຂວງທີ່ມີນັກທ່ອງທ່ຽວເຂົ້າໄປທ່ອງທ່ຽວຫຼາຍກວ່າໝູ່ ກໍ່ແມ່ນນະຄອນຫຼວງວຽງຈັນ ກວມ 28,7% ຂອງຈຳນວນນັກທ່ອງທ່ຽວທັງໝົດຂອງປະເທດ ຫຼື ກວມ 46,1% ຂອງຈຳນວນນັກທ່ອງທ່ຽວ ໃນ ພາກກາງ ໃນປີ 2008 ເຊິ່ງເປັນຈຸດທຳອິດທີ່ນັກທ່ອງທ່ຽວເຂົ້າມາພັກ ແລະ ເປັນຈຸດເລີ່ມຕົ້ນສຳລັບການ ເດີນທາງເພື່ອໄປທ່ຽວຢູ່ແຂວງອື່ນໆຕໍ່ໄປ ເນື່ອງຈາກເປັນສູນກາງຂອງການຄົມມະນາຄົມ, ຮອງລົງມາກໍ່ແມ່ນ ແຂວງ ສະຫວັນນະເຂດ ກວມ 15,5% ຂອງຈຳນວນນັກທ່ອງທ່ຽວທັງໝົດຂອງປະເທດ ຫຼື ກວມ 24,9% ຂອງຈຳນວນນັກທ່ອງທ່ຽວໃນພາກກາງ ໃນປີ 2008 ເນື່ອງນັກທ່ອງທ່ຽວສາມາດເຂົ້າມາໄດ້ສະດວກຫຼາຍຂຶ້ນ ພາຍຫຼັງມີດ່ານຂົວມິດຕະພາບ ແຫ່ງທີ 2 ລະຫວ່າງ ແຂວງສະຫວັນນະເຂດ-ມຸກດາຫານ (ປະເທດໄທ) ແລະ ຫຼວງພະບາງ ກວມ 11,3% ຈຳນວນນັກທ່ອງທ່ຽວທັງໝົດຂອງປະເທດ ຫຼື ກວມປະມານ 40% ຂອງ

---

[4] ແຫຼ່ງຂໍ້ມູນ: ປຶ້ມວາລະສານຂອງອົງການທ່ອງທ່ຽງແຫ່ງຊາດປີ 2008

[5] ຈຳນວນນັກທ່ອງທ່ຽວຕາມແຂວງ ແລະ ພາກ ແມ່ນເກັບໄດ້ຈາກບັນດາດ່ານ, ໂຮງແຮມ ແລະ ເຮືອນພັກ ຊຶ່ງລວມເອົາຈຳນວນ ນັກທ່ອງທ່ຽວພາຍໃນເຂົ້ານຳ(ແຫຼ່ງຂໍ້ມູນ: ປຶ້ມວາລະສານຂອງອົງການທ່ອງທ່ຽວແຫ່ງຊາດ 2008)

ຈຳນວນນັກທ່ອງທ່ຽວໃນພາກເໜືອ ໃນປີ 2008 ເນື່ອງຈາກຫຼວງພະບາງເປັນເມືອງມໍລະດົກໂລກທີ່ມີຊື່ສຽງ ທັງຍັງເປັນແຫຼ່ງຊັບພະຍາກອນທ່ອງທ່ຽວທາງທຳມະຊາດ ແລະ ວັດທະນະທຳທີ່ສຳຄັນແຫ່ງໜຶ່ງຂອງ ສປປ ລາວ.

ສຳລັບລາຍຮັບຈາກການທ່ອງທ່ຽວ, ພາກທີ່ມີລາຍຮັບຈາກການທ່ອງທ່ຽວຫຼາຍກວ່າໝູ່ແມ່ນ ພາກກາງ ກວມ 62,39% ຫຼື ເທົ່າກັບ 160.653.188 ລ້ານໂດລາ ຊຶ່ງແຕ່ລະປີ (2006-2010) ລາຍຮັບດັ່ງກ່າວ ເພີ່ມ ຂຶ້ນປະມານ 15%, ພາກກາງ 28,2% ຫຼື ເທົ່າກັບ 72.609.457 ລ້ານໂດລາ ເພີ່ມຂຶ້ນແຕ່ລະປີ ປະມານ 22,5% ແລະ ພາກໃຕ້ 9,42% ຫຼື ເທົ່າກັບ 24523113 ລ້ານໂດລາ ແຕ່ລະປີເພີ່ມຂຶ້ນ 19,75%.ແຂວງທີ່ ສ້າງລາຍຮັບຈາກການທ່ອງທ່ຽວຫຼາຍກວ່າໝູ່ແມ່ນ ນະຄອນຫຼວງວຽງຈັນ ກວມ 28,7% ຂອງລາຍຮັບທັງໝົດ ຫຼື ເພີ່ມຂຶ້ນແຕ່ລະປີປະມານ 8%, ຮອງລົງມາແມ່ນ ແຂວງສະຫວັນນະເຂດ ກວມ 15,53% ເພີ່ມຂຶ້ນແຕ່ລະ ປີປະມານ 27% ແລະ ຫຼວງພະບາງ 11,26% ເພີ່ມຂຶ້ນແຕ່ລະປີ ປະມານ 24,15% .

ຈຳນວນໂຮງແຮມ ແລະ ເຮືອນພັກ ໃນປີ 2008 ມີທັງໝົດ 1.385 ແຫ່ງ ເພີ່ມຂຶ້ນ 4,1% ເມື່ອ ທຽບໃສ່ປີ 2007, ໃນນັ້ນ ເປັນໂຮງແຮມ 265 ແຫ່ງ ເພີ່ມຂຶ້ນ 25,6% ແລະ ເຮືອນພັກ 1.120 ແຫ່ງ ເຊິ່ງ ເຫັນວ່າ ຢູ່ໃນລະດັບເທົ່າເດີມຖ້າທຽບໃສ່ປີ 2007; ໃນປີ 2009 ຈຳນວນໂຮງແຮມ ແລະ ເຮືອນພັກ ມີ ທັງ ໝົດ 1,484 ແຫ່ງ ເພີ່ມຂຶ້ນ 7,2% ຖ້າທຽບໃສປີ 2008, ໃນນັ້ນ ເປັນໂຮງແຮມ 357 ແຫ່ງ ເພີ່ມຂຶ້ນ 34,7% ແລະ ເຮືອນພັກ 1,127 ແຫ່ງ ເພີ່ມຂຶ້ນ 0,6% ເມື່ອທຽບໃສ່ປີ 2008. ໂດຍສະເລ່ຍແລ້ວ (2006-2009) ແຕ່ລະປີຈຳນວນໂຮງແຮມ ຈະເພີ່ມຂຶ້ນ 21,7% ແລະ ເຮືອນພັກ 5,24%.

ແຂວງທີ່ມີໂຮງແຮມຫຼາຍກວ່າໝູ່ແມ່ນ ນະຄອນຫຼວງວຽງຈັນ ກວມ 43% ຂອງຈຳນວນທັງໝົດ, ຮອງ ລົງມາແມ່ນ ແຂວງຈຳປາສັກ ກວມ 13,2% ແລະ ຫຼວງພະບາງ ກວມ 11,7% ຂອງຈຳນວນ ໂຮງແຮມທັງ ໝົດໃນປີ 2008. ເຮືອນພັກ ແລະ ລີສອດ ມີຫຼາຍກວ່າໝູ່ແມ່ນ ນະຄອນຫຼວງວຽງຈັນ ກວມ 165%, ແຂວງ ວຽງຈັນ ກວມ 16% ແລະ ຫຼວງພະບາງ ກວມ 14,4% ຂອງຈຳນວນເຮືອນພັກທັງໝົດ ໃນປີ 2008.

ຈຳນວນຮ້ານອາຫານ ໃນປີ 2008 ມີຈຳນວນ 742 ແຫ່ງ, ປີ 2009 ມີ 1148 ແຫ່ງ ເພີ່ມຂຶ້ນ ປະມານ 55% ເມື່ອທຽບໃສ່ປີ 2008 ແລະ ພາກທີ່ມີຈຳນວນຮ້ານອາຫານຫຼາຍກວ່າໝູ່ແມ່ນພາກເໜືອ ແລະ ພາກກາງ ເຊິ່ງພາກເໜືອ ກວມ 45,3% ສ່ວນພາກກາງ ກວມ 44,5% ສຳລັບພາກໃຕ້ກວມພຽງແຕ່ 10,2% ຂອງຈຳນວນຮ້ານອາຫານທັງໝົດ. ສຳລັບແຂວງທີ່ມີຮ້ານອາຫານຫຼາຍກວ່າໝູ່ແມ່ນ ແຂວງ ວຽງຈັນ 16,4%, ບໍລິຄຳໄຊ 13,5% ແລະ ອຸດົມໄຊ 11,6% ສ່ວນນະຄອນຫຼວງວຽງຈັນ ກວມພຽງ 9,3% ຂອງຈຳນວນ ຮ້ານອາຫານທັງໝົດ.

ຈຳນວນສະຖານທີ່ບັນເທີງ ໃນປີ 2008 ມີຈຳນວນ 164 ແຫ່ງ ເພີ່ມຂຶ້ນປະມານ 20% ເມື່ອ ທຽບໃສ່ປີ 2005 ແລະ ເພີ່ມຂຶ້ນ 7,2% ເມື່ອທຽບໃສ່ປີ 2007. ສຳລັບພາກທີ່ມີຈຳນວນສະຖານທີ່ບັນ ເທີງ ຫຼາຍກວ່າໝູ່ແມ່ນ ພາກກາງ ກວມ 70% ສຳລັບເໜືອ ແລະ ພາກໃຕ້ກວມພຽງແຕ່ 17,1% ແລະ 12,8%

ຂອງຈຳນວນສະຖານທີ່ບັນເທີງທັງໝົດຕາມລຳດັບ. ສຳລັບແຂວງທີ່ມີສະຖານທີ່ບັນເທີງຫຼາຍກວ່າ ໝູ່ແມ່ນ ນະຄອນຫຼວງວຽງຈັນ ກວມ 56%, ຈຳປາສັກ ກວມ 9,1% ແລະ ແຂວງຫົວພັນ ກວມ 4,9% ຂອງຈຳນວນ ສະຖານທີ່ບັນເທີງທັງໝົດ.

ຈຳນວນບໍລິສັດນຳທ່ຽວ ກໍ່ມີຈຳນວນເພີ່ມຂຶ້ນເທົ່າຕົວ ຈາກ 64 ບໍລິສັດ ໃນປີ 2005 ມາເປັນ 93 ບໍລິສັດ ໃນປີ 2006, 113 ບໍລິສັດ ໃນປີ 2007 ແລະ 143 ບໍລິສັດໃນປີ 2008 ເຫັນວ່າຈາກ 2005 ເຖິງ 2008 ຈຳນວນບໍລິສັດນຳທ່ຽວໄດ້ເພີ່ມຂຶ້ນຈຳນວນ 79 ບໍລິສັດ ຫຼື ເທົ່າຕົວ (ທຽບໃສ່ 2005); ນອກຈາກນັ້ນ, ກໍ່ຍັງມີບັນດາບໍລິສັດສາຂາອີກ ເຊິ່ງໄດ້ເປີດບໍລິການພາຍໃນປະເທດ ເຊິ່ງໃນປີ 2005 ບໍລິສັດສາຂາ ມີ ຈຳນວນ 36 ແຫ່ງ, ປີ 2006 ມີ 44 ແຫ່ງ, ປີ 2007 ມີ 49 ແຫ່ງ ແລະ 2008 ມີຈຳນວນ 65 ແຫ່ງ ເຫັນວ່າ ນັບແຕ່ປີ 2005 ຮອດ 2008 ຈຳນວນບໍລິສັດສາຂາໄດ້ເພີ່ມຂຶ້ນເຖິງ 29 ແຫ່ງ ຫຼື ເພີ່ມຂຶ້ນປະມານ 81%.

ປະຈຸບັນທົ່ວປະເທດມີແຫຼ່ງທ່ອງທ່ຽວທັງໝົດ 1.493 ແຫ່ງ, ໃນນີ້ ມີແຫຼ່ງທ່ອງທ່ຽວທຳມະຊາດ 849 ແຫ່ງ, ແຫຼ່ງທ່ອງທ່ຽວວັດທະນະທຳ 435 ແຫ່ງ ແລະ ແຫຼ່ງທ່ອງທ່ຽວປະຫວັດສາດ 209 ແຫ່ງ ຊຶ່ງ ທ່ອງທ່ຽວ ທີ່ໄດ້ຮັບການພັດທະນາແລ້ວ ແລະ ເປີດບໍລິການໃຫ້ນັກທ່ອງທ່ຽວເຂົ້າຊົມ ມີຈຳນວນ 626 ແຫ່ງ, ແຫຼ່ງທ່ອງ ທ່ຽວທີ່ໄດ້ຮັບການສຳຫຼວດແລ້ວແຕ່ບໍ່ທັນໄດ້ຮັບການພັດທະນາມີ 141 ແຫ່ງ, ແຫຼ່ງທ່ອງທ່ຽວທີ່ ກຳລັງດຳເນີນ ການສຳຫຼວດມີ 230 ແຫ່ງ ແລະ ແຫຼ່ງທ່ອງທ່ຽວທີ່ບໍ່ທັນໄດ້ຮັບການສຳຫຼວດມີ 496 ແຫ່ງ. ແຫຼ່ງທ່ອງທ່ຽວທີ່ ໄດ້ກ່າວມານັ້ນ, ແມ່ນໄດ້ຮັບການຈັດບູລິມະສິດໃນການພັດທະນາໃຫ້ເປັນລະບົບ, ເໝາະສົມ ກັບເງື່ອນໄຂຂອງ ທ້ອງຖິ່ນ ແລະ ສອດຄ່ອງກັບຄວາມຕ້ອງການຂອງນັກທ່ອງທ່ຽວພາຍໃຕ້ການຮ່ວມມືຂອງ ອົງການທ່ອງທ່ຽວ ແຫ່ງຊາດ ແລະ ບັນດາແຂວງຂອງ ສປປ ລາວ.

ຜົນໄດ້ຮັບດັ່ງກ່າວນີ້ ແມ່ນຜົນຂອງການຈັດຕັ້ງປະຕິບັດແນວທາງນະໂຍບາຍເປີດກວ້າງ ແລະ ສົ່ງເສີມ ການທ່ອງທ່ຽວຢ່າງຈິງຈັງຂອງລັດຖະບານ ເຊິ່ງສະແດງອອກໃນແຕ່ລະດ້ານ ຄື:

- ອຳນວຍຄວາມສະດວກໃນການເຂົ້າ-ອອກ ຄື: ເປີດດ່ານສາກົນໃຫມ່ 1 ແຫ່ງ ຄື: ດ່ານບ້ານເມືອງ ມ້ອມ, ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ເຮັດໃຫ້ປະຈຸບັນມີດ່ານສາກົນໃນທົ່ວປະເທດ 21 ແຫ່ງ ສາມາດວີຊາກັບ ດ່ານໄດ້ 16 ແຫ່ງ ແລະ ອອກອະນຸຍາດຢູ່ໄດ້ 30 ວັນ ເທົ່າກັບວີຊາຢູ່ສະຖານທູດ ແລະ ກົງສຸນລາວ ຢູ່ຕ່າງ ປະເທດ. ພ້ອມດຽວກັນນັ້ນ ກໍ່ຍັງອະນຸຍາດຕໍ່ໄລຍະເວລາ ຢູ່ ສປປ ລາວ ໄດ້ທຸກແຂວງເຊິ່ງແຕ່ກ່ອນແມ່ນ ສາມາດປະຕິບັດໄດ້ແຕ່ຢູ່ນະຄອນຫລວງວຽງຈັນບ່ອນດຽວ.
- ຍົກເວັ້ນວີຊາໃຫ້ແກ່ພົນລະເມືອງຂອງ ບັນດາປະເທດອາຊຽນ ແລະ ປະເທດອື່ນໆ ເຊັ່ນ : ຍີ່ປຸ່ນ, ລັດ ເຊຍ, ມົງໂກລີ, ອະນຸຍາດໃຫ້ວີຊາສຳລັບຄົນເຊື້ອຊາດລາວ 3 ເດືອນ ຖ້າເອົາວີຊາຢູ່ສະຖານທູດລາວ ແມ່ນຕໍ່ ໄດ້ອີກ 3 ເດືອນ, ຖ້າຕໍ່ກັບດ່ານໄດ້ 2 ເດືອນ ແລະ ຕໍ່ໄດ້ອີກ 2 ເດືອນ.
- ປະຕິບັດການໂຄສະນາ ແລະ ສົ່ງເສີມການຕະຫລາດ ເປັນຕົ້ນແມ່ນ ປັບປຸງ ແລະ ສ້າງສູນຂໍ້ມູນຂ່າວ ສານທາງການທ່ອງທ່ຽວຢູ່ອົງການທ່ອງທ່ຽວແຫ່ງຊາດ ແລະ ທຸກແຂວງໃນທົ່ວປະເທດ, ສ້າງເວັບໄຊທ່ອງທ່ຽວ, ເຂົ້າຮ່ວມງານວາງສະແດງທ່ອງທ່ຽວສາກົນຫລາຍຄັ້ງ ເຊັ່ນ: ITB ທີ່ ແບັກແລັງ ປະເທດເຢຍລະມັນ, TTM ທີ່ ບາງກອກ ປະເທດໄທ, CITM ທີ່ ຊຽງໄຮ ປະເທດຈີນ, ງານວາງສະແດງການຄ້າ ແລະ ການທ່ອງທ່ຽວ ທີ່

ນານຫນີ ສປ.ຈີນ, ງານວາງສະແດງ ການທ່ອງທ່ຽວອາຊຽນ (ATF) ທີ່ ສິງກະໂປ, JATA ທີ່ປະເທດ ຍີ່ປຸ່ນ, ITE ທີ່ ໂຮ່ຈີມິນ ສສ. ຫວຽດນາມ. ນອກຈາກນັ້ນ, ຍັງໄດ້ຮັບກຽດເປັນເຈົ້າພາບ ຈັດກອງປະຊຸມການ ທ່ອງທ່ຽວໂລກ (World Ecotourism Conference) ທີ່ນະຄອນຫລວງວຽງຈັນ ສປປ ລາວ ໃນສົກປີ 2008-2009 ຕື່ມອີກ.

- ປະສານ ແລະ ສົມທົບກັບຂະແໜງວັດທະນະທຳ ແລະ ບັນດາທ້ອງຖິ່ນ ຈັດເທດສະການ ແລະ ບຸນ ປະເພນີເພື່ອການໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວໃນເວທີສາກົນກໍ່ຄືພາຍໃນປະເທດຢ່າງກວ້າງຂວາງ ເຊັ່ນ: ບຸນວັດພູ ແຂວງຈຳປາສັກ, ບຸນພະທາດສີໂຄດຕະບອງ ແຂວງຄຳມ່ວນ, ບຸນຊ້າງ ແຂວງໄຊຍະບູລີ, ບຸນພະທາດອີຮັງ ແຂວງສະຫວັນນະເຂດ, ບຸນຊຶນເຜົ່າໄຕດຳ ແຂວງຫລວງນ້ຳທາ, ບຸນຊຶນເຜົ່າຕອງ ແຂວງ ອຸດົມໄຊ, ບຸນດອກງິ້ວບານ ແຂວງບໍ່ແກ້ວ.

ນອກຈາກສິ່ງທີ່ກ່າວມານີ້ ພາກສ່ວນທຸລະກິດ ກໍ່ເປັນພາກສ່ວນສຳຄັນໃນການພັດທະນາ ໂດຍສະເພາະແມ່ນ ການຍົກລະດັບຄຸນນະພາບຂອງການບໍລິການໃຫ້ດີຂຶ້ນ ຈຶ່ງເຮັດໃຫ້ນັກທ່ອງທ່ຽວທີ່ມີຄຸນນະພາບ ແລະ ມີການໃຊ້ຈ່າຍສູງ ມາໃຊ້ຈ່າຍຢູ່ປະເທດເຮົາເພີ່ມຂຶ້ນ ເຊິ່ງໃນນັ້ນ ປະເທດທີ່ໃຊ້ຈ່າຍຫລາຍ 10 ອັນດັບ ຕົ້ນຕໍແມ່ນ ໄທ, ຫວຽດນາມ, ຈີນ, ອາເມລິກາ, ຝຣັ່ງ, ອັງກິດ, ຍີ່ປຸ່ນ, ອິດສະຕາລີ, ເຢຍລະມັນ ແລະ ການາດາ.

### 3.1.4. ການເຊື່ອມໂຍງເສດຖະກິດ ເຂົ້າກັບພາກພື້ນ ແລະ ສາກົນ

ການເຊື່ອມໂຍງເສດຖະກິດ ຂອງ ສປປ ລາວ ເຂົ້າກັບພາກພື້ນ ແລະ ສາກົນ ໂດຍຜ່ານການປະຕິບັດນະໂຍບາຍເປີດກວ້າງການຮ່ວມມືເສດຖະກິດກັບຕ່າງປະເທດ ບົນພື້ນຖານຫລັກການຄວາມເປັນເອກະລາດ ຕ່າງຝ່າຍຕ່າງມີປະໂຫຍດ, ໄດ້ເພີ່ມທະວີການພົວພັນຮ່ວມມືເສດຖະກິດ-ການຄ້າ ການເຈລະຈາວຽກງານການ ຄ້າຕ່າງປະເທດໃນຂອບສອງຝ່າຍ, ພາກພື້ນ, ອະນຸພາກພື້ນ ແລະ ຫລາຍຝ່າຍ ນັບມື້ນັບກວ້າງຂວາງ ແລະ ແໜ້ນແຟ້ນ. ສິ່ງທີ່ພົ້ນເດັ່ນແມ່ນ ວຽກງານການຮ່ວມມືການຄ້າຫລາຍຝ່າຍ, ການຮ່ວມມືເສດຖະກິດອາຊຽນ ແລະ ພາກພື້ນ, ການຮ່ວມມືໃນຂອບເຈລະຈາ ລະຫວ່າງ ອາຊຽນກັບປະເທດຄູ່ເຈລະຈາ, ການຈັດຕັ້ງປະຕິບັດ ສັນຍາການຄ້າອາຊີ-ປາຊີຟິກ (APTA) ເຊິ່ງໄດ້ສະແດງອອກດັ່ງນີ້:

**ການຮ່ວມມືການຄ້າຫຼາຍຝ່າຍ:** ເຖິງແມ່ນວ່າ ຍັງບໍ່ທັນສາມາດເຂົ້າເປັນສະມາຊິກການຄ້າໂລກຕາມ ຄາດໝາຍທີ່ກຳນົດໄວ້ໃນແຜນການ 5 ປີ ຄັ້ງທີ VI ກໍ່ຕາມ ແຕ່ໄດ້ມີຄວາມພະຍາຍາມສຳລັບຊຸກຍູ້ຈຶ່ງເຮັດ ໃຫ້ການເຈລະຈາເຂົ້າເປັນສະມາຊິກອົງການການຄ້າໂລກ (WTO) ໄດ້ຮັບຜົນສຳເລັດເປັນກ້າວໆ. ສຳເລັດ ການຕອບຄຳຖາມຂອງບັນດາປະເທດສະມະຊິກອົງການການຄ້າໂລກ ຈຳນວນ 700 ກວ່າຂໍ້ ແລະ ໄດ້ສຳ ເລັດການຈັດກອງປະຊຸມຫນ່ວຍປະຕິບັດງານການເຂົ້າເປັນສະມາຊິກອົງການການຄ້າໂລກ 5 ຄັ້ງ. ນອກນັ້ນ, ກໍ່ໄດ້ມີການຖອດຖອນບົດຮຽນກ່ຽວກັບວຽກງານການເຂົ້າເປັນສະມາຊິກອົງການການຄ້າໂລກຢູ່ ສປ.ຈີນ ແລະ ສສ.ຫວຽດນາມ ກ່ຽວກັບປະສົບການການເຈລະຈາເຂົ້າເປັນສະມາຊິກອົງການການຄ້າໂລກ. ການກະກຽມເຂົ້າ ເປັນສະມາຊິກອົງການການຄ້າໂລກ (WTO) ໄດ້ຊ່ວຍຊຸກຍູ້ຂະແໜງການກ່ຽວຂ້ອງ ເພື່ອໃຫ້ສຳເລັດການປັບ ປຸງບັນດາລະບຽບກົດໝາຍ ຄື: ກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍ ວ່າດ້ວຍວິສາຫະກິດ, ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ກົດໝາຍ ວ່າດ້ວຍມາດຖານ, ກົດໝາຍ ວ່າດ້ວຍປ່າໄມ້, ດຳລັດຈັດ ຕັ້ງປະຕິບັດກົດໝາຍພາສີ, ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ກົດໝາຍ ວ່າ

ດ້ວຍການປ້ອງກັນພືດ, ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ, ນະໂຍບາຍແຫ່ງຊາດ ວ່າດ້ວຍຄວາມປອດໄພຂອງອາຫານ, ດຳລັດວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າ, ກົດໝາຍ ວ່າດ້ວຍການປະມົງ, ລັດຖະບັນຍັດການປະມົງ, ລັດຖະບັນຍັດປະທານປະເທດວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການ ແລະ ດຳລັດວ່າດ້ວຍ ຄວາມປອດໄພຂອງອາຫານ.

**ການຮ່ວມມືເສດຖະກິດກັບອາຊຽນ ແລະ ພາກພື້ນ:** ເວົ້າລວມເວົ້າສະເພາະແມ່ນ ການສ້າງປະຊາຄົມເສດຖະກິດອາຊຽນ ຫຼື ການເຂົ້າຮ່ວມເຂດການຄ້າເສລີອາຊຽນ ສຳເລັດການຮ່ວມລົງນາມໃນສັນຍາ ການຄ້າດ້ານຜະລິດຕະພັນອາຊຽນ (ATIGA) ແລະ ການຮ່ວມລົງນາມໃນສັນຍາການລົງທຶນອາຊຽນ ASEAN (ACIA) ເຊິ່ງໃນປະຈຸບັນ ກຳລັງຢູ່ໃນຂັ້ນຕອນຂໍສັນຕະຍາບັນຈາກສະພາແຫ່ງຊາດ; ສຳເລັດການເຈລະຈາ ແລະ ໄດ້ລົງນາມໃນສັນຍາການຄ້າດ້ານການບໍລິການອາຊຽນ ພາຍໃຕ້ສັນຍາອາຊຽນ ວ່າດ້ວຍການບໍລິການ ຈຳນວນ 7 ພູດ ແລະ ກຳລັງເຈລະຈາພູດທີ 8.

**ການຮ່ວມມືໃນຂອບເຈລະຈາລະຫວ່າງ ອາຊຽນກັບຄູ່ເຈລະຈາ:** ກ່ຽວກັບຂົງເຂດການຄ້າເສລີ ມາຮອດປະຈຸບັນນີ້ ໄດ້ສຳເລັດການເຈລະຈາເຂດການຄ້າເສລີ ອາຊຽນ-ສປ.ຈີນ ເຊິ່ງມີຜົນບັງຄັບໃຊ້ ໃນວັນທີ 1 ມັງກອນ 2010 ລະຫວ່າງ ອາຊຽນ+6 ແລະ ສປ.ຈີນ. ສຳເລັດການຮ່ວມລົງນາມໃນສັນຍາການຮ່ວມມືເສດຖະກິດຮອບດ້ານ ລະຫວ່າງ ອາຊຽນ-ຍີ່ປຸ່ນ, ຈັດຕັ້ງປະຕິບັດແຕ່ວັນທີ 01 ທັນວາ 2008 ເປັນຕົ້ນມາ ໂດຍນຳໃຊ້ແບບຟອມນຳເຂົ້າ-ສົ່ງອອກສິນຄ້າ ອາຊຽນ-ຍີ່ປຸ່ນ (AJ), ໃນປີ 2009, ສຳເລັດການຮ່ວມລົງນາມໃນສັນຍາ ວ່າດ້ວຍການສ້າງຕັ້ງເຂດການຄ້າເສລີ ລະຫວ່າງ ອາຊຽນ-ອົດສຕາລີ ແລະ ນິວຊີແລນ, ແລະ ດ້ານຜະລິດຕະພັນ ອາຊຽນ-ອິນເດຍ, ສຳເລັດການຮ່ວມລົງນາມໃນສັນຍາການລົງທຶນ ລະຫວ່າງ ອາຊຽນ-ສ.ເກົາຫລີ. ສຳເລັດການສ້າງບົດສຶກສາຄວາມເປັນໄປໄດ້ຂອງການສ້າງເຂດການຄ້າເສລີ ລະຫວ່າງອາຊຽນ+3 (EAFTA) ແລະ ອາຊຽນ+6 (CEPEA), ເຊິ່ງຈະເປັນພື້ນຖານໃນການສົ່ງເສີມດ້ານການຄ້າ ແລະ ການລົງທຶນ ໃນພູມີພາກນີ້, ແລະ ປະສານຮ່ວມມືໃນຂະແໜງການເສດຖະກິດຕ່າງໆ ໃນຂອບການຮ່ວມມືເສດຖະກິດອາຊຽນໃນລະດັບຕ່າງໆ ເພື່ອຍາດແຍ່ງຜົນປະໂຫຍດ ແລະ ປະຕິບັດພັນທະຂອງຕົນທີ່ໄດ້ກຳນົດ.

**ການຈັດຕັ້ງປະຕິບັດສັນຍາການຄ້າອາຊີ-ປາຊີຟິກ (APTA):** ສປປ ລາວ ໄດ້ເຂົ້າເປັນສະມາຊິກ ແລະ ເຄື່ອນໄຫວຈັດຕັ້ງປະຕິບັດ ແລະ ເຂົ້າຮ່ວມເຈລະຈາສັນຍາການຄ້າ, ແຜນຫລຸດຜ່ອນມາດຕະການພາສີ ແລະ ບໍ່ແມ່ນພາສີ (ອັດຕາພາສີ), ການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການບໍລິການອາຊີ-ປາຊີຟິກ ຢ່າງຕໍ່ເນື່ອງ.

**ການຮ່ວມມືການຄ້າສອງຝ່າຍ:** ໄດ້ມີການຂະຫຍາຍຕົວກວ້າງເພີ່ມຂຶ້ນ ໂດຍສະເພາະແມ່ນກັບບັນດາປະເທດໃກ້ຄຽງໃນພາກພື້ນອາຊີ ຄື: ການພົວພັນການຄ້າ ລາວ-ຫວຽດ, ການພົວພັນການຄ້າລາວ-ຈີນ ແລະ ການພົວພັນການຄ້າລາວ-ໄທ. ປະຈຸບັນ ສປປ ລາວ ພົວພັນຮ່ວມມືການຄ້າກັບ 51 ປະເທດໃນໂລກ ແລະ ປະຈຸບັນໄດ້ເຊັນສັນຍາສອງຝ່າຍ ກ່ຽວກັບເສດຖະກິດ ແລະ ການຄ້າ ກັບ 18 ປະເທດ ຄື: ສ.ບູນກາລີ, ໄທ, ມຽນມາ, ເກົາຫລີເໜືອ, ຈີນ, ຫວຽດນາມ, ກຳປູເຈຍ, ມາເລເຊຍ, ອິນເດຍ, ສ.ລັດເຊຍ, ສ.ແບນລາຣຸສ, ອາກຊັງຕິນ, ອາເມລິກາ, ຕວກກີ ແລະ ກູເວດ.

ສະຫລຸບແລ້ວ, ວຽກງານການກະກຽມເຂົ້າເປັນສະມາຊິກອົງການການຄ້າໂລກ ກໍ່ຄືຄວາມພະຍາຍາມ ຂອງຄະນະເຈລະຈາ ໃນການຂົນຂວາຍສະມາຊິກອົງການການຄ້າໂລກ ເພື່ອສະໜັບສະໜູນ ສປປ ລາວ ເຂົ້າເປັນສະມາຊິກໂດຍໄວ ໄດ້ມີບາດກ້າວທີ່ຈະແຈ້ງ ແລະ ດີຂຶ້ນ. ການປະຕິບັດວຽກງານຮ່ວມມືເສດຖະກິດ ອາຊຽນໃນໄລຍະ 5 ປີຜ່ານມາ ເຫັນໄດ້ວ່າ ປະສົບຜົນສຳເລັດເປັນຢ່າງດີ ແລະ ສະແດງອອກໃຫ້ເຫັນຢ່າງ ພົ້ນເດັ່ນ ຜົນສຳເລັດຂອງການເຈລະຈາ ແລະ ໄດ້ລົງນາມໃນສັນຍາດັ່ງກ່າວມາຂ້າງເທິງ. ພ້ອມທັງໄດ້ເຂົ້າ ຮ່ວມລົງນາມໃນສັນຍາການຮ່ວມມືດ້ານເສດຖະກິດ ລະຫວ່າງ ອາຊຽນ-ສ.ເກົາຫລີ, ລົງນາມ 7 ສັນຍາ ການ ຮ່ວມມືເສດຖະກິດອາຊຽນ ແລະ ອາຊຽນ-ສປ.ຈີນ ເຊິ່ງເປັນການສົ່ງເສີມຂະຫຍາຍຂອບເຂດການຮ່ວມມືທາງ ເສດຖະກິດພາຍໃນອາຊຽນພ້ອມກັບປະເທດຄູ່ເຈລະຈາຂອງອາຊຽນ ໃຫ້ນັບມື້ນັບກວ້າງຂວາງ ເພື່ອກ້າວໄປສູ່ ເປົ້າໝາຍໃນການເປັນປະຊາຄົມເສດຖະກິດອາຊຽນ ແລະ ເປັນຕະຫລາດອັນໜຶ່ງອັນດຽວໃນອານາຄົດ. ການຈັດຕັ້ງປະຕິບັດພັນທະພາຍໃຕ້ສັນຍາ APTA ກໍ່ໄດ້ສຳເລັດການສ້າງບັນຊີຫລຸດຜ່ອນອັດຕາພາສີນຳເຂົ້າ ສປປ ລາວ ໃນຂອບ APTA ເຖິງ 1.803 ລາຍການ. ຈາກຜົນງານດັ່ງກ່າວ ເຮັດໃຫ້ປະເທດສະມາຊິກໄດ້ ສະແດງທ່າອ່ຽງອັນດີ ໃນການສືບຕໍ່ຈັດຕັ້ງປະຕິບັດພັນທະຂອງຕົນ ແລະ ສະໜັບສະໜູນໃຫ້ເສີມຂະຫຍາຍ ການເປີດເສລີທາງດ້ານການຄ້າໃນຂອບ APTA.

**ການເປີດກວ້າງການຄ້າກັບສາກົນ:** ການພົວພັນຮ່ວມມືການຄ້າໄດ້ຊຸກຍູ້ສົ່ງເສີມເປີດກວ້າງ ແລະ ພັດ ທະນາຕະຫລາດໃຫ້ມີຫລາຍຮູບແບບການເຂົ້າເຖິງຕະຫລາດໃນຂົງເຂດ ແລະ ພາກພື້ນ ເຫັນໄດ້ວ່າ ມີການ ຂະຫຍາຍຕົວຢ່າງຕໍ່ເນື່ອງ. ມູນຄ່າການສົ່ງອອກ ແລະ ການນຳເຂົ້າ ມີການເພີ່ມຂຶ້ນ ແລະ ສົ່ງຜົນເຮັດໃຫ້ ລະດັບການເປີດກວ້າງທາງການຄ້າ ໃນໄລຍະ 2006-2009 ຢູ່ໃນລະດັບ 83% ຊຶ່ງເພີ່ມຈາກ 65% ໃນປີ 2005. ເຖິງຢ່າງໃດກໍ່ຕາມ ອັດຕາສ່ວນການຄ້າສາກົນຕໍ່ລວມຍອດຜະລິດຕະພັນພາຍໃນ(GDP) ແມ່ນຍັງຕ່ຳ ຫລາຍ ເມື່ອທຽບໃສ່ບັນດາປະເທດສະມາຊິກອາຊຽນອື່ນໆ ຍົກເວັ້ນ ປະເທດມຽນມາ (ເບິ່ງຕາຕະລາງ 7).

**ຕາຕະລາງ 7: ສົມທຽບການເປີດປະເທດທາງດ້ານການຄ້າ ຫຼື ການເຊື່ອມໂຍງ ໃນໄລຍະ 2006-2008**

| ປະເທດ | ອັດຕາສ່ວນ ການຄ້າສາກົນ (ການສົ່ງອອກ+ການ ນຳເຂົ້າ) ຕໍ່ ລວມຍອດຜະລິດຕະພັນພາຍໃນ(GDP) |
|---|---|
| ສປປ ລາວ | **83,2** |
| ຫວຽດນາມ | 159,1 |
| ກຳປູເຈຍ | 105,6 |
| ໄທ | 151,1 |
| ຟີລິປິນ | 85,1 |
| ຮົ່ງກົ່ງ | 406,5 |
| ມາເລເຊຍ | 205,9 |
| ສິງກະໂປ | 443,2 |
| ພະມ້າ | 52,8 |

*ແຫລ່ງຂໍ້ມູນ: ກົມສະຖິຕິ, ກະຊວງ ແຜນການ ແລະ ການລົງທຶນ ແລະ ອົງການການຄ້າໂລກ.*

**ຕະຫຼາດສົ່ງອອກ ແລະ ໂຄງປະກອບຂອງຕະຫຼາດສົ່ງອອກ:** ໃນປີ 2008 ສປປ ລາວ ໄດ້ເຮັດ ການຄ້າກັບບັນດາປະເທດຄູ່ຄ້າທີ່ຢູ່ໃນເຂດພາກພື້ນ ແລະ ສາກົນ ຫຼາຍກວ່າ 90 ປະເທດໃນໂລກ ເຊິ່ງມີມູນ ຄ່າ ການຄ້າທັງໝົດປະມານ 2.495 ລ້ານໂດລາສະຫະລັດ (ນຳເຂົ້າ ແລະ ສົ່ງອອກ) ຫຼື ເທົ່າກັບ 47,28% ຂອງ GDP ໂດຍສະເພາະຢ່າງຍິ່ງ ສປປ ລາວ ໄດ້ສົ່ງສິນຄ້າອອກໄປໃນຕະຫຼາດໂລກ ປະມານ 50 ກວ່າ ປະເທດ (ພາກພື້ນ ແລະ ສາກົນ) ຊຶ່ງລວມມູນຄ່າການສົ່ງອອກໃນປີດັ່ງກ່າວ ປະມານ 1.091,91 ລ້ານໂດລາ ສະຫະລັດ ຫຼື ເທົ່າກັບ 20,69% ຂອງ GDP ໃນປີ; ໃນນັ້ນ, ຕະຫຼາດສົ່ງອອກຕົ້ນຕໍ ແມ່ນປະເທດໄທ ກວມ ອັດຕາສ່ວນການສົ່ງອອກ ທັງໝົດແມ່ນ 59,60% ຫຼື ເທົ່າກັບ 650,78 ລ້ານໂດລາ; ຮອງລົງມາ ແມ່ນ ຫວຽດນາມ 13,37%, ອົດສະຕຣາລີ 6,19%, ຈີນ 1,85% (ລະອຽດເບິ່ງຕາຕະລາງ 8 ຂ້າງລຸ່ມ).

**ຕາຕະລາງ 8: ໂຄງປະກອບຂອງຕະຫຼາດສົ່ງອອກ ກັບປະເທດຄູ່ຄ້າຫັ ກ ປີ 2008**

| ລຳດັບ | **ປະເທດ** | **ມູນຄ່າ** (ລ້ານໂດລາ) | **ສັດສ່ວນ (%)** |
|---|---|---|---|
| 1 | ໄທ | 650.78 | 59.60 |
| 2 | ຫວຽດນາມ | 145.99 | 13.37 |
| 3 | ອົດສະຕຣາລີ | 67.59 | 6.19 |
| 4 | ຈີນ | 20.20 | 1.85 |
| 5 | ສະວາຊິແລນ | 10.05 | 0.92 |
| 6 | ໂປແລນ | 9.61 | 0.88 |
| 7 | ສາທາລະນະລັດເກົາຫລີ | 9.50 | 0.87 |
| 8 | ສະຫະລັດອາເມລິກາ | 4.04 | 0.37 |
| 9 | ເຢຍລະມັນ | 5.13 | 0.47 |
| 10 | ເນເທີແລນ | 4.37 | 0.40 |
| 11 | ອື່ນໆ | 164.66 | 15.08 |
| ລວມ | | 1,091.91 | 100.00 |

*ແຫລ່ງຂໍ້ມູນ: ການຄິດໄລ່ຂອງກົມສະຖິຕິ ໂດຍອີງໃສ່ຂໍ້ມູນຈາກ ກົມພາສີ, ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ*

### 3.1.5. ການກໍ່ສ້າງພື້ນຖານໂຄງລ່າງ:

ໃນໄລຍະຜ່ານມາການກໍ່ສ້າງໄດ້ມີການຂະຫຍາຍຕົວສູງສົມຄວນ, ໂດຍສະເພາະໃນແຜນການ 5 ປີ ຄັ້ງທີ VI (2006-2010) ຂະຫຍາຍໂດຍສະເລ່ຍ 11,26% ແລະ ກວມເອົາ 4,8% ຂອງລວມຍອດມູນຄ່າ

ຜະລິດຕະພັນພາຍໃນ ເຫັນວ່າ ເປັນການສະໜັບສະໜູນທາງກົງ ແລະ ທາງອ້ອມ ໃຫ້ແກ່ຂະແໜງການຄ້າ-ການລົງທຶນໃຫ້ຂະຫຍາຍຕົວ, ການຂົນສົ່ງທັງໂດຍສານ-ສິນຄ້າເພີ່ມຂຶ້ນ, ການຜະລິດກະສິກຳ-ປ່າໄມ້ ເພີ່ມຂຶ້ນ, ການປ້ອງກັນຄວາມສະຫງົບມີສະເຖຍລະພາບ ແລະ ຮັບປະກັນການຈໍລະຈອນໄປມາຫາສູ່ກັນໄດ້ທົ່ວປະເທດໃນຕະຫລອດປີ. ວຽກງານການເຊື່ອມໂຍງເສັ້ນທາງບົກ ແລະ ອາກາດກັບອະນຸພາກພື້ນກໍ່ມີທ່າກ້າວສຳຄັນປະກົດຂຶ້ນ.

ສຳເລັດໂຄງການປ້ອງກັນຕະຝັ່ງເຈື່ອນຕາມລຳນ້ຳຂອງ ເຊັ່ນ: ເຂດເມືອງຕົ້ນເຜິ້ງ, ເຂດເມືອງຫາດຊາຍຟອງ ແລະ ກຸ່ມອື່ນໆຈຳນວນໜຶ່ງ, ສຳເລັດໂຄງການກໍ່ສ້າງນ້ຳປະປາເຂດດົງໜາກຄາຍ, ກຳລັງຈັດຕັ້ງປະຕິບັດໂຄງການພັດທະນາຕົວເມືອງນ້ອຍ ໄລຍະ1, ໂຄງການນ້ຳປະປາ ແລະ ສຸຂາພິບານເມືອງນ້ອຍ ໄລຍະ1, ໂຄງການນ້ຳປະປາ ແລະ ສຸຂາພິບານພາກເໜືອ-ພາກກາງ ແລະ ໂຄງການປັບປຸງນ້ຳປະປາເກົ້າລ້ຽວ, ຈີ່ນາຍໂມ້. ໄດ້ສຳເລັດກໍ່ສ້າງເຂື່ອນນ້ຳມັງ 3 (40 MW) ໃນປີ 2005; ໂຄງການທີ່ກຳລັງກໍ່ສ້າງຈະສຳເລັດໃນປີ 2010 ມີ: ນ້ຳລິກ1/2 (ຮອດເດືອນ 10/2009 ສຳເລັດ 81%), ນ້ຳຍອນ (ຮອດເດືອນ 11/2009 ສຳເລັດ 50%); ໂຄງການທີ່ຈະສຳເລັດໃນປີ 2011 ມີ: ໂຄງການເຂື່ອນນ້ຳງື່ມ2 ( ຮອດເດືອນ 10/2009 ສຳເລັດ 89,3%), ເຊຊະໜານ3 ( ຮອດເດືອນ 10/2009 ສຳເລັດ 56%), ໂຄງການນ້ຳງື່ມ5 (ຮອດເດືອນ10/2009 ສຳເລັດ 30%) ແລະ ຕາດສະແລນ ( ຮອດເດືອນ 10/2009 ສຳເລັດ 8%), ແລະ ໂຄງການທີ່ຈະສຳເລັດໃນປີ 2012 ມີ: ເຫີນຫີນບູນພາກຂະຫຍາຍ (ຮອດເດືອນ 11/2009 ສຳເລັດ 27%) ແລະ ເຂື່ອນນ້ຳຊອງສຳເລັດ 3,36%. ໂຄງການສາຍສົ່ງພາກເໜືອຮອດເດືອນ 12 ສຳເລັດ 98,5%, ສາຍສົ່ງພາກກາງ-ໃຕ້ ສຳເລັດ 93,2%, ສາຍສົ່ງແຮງກາງໄປສູ່ 7 ເມືອງ ແຂວງອຸດົມໄຊ ສຳເລັດ 100%, ສາຍສົ່ງແຮງກາງໄປເມືອງນາແລ ສຳເລັດ 85%. ສຳລັບວຽກງານກໍ່ສ້າງຊົນລະປະທານ (ຊລປທ) ໄດ້ສຳເລັດໂຄງການກໍ່ສ້າງຊົນລະປະທານ (ຊລປທ) ນ້ຳຕົນ ແຂວງໄຊຍະບູລີ, ໂຄງການກໍ່ສ້າງລະບົບ ຊລປທ ດົງໂພສີ (ນະຄອນຫລວງວຽງຈັນ) ແລະ ໄດ້ສືບຕໍ່ສ້ອມແປງບັນດາ ຊລປທ ທີ່ເປ່ເພຈາກໄພທຳມະຊາດ ແລະ ທີ່ເກົ່າແກ່ຈຳນວນໜຶ່ງ.

ພ້ອມນັ້ນ, ການລົງທຶນເຂົ້າໃນການກໍ່ສ້າງສິ່ງຮອງຮັບທາງດ້ານການທ່ອງທ່ຽວ ໂດຍສະເພາະແມ່ນ ທີ່ພັກ (ໂຮງແຮມ ແລະ ເຮືອນພັກ) ແມ່ນເພີ່ມຂຶ້ນຫລາຍພໍສົມຄວນ ແລະ ຖ້າເບິ່ງຈາກຂໍ້ມູນທາງດ້ານການລົງທຶນ ໃນໄລຍະປີ 2006-2009 ໃຫ້ຮູ້ວ່າ ການລົງທຶນ (ສະເພາະ FDI) ໃສ່ການທ່ອງທ່ຽວທັງໝົດແມ່ນ 161,03 ລ້ານໂດລາ, ສະເລ່ຍໃນແຕ່ລະປີແມ່ນປະມານ 40,26 ລ້ານໂດລາສະຫະລັດ ເປັນການລົງທຶນໃສ່ການສ້າງທີ່ພັກ (ໂຮງແຮມ) ເທົ່ານັ້ນ; ນອກນັ້ນ, ກໍ່ຍັງມີການລົງທຶນໃສ່ຂະແໜງການ ທີ່ຊ່ວຍສະໜັບສະໜູນທາງດ້ານການທ່ອງທ່ຽວ ໂດຍສະເພາະແມ່ນ ການສ້າງໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ຂົນສົ່ງ ເຊິ່ງມີມູນຄ່າ ໃນປີ 2008 ແມ່ນ 34,45 ລ້ານໂດລາ ແລະ ປີ 2009 ມີມູນຄ່າ 83,76 ລ້ານໂດລາ ເພີ່ມຂຶ້ນກ່ວາເທົ່າຕົວຂອງປີ 2008.

ສຳລັບການລົງທຶນດ້ານການທ່ອງທ່ຽວຂອງພາກລັດຖະບານ ແມ່ນສຸມໃສ່ການລົງທຶນທາງດ້ານພື້ນຖານໂຄງລ່າງ ເຊັ່ນ: ການປັບປຸງເສັ້ນທາງເຊື່ອມຕໍ່ຫາແຂວງ, ປັບປຸງການຂົນສົ່ງທາງນ້ຳ, ທາງອາກາດ ແລະ ທາງບົກ, ເພີ່ມພາຫະນະການຂົນສົ່ງທີ່ທັນສະໄໝໃສ່ລະບົບຂົນສົ່ງ, ເພີ່ມຖ້ຽວບິນ, ຂະຫຍາຍເສັ້ນທາງການບິນລະຫວ່າງແຂວງ, ເພີ່ມຖ້ຽວລົດໂດຍສານ ແລະ ມີຫລາຍລະດັບການບໍລິການ ເຊິ່ງການລົງທຶນໃສ່ດ້ານນີ້ ໃນໄລຍະປີ 2006-2009 ມີມູນຄ່າທັງໝົດແມ່ນ 1.395,57 ຕື້ກີບ ທຽບໃສ່ໄລຍະປີ 2001-2004 ເພີ່ມຂຶ້ນ

30,6%, ໃນນັ້ນ ເປັນທຶນພາຍໃນ 202,15 ຕື້ກີບ ເພີ່ມຂຶ້ນ 16,8% ແລະທຶນຕ່າງປະເທດ 1.193,43 ຕື້ກີບ ເພີ່ມຂຶ້ນ 33,4%.

ໄດ້ປັບປຸງສະໜາມບິນຫລວງນ້ຳທາ, ກໍ່ສ້າງເສັ້ນທາງ R3 ເຊິ່ງເປັນເສັ້ນທາງທີ່ເຊື່ອມຕໍ່ກັບປະເທດໃນ ອານຸພາກພື້ນ, ທາງເລກທີ 12, ການເປີດນຳໃຊ້ຂົວມິດຕະພາບລາວ-ໄທ ແຫ່ງທີ 2 ສະຫວັນນະເຂດ-ມຸກດາ ຫານ ແລະ ເສັ້ນທາງອື່ນໆ ເພື່ອເຊື່ອມຕໍ່ກັບປະເທດເພື່ອນບ້ານ, ສ້າງເສັ້ນທາງເຂົ້າຫາແຫລ່ງທ່ອງທ່ຽວ ເປັນ ຕົ້ນ: ຖ້ຳກອງລໍ, ຕາດກວາງຊີ, ໄດ້ປັບປຸງສິ່ງອຳນວຍຄວາມສະດວກຢູ່ແຫ່ງທ່ອງທ່ຽວ ເປັນຕົ້ນແມ່ນ ຫ້ອງນ້ຳ ສາທາລະນະ, ຈຸດຊົມທິວທັດ, ບ່ອນຈອດລົດ ແລະ ອື່ນໆ; ຂະຫຍາຍເຄືອຄ່າຍຕາໜ່າງໄຟຟ້າ, ນ້ຳປະປາ ແລະ ສາທາລະນູປະໂພກອື່ນໆ.

ການພັດທະນາກໍ່ສ້າງໂຄງລ່າງພື້ນຖານ, ໄດ້ເສີມສ້າງໂອກາດໃຫ້ປະຊາຊົນບັນດາເຜົ່າ ເຂົ້າເຖິງການ ຜະລິດ, ການສຶກສາ, ສາທາລະນະສຸກ ແລະ ຕະຫລາດນັບມື້ນັບດີຂຶ້ນ, ຂະແໜງອຸດສາຫະກຳ-ການຄ້າ, ການລົງທຶນ (ທັງພາກລັດ ແລະ ພາກເອກະຊົນ), ການກໍ່ສ້າງໂຄງລ່າງ ແລະ ໄຟຟ້າຊົນນະບົດ ໄດ້ຮັບການ ພັດທະນາຫລາຍຂຶ້ນ ແລະ ການເພີ່ມຂຶ້ນຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ, ການສ້ອມແປງ, ການຂົນສົ່ງ, ສາງ, ໄປສະນີ, ໂທລະຄົມມະນາຄົມ, ໂຮງແຮມ ແລະ ຮ້ານອາຫານກໍຄືການບໍລິການອື່ນໆມີ ການຂະຫຍາຍຕົວດີສົມຄວນ.

## 3.2. ການພັດທະນາພາກ ແລະ ເຂດແຄວ້ນ

ການຕີລາຄາການພັດທະນາເຂດແຄວ້ນ ແມ່ນເນັ້ນໃສ່ການປ່ຽນແປງທາງດ້ານໂຄງປະກອບ ເຊິ່ງຕິດ ພັນກັບການເຕີບໂຕຂອງເສດຖະກິດ 3 ຂະແໜງການຫລັກ ຄື: ກະສິກຳ, ອຸດສາຫະກຳ ແລະ ການບໍລິການ ແລະ ສະພາບຄວາມທຸກຍາກ. ເນື່ອງຈາກຂໍ້ມູນໄກການຕິດຕາມ ແລະ ປະເມີນຜົນ ບັນດາແຜນງານ ແລະ ໂຄງການບໍ່ທັນເປັນລະບົບ ສົມທົບໃສ່ຄວາມຂາດແຄນຂໍ້ມູນສະຖິຕິ ການຕີລາຄາຈຶ່ງມີຄວາມຫຍຸ້ງຍາກ, ໂດຍ ສະເພາະ ການຕີລາຄາບັນດາຄາດຫມາຍ ເຊັ່ນ: ງົບປະມານ, ການລົງທຶນ, ຜົນໄດ້ຮັບກໍ່ຄືປະສິດທິຜົນຂອງ ການລົງທຶນ ຂອງບັນດາໂຄງການບູລິມະສິດ ທີ່ນອນໃນ 11 ແຜນງານ ແລະ 111 ໂຄງການ ທີ່ກ່ຽວຂ້ອງໃນ ແຕ່ລະພາກ. ເຖິງຢ່າງໃດກໍ່ຕາມ ການຕີລາຄາ ພະຍາຍາມນຳສະເໜີບັນດາກິດຈະກຳ ຫລື ໂຄງການ ພັດທະນາຕ່າງໆທີ່ຖືກຈັດຕັ້ງປະຕິບັດ ໃນໄລຍະ 2006-2010.

### [1]. ອັດຕາສ່ວນເສດຖະກິດ ຂອງພາກເໜືອ, ກາງ ແລະ ໃຕ້[6]

ເສດຖະກິດຂອງບັນດາພາກມີການເຕີບໂຕທີ່ບໍ່ສະເໜີກັນ ພາກກາງ ເປັນພາກທີ່ມີການພັດທະນາສູງ ກວ່າພາກເໜືອ ແລະ ພາກໃຕ້ ເນື່ອງຈາກວ່າມີທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ແລະ ຊັບພະ ຍາກອນມະນຸດ ເປັນສູນລວມຂອງປະຊາກອນ, ມີໂຄງລ່າງພື້ນຖານທີ່ດີກວ່າ. ໂດຍສະເລ່ຍ ແຕ່ໄລຍະປີ 2006-2010 ເສດຖະກິດພາກກາງ ກວມເອົາປະມານ 70,7% ຂອງລວມຍອດຜະລິດຕະພັນພາຍໃນທົ່ວປະ

[6] ເພື່ອສາມາດ ເຫັນໄດ້ສະພາບເສດຖະກິດ ຂອງພາກ ກົນສະຖິຕິໄດ້ນຳໃຊ້ ວິທີການ ການຄາດຄະເນ ໂດຍອີງໃສ່ລວມຍອດ ຜະລິດຕະພັນ ຂອງ ສປປ ລາວ ແລະ ໂຄງປະກອບ ຂອງ ເນື້ອທີ່ ການຜະລິດກະສິກຳ , ບັນດາຫົວໜ່ວຍ ວິສາຫະກິດ ແລະ ຜົນຜະລິດ ແບ່ງຕາມ ຂະແໜງການ ເພື່ອຈັດແບ່ງ ໂຄງປະກອບ ລວມຍອດຜະລິດຕະພັນພາຍໃນໃນຂົງເຂດ. ເຖິງຢ່າງໃດກໍ່ຕາມ ຕົວເລກດັ່ງກ່າວຈະຊີ້ໃຫ້ ເຫັນພາບລວມ ແລະ ໃນຕໍ່ໜ້າວຽກການການສ້າງລະບົບການຄິດໄລ່ ເສດຖະກິດ ແລະ ຂໍ້ມູນ ຕາມ ພາກ ແມ່ນຈຳເປັນທີ່ສຸດ.

ເທດ, ສ່ວນພາກເໜືອ ກວມເອົາ 15,3% ແລະ ພາກໃຕ້ ກວມເອົາພຽງແຕ່ 14,1% ເທົ່ານັ້ນ. ຄວາມແຕກຕ່າງດັ່ງກ່າວແມ່ນຍ້ອນເຂດພາກເໜືອຂອງລາວເປັນເຂດທີ່ມີເງື່ອນໄຂຫຍຸ້ງຍາກ ເຊັ່ນ: ພູມສັນຖານເປັນເຂດພູສູງ ແລະ ພາຫີນ,ໂຄງລ່າງພື້ນຖານຍັງບໍ່ທັນພັດທະນາຢ່າງພຽງພໍ, ການຜະລິດກະສິກຳຕົ້ນຕໍແມ່ນອີງໃສ່ນ້ຳຟ້ານ້ຳຝົນ. ເຖິງຢ່າງໃດກໍ່ຕາມ ພາກເໜືອມີທ່າແຮງທາງດ້ານພະລັງງານໄຟຟ້າ, ບໍ່ແຮ່ ແລະ ການທ່ອງທ່ຽວ ກໍ່ຄືການພັດທະນາເຂດຊາຍແດນ.

### [2]. ການຫັນປ່ຽນໂຄງປະກອບເສດຖະກິດຂອງເຂດແຄ້ວນ

**ການຫັນປ່ຽນໂຄງປະກອບເສດຖະກິດ ຢູ່ເຂດພາກເໜືອ:** ຂະແໜງກະສິກຳ-ປ່າໄມ້ ກວມເອົາອັດຕາສ່ວນສູງ ແຕ່ກໍ່ມີທ່າອ່ຽງຫລຸດລົງ, ໃນຂະນະທີ່ໂຄງປະກອບຂອງຂະແໜງການອຸດສາຫະກຳ ແລະ ບໍລິການເພີ່ມຂຶ້ນເມື່ອທຽບໃສ່ ປີ 2005. ເຂດພາກເໜືອ ມີທ່າແຮງ ແຕ່ການພັດທະນາອຸດສາຫະກຳ ແມ່ນຍັງບໍ່ທັນພັດທະນາເທື່ອ, ປະຈຸບັນມີພຽງແຕ່ເຂື່ອນໄຟຟ້າຈຳນວນຫນຶ່ງ, ການຂຸດຄົ້ນບໍ່ແຮ່ຂະໜາດນ້ອຍ ແລະ ບາງອາຊີບຫັດຖະກຳ ແລະ ການປຸງແຕ່ງອາຫານແບບຄອບຄົວ.

**ການຫັນປ່ຽນໂຄງປະກອບເສດຖະກິດ ຢູ່ເຂດພາກກາງ:** ການປ່ຽນແປງທາງດ້ານໂຄງປະກອບແມ່ນມີທ່າອ່ຽງໄປໃນທິດທາງອັນດຽວກັນ ອັດຕາສ່ວນກະສິກຳຫລຸດລົງ ແລະ ຂະແໜງການອຸດສາຫະກຳ ແລະ ບໍລິການເພີ່ມຂຶ້ນ. ສະເພາະເຂດພາກກາງຂະແໜງບໍລິການ ຈະກວມເອົາອັດຕາສ່ວນຫລາຍກວ່າ. ເຖິງຢ່າງໃດກໍ່ຕາມ ການຜະລິດຢູ່ພາກກາງ ຍັງສຸມຢູ່ເຂດທົ່ງພຽງລຸ່ມຕາມແມ່ນ້ຳຂອງ ແລະ ຂະແໜງການບໍລິການແມ່ນການຄ້າລວມທັງການຄ້າຊາຍແດນ, ການທ່ອງທ່ຽວ ແລະ ການຂົນສົ່ງ.

**ການຫັນປ່ຽນໂຄງປະກອບເສດຖະກິດ ຢູ່ເຂດພາກໃຕ້:** ເຂດພາກໃຕ້ຂອງລາວມີທີ່ຕັ້ງສຳຄັນໃນສາມລຸ່ມເສດຖະກິດສາກົນ ແລະ ມີທ່າແຮງໃນການຂະຫຍາຍຕົວພໍສົມຄວນ. ກະສິກຳເປັນຂະແໜງການທີ່ກວມເອົາຫລາຍກວ່າ 50% ຂອງເສດຖະກິດຂອງພາກແຕ່ກໍ່ມີທ່າອ່ຽງຫລຸດລົງເຊັ່ນກັນ.

ສະຫລຸບແລ້ວເຫັນວ່າ ໂຄງປະກອບເສດຖະກິດຂອງ 3 ພາກ ແມ່ນມີຄວາມແຫດເໝາະກັບທ່າອ່ຽງພາວະວິໄສ ເຊິ່ງແມ່ນກົດເກນຂອງປະເທດກໍ່ຄືພາກ ທີ່ຢູ່ໃນໄລຍະຕົ້ນຂອງຂະບວນການຫັນເປັນອຸດສາຫະກຳ, ເຊິ່ງເຫັນວ່າການຜະລິດສິນຄ້າຂະໜາດນ້ອຍ ເພື່ອການຊົມໃຊ້ຂອງຕົນເອງຫລາຍກວ່າ ການຜະລິດທີ່ເປັນສິນຄ້າຂະໜາດໃຫຍ່. ເຖິງຢ່າງໃດກໍ່ຕາມ ການປ່ຽນແປງຍັງຊີ້ໃຫ້ເຫັນເຖິງການບຸກເບີກທ່າແຮງ ຂອງທ້ອງຖິ່ນ. ລວມຍອດຜະລິດຕະພັນພາຍໃນຢູ່ເຂດພາກກາງ ໃນສົກປີ 2008-2009 ປະມານ 1.284 ໂດລາ, ໃນຂະນະທີ່ພາກເໜືອ ປະມານ 459 ໂດລາ ແລະ ພາກໃຕ້ ປະມານ 716 ໂດລາ. ໃນປີ 2009-2010 ຄາດວ່າລວມຍອດຜະລິດຕະພັນພາຍໃນ ໂດຍສະເລ່ຍ ຈະສືບຕໍ່ເພີ່ມຂຶ້ນ ເມື່ອທຽບໃສ່ 2008-2009, ພາກກາງຈະຢູ່ໃນລະດັບ ປະມານ 1400 ໂດລາ, ພາກເໜືອ ແມ່ນ 500 ໂດລາ ແລະ ພາກໃຕ້ ແມ່ນ ປະມານ 783 ໂດລາ. ເຖິງຢ່າງໃດກໍ່ຕາມລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ແມ່ນມີຄວາມແຕກຕ່າງ ກັນພໍສົມຄວນ ລະຫວ່າງແຂວງ ໂດຍສະເພາະ ບັນດາແຂວງທີ່ມີອັດຕາສ່ວນຄວາມທຸກຍາກສູງ, ມີເນື້ອທີ່ ການຜະລິດໜ້ອຍ ແລະ ຈຳນວນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານໜ້ອຍ. ສະນັ້ນ ການຜະລິດ ໃນຂົງເຂດອຸດສາຫະກຳ ແລະ ການບໍລິການ ແມ່ນຈະສຸມຢູ່ໃນເຂດຕົວເມືອງໃຫ່ຍເທົ່ານັ້ນ.

**ຕາຕະລາງ 9: ໂຄງປະກອບເສດຖະກິດ ແລະ ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ຕາມພາກສະເລ່ຍ ແຕ່ 2006-2010**

| ຂະແໜງການ | ພາກເໜືອ | | ພາກກາງ | | ພາກໃຕ້ | |
|---|---|---|---|---|---|---|
| | ແຜນ | ປະຕິບັດ | ແຜນ | ປະຕິບັດ | ແຜນ | ປະຕິບັດ |
| ການແບ່ງສັດສ່ວນ ໃນລວມຍອດຜະລິດຕະພັນພາຍໃນ | 25-28% | 15,3% | 49-54% | 70,7% | 21-23% | 14% |
| ລວມຍອດຜະລິດຕະພັນພາຍໃນ ຕໍ່ຫົວຄົນ (ໂດລາ) | 610 | 389,0 | 1.000 | 1.145,4 | 930-950 | 606.5 |
| ອັດຕາສ່ວນ ພົນລະເມືອງ | | 31,1% | | 49,0% | | 19,9% |

*ແຫລ່ງຂໍ້ມູນ : ແຜນພັດທະນາເສດຖະກິດ ສັງຄົມ 2006-2010, ກົມສະຖິຕິແຫ່ງຊາດ , ກະຊວງແຜນການ ແລະ ການລົງທຶນ*

## [3]. ການຈັດຕັ້ງປະຕິບັດນະໂຍບາຍ ແລະ ກິດຈະກຳທີ່ພົ້ນເດັ່ນ

### 1. ເຂດພາກເໜືອ:

ການພັດທະນາໄດ້ສຸມໃສ່ການພັດທະນາກະສິກຳ ແລະ ພັດທະນາຊົນນະບົດ, ການພັດທະນາຕົວເມືອງໂດຍຕິດພັນກັບການກໍ່ສ້າງພື້ນຖານອຸດສາຫະກຳ, ການບໍລິການ ແລະ ພັດທະນາທາງດ້ານສັງຄົມ ເພື່ອແນໃສ່ການຫລຸດຜ່ອນຄວາມທຸກຍາກ ແລະ ຄວາມແຕກໂຕນ ລະຫວ່າງແຂວງ ແລະ ພາກ. ການພັດທະນາໄດ້ສຸມໃສ່ໂຄງລ່າງພື້ນຖານ ເຊັ່ນ:

- ໄດ້ສືບຕໍ່ກໍ່ສ້າງ ແລະ ສ້ອມແປງບັນດາລະບົບຊົນລະປະທານ, ເສັ້ນທາງ, ໂຮງຮຽນ, ໂຮງໝໍ ແລະ ອື່ນໆ ເຊັ່ນ: ລະບົບຊົນລະປະທານນ້ຳແສງ, ນ້ຳແທ້, ນ້ຳມ້າວ-ນ້ຳແໜ້ນ;
- ສຳເລັດການກໍ່ສ້າງ ແລະ ຍົກລະດັບທາງຫລວງນ້ຳທາ-ນາແລ;
- ໄດ້ສຳເລັດໂຄງການສາຍສົ່ງໄຟຟ້າເມືອງງອຍ-ເມືອງວຽງຄຳ ແຂວງຫລວງພະບາງ, ສາຍສົ່ງໄຟຟ້າແຮງກາງ ເມືອງໄຊ-ເມືອງງາ-ເມືອງແບງ-ເມືອງຮຸນ-ເມືອງປາກແບງ, ເມືອງນາໜ້ໍ ແລະ ເມືອງຫຼາ ແຂວງອຸດົມໄຊ ແລະ ສາຍສົ່ງແຮງກາງ ແຕ່ເມືອງນ້ຳທາ-ເມືອງນາແລ ແຂວງຫລວງນ້ຳທາ. ການຟື້ນຟູ ແລະ ສ້ອມແປງພື້ນຖານໂຄງລ່າງທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ໃນປີ 2008 ສຳເລັດເປັນຢ່າງດີ;
- ໄດ້ສົ່ງເສີມໃຫ້ປະຊາຊົນປູກພືດລະດູແລ້ງເປັນສິນຄ້າເດັ່ນກວ່າຫມູ່ແມ່ນ ຂະບວນການປູກສາລີຢູ່ແຂວງໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ, ຫົວພັນ ແລະ ຊຽງຂວາງ ເພື່ອຕອບສະໜອງໃຫ້ຕະຫລາດ ເຊັ່ນ: ໄທ, ສປ. ຈີນ ແລະ ສສ.ຫວຽດນາມ, ຄຽງຄູ່ກັນນັ້ນ ກໍ່ໄດ້ມີການສົ່ງເສີມພາກເອກະຊົນພາຍໃນ ແລະ ຕ່າງປະເທດລົງທຶນປູກພືດອຸດສາຫະກຳເປັນຕົ້ນແມ່ນ ຢາງພາລາ.
- ສົ່ງເສີມ ແລະ ພັດທະນາແຫລ່ງການທ່ອງທ່ຽວ ແບບທຳມະຊາດ, ວັດທະນາທຳ ເຊັ່ນ: ໂຄງການທ່ອງທ່ຽວຊຸມຊົນ, ໂຄງການຈັດສັນເທດສະການ ເພື່ອດຶງດູດນັກທ່ອງທ່ຽວ ຢູ່ສະຖານທີ່ທີ່ມີຊື່ສຽງ ເຊັ່ນ: ຫລວງພະບາງ, ວັງວຽງ, ເມືອງສີງ, ຊຽງຂວາງ,.... ປັບປຸງພື້ນຖານບໍລິການການທ່ອງທ່ຽວ, ຍົກລະດັບການບໍລິການ, ການທ່ອງທ່ຽວ, ການຄ້າຂາຍຕາມຊາຍແດນ ກໍ່ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ.

- ວຽກງານການສຶກສາ ໄດ້ມີການສືບຕໍ່ປັບປຸງ ແລະ ສະໜອງອຸປະກອນການສຶກສາຕາມເຂດກຸ່ມບ້ານ ພັດທະນາ ແລະ ການສຶກສາຊັ້ນສູງ, ສຳເລັດການສ້າງຕັ້ງມະຫາວິທະຍາໄລ ສຸພານຸວົງ ຢູ່ແຂວງຫລວງພະ ບາງ.

- ດ້ານສາທາລະນະສຸກ ກໍ່ມີການສ້າງຕັ້ງກອງທຶນປະກັນສຸຂະພາບຂອງຊຸມຊົນ ເພື່ອສ້າງເງື່ອນໄຂສະ ດວກໃນການເຂົ້າປິ່ນປົວ.

**2. ເຂດພາກກາງ:**

- ໄດ້ດຳເນີນການສ້າງເສັ້ນທາງດ່ວນໂດກ-ດ່ວນໂພສີ (ທາງ 450 ປີ ນະຄອນຫລວງວຽງຈັນ), ໄດ້ເປີດນຳ ໃຊ້ເສັ້ນທາງລົດໄຟວຽງຈັນ-ໜອງຄາຍ ແລະ ວາງສີລາລຶກໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ແຂວງຄຳມ່ວນ-ນະຄອນພະນົມ ແລະ ເປີດໂຮງງານຜະລິດນ້ຳຕານ ທີ່ແຂວງສະຫວັນນະເຂດ ໃນຕົ້ນເດືອນ 3 ປີ 2009.

- ໄດ້ດຳເນີນການກໍ່ສ້າງສາຍສົ່ງໄຟຟ້າແຮງກາງ-ຕ່ຳ ໄປສູ່ 8 ບ້ານຂອງນະຄອນຫລວງ (ບ້ານໜາມ ນາວດ່ວງ, ດ່ວງບອງ, ພັດທະນາ, ໂພໄຊ, ທ່າເດື່ອ, ຈັດສັນ, ຫ້ວຍສະກັນ ແລະ ດອນໜາກໂມ) ແລະ 12 ເຂດຈຸດສຸມເມືອງພິນຕາດໄຮ.

- ສຳເລັດໂຄງການກໍ່ສ້າງອານຸສອນສະຖານປະທານສຸພານຸວົງ (ໂຄງການ ກໍ່ສ້າງສວນ 21 ມິນາ) ທີ່ ແຂວງຄຳມ່ວນ;

- ໄດ້ກະກຽມສະເຫລີມສະຫລອງການສ້າງຕັ້ງນະຄອນຫລວງວຽງຈັນ ຄົບຮອບ 450 ປີ ຢ່າງເປັນຂະ ບວນຟົດຟື້ນທົ່ວປວງຊົນ ເປັນຕົ້ນ: ໄດ້ປັບປຸງເສັ້ນທາງຕ່າງໆພາຍໃນນະຄອນຫລວງ, ປັບປຸງເດີ່ນທາດຫລວງ, ສວນໄຊເສດຖາ.

- ໄດ້ເອົາໃຈໃສ່ ບູລະນະສ້ອມແປງ ແລະ ຟື້ນຟູບັນດາໂຄງການທີ່ເສຍຫາຍຈາກໄພນ້ຳຖ້ວມ ໃນປີ 2008.

- ການລ້ຽງງົວ, ຄວາຍ, ໝູ (ແບບເປັນຟາມ), ໄກ່ (ແບບເປັນຟາມ), ລ້ຽງແບ້, ລ້ຽງປາກະຊັງ ແລະ ປາຫນອງທຳມະຊາດ ມີການຂະຫຍາຍຕົວ;

- ສຳລັບການພັດທະນາວຽກການບໍລິການ, ວຽກການທ່ອງທ່ຽວ, ສຶກສາ, ສາທາລະນະສຸກ, ການພັດ ທະນາສີມືແຮງງານ ແລະ ວຽກຮ່ວມມືກັບຕ່າງປະເທດ ບັນດາແຂວງກໍ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດດີຂຶ້ນກວ່າ ເກົ່າ;

- ສຳເລັດການສ້າງສະໜາມກິລາ ແລະ ເປັນເຈົ້າພາບ ການແຂ່ງຂັນຊີເກມ ຄັ້ງທີ 25.

**3. ເຂດພາກໃຕ້:**

- ໄດ້ເອົາໃຈໃສ່ກໍ່ສ້າງ ແລະ ສ້ອມແປງລະບົບຊົນລະປະທານ, ຊຸກຍູ້ ແລະ ສົ່ງເສີມປະຊາຊົນປູກ ເຂົ້ານາແຊງ ແລະ ການປູກພືດຕ່າງໆ ເຊັ່ນ: ປູກກະລ່ຳປີ, ຜັກກາດ, ໝາກແໜ່ງ;

- ການລ້ຽງສັດ ເຊັ່ນ: ລ້ຽງງົວ, ຄວາຍ, ໝູ, ໄກ່, ການລ້ຽງປາກະຊັງ, ແບ້ ກໍ່ໄດ້ຂະຫຍາຍຕົວຂຶ້ນຕື່ມ. ສືບຕໍ່ພັດທະນາຕາມແຜນແມ່ບົດການເຊື່ອມໂຍງເຂດ 3 ຫລ່ຽມເສດຖະກິດ ເຊັ່ນ: ໂຄງການກໍ່ສ້າງທາງແຕ່ ເມືອງທ່າແຕງ-ບ້ານແບ່ງ (ທຶນຊ່ວຍເຫລືອໃນໂຄງການພັດທະນາເຂດ 3 ຫລ່ຽມ), ການກໍ່ສ້າງທາງ 15A ແລະ ກໍ່ສ້າງຂົວຂ້າມນ້ຳເຊໂດນ.

- ໄດ້ສືບຕໍ່ກໍ່ສ້າງສາຍສົ່ງໄຟຟ້າແຮງກາງ-ຕ່ຳ ໄປສູ່ 6 ບ້ານເຂດຊາຍແດນລາວ-ໄທ ເມືອງສຸຂຸມມາ (ສຳເລັດແລ້ວ 4 ບ້ານ) ແລະ ເລີ່ມດຳເນີນການກໍ່ສ້າງສາຍສົ່ງ ໄປ 26 ບ້ານຊາຍແດນລາວ-ກຳປູເຈຍ ເມືອງ ມຸນລະປະໂມກ ແຂວງຈຳປາສັກ.

- ສົມທົບກັບຂະແໜງການສືບຕໍ່ປັບປຸງຂອດການບໍລິການ ການຄ້າຜ່ານແດນຕາມເຂດດ່ານຕ່າງໆ; ພັດ ທະນາສະຖານທີ່ທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວ, ສືບຕໍ່ເອົາໃຈໃສ່ພັດທະນາວຽກງານການສຶກສາ ແລະ ສະໜອງອຸປະກອນການສຶກສາ;

- ຕິດຕາມ ແລະ ເຝົ້າລະວັງການລະບາດຂອງພະຍາດໄຂ້ຫວັດສັດປີກ;

- ໄດ້ສຳເລັດການຈັດຕັ້ງແຂ່ງຂັນກິລາແຫ່ງຊາດ ທີ່ແຂວງຈຳປາສັກ; ການພັດທະນາສີມືແຮງງານ ແລະ ວຽກງານອື່ນໆ ກໍ່ໄດ້ຮັບການຈັດຕັ້ງປະຕິບັດດີຂຶ້ນກວ່າເກົ່າ.

## 3.3. ການພັດທະນາຂົງເຂດສັງຄົມ

### 3.3.1. ການພັດທະນາຊົນນະບົດ-ລຶບລ້າງຄວາມທຸກຍາກ ແລະ ການພັດທະນາເຂດຈຸດສຸມ

#### 1. ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ

ສປປ ລາວ ແມ່ນປະເທດໜຶ່ງທີ່ນອນຢູ່ໃນບັນດາປະເທດ ທີ່ມີອັດຕາຄວາມທຸກຍາກສູງ ໃນຂົງເຂດປະ ເທດອາຊີຕາເວັນອອກ ແລະ ປາຊີຟິກ. ຈາກການຄາດຄະເນອັດຕາຄວາມທຸກຍາກ ໃນປີ 2008 ຈາກການສຳ ຫລວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ສົກປີ 2007-2008 ອັດຕາຄວາມທຸກຍາກແມ່ນ 27,6%[7]. ຕົວເລກດັ່ງກ່າວໂດຍສົມທຽບກັບບັນດາປະເທດເພື່ອນບ້ານ ໂດຍສະເພາະແມ່ນ ຫວຽດນາມ, ກຳປູ ເຈຍ ແລະ ໄທ ເຫັນວ່າ ຍັງຂ້ອນຂ້າງສູງສົມຄວນ; ສະພາບຄວາມທຸກຍາກດັ່ງກ່າວແມ່ນຂ້ອນຂ້າງຮຸນແຮງໃນ ເຂດຊົນນະບົດ ແລະ ຫ່າງໄກສອກຫລີກ ເປັນຕົ້ນແມ່ນ ຢູ່ໃນເຂດເມືອງຈຸດສຸມບູລິມະສິດທາງພາກເໜືອ ແລະ ພາກໃຕ້. ໃນຂະນະດຽວກັນ, ບັນຫາຄວາມບໍ່ເທົ່າທຽມກັນລະຫວ່າງຜູ້ທຸກ ແລະ ຜູ້ຮັ່ງກໍ່ເປັນອີກບັນຫາໜຶ່ງທີ່ ກີດໜ່ວງຕໍ່ການຫລຸດຜ່ອນຄວາມທຸກຍາກ.

ໂດຍຍຶດໝັ້ນໃນອຸດົມການ ແລະ ຄາດໝາຍສູ້ຊົນຂອງພັກ-ລັດ ທີ່ພະຍາຍາມຫລຸດຜ່ອນຄວາມທຸກ ຍາກຂອງປະຊາຊົນໃຫ້ໄດ້ໂດຍພື້ນຖານ ພາຍໃນປີ 2010 ແລະ ນຳພາປະເທດຊາດຫລຸດພົ້ນອອກຈາກປະ ເທດດ້ອຍພັດທະນາ ພາຍໃນປີ 2020 ນັ້ນ, ວຽກງານແກ້ໄຂຄວາມທຸກຍາກໄດ້ກາຍເປັນພາລະກິດ ແລະ ເປັນວຽກງານບູລິມະສິດໜຶ່ງທີ່ສຳຄັນຂອງລັດຖະບານ ໃນຂົງເຂດວຽກງານພັດທະນາເສດຖະກິດ-ສັງຄົມ ຂອງ ປະເທດ. ໃນໄລຍະຜ່ານມາ, ລັດຖະບານໄດ້ສຸມໃສ່ແກ້ໄຂຄວາມທຸກຍາກ ໂດຍຕິດພັນກັບວຽກງານພັດທະນາ ຊົນນະບົດ ກໍ່ຄືການສ້າງບ້ານ ແລະ ກຸ່ມບ້ານພັດທະນາໃນຂອບເຂດທົ່ວປະເທດ ໂດຍສະເພາະແມ່ນ ການສຸມ ໃສ່ທາງດ້ານທຶນຮອນ ແລະ ບຸກຄະລາກອນ ຕະຫລອດເຖິງການອະນຸມັດບັນດາໂຄງການທີ່ກ່ຽວພັນກັບການ ແກ້ໄຂຄວາມທຸກຍາກ; ກິດຈະກຳ ແລະ ໂຄງການຕ່າງໆ ແມ່ນຕິດພັນກັບການສ້າງບ້ານວັດທະນະທຳ, ບ້ານ ສາມດີ, ບ້ານປອດຄະດີ, ບ້ານສຳເລັດການສຶກສາຂັ້ນພື້ນຖານເພື່ອທຸກຄົນ, ບ້ານແບບຢ່າງອະນາໄມ ແລະ

[7] ການຄາດຄະເນຄວາມທຸກຍາກ ຈາກການສຳຫຼວດ ການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ (Lecs4) ປີ 2007/2008, ກົມສະຖິຕິ, ກະຊວງ ແຜນການ ແລະ ການລົງທຶນ.

ອື່ນໆ. ຄຽງຄູ່ກັບການຈັດຕັ້ງປະຕິບັດນັ້ນດ້ວຍ ລັດຖະບານຍັງໄດ້ມີມາດຕະການ, ແຜນງານ ສະເພາະທີ່ສຸມໃສ່ການແກ້ໄຂຄວາມທຸກຍາກ, ໄດ້ກຳນົດເຂດຈຸດສຸມບູລິມະສິດໃນການແກ້ໄຂຄວາມທຸກຍາກ ແລະ ນະໂຍບາຍພິເສດ ຕໍ່ເຂດຫ່າງໄກສອກຫລີກ ທີ່ມີເງື່ອນໄຂຫຍຸ້ງຍາກ ແລະ ເຂດທີ່ໝັ້ນເກົ່າ. ໄດ້ສຸມໃສ່ ການສ້າງຂີດຄວາມອາດສາມາດ ໃນການວາງແຜນພັດທະນາກຸ່ມບ້ານໃຫ້ແກ່ພະນັກງານຂັ້ນທ້ອງຖິ່ນທັງໝົດ 2.586 ຄົນ ພ້ອມທັງໄດ້ສຳເລັດການສ້າງແຜນພັດທະນາກຸ່ມບ້ານ ສຳເລັດທັງໝົດ 102 ກຸ່ມບ້ານໃນ 61 ເມືອງທຸກຍາກ, ລວມມີ 1.227 ໂຄງການ, ພ້ອມດຽວກັນນັ້ນ ກໍ່ໄດ້ສະໜອງງົບປະມານພາຍໃນຈຳນວນ 41,7 ຕື້ກີບ ເພື່ອສ້າງກອງທຶນພັດທະນາຂັ້ນບ້ານ[8]. ໃນຕົ້ນປີ 2007 ທະນາຄານສົ່ງເສີມກະສິກຳ ໄດ້ປ່ອຍສິນ ເຊື່ອໃຫ້ຊາວກະສິກອນເພື່ອນຳໄປປູກຝັງ, ລ້ຽງສັດ ແລະ ເຮັດທຸລະກິດຂະໜາດນ້ອຍ ໃນ 140 ເມືອງ, ມີ 4.152 ບ້ານ ແລະ 130.000 ຄອບຄົວ ເປັນຈຳນວນເງິນສິນເຊື່ອທັງໝົດ 1.248 ຕື້ກີບ ແລະ ໃນປີ 2008 ທະນາຄານນະໂຍບາຍ ໄດ້ປ່ອຍສິນເຊື່ອທັງໝົດໃຫ້ປະຊາຊົນໃນເມືອງທຸກຍາກ ໃນ 43 ເມືອງ ຂອງ 47 ເມືອງບູລິມະສິດ, ມີ 796 ບ້ານ, 24.762 ຄົວເຮືອນ, ເປັນຈຳນວນເງິນທັງໝົດ 1.884 ຕື້ກີບ[9].

ຜ່ານຂະບວນການລຶບລ້າງຄວາມທຸກຍາກໃນໄລຍະປີຜ່ານມາເຫັນວ່າມີຄວາມຄືບໜ້າ ແລະ ສາມາດ ຫລຸດຜ່ອນຄວາມທຸກຍາກໄດ້ໃນລະດັບທີ່ເພິ່ງພໍໃຈ. ພາຍໃນປະເທດ ຄວາມທຸກຍາກໃນແງ່ການຊົມໃຊ້ ໄດ້ ຫລຸດລົງ, ການຄ້ຳປະກັນດ້ານອາຫານໄດ້ຮັບການປັບປຸງ ແລະ ສິດໃນການຄອບຄອງຊັບສິນເພີ່ມຂຶ້ນ. ຈາກການສຳຫລວດການຊົມໃຊ້ ແລະ ການໃຊ້ຈ່າຍໃນທຸກໆ 5 ປີ ເລີ່ມແຕ່ສົກປີ 1992-1993 ຫາ ສົກປີ 2007-2008 ສາມາດເຫັນໄດ້ຢ່າງຊັດເຈນວ່າ ທ່າອ່ຽງຄວາມທຸກຍາກຂອງ ສປປ ລາວ ໃນລະດັບແຂວງ, ພາກ ແລະ ໃນລະດັບຊາດແມ່ນຫລຸດລົງຕາມລຳດັບ. ໃນແຕ່ປີ 1992-1993 ອັດຕາຄວາມທຸກຍາກແມ່ນ 46% ຫລຸດລົງເປັນ 39,1% ໃນປີ 1997-1998, 33,5% ໃນປີ 2002-2003[10] ແລະ 27,6% ໃນປີ 2007-2008. ຈາກຕົວເລກດັ່ງກ່າວສາມາດສັງເກດເຫັນໄດ້ວ່າ ໃນຊ່ວງໄລຍະແຕ່ສົກປີ 1992-1993 ຫາປີ 1997-1998 ການຫລຸດລົງຂອງອັດຕາຄວາມທຸກຍາກໃນລະດັບຊາດແມ່ນຫລຸດລົງຫລາຍໃນໄລຍະ 10 ປີ. ໃນຂະນະດຽວກັນ, ສະພາບຄວາມທຸກຍາກໃນເຂດຈຸດສຸມບູລິມະສິດ ຄວາມທຸກຍາກໄດ້ຫຼຸດລົງໃນລະດັບ ສູງ ກວ່າເມືອງອື່ນ. ນອກຈາກນັ້ນ, ພື້ນຖານໂຄງລ່າງຈຳນວນໜຶ່ງ ເປັນຕົ້ນແມ່ນຖະໜົນຫົນທາງ, ໄຟຟ້າ, ນ້ຳ ປະປາ, ໂຮງຮຽນ, ໂຮງໝໍໃນຫລາຍໆບ້ານ ແລະ ກຸ່ມບ້ານ ໃນ 47 ເມືອງທຸກຍາກ ໄດ້ຮັບການພັດທະນາ ແລະ ປັບປຸງທີ່ດີຂຶ້ນເປັນກ້າວໆ.

ຄວາມທຸກຍາກໃນແຕ່ລະພາກ ເຊັ່ນ: ພາກເໜືອ, ເຂດພາກກາງ, ແລະ ພາກໃຕ້ ແມ່ນມີການຫລຸດລົງ ເປັນລຳດັບ. ເຊິ່ງສະແດງໃຫ້ເຫັນໄດ້ດັ່ງນີ້:

*ພາກເໜືອ:* ອັດຕາຄວາມທຸກຍາກໃນເຂດຕົວເມືອງ ແມ່ນຫລຸດລົງຈາກ 30,6% ໃນສົກປີ 2002-2003 ເປັນ 14,6% ໃນສົກປີ 2007-2008 ແລະ ໃນເຂດຊົນນະບົດຫລຸດລົງຈາກ 39,1% ໃນສົກປີ

---

[8] ບົດສະຫຼຸບກາງສະໄໝ ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 6 (2006-2010), ກະຊວງແຜນການ ແລະ ການລົງທຶນ.

[9] ບົດລາຍງານຜົນສຳເລັດ ຂອງກອງປະຊຸມ ຄະນະຊີ້ນຳ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ປະຈຳປີ 2008

[10] ທ່າອ່ຽງຄວາມທຸກຍາກໃນ ສປປ ລາວ ສົກປີ 1992-03 ຫາ 2002-03 ສູນສະຖິຕິແຫ່ງຊາດ, ຄະນະກຳມະການແຜນການ ແລະ ການລົງທຶນ.

2002-2003 ເປັນ 36,5% ໃນສົກປີ 2007-2008. ໃນນັ້ນ, ໃນນັ້ນ, ອັດຕາສ່ວນຄວາມທຸກຍາກຕ່ຳກ່ວາໝູ່ຢູ່ເຂດພາກເໜືອ ແມ່ນແຂວງໄຊຍະບູລີ ເຊິ່ງຫລຸດລົງຈາກ 25,0%, ໃນສົກປີ 2002-03 ເປັນ 15,7% ໃນສົກປີ 2007-08, ຖັດມາແມ່ນ ແຂວງ ຫລວງພະບາງ ອັດຕາສ່ວນຄວາມທຸກຍາກຫລຸດລົງຈາກ 39,5% ໃນສົກປີ 2002-03 ເປັນ 27,2% ໃນສົກປີ 2007-08, ໃນຂະນະທີ່ ແຂວງຫົວພັນ ຊ້ຳພັດມີອັດຕາສ່ວນຄວາມທຸກຍາກສູງເຖິງ 50,5%.

*ພາກກາງ:* ອັດຕາຄວາມທຸກຍາກໃນເຂດຕົວເມືອງແມ່ນ 20,1% ໃນສົກປີ 2002-2003 ມາເປັນ 22,2% ໃນສົກປີ 2007-2008, ໃນເຂດຊົນນະບົດແມ່ນຫລຸດລົງຈາກ 39,0% ໃນສົກປີ 2002-2003 ມາເປັນ 33,5% ໃນສົກປີ 2007-2008. ໃນນັ້ນ, ແຂວງທີ່ມີອັດຕາສ່ວນຄວາມທຸກຍາກຕ່ຳກວ່າໝູ່ ຢູ່ເຂດ ພາກກາງ ແມ່ນ ແຂວງບໍລິຄຳໄຊ ເຊິ່ງຫລຸດລົງຈາກ 28,7% ໃນສົກປີ 2002-03 ເປັນ 21,5% ໃນສົກປີ 2007-08 ແລະ ແຂວງທີ່ມີອັດຕາຄວາມທຸກຍາກສູງກວ່າໝູ່ໃນເຂດພາກກາງ ແມ່ນແຂວງຊຽງຂວາງ ມີເຖິງ 42% ໃນສົກປີ 2007-2008.

*ພາກໃຕ້:* ໃນເຂດຕົວເມືອງແມ່ນຫລຸດລົງຈາກ 12,8% ໃນສົກປີ 2002-2003 ມາເປັນ 11,3% ໃນສົກປີ 2007-2008 ແລະ ໃນເຂດຊົນນະບົດ ແມ່ນຫລຸດລົງຈາກ 35,5% ໃນສົກປີ 2002-2003 ມາເປັນ 25,5% ໃນສົກປີ 2007-2008 ໃນນັ້ນ, ຢູ່ພາກໃຕ້ ແຂວງທີ່ມີອັດຕາຄວາມທຸກຍາກຕ່ຳກວ່າໝູ່ແມ່ນ ແຂວງ ຈຳປາສັກ ຄືຫລຸດລົງຈາກ 18,4% ໃນສົກປີ 2002-03 ມາເປັນ 10% ໃນສົກປີ 2007-08 ກົງກັນຂ້າມ ແຂວງເຊກອງ ມີ 51,8% ໃນສົກປີ 2007-08 ເຊິ່ງເປັນແຂວງທີ່ທຸກຍາກກວ່າໝູ່ໃນພາກໃຕ້. (ລາຍລະອຽດ ເບິ່ງຕາຕະລາງຊ້ອນທ້າຍ 2).

**ຮູບສະແດງ 7: ອັດຕາສ່ວນຄວາມທຸກຍາກ ແຕ່ປີ 1992-1993 ຫາ 2007-2008**



ເຖິງຢ່າງໃດກໍ່ຕາມ, ອັດຕາຄວາມທຸກຍາກຂອງ ສປປ ລາວ ແມ່ນຍັງຂ້ອນຂ້າງສູງຖ້າສົມທຽບໃສ່ບັນດາ ປະເທດໃນພາກພື້ນ ເຊິ່ງບັນຫາດັ່ງກ່າວເຫັນວ່າ ຍັງຮຸນແຮງຫລາຍໃນເຂດພາກເໜືອ ທຽບໃສ່ພາກກາງ ແລະ ພາກໃຕ້[11]; ພ້ອມກັນນັ້ນ, ຈາກການວິໄຈຍັງຊີ້ໃຫ້ເຫັນວ່າການຫລຸດຜ່ອນຄວາມທຸກຍາກ ແມ່ນຍັງຂຶ້ນ ກັບທີ່ ຕັ້ງພູມສັນຖານ ເຊັ່ນ ເຂດຊາຍແດນຕິດກັບຫວຽດນາມ ຍັງເປັນເຂດທີ່ມີຄວາມຍາກ ປະມານ 54,5%, ເຂດ ຊາຍແດນຕິດກັບພະມ້າ ແມ່ນ 28,2% ແລະ ກ□າປູເຈັຍ ແມ່ນ 23,1% ໃນຂະນະທີ່ ເຂດລຽບຕາມ ແມ່ນ້ຳຂອງ ເຊິ່ງສ່ວນໃຫ່ຍ ແມ່ນຊາຍແດນຕິດກັບໄທ ຄວາມທຸກຍາກ ໃນປີ 2007-2008 ແມ່ນ 16,1%. ນອກຈາກນັ້ນ, ໃນຂະນະທີ່ອັດຕາສ່ວນຄວາມທຸກຍາກຫລຸດລົງ 3,8% ຕໍ່ປີ ແຕ່ຄວາມບໍ່ສະເໜີພາບ ພັດເພີ່ມ ຂຶ້ນ ຈາກ 32,6% ເປັນ 35,4% ຫລື ເພີ່ມຂຶ້ນ 1,7% ຕໍ່ປີ. ( ລາຍລະອຽດສະເໜີເບິ່ງ ຕາຕະລາງ ຊ້ອນ ທ້າຍ 2). ເຖິງແມ່ນອັດຕາຄວາມບໍ່ສະເໜີພາບຈະຢູ່ໃນລະດັບກ່ວາບັນດາປະເທດໃນຂົງເຂດກໍ່ຕາມ, ແຕ່ທ່າ ອ່ຽງດັ່ງກ່າວກໍ່ຍັງຮຽກຮ້ອງໃຫ້ມີການໄກ່ເກ່ຍຈາຍລາຍໄດ້ ແລະ ການສ້າງວຽກເຮັດງານທຳລວມທັງ ການແກ້ໄຂ ການເຮັດວຽກນອກລະດູການກະສິກຳໃຫ້ທົ່ວເຖິງ ແລະ ເໝາະສົມ.

**ຕີລາຄາບັນດາປັດໄຈທີ່ເປັນທ່າແຮງ ແລະ ເອື້ອອຳນວຍ ໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກໃນ ໄລຍະຜ່ານມາ**:

- **ການເຕີບໂຕທາງດ້ານເສດຖະກິດທີ່ເຂັ້ມແຂງ ແລະ ຕໍ່ເນື່ອງ:** ໃນໄລຍະຜ່ານມາເສດຖະກິດໂດຍລວມ ຂອງ ສປປ ລາວ ແມ່ນມີການຂະຫຍາຍຕົວ ເລີ່ມແຕ່ມີການຫັນປ່ຽນນະໂຍບາຍເສດຖະກິດແບບລວມສູນ ມາ ເປັນເສດຖະກິດຕະຫລາດ, ເຊິ່ງສົ່ງຜົນເຮັດໃຫ້ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນເພີ່ມຂຶ້ນຕາມລຳ ດັບ. ການຂະຫຍາຍຕົວທີ່ສາມາດເຫັນໄດ້ຢ່າງຊັດເຈນແມ່ນໃນພາກການຜະລິດອຸດສາຫະກຳ ແລະ ກະສິກຳຂອງ ປະຊາຊົນ ແມ່ນມີການເພີ່ມຂຶ້ນຕະຫລອດຮອດຈຳນວນໂຮງຈັກໂຮງງານຂະໜາດໃຫຍ່ ແລະ ຂະໜາດນ້ອຍກໍ່ ມີການຂະຫຍາຍຕົວຢ່າງກ້ວາງຂວາງ. ໃນພາກການຜະລິດສິນຄ້າກະສິກຳຂອງປະຊາຊົນ ກໍ່ມີການ ຂະຫຍາຍຕົວຢ່າງເປັນຂະບວນ ແລະ ມີໜໍ່ແໜງໃໝ່ເກີດຂຶ້ນໃນຫລາຍໆທ້ອງຖິ່ນ, ເຊິ່ງການຜະລິດທີ່ພົ້ນເດ່ນ ແມ່ນ: ສາລີ, ອ້ອຍ, ຖົ່ວເຫຼືອງ, ຊາ, ກາເຟ ແລະ ອື່ນໆ ລວມທັງຂະບວນການປູກພືດ, ຕົ້ນໄມ້ອຸດສາຫະກຳ ເພື່ອສົ່ງອອກ, ການລ້ຽງສັດປະເພດຕ່າງໆ ທີ່ເປັນລັກສະນະຟາມແມ່ນເກີດຂຶ້ນຫຼາຍໃນທ້ອງຖິ່ນ[12].

- **ການເຕີບໂຕທາງດ້ານການຊົມໃຊ້ຕໍ່ຫົວຄົນ:** ລະດັບການຊົມໃຊ້ຕໍ່ຫົວຄົນຂອງປະຊາຊົນລາວແມ່ນມີ ການເຕີບໂຕເປັນລຳດັບ ເລີ່ມແຕ່ສົກປີ 1992-1993 ເປັນຕົ້ນມາ. ອັດຕາການເຕີບໂຕຂອງຄົວເຮືອນທີ່ມີລະ ດັບການຊົມໃຊ້ສູງກວ່າເສັ້ນຄວາມທຸກຍາກ ແມ່ນສູງກວ່າອັດຕາການເຕີບໂຕຂອງຄົວເຮືອນທີ່ມີລະດັບການຊົມ ໃຊ້ຕ່ຳກວ່າເສັ້ນຄວາມທຸກຍາກ. ຈາກທ່າແຮງເສດຖະກິດທີ່ມີການຂະຫຍາຍຕົວຕະຫລອດໄລຍະທີ່ຜ່ານມາ ສົ່ງ ຜົນໃຫ້ປະຊາຊົນມີລາຍໄດ້ທີ່ດີຂຶ້ນເປັນກ້າວໆ. ສິ່ງດັ່ງກ່າວນີ້, ກາຍເປັນປັດໃຈໜຶ່ງທີ່ສຳຄັນເຮັດໃຫ້ອັດຕາ ຄວາມທຸກຍາກໂດຍລວມມີການຫລຸດລົງ. ການຊົມໃຊ້ສະເລ່ຍຕໍ່ເດືອນຂອງຄົວເຮືອນ ແມ່ນເພີ່ມຂຶ້ນໂດຍ ສະເລ່ຍ 14,8% ຕໍ່ປີ, ໃນນັ້ນ ຕົວເມືອງ ເພີ່ມຂຶ້ນປະມານ 12% ແລະ ຊົນນະບົດ ແມ່ນ 16,4 %. ແຂວງ ທີ່ມີການຊົມໃຊ້ ຂອງຄົວເຮືອນເພີ່ມຂຶ້ນສູງສຸດ ແມ່ນ ແຂວງໄຊຍະບູລີ ເພີ່ມຂຶ້ນເຖິງ 22.5% ຕໍ່ປີ (ຫລື 2,8

---

[11] ບົດລາຍງານ ສະພາບຄວາມທຸກຍາກ ຂອງ ສ ປ ປ ລາວ ແຕ່ປີ 2002/03-2007/08, ກົມສະຖິຕິ

[12] ບົດສະຫຼຸບ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງບັນດາແຂວງ 2007/2008

ເທື່ອ ໃນປີ 2007-2008 ເມື່ອທຽບໃສ່ປີ 2002-2003), ເຊິ່ງເພີ່ມຂຶ້ນສູງກວ່າລະດັບສະເລ່ຍຂອງ ທົ່ວ ປະເທດ.

• **ການສຸມໃສ່ໃນການແກ້ໄຂຄວາມທຸກຍາກຢູ່ທ້ອງຖິ່ນ:** ການຈັດສັນງົບປະມານ ແລະ ບັນດາໂຄງການ ທີ່ສຸມໃສ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນລະດັບແຂວງ ໂດຍສະເພາະແມ່ນເຂດ ຈຸດສຸມບູລິມະສິດ ໃນໄລຍະຜ່ານມາເຫັນວ່າມີການເຕີບໂຕຫລາຍ. ບັນດາຂະແໜງການ ແລະ ທ້ອງຖິ່ນໄດ້ ອະນຸມັດທຶນເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ກໍ່ຄືການສ້າງບ້ານ ແລະ ກຸ່ມ ບ້ານພັດທະນາໃນແຕ່ລະປີປະມານ 300-350 ກວ່າຕື້ກີບ, ສະເພາະສົກປີ 2008-2009 ມີເຖິງ 296 ຕື້ກີບ, ລວມມີ 440 ໂຄງການ, ໃນນັ້ນ ລັດຖະບານຈັດສັນສະເພາະ ມີ 36 ຕື້ກີບ ແລະ 164 ໂຄງການ[13]. ຈາກ ທ່າແຮງດັ່ງກ່າວນີ້ ໄດ້ເຮັດໃຫ້ອັດຕາຄວາມທຸກຍາກໃນແຕ່ລະແຂວງ ໃນຂອບເຂດທົ່ວປະເທດ ມີການຫລຸດລົງ ຢ່າງຕໍ່ເນື່ອງ.

• **ການພັດທະນາຊົນນະບົດ**: ແມ່ນວຽກທີ່ສຳຄັນ ແລະ ເປັນວຽກບູລິມະສິດຈຸດສຸມ ໃນການພັດທະນາ ເສດຖະກິດ-ສັງຄົມລະດັບພາກພື້ນ. ໃນໄລຍະຜ່ານມາລັດຖະບານໄດ້ເອົາໃຈໃສ່ສະໜັບສະໜູນອຸດສາຫະກຳ ຂະໜາດນ້ອຍ ໄປຄຽງຄູ່ກັບການສ້າງວຽກເຮັດງານທຳ, ປັບປຸງ ແລະ ສົ່ງເສີມລະບົບເຄືອຂ່າຍການຂົນສົ່ງ ແລະ ສື່ສານ ແລະ ປັບປຸງເງື່ອນໄຂການດຳລົງຊີວິດຂອງປະຊາຊົນໃນເຂດຊົນນະບົດ ໂດຍຜ່ານການຊຸກຍູ້ ການຜະລິດແບບຄອບຄົວຫັນໄປສູ່ການຜະລິດແບບສິນຄ້າ ແລະ ຕະຫຼາດ, ການສ້າງເງື່ອນໄຂ ແລະ ອຳນວຍ ຄວາມສະດວກໃຫ້ແກ່ປະຊາຊົນຜູ້ທີ່ບໍ່ມີຄວາມສາມາດໃນການປະກອບອາຊີບ ແລະ ດຳເນີນທຸລະກິດແມ່ນ ໄດ້ ຈັດຕັ້ງປະຕິບັດຢ່າງກວ້າງຂວາງ ລວມທັງການຕອບສະໜອງສິນເຊື່ອ ແລະ ການເຂົ້າເຖິງຕະຫຼາດ. ໃນສົກປີ 2007-2008 ອັດຕາສ່ວນຂອງບ້ານທີ່ມີຕະຫຼາດ 51%. ນອກຈາກນີ້, ກໍ່ໄດ້ມີການຈັດຕັ້ງປະຕິບັດນະໂຍບາຍ ທີ່ດິນ, ການມອບກຳມະສິດນຳໃຊ້ທີ່ດິນທີ່ຍາວນານໃຫ້ແກ່ປະຊາຊົນຜູ້ເຮັດການຜະລິດເພື່ອພັດທະນາປ່າ ແລະ ປູກໄມ້ໄລຍະຍາວ. ໃນສົກປີ 2007-08 ສະແດງໃຫ້ເຫັນວ່າ 95% ຂອງຄົວເຮືອນທັງໝົດ ແມ່ນ ເປັນເຈົ້າ ຂອງທີ່ດິນ. ທັງໝົດນັ້ນໄດ້ເຮັດໃຫ້ຄວາມທຸກຍາກຢູ່ເຂດຊົນນະບົດແມ່ນຫຼຸດລົງຈາກ 37,6% ໃນສົກປີ 2002-03 ມາເປັນ 31,7% ໃນສົກປີ 2007-08. ການເຂົ້າເຖິງລະບົບພື້ນຖານໂຄງລ່າງທີ່ຈຳເປັນ ກໍ່ໄດ້ຮັບການ ປັບປຸງທີ່ດີຂຶ້ນເປັນກ້າວໆ ເປັນຕົ້ນແມ່ນ ຈຳນວນບ້ານທີ່ມີໂຮງຮຽນປະຖົມໃນບ້ານ ແມ່ນເພີ່ມຂຶ້ນ ຈາກ 79% ໃນສົກປີ 2002-03 ມາເປັນ 89% ໃນສົກປີ 2007-08, ສະເພາະບ້ານໃນເຂດຊົນນະບົດ ແມ່ນເພີ່ມຂຶ້ນ ຈາກ 80% ໃນສົກປີ 2002-03 ມາເປັນ 91% ໃນສົກປີ 2007-08, ສິ່ງດັ່ງກ່າວນີ້ເຮັດໃຫ້ອັດຕາການຮູ້ ໜັງສືໂດຍລວມ ແມ່ນເພີ່ມຂຶ້ນຈາກ 85% ໃນສົກປີ 2002-03 ມາເປັນ 87% ໃນສົກປີ 2007-08. ຄຽງຄູ່ ກັບການສຶກສາ, ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ ກໍ່ເພີ່ມຂຶ້ນເຊັ່ນກັນ ໂດຍສະເພາະແມ່ນຢູ່ ເຂດຫ່າງໄກສອກຫຼີກ. ຈາກຕົວເລກໃນສົກປີ 2007-08 ຊີ້ແຈງໃຫ້ເຫັນວ່າ 66% ຂອງບ້ານແມ່ນ ມີຖົ່ງຢາ ຫຼື ຊຸດເຄື່ອງມືປະຈຳບ້ານ ທຽບໃສ່ສົກປີ 2002-03 ມີພຽງແຕ່ 36%. ນອກຈາກນີ້ ການເຂົ້າເຖິງພື້ນຖານໂຄງ ລ່າງອື່ນໆໃນເຂດຊົນນະບົດ ໂດຍສະເພາະແມ່ນ ການນຳໃຊ້ໄຟຟ້າແມ່ນມີການເພີ່ມຂຶ້ນຫຼາຍ ທຽບໃສ່ສົກປີ

[13] ບົດລາຍງານຜົນສຳເລັດ ຂອງກອງປະຊຸມ ຄະນະຊີ້ນຳ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ປະຈຳປີ 2008

2002-03 ແມ່ນລື່ນຄາດໝາຍປະມານ 50%. ທາງດ້ານສຸຂະອານາໄມກໍ່ເຫັນໄດ້ຊັດເຈນວ່າ 72% ຂອງຄົວເຮືອນທັງໝົດ ແມ່ນສາມາດເຂົ້າເຖິງນ້ຳສະອາດ.

ຈາກຜົນການຈັດຕັ້ງການປະຕິບັດໂຄງການຍຸດຕິການຖາງປ່າເຮັດໄຮ່ ແລະ ຫລຸດຜ່ອນຄວາມທຸກຍາກ ຕ້ອງການຫັນໃຫ້ປະຊາຊົນ ໄປເຮັດອາຊີບຄົງທີ່ອື່ນໆແທນ ເຊິ່ງມາຮອດປະຈຸບັນນີ້ ເນື້ອທີ່ໄຮ່ໝູນວຽນ ຍັງເຫລືອຢູ່ 76 ພັນເຮັກຕາ ແລະ ໄຮ່ເລື່ອນລອຍແມ່ນ 3,8 ພັນເຮັກຕາ (ຫລຸດລົງຈາກ 4,6 ພັນເຮັກຕາ) ໃນສົກປີ 2008-2009, ຖ້າທຽບໃສ່ໄລຍະ 5 ປີທີ່ຜ່ານມາ ແມ່ນຫລຸດລົງປະມານ 33%. ໄປຄຽງຄູ່ກັບການພັດທະນາເສດຖະກິດ, ການປັບປຸງລະບົບການປົກຄອງໃນຂັ້ນຮາກຖານ ກໍ່ມີການປັບປຸງໜັກແໜ້ນຂຶ້ນຕື່ມ. ຄັນແຖວພະນັກງານ ໄດ້ຮັບການອົບຮົມເຂັ້ມແຂງກາຍເປັນພະນັກງານຫຼັກແຫຼ່ງປະກອບເຂົ້າໃນການຈັດຕັ້ງຂອງພັກ ແລະ ລັດຫຼາຍສົມຄວນ. ສິ່ງດັ່ງກ່າວນີ້ ແມ່ນຜົນສຳເລັດໜຶ່ງທີ່ຢັ້ງຢືນໃຫ້ເຫັນເຖິງແນວທາງໃນການພັດທະນາຊົນນະບົດຮອບດ້ານຂອງພັກທີ່ຖືກຕ້ອງ ແລະ ສອດຄ່ອງ.

• **ການຫັນຈາກການຜະລິດກະສິກຳກ້າວໄປສູ່ອຸດສາຫະກຳ:** ການປ່ຽນແປງຂອງໂຄງປະກອບເສດຖະກິດ ໂດຍສະເພາະແມ່ນ ເລັ່ງໃສ່ 3 ຂະແໜງການ ຄື: ກະສິກຳ, ອຸດສາຫະກຳ ແລະ ການບໍລິການ ແມ່ນສົ່ງຜົນໂດຍກົງໃຫ້ມີການປ່ຽນແປງອັດຕາສ່ວນຂອງຜົນຜະລິດ. ຈາກບົດລາຍງານການຕີລາຄາຄວາມທຸກຍາກໃນ ສປປ ລາວ ປີ 2006 ຊີ້ແຈງໃຫ້ເຫັນວ່າ ການເຕີບໂຕຂອງຂະແໜງອຸດສາຫະກຳນັບແຕ່ປີ 2000 ເປັນຕົ້ນມາ ແມ່ນມີການຂະຫຍາຍຕົວເພີ່ມຂຶ້ນເຖິງ 12%[14]. ຈາກປະກົດການດັ່ງກ່າວສາມາດອະທິບາຍໄດ້ວ່າ ການເຕີບໂຕທາງດ້ານຂະແໜງອຸດສາຫະກຳ ຈະສົ່ງຜົນເຮັດໃຫ້ປະຊາຊົນມີລະດັບລາຍໄດ້ທີ່ດີຂຶ້ນ ແລະ ເຮັດໃຫ້ລະດັບຄວາມທຸກຍາກໂດຍລວມຫລຸດລົງ.

• **ການພັດທະນາທາງດ້ານຂະແໜງສຶກສາ ແລະ ສາທາລະນະສຸກ ເພື່ອແກ້ໄຂຄວາມທຸກຍາກ:** ການປັບປຸງວຽກງານດ້ານການສຶກສາ ແລະ ສາທາລະນະສຸກຂອງລັດຖະບານໃນໄລຍະຜ່ານມາ ເລີ່ມແຕ່ປີ 2001 ມີການຂະຫຍາຍຕົວສູງ. ໃນປີ 2005 ການລົງທຶນດ້ານຂະແໜງການສຶກສາທັງໝົດມີ 1.025,64 ຕື້ກີບ. ຈາກບົດລາຍງານສະຖິຕິປະຈຳປີ 2008 ຊີ້ໃຫ້ເຫັນວ່າດ້ານການສຶກສາ, ຈຳນວນໂຮງຮຽນທັງພາກລັດ ແລະ ເອກະຊົນ (ອະນຸບານ, ປະຖົມ, ມັດທະຍົມ, ວິທະຍາໄລ), ຈຳນວນຄູອາຈານ ແລະ ນັກຮຽນ ແມ່ນເພີ່ມຂຶ້ນຢ່າງຕໍ່ເນື່ອງນັບແຕ່ປີ 1990 ເປັນຕົ້ນມາ. ສິ່ງດັ່ງກ່າວນີ້ແມ່ນສົ່ງຜົນເຮັດໃຫ້ຈຳນວນນັກຮຽນລົງທະບຽນຮຽນ, ອັດຕາການເຂົ້າໂຮງຮຽນສຸດທິ ແລະ ອັດຕາການຮູ້ໜັງສືເພີ່ມຂຶ້ນໃນແຕ່ລະປີ. ສຳລັບວຽກງານສາທາລະນະສຸກກໍ່ແມ່ນອີກຂະແໜງການໜຶ່ງ ທີ່ລັດຖະບານໄດ້ໃຫ້ຄວາມສຳຄັນ ແລະ ຖືເປັນວຽກບູລິມະສິດໃນໄລຍະຜ່ານມາ. ສະເພາະໄລຍະປີ 2001-2005 ໄດ້ອະນຸມັດທຶນທັງໝົດເຂົ້າໃນຂະແໜງການສາທາລະນະສຸກ 96 ຕື້ກີບ ລວມ ມີ 15 ໂຄງການ, ໃນນັ້ນ 12 ໂຄງການ ແມ່ນກ່ຽວກັບການພັດທະນາດ້ານສຸຂະພາບ ແລະ ຄຸນນະພາບຊີວິດຂອງປະຊາຊົນ, 3 ໂຄງການ ແມ່ນກ່ຽວກັບການກໍ່ສ້າງລະບົບການເງິນທີ່ຍືນຍົງ, ໂຄງການປັບປຸງກົນໄກ, ສ້າງກົດລະບຽບ ແລະ ກົດໝາຍເພື່ອສຸຂະພາບ[15]. ຈາກບົດລາຍງານສະຖິຕິປະຈຳປີ 2008

[14] ບົດລາຍງານ ການຕີລາຄາຄວາມທຸກຍາກໃນ ສປປ ລາວ, ນັບແຕ່ເຂດທົ່ງພຽງ ຫາເຂດພູສູງ-ການຫຼຸດຜ່ອນຄວາມທຸກຍາກໃນ 15 ປີ ຜ່ານມາ. ສູນສະຖິຕິແຫ່ງຊາດ, ຄະນະກຳມະການແຜນການ ແລະ ການລົງທຶນ.

[15] ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາວຽກງານສາທາລະນະສຸກ ປີ 2001-2005. ກະຊວງສາທາລະນະສຸກ

ສະແດງໃຫ້ເຫັນວ່າຈຳນວນໂຮງໝໍ, ສຸກສາລາ, ຈຳນວນແພດ ແລະ ພະຍາບານແມ່ນມີການເພີ່ມຂຶ້ນໃນແຕ່ລະປີ ເຊິ່ງສົ່ງຜົນເຮັດໃຫ້ອັດຕາການຕາຍລວມ, ອັດຕາການຕາຍຂອງແມ່, ອັດຕາການຕາຍຂອງເດັກຫລຸດລົງຕາມລຳດັບ. ຈາກບັນດາປັດໄຈເຫລົ່ານີ້ ເຮັດໃຫ້ມາດຖານຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ.

• **ການພັດທະນາພື້ນຖານໂຄງລ່າງ ເພື່ອແກ້ໄຂຄວາມທຸກຍາກ:** ພື້ນຖານໂຄງລ່າງທີ່ຈຳເປັນຢູ່ຊຸມຊົນຊົນນະບົດ ເພື່ອບໍລິການຮັບໃຊ້ສັງຄົມ ແລະ ການຜະລິດຂອງປະຊາຊົນ ເປັນຕົ້ນແມ່ນ ເສັ້ນທາງ, ລະບົບໂທລະຄົມມະນາຄົມ, ໄຟຟ້າ ແລະ ອື່ນໆ ໄດ້ຮັບການພັດທະນາຂຶ້ນ. ໃນປີ 2008 ມີ 4.923 ບ້ານ ແມ່ນມີເສັ້ນທາງທຽວໄດ້ 2 ລະດູ, ໃນທຸກໆເມືອງ ແລະ ປະມານ 60% ຂອງບ້ານທັງໝົດແມ່ນສາມາດຕິດຕໍ່ທາງໂທລະສັບໄດ້. ມີປະມານ 49% ຂອງບ້ານທັງໝົດ ສາມາດຊົມໃຊ້ໄຟຟ້າ[16]. ນອກຈາກນີ້, ຂະແໜງພະລັງງານ ແລະ ບໍ່ແຮ່ ກໍ່ມີຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ການພັດທະນາຊົນນະບົດ ແລະ ການລຶບລ້າງຄວາມທຸກຍາກຂອງປະຊາຊົນຢູ່ບໍລິເວນເຂດສຳປະທານ ແລະ ບໍລິເວນເຂດພັດທະນາຂອງໂຄງການຕ່າງໆ ເປັນຕົ້ນແມ່ນ ການຈັດສັນອາຊີບ ແລະ ການຕັ້ງຖິ່ນຖານຄົງທີ່, ການສ້າງວຽກເຮັດງານທຳ, ກິດຈະກຳສ້າງລາຍຮັບຂອງປະຊາຊົນ, ກໍ່ຄືການພັດທະນາພື້ນຖານໂຄງລ່າງທາງດ້ານເສດຖະກິດ ແລະ ວັດທະນະທຳ-ສັງຄົມອື່ນໆ ເຊັ່ນ: ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳເທີນ 2, ໂຄງການນ້ຳງື່ມ 2, ໂຄງການຂຸດຄົ້ນບໍ່ຄຳເຊໂປນ ແລະ ໂຄງການອື່ນໆ. ທັງໝົດເຫລົ່ານີ້ລ້ວນແລ້ວແຕ່ເປັນເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການລຶບລ້າງຄວາມທຸກຍາກ.

• **ການເຕີບໂຕຂອງປະຊາກອນທີ່ກ່ຽວພັນກັບຄວາມທຸກຍາກ:** ຂະໜາດຂອງພົນລະເມືອງ ແລະ ການເຕີບໂຕຂອງພົນລະເມືອງ ແມ່ນມີຄວາມສຳພັນສະໜິດແໜ້ນກັບການພັດທະນາ. ຈາກຜົນການສຳຫລວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນໄດ້ສະແດງໃຫ້ເຫັນວ່າ ຄົນທຸກສ່ວນຫລາຍແມ່ນອາໄສຢູ່ໃນຄົວເຮືອນທີ່ມີຂະໜາດໃຫຍ່ ແລະ ມີອັດຕາການເອື່ອຍອີງສູງກວ່າຄົນບໍ່ທຸກ. ຈາກການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2005 ພົບວ່າອັດຕາສ່ວນຂອງຄົວເຮືອນຂະໜາດໃຫຍ່ ໃນ ສປປ ລາວ ແມ່ນຫລຸດລົງຕາມລຳດັບ ແຕ່ປີ 1985-2005. ຢູ່ໃນ 47 ເມືອງບູລິມະສິດທຳອິດ ເຫັນວ່າ ຈາກສົກປີ 1992-1993 ຫາ ສົກປີ 1997-1998 ຄວາມທຸກຍາກແມ່ນເພີ່ມຂຶ້ນໄປພ້ອມໆກັບການເພີ່ມຂຶ້ນຂອງຂະໜາດຂອງຄົວເຮືອນ ແລະ ໄລຍະຕໍ່ມາ ນັບແຕ່ສົກປີ 1997-1998 ຫາສົກປີ 2002-2003 ການຫລຸດລົງຂອງຄວາມທຸກຍາກແມ່ນພ້ອມໆກັບການຫລຸດລົງຂອງຂະໜາດຄົວເຮືອນ[17] ແລະ ໃນສົກປີ 2007-2008 ກໍ່ເຊັ່ນກັນ [18]. ສິ່ງດັ່ງກ່າວນີ້ຢັ້ງຢືນໃຫ້ເຫັນວ່າ ການເຕີບໂຕຢ່າງຊ້າໆຂອງພົນລະເມືອງ ແມ່ນມີຄວາມສຳຄັນໃນການຫລຸດຜ່ອນຄວາມທຸກຍາກ.

---

[16] ບົດລາຍງານຜົນສຳເລັດ ຂອງກອງປະຊຸມ ຄະນະຊີ້ນຳ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ປີ 2008

[17] ບົດລາຍງານ ການຕີລາຄາຄວາມທຸກຍາກໃນ ສປປ ລາວ, ນັບແຕ່ເຂດທົ່ງພຽງ ຫາເຂດພູສູງ-ການຫຼຸດຜ່ອນຄວາມທຸກຍາກໃນ 15 ປີ ຜ່ານມາ. ສູນສະຖິຕິແຫ່ງຊາດ, ຄະນະກຳມະການແຜນການ ແລະ ການລົງທຶນ.

[18] ການຄາດຄະເນເບື້ອງຕົ້ນຈາກການສຳຫຼວດ Lecs4 ປີ 2007/08. ກົມຖິຕິ, ກະຊວງແຜນການ ແລະ ການລົງທຶນ.

**2. ການພັດທະນາເຂດຈຸດສຸມ**

ໃນໄລຍະຜ່ານມາລັດຖະບານ ໄດ້ເອົາໃຈໃສ່ໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດຈຸດສຸມພັດທະນາຂອງລັດຖະບານຢູ່ແຂວງ ຈຳປາສັກ, ແຂວງອັດຕະປື, ແຂວງເຊກອງ, ແຂວງຫົວພັນ ແລະ ແຂວງ ວຽງຈັນ ເຊິ່ງໄດ້ມີການຈັດສັນງົບປະມານໃຫ້ແກ່ເຂດດັ່ງກ່າວທັງຫມົດ 81 ຕື້ກີບ ໂດຍສຸມໃສ່ການ ຈັດສັນບ້ານ, ກຸ່ມບ້ານ ແລະ ສ້າງອາຊີບຄົງທີ່ໃຫ້ປະຊາຊົນ; ກໍ່ສ້າງພື້ນຖານໂຄງລ່າງຈຳນວນນຶ່ງ ເຊັ່ນ: ຖະຫນົນ ຫົນທາງ, ໂຄງລ່າງກະສິກຳ, ສຶກສາ, ສາທາ ເພື່ອສ້າງເງື່ອນໄຂເອື້ອອຳນວຍໃນການດຳລົງຊີວິດ ຂອງ ປະຊາຊົນ; ຊຸກຍູ້ ແລະ ສົ່ງເສີມ ການຜະລິດເປັນສິນຄ້າຂອງປະຊາຊົນ, ບູລະນະ ແລະ ປັບປຸງກົງຈັກ ອຳນາດການປົກຄອງຢູ່ທ້ອງຖິ່ນຮາກຖານໃຫ້ມີຄຸນນະພາບໃຫມ່, ມີຄວາມປອດໃສ ອັນໄດ້ເຮັດໃຫ້ຊີວິດການ ເປັນຢູ່ຂອງປະຊາຊົນດີຂຶ້ນເທື່ອລະກ້າວ.

### 3.3.2. ດ້ານການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ

ໃນໄລຍະຜ່ານມາ ສັງເກດເຫັນວ່າວຽກງານການສຶກສາໄດ້ສືບຕໍ່ປັບປຸງຕາໜ່າງການສຶກສາ ແລະ ຂະ ຫຍາຍໂຮງຮຽນລະບົບສາມັນສຶກສາ ໄປສູ່ທ້ອງຖິ່ນເຂດຫ່າງໄກສອກຫລີກ ໂດຍສະເພາະກໍ່ແມ່ນຢູ່ບັນດາເມືອງ ທຸກຍາກ, ພ້ອມກັນນັ້ນ ກໍ່ໄດ້ມີການຍົກລະດັບໃຫ້ຄູສອນທີ່ຍັງບໍ່ທັນໄດ້ມາດຖານ ໂດຍສະເພາະແມ່ນຄູຜູ້ທີ່ຢູ່ ເຂດຫ່າງໄກສອກຫລີກ, ເຂດທີ່ຂາດແຄນຄູມາຍົກລະດັບໃນລະບົບຕໍ່ເນື່ອງຢູ່ຕາມສະຖາບັນສ້າງຄູໃຫ້ຫລາຍ ຂຶ້ນ ເພື່ອເປັນການແນໃສ່ຮັບປະກັນເຮັດໃຫ້ຄຸນະພາບຂອງການສຶກສາມີການຫັນປ່ຽນເທື່ອລະກ້າວ.

ການຂະຫຍາຍໂຮງຮຽນລ້ຽງເດັກ ແລະ ອະນຸບານ ຈາກປີ 2005 ມີ 969 ແຫ່ງ ມາເປັນ 1.129 ແຫ່ງ ໃນປີ 2008, ໂຮງຮຽນປະຖົມໄດ້ເພີ່ມຈາກ 8.573 ແຫ່ງ ໃນປີ 2005 ມາເປັນ 8.830 ແຫ່ງ ໃນປີ 2008, ເພີ່ມຂຶ້ນຈຳນວນ 257 ແຫ່ງ, ອັດຕາການເຂົ້າຮຽນຊັ້ນປະຖົມ ເພີ່ມຂຶ້ນຈາກ 84,2% ໃນປີ 2005 ມາ ເປັນ 89,2% ໃນປີ 2008, ເຊິ່ງສິ່ງນັ້ນ ໄດ້ສະແດງເຖິງຄວາມພະຍາຍາມຂອງລັດຖະບານ ໃນການ ຂະຫຍາຍໂອກາດໃຫ້ພົນລະເມືອງລາວທັງຍິງ ແລະ ຊາຍ ບໍ່ວ່າຢູ່ເຂດຕົວເມືອງ ຫລື ເຂດຊົນນະບົດຫ່າງໄກ ສອກຫລີກ ໃຫ້ມີໂອກາດເຂົ້າເຖິງການສຶກສາຂັ້ນປະຖົມຢ່າງທົ່ວເຖິງກັນ, ລັດຖະບານໄດ້ມີການລົງທຶນໂດຍໄດ້ ນຳໃຊ້ງົບປະມານລາຍຈ່າຍຂອງລັດຖະບານເຂົ້າໃສ່ຂະແໜງການສຶກສາເພີ່ມຂຶ້ນຈາກ 11,63% ປີ 2005 ມາ ເປັນ 12,17% ໃນປີ 2008. ມາຮອດປັດຈຸບັນ, ມະຫາວິທະຍາໄລກໍ່ໄດ້ມີການຂະຫຍາຍເພີ່ມຂຶ້ນຢູ່ບາງບ່ອນ ເປັນຕົ້ນ: ມະຫາວິທະຍາໄລສະຫວັນນະເຂດ ແລະ ມະຫາວິທະຍາໄລວິທະຍາສາດການແພດ.

### 3.3.3. ດ້ານສາທາລະນະສຸກ

ອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 2006-2010 ໄດ້ສືບຕໍ່ປະຕິບັດນະໂຍບາຍເບິ່ງແຍງ ແລະ ປັບປຸງສຸຂະພາບຂອງປະຊາຊົນ ຕາມທິດຖືເອົາວຽກງານການປ້ອງກັນພະຍາດເປັນຕົ້ນຕໍ, ການປິ່ນປົວ ເປັນສຳຄັນ, ສູ້ຊົນຫລຸດຜ່ອນອັດຕາການຕິດເຊື້ອພະຍາດຕິດແປດ ເຊັ່ນ: ໄຂ້ຍຸງ, ອັກເສບທາງລະບົບຫາຍໃຈ, ຖອກທ້ອງ, ໄຂ້ເລືອດອອກ, ເຮັດໃຫ້ປະຊາຊົນບັນດາເຜົ່າມີສຸຂະພາບແຂງແຮງ ແລະ ອາຍຸຍືນຂຶ້ນ. ສູ້ຊົນໃຫ້ ປະຊາຊົນເຂົ້າເຖິງ ແລະ ໄດ້ຮັບການບໍລິການສາທາລະນະສຸກຂັ້ນພື້ນຖານກວ້າງຂວາງ ແລະ ມີຄຸນນະພາບ, ໄດ້ຮັບການປັບປຸງທາງດ້ານຮ່າງກາຍ ແລະ ຈິດໃຈ. ຕາໜ່າງສາລະນະສຸກໄດ້ສືບຕໍ່ຮັບການປັບປຸງ ແລະ

ຂະຫຍາຍຕົວໃນຊົນນະບົດ ແລະ ເຂດຫ່າງໄກສອກຫລີກຂຶ້ນກວ່າເກົ່າ, ມາຮອດປັດຈຸບັນສຸກສາລາໄດ້ເພີ່ມຂຶ້ນເປັນ 813 ແຫ່ງ; ນອກຈາກນັ້ນ, ກໍ່ໄດ້ສຳເລັດການກໍ່ສ້າງໂຄງລ່າງສາທາລະນະສຸກຈຳນວນຫນຶ່ງ ເປັນຕົ້ນ: ສູນວິໄຈ, ໂຮງໝໍເມືອງ, ປັບປຸງສຸກສາລາ 824 ແຫ່ງ; ໄດ້ເອົາໃຈໃສ່ການກໍ່ສ້າງບ້ານສາທາລະນະສຸກແບບຢ່າງ ຕາມ 8 ເນື້ອໃນ ຂອງການຮັກສາສຸຂະພາບຂັ້ນຕົ້ນໃນຂອບຂອງການສ້າງບ້ານ ແລະ ກຸ່ມບ້ານພັດທະນາ; ແພດໝໍ ແລະ ພະຍາບານ ກໍ່ໄດ້ຮັບການເຝິກອົບຮົມໃນພາກທິດສະດີ ແລະ ພາກການປະຕິບັດຕົວຈິງໃນການບໍລິການຮັບໃຊ້ປະຊາຊົນ ພ້ອມທັງມີຈັນຍາບັນໃນການປິ່ນປົວ, ການສັກຢາ ແລະ ຢອດຢາ ກັນພະຍາດໃຫ້ແມ່ຍິງ ແລະ ເດັກນ້ອຍ ບັນລຸໄດ້ 71% ທຽບໃສ່ເປົ້າໝາຍຕົວຈິງ; ການສຸຂະສຶກສາ ແລະ ໂຄສະນາການ ພາຍຫລັງໄພນ້ຳຖ້ວມກໍ່ໄດ້ຮັບການເອົາໃຈໃສ່ຫລາຍຂຶ້ນ; ການສະໜອງນ້ຳສະອາດ ບັນລຸໄດ້ 77%; ອັດຕາຊົມໃຊ້ວິດຖ່າຍຂອງປະຊາຊົນ ບັນລຸໄດ້ 54%; ອັດຕາຊົມໃຊ້ວິດຖ່າຍຂອງໂຮງຮຽນບັນລຸໄດ້ 46%; ສາມາດສະໜອງມຸ້ງຍ້ອມຢາໃຫ້ປະຊາຊົນໃນເຂດສ່ຽງຕໍ່ໄຂ້ຍຸງ ໄດ້ 1,6 ລ້ານດາງ; ໄດ້ຂະຫຍາຍ ຕາໜ່າງກອງທຶນປະກັນສຸຂະພາບຊຸມຊົນມາຮອດປະຈຸບັນມີທັງໝົດ 9 ແຂວງ, 20 ເມືອງ, ກວມເອົາ 934 ບ້ານ, ມີ 19.211 ຄອບຄົວ, ມີສະມາຊິກ ຫລື ຜູ້ປະກັນຕົນ ທັງໝົດ 111,6 ພັນຄົນ ເທົ່າກັບ 3,7% ຂອງປະຊາຊົນເປົ້າໝາຍ (3 ລ້ານຄົນ) ແລະ 1,8% ຂອງປະຊາຊົນທົ່ວປະເທດ. ລະບົບເຝົ້າລະວັງ ແລະ ເຕືອນໄພລ່ວງໜ້າການແຜ່ລະບາດຂອງພະຍາດ ໄດ້ຮັບການປັບປຸງຢ່າງເຂັ້ມແຂງ ເຊິ່ງສາມາດກວດພົບ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໄຂ້ຫວັດສັດປີກ ແລະ ໄຂ້ຫວັດໃຫຍ່ສາຍພັນ ໃຫ່ມ H1N1.

### 3.3.4. ດ້ານວິທະຍາສາດ ແລະເຕັກໂນໂລຊີ

ປະກາດໃຊ້ກົດໝາຍຊັບສິນທາງປັນຍາ, ກົດໝາຍມາດຕະຖານການຂຶ້ນທະບຽນນ້ຳມັນເຊື້ອໄຟ, ປະກາດໃຊ້ມາດຖານແຫ່ງຊາດ ດ້ານຜະລິດຕະພັນວັດຖຸກໍ່ສ້າງ, ຜະລິດຕະພັນອາຫານ ແລະ ກະສິກຳ ຈຳນວນ 6 ມາດຖານ. ສຳເລັດການຄົ້ນຄວ້າປູກເຊື້ອຈຸລິນຊີ ແລະ ທົດລອງປູກເຊື້ອໃສ່ໄມ້ເກດສະໜາ, ການສ້າງລະບົບການບໍລິຫານລັດແບບເອເລັກໂຕນິກ, ສ້າງສູນບໍລິການຂໍ້ມູນຂ່າວສານແບບເອເລັກໂຕນິກ ໃຫ້ແກ່ຊຸມຊົນ 11 ແຫ່ງ, ສ້າງໂປຣແກຣມລະບົບພາສາລາວໃນຄອມພິວເຕີ, ສາມາດແກ້ໄຂການຮ້ອງຟ້ອງສິດທາງຊັບສິນທາງປັນຍາ ໄດ້ຈຳນວນ 20 ກໍລະນີ ແລະ ໄດ້ທຳລາຍສິນຄ້າປອມແປງ. ສຳເລັດການຄົ້ນຄວ້າການນຳໃຊ້ນ້ຳມັນພືດທີ່ໃຊ້ແລ້ວ ມາໃຊ້ໃນເຄື່ອງຈັກກາຊວນ. ນອກຈາກນີ້ ຍັງໄດ້ສຳເລັດການຕິດຕັ້ງເສົາຮັບສັນຍານ Wimax ຢູ່ບັນດາແຂວງ ໄດ້ 16 ເສົາ, ເຊິ່ງຄາດວ່າໂຄງການບໍລິຫານລັດແບບເອເລັກໂຕນິກ ຈະໃຫ້ສຳເລັດ ແລະ ສາມາດນຳໃຊ້ໄດ້ ໃນເດືອນ 6 ປີ 2009, ສຳເລັດການກໍ່ສ້າງຫ້ອງການສວນອຸທິຍານວິທະຍາສາດແຫ່ງຊາດ ຢູ່ ແຂວງບໍລິຄຳໄຊ (ການຮ່ວມມືລະຫວ່າງລັດຖະບານລາວ ແລະ ລັດຖະບານອີຕາລີ).

### 3.3.5. ດ້ານຊັບພະຍາກອນ ແລະ ສິ່ງແວດລ້ອມ

ໃນຂົງເຂດສິ່ງແວດລ້ອມ ກໍ່ພວມໄດ້ຮັບຄວາມສົນໃຈ ແລະ ເອົາໃຈໃສ່ຕິດຕາມສະພາວະໂລກຮ້ອນ, ອາກາດເປັນພິດ ແລະ ອື່ນໆ. ເຖິງແມ່ນວ່າ ໄດ້ສຳເລັດບັນດານິຕິກຳດ້ານສິ່ງແວດລ້ອມເປັນສ່ວນໃຫຍ່ແລ້ວກໍ່ຕາມ, ແຕ່ໃນການບັງຄັບໃຊ້ຍັງຈຳກັດຢູ່. ການສະໜອງດ້ານທຶນຮອນເພື່ອການພັດທະນາຂົງເຂດນີ້ຍັງຈຳກັດ ແຕ່ກໍຍັງໄດ້ຮັບການສະໜັບສະໜູນຈາກສາກົນ ດ້ານເຕັກນິກວິຊາການ ແລະ ທຶນຮອນຈຳນວນຫນຶ່ງ. ບັນດາໂຄງການພັດທະນາທີ່ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມນັ້ນ, ເຖິງແມ່ນວ່າບໍ່ທັນຫລວງຫລາຍແຕ່ກໍ່ໄດ້ກາຍເປັນຕົວແບບແຫ່ງການພັດທະນາໃນອານາຄົດ ເຊັ່ນ: ໂຄງການກໍ່ສ້າງເຂື່ອນໄຟຟ້າ ນ້ຳເທີນ2,

ໂຄງການຂຸດຄົ້ນຄຳເຊໂປນ ແລະ ໂຄງການອື່ນໆ. ໃນໄລຍະທີ່ໂຄງການລົງທຶນດ້ານໄຟຟ້ານ້ຳຕົກ, ບໍ່ແຮ່, ປູກໄມ້ອຸດສາຫະກຳພວມຂະຫຍາຍຕົວຢ່າງວ່ອງໄວນັ້ນ ມັນໄດ້ຮຽກຮ້ອງໃຫ້ມີການສຶກສາຜົນກະທົບຕໍ່ສິ່ງແວດລ້ອມຢ່າງຮອບຄອບ ແລະ ຄົບຖ້ວນ.

ໄດ້ສືບຕໍ່ປັບປຸງຮ່າງມາດຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ, ຈັດກອງປະຊຸມຫນ່ວຍປະຕິບັດງານດ້ານສິ່ງແວດລ້ອມໃນຂົງເຂດອະນຸພາກພື້ນແມ່ນ້ຳຂອງ (GMS) ເຊິ່ງໄດ້ຮັບຮອງເອົາບັນດາຫນ້າວຽກຫລັກ ຄື: ການປະເມີນຜົນກະທົບດ້ານສິ່ງແວດລ້ອມໃນຂະແຫນງຂົນສົ່ງ, ພະລັງງານ-ບໍ່ແຮ່ ແລະ ທ່ອງທ່ຽວ, ການນຳໃຊ້ຕົວຊີ້ບອກໃນການປະເມີນປະສິດທິພາບຂອງການຄຸ້ມຄອງສິ່ງແວດລ້ອມໃນລະດັບແຂວງ ແລະ ທ້ອງຖິ່ນ ຢູ່ບັນດາປະເທດລຸ່ມແມ່ນ້ຳຂອງ; ໂຄງການອະນຸລັກຊີວະນາໆພັນທີ່ເຂດເຊື່ອມຕໍ່ປ່າສະຫງວນຕາມແລວທາງ ເສດຖະກິດເຫນືອ-ໃຕ້ ທີ່ ແຂວງກວາງຊີ ສປ.ຈີນ ແລະ ແຂວງກາວບັງ ສສ.ຫວຽດນາມ, ເພີ່ມທະວີການ ປັບປຸງຄວາມສາມາດຂອງບັນດາຫນ່ວຍປະສານງານດ້ານສິ່ງແວດລ້ອມຂັ້ນພາກພື້ນ, ລະດັບປະເທດ, ແຂວງ ແລະ ເມືອງ.

### 3.3.6. ດ້ານແຮງງານ ແລະ ສະຫວັດດີການສັງຄົມ

#### 1. ດ້ານແຮງງານ

ສຳເລັດການປັບປຸງກົດໝາຍວ່າດ້ວຍແຮງງານ; ດຳລັດວ່າດ້ວຍຄ່າແຮງງານຕ່ຳສຸດ ໂດຍໄດ້ປັບປຸງ ແຮງງານຕ່ຳສຸດຈາກ 290.000 ກີບ ຂຶ້ນເປັນ 348.000 ກີບ, ສຳເລັດການສ້າງດຳລັດວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງວິສາຫະກິດບໍລິການຈັດຫາງານ, ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງເຈົ້າ ໜ້າທີ່ກວດກາແຮງງານ; ປັບປຸງຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ ວ່າດ້ວຍການອະນຸມັດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດ.

ໄປພ້ອມໆກັບການປັບປຸງນິຕິກຳ, ຂະແໜງແຮງງານ ໄດ້ເອົາໃຈໃສ່ພັດທະນາພື້ນຖານໂຄງລ່າງຂອງ ສູນພັດທະນາສີມືແຮງງານຢູ່ແຕ່ລະພາກ. ປະຈຸບັນມີສູນພັດທະນາສີມືແຮງງານ ແລະ ສູນວິຊາຊີບທັງໝົດ ຈຳ ນວນ 153 ແຫ່ງ ໃນນັ້ນ; ສູນທີ່ຂຶ້ນກັບການຄຸ້ມຄອງຂອງຂະແໜງ ຮສສ ມີ 4 ແຫ່ງ, ຂຶ້ນກັບພາກສ່ວນອື່ນ ຂອງລັດມີ 57 ແຫ່ງ ແລະ ຂອງເອກະຊົນ ມີ 92 ແຫ່ງ. ພ້ອມນີ້ຍັງໄດ້ພັດທະນາຫລັກສູດການຝຶກ, ເຊິ່ງສາ ມາດສ້າງປຶ້ມຕຳລາການຮຽນການສອນ ໄດ້ 7 ສາຂາວິຊາຊ່າງ ຄື: ຊ່າງສ້ອມແປງ ແລະ ນຳໃຊ້ຄອມພິວເຕີ, ຊ່າງໄຟຟ້າ, ຊ່າງລົດຍົນ, ຊ່າງສ້ອມແປງເຄື່ອງເອເລັກໂຕຼນິກ, ຊ່າງໄມ້, ຊ່າງຕັດຫຍິບ ແລະ ປຸງແຕ່ງອາຫານ ແລະ ໄດ້ພັດທະນາລະດັບການຝຶກຈາກລະດັບ ເຄິ່ງຊຳນານງານມາເປັນລະດັບຊຳນານງານ ແລະ ປະຈຸບັນ ກຳລັງພັດທະນາລະດັບນາຍຊ່າງເຕັກນິກ, ຊຶ່ງມີໄລຍະຮຽນແຕ່ 2 ອາທິດ ຫາ 3 ປີ; ສະໜອງອຸປະກອນ ການຮຽນ, ການຝຶກງານໃຫ້ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງ ງານເທື່ອລະກ້າວ.

ເອົາໃຈໃສ່ກວດກາການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ແຮງງານ, ສັນຍາແຮງງານ ໂດຍສະເພາະ ກ່ຽວກັບ ເງິນເດືອນ, ຊົ່ວໂມງເຮັດວຽກ ແລະ ສະຫວັດດີການຢູ່ໃນຫ້ອໜ່ວຍແຮງງານຕ່າງໆໄດ້ 1.606 ແຫ່ງ, ເຊິ່ງກວມເອົາຜູ້ອອກແຮງງານທັງໝົດ 98.342 ຄົນ; ໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກ

ແຮງງານໄດ້ຈຳນວນ 141 ກໍລະນີ ຈາກທັງໝົດ 254 ກໍລະນີ, ສາມາດນຳເອົາຜົນປະໂຫຍດມາໃຫ້ຜູ້ອອກແຮງງານທັງໝົດ 1.684 ລ້ານກີບ.

**2. ສະຫວັດດີການສັງຄົມ**

ປັບປຸງດຳລັດ 178/ນຍ ວ່າດ້ວຍລະບອບປະກັນສັງຄົມພາກລັດ ມາເປັນດຳລັດ 70/ນຍ, ໂຮມດຳລັດ 71/ນຍ, 194/ນຍ ແລະ 145/ນຍ ເຂົ້າເປັນດຳລັດ 343/ນຍ, ຫັນເອົາມະຕິ 102/ກມສພ ມາເປັນດຳລັດ 241/ນຍ; ສ້າງຮ່າງດຳລັດວ່າດ້ວຍສິດທິຄົນພິການ ອອກບົດແນະນຳວ່າດ້ວຍການຈັດຕັ້ງປະຕິບັດດຳລັດ 70/ນຍ ແລະ ດຳລັດ 343/ນຍ; ອອກລະບຽບຊີ້ຄ່າວກ່ຽວກັບການຄຸ້ມຄອງກອງທຶນປະກັນສັງຄົມແຫ່ງລັດ; ສຳເລັດແຜນງານແຫ່ງຊາດ ວ່າດ້ວຍ ການຕ້ານການຄ້າມະນຸດ ແລະ ການຊູດຮີດທາງເພດເດັກ ພ້ອມທັງດຳລັດເລກທີ 160/ນຍ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນງານດັ່ງກ່າວ.

ໄດ້ປັບປຸງຜົນປະໂຫຍດລະບອບອຸດໜູນ ໃຫ້ແກ່ພະນັກງານ-ລັດຖະກອນຈາກ 5 ອຸດໜູນ ໃນດຳລັດ 178/ນຍ ມາເປັນ 8 ອຸດໜູນໃນດຳລັດ 70/ນຍ, ປັບປຸງອັດຕາເງິນສົມທົບກອງທຶນປະກັນສັງຄົມເປັນ 16,5% ໃນນັ້ນ: ເງິນສົມທົບຂອງພະນັກງານ-ລັດຖະກອນ ໃນຖານະຜູ້ອອກແຮງງານ ຈາກ 5% ມາເປັນ 8% ແລະ ລັດຖະບານ ໃນນາມຜູ້ໃຊ້ແຮງງານ ອອກເງິນສົມທົບ 8,5% ຂອງຄັງເງິນເດືອນ; ປັບປຸງລະບົບບໍລິການປິ່ນປົວຂອງຜູ້ປະກັນຕົນ ດ້ວຍການຈ່າຍຄ່າປິ່ນປົວຕາມບິນ ແລະ ຖອນເງິນຄືນໄປສູ່ລະບົບການຈ່າຍແບບມອບ ເ ໝົາ.

ຂະຫຍາຍວົງປະກັນສັງຄົມພາກວິສາຫະກິດ ໄປສູ່ແຂວງທີ່ມີເງື່ອນໄຂສະດວກເທື່ອລະກ້າວ ແລະ ຍົກລະດັບຄ່າປະກັນສຸຂະພາບ ໃຫ້ແທດເໝາະກັບສະພາບການຂະຫຍາຍຕົວຂອງເສດຖະກິດ ແລະ ສັງຄົມ ໃນແຕ່ລະໄລຍະ ໂດຍໄດ້ປັບອັດຕາຄ່າປະກັນສຸຂະພາບ ໃນປີ 2006 ຈາກ 65.000 ກີບ/ຄົນ/ປີ ຂຶ້ນມາເປັນ 85.000 ກີບ/ຄົນ/ປີ ໃນປີ 2009. ກອງທຶນມີການເຕີບໃຫຍ່ເຂັ້ມແຂງຢ່າງຕໍ່ເນື່ອງ, ຮັບປະກັນປະຕິບັດນະໂຍບາຍປະກັນສັງຄົມ ໃຫ້ແກ່ຊາວຜູ້ອອກແຮງງານໃນວິສາຫະກິດຕ່າງໆຕາມສິດ ແລະ ພັນທະຂອງເຂົາເຈົ້າ ທີ່ກຳນົດໄວ້ໃນລະບຽບການ.

ໄດ້ເອົາໃຈໃສ່ເກັບກຳຂໍ້ມູນ ແລະ ຈັດຕັ້ງປະຕິບັດນະໂຍບາຍ ຕໍ່ພະນັກງານປະຕິວັດອາວຸໂສ ທີ່ມີຄຸນງາມຄວາມດີຕໍ່ການປະຕິວັດ ໃນການປະຕິບັດເປົ້າໝາຍຕ່າງໆໄດ້ທັງໝົດ 9.039 ທ່ານ ເທົ່າກັບ 10,64% ຂອງຈຳນວນທັງໝົດທີ່ມີຂໍ້ມູນ ( 84.944 ທ່ານ ) ເປັນລົດ 1.028 ຄັນ ແລະ ເປັນເງິນ 78.695.898.564 ກີບ ພ້ອມທັງເອົາໃຈໃສ່ຍາດແຍ່ງການຊ່ວຍເຫຼືອຈາກ ພາຍໃນ ແລະ ສາກົນ ເພື່ອປະຕິບັດນະໂຍບາຍສັງຄົມ ສົງເຄາະ, ພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ແລະ ເກັບກູ້ລະເບີດບໍ່ທັນແຕກ ອອກຈາກສະຖານທີ່ຕ່າງໆ, ຊຶ່ງມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 2.217.187 ຄົນ.

## 3.3.7. ດ້ານຖະແຫຼ່ງຂ່າວ ແລະ ວັດທະນະທຳ

### 1. ຖະແຫຼ່ງຂ່າວ ແລະ ສື່ມວນຊົນ:

ວຽກງານຖະແຫລງຂ່າວ ໄດ້ມີບາດກ້າວຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນະພາບນັບມື້ດີຂຶ້ນ, ຍົກລະດັບ ທາງດ້ານວິຊາສະເພາະ ແລະ ເຕັກນິກໃຫ້ພະນັກງານເພື່ອຕອບສະໜອງຂໍ້ມູນຂ່າວສານໃຫ້ແກ່ສັງຄົມທັງພາຍໃນ ແລະ ຕ່າງປະເທດ ໃຫ້ມີປະສິດທິພາບ ແລະ ກວ້າງຂວາງ; ປັບປຸງພາລະບົດບາດ ແລະ ຂອບເຂດສິດຂອງບັນດາກົມ, ອົງການ, ກອງວິຊາການ, ສະຖາບັນ, ໂຮງຮຽນ, ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳເມືອງ ໃຫ້ສອດຄ່ອງນະໂຍບາຍປ່ຽນແປງໃຫມ່ຂອງພັກ-ລັດ, ໂດຍໄດ້ສ້າງໂຄງປະກອບກົງຈັກການຈັດຕັ້ງແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ໜັກແໜ້ນ ແລະ ຮັດກຸມກວ່າເກົ່າ, ມາຮອດປີ 2008 ມີຈຳນວນພະນັກງານລັດຖະກອນທົ່ວຂະແໜງຖະແຫລງຂ່າວ ແລະ ວັດທະນະທຳ ທັງໝົດ 2.990 ຄົນ, ຍິງ 920 ຄົນ, ໃນນັ້ນ ມີພະນັກງານຂັ້ນສູນກາງ 1.161 ຄົນ, ຍິງ 410 ຄົນ, ຂັ້ນທ້ອງຖິ່ນ 1.829 ຄົນ, ຍິງ 510 ຄົນ. ໄດ້ເອົາໃຈໃສ່ບຳລຸງກໍ່ສ້າງພະນັກງານເພື່ອຍົກລະດັບຄວາມຮູ້ດ້ານທິດສະດີການເມືອງ ແລະ ວິຊາສະເພາະທັງພາຍໃນ ແລະ ຕ່າງປະເທດ ໃນລະດັບຊັ້ນກາງຈົນເຖິງປະລິນຍາເອກ ຈຳນວນ 105 ຄົນ, ຍິງ 30 ຄົນ.

ດ້ານການອອກຂ່າວທາງໜັງສືພິມ ກໍ່ໄດ້ມີການຂະຫຍາຍຢ່າງກວ້າງຂວາງ ໂດຍສະເພາະ ການເກັບຂ່າວ ແລະ ອອກຂ່າວທາງໜັງສືພິມ ໃຫ້ທັນເວລາ ແລະ ວ່ອງໄວ, ນອກຈາກນັ້ນ ກໍ່ໄດ້ເພີ່ມປະລິມານການຈັດພິມໜັງສືພິມ ແລະ ວາລະສານ ແຕ່ລະປີ, ໃນນັ້ນ ໜັງສືພິມ, ວາລະສານຕ່າງໆ ກໍ່ໄດ້ຂະຫຍາຍຕົວທຽບໃສ່ປີ 2005 ເພີ່ມຂຶ້ນ 20 ກວ່າສະບັບ ແລະ ຖ້າມາເບິ່ງການຈຳໜ່າຍໜັງສືພິມ ໃນປີ 2005 ເຫັນວ່າການພິມຈຳໜ່າຍໜັງສືພິມມີພຽງແຕ່ 4.942.000 ສະບັບ, ແຕ່ມາຮອດປີ 2008 ເຫັນໄດ້ວ່າປະລິມານການພິມໜັງສືພິມອອກສູ່ມວນຊົນໄດ້ເພີ່ມຂຶ້ນເຖິງ 45.368.000 ສະບັບ ແລະ ໄດ້ຈຳໜ່າຍລົງຮອດບາງເມືອງທີ່ຫ່າງໄກຈາກເທດສະບານແຂວງ ເຊັ່ນກວ່າໜມູ່ແມ່ນ ແຂວງຈຳປາສັກ, ສະຫວັນນະເຂດ, ຫລວງ ພະບາງ ແລະ ແຂວງຄຳມ່ວນ. ພ້ອມນັ້ນ, ກໍ່ໄດ້ເຄື່ອນໄຫວຮັບໃຊ້ສັງຄົມດ້ວຍເນື້ອໃນຫຼາຍຮູບຫຼາຍສີ ສາມາດຕອບສະໜອງຂໍ້ມູນ-ຂ່າວສານຄວາມຮູ້ຕ່າງໆໃຫ້ແກ່ສັງຄົມຫຼາຍກວ່າເກົ່າ, ປະຈຸບັນວຽກງານສື່ສິ່ງພິມ ແລະ ວຽກງານເອເລັກໂຕນິກໄດ້ພັດທະນາຂຶ້ນ ແລະ ໃນຂະນະທີ່ໂລກພວມພັດທະນາເຕັກໂນໂລຊີການສື່ສານໂທລະຄົມທີ່ທັນສະໄໝນັ້ນ ກໍ່ໄດ້ນຳໃຊ້ເຕັກໂນໂລຍີເຂົ້າມາ ເປັນສື່ເອເລັກໂຕນິກໃໝ່; ເຊິ່ງສ້າງແວັບໄຊບັນດາສື່ເພື່ອເຊື່ອມຕໍ່ລະບົບອິນເຕີແນັດ ສາມາດເຮັດໃຫ້ການສົ່ງຂໍ້ມູນ-ຂ່າວສານຂອງຕົນອອກສູ່ພາຍໃນ ແລະ ຕ່າງປະເທດ ໄດ້ຢ່າງວ່ອງໄວ, ທັນການ ແລະ ກວ້າງຂວາງ.

ດ້ານການອອກຂ່າວທາງວິທະຍຸກະຈາຍສຽງ ກໍ່ເປັນຂອດໜຶ່ງທີ່ສຳຄັນ ຂອງປະເທດເຮົາ ໄດ້ກຳເນີດ ແລະ ຮັບໃຊ້ໜ້າທີ່ການເມືອງແຕ່ຊຸມປີ 60 ຂອງສັດຕະວັດທີ 20 ຜ່ານມານັ້ນ ເຊິ່ງໄດ້ປັບປຸງເນື້ອໃນລາຍການຕ່າງໆ ແລະ ທາງດ້ານເຕັກນິກກໍ່ໄດ້ມີການປັບປຸງຈາກລະບົບອານາລອກ (Analog) ໄປສູ່ລະບົບດິຈິຕອນ (Digital), ພ້ອມນີ້ ກໍ່ຍັງໄດ້ເພີ່ມການກະຈາຍສຽງລະບົບ FM1 ແລະ FM2 ຂຶ້ນຕື່ມ 2 ຊ່ອໂມງ. ຊຶ່ງປະຈຸບັນກໍ່ໄດ້ມີການປັບປຸງ ແລະ ພັດທະນາໄປສູ່ຄຸນນະພາບໃໝ່ ແລະ ໄດ້ຂະຫຍາຍຈາກ 14 ສະຖານີ ໃນເມື່ອກ່ອນ ຂຶ້ນເປັນ 43 ສະຖານີໃນທົ່ວປະເທດ, ຊຶ່ງຂະຫຍາຍເປັນສອງລະບົບ (ລະບົບ FM ແລະ AM)

ສາມາດແຜ່ຄື້ນກະຈາຍສຽງເພີ່ມ ເປັນ 90% ທົ່ວປະເທດ; ນອກຈາກນັ້ນ, ກໍ່ໄດ້ມີການການປັບປຸງຫນ້າ ເວບ ໄຊ ເປັນ 4 ພາສາ ຄື: ພາສາລາວ, ພາສາມົ້ງ, ພາສາຝລັ່ງ ແລະ ພາສາອັງກິດ; ພ້ອມນີ້, ກໍ່ໄດ້ມີການ ກະຈາຍສຽງໃນລະບົບອອນລາຍ ເຮັດໃຫ້ລະບົບການກະຈາຍສຽງ ວິທະຍຸ FM1 ສາມາດຮັບຟັງໄດ້ທົ່ວໂລກ. ແລະ ກໍ່ມີວິທະຍຸ FM ສໍາລັບຖ່າຍທອດວິທະຍຸສາກົນຂອງປາງປະເທດເຊັ່ນ: ວິທະຍຸສາກົນຈີນ, ວິທະຍຸສາກົນ ຝຣັ່ງ ແລະ ວິທະຍຸສາກົນອົດສະຕາລີ; ນອກຈາກນີ້, ກະຊວງຍັງໄດ້ອະນຸມັດສ້າງຕັ້ງສະຖານີວິທະຍຸກະຈາຍ ສຽງກອງທັບ ແລະ ສະຖານີວິທະຍຸກະຈາຍສຽງນະຄອນຫລວງວຽງຈັນຂຶ້ນຕື່ມອີກ. ທາງດ້ານໂທລະພາບ ກໍ່ ໄດ້ປັບປຸງເນື້ອໃນຮູບການ ແລະ ລາຍການອອກອາກາດທັງພາຍໃນ ແລະ ຕ່າງປະເທດໃຫ້ມີຄຸນະພາບ ແລະ ທັນກັບສະພາບການຂອງພາຍໃນກໍຄືຕ່າງປະເທດ.

ທາງດ້ານວຽກງານໂທລະພາບ, ປະຈຸບັນມີສະຖານີໂທລະພາບ ທັງໝົດ 36 ສະຖານີ, ເພີ່ມຂຶ້ນ 30 ແຫ່ງ, ໃນນັ້ນ, ໂທລະພາບແຫ່ງຊາດມີ 2 ສະຖານນີ (ຊ່ອງ1 ແລະ ຊ່ອງ3) ສະຖານີຖ່າຍທອດໂທລະພາບ ຫວຽດນາມ 1 ສະຖານີ, ໂທລະພາບ ສ.ປ ຈີນ 2 ສະຖານີ (CCTV4, CCT9), ໂທລະພາບເອກະຊົນ (ລາວສະຕາ ແລະ ເອັມວີລາວ) 2 ສະຖານີ, ໂທລະພາບທ້ອງຖິ່ນຢູ່ແຂວງ ແລະ ເມືອງ ມີ 30 ສະຖານີ. ສາມາດແຜ່ຄື້ນພາກພື້ນດິນເພີ່ມຂຶ້ນຈາກ 60% ເປັນ 70% ຂອງພື້ນທີ່ທົ່ວປະເທດ. ໃນນັ້ນໂທລະພາບແຫ່ງ ຊາດລາວ ຊ່ອງ 3 ແຫ່ງໃໝ່ ທີ່ໄດ້ມີການເພີ່ມຊ່ອງທີ່ເຫຼືອຈາກ ສ.ປ ຈີນ ມີຄວາມແຮງສົ່ງ 20 KW ໄດ້ສໍາ ເລັດ ແລະ ໄດ້ນໍາໃຊ້ເຂົ້າໃນງານມະຫະກໍາກິລາຊີເກມ ຄັ້ງທີ່ 25 ໃນທ້າຍປີ 2009 ແລ້ວ, ບັນດາພາຫະນະ ສື່ດັ່ງກ່າວນັ້ນກໍ່ໄດ້ຕ້ອງມີການປັບປຸງເນື້ອໃນລາຍການທັງໝົດ ຍົກລະດັບຄຸນນະພາບດ້ານເຕັກນິກແບບເກົ່າ ຫັນປ່ຽນລະບົບເຕັກນິກຈາກອານາລັອກໄປສູ່ດິຈິຕອນເທື່ອລະກ້າວ.

## 2. ວັດທະນະທໍາ:

ໄດ້ມີການຟື້ນຟູປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທໍາທີ່ມີລັກສະນະຊາດ, ກ້າວຫນ້າ ແລະ ມະຫາຊົນ. ທັງໄດ້ເອົາໃຈໃສ່ສະກັດກັ້ນວັດທະນະທໍາທີ່ບໍ່ກ້າວຫນ້າ ເຊິ່ງຈະສ້າງຄວາມເຊື່ອມເສຍໃຫ້ແກ່ ປະເພນີວັດທະນະທໍາອັນດີງາມຂອງຊາດ, ຊຸກຍູ້ຂະບວນການສິລະປະວັນນະຄະດີ ທັງອາຊີບ ແລະ ສະມັກ ຫລິ້ນ ນັບແຕ່ຂັ້ນສູນກາງຈົນຮອດທ້ອງຖິ່ນ, ຈັດຕັ້ງງານມະໂຫລານສິລະປະພື້ນເມືອງ, ງານແຂ່ງຂັນທາງ ດ້ານສິລະປະວັນນະຄະດີ ກໍຄືເທດສະການລະດັບຊາດ ແລະ ທ້ອງຖິ່ນ ແນໃສ່ຟື້ນຟູ ແລະ ສົ່ງເສີມສິລະປະ ວັດທະນະທໍາຂອງຊາດກໍຄື ສິລະປະວັນນະຄະດີຂອງຊົນເຜົ່າຕ່າງໆ.

ວຽກງານການຄຸ້ມຄອງການຜະລິດ ແລະ ຈໍາຫນ່າຍກະແຊັດ ຫລື ແຜ່ນສຽງເພງຮ້ອງ, ຂັບລໍາ, ລະ ຄອນເວທີປະເພດຕ່າງໆ ແມ່ນເປັນວຽກງານຫນຶ່ງທີ່ໄດ້ມີການເອົາໃຈໃສ່ ເພື່ອຮັບປະກັນທາງດ້ານເນື້ອໃນໃຫ້ ຕິດພັນກັບວັດທະນະທໍາຂອງຊາດ ແລະ ຮັບປະກັນທາງດ້ານການນໍາໃຊ້ຊັບສິນທາງປັນຍາ ຂອງບັນດາສິ ລະປິນໃຫ້ມີຄວາມເປັນທໍາ. ຊຸກຍູ້ບັນດາການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນທີ່ຂຽນ, ແປ ແລະ ພິມປຶ້ມປະ ເພດຕ່າງໆ ເຊັ່ນ: ທິດສະດີການເມືອງ, ປົດວັນນະກໍາ, ກົດຫມາຍ ແລະ ຫລັກສູດການສຶກສາ ເພື່ອຕອບສະ ຫນອງຄວາມຮຽກຮ້ອງຕ້ອງການຂອງສັງຄົມ. ພ້ອມນີ້, ກໍ່ໄດ້ຈັດຕັ້ງການປະກວດເລື່ອງສັ້ນ, ເລື່ອງຍາວ, ປົດ ກະວີ ແລະ ການກອນໃຫ້ນັກຂຽນ ແລະ ນັກປະພັນທັງມືອາຊີບ ແລະ ມືສະຫມັກຫລິ້ນ ໄດ້ມີໂອກາດສະ ແດງສີມື ແລະ ຫົວຄິດປະດິດສ້າງຂອງຕົນອອກສູ່ສັງຄົມ.

ວຽກງານປັບປຸງຫ້ອງສະໝຸດ, ຫ້ອງອ່ານໜັງສື ຕາມຮາກຖານສຳນັກງານ, ຫ້ອງການ, ບ້ານ, ໂຮງຮຽນ ແລະ ຫ້ອງສະໝຸດເຄື່ອນທີ່, ກໍ່ເປັນວຽກງານໜຶ່ງທີ່ໄດ້ຮັບການປັບປຸງ ແລະ ຂະຫຍາຍການໃຫ້ບໍລິການໃຫ້ມີຄຸນນະພາບດີຂຶ້ນ, ເຊິ່ງສະແດງອອກຈາກທ່າອ່ຽງ ການເຂົ້າໃຊ້ບໍລິການຫ້ອງສະໝຸດແມ່ນເພີ່ມຂຶ້ນ ໃນປີ 2005 ທົ່ວປະເທດມີຫ້ອງສະໝຸດຈຳນວນ 110 ໜ່ວຍ, ມາຮອດປີ 2008 ມີຈຳນວນ 450 ໜ່ວຍ, ຖ້າທຽບໃສ່ປີ 2005 ເພີ່ມຂຶ້ນ 309 ສ່ວນຮ້ອຍ. ຂະແໜງຖະແຫລງຂ່າວ ແລະ ວັດທະນະທຳທ້ອງຖິ່ນ ກໍ່ໄດ້ມີການສ້າງຂະບວນການກໍ່ສ້າງຊີວິດວັດທະນະທຳຊົນນະບົດໂດຍຖືເອົາການກໍ່ສ້າງຄອບຄົວ ແລະ ບ້ານ ວັດທະນະທຳເປັນມາດຕະການຕົ້ນຕໍເຊິ່ງດຳເນີນໄປເປັນຂະບວນກວ້າງຂວາງໃນທົ່ວປະເທດ.

ຂະບວນການສ້າງຄອບຄົວວັດທະນະທຳ ໃນຂອບເຂດທົ່ວປະເທດ ມາຮອດປີ 2008 ສາມາດບັນລຸໄດ້ 131.346 ຄອບຄົວ ແລະ ສ້າງບ້ານວັດທະນະທຳ ໄດ້ 445 ບ້ານ ລື່ນຄາດໝາຍ 32%. ໄດ້ມີການຈັດຕັ້ງປະຕິບັດການຄຸ້ມຄອງຮ້ານບັນເທີງ, ເຮືອນພັກ, ຫ້ອງຫລິ້ນເກມ, ຮ້ານຄາລາໂອເກະ ແລະ ປ້າຍໂຄສະນາຕ່າງໆ, ໂດຍສະເພາະໃນຕົວເມືອງໃຫຍ່ໃຫ້ມີຄວາມສະຫງົບ ແລະ ເປັນລະບຽບດີຂຶ້ນ.

ໄດ້ປົກປັກຮັກສາ ແລະ ເສີມຂະຫຍາຍມໍລະດົກແຫ່ງຊາດ ທີ່ໄດ້ຮັບຮອງມໍລະດົກໂລກ 2 ແຫ່ງ (ເມືອງຫລວງພະບາງ ແລະ ວັດພູຈຳປາສັກ), ພ້ອມນັ້ນ ກໍ່ໄດ້ມີການສຳຫລວດຂໍ້ມູນເພີ່ມເຕີມ ເພື່ອປະກອບເອກະສານສ້າງແຜນແມ່ບົດນຳສະເໜີ ອົງການອຸຍແນດສະໂກ ໃຫ້ພິຈາລະນາຮັບຮອງເອົາທົ່ງໄຫຫີນ ແຂວງຊຽງຂວາງ ເປັນມໍລະດົກໂລກແຫ່ງທີ 3 ຂອງລາວ, ໄດ້ເອົາໃຈໃສ່ໃນການປະຕິສັງຂອນວັດວາອາຮາມ, ສະຖານບູຮານນະຄະດີ ແລະ ສະຖານທີ່ທາງປະຫວັດສາດ ເຊິ່ງເປັນມໍລະດົກທາງດ້ານວັດທະນາທຳ ແລະ ປະຫວັດສາດຂອງຊາດທີ່ພົ້ນເດັ່ນ ແມ່ນການບູລະນະເມືອງວຽງໄຊ, ຖ້ຳປະຫວັດສາດການຕໍ່ສູ້ກູ້ຊາດ. ໄດ້ສົມທົບກັບທ້ອງຖິ່ນໃນການຄຸ້ມຄອງສະຖານບູຮານ ແລະ ວັດຖຸບູຮານທີ່ຖືກຄົ້ນພົບໃຫມ່ ພ້ອມທັງມີການສຳຫລວດຄົ້ນຄວ້າເອົາວັດຖຸບູຮານທີ່ຢູ່ໃນພື້ນດິນເພື່ອປົກປັກຮັກສາໄວ້ຫໍພິພິຕະພັນ.

ວຽກງານການຄົ້ນຄວ້າ ແລະ ສົ່ງເສີມວຽກງານສິລະປະຫັດຖະກຳທີ່ເປັນເອກະລັກຂອງຊາດ ກໍ່ແມ່ນວຽກງານໜຶ່ງທີ່ເປັນວຽກງານທີ່ສຳຄັນ ໂດຍມີການຈັດການວາງສະແດງຜະລິດຕະພັນຫັດຖະກຳ ແລະ ດ້ານວິຈິດສິນຢູ່ພາຍໃນ ແລະ ຕ່າງປະເທດເປັນປົກະຕິ. ວຽກງານການຜະລິດ ແລະ ຮັກສາຟື້ມເອກະສານທີ່ສຳຄັນຂອງຊາດແມ່ນເປັນວຽກງານໜຶ່ງທີ່ໄດ້ຮັບການເອົາໃຈໃສ່. ມາຮອດປີ 2008 ໄດ້ສຳເລັດການຜະລິດຮູບເງົາເອກະສານສາລະຄະດີຕ່າງໆ ທັງໝົດ 14 ເລື່ອງ ແລະ ໄດ້ໂຄສະນາເຜີຍແຜ່ໂດຍກົງຜ່ານທາງໂທລະພາບລາວ ແຕ່ລະຊ່ອງ.

### 3.3.8. ດ້ານກິລາການຍະກຳ

ໃນໄລຍະ 5 ປີ 2006-2010 ການພັດທະນາກິລາການຍະກຳ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາຊັບພະຍາກອນມະນຸດ ແລະ ເຄື່ອນໄຫວເຮັດໜ້າທີ່ສາກົນ ແລະ ພັດທະອາຊຽນໄດ້ດີ ຄື: ໄດ້ປຸກລະດົມຂະບວນຫຼິ້ນກິລາ ເພື່ອສຸຂະພາບ ມິດຕະພາບ ເພື່ອການຮ່ວມມືຢ່າງກວ້າງຂວາງ ໄດ້ຫັນວຽກງານການກິລາໃຫ້ການເປັນຂອງປວງຊົນ ແລະ ການເປັນຄວາມຮັບຜິດຊອບຂອງໝົດທຸກຄົນເທື່ອລະກ້າວ; ໄດ້ນຳເອົາຫຼັກສູດການກິລາເຂົ້າໃນການຮຽນການສອນ ຢູ່ຕາມໂຮງຮຽນ, ສະຖາບັນການສຶກສາຕ່າງໆ ແລະ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ໄດ້ສຳເລັດການຈັດງານມະຫາກຳກິລາແຫ່ງຊາດ ຄັ້ງທີ 8 ທີ່ແຂວງ

ຈຳປາສັກ, ວັນສ້າງກິລາລາວ, ກິລາພື້ນເມືອງກໍ່ໄດ້ຮັບການຟື້ນຟູ, ສົ່ງເສີມ ແລະ ຂະຫຍາຍຕົວຕາມທ້ອງຖິ່ນ ຕ່າງໆໃນຂອບເຂດທົ່ວປະເທດ ແລະ ໄດ້ຜັດປ່ຽນກັນເປັນເຈົ້າພາບ ແລະ ຮັບໃຊ້ວັນສຳຄັນຂອງພັກ, ຂອງ ຊາດ. ພິເສດ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຈັດການແຂ່ງຂັນກິລາ ຊີເກມ ຄັ້ງທີ 25 ປີ 2009 ເປັນ ທີ່ນະຄອນຫຼວງວຽງຈັນ ເຊິ່ງຖືເປັນຄັ້ງປະຫວັດສາດຂອງຊາດລາວ ແລະ ໄດ້ຮັບຜົນສຳເລັດຢ່າງສົມກຽດ ແລະ ສະຫງ່າງາມ ໂດຍສະເພາະແມ່ນຜົນງານຂອງນັກກິລາລາວ ທີ່ສາມາດຍາດມາໄດ້ 33 ຫລຽນຄຳ (ແຜນການ 25 ຫລຽນຄຳ), 25 ຫລຽນເງິນ ແລະ 52 ຫລຽນທອງ ລວມທັງໝົດ 110 ຫລຽນ; ການກຽມຄວາມພ້ອມ ດ້ານຕ່າງໆ, ການຈັດການແຂ່ງຂັນແຕ່ລະປະເພດກິລາ, ພິທີເປີດ-ພິທີປິດການແຂ່ງຂັນເປັນທາງການ ແລະ ການອຳນວຍຄວາມສະດວກດ້ານຕ່າງໆ ແມ່ນໄດ້ຮັບການຍ້ອງຍໍສັນລະເສີນຈາກບັນດາປະເທດເຂົ້າຮ່ວມແຂ່ງ ຂັນ, ສື່ມວນຊົນທັງພາຍໃນ ແລະ ຕ່າງປະເທດເປັນຢ່າງດີ.

ນອກຈາກນັ້ນ, ກໍ່ໄດ້ສົ່ງນັກກິລາເຂົ້າຮ່ວມການແຂ່ງຂັນກິລາປະເພດຕ່າງໆ ຢູ່ຂົງເຂດ ແລະ ພາກພື້ນ ເປັນຕົ້ນແມ່ນ ກິລາອາຊຽນອິນດໍເກມ ຄັ້ງທີ 2 ທີ່ຫມູ່ເກາະມາເກົ໊າ, ຊີເກມຄັ້ງທີ 23 ທີ່ ປະເທດຫວຽດນາມ, ຄັ້ງທີ 24 ທີ່ປະເທດໄທ ແລະ ໂອແລມປິກ ທີ່ປັກກິ່ງ, ອິນດໍເກມ ຫວຽດນາມ ແລະ ກິລາອາຊຽນພາລາເກມ.

### 3.3.9. ດ້ານການສະກັດກັ້ນ ແລະ ຕ້ານໄພສັງຄົມ

ເພື່ອບັນລຸເປົ້າຫມາຍທີ່ວາງໄວ້ໃນແຜນການ 5 ປີຄັ້ງທີ VI (2006-2010) ຂອງພັກ-ລັດ ເວົ້າລວມ, ເວົ້າສະເພາະແມ່ນ ກຳລັງ ປກຊ-ປກສ, ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ບັນດາອົງການຈັດຕັ້ງ ມະຫາຊົນໄດ້ສຸມທຸກຄວາມສາມາດ ແລະ ເຫື່ອແຮງຂອງຕົນໃນການປ້ອງກັນ ແລະ ແກ້ໄຂບັນຫາໄພສັງຄົມ ດ້ວຍຫລາຍວິທີການ, ຕິດພັນກັບການປຸກລະດົມຂົນຂວາຍປະຊາຊົນ ໃຫ້ມີຄວາມສາມັກຄີເປັນຈິດຫນຶ່ງໃຈດຽວ, ເປັນຫູເປັນຕາ ແລະ ເປັນເຈົ້າການໃນການປ້ອງກັນຄວາມປອດໄພ ແລະ ບັນຫາຫຍໍ້ທໍ້ໃນຄອບຄົວ ແລະ ສັງ ຄົມ.

ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ອົງການແນວໂຮມ ແລະ ອົງການຈັດຕັ້ງມະຫາຊົນ ໄດ້ພະ ຍາຍາມເພີ່ມທະວີການເຄື່ອນໄຫວຈັດຕັ້ງບັນດາກິດຈະກຳຕ່າງໆ ໂດຍສະເພາະແມ່ນ ການສຶກສາປຸກລະດົມທຸກ ຊັ້ນຄົນໃຫ້ເຂົ້າໃຈເຖິງນະໂຍບາຍ, ພັນທະເພື່ອຮັບປະກັນການຮ່ວມມື ແລະ ຄວາມສາມັກຄີປອງດອງ. ຊຸກຍູ້ ຂະບວນການໃນການສ້າງເມືອງ, ບ້ານປອດໃສເຂັ້ມແຂງ ໂດຍຖືເອົາການຊຸກຍູ້ການຫັນລົງສູ່ຮາກຖານຂອງທຸກ ພາກສ່ວນຕິດພັນກັບການສ້າງຊີວິດວັດທະນາທຳໃຫມ່.

ບັນຫາປະກົດການຫຍໍ້ທໍ້ທາງສັງຄົມ ເປັນຕົ້ນແມ່ນ ບັນຫາຢາເສບຕິດຢູ່ຊຸມຊົນຕົວເມືອງໃຫຍ່, ໂສເພ ນີ, ຂີ້ລັກງັດແງະ, ຕົ້ມຕຸ໋ນ ໄດ້ຮັບການແກ້ໄຂເປັນກ້າວໆ. ສືບຕໍ່ປັບປຸງຄຸນນະພາບສູນບຳບັດຢາເສບຕິດ ເພື່ອ ສ້າງເງື່ອນໄຂ ແລະ ເພີ່ມປະສິດທິພາບໃນການບຳບັດຜູ້ຕິດຢາເສບຕິດ. ນອກນັ້ນ, ກໍ່ໄດ້ມີຍຸດທະສາດ ຢ່າງ ຈະແຈ້ງ ກ່ຽວກັບການປ້ອງກັນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດຕິດແປດທາງສັງຄົມ ແລະ ພະຍາດເອດສ໌, ໄດ້ສ້າງຕັ້ງຄະນະກຳມະທິການແຫ່ງຊາດເພື່ອການຄວບຄຸມໂລກເອດ. ໄດ້ເພີ່ມທະວີມາດຕະ ການການກວດກາໃຫ້ເຂັ້ມງວດ ເພື່ອສະກັດກັ້ນ ແລະ ຄວາມຄຸມແຫລ່ງການຂົນສົ່ງຢາເສບຕິດຜ່ານຊາຍແດນ, ການກວດກາຊື້ຂາຍຂອງພວກກຸ່ມຄົນທີ່ບໍ່ເຂົ້າໃຈ ແລະ ຫວັງດີຕໍ່ສັງຄົມ ໂດຍການເພີ່ມກຳລັງກວດກາ, ປະ

ກອບອຸປະກອນທີ່ທັນສະໄຫມໃຫ້ແກ່ດ່ານກວດກາຄົນເຂົ້າ-ອອກໃນແຕ່ລະຈຸດ ລວມທັງຫ້ອງການພາສີ. ເພີ່ມ ທະວີການຮ່ວມມືກັບປະເທດເພື່ອນບ້ານ ເຊັ່ນ: ຫວຽດນາມ, ຈີນ, ກຳປູເຈຍ, ໄທ ແລະ ພະມ້າ. ໄດ້ມີການ ຖອດຖອນບົດຮຽນພາຍໃນ ແລະ ຕ່າງປະເທດ ໂດຍສະເພາະແມ່ນ ບັນດາເພື່ອນມິດຍຸດທະສາດຕໍ່ກັບຜົນ ສຳເລັດໃນການສະກັດກັ້ນ ແລະ ຕ້ານໄພສັງຄົມ.

ຄຽງຄູ່ກັບຄວາມຄືບໜ້າດັ່ງກ່າວ, ວຽກງານສະກັດກັ້ນ ແລະ ຕ້ານໄພສັງຄົມ ຍັງເປັນບັນຫາທີ່ທ້າ ທາຍ ແລະ ມີຂໍ້ຈຳກັດຫລາຍດ້ານ ໂດຍສະເພາະແມ່ນ ການແກ້ໄຂປະກົດການຫຍໍ້ທໍ້ຂອງສັງຄົມ, ບັນຫາ ຄວາມບໍ່ສະເຫມີພາບ, ການປະສານສົມທົບລະຫວ່າງສະຖາບັນຄອບຄົວ, ໂຮງຮຽນ ແລະ ເຈົ້າໜ້າທີ່ ແລະ ອຳນາດການປົກຄອງໃນແຕ່ລະຂັ້ນຍັງອ່ອນແອ ແລະ ມີຄວາມເອື່ອຍອີງ ແລະ ຂາດຄວາມເປັນເຈົ້າການ. ວິຖີການແນວໂຮມ ແລະ ວິຖີການຈັດຕັ້ງມະຫາຊົນ ຍັງບໍ່ທັນມີຮູບການເຄື່ອນໄຫວ ແລະ ກິດຈະກຳທີ່ຫລາກ ຫລາຍ, ລັກສະນະສຶກສາອົບຮົມປຸກລະດົມປະຊາຊົນທຸກຊັ້ນຄົນ ໂດຍສະເພາະແມ່ນ ລຸ່ນສືບທອດ ທີ່ຍັງບໍ່ທັນ ຮັບຮູ້ຢ່າງເລິກເຊິ່ງ ແລະ ບໍ່ທັນແຂງແຮງ. ການເຜີຍແຜ່ ແລະ ການໂຄສະນາຊວນເຊື່ອຍັງບໍ່ທັນກວ້າງ ຂວາງ, ປະກົດການຫຍໍ້ທໍ້ໃນວິຖີການຈັດຕັ້ງທຸກຂັ້ນ, ຂະແໜງການ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງຄົບຖ້ວນ ແລະ ກົມກຽວ, ການປະສານສົມທົບເພື່ອແກ້ໄຂບັນຫາທີ່ມີລັກສະນະກວມລວມ ແລະ ກໍລະນີທີ່ບໍ່ເປັນເອກະພາບ, ການເຜີຍແຜ່ ແລະ ການສ້າງສະຕິເຄົ້າລິບ ແລະ ປະຕິບັດກົດຫມາຍ ຍັງບໍ່ທັນຮັດກຸມ ແລະ ເຂັ້ມງວດ, ການ ບໍລິການປະຊາຊົນ ຍັງບໍ່ທັນທົ່ວເຖິງ.

## 3.4. ການສົມທົບລະຫວ່າງການພັດທະນາເສດຖະກິດ-ສັງຄົມກັບການປ້ອງກັນຊາດ-ປ້ອງ ກັນຄວາມສະຫງົບ

ເພື່ອຮັບປະກັນໃຫ້ທົ່ວສັງຄົມ ແລະ ປະເທດຊາດ ມີຄວາມສະຫງົບ ແລະ ຄວາມປອດໄພ ສ້າງເງື່ອນ ໄຂໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຄວາມສະຫງົບໄດ້ສືບຕໍ່ຈັດຕັ້ງປະຕິບັດຕາມຄຳສັ່ງ ແນະນຳຂອງກົມການເມືອງສູນກາງພັກ ເລກທີ 09/ກມສພ ແລະ ຄຳສັ່ງເພີ່ມເຕີມຂອງຄະນະເລຂາທິການ ສູນກາງພັກ ເລກທີ 14/ຄລສພ ແລະ ບັນດາມະຕິຂອງກອງປະຊຸມຄະນະບໍລິຫານງານສູນກາງພັກ ສະໄຫມທີ VIII ໂດຍໄດ້ສຸມໃສ່ຈັດຕັ້ງປະຕິບັດໂຄງການແກ້ໄຂປະກົດການຫຍໍ້ທໍ້ຂອງສັງຄົມ, ໂຄງການຕ້ານອາດສະຍາ ກຳຢ່າງຕັ້ງໜ້າ ເຊິ່ງສາມາດເລີກຮື້ແກ້ໄຂກຸ່ມແກ໊ງກໍ່ການກະທຳຜິດ ແລະ ໄດ້ລົງໂທດຕາມກົດຫມາຍໄດ້ ຫລາຍກຸ່ມ ເຮັດໃຫ້ການກະທຳຜິດຢູ່ບັນດາຕົວເມືອງໃຫຍ່ຫລຸດລົງ; ໄດ້ສຶກສາອົບຮົມໃຫ້ພໍ່ແມ່ປະຊາຊົນ ແລະ ໄວຫນຸ່ມບໍ່ໃຫ້ກະທຳຜິດ ແລະ ມີສະຕິລະວັງຕົວໃນການປົກປັກຮັກສາຊັບສົມບັດຂອງຕົນ. ໄດ້ປຸກລະດົມຂົນ ຂວາຍ ແລະ ຈັດຕັ້ງມະຫາຊົນເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຖານຖານ ເຮັດໃຫ້ ສາມາດຮັກສາຄວາມເປັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ຢ່າງຫມັ້ນຄົງ, ຮັບປະກັນສະຖຽນລະພາບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມໄວ້ໄດ້ຢ່າງຫນັກ ແໜ້ນ ເຊິ່ງໄດ້ກາຍເປັນເງື່ອນໄຂອັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ໄດ້ເອົາໃຈໃສ່ ວຽກ ງານກໍ່ສ້າງຖານຖານ-ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕິດພັນກັບວຽກງານສ້າງບ້ານ ແລະ ກຸ່ມບ້ານພັດທະນາຮັບປະກັນໃຫ້ທ້ອງຖິ່ນ ຕ່າງໄດ້ຮັບການພັດທະນາໄປພ້ອມໆກັບການສ້າງຄວາມເຂັ້ມ ແຂງ ທາງດ້ານການເມືອງ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ນອກຈາກນັ້ນ, ໄດ້ສຶກສາໃຫ້

ຄວາມຮູ້ທາງດ້ານວຽກງານປ້ອງກັນຊາດໃຫ້ກັບນັກສຶກສາໂດຍໄດ້ນຳເອົາວິທີ ແລະ ຫລັກສູດການຮຽນພື້ນຖານທາງການທະຫານບັນຈຸເຂົ້າຫລັກສູດຂອງໂຮງຮຽນອະຊີອະ, ວິທະຍາໄລ ແລະ ມະຫາວິທະຍາໄລຕ່າງໆ ຂອງພາກລັດ.

# 4. ການຄຸ້ມຄອງບໍລິຫານລັດ ໃນກົນໄກເສດຖະກິດຕະຫຼາດຕາມທິດ ສັງຄົມ ນິຍົມ

## ກ. ດ້ານການບູລະນະກົງຈັກ ແລະ ບໍລິຫານຄຸ້ມຄອງລັດ:

ໃນໄລຍະຜ່ານມາ ລັດຖະບານ, ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນໄດ້ຫັນເອົາແນວທາງ, ແຜນນະໂຍບາຍຂອງພັກວາງອອກ ມາເປັນຍຸດທະສາດພັດທະນາຕົນເອງເລື້ອຍ ມາ. ນອກຈາກນັ້ນ ຍັງໄດ້ມີການສ້າງ ແລະ ປັບປຸງດ້ານນິຕິກຳ, ລະບຽບການບໍລິຫານ, ກົງຈັກການຈັດຕັ້ງ ແລະ ແບບແຜນວິທີການເຄື່ອນໄຫວ ເຊິ່ງສະແດງອອກຄື:

- ປັບປຸງກົນໄກການປະສານງານລະຫວ່າງບັນດາກະຊວງ, ຂະແໜງການ ແລະ ກັບອຳນາດການປົກຄອງທ້ອງຖິ່ນດ້ວຍການປະຊຸມລັດຖະບານ-ເຈົ້າແຂວງ, ສ້າງກົນໄກການປົກຄອງ-ຄຸ້ມຄອງລັດຖະກອນ, ກົງຈັກຂອງຂະແໜງການຈຳນວນຫນຶ່ງ ເພື່ອໃຫ້ແທດເໝາະກັບກົນໄກແບບແຜນວິທີເຮັດວຽກຕົວຈິງ; ໄດ້ເຮັດທົດລອງການໂຮມຂະແໜງການເສດຖະກິດ-ແຜນການ-ການເງິນ ໃນຈຳນວນ 40 ກວ່າເມືອງ; ໄດ້ຫັນການຄຸ້ມຄອງຂອງລັດຕາມທິດທາງຂອງກະຊວງ-ອົງການສູນກາງ ເຮັດໜ້າທີ່ດ້ານມະຫາພາກທັງຕິດພັນກັບຮາກຖານ ແລະ ຈຸລະພາກ, ໄດ້ຝຶກອົບຮົມວຽກບໍລິຫານໃຫ້ 140 ເມືອງ; ພ້ອມກັນນັ້ນ, ກໍ່ຍັງໄດ້ສະເໜີຂັ້ນເທິງສັບຊ້ອນພະນັກງານຄືນໃຫມ່.
- ໄດ້ສຳເລັດເບື້ອງຕົ້ນ ຮ່າງຍຸດທະສາດການພັດທະນາການປົກຄອງລັດ ໄລຍະ 2010-2020, ສຳເລັດການຄົ້ນຄ້ວາຮ່າງຍຸດທະສາດການພັດທະນາການບໍລິຫານລັດ ໄລຍະ 2010-2015; ໄດ້ຮັບຮອງ ແລະ ປະກາດໃຊ້ດຳລັດ ວ່າດ້ວຍຄົ້ມມະນາຄົ້ມ;
- ໄດ້ປັບປຸງສຳເລັດໂດຍພື້ນຖານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ 8 ກະຊວງທີ່ມີຄວາມຈຳເປັນຕ້ອງໄດ້ປັບປຸງດ່ວນ; ໄດ້ປັບປຸງ ແລະ ຈັດວາງລະບົບກົງຈັກການຈັດຕັ້ງທີ່ຮັບຜິດຊອບການເກັບລາຍຮັບເຂົ້າງົບປະມານແຫ່ງລັດຄືນໃໝ່ ເຊັ່ນ: ຫັນເອົາວຽກງານພາສີ, ອາກອນ ແລະ ຄັງເງິນແຫ່ງຊາດ ຂຶ້ນກັບສາຍຕັ້ງ; ໄດ້ປັບປຸງບັນດາອົງການທີ່ຂຶ້ນກັບສຳນັກງານນາຍົກລັດຖະມົນຕີຈຳນວນໜຶ່ງ; ໄດ້ປັບປຸງພາລະບົດບາດຂອງມະຫາວິທະຍາໄລຈຳນວນໜຶ່ງ; ໄດ້ສຳເລັດການສ້າງຕັ້ງເມືອງໃໝ່ຈຳນວນໜຶ່ງ.
- ກົດໝາຍ ແລະ ນິຕິກຳ ຈຳນວນຫຼາຍ ໄດ້ຖືກພິຈາລະນາຮັບຮອງ ແລະ ປະກາດໃຊ້ ເຊິ່ງເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

## ຂ. ດ້ານນິຕິບັນຍັດ:

ອົງການປົກຄອງຂັ້ນຕ່າງໆໄດ້ເອົາໃຈໃສ່ແກ້ໄຂບັນຫາຄວາມຍຸຕິທຳ, ຂໍ້ຂັດແຍ່ງຄະດີຄວາມຕ່າງໆໃນສັງຄົມ, ເສີມສ້າງຄວາມສາມັກຄີປອງດອງໃນທົ່ວສັງຄົມ.

ລະບົບຍຸຕິທຳ ແລະ ກົດໝາຍໄດ້ຮັບການປັບປຸງໂດຍຕິດພັນກັບ 4 ເນື້ອໃນ 4 ຄາດໝາຍໃນວຽກງານສ້າງບ້ານ ແລະ ກຸ່ມບ້ານພັດທະນາ ເຊັ່ນ: ການສ້າງບ້ານປອດຄະດີ, ໝ່ວຍໄກ່ເກ່ຍຂັ້ນບ້ານ, ວຽກງານ

ສະຖິຕິເຄົາລົບກົດໝາຍ; ເອົາໃຈໃສ່ສ້າງພະນັກງານກົດໝາຍໃນລະບົບຊັ້ນກາງ 2 ປີ ເຊິ່ງເປົ້າໝາຍແມ່ນ ນັກຮຽນທີ່ຮຽນຈົບ ມ.6 ທີ່ມາຈາກເມືອງທຸກຍາກຕ່າງໆ.

ໄດ້ສຳເລັດການສ້າງຍຸດທະສາດພັດທະນາຂະແໜງຍຸຕິທຳໃຫ້ຄ່ອງຕົວ ແລະ ແທດເໝາະກັບສະ ພາບຕົວຈິງຂອງປະເທດຫລາຍຂຶ້ນ, ໂດຍເອົາໃຈໃສ່ການໂຄສະນາເຜີຍແຜ່ລະບຽບກົດໝາຍຕ່າງໆນັບມື້ນັບ ກວ້າງຂວາງ, ສາມາດສ້າງຮ່າງກົດໝາຍຕ່າງໆຂອງລັດຖະບານຜ່ານທາງວິທະຍຸກະຈາຍສຽງ. ໂທລະພາບ, ໜັງສືພິມຕ່າງໆນັບມື້ນັບກວ້າງຂວາງ, ສາມາດສ້າງຮ່າງກົດໝາຍ ແລະ ປັບປຸງກົດໝາຍທີ່ໃຊ້ແລ້ວ ເພື່ອ ນຳມາຜ່ານກອງປະຊຸມສະພາແຫ່ງຊາດຮັບຮອງເອົາໄດ້ຈຳນວນ 27 ສະບັບ.

ສ້າງລັດຖະບັນຍັດ 06 ສະບັບ, ດຳລັດ 64 ສະບັບ ແລະ ນິຕິກຳ 127 ສະບັບ. ສາມາດຈັດຕັ້ງ ປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດ ມີ 3.710 ເລື່ອງ, ໃນນັ້ນ ຄະດີອາຍາ 1.138 ເລື່ອງ ແລະ ຄະດີແພ່ງ 2.032 ເລື່ອງ. ປະຈຸບັນທົ່ວປະເທດມີບ້ານປອດຄະດີ ຈຳນວນ 2.472 ບ້ານ ແລະ ປັບປຸງ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໄດ້ຈຳນວນ 2.515 ໜ່ວຍ.

## ຄ. ດ້ານຕຸລາການ:

ເພື່ອຮັບປະກັນໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ຕິດພັນກັບການປຸກລະດົມປະຊາຊົນ ສ້າງສາ ແລະ ພັດທະນາປະເທດຊາດໃຫ້ມີຄວາມສີວິໄລ, ໃນໄລຍະຜ່ານມາ (2006-2009) ແມ່ນໄດ້ມີການ ຕິດຕາມກວດກາ ແລະ ແກ້ໄຂຄຳຮ້ອງ ທັງໝົດໄດ້ 4.352 ເລື່ອງ ເທົ່າກັບ 84,03% ຂອງຄຳຮ້ອງທັງໝົດ, ຕິດຕາມ ແລະ ກວດກາ ອົງການສືບສວນ-ສອບສວນ ແລະ ການສັ່ງຟ້ອງ ໂດຍສະເພາະແມ່ນ ການແກ້ໄຂ ຄະດີໃນຂັ້ນອົງການໄອຍະການຂັ້ນແຂວງ ແລະ ນະຄອນຫລວງໄດ້ທັງໝົດ 10.424 ເລື່ອງ ເທົ່າກັບ 78,56% ຂອງຈຳນວນຄະດີທັງໝົດ, ອົງການໄອຍະການປະຊາຊົນຂັ້ນອຸທອນ ໄດ້ 2.691 ເລື່ອງ (ລວມ 3 ພາກ) ເທົ່າກັບ 76,88% ຂອງຈຳນວນທັງໝົດ, ໄອຍະການທະຫານຂັ້ນສູງ 133 ເລື່ອງເທົ່າກັບ 82,09% ຂອງຈຳນວນທັງໝົດ ແລະ ໄອຍະການປະຊາຊົນສູງສຸດ 2.822 ເລື່ອງ ເທົ່າກັບ 84,26% ຂອງຈຳນວນ ຄະດີທັງໝົດ.

ນອກຈາກນັ້ນ, ຍັງໄດ້ດຳເນີນການຕິດຕາມກວດກາການດຳເນີນຄະດີຢູ່ສານ ແລະ ການປະຕິບັດກົດ ໝາຍໃນການຈັດຕັ້ງປະຕິບັດຄຳຕັດສິນ ຫລື ຄຳພິພາກສາຂອງສານ ລວມທັງການກວດກາການປະຕິບັດກົດ ໝາຍຢູ່ສະຖານທີ່ກັກຂັງ, ກັກຕົວ, ຄ້າຍດັດສ້າງ, ສູນດັດສ້າງ ແລະ ສະຖານທີ່ບັງຄັບອື່ນໆຂອງສານກໍ່ໄດ້ຮັບ ການພັດທະນາດີຂຶ້ນ; ພ້ອມດຽວກັນນັ້ນ, ໃນໄລຍະ 2006-2010 .ກໍ່ໄດ້ມີການປະຕິບັດການຄົ້ນຄວ້າ ແລະ ສ້າງນິຕິກຳຫລາຍສະບັບກ່ຽວກັບການອອກຂໍ້ກຳນົດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການ ໄອຍະການປະຊາຊົນແຕ່ລະຂັ້ນ, ບັນດາຂໍ້ກຳນົດ ແລະ ຂໍ້ແນະນຳດ້ານວິຊາການ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ການດຳເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

## ງ. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ:

ການຜັນຂະຫຍາຍແຜນການ 5 ປີ ເປັນແຜນງານ, ໂຄງການ ແລະ ກິດຈະກຳໄດ້ກາຍເປັນເຄື່ອງມື ຮັບໃຊ້ການຄຸ້ມຄອງ, ການດຸນດ່ຽງມະຫາພາກ ໂດຍສະເພາະແມ່ນ ການລະດົມແຫລ່ງທຶນ. ເພື່ອຮັບປະກັນ ການຈັດຕັ້ງປະບັດ ແລະ ການນຳໃຊ້ແຫລ່ງທຶນຢ່າງມີປະສິດທິຜົນ, ໄດ້ນຳໃຊ້ກົນໄກສ້າງແຜນປະຈຳປີ, ການ ປະເມີນຜົນການຈັດຕັ້ງປະຕິບັດປະຈຳປີ; ໃນນັ້ນ, ໄດ້ມີການຕີລາຄາຜົນສ□າເລັດ 6 ເດືອນຕົ້ນປີ ແລະ ນຳ

ສະເໜີບັນດາມາດຕະການໃນການຈັດຕັ້ງປະຕິບັດ 6 ເດືອນທ້າຍປີ ເພື່ອຮັບປະກັນການບັນລຸເປົ້າໝາຍ ແລະ ແກ້ໄຂບັນຫາຫຍຸ້ງຍາກ. ພ້ອມດຽວກັນນັ້ນ, ເມື່ອເຫັນວ່າຈຳເປັນກໍ່ມີການສະເໜີດັດແກ້ງົບປະມານ ໃນແຕ່ລະໄລຍະຕາມຄວາມເໝາະສົມ. ມີການຈັດກອງປະຊຸມແຜນການ ແລະ ການເງິນ ປະຈຳປີ ຊຶ່ງມີບັນດາກະຊວງ, ຂະແໜງການ ແລະ ອົງການທຽບເທົ່າໃນຂອບເຂດທົ່ວປະເທດເຂົ້າຮ່ວມ. ນອກຈາກນັ້ນ, ກໍ່ໄດ້ຈັດກອງປະຊຸມກັບນັກທຸລະກິດ, ຜູ້ປະກອບການ ແລະ ຜູ້ໃຫ້ທຶນຢ່າງເປັນປະຈຳ ແລະ ໃນກໍລະນີ ຮີບດ່ວນ ເຊັ່ນ: ການແກ້ການວິກິດການທາງດ້ານເສດຖະກິດການເງິນ ແລະ ທຳມະຊາດເພື່ອປຶກສາຫາລືຢ່າງກົງໄປກົງມາ ແລະ ຊອກຫາມາດຕະການທີ່ເໝາະສົມ ເພື່ອແກ້ໄຂຄວາມຫຍຸ້ງຍາກຂອງພາກທຸລະກິດ ແນໃສ່ການບັນລຸເປົ້າໝາຍ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ ແລະ 5 ປີ ຢ່າງມີປະສິດທິຜົນ. ເຖິງຢ່າງໃດກໍ່ຕາມ, ໃນການຈັດຕັ້ງປະຕິບັດການຕິດຕາມ, ກວດກາ ແລະ ປະເມີນຜົນ ຍັງມີຄວາມຫຍຸ້ງຍາກ ແລະ ຈຳກັດ ເນື່ອງຈາກລະບົບການຕິດຕາມດັ່ງກ່າວ ຍັງບໍ່ທັນເປັນລະບົບ, ຄຸນນະ ພາບ ຂອງຂໍ້ມູນຂ່າວສານຍັງຈຳກັດ ແລະ ຮຽກຮ້ອງໃຫ້ມີການພັດທະນາ.

## 5. ການພັດທະນາພາກເອກະຊົນ

ເພື່ອບັນລຸເປົ້າໝາຍໃນການພັດທະນາເອກະຊົນ ແມ່ນໄດ້ສ້າງ ແລະ ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສົ່ງເສີມພາກເອກະຊົນພາຍໃນ ແລະ ດຶງດູດການລົງທຶນຈາກຕ່າງປະເທດ ໂດຍໄດ້ມີການປັບປຸງບັນດາລະບຽບການ, ກົດໝາຍ ແລະ ຂັ້ນຕອນຕ່າງໆໃນການສ້າງຕັ້ງວິສາຫະກິດ, ຫັນລັດວິສາຫະກິດໄປສູ່ກົນໄກໄລ່ລຽງທຸລະກິດ ໂດຍຜ່ານຕະຫຼາດທີ່ມີການດັດສົມຂອງລັດການມອບສິດຄວາມເປັນເຈົ້າຕົນເອງທາງດ້ານການເງິນ, ແຜນການ ແລະ ຕະຫຼາດຈົນສາມາດຫຼຸດຜ່ອນການບໍລິຫານແບບເກື້ອກູນ.

### ກ. ນະໂຍບາຍລະບຽບການ ແລະ ພາກປະຕິບັດ

- ໄດ້ເອົາໃຈໃສ່ປັບປຸງ ແລະ ສ້າງພາກສ່ວນເສດຖະກິດຂອງລັດ ໃຫ້ມີປະສິດທິຜົນສູງຂຶ້ນເລື້ອຍໆ, ໄດ້ຄົ້ນຄວ້າກຳນົດການຈັດຕັ້ງຄຸ້ມຄອງລັດວິສາຫະກິດຄືນໃໝ່ ຕາມທິດຫັນໄປສູ່ລະບອບເປັນເຈົ້າຕົນ ເອງທາງດ້ານການເງິນຢ່າງຂາດຕົວ. ຫຼຸດຜ່ອນການເກື້ອກູນຕ່າງໆຂອງລັດ, ແກ້ໄຂບັນຫາການຫຼຸບ ທຶນ ແລະ ໜີ້ສິນຄຸມເຄືອຂອງລັດວິສາຫະກິດໃຫ້ໝົດສິ້ນໄປ
- ນະໂຍບາຍສົ່ງເສີມ ແລະ ຂະຫຍາຍເສດຖະກິດຫຼາຍພາກສ່ວນ ແລະ ທຸກພາກສ່ວນ ລ້ວນແຕ່ມີ ສິດເສລີພາບຕໍ່ໜ້າກົດໝາຍ, ປັບປຸງ ແລະ ດັດແປງ ພາກສ່ວນເສດຖະກິດຂອງລັດ, ສົ່ງເສີມ ເສດຖະກິດຄອບຄົວຂອງຊາວກະສິກອນ ແລະ ເສດຖະກິດເອກະຊົນໄດ້ຖືກຈັດຕັ້ງປະຕິບັດ.
- ລັດໄດ້ນຳໃຊ້ບັນດານະໂຍບາຍໄມ້ງັດທາງດ້ານການເງິນ ແລະ ທະນາຄານ ໂດຍແນໃສ່ຊຸກຍູ້ການ ຜະລິດ-ທຸລະກິດ ໂດຍປະຕິບັດຕາມທິດທາງ ຫຼຸດຜ່ອນທຶນຈາກການລົງທຶນໂດຍກົງ ຂອງງົບປະມານ, ແຕ່ເພີ່ມການລົງທຶນດ້ວຍສິນເຊື່ອ ແລະ ທຶນທີ່ມີເອງຂອງວິສາຫະກິດ
- ພາກສ່ວນເສດຖະກິດເອກະຊົນ, ເອກະເທດ ໄດ້ມີບົດບາດສຳຄັນ ແລະ ຍາວນານຕໍ່ການພັດທະນາ ເສດຖະກິດ ແລະ ໄດ້ຮັບການສົ່ງເສີມ-ປົກປ້ອງ ຈາກລັດ. ບັນດາພາກສ່ວນເສດຖະກິດ ແລະ ຮູບ ການຈັດຕັ້ງເສດຖະກິດເຫຼົ່ານັ້ນທັງແຂ່ງຂັນກັນ, ຮ່ວມມືກັນ, ສຳພັນຮ່ວມທຸລະກິດດ້ວຍຮູບແບບບໍລິ ສັດຫຸ້ນສ່ວນ ແລະ ອື່ນໆ ຕາມຄວາມຮຽກຮ້ອງຕ້ອງການພາວະວິໄສ.

## ຂ. ການປັບປຸງຂອບກົດໝາຍ ແລະ ນິຕິກຳ

- ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຂອງຕ່າງປະເທດ ແລະ ນະໂຍບາຍທີ່ຈຳເປັນ ເພື່ອສ້າງ ເງື່ອນໄຂສະດວກໄດ້ຮັບການປັບປຸງໃຫ້ແທດເໝາະໃນແຕ່ລະໄລຍະ ແລະ ລົບລ້າງລະບຽບການອັນ ບໍ່ ຈຳອັນບໍ່ສອດຄ່ອງ ແລະ ສ້າງຄວາມສັບສົນໃຫ້ແກ່ການລົງທຶນຂອງຕ່າງປະເທດ, ກົດໝາຍການ ລົງທຶນສະບັບໃໝ່ຖືກຮັບຮອງ ແລະ ປະກາດໃຊ້.
- ໄດ້ປັບປຸງນະໂຍບາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ວິທີເຮັດວຽກໃຫ້ກະທັດຮັດ, ຮັດກຸມ ແລະ ວ່ອງໄວ ເຮັດໃຫ້ນັກລົງທຶນຕ່າງປະເທດມີຄວາມໝັ້ນໃຈ ແລະ ມີຄວາມພໍໃຈຕໍ່ການຮ່ວມມື ແລະ ລົງທຶນຢູ່ປະເທດເຮົາ.
- ໄດ້ສ້າງລະບົບກົດໝາຍ ແລະ ລະບຽບການຄຸ້ມຄອງຂອງລັດທີ່ຮັບໃຊ້ໃນຂົງເຂດເສດຖະກິດໃຫ້ມີ ຄວາມສອດຄ່ອງກັບກົດເກນພາວະວິໄສ ແລະ ກົນໄກຕະຫຼາດ ເຊັ່ນ: ລະບຽບການບໍລິການ ແລະ ການຄຸ້ມຄອງຂອງລັດໃຫ້ມີຄວາມໂປ່ງໃສເປັນກ້າວໆ ແລະ ການຫັນແນວທາງ, ແຜນນະໂຍບາຍ ຂອງພັກໃນທຸກດ້ານໃຫ້ກາຍເປັນກົດໝາຍ, ເປັນນະໂຍບາຍອັນລະອຽດທັງດຳເນີນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດນັບມື້ນັບຄົບຖ້ວນ.
- ກົດໝາຍວ່າດ້ວຍແຮງງານ ໄດ້ກາຍເປັນນິຕິກຳພື້ນຖານໃຫ້ແກ່ການເຄື່ອນໄຫວໃນຕະຫຼາດແຮງງານ ອັນເປັນເງື່ອນໄຂໃນການສົ່ງເສີມການຂະຫຍາຍຕົວຂອງພາກເອກະຊົນ ໃຫ້ນັບມື້ນັບດີຂຶ້ນ.
- ກົດໝາຍວ່າດ້ວຍທະນາຄານແຫ່ງລັດ, ກົດໝາຍວ່າດ້ວຍການປະກັນໄພ, ກົດໝາຍວ່າດ້ວຍວິສາຫະ ກິດ; ນອກນັ້ນ, ກໍ່ຍັງມີດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນໄຫວ ຂອງທະນາຄານທຸລະກິດ; ດຳ ລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ດຳລັດວ່າດ້ວຍການຄຸ້ມຄອງການຈໍລະຈອນເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ, ດຳລັດວ່າດ້ວຍ ການເຊົ່າສິນເຊື່ອ, ດຳລັດວ່າດ້ວຍໂຮງຊວດຈຳ ແລະ ອື່ນໆ.
- ບັນດາພາກສ່ວນເສດຖະກິດຕ່າງໆ ໄດ້ມີການປະກອບສ່ວນ ແລະ ເປັນພາກສ່ວນໜຶ່ງທີ່ສຳຄັນໃນ ລະບົບເສດຖະກິດແຫ່ງຊາດ ຂອງປະເທດເຮົາ ເປັນຕົ້ນແມ່ນການປະຕິບັດພັນທະດ້ານຕ່າງໆຕໍ່ ງົບປະມານ
- ອຸປະສັກຕ່າງໆທີ່ຂັດຂວາງການຈໍລະຈອນສິນຄ້າໃນທົ່ວປະເທດໃນເມື່ອກ່ອນໄດ້ຮັບການແກ້ໄຂເທື່ອລະ ກ້າວເຮັດໃຫ້ຕະຫຼາດເຄື່ອນໄຫວຢ່າງມີຊີວິດຊີວາ, ການເຊື່ອມໂຍງເຂົ້າກັບຕະຫຼາດສາກົນມີບາດກ້າວ ຂະຫຍາຍຕົວຢ່າງຕັ້ງໜ້າ ແລະ ສາມາດຍາດແຍ່ງເອົາສ່ວນແບ່ງຂອງຕະຫຼາດ ແລະ ຜົນປະໂຫຍດ ໄດ້ດີພໍສົມຄວນ.
- ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການເອົາໃຈໃສ່ຫລາຍຂຶ້ນ. ດຳລັດວ່າດ້ວຍການສົ່ງ ເສີມ ແລະ ກາງ ໄດ້ຖືກຈັດຕັ້ງປະຕິບັດຢ່າງກວ້າງຂວາງ ແລະ ການເປັນພື້ນຖານໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ ແກ່ການແຂ່ງຂັນໃນລະດັບໃດໜຶ່ງ, ການເຂົ້າເຖິງຕະຫລາດ, ການ ເຂົ້າເຖິງສິນເຊື່ອ ແລະ ລະບົບການເງິນ, ພ້ອມທັງເປັນການຊຸກຍູ້ ແລະ ຄວາມກະຕືລືລົ້ນໃຫ້ແກ່ ຜູ້ ປະກອບການ.

**ຄ. ຂໍ້ມູນຂ່າວສານແລະໃຫ້ຄຳປຶກສາ**

- ໄດ້ມີການຈັດພິມເຜີຍແຜ່ກົດຫມາຍທັງສະບັບທີ່ເປັນ ພາສາລາວ ແລະ ອັງກິດ. ໄດ້ເປີດກວ້າງບັນດາ ກົນໄກການປະສານງານ ແລະ ການພົບປະລະຫວ່າງພາກລັດ ແລະ ເອກະຊົນ ເພື່ອແກ້ໄຂຂໍ້ຈຳກັດ ທາງທຸລະກິດ ແລະ ໄດ້ຈັດຕັ້ງປະຕິບັດຂັ້ນສູນກາງ ແລະ ທ້ອງຖິ່ນ.
- ໄດ້ຈັດພິມເຜີຍແຜ່ ເປັນປະຈຳກ່ຽວກັບຂໍ້ມູນສະຖິຕິດ້ານມະຫາພາກ ແລະ ການຜະລິດຂະແຫນງການ, ການຈັດພິມວາລະສານກ່ຽວກັບການລົງທຶນ ແລະ ອື່ນໆ.

ພ້ອມນັ້ນ, ການພັດທະນາພາກເອກະຊົນ ກໍ່ໄດ້ເຮັດໃຫ້ ຕະຫລາດສິນຄ້າການບໍລິການ, ຕະຫລາດ ການ ເງິນ (ທຶນ), ຕະຫລາດທີ່ດິນ ແລະ ຕະຫລາດເທັກໂນໂລຊີ ໄດ້ຮັບການພັດທະນາ ແລະ ໃນທາງ ກົງກັນຂ້າມ ຕະຫລາດ ກໍ່ສະຫນັບສະຫນູນການພັດທະນາພາກເອກະຊົນ. ເຖິງຢ່າງໃດກໍ່ຕາມ, ຜົນສຳເລັດ ການພັດທະນາ ຕະຫລາດແຕ່ປະເທດແມ່ນແຕກຕ່າງກັນ.

***ຕະຫຼາດສິນຄ້າ ແລະ ບໍລິການ*** ໄດ້ເກີດຂຶ້ນ ແລະ ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະ ພາບ ໄດ້ມີການຂະຫຍາຍຕົວອອກໃນຫຼາຍທິດ, ຫຼາຍຮູບແບບ ແລະ ເຮັດໃຫ້ການພົວພັນດ້ານການຄ້າ ໄດ້ຮັບ ການຂະຫຍາຍຕົວເຊັ່ນກັນ.

***ຕະຫຼາດແຮງງານ*** ໄດ້ຖືກຮັບຮູ້ຢ່າງເປັນທາງການ ວ່າເປັນຕະຫຼາດປັດໄຈການຜະລິດທີ່ສຳຄັນທີ່ ສຸດ ໃຫ້ບັນດາການເຄື່ອນໄຫວເສດຖະກິດ ແຕ່ກໍ່ບໍ່ທັນໄດ້ພັດທະນາຢ່າງເຕັມສ່ວນ. ໄດ້ສ້າງຕັ້ງລະບົບພື້ນຖານ ໂຄງລ່າງ ຂອງຕະຫຼາດແຮງງານ ເຊັ່ນ: ການໃຫ້ຄຳແນະນຳ ແລະ ການຈັດຫາວຽກເຮັດງານທຳເປັນຕົ້ນ; ນອກນັ້ນ, ກໍ່ຍັງມີບັນດາຮູບການຕ່າງໆເພື່ອແລກປ່ຽນການບໍລິການແຮງງານ ກໍ່ຄ່ອຍໆຖືກສ້າງຕັ້ງ ແລະ ເຄື່ອນໄຫວ.

***ຕະຫຼາດການເງິນ*** ໄດ້ຮັບການພັດທະນາເທື່ອລະກ້າວ ແລະ ໄດ້ມີການເປີດກວ້າງທາງດ້ານການ ແຂ່ງຂັນຂອງບັນດາທຸລະກິດທະນາຄານ. ປະຈຸບັນ ສປປ ລາວ ມີທະນາຄານທຸລະກິດຫຼາຍກວ່າ 22 ແຫ່ງ ແລະ ມີສາຂາຂອງທະນາຄານຫຸ້ນສ່ວນ, ເອກະຊົນ ແລະ ສາຂາຂອງຕ່າງປະເທດ ໃນທົ່ວປະເທດ 65 ແຫ່ງ. ນອກນີ້, ສະຖາບັນການເງິນຈຸລະພາກ ທີ່ໄດ້ຮັບການສຳຫຼວດທັງໝົດມີ 5.000 ກວ່າແຫ່ງ, ມີການເຄື່ອນ ໄຫວກວມ 50% ຂອງຈຳນວນທັງໝົດໃນທົ່ວປະເທດ. ລະບົບການບໍລິການຊຳລະສະສາງ ແລະ ການຫັນ ເປັນທັນສະໄໝຂອງລະບົບທະນາຄານ ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງເຊັ່ນ: ການພັດທະນາລະບົບໂອນ ເງິນ, ການບໍລິການຊຳລະດ້ວຍບັດເອເລັກໂຕຣນິກຕ່າງໆ.

***ຕະຫຼາດເຕັກໂນໂລຊີ*** ມາເຖິງປະຈຸບັນ ສາມາດເວົ້າໄດ້ວ່າ ຕະຫຼາດວິທະຍາການຍັງບໍ່ໄດ້ຖືກສ້າງ ຂຶ້ນ ຢ່າງແທ້ຈິງໃນປະເທດລາວ ເຖິງຈະມີນິຕິກຳຈຳນວນໜຶ່ງກ່ຽວກັບຊັບສິນທາງປັນຍາ, ແຕ່ບໍ່ທັນຖືກນຳໃຊ້ ແລະ ຈັດຕັ້ງປະຕິບັດ.

***ຕະຫຼາດທີ່ດິນ*** ທີ່ເກີດຂຶ້ນໃນຂົງເຂດທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມທັງຢູ່ໃນເຂດຕົວເມືອງ, ເຂດຊານເມືອງ ແລະ ເຂດຊົນນະບົດ ປະກອບມີຕະຫຼາດການເຊົ່າທີ່ດິນບຸກຄົນ, ຕະຫຼາດການເຊົ່າ ຫຼື ສຳປະທານທີ່ດິນລັດ, ການນຳໃຊ້ທີ່ດິນຄ້ຳປະກັນການກູ້ຢືມ, ຕະຫຼາດການຂາຍສິດນຳໃຊ້ທີ່ດິນ ແລະ ຕະຫຼາດສິນເຊື່ອ ກ່ຽວກັບທີ່ດິນ. ຕະຫຼາດທີ່ດິນທີ່ເກີດຂຶ້ນໃນຂົງເຂດທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມ, ມີການພັດທະນາພື້ນຖານໂຄງລ່າງຕ່າງໆເຊັ່ນ: ຖະໜົນຫົນທາງ, ໄຟຟ້າ ແລະ ນ້ຳປະປາ ໃນເຂດຕົວເມືອງ, ຊານເມືອງ ແລະ ຊົນນະບົດ.

## 6. ການປະຕິບັດ 11 ແຜນງານ ແລະ 111 ໂຄງການ

ຜ່ານການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເຫັນວ່າຂະແໜງການ ແລະ ທ້ອງຖິ່ນໄດ້ຜັນຂະຫຍາຍ 11 ແຜນງານ ແລະ 111 ໂຄງການບູລິມະສິດຂອງລັດຖະບານ ເຂົ້າໃນພາກປະຕິບັດຕົວຈິງ ເຮັດໃຫ້ແຜນງານ ແລະ ໂຄງການສ່ວນໃຫຍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ເປັນຕົ້ນ ແຜນງານຮັກສາສະເຖຍລະພາບ ແລະ ຄວາມສະຫງົບຮອບດ້ານ, ແຜນງານພັດທະນາກະສິກຳຮອບດ້ານ, ແຜນງານການ ຄຸ້ມຄອງປ່າໄມ້ ແລະ ອຸດສາຫະກຳໄມ້, ແຜນງານສ້າງພື້ນຖານອຸດສາຫະກຳແຫ່ງຊາດ ແລະ ສົ່ງເສີມຫັດຖະ ກຳ, ແຜນງານສົ່ງເສີມການທ່ອງທ່ຽວ ແລະ ການບໍລິການຜ່ານ, ແຜນງານການຮ່ວມມື ແລະ ເຊື່ອມໂຍງເສດຖະກິດກັບຕ່າງປະເທດ ແລະ ສົ່ງເສີມການລົງທຶນ, ແຜນງານດ້ານຄົມມະນາຄົມຂົນສົ່ງ ແລະ ການຕິດຕໍ່ສື່ສານ, ແຜນງານເພີ່ມປະສິດທິພາບດ້ານການຄຸ້ມຄອງເສດຖະກິດມະຫາພາກ, ແຜນງານພັດທະນາຊັບພະຍາກອນມະນຸດ ແລະ ວັດທະນະທຳ-ສັງຄົມ ແລະ ແຜນງານປັບປຸງ-ຍົກລະດັບປະສິດທິພາບຂອງການບໍລິຫານລັດ. ເຖິງຢ່າງໃດກໍ່ຕາມ, ກົນໄກການຕິດຕາມ ແລະ ປະເມີນຜົນ ຍັງບໍ່ທັນຖືກສ້າງຕັ້ງຂຶ້ນຢ່າງເປັນລະບົບ.

## 7. ສັງລວມຜົນສຳເລັດທີ່ພົ້ນເດັ່ນ ແລະ ສາຍເຫດພາໃຫ້ບັນລຸຜົນ

### 7.1. ຜົນສຳເລັດທີ່ພົ້ນເດັ່ນ:

- ປະເທດເຮົາມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ມີຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ. ລະບົບການບໍລິຫານການປົກຄອງ, ລະບຽບກົດໝາຍປະກອບສ້າງຂຶ້ນເປັນພື້ນຖານໃຫ້ການພັດທະນາ ແລະ ຄຸ້ມຄອງສັງຄົມໃນປະເທດ.

- ໂຄງປະກອບເສດຖະກິດແຫ່ງຊາດ: ກະສິກ□ຳ-ປ່າໄມ້, ອຸດສາຫະກຳ ແລະ ບໍລິການເປັນຕົ້ນເປັນໂຕຂຶ້ນຢ່າງຈະແຈ້ງ, ພື້ນຖານເສດຖະກິດທຳມະຊາດ-ເຄິ່ງທຳມະຊາດຄ່ອຍຫັນມາສູ່ການຜະລິດສິນຄ້າເປັນຂັ້ນຕົ້ນ, ກົນໄກເສດຖະກິດຕະຫລາດ ທີ່ມີຫລາຍພາກສ່ວນຂະຫຍາຍຕົວໄປພ້ອມໆກັບການມີກົນໄກການວາງແຜນ (ການຄຸ້ມຄອງ); ກຳລັງແຮງສັງລວມຂອງສັງຄົມ, ແຫລ່ງຊັບພະຍາກອນທຳມະຊາດ, ຄວາມສາມາດບົ່ມຊ້ອນພາຍໃນຖືກຂຸດຄົ້ນມານຳໃຊ້; ບັນດາຄາດໝາຍໃຫຍ່ດ້ານເສດຖະກິດ-ສັງຄົມ ທີ່ໄດ້ກຳນົດໃວ້ໃນແຜນການ 5 ປີຄັ້ງທີ VI ບັນລຸຜົນສ່ວນໃຫຍ່. ອັນສຳຄັນ, ພວກເຮົາສາມາດຜ່ານຜ່າຜົນກະທົບຈາກໄພທຳມະຊາດ ຮ້າຍແຮງສອງຄັ້ງ ແລະ ຜ່ານຜ່າ, ຫລຸດຜ່ອນຜົນກະທົບຈາກວິກິດການການເງິນໂລກໄດ້ໃນລະດັບດີ.

- ຄວາມທຸກຍາກຂອງປະຊາຊົນຫຼຸດລົງ, ລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງໃຫ້ດີຂຶ້ນກ້າວໜຶ່ງ, ຖັນແຖວພະນັກງານ, ບຸກຄະລາກອນເຕີບໃຫຍ່ ໃນ

ທຸກຂົງເຂດ, ຂະແໜງການ. ບັນຍາກາດທົ່ວສັງຄົມ, ຄວາມເປັນເຈົ້າຕົນເອງຂອງປະຊາຊົນ, ຊັ້ນຄົນຕ່າງໆ ສູງຂຶ້ນ, ລະດັບດັດສະນີໝາຍການນຳໃຊ້ເຕັກໂນໂລຊີຂ່າວສານຢູ່ໃນລະດັບດີ.

- ການພົວພັນຮ່ວມມືເສດຖະກິດກັບປະເທດໃກ້ຄຽງ, ພາກພື້ນ, ສາກົນ, ກັບຄູ່ຮ່ວມພັດທະນາ ແລະ ການເຊື່ອມໂຍງກັບສາກົນໄດ້ຮັບການເສີມຂະຫຍາຍທັງທາງກວ້າງ ແລະ ທາງເລິກ, ທັງສອງຝ່າຍ ແລະ ຫລາຍຝ່າຍ ເຊິ່ງໄດ້ນຳເອົາປະໂຫຍດມາໃຫ້ຊາດເຮົາ.

## 7.2. ສາເຫດທີ່ພາໃຫ້ໄດ້ຮັບຜົນສ□າເລັດ:

ຜ່ານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010) ສາມາດ ສະຫລຸບຕີລາຄາບັນດາສາເຫດທີ່ພາໃຫ້ມີຜົນສຳເລັດໄດ້ດັ່ງນີ້ :

- ແນວທາງການເມືອງທີ່ກຳນົດໄວ້ໃນມະຕິຕ່າງໆຂອງພັກ ເປັນຕົ້ນ ມະຕິກອງປະຊຸມໃຫຍ່ຄັ້ງທີ 8 ແມ່ນຖືກຕ້ອງ ແລະ ການຊີ້ນຳ-ນຳພາຂອງສູນກາງພັກ ສອດຄ່ອງກັບສະພາບພາຍໃນ ແລະ ສະພາບແວດ ລ້ອມສາກົນ.

- ສະພາແຫ່ງຊາດ, ລັດຖະບານພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ເປັນໄປ ຕາມລະບຽບການ, ກົດໝາຍ, ບັນດາຂະແໜງການ ແລະ ທ້ອງຖິ່ນ ໄດ້ຜັນຂະຫຍາຍເປັນແຜນງານ, ເປັນ ໂຄງການຂອງຕົນ ແລະ ມີແຫຼ່ງທຶນຈັດຕັ້ງປະຕິບັດໂດຍທົ່ວໄປ.

- ປະຊາຊົນ, ຊັ້ນຄົນຕ່າງໆ, ນັກທຸລະກິດສະໜັບສະໜູນ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດ ແຜນ ງານ, ໂຄງການ.

- ເພື່ອນມິດ, ສາກົນໄດ້ໃຫ້ການສະໜັບສະໜູນຊ່ວຍເຫລືອຢ່າງຕໍ່ເນື່ອງ.

ບັນດາສາເຫດດັ່ງກ່າວໄດ້ ສົ່ງຜົນໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງ ທີ VI (2006-2010) ໄດ້ຮັບຜົນສຳເລັດ ແລະ ເປັນພື້ນຖານທີ່ແຂງແກ່ນໃຫ້ແກ່ການກ້າວໄປສູ່ການບັນລຸ ຄາດໝາຍພັດທະນາສະຫັດສະຫວັດໃນປີ 2015 ແລະ ນຳພາປະເທດຊາດອອກຈາກປະເທດດ້ອຍພັດທະນາ ໃນປີ 2020.

# III. ຈຸດອ່ອນ, ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ 2006-2010 ແລະ ສາເຫດ

## 1. ຈຸດອ່ອນ ແລະ ຂໍ້ຄົງຄ້າງ

### 1.1. ຂໍ້ຄົງຄ້າງທີ່ຕິດພັນກັບບາງຄາດໝາຍມະຫາພາກ

- ເຖິງວ່າລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນ ແຕ່ຍັງບໍ່ທັນສ່ອງແສງ ແລະ ກະຈາຍໃຫ້ປະ ຊາຊົນໃນທ້ອງຖິ່ນຢ່າງທົ່ວເຖິງ; ການເຕີບໂຕສ່ວນໃຫຍ່ແມ່ນຍ້ອນການຂຸດຄົ້ນແຮ່ທາດ, ການສົ່ງວັດຖຸດິບອອກ ຕ່າງປະເທດຍັງບໍ່ທັນແມ່ນການປຸງແຕ່ງພາຍໃນ, ການຫັນປ່ຽນໂຄງປະກອບເສດຖະກິດເຫັນວ່າໂຄງປະກອບ

ຂອງອຸດສາຫະກຳໄດ້ຂະຫຍາຍຕົວຊ້າເມື່ອທຽບໃສ່ຂະແໜງການບໍລິການ, ສະແດງໃຫ້ເຫັນການຫັນໄປສູ່ອຸດສາຫະກຳບໍ່ທັນແຂງແຮງ.

- ການລົງທຶນຂອງລັດເລີ່ມມາຈາກຮາກຖານແມ່ນດີ, ແຕ່ມີລັກສະນະສະເລ່ຍບໍ່ມີຈຸດສຸມ, ປະສິດທິຜົນຍັງຕ່ຳ, ຫລາຍໂຄງການໄດ້ກຳນົດແຕ່ຍັງຂາດທຶນຈັດຕັ້ງປະຕິບັດ, ຂາດທຶນສົມທົບການປະຕິບັດໂຄງການຊ່ວຍເຫລືອ ແລະ ກູ້ຢືມ; ການປະຕິບັດນະໂຍບາຍສົ່ງເສີມການລົງທຶນຫລາຍຂະແໜງການທ້ອງຖິ່ນຍັງບໍ່ທັນມີໂຄງການຮຽກການລົງທຶນ, ກົນໄກການບໍລິການປະຕູດຽວບໍ່ທັນແຜ່ຫລາຍ; ການກວດກາ, ຕິດຕາມໂຄງການຈຳນວນຫນຶ່ງທີ່ໄດ້ອະນຸມັດໄປແລ້ວບໍ່ທັນໄດ້ດີ.
- ການດຸ່ນດ່ຽງງົບປະມານກໍ່ມີທ່າດີຂຶ້ນຕາມລຳດັບ, ແຕ່ອັດຕາສ່ວນການເພິ່ງອີງໃສ່ຕ່າງປະເທດຍັງເຫັນວ່າສູງຢູ່, ການເກັບລາຍຮັບພາຍໃນຍັງບໍ່ທັນສະໝ່ຳສະເໝີບາງປີໄດ້ດີ, ບາງປີບໍ່ທັນໄດ້ດີ ເຮັດໃຫ້ການຕອບສະຫນອງຄວາມຮຽກຮ້ອງຕ້ອງການທີ່ນັບມື້ນັບສູງຂຶ້ນບໍ່ທັນໄດ້ດີເທົ່າທີ່ຄວນ, ຍັງມີຫນີ້ສິນຄຸມເຄືອຈຳນວນໜຶ່ງ ແລະ ການປະຕິບັດນະໂຍບາຍປະຢັດແຫ່ງຊາດບໍ່ທັນຕັ້ງຫນ້າເທົ່າທີ່ຄວນ.
- ການດຸ່ນດ່ຽງຄວາມຕ້ອງການດ້ານແຮງງານ ແລະ ການແກ້ໄຂວຽກເຮັດງານທຳ ໃຫ້ພົນລະເມືອງດຳເນີນການໄປຕາມກົນໄກຕະຫລາດແຕ່ບໍ່ທັນມີການວາງແຜນ, ດ້ວຍເຫດນີ້ຈຶ່ງໄດ້ມີສະພາບບໍ່ຄ່ອງຕົວດ້ານຕະຫລາດແຮງງານ (ມີຄົນລາວໄປອອກແຮງງານຢູ່ປະເທດອ້ອມຂ້າງ, ແຕ່ພາຍໃນຂາດແຮງງານ ແລະ ນຳເອົາແຮງງານຕ່າງປະເທດເຂົ້າມາແທນເປັນຈຳນວນຫລາຍ), ແຮງງານກະເສດໃນຊົນນະບົດໄດ້ເຄື່ອນຍ້າຍເຂົ້າມາສູ່ຕົວເມືອງມີຈຳນວນຫລາຍ ແລະ ເຮັດໃຫ້ເກີດສະພາບຂາດແຮງງານໃນການຜະລິດກະສິກຳຢູ່ຊົນນະບົດ.
- ການສົ່ງອອກ-ນຳເຂົ້າເຫັນວ່າມີທ່ວງທ່າດີ ແຕ່ວ່າການສົ່ງອອກສ່ວນໃຫຍ່ຍັງແມ່ນມາຈາກຊັບພະຍາກອນທຳມະຊາດ ເປັນຕົ້ນ ແຮ່ທາດ ຫາກບໍ່ແມ່ນການຜະລິດທີ່ມາຈາກພື້ນຖານເສດຖະກິດ, ຊຶ່ງມີຄວາມສ່ຽງໃນຕໍ່ໜ້າ ເມື່ອຊັບພະຍາກອນທຳມະຊາດບົກແຫ້ງ; ການສົ່ງອອກເປັນວັດຖຸດິບຍັງກວມອັດຕາສ່ວນສູງ ຊຶ່ງສະແດງໃຫ້ເຫັນວ່າ ຍັງບໍ່ທັນເປັນເຈົ້າການໃນການສ້າງມູນຄ່າເພີ່ມກ່ອນການສົ່ງອອກ.
- ການແກ້ໄຂຄວາມທຸກຍາກແມ່ນຢູ່ໃນຈັງຫວະທີ່ດີ ແຕ່ຖ້າທຽບໃສ່ການເຕີບໂຕທາງດ້ານເສດຖະກິດ ເຫັນວ່າຍັງຊັກຊ້າຢູ່.

## 1.2. ຂໍ້ຄົງຄ້າງທີ່ຕິດພັນກັບບັນດາຂະແໜງການ ແລະ ການພັດທະນາທ້ອງຖິ່ນ

- ການຜະລິດຂະແຫນງກະສິກຳຍັງແມ່ນການຜະລິດສິນຄ້າຂະຫນາດນ້ອຍ ແລະ ບໍ່ທັນຕອບສະຫນອງກັບການຜະລິດທີ່ເປັນສິນຄ້າຢ່າງເຕັມສ່ວນ, ໂດຍສະເພາະແມ່ນເພື່ອການປຸງແຕ່ງ ຍັງບໍ່ທັນມີການຜະລິດແບບຊົນລະກະເສດທີ່ກ້າວຫນ້າ ແລະ ນຳໃຊ້ຫມາກຜົນອັນໃຫມ່ຂອງວິທະຍາສາດ ແລະ ເທັກໂນໂລຍີຢ່າງກ້ວາງຂວາງ, ຍັງບໍ່ສາມາດສ້າງຕົວແບບ ແລະ ນຳໃຊ້ຕົວແບບການຜະລິດ ເປັນຕົ້ນການປູກຝັງ, ລ້ຽງສັດທີ່ໝັ້ນຄົງ ແລະ ຂະຫຍາຍຕົວໄດ້. ປະສິດທິພາບການຜະລິດຕ່ຳ, ການຜະລິດຕົ້ນຕໍ້ຂຶ້ນກັບທຳມະຊາດ, ກະແຈກກະຈາຍ, ການຄຸ້ມຄອງປ່າໄມ້ ໂດຍສະເພາະແມ່ນ ການຄຸ້ມຄອງປ່າສະຫງວນ, ປ່າຜະລິດ, ການຈັດສັນ ແລະ ນຳໃຊ້ທີ່ດິນກະສິກຳ, ການປູກໄມ້ເປັນສິນຄ້າຍັງບໍ່ທັນພົ້ນເດັ່ນ ແລະ ບໍ່ທັນບັນລຸຄາດຫມາຍທີ່ວາງໄວ້.
- ຂາດງົບປະມານ ແລະ ນັກວິຊາການທີ່ມີຄວາມສາມາດໃນການນຳພາ ແລະ ຈັດຕັ້ງປະຕິບັດໂຄງການຕົວຈິງໃນຫລາຍຂະແໜງການ. ຂາດວິຊາການສະເພາະດ້ານເຊັ່ນ: ໃນຂະແຫນງພະລັງງານ-ບໍ່ແຮ່, ຂະແຫນງກະສິກຳ.... ການນຳໃຊ້ອຸປະກອນ, ເຕັກນິກ ແລະ ການນຳໃຊ້ບົດຮຽນໃນການຄຸ້ມຄອງບໍລິຫານທຸລະກິດ ກວມອັດຕາສ່ວນຕ່ຳປະມານ 10% (ຫວຽດນາມ 33%, ໄທ 40% ແລະ ສິງກະໂປ 84%).

- ການຜະລິດ ແລະ ຈຳໜ່າຍໄຟຟ້າຮັບໃຊ້ພາຍໃນຍັງບໍ່ທັນພຽງພໍກັບຄວາມຕ້ອງການ, ກະແສໄຟຟ້າສ່ວນໜຶ່ງຍັງນຳເຂົ້າຈາກຕ່າງປະເທດ, ການຜະລິດໄຟຟ້າ ເພື່ອສົ່ງອອກຍັງຊັກຊ້າກວ່າແຜນການທີ່ວາງໄວ້. ການລົງທຶນຂອງພາກເອກະຊົນຢູ່ໃນຂະແໜງພະລັງງານ-ບໍ່ແຮ່ແມ່ນມີຈຳນວນຫຼາຍ ແຕ່ຍັງແມ່ນຂັ້ນຕອນການຊອກຄົ້ນສຳຫຼວດ ແລະ ມີຫຼາຍໂຄງການກໍ່ແກ່ຍາວເວລາ, ບໍ່ປະຕິບັດຕາມສັນຍາກໍ່ຄືລະບຽບການ ທີ່ວາງອອກ, ບາງໂຄງການຂຸດຄົ້ນສ້າງຜົນກະທົບຕໍ່ສະພາບແວດລ້ອມ.
- ຄຸນນະພາບຂອງການກໍ່ສ້າງພື້ນຖານໂຄງລ່າງຍັງບໍ່ໄດ້ມາດຖານເທົ່າທີ່ຄວນ (ບາງເສັ້ນທາງ, ຊົນລະປະທານ, ອາຄານສຳນັກງານ). ຍັງຂາດທຶນໃນການບົວລະບັດຮັກສາກໍ່ສ້າງສ້ອມແປງ ຈຶ່ງເຮັດໃຫ້ການນຳໃຊ້ ໂຄງລ່າງດັ່ງກ່າວ ບໍ່ເຕັມຄວາມສາມາດ ຫລື ປະໃຫ້ເປ່ເພໄປນຳ.
- ການປະສານລະຫວ່າງຂະແໜງການຜະລິດ ຍັງບໍ່ທັນກົມກຽວ ແລະ ສະໜັບສະໜູນ ເຊິ່ງກັນ ແລະ ກັນ. ການສົ່ງອອກແມ່ນຍັງເນັ້ນໃສ່ວັດຖຸດິບ ແຕ່ບໍ່ແມ່ນສິນຄ້າປຸງແຕ່ງ.
- ໃນຂະແໜງສຶກສາ ແລະ ສາທາເຫັນວ່າການຫັນໄປສູ່ຄຸນນະພາບ ແລະ ຄວາມວ່ອງໄວບໍ່ທັນສູງ, ພື້ນຖານໂຄງລ່າງຂອງການສຶກສາ, ສາທາລະນະສຸກ ຈຳນວນຫຼາຍສົມຄວນຍັງຫຼຸດມາດຖານ, ເຮັດໃຫ້ການປະຕິບັດຄາດໝາຍ “ການສຶກສາປະຖົມພາກບັງຄັບ” ແລະ ການປະກັນສຸຂະພາບຂອງປະຊາຊົນບໍ່ທັນບັນລຸຄາດໝາຍກຳນົດໄວ້.
- ການລາຍງານຂໍ້ມູນ-ຂ່າວສານຍັງຂາດເນື້ອຫາສາລະທີ່ອຸດົມສົມບູນອັນເປັນສິ່ງຈູງໃຈໃຫ້ແກ່ ຜູ້ອ່ານ, ຜູ້ຟັງ ແລະ ຜູ້ຊົມ, ການນຳສະເໜີຂ່າວສານທີ່ມີລັກສະນະສ່ອງແສງເຖິງສະພາບຄວາມເປັນຈິງຂອງຊີວິດສັງຄົມບໍ່ທັນກວ້າງຂວາງ, ມີລັກສະນະຊັກຊ້າບໍ່ທັນກັບເວລາທີ່ເກີດຂຶ້ນ, ພື້ນຖານວັດຖຸເຕັກນິກຂອງວຽກງານສື່ມວນຊົນຍັງບໍ່ທັນໄດ້ຮັບການປັບປຸງຢ່າງເປັນລະບົບ, ການປົກປັກຮັກສາຟື້ນຟູບູລະນະວັດຖຸບູຮານ, ປູຊະນີຍະສະຖານ ແລະ ສະຖານທີ່ປະຫວັດສາດບໍ່ທັນໄດ້ດີເທົ່າທີ່ຄວນ.
- ການພັດທະນາວົງການກິລາຜ່ານມາ ຖ້າອີງໃສ່ມາດຕະຖານສາກົນ ເຫັນວ່າຄວາມສາມາດຍັງອ່ອນ, ສະຕິຕໍ່ລະບຽບວິໄນ ແລະ ການຝຶກຊ້ອມຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ.
- ການພັດທະນາເຂດແຄວ້ນ ເຫັນວ່າບໍ່ທັນສົມສ່ວນ ແລະ ບໍ່ປະກົດອອກຢ່າງຈະແຈ້ງ ເປັນຕົ້ນ ເຂດເສດຖະກິດ, ການເຊື່ອມໂຍງ, ການເພິ່ງພາອາໄສຂອງພາກຕ່າງໆ, ແຕ່ການພັດທະນາແຂວງປະກົດອອກຊັດເຈນກວ່າ, ເຮັດໃຫ້ການຊ່ວຍໜູນເຊິ່ງກັນ ແລະ ກັນບໍ່ທັນໄດ້ດີ, ການເຕີບໂຕຂອງເສດຖະກິດ ຂອງທ້ອງຖິ່ນໃນພາກດຽວກັນບໍ່ສະໜ່ຳສະເໝີ, ຍັງຂາດການປະສານແຜນງານ ແລະ ໂຄງການພັດທະນາຂອງແຂວງກັບພາກດຽວກັນ.
- ການປົກປັກຮັກສາສິ່ງແວດລ້ອມເຖິງວ່າໄດ້ມີຄວາມພະຍາຍາມຫຼາຍ ແຕ່ຍັງຂາດທຶນຮອນ, ອາໄສແຕ່ທຶນຕ່າງປະເທດສົມທົບກັບໂຄງການໃຫຍ່, ຂາດການຮັບຮູ້ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ຕ້ອງໄດ້ມີການປັບປຸງ ແລະ ສຶກສາຜົນກະທົບຕໍ່ສິ່ງແວດລ້ອມຈາກບັນດາໂຄງການພັດທະນາຕ່າງໆຢ່າງເຂັ້ມງວດ.
- ການຄຸ້ມຄອງພະນັກງານ-ລັດຖະກອນໂດຍລວມແມ່ນເຮັດໄດ້ດີ ແຕ່ການຍົກລະດັບຂີດຄວາມສາມາດດ້ານຕ່າງໆໃຫ້ພະນັກງານຍັງມີລັກສະນະກວມລວມ ບໍ່ທັນມີແບບແຜນລະອຽດ, ການປະຕິບັດວຽກງານຍັງມີການຊ້ຳຊ້ອນ.

## 1.3. ຂໍ້ຄົງຄ້າງການຈັດຕັ້ງປະຕິບັດ 11 ແຜນງານ ແລະ 111 ໂຄງການ

- ການຄົ້ນຄວ້າກຳນົດ 11 ແຜນງານ 111 ໂຄງການ ອອກຊ້າກວ່າແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI. ສະນັ້ນ, ຈຶ່ງເຮັດໃຫ້ການຊັບຊ້ອນໂຄງການ ແລະ ທຶນຮອນມີຄວາມຫຍຸ້ງຍາກ ພາໃຫ້ຫລາຍແຜນງານ ແລະ ໂຄງການບໍ່ຖືກຈັດຕັ້ງປະຕິບັດ.
- ການມອບໝາຍໃນການຄຸ້ມຄອງແຜນງານ ແລະ ໂຄງການຊັກຊ້າ, ພ້ອມກັນນັ້ນ ແຜນງານໜຶ່ງ ກໍ່ກວມເອົາຫລາຍກະຊວງ ພາໃຫ້ບໍ່ມີຜູ້ຄຸ້ມຄອງຕົວຈິງ ເຮັດໃຫ້ການຈັດຕັ້ງປະຕິບັດ ແລະ ການສະຫລຸບລາຍງານພົບຄວາມຫຍຸ້ງຍາກ.
- ການຈັດຕັ້ງປະຕິບັດແຜນງານຫລຸດຜ່ອນຄວາມທຸກຍາກ ໃຫ້ໄດ້ໂດຍພື້ນຖານ ແລະ ແຜນງານຍຸດຕິການຖາງປ່າເຮັດໄຮ່ໂດຍສິ້ນເຊີງ ແມ່ນຈັດຕັ້ງປະຕິບັດບໍ່ໄດ້ດີ ແລະ ບໍ່ບັນລຸໄດ້ຕາມຄາດໝາຍທີ່ວາງໄວ້.
- ກົນໄກ ແລະ ລະບົບຕິດຕາມຜົນໄດ້ຮັບ, ໝາກຜົນ ຂອງການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຍັງບໍ່ທັນຈະແຈ້ງ ເຊິ່ງບັນຫານີ້ ຕ້ອງໄດ້ຄຳນຶງໃນແຜນ 5 ປີ ຄັ້ງທີ VII.

## 1.4. ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດການແກ້ໄຂອຸທົກກະໄພ ໃນປີ 2009

- ທຶນຮອນສຳລັບແກ້ໄຂຜົນກະທົບຈາກພາຍຸເກດສະໜາ ໂດຍສະເພາະແມ່ນ ເພື່ອການຟື້ນຟູບັນດາພື້ນຖານໂຄງລ່າງໃຫ້ກັບເຂົ້າສູ່ສະພາບປົກກະຕິ, ການໃຫ້ການຊ່ວຍເຫຼືອ ເພື່ອບັນເທົາຄວາມເສຍຫາຍ ທັງທາງກົງ ແລະ ທາງອ້ອມ ໃນດ້ານການຜະລິດ ແລະ ການບໍລິການ ຍັງຈຳກັດ ແລະ ບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຕົວຈິງເທື່ອ.
- ຂາດລະບົບຕິດຕາມ, ກວດກາ ແລະ ລາຍງານ ທີ່ເປັນລະບົບ ແລະ ເອກະພາບໃນການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ທັງຂອງລັດ ແລະ ການຊ່ວຍເຫຼືອທີ່ລະດົມໄດ້ເພື່ອຮັບປະກັນໃຫ້ຖືກເປົ້າ ໝາຍ , ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ.

## 1.5. ສັງລວມຈຸດອ່ອນ - ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VI

1.5.1. ກ່ຽວກັບຄາດໝາຍຈຳນວນໜຶ່ງທີ່ໄດ້ກຳນົດໃວ້ໃນແຜນພັດທະນາເສດຖະກິດ-ສັງຄົມ ທີ່ບໍ່ທັນບັນລຸຄາດໝາຍຄື:

- ຄາດໝາຍການພັດທະນາຊົນນະບົດ, ການຄ້າ-ການບໍລິການ, ການແກ້ໄຂຄວາມທຸກຍາກ ຍັງຊັກຊ້າ ທຽບໃສ່ລະດັບການຂະຫຍາຍໂຕດ້ານເສດຖະກິດ. ພ້ອມນັ້ນ, ກໍ່ຍັງບໍ່ສະໝ່ຳສະເໝີກັນໃນແຕ່ລະທ້ອງຖິ່ນ, ບາງທ້ອງຖິ່ນໄວ, ບາງທ້ອງຖິ່ນຊ້າ ແລະ ບາງບໍລິເວນບໍ່ທັນມີການປ່ຽນແປງພໍເທົ່າໃດ. ໂຄງການການຢຸດຕິການຖາງປ່າເຮັດໄຮ່, ການຈັດສັນອາຊີບຄົງທີ່ໃຫ້ປະຊາຊົນເຮັດໄດ້ໜ້ອຍ;
- ຄາດໝາຍການຄຸ້ມຄອງ ແລະ ພັດທະນາເສດຖະກິດຕະຫລາດ, ໃນນັ້ນຕະຫລາດເຕັກໂນໂລຊີ, ຕະຫລາດອະສັງຫາລິມະຊັບ, ຕະຫລາດແຮງງານ, ຄາດໝາຍການສຶກສາຊັ້ນປະຖົມແບບບັງຄັບ, ການສ້າງກອງທຶນປະກັນສຸຂະພາບກໍຍັງບໍ່ທັນບັນລຸຜົນດີເທົ່າທີ່ຄວນ...

1.5.2. ທິດທາງຂອງການພັດທະນາຊຶ່ງມະຕິຂອງພັກວາງອອກມີບາງດ້ານເຫັນວ່າບໍ່ທັນດີ ຄື: ການເຕີບໂຕຂອງເສດຖະກິດແຫ່ງຊາດຕໍ່ເນື່ອງ, ສະເລ່ຍສູງລື່ນຄາດໝາຍວາງໄວ້ ແຕ່ລາຍຮັບຕົວຈິງຂອງກຸ່ມຄົນຈຳນວນໜຶ່ງ ເປັນຕົ້ນໃນຊົນນະບົດແມ່ນຫ່າງໄກຈາກລະດັບສະເລ່ຍ, ບາງພື້ນທີ່ບໍ່ມີການປ່ຽນແປງພໍເທົ່າ ໃດ, ການເຕີບໂຕບໍ່ທັນໄປຄຽງຄູ່ກັບການສະສົມ; ພາກສ່ວນເສດຖະກິດລັດ ແລະ ພາກສ່ວນເສດຖະກິດ ຮ່ວມມືຂອງປະຊາຊົນບໍ່ທັນໄດ້ຮັບການຊຸກຍູ້ສົ່ງເສີມໃຫ້ກາຍເປັນເຈົ້າພາທາງໄດ້ເທື່ອ; ການຫັນປ່ຽນໂຄງປະ ກອບເສດຖະກິດດ້ານຂະແໜງການ (ການປຸງແຕ່ງ) ບໍ່ທັນສົມດູ່; ການກຳນົດ ແລະ ປະຕິບັດແຜນງານ, ໂຄງການ ບໍ່ທັນຄຽງຄູ່ກັບແຜນເງິນ, ແຜນສ້າງ-ຝຶກອົບຮົມບຸກຄະລາກອນ. ໃນບາງຂະແໜງການວຽກງານ ຂະຫຍາຍຕົວ ແຮງດີ, ແຕ່ຍັງອາໄສບຸກຄະລາກອນຕ່າງປະເທດ, ສ່ວນບຸກຄະລາກອນພາຍໃນມີໜ້ອຍ.

1.5.3. ການປະຕິຮູບການສຶກສາແຫ່ງຊາດ, ໂຄງການຂະຫຍາຍການສຶກສາພາກບັງຄັບ, ການສຶກສາ ແລະ ສ້າງຄົນບໍ່ທັນຕອບສະໜອງ ແລະ ສອດຄ່ອງກັບໂຄງປະກອບເສດຖະກິດ ແລະ ຍຸດທະສາດການພັດ ທະນາ. ບັນຫາປະກົດການຫຍໍ້ທໍ້ໃນສັງຄົມຖືກແກ້ໄຂໃນລະດັບຕ່ຳ; ການສົ່ງເສີມສຸຂະພາບ ແລະ ການບໍລິ ການດ້ານສາທາລະນະສຸກຢູ່ຮາກຖານຍັງອ່ອນ; ການຍົກລະດັບສີມືແຮງງານຍັງບໍ່ທັນກັບຄວາມຕ້ອງການຂອງ ການພັດທະນາ.

## 2. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ:

- ການຜັນຂະຫຍາຍມະຕິ 8 ຂອງພັກອອກເປັນແຜນງານ, ໂຄງການ, ຊັກຊ້າແກ່ຍາວບາງຂະແໜງການ ແລະ ບາງທ້ອງຖິ່ນຫາກໍ່ເລີ່ມປະຕິບັດຫຼັງການສະໄໝເປັນຕົ້ນມາ.
- ການຕິດຕາມ, ກວດກາ ແລະ ປະເມີນຜົນ ຍັງບໍ່ທັນເປັນລະບົບປົກກະຕິ, ການແບ່ງຂັ້ນຄຸ້ມຄອງການ ກຳນົດຄວາມຮັບຜິດຊອບບໍ່ທັນຈະແຈ້ງເທົ່າທີ່ຄວນ.
- ລະດັບຄວາມຮູ້ວິຊາການໃນການວາງແຜນ, ການຄຸ້ມຄອງບໍລິຫານແຜນງານ ແລະ ໂຄງການ ຈຳກັດ, ຂາດເງື່ອນໄຂເຂົ້າເຖິງໂຄງການຕົວຈິງ.
- ໄພທຳມະຊາດເກີດຂຶ້ນ 2 ຄັ້ງ, ວິກິດການເສດຖະກິດໂລກກະທົບໜັກຕໍ່ການປະຕິບັດແຜນພັດທະນາ.
- ໃນເງື່ອນໄຂກົນໄກເສດຖະກິດຕະຫຼາດ, ການຄຸ້ມຄອງທີ່ບໍ່ແທດເຖິງພາໃຫ້ເກີດມີປະກົດການຫຍໍ້ທໍ້ດ້ານ ຕ່າງໆ, ລະເຫຼີ້ງລະບຽບກົດໝາຍ.

# IV. ບົດຮຽນທີ່ຖອດຖອນໄດ້

1. **ທັນບັນດາມະຕິຂອງພັກໃຫ້ເປັນແຜນງານ ແລະ ເປັນໂຄງການ, ເປັນແຜນເງິນ, ແຜນຄົນ ແລະ ອອກເປັນກົດໝາຍ, ເປັນນິຕິກຳ ໃນແຕ່ລະປີແມ່ນເງື່ອນໄຂທຳອິດພາໃຫ້ແຜນພັດທະນາຖືກຈັດຕັ້ງ ປະຕິບັດດີ ຫລື ບໍ່ດີ.**

- ຂະແໜງການສູນກາງໃດ ແລະ ທ້ອງຖິ່ນໃດຮູ້ຜັນຂະຫຍາຍມະຕິຂອງພັກ, ມະຕິຂອງອົງຄະນະພັກ ຂັ້ນຂອງຕົນອອກໃຫ້ເປັນໂຄງການ, ເປັນແຜນວຽກທີ່ຊັດເຈນ, ຮູ້ຈັດຫາແຫລ່ງທຶນ ແລະ ແບ່ງຄວາມຮັບຜິດ ຊອບຈະແຈ້ງຢູ່ບ່ອນນັ້ນສາມາດຈັດຕັ້ງປະຕິບັດແຜນພັດທະນາໄດ້ດີກ່ວາ.

**2. ການຂຸດຄົ້ນ ແລະ ລະດົມແຫລ່ງທຶນພາຍໃນ ແລະ ຕ່າງປະເທດ ແລະ ນຳໃຊ້ໃຫ້ໄປເຖິງປະຊາຊົນ, ມີປະສິດທິຜົນ ແລະ ໂປ່ງໃສແມ່ນເປັນກຳລັງແຮງຕົວຈິງ ຂອງການພັດທະນາເສດຖະກິດ-ສັງຄົມ.**

- ຂະແໜງການໃດ, ແຂວງໃດ, ວິສາຫະກິດໃດຮູ້ຈັກຊອກສະແຫວງຫາ ແລະ ລະດົມໄດ້ແຫລ່ງທຶນຮອບ ແມ່ນບ່ອນນັ້ນສາມາດຈັດຕັ້ງປະຕິບັດແຜນງານ, ໂຄງການໄດ້ດີ ແລະ ບ່ອນໃດສາມາດນຳໃຊ້ທຶນຢ່າງມີປະສິດທິຜົນກໍ່ຍິ່ງເປັນການເຮັດໃຫ້ແຫລ່ງທຶນອື່ນໄຫລເຂົ້າສູ່ໂຄງການນັ້ນ. ການລະດົມທຶນເຂົ້າໃນຊ່ວງແຜນການ 5 ປີ ຄັ້ງທີ VI, ການແກ້ໄຂຜົນກະທົບຈາກໄພວິກິດດ້ານການເງິນຂອງໂລກ ແລະ ຈາກໄພທຳມະຊາດ ປີ 2008 ຢັ້ງຢືນການນຳໃຊ້ທິດທາງເສດຖະກິດ ແລະ ປະສົບການຕົວຈິງຂອງ ສປປ ລາວ ໂດຍອາໄສກຳລັງແຮງພາຍໃນເປັນຕົ້ນຕໍໃນການພັດທະນາ. ການເສີມຂະຫຍາຍ ແລະ ປັບປຸງກຳລັງພາຍໃນໃຫ້ເຂັ້ມແຂງ ສາມາດດຶງດູດ ແລະ ນຳໃຊ້ກຳລັງພາຍນອກໄດ້ຢ່າງມີປະສິດທິຜົນ ແລະ ທັງສາມາດຮັບປະກັນໄດ້ຄວາມເປັນເອກະລາດ, ຄວາມເປັນເຈົ້າການທາງດ້ານເສດຖະກິດ ແລະ ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ.

- 5 ປີຜ່ານມາ ການລະດົມແຮງຈາກບັນດາປັດໄຈພາຍໃນຂອງພື້ນຖານເສດຖະກິດກໍ່ແມ່ນປັດໄຈຕັດສິນ ການພັດທະນາ, ຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງ, ແຕ່ແຫລ່ງທຶນພາຍນອກຍັງມີຄວາມສຳຄັນ; ການລະດົມແຫລ່ງທຶນພາຍນອກບວກໃສ່ແຫລ່ງທຶນພາຍໃນ ທັງຮັບປະກັນການນຳໃຊ້ທຶນຢ່າງມີປະສິດທິຜົນສາມາດສ້າງຄວາມອາດສາມາດ ແລະ ຄວາມເຂັ້ມແຂງໃນການຊຸກຍູ້ການຂະຫຍາຍຕົວຂອງເສດ ຖະກິດແຫ່ງຊາດ.

- ການເສີມຂະຫຍາຍກຳລັງພາຍໃນນັ້ນຕ້ອງໄດ້ເສີມຂະຫຍາຍກຳລັງຄົນ, ກຳລັງແຮງງານຂອງປະຊາຊົນບັນດາເຜົ່າ, ຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດການຫັນຊັບສິນຢ່າງຖືກຕ້ອງ; ປັດໄຈທີ່ຕັດສິນໃນການລະດົມທຶນແມ່ນຕ້ອງຂຶ້ນກັບນະໂຍບາຍຂອງລັດຖະບານ ແລະ ປະສິດທິຜົນຂອງໂຄງການ, ການຮອງຮັບຂອງຕະຫລາດ.

**3. ຫັນປ່ຽນໂຄງປະກອບເສດຖະກິດຕາມທິດອຸດສາຫະກຳ ແລະ ທັນສະໄໝ, ຕິດພັນກັບການເສີມຂະຫຍາຍ ທ່າແຮງໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນເຮັດໃຫ້ເສດຖະກິດ-ສັງຄົມເຕີບໂຕໄວ.**

- ການຫັນປ່ຽນໂຄງປະກອບເສດຖະກິດ ແມ່ນຈຳເປັນພາວະວິໄສໃນການບູລະນະເສດຖະກິດໃຫ້ມີຄວາມເຂັ້ມແຂງ ແລະ ສົມດຸນ, ຮັບປະກັນການເຕີບໂຕ ແລະ ໄປຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ; ລັດຖະບານໄດ້ເອົາໃຈໃສ່ໃນການສ້າງແຜນການ, ແຜນງານ ແລະ ໂຄງການລະອຽດເພື່ອຊຸກຍູ້ໃຫ້ຂະແໜງການຕ່າງໆ ປະກອບສ່ວນເຂົ້າໃນຂະບວນການຫັນປ່ຽນໂຄງປະກອບເສດຖະກິດຂອງຊາດ ທັງປະກອບສ້າງເສດຖະກິດຕາມເຂດແຄວ້ນ ບົນພື້ນຖານກົນໄກເສດຖະກິດຕະຫລາດໂດຍມີການຄຸ້ມຄອງຂອງລັດ.

- ການຫັນປ່ຽນໂຄງປະກອບເສດຖະກິດ ຕ້ອງໄປຄຽງຄູ່ກັບການພັດທະນາຕະຫລາດພາຍໃນ ເພື່ອຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວ, ຍົກສູງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ. ໃນໄລຍະທີ່ການເຂົ້າຫາຕະຫລາດພາຍນອກຍັງຈຳກັດ ເນື່ອງຈາກການເຊື່ອມໂຍງກັບພາຍນອກຍັງບໍ່ທັນສູງ, ຈຳເປັນຕ້ອງພັດທະນາຕະຫລາດພາຍໃນໃຫ້ຍືນຍົງເພື່ອສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ປະຊາຊົນສາມາດຈຳໜ່າຍຜະລິດຕະພັນຂອງຕົນໃຫ້ຫລາຍຂຶ້ນ; ພ້ອມທັງອອກແຮງສົ່ງເສີມ ແລະ ຊຸກຍູ້ກຳລັງຊື້ຂອງປະຊາຊົນໃຫ້ສູງຂຶ້ນ ໂດຍການສົ່ງເສີມວຽກເຮັດງານທຳ ໃນຂະແໜງກະສິກຳ ແລະ ບໍ່ແມ່ນກະສິກຳ (ລວມທັງວຽກລະດູການ) ແລະ ການເພີ່ມການສ້າງລາຍຮັບ.

4. **ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ບົນພື້ນຖານຄວາມເປັນເຈົ້າຕົນເອງທາງດ້ານເສດຖະກິດກໍ່ໃຫ້ເກີດມີການແຂ່ງຂັນ ແລະ ກ້າວໄປເຖິງການປ່ຽນແປງສູ່ຄວາມກ້າວໜ້າທາງດ້ານປະລິມານ ແລະ ຄຸນນະພາບ.**

- ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນແມ່ນຄວາມຮຽກຮ້ອງຕ້ອງການພາວະວິໄສ ເຊິ່ງປະເທດເຮົາຕ້ອງເປັນເຈົ້າການໃນການຍາດແຍ່ງເອົາຜົນປະໂຫຍດສູງສຸດຈາກຂະບວນການດັ່ງກ່າວ. ຕ້ອງສ້າງໃຫ້ໄດ້ຄວາມພ້ອມໃນທຸກດ້ານ, ຕ້ອງມີຍຸດທະສາດ ແລະ ຮັບປະກັນການຈັດຕັ້ງປະຕິບັດຢ່າງຫນັກແຫນ້ນ; ໃນນີ້, ຕ້ອງເປີດກວ້າງພາຍນອກ ເພື່ອເພີ່ມທະວີການສົ່ງອອກໃຫ້ຫລາຍຂຶ້ນໄປພ້ອມໆກັນກັບການເປີດກວ້າງຕະຫລາດພາຍໃນເພື່ອຮັບຮອງຂະບວນການເຊື່ອມໂຍງດັ່ງກ່າວ ແລະ ດຶງດູດເອົາເຕັກໂນໂລຊີ ແລະ ປະສົບການທີ່ກ້າວໜ້າຂອງໂລກໄປຄຽງຄູ່ກັບການຍົກສູງປະສິດທິພາບຄວາມສາມາດແຂ່ງຂັນຂອງບັນດາຫົວໜ່ວຍທຸລະກິດພາຍໃນໃຫ້ສູງຂຶ້ນໂດຍໃຊ້ຕະຫລາດທີ່ມີທ່າໄດ້ປຽບ.

- ເພື່ອຮັບຮອງການເຊື່ອມໂຍງນີ້ ພວກເຮົາຕ້ອງຮັບປະກັນສະຖຽນລະພາບດ້ານການເມືອງ ແລະ ເສດຖະກິດໃຫ້ດີ, ເພີ່ມທະວີຄັງແຮເງິນຕາຕ່າງປະເທດ, ກໍ່ສ້າງ ແລະ ປັບປຸງພື້ນຖານໂຄງລ່າງໃຫ້ດີ, ເອົາໃຈໃສ່ຍົກສູງຄຸນນະພາບຂອງການບໍລິການ.

5. **ການພັດທະນາເສດຖະກິດ-ສັງຄົມຕາມກົນໄກຕະຫລາດປະສານກັບການວາງແຜນແມ່ນຖືກຕ້ອງກັບສະພາບ ແລະ ເງື່ອນໄຂທີ່ເປັນຈິງຂອງປະເທດເຮົາໃນປະຈຸບັນ,**

- ກົນໄກຕະຫລາດສະແດງໃຫ້ເຫັນຄວາມຮຽກຮ້ອງຕ້ອງການ, ຜົນປະໂຫຍດຂອງກຸ່ມເປົ້າໝາຍຕ່າງໆ ໃນສັງຄົມ, ຍັງບອກໃຫ້ເຫັນຄວາມເປັນອິດສະຫລະໃນການເລືອກເຟັ້ນທິດທາງ, ເປົ້າໝາຍຜະລິດ, ທຸລະກິດ, ການຈຳໜ່າຍດ້ວຍຄວາມສະໝັກໃຈ.

- ການວາງແຜນເປັນການແນະນຳ, ກຳນົດທິດທາງ, ທ່າອ່ຽງການສະໜອງຂໍ້ມູນຂ່າວສານ, ວາງກອບມະຫາພາກ, ບໍ່ບັງຄັບ ແລະ ຈຳໃຫ້ພາກທຸລະກິດເຮັດເລື່ອງບໍ່ລະອຽດ. ດ້ວຍການປະສານສອງກົນໄກນີ້ເຮັດໃຫ້ປະເທດເຮົາສາມາດເອົາຕົວຢືນຢູ່ໃນທ່າມກາງຜົນກະທົບຂອງວິກິດການເສດຖະກິດໂລກ ແລະ ສາມາດຮັກສາຈັ່ງຫວະໄວຂອງການເຕີບໂຕໄດ້.

6. **ການພັດທະນາຕາມທິດຮັບປະກັນຄວາມຍືນຍົງ ໂດຍການຫັນສູ່ຄຸນນະພາບເປັນທ່າອ່ຽງທົ່ວໄປໂດຍປະສົມປະສານ 3 ສ່ວນປະກອບ (ເສດຖະກິດເຕີບໂຕ, ສັງຄົມຍຸຕິທຳ, ສີວິໄລ ແລະ ປົກປັກຮັກສາສິ່ງແວດລ້ອມທຳມະຊາດໃຫ້ຍືນຍົງ):**

- ການພັດທະນາແບບຍືນຍົງ ແລະ ຄຸນນະພາບ ຫມາຍເຖິງການພັດທະນາເສດຖະກິດໄປຄຽງຄູ່ກັບການພັດທະນາສັງຄົມ; ການນຳໃຊ້ຊັບພະຍາກອນທຳມະຊາດ, ການປົກປັກຮັກສາສະພາບແວດລ້ອມບໍ່ໃຫ້ບົກແຫ້ງ, ເປັນການພັດທະນາຂຸດຄົ້ນວັດທະນາທຳ, ເສີມຂະຫຍາຍຄວາມສາມາດທີ່ບົ່ມຊ້ອນຂອງຊັບພະຍາກອນມະນຸດ, ເປັນການເປີດກວ້າງຄວາມມີປະຊາທິປະໄຕທີ່ກ້າວໜ້າ ແລະ ຄວາມສະເໝີພາບໃນສັງຄົມ, ການສ້າງງານຢ່າງກວ້າງຂວາງໃຫ້ປະຊາຊົນ, ການຫລຸດຜ່ອນຄວາມແຕກໂຕນລະຫວ່າງຜູ້ທຸກ ແລະ ຜູ້ຮັ່ງ ແລະ ຕົວເມືອງ-ຊົນນະບົດການໃຫ້ໂອກາດແກ່ຜູ້ທີ່ທຸກຍາກ. ສົ່ງເສີມການສ້າງຄວາມຮັ່ງມີທີ່ຖືກຕ້ອງຕາມກົດຫມາຍ.

- ພວກເຮົາໄດ້ເອົາບັນຫາດັ່ງກ່າວບັນຈຸໃນນະໂຍບາຍມະຫາພາກ ແລະ ໄປຈົນເຖິງການປະຕິບັດຕົວຈິງ ຈຶ່ງເຮັດໃຫ້ຂະບວນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ເຂດແຂວງບັນລຸຜົນດີ. ບ່ອນໃດທີ່ບໍ່ທັນນຳໃຊ້ທັດສະນະດັ່ງກ່າວ ກໍ່ເຮັດໃຫ້ການພັດທະນາຂະຫຍາຍຕົວຊ້າ ແລະ ບາງບ່ອນກໍ່ມີຂໍ້ຂັດແຍ້ງ,

ຄະດີຄວາມ, ມີການບົກແຫ້ງຂອງຊັບພະຍາກອນ, ສູນເສຍຄວາມສົມດູນຂອງລະບົບນິເວດຢ່າງເຫັນປະຈັກຕາ.

7. **ການປັບປຸງບູລະນະການປົກຄອງຄຸ້ມຄອງລັດຕາມທິດລັດແຫ່ງກົດໝາຍ, ມີຄວາມສັກສິດ, ປະສິດທິຜົນ, ໂປ່ງໃສ, ວ່ອງໄວ, ລັດທັງເປັນທັງຜູ້ບໍລິຫານ, ເປັນທັງຜູ້ບໍລິການ-ຮັບໃຊ້ ແມ່ນປັດໃຈສຳຄັນໃນການຂັບເຄື່ອນການພັດທະນາເສດຖະກິດບສັງຄົມ ໃນເງື່ອນໄຂເສດຖະກິດຕະຫລາດ:**

- ບົດຮຽນຜ່ານມາໄດ້ຊີ້ໃຫ້ເຫັນວ່າ ການປັບປຸງບູລະນະລະບົບການບໍລິຫານຕາມທິດສັກສິດ, ປະສິດທິຜົນ, ໂປ່ງໃສ, ວ່ອງໄວ, ເປັນທັງຜູ້ບໍລິຫານ, ເປັນທັງຜູ້ບໍລິການ-ຮັບໃຊ້ ຂອງອຳນາດການປົກຄອງແຕ່ ລະຂັ້ນ ໄດ້ປະກອບສ່ວນຊຸກຍູ້ເຮັດໃຫ້ເສດຖະກິດ ແລະ ສັງຄົມ ໄດ້ຮັບການພັດທະນາດີຂຶ້ນກວ່າເກົ່າ ແລະ ເປັນປັດໄຈຕັດສິນຕໍ່ຜົນສຳເລັດ, ຄວາມສາມາດຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ເປັນອັນລະອຽດ ຢູ່ບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ຂຶ້ນກັບຄວາມສາມາດໃນການຊີ້ນຳນຳພາເຮັດ ຕົວຈິງ (ເຊິ່ງເປັນໜຶ່ງໃນເງື່ອນໄຂຂອງປັດໄຈການພັດທະນາທີ່ຍືນຍົງ) ຂອງອຳນາດການປົກຄອງຂະແໜງການ ແລະ ທ້ອງຖິ່ນ.

- ໃນໄລຍະທີ່ປະເທດເຮົາໄດ້ຮັບຜົນກະທົບຈາກວິກິດການ ການເງິນຂອງໂລກ ແລະ ໄພນ້ຳຖ້ວມຢ່າງຮຸນແຮງ ໃນປີ 2008 ແລະ 2009 ລັດຖະບານກໍ່ຄືຂະແໜງການສູນກາງ ແລະ ທ້ອງຖິ່ນ ກໍ່ໄດ້ພ້ອມກັນຊອກວິທີແກ້ໄຂ, ເສີມຂະຫຍາຍທຸກກຳລັງແຮງໃນສັງຄົມພ້ອມພຽງກັນຜ່ານຜ່າອຸປະສັກ ແລະ ສູ້ຊົນປະຕິ ບັດບັນດາເປົ້າໝາຍທີ່ໄດ້ວາງໄວ້. ສະນັ້ນ 5 ປີຕໍ່ໜ້າ ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄດ້ຂຶ້ນກັບຄວາມພະຍາຍາມ ແລະ ຄວາມສາມາດຂອງທຸກພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ; ໃນນັ້ນ, ປັດໄຈພັກ-ພະນັກງານ ແລະ ຄວາມກະຕືລືລົ້ນ, ຕັດສິນໃຈເຮັດຫລ້ອນໜ້າທີ່ດ້ວຍຄວາມຮັບຜິດຊອບສູງໃນຖັນແຖວພະນັກງານຫລັກແຫລ່ງມີບົດບາດສຳຄັນ ແລະ ຕັດສິນ.

- ເພື່ອຈັດຕັ້ງປະຕິບັດໄດ້ດີ, ຕ້ອງສັບຊ້ອນພະນັກງານໃຫ້ຖືກຕ້ອງ, ຕອບສະໜອງຕາມຄວາມຕ້ອງການຂອງວຽກງານ, ຕ້ອງມອບໝາຍໜ້າທີ່ ແລະ ຂອບເຂດສິດໃຫ້ຊັດເຈນ, ນັບທັງຂອບເຂດສິດກ່ຽວກັບການຈັດຕັ້ງກົງຈັກ ແລະ ພະນັກງານ, ພ້ອມດຽວກັນນັ້ນຍັງຕ້ອງຮຽກຮ້ອງໃຫ້ມີກົນໄກ ແລະ ວິທີການ ດ້ານການບໍລິຫານເພື່ອເປັນການກະຕຸກຊຸກຍູ້ ແລະ ຈູງໃຈພະນັກງານ ເພື່ອເພີ່ມປະສິດທິພາບ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ດ້ວຍຄວາມຕື່ນຕົວ.

8. **ການພັດທະນາເສດຖະກິດ-ສັງຄົມ ປະຈຸບັນທຸກໆບ່ອນ ຍາມໃດກໍ່ຕ້ອງຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕິດພັນກັບການລົງຮາກຖານ ໂດຍຖືເອົາການສ້າງບ້ານຕາມ 4 ເນື້ອໃນ 4 ຄາດໝາຍ ເປັນເປົ້າໝາຍ ແລະ ເປັນພື້ນທີ່ຂອງການພັດທະນາ**:

- ຜົນສຳເລັດຂອງການພັດທະນາດ້ານຕ່າງໆ, ຈະແມ່ນການແກ້ໄຂຄວາມທຸກຍາກຂອງປະຊາຊົນໃນເຂດຫ່າງໄກສອກຫລີກ, ການຜະລິດສິນຄ້າໃນຊົນນະບົດ , ການສ້າງບ້ານປອດຄະດີ, ບ້ານວັດທະນະທຳ, ບ້ານສາທາລະນະສຸກ, ບ້ານມີຄວາມສະຫງົບອື່ນໆ ລ້ວນແຕ່ໄດ້ຢັ້ງຢືນບົດຮຽນດັ່ງກ່າວມາແລ້ວ, ກົງກັນຂ້າມບ່ອນ ໃດບໍ່ໄດ້ເອົາໃຈໃສ່ວຽກງານຮາກຖານ, ປ່ອຍປະບ້ານຊົນນະບົດ ການພັດທະນາເຂດດັ່ງກ່າວ ເປັນໄປດ້ວຍ ຄວາມຫຍຸ້ງຍາກ ແລະ ບໍ່ບັນລຸຄາດໝາຍທີ່ວາງໄວ້.

**9. ການສ້າງ ແລະ ປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 5 ປີ ໄດ້ຮັບຜົນສຳເລັດຊໍ່າ ໃດຍັງຂຶ້ນກັບການສ້າງລະບົບ ແລະ ຂອບການຕິດ ຕາມປະເມີນຜົນ, ການກວດກາກວດສອບທັງໃນລະ ດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ ເປັນປະຈ□ າ 6ເດືອນ, 1 ປີ ແລະ ກາງສະໄໝ**:

ຈາກປະສົບປະການ ແລະ ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນ ແຕ່ລະໄລຍະຫລາຍຄັ້ງຂອງແຜນ 5 ປີ ທີ່ຜ່ານມາໄດ້ຢັ້ງຢືນເຖິງຄວາມສາມາດໃນການພະຍາກອນດ້ວຍວິໃສ ທັດທີ່ມີວິທະຍາສາດ ແລະ ບໍ່ມີຄວາມທະເຍີທະຍານ, ອັດຕະວິໃສ ແລະ ໃນຕົວ *« ຕາໃຫຍ່ ກວ່າທ້ອງ »* ຫາກຕ້ອງຄຳນຶງເຖິງຄວາມສາມາດທີ່ເປັນຈິງ, ຄວາມສາມາດໃນການລະດົມແຫລ່ງທຶນ, ຄວາມສາມາດໃນ ການສະໜອງງົບປະມານ, ຄວາມສາມາດຂອງບຸກຄະລາກອນຂອງຂະແໜງການທ້ອງຖິ່ນບ່ອນນັ້ນ. ແຕ່ບໍ່ ຄວນຢ້ຳເທົ້າຢູ່ບ່ອນເກົ່າ, ຫາກຕ້ອງເບິ່ງກົດເກນເສດຖະກິດ-ສັງຄົມ, ຄວາມຮຽກຮ້ອງຕ້ອງການແທ້ຈິງຂອງ ສັງຄົມ, ຂອງປະຊາຊົນບ່ອນນັ້ນ, ຄົນເພີ່ມຂຶ້ນເສດຖະກິດກໍ່ຕ້ອງເພີ່ມຂຶ້ນ.

ພ້ອມກັນນັ້ນ, ໃນການຈັດຕັ້ງປະຕິບັດແຜນການມີຄວາມຈຳເປັນທີ່ຈະຕ້ອງຕິດຕາມ ແລະ ປະເມີນຜົນ ໃນແຕ່ລະໄລຍະຢ່າງເປັນລະບົບ ເພື່ອຕີລາຄາປະສິດທິຜົນການນຳໃຊ້ທຶນຮອນ, ຜົນໄດ້ຮັບ ແລະ ຜົນກະ ທົບ ຈາກໂຄງການ ແລະ ແຜນງານຕ່າງໆ ທີ່ນອນໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະ ໄລຍະເພື່ອຊອກເຫັນການດຸ່ນດ່ຽງຂອງເສດຖະກິດມະຫາພາກ, ຄວາມສົມດຸນຂອງຂະແໜງການ ແລະ ເຂດ ແຄ້ວນ. ສະນັ້ນ, ຢາກຕິດຕາມປະເມີນຜົນໄດ້ດີຕ້ອງມີ ແລະ ກຳແໜ້ນຂໍ້ມູນຂ່າວສານ, ສະຖິຕິ ແລະ ອີງໃສ່ຂໍ້ ມູນເພື່ອດັດປັບການຜິດເຂວຂອງການປະຕິບັດ.

# ພາກທີ ສອງ: ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015)

## I. ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015)

### 1. ຄາດຄະເນສະພາບແວດລ້ອມທີ່ອຳນວຍ ແລະ ສິ່ງທ້າທາຍ

#### 1.1. ສະພາບແວດລ້ອມທີ່ອຳນວຍ(ຂໍ້ສະດວກ):

**ກ. <u>ສາກົນ</u>:**

ເສດຖະກິດຂອງໂລກ ແລະ ພາກພື້ນມີສັນຍານທາງບວກທີ່ຈະຟື້ນຕົວ ແລະ ກັບສູ່ໄລຍະຂະຫຍາຍ ຕົວໃໝ່. ສຳລັບ ສປ ຈີນ, ອິນເດຍ, ລັດເຊຍ, ບຣາຊິນ.. ເສດຖະກິດສືບຕໍ່ຂະຫຍາຍຕົວ, ກາຍເປັນຜູ້ຂັບ ເຄື່ອນເສດຖະກິດໂລກໃນທິດສະວັດນີ້; ບັນດາປະເທດອາຊຽນ, ບັນດາປະເທດຄູ່ຮ່ວມເຈລະຈາ ແລະ ອົງການ ຈັດຕັ້ງສາກົນຕ່າງໆຍັງຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອແກ່ປະເທດດ້ອຍພັດທະນາ ເພື່ອ ຫຼຸດຜ່ອນຄວາມແຕກໂຕນໃນການພັດທະນາລະຫວ່າງບັນດາປະເທດທີ່ພັດທະນາແລ້ວ ແລະ ປະເທດດ້ອຍ ພັດທະນາ. ຂະບວນການເປີດກວ້າງເຂດການຄ້າເສລີອາຊຽນ, ອາຊຽນ+1, ອາຊຽນ+3, ອາຊີຕາເວັນ ອອກ ຈະເປັນໂອກາດທີ່ເອື້ອອຳນວຍໃນການເຂົ້າເຖິງຕະຫຼາດຕ່າງປະເທດຫຼາຍຂຶ້ນ. ການຫັນເປັນສາກົນ (ໂລ ກາພິ

ວັດ), ການຄົ້ນຄວ້ານຳໃຊ້ວິທະຍາສາດ-ເຕັກໂນໂລຍີ, ນະວັດຕະກຳໃໝ່ ແລະ ການພັດທະນາແບບກ້າວກະໂດດຍັງຖືເປັນທ່າອ່ຽງລວມຂອງໂລກ ແລະ ເປັນໂອກາດອັນດີທີ່ສາມາດຍາດແຍ່ງ ແລະ ນຳໃຊ້ເຂົ້າ ໃນຂະບວນການພັດທະນາເສດຖະກິດ-ສັງຄົມຂອງປະເທດ.

**ຂ. <u>ພາຍໃນ</u>:**

ປະເທດເຮົາມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ຢ່າງໜັກແໜ້ນ ປະຊາຊົນບັນດາເຜົ່າມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ; ລະບົບການເມືອງປະຊາທິປະໄຕປະຊາຊົນໄດ້ຮັບການປັບປຸງ ແລະ ແກ້ໄຂ; ກົນໄກເສດຖະກິດຕະຫລາດປະສົມປະສານກັບການວາງແຜນ (ການຄຸ້ມຄອງຂອງລັດ) ໄດ້ກາຍເປັນກຳລັງແຮງຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ. ຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ເປັນຕົ້ນແມ່ນ ເນື້ອທີ່ດິນທີ່ຍັງສາມາດນຳໃຊ້ເພື່ອຂະຫຍາຍການຜະລິດ ແລະ ການພັດທະນາດ້ານຕ່າງໆ, ເນື້ອທີ່ປ່າໄມ້, ແຫລ່ງນ້ຳຫລາຍແຫ່ງ, ອາກາດຮ້ອນຊຸ່ມ, ປະລິມານນ້ຳຝົນຫລາຍ ແລະ ຍັງມີບໍ່ແຮ່ ທີ່ຍັງບໍ່ທັນມີການສຳຫລວດ ແລະ ຂຸດຄົ້ນອີກຫລາຍແຫ່ງ.

ພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາໃນລະດັບໃດໜຶ່ງ, ໂຄງປະກອບເສດຖະກິດໄດ້ຫັນປ່ຽນຕາມທິດທັນເປັນອຸດສາຫະກຳ-ທັນສະໄໝເທື່ອລະກ້າວ, ລະບອບລະບຽບການ ແລະ ກົດ ໝາຍໄດ້ຖືກປະກາດໃຊ້ຢ່າງທົ່ວເຖິງ ເຊິ່ງເປັນພື້ນຖານໃຫ້ແກ່ການພັດທະນາໃນຂັ້ນຕໍ່ໄປ; ພ້ອມກັນນັ້ນ, ປະເທດເຮົາຍັງມີທີ່ຕັ້ງຍຸດທະສາດຢູ່ໃຈກາງຂອງອະນຸພາກພື້ນແມ່ນ້ຳຂອງ, ເປັນຈຸດເຊື່ອມຕໍ່ລະຫວ່າງອາຊຽນ-ຈີນ, ອາຊຽນ-ເກົາຫລີ, ອາຊຽນ-ຍີ່ປຸ່ນ, ເຊິ່ງເໝາະສົມສຳລັບສ້າງເປັນໃຈກາງການບໍລິການຜ່ານ ແລະ ການເຊື່ອມໂຍງກັບພາກພື້ນ-ສາກົນ.

### ❖ ໂຄງສ້າງຂອງພົນລະເມືອງ:

ອີງໃສ່ການສຳຫຼວດພົນລະເມືອງ 3 ຄັ້ງຜ່ານມາສະແດງໃຫ້ເຫັນວ່າພົນລະເມືອງຂອງ ສປປ ລາວ ໄດ້ເພີ່ມຂຶ້ນປະມານ 1 ລ້ານຄົນໃນທຸກໆ 10 ປີ ເຊັ່ນ: ປີ 1985 ປະເທດລາວມີພົນລະເມືອງປະມານ 3,5 ລ້ານຄົນ, ປີ 1995 ມີປະມານ 4,5 ລ້ານຄົນ ແລະ ປີ 2005 ມີປະມານ 5,6 ລ້ານຄົນ. ດ້ວຍຈັງຫວະການຂະຫຍາຍຕົວຂອງພົນລະເມືອງ ໃນລະດັບ 2,1% ຕໍ່ປີ ຄາດຄະເນວ່າຮອດປີ 2015 ປະເທດເຮົາຈະມີພົນລະເມືອງປະມານ 6,9 ລ້ານຄົນ.

ພົນລະເມືອງສ່ວນໃຫຍ່ເປັນພົນລະເມືອງໜຸ່ມນ້ອຍ, ອາຍຸຕ່ຳກວ່າ 20 ປີ ກວມຫຼາຍກວ່າ 50% ຂອງພົນລະເມືອງທັງໝົດ. ຖ້າຈັດເປັນກຸ່ມອາຍຸ, ໃນປີ 2011 ຄາດວ່າພົນລະເມືອງໃນກຸ່ມອາຍຸ 0-14 ປີ ມີປະມານ 2,38 ລ້ານຄົນ, ໃນນັ້ນ ເປັນຍິງ 1,17 ລ້ານຄົນ; ໃນກຸ່ມອາຍຸ 15-64 ປີ ມີປະມານ 3,76 ລ້ານຄົນ, ໃນນັ້ນ ເປັນຍິງ 1,89 ລ້ານຄົນ ແລະ ໃນກຸ່ມອາຍຸ 65 ປີ ຂຶ້ນໄປ ມີປະມານ 237 ພັນຄົນ, ໃນນັ້ນ ເປັນຍິງ 127 ພັນຄົນ; ຮອດປີ 2015 ຄາດວ່າພົນລະເມືອງໃນ ກຸ່ມອາຍຸ 0-14 ປີ ຈະເພີ່ມຂຶ້ນ ເປັນ 2,54 ລ້ານຄົນ, ໃນນັ້ນ ເປັນຍິງ 1,25 ລ້ານຄົນ; ກຸ່ມອາຍຸ 15-64 ປີ ຈະເພີ່ມຂຶ້ນ ເປັນ 4,10 ລ້ານຄົນ, ໃນນັ້ນ ເປັນຍິງ 2,06 ລ້ານຄົນ ແລະ ກຸ່ມອາຍຸ 65 ປີ ຂຶ້ນໄປ ຈະເພີ່ມຂຶ້ນເປັນ 254 ພັນຄົນ, ໃນນັ້ນ ເປັນຍິງ 137 ພັນຄົນ.

ຈາກການສຳຫຼວດຜ່ານມາເຫັນວ່າພົນລະເມືອງໃນກຸ່ມອາຍຸ 15 ປີລົງມາ ໄດ້ມີການຫຼຸດລົງຈາກ 43% ໃນປີ 1995 ມາເປັນ 39% ໃນປີ 2005 ແລະ ຄາດວ່າຈະສືບຕໍ່ຫຼຸດລົງເປັນ 36% ໃນປີ 2015; ສ່ວນ

ປະຊາກອນໃນໄວອອກແຮງງານ (15-64 ປີ) ມີທ່າອ່ຽງທີ່ເພີ່ມຂຶ້ນ ຈາກ 51% ໃນປີ 1995 ມາເປັນ 57% ໃນປີ 2005 ແລະ ຈະເພີ່ມຂຶ້ນເປັນ 60% ໃນປີ 2015, ປະຊາກອນອາຍຸ 65 ປີຂຶ້ນໄປ ຈະມີປະມານ 4%. ສະພາບການດັ່ງກ່າວໄດ້ຊີ້ໃຫ້ເຫັນວ່າອັດຕາການເອື່ອຍອີງ[19] ຈະມີປະມານ 0,68 ໃນປີ 2015 (ຈາກ 0,76 ໃນປີ 2010), ໝາຍຄວາມວ່າທຸກໆ 100 ຄົນ ໃນເກນອາຍຸເຮັດວຽກ (ອາຍຸ 15-64 ປີ) ຈະຕ້ອງລ້ຽງດູ 68 ຄົນ(ປະຊາກອນອາຍຸ 0-14 ປີ ແລະ ປະຊາກອນອາຍຸ 65ປີ ຂຶ້ນໄປ) .

**ຮູບສະແດງ 8: ຮູບທາດອາຍຸ ພົນລະເມືອງໃນປີ 2015**




ຂໍ້ມູນຂ້າງເທິງສະແດງໃຫ້ເຫັນວ່າ ປະຊາກອນໃນໄວອອກແຮງງານອາຍຸ 15-64 ປີ ຈະມີສັດສ່ວນທີ່ເພີ່ມຂຶ້ນຫຼາຍ ເຊິ່ງແມ່ນເງື່ອນໄຂໜຶ່ງທີ່ສົ່ງຜົນກະທົບທາງບວກໃຫ້ແກ່ການພັດທະນາເສດຖະກິດ ເນື່ອງຈາກ ປະຊາກອນໃນໄວອອກແຮງງານສາມາດສ້າງລາຍໄດ້ຫຼາຍກວ່າການໃຊ້ຈ່າຍຂອງປະຊາກອນທັງໝົດ.

## 1.2. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ

**ກ. <u>ສາກົນ</u>:**

ເຖິງວ່າສັນຍານການຟື້ນຕົວເສດຖະກິດຂອງຫຼາຍປະເທດ ໄດ້ບົ່ງບອກເຖິງຈັງຫວະການຂະຫຍາຍຕົວເສດຖະກິດທີ່ເປັນບວກກໍ່ຕາມ ແຕ່ສະພາບວິກິດການດ້ານການເງິນ ແລະ ເສດຖະກິດໂລກ ຍັງຈະສືບຕໍ່ສົ່ງຜົນກະທົບຕໍ່ການຈະເລີນເຕີບໂຕທາງດ້ານເສດຖະກິດຂອງບັນດາປະເທດຕ່າງໆໃນໂລກ. ບັນດາປະເທດມະຫາອຳ

[19] ອັດຕາການເອື່ອຍອີງຂອງປະຊາກອນໃນໝວດອາຍຸ 0-14 ປີ ແລະ ປະຊາກອນອາຍຸ 65 ປີຂຶ້ນໄປ ທຽບໃສ່ປະຊາກອນໃນໝວດອາຍຸ 15-64 ປີ, (ໝາຍຄວາມວ່າຜູ້ທີ່ບໍ່ສາມາດເຮັດວຽກເສດຖະກິດ ຕໍ່ກັບຜູ້ທີ່ຢູ່ໃນເກນອາຍຸເຮັດວຽກ).

ນາດ ຍັງສືບຕໍ່ໃຊ້ອຳນາດທາງດ້ານເສດຖະກິດສ້າງຄວາມກົດດັນດ້ວຍການອາງລະບຽບການສາກົນ ເພື່ອຕໍ່ລອງ, ແຊກແຊງ ແລະ ເອົາປຽບປະເທດດ້ອຍພັດທະນາດ້ວຍຫຼາຍຮູບແບບ ແລະ ວິທີການ.

ການແຂ່ງຂັນການຄ້າສາກົນນັບມື້ຮຸນແຮງຂຶ້ນ ໄປພ້ອມກັບການຮ່ວມມືທາງດ້ານເສດຖະກິດໃນຂອບເຂດການເຊື່ອມໂຍງເສດຖະກິດຂອງພາກພື້ນ ແລະ ສາກົນ ໂດຍສະເພາະການເປີດກວ້າງການຄ້າເສລີ, ເຂດການຄ້າເສລີ, ການສ້າງຕະຫລາດຮ່ວມ ແລະ ປະຊາຄົມເສດຖະກິດ ເປັນຕົ້ນແມ່ນ: ເຂດການຄ້າເສລີອາຊຽນ, ແຜນການສ້າງເຂດການຄ້າເສລີອາຊຽນ+1 ໃຫ້ໄດ້ໃນປີ 2012, ແຜນການສ້າງຕະຫລາດຮ່ວມ ແລະ ປະຊາຄົມອາຊຽນໃຫ້ໄດ້ໃນປີ 2015.

ການປ່ຽນແປງດິນຟ້າອາກາດ ແລະ ການເກີດໄພພິບັດໃນຫຼາຍປະເທດໃນໂລກ ອາດຈະສົ່ງຜົນກະທົບຕໍ່ເສດຖະກິດໂລກ ເຊິ່ງອາດສົ່ງຜົນກະທົບຕໍ່ເສດຖະກິດລາວບໍ່ຫລາຍກໍ່ຫນ້ອຍ.

**ຂ. <u>ພາຍໃນ</u>:**

ພື້ນຖານເສດຖະກິດຂອງ ສປປ ລາວ ສ່ວນໃຫຍ່ຍັງມີລັກສະນະເສດຖະກິດທຳມະຊາດ ແລະ ເຄິ່ງທຳມະຊາດ, ການຜະລິດເປັນສິນຄ້າຍັງອ່ອນນ້ອຍ ກວມເອົາພາກສ່ວນເອກະເທດເອກະຊົນເປັນສ່ວນໃຫຍ່ ຈຶ່ງເປັນເຫດໃຫ້ມີຄວາມອ່ອນໄຫວຕໍ່ການປ່ຽນແປງຈາກພາຍນອກ ແລະ ການກະທົບຂອງເສດຖະກິດຕະຫລາດນຳໄປເຖິງການຂັດແຍ່ງ ລະຫວ່າງຂົ້ວທຸກ-ຂົ້ວຮັ່ງ, ການຫລຸດໂຕນລະຫວ່າງຕົວເມືອງ-ຊົນນະບົດ.

ຄວາມທຸກຍາກຂອງປະຊາຊົນ, ຄວາມດ້ອຍພັດທະນາຂອງປະເທດ ແລະ ຄວາມຈ□າກັດຂອງລະບອບ ແບບແຜນວິທີການເຮັດວຽກ ແລະ ຊັບພະຍາກອນມະນຸດ ຍັງບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການ ການພັດທະນາປະເທດ ແລະ ການເຊື່ອມໂຍງສາກົນ ເຫັນໄດ້ຈາກ ອັດຕາການເຊື່ອມໂຍງກັບສາກົນ (ລະດັບ ການເປີດປະເທດ) ມີພຽງແຕ່ປະມານ 83% (ປີ 2008) ເຊິ່ງເຫັນວ່າຍັງຢູ່ໃນລະດັບທີ່ຕ□ຳ ຖ້າທຽບໃສ່ ສສ.ຫວຽດນາມ ເຊິ່ງມີ ສູງກວ່າ 100%; ພັນທະຜູກພັນໃນຂະບວນການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ມີຫລາຍຢ່າງ, ແຕ່ຄວາມກຽມພ້ອມຍັງຈຳກັດ ໂດຍສະເພາະແມ່ນດ້ານບຸກຄະລາກອນທັງ ທາງດ້ານປະລິມານ ແລະ ຄຸນນະພາບ, ດ້ານທຶນຮອນ ແລະ ລະບົບສະຖາບັນທີ່ເຂັ້ມແຂງ, ບັນຫາຫນີ້ສິນ ຄຸມເຄືອ ທີ່ຍັງມີອັດຕາສ່ວນທີ່ສູງ, ຄວາມສາມາດແຂ່ງຂັນກັບສາກົນຍັງຕ່ຳ.

ປະກົດການຫຍໍ້ທໍ້ໃນກົງຈັກການຈັດຕັ້ງພັກ-ລັດ, ພະນັກງານ ແລະ ໃນສັງຄົມ. ການນຳໃຊ້ຊັບພະຍາກອນທຳມະຊາດຍັງບໍ່ມີການຄຸ້ມຄອງທີ່ຮັດກຸມ, ຟຸມເຟືອຍ ແລະ ບໍ່ມີປະສິດທິຜົນ ເປັນເຫດໃຫ້ເກີດມີຜົນກະທົບຈາກຄວາມບໍ່ແນ່ນອນຂອງການປ່ຽນແປງດິນຟ້າອາກາດ ແລະ ສິ່ງແວດລ້ອມ ທີ່ເກີດຂຶ້ນໃນແຕ່ລະປີ ເຊິ່ງໄດ້ສ້າງຄວາມເສຍຫາຍຫລາຍຢ່າງ ເປັນຕົ້ນແມ່ນ: ໄພແຫ້ງແລ້ງ, ນ້ຳຖ້ວມ, ລົມພະຍຸ, ພະຍາດລະ ບາດ....

ການລົງທຶນໃສ່ຂົງເຂດສັງຄົມ ແລະ ໂຄງລ່າງພື້ນຖານ ເພື່ອສ້າງເງື່ອນໄຂໃຫ້ກຸ່ມປະຊາກອນໜຸ່ມໄດ້ຮັບການບໍລິການທາງດ້ານສັງຄົມທີ່ດີ ເປັນຕົ້ນແມ່ນ: ການສຶກສາ, ສາທາລະນະສຸກ, ການພັດທະນາສີມື ແລະ ຍົກລະດັບທັກສະໃນການອອກແຮງງານເພື່ອເປັນກ້ອນກຳລັງທີ່ແຂງແກ່ນ ແລະ ມີຄຸນນະພາບແຂງແຮງ ເປັນສິ່ງຈຳເປັນພາວະວິໄສ ເພື່ອໃຫ້ກຸ່ມປະຊາກອນເຫຼົ່ານັ້ນສາມາດປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ. ສະນັ້ນ ການພັດທະນາ ແລະ ສ້າງສະພາບແວດລ້ອມທີ່ດີລວມທັງຕະຫຼາດແຮງງານຈະເປັນການສ້າງງານ ແລະ ດຶງດູດການລົງທຶນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໄດ້ຫຼາຍຂຶ້ນ.

## 2. ຈຸດໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII

(1). ເຮັດໃຫ້ເສດຖະກິດແຫ່ງຊາດ ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີຄວາມສະຫງົບໝັ້ນທ່ຽງ ດ້ວຍອັດຕາການເຕີບໂຕຂອງ (GDP) 8% ຕໍ່ປີຂຶ້ນໄປ, ລວມຍອດຜະລິດຕະພັນສະເລ່ຍ ໃຫ້ໄດ້ 1.700 ໂດ ລາສະຫາລັດຕໍ່ຄົນຕໍ່ປີຂຶ້ນໄປ.

(2). ບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ແລະ ແກ້ໄຂຄວາມທຸກຍາກຂອງ ປະຊາຊົນໃຫ້ໄດ້ ໃນປີ 2015, ສ້າງວັດຖຸເຕັກນິກ ແລະ ເງື່ອນໄຂທີ່ຈຳເປັນ ເພື່ອນຳເອົາປະເທດຫລຸດພົ້ນ ອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ ໃນປີ 2020.

(3). ການພັດທະນາຕາມທິດຮັບປະກັນຄວາມຍືນຍົງ ໂດຍການຫັນສູ່ຄຸນນະພາບ; ເນັ້ນການພັດທະ ນາເສດຖະກິດຕິດພັນກັບການພັດທະນາວັດທະນະທຳ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມ ທຳມະຊາດອັນເປັນທ່າແຮງຂອງຊາດ.

(4). ຮັບປະກັນສະຖຽນລະພາບທາງການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບ ຮ້ອຍໃນສັງຄົມ

## 3. ທິດທາງ ແລະ ໜ້າທີ່ລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII

ໜ້າທີ່ຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ແມ່ນສືບຕໍ່ໝາກຜົນຂອງການ ພັດທະນາປະເທດຊາດໃນໄລຍະຜ່ານມາ, ແກ້ໄຂບັນຫາທີ່ທິດສອບທ້າທ້າຍ, ເປັນການປະຕິບັດມະຕິກອງ ປະຊຸມຕ່າງໆເປັນຕົ້ນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ເປັນການພັດທະນາທີ່ຄົບຊຸດ, ຮອບດ້ານ, ດຳເນີນໄປທຸກຂົງເຂດ, ທຸກຂະແໜງການ, ເຂດແຄ້ວນ ແລະ ທ້ອງຖິ່ນ; ໃນນັ້ນ, ທິດທາງໜ້າທີ່ຕົ້ນຕໍແມ່ນ:

(1). ພັດທະນາເສດຖະກິດມະຫາພາກເປັນໃຈກາງ ຕາມທິດສ້າງການເຕີບໂຕທີ່ເຂັ້ມແຂງ, ສຸມ ໃສ່ ການສ້າງສາເສດຖະກິດຕະຫລາດທີ່ມີການຄຸ້ມຄອງຂອງລັດ, ຮັບປະກັນຄວາມສະຫງົບ ແລະ ຄວາມໝັ້ນ ທ່ຽງ ທາງດ້ານເສດຖະກິດມະຫາພາກ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງດ້ວຍຈັງຫວະທີ່ໄວ; ຍູ້ແຮງການ ຫັນປ່ຽນໂຄງປະກອບເສດຖະກິດ ແລະ ໂຄງປະກອບແຮງງານ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະ ໄໝ, ນຳໃຊ້ວິທະຍາສາດເຕັກໂນໂລຊີໃໝ່ ແລະ ທັນສະໄໝ ໂດຍຖືເອົາການພັດທະນາເສດຖະກິດ ເປັນ ໃຈກາງ, ການພັດທະນາສັງຄົມ ແລະ ການແກ້ໄຂຄວາມທຸກຍາກ ຂອງປະຊາຊົນເປັນເປົ້າໝາຍສຳຄັນ, ການ ພັດທະນາຊັບພະຍາກອນມະນຸດເປັນປັດໄຈຕົ້ນຕໍ ແລະ ການຮັກສາສິ່ງແວດລ້ອມ ເປັນເງື່ອນໄຂທີ່ຈຳ ເປັນ ຂອງການພັດທະນາ, ປັບປຸງການພົວພັນການຜະລິດ ໃຫ້ສອດຄ່ອງ, ເສີມຂະຫຍາຍກຳລັງແຮງ ແລະ ຄຸນ ປະໂຫຍດຂອງທຸກພາກສ່ວນເສດຖະກິດເຂົ້າໃນການພັດທະນາ, ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະ ໜາດກາງໃຫ້ຂະຫຍາຍຕົວ.

(2). ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ໄດ້ໂດຍພື້ນຖານດ້ວຍມາດຕະການທີ່ສອດຄ່ອງ, ເອົາ ໃຈໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບການກໍ່ສ້າງຮາກຖານການເມືອງ ຕາມ 4 ເນື້ອໃນ 4 ຄາດໝາຍ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ແກ່ປະຊາຊົນ, ສ້າງຄວາມຢູ່ດີກິນດີໃຫ້ ແກ່ປະຊາຊົນ, ສ້າງຄວາມຍຸຕິທຳໃນສັງຄົມ, ຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ-ຊົນນະບົດ, ສົ່ງ ເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ, ຜູ້ທຸກ-ຜູ້ຮັ່ງ ໂດຍຖືເອົາການສ້າງຄວາມຮູ້ ແລະ ສົ່ງເສີມການສຶກ

ສາໃຫ້ແກ່ປະຊາຊົນ, ຍູ້ແຮງການຜະລິດເປັນສິນຄ້າ, ການປ້ອງກັນ ແລະ ປົ່ນປົວສຸຂະພາບ, ການສ້າງ ພື້ນຖານໂຄງລ່າງ, ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ.

(3). ພັດທະນາວັດທະນະທຳ-ສັງຄົມຢ່າງສົມດູ່ ກົມກຽວກັນລະຫວ່າງການພັດທະນາເສດຖະກິດ ກັບ ສັງຄົມ, ສ້າງຄວາມຈະເລີນ ແລະ ຄວາມຢູ່ດີກິນດີທາງດ້ານວັດຖຸ ແລະ ສ້າງຄວາມສີວິໄລທາງດ້ານຈິດໃຈ, ສ້າງໃຫ້ໄດ້ຖັນແຖວບຸກຄະລາກອນ, ຊັບພະຍາກອນມະນຸດ ເພື່ອຕອບສະໜອງພາລະກິດການຫັນປະເທດ ເປັນອຸດສາຫະກຳ ແລະ ທັນສະໄໝ ໂດຍຖືເອົາການປະຕິຮູບການສຶກສາ ແລະ ການພັດທະນາຊັບພະຍາ ກອນມະນຸດຢ່າງຕັ້ງໜ້າ ເຊັ່ນ: ການຍົກສູງຄຸນນະພາບ ແລະ ການຂະຫຍາຍໂອກາດດ້ານການສຶກສາໃຫ້ ກວ້າງຂວາງ ແລະ ທົ່ວເຖິງກວ່າເກົ່າ, ພັດທະນາເສດຖະກິດພູມປັນຍາ ໂດຍການເອົາໃຈໃສ່ພັດທະນາ ແລະ ຍົກສູງຄຸນນະພາບຊີວິດໂດຍການບຳລຸງສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້ສູງ, ມີສຸຂະພາບ ແລະ ພາ ລານາໄມສົມບູນ, ສ້າງໃຫ້ເປັນພະນັກງານຄຸ້ມຄອງເກັ່ງ ແລະ ເປັນກຳມະກອນທີ່ມີສີມື, ກໍ່ສ້າງຊັບພະຍາກອນ ມະນຸດໃຫ້ແກ່ທ້ອງຖິ່ນຮາກຖານ ເພື່ອປະກອບສ່ວນເຂົ້າໃນການພັດທະນາຢ່າງມີປະສິດທິຜົນ. ປະຕິບັດຄວາມ ສະເໝີພາບລະຫວ່າງຍິງ-ຊາຍ, ຍົກສູງບົດບາດຂອງແມ່ຍິງ ແລະ ປົກປ້ອງສິດທິຂອງເດັກ, ສົ່ງເສີມນະໂຍ ບາຍພັດທະນາຊາວໜຸ່ມລາວໃຫ້ເຂັ້ມແຂງ ເພື່ອເປັນກຳລັງທີ່ແຂງແກ່ນ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ. ສືບຕໍ່ຮັກສາ ແລະ ເສີມຂະຫຍາຍຄຸນຄ່າວັດທະນະທຳທີ່ດີງາມຂອງຊາດ ຄຽງຄູ່ກັບ ການ ເປີດກວ້າງການແລກປ່ຽນກັບສາກົນ ແລະ ການຍົກສູງຄຸນນະພາບຂອງວຽກງານຖະແຫລງຂ່າວ.

(4). ຍົກສູງຄວາມສັກສິດ ແລະ ປະສິດທິຜົນຂອງການຄຸ້ມຄອງບໍລິຫານລັດ; ບູລະນະລັດປະຊາທິປະ ໄຕປະຊາຊົນຕາມທິດລັດແຫ່ງກົດໝາຍ, ຮັບປະກັນຄວາມສະເໝີພາບ ແລະ ຄວາມຍຸຕິທຳໃນສັງຄົມ; ຕໍ່ຕ້ານ ການສໍ້ລາດບັງຫຼວງ, ເພີ່ມທະວີການປະຢັດ ແລະ ຕ້ານການຟຸມເຟືອຍ. ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ ຕ່າງໆ ໃຫ້ທັນກັບສະພາບການໂດຍມີການຈັດຕັ້ງເຄື່ອນໄຫວທີ່ເປັນເອກະພາບ, ມີການແບ່ງຂັ້ນ, ແບ່ງງານ ຢ່າງລະອຽດ ຈະແຈ້ງກວ່າເກົ່າລະຫວ່າງບັນດາອົງການອຳນາດລັດແຕ່ລະຂັ້ນທັງສູນກາງ ແລະ ທ້ອງຖິ່ນ ຕາມທິດເສີມຂະຫຍາຍຄວາມເປັນເຈົ້າການໃນການປະດິດສ້າງ ແລະ ການຊຸດຄົ້ນນຳໃຊ້ທ່າແຮງຂອງທ້ອງຖິ່ນ ຢ່າງໜັກແໜ້ນ. ຄຽງຄູ່ກັບການເອົາໃຈໃສ່ຜັນຂະຫຍາຍບັນດາກົດໝາຍຕ່າງໆທີ່ສະພາແຫ່ງຊາດຮັບຮອງໃຫ້ ເປັນອັນລະອຽດ ແລະ ເຂັ້ມງວດໃນການຈັດຕັ້ງປະຕິບັດໃຫ້ທັນການ.

(5). ຮັບປະກັນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນທຸກພື້ນທີ່ທົ່ວປະເທດ ເຮັດໃຫ້ປະເທດ ຊາດມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກ ແໜ້ນ; ປັບປຸງກົນໄກ ແລະ ລະບຽບການຕ່າງໆດ້ານການຕິດຕາມກວດກາການເຂົ້າ-ອອກເມືອງ, ການຄຸ້ມ ຄອງພົນລະເມືອງໃຫ້ມີຄວາມເປັນລະບຽບສະດວກ ແລະ ຮັດກຸມ.

(6) ເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ແລະ ກຳລັງແຮງຂອງຍຸກສະໄໝເຂົ້າໃນການ ພັດທະນາປະເທດ; ຈັດສັນ, ຟື້ນຟູ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ເກີດປະໂຫຍດສູງສຸດ; ຂະ ຫຍາຍການພົວພັນຮ່ວມມືກັບເພື່ອນມິດ ແລະ ບັນດາປະເທດໃນພາກພື້ນ ແລະ ສາກົນ, ສ້າງສະພາບແວດ ລ້ອມທີ່ເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ; ເພີ່ມທະວີຄວາມເປັນເຈົ້າການເຂົ້າຮ່ວມການ ເຊື່ອມໂຍງ ແລະ ເພີ່ມທະວີຄວາມສາມາດໃນການແຂ່ງຂັນກັບພາກພື້ນ ແລະ ສາກົນໃຫ້ສູງຂຶ້ນ ໂດຍຖືເອົາ ການລົງທຶນພາຍໃນ ແລະ ຕ່າງປະເທດເປັນປັດໄຈສຳຄັນ ເພື່ອບັນລຸການຂະຫຍາຍຕົວຂອງເສດຖະກິດ; ສ້າງ ລະບົບໂຄງລ່າງເສດຖະກິດ-ສັງຄົມແບບຄົບຊຸດ ແລະ ອາງນະໂຍບາຍສົ່ງເສີມການລົງທຶນ ຈາກທຸກພາກສ່ວນ

ເສດຖະກິດ ເຂົ້າໃນເຂດຈຸດສຸມຂອງການພັດທະນາ, ເຂດຈຸດສຸມການຜະລິດ, ເຂດທີ່ຫຍຸ້ງຍາກ ແລະ ຫ່າງໄກ ສອກຫລີກ.

(7). ປະຕິບັດຍຸດທະສາດຫັນເປັນອຸດສະຫະກຳ ແລະ ທັນສະໄໝດ້ວຍບາດກ້າວທີ່ຕັ້ງໜ້າ ແລະ ມີ ຈຸດສຸມຢູ່ຂະແໜງການ ແລະ ບໍລິເວນເຂດແຄວ້ນທີ່ມີເງື່ອນໄຂ ຄວາມສາມາດ ແລະ ມີທ່າແຮງ ເພື່ອຫຼຸດຜ່ອນ ຄວາມແຕກໂຕນດ້ານລະດັບການພັດທະນາກັບບັນດາປະເທດອື່ນໆໃນພາກພື້ນ ແລະ ສາກົນໄດ້ໄວຂຶ້ນ ໂດຍ ການສຸມໃສ່ບັນດາໂຄງການຂະໜາດໃຫຍ່ ເພື່ອສ້າງຖານການເຕີບໂຕໃຫ້ເຂັ້ມແຂງ ແລະ ສາມາດຮັບໃຊ້ໃຫ້ ແກ່ການເຊື່ອມໂຍງລະຫວ່າງປະເທດ, ຕິດພັນກັບການຊຸກຍູ້ສົ່ງເສີມການຜະລິດ-ທຸລະກິດຂະໜາດນ້ອຍ-ກາງ ໃຫ້ສາມາດນຳໃຊ້ເຕັກນິກ-ເຕັກໂນໂລຊີໃໝ່ ເພື່ອຍົກສູງສະມັດຕະພາບການຜະລິດ ແລະ ປະສິດທິຜົນ ເສດຖະກິດໃຫ້ສູງຂຶ້ນ.

# 4. ຄາດໝາຍສູ້ຊົນ ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII

## 4.1. ຄາດໝາຍສູ້ຊົນດ້ານເສດຖະກິດມະຫາພາກ

- ຮັບປະກັນໃຫ້ຈັງຫວະການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນສະເລ່ຍ 8% ຕໍ່ປີຂຶ້ນ ໄປ, ມູນຄ່າຕາມລາຄາໃນປີ 2015 ປະມານ 99.700 ຕື້ກີບ, ໃນນັ້ນ, ກະສິກຳ-ປ່າໄມ້ ເພີ່ມຂຶ້ນສະ ເລ່ຍ 3,5% ຂຶ້ນໄປ, ກວມປະມານ 23% ຂອງລວມຍອດຜະລິດຕະພັນພາຍໃນ, ອຸດສາຫະກຳ ສະ ເລ່ຍເພີ່ມຂຶ້ນ 15% ຂຶ້ນໄປ, ກວມປະມານ 39% ແລະ ການບໍລິການ ສະເລ່ຍເພີ່ມຂຶ້ນ 6,5% ຂຶ້ນ ໄປ, ກວມປະມານ 38% ຂອງລວມຍອດຜະລິດຕະພັນພາຍໃນ; ຮອດປີ 2015, ຄາດວ່າລວມ ຍອດ ຜະລິດຕະພັນພາຍໃນສະເລ່ຍຈະໃຫ້ໄດ້ປະມານ 1.700 ໂດລາສະຫະລັດຕໍ່ຄົນຕໍ່ປີຂຶ້ນໄປ.
- ຫັນປ່ຽນໂຄງປະກອບຂອງເສດຖະກິດໄປຕາມທິດທີ່ຕັ້ງໜ້າກວ່າເກົ່າ ໂດຍການສູ້ຊົນ ໃຫ້ອັດຕາການ ຊົມໃຊ້ໃນສັງຄົມ ກວມປະມານ 75%, ການລົງທຶນລວມ (ທັງພາກລັດ ແລະ ເອກະຊົນ) ກວມປະ ມານ 40%, ການສົ່ງອອກ ກວມປະມານ 35% ແລະ ການນຳເຂົ້າ ກວມປະມານ 50%. ຮັບປະກັນ ດຸ່ນການຊຳລະສະສາງກັບຕ່າງປະເທດໃຫ້ເໝາະສົມ ແລະ ສູ້ຊົນເຮັດໃຫ້ການຄ້າຕ່າງປະເທດ ມີ ຄວາມສົມດຸນ; ຄວບຄຸມອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕ່ຳກວ່າອັດຕາການຂະຫຍາຍຕົວເສດຖະກິດ, ຄຸ້ມຄອງອັດຕາແລກປ່ຽນໃຫ້ມີຄວາມສະຫງົບປົກກະຕິ.
- ຮອດປີ 2015 ສູ້ຊົນປະຕິບັດລາຍຮັບທັງໝົດ (ລວມເງິນຊ່ວຍເຫລືອລ້າ) ໃຫ້ໄດ້ສະເລ່ຍ 18-19% ຂອງ GDP ຂຶ້ນໄປ, ລາຍຮັບພາຍໃນໃຫ້ໄດ້ປະມານ 16-17% ຂອງລວມຍອດຜະລິດຕະພັນພາຍ ໃນຕໍ່ປີຂຶ້ນໄປ, ຮັບປະກັນການຂາດດຸນງົບປະມານບໍ່ເກີນ 3-5% ຂອງ GDP ຕໍ່ປີ. ສູ້ຊົນໃຫ້ການລະ ດົມເງິນຝາກເພີ່ມຂຶ້ນໂດຍສະເລ່ຍ 25% ຕໍ່ປີ ຫຼື ກວມເອົາ 39% ຂອງລວມຍອດຜະລິດຕະພັນພາຍ ໃນ.

## 4.2. ຄາດໝາຍສູ້ຊົນດ້ານຂະແໜງການເສດຖະກິດ

- ສູ້ຊົນຜະລິດໃຫ້ໄດ້ 4 ລ້ານໂຕນ, ໃນເນື້ອທີ່ 1,04 ລ້ານເຮັກຕາ, ຄາດວ່າສະມັດຕະພາບໃນການ ຜະລິດເຂົ້າ ປະມານ 3,9 ໂຕນຕໍ່ເຮັກຕາ; ສະເລ່ຍຄົນຜູ້ໜຶ່ງຜະລິດເຂົ້າໄດ້ 450-500 ກິໂລຕໍ່ປີ ເພື່ອ ຮັບປະກັນໃຫ້ໄດ້ພະລັງງານ 2.400-2.500 ກິໂລກະລໍລີຕໍ່ຄົນຕໍ່ວັນ;

- ລະດັບການຂະຫຍາຍພັນສັດ ປະມານ 4-5% ຕໍ່ປີ; ໃນນັ້ນ, ງົວ-ຄວາຍ ປະມານ 2-3%, ໝູ ແລະ ສັດປີກ ປະມານ 6%;
- ພັດທະນາຊົນລະປະທານໄປສູ່ການພັດທະນາຊົນລະກະເສດທີ່ນຳໃຊ້ກົນຈັກ ແລະ ໄຟຟ້າໃຫ້ກວມ ອັດຕາສ່ວນ 60-70% ຂອງເນື້ອທີ່ປູກຝັງໃນເຂດທົ່ງພຽງ ແລະ ພູດອຍ ຫຼື 50% ຂອງເນື້ອທີ່ ການ ຜະລິດເຂົ້າ, ປູກພືດອຸດສາຫະກຳ ແລະ ລ້ຽງສັດ.
- ມູນຄ່າການສົ່ງອອກສິນຄ້າ ສະເລ່ຍເພີ່ມຂຶ້ນ 18% ແລະ ການນຳເຂົ້າ ສະເລ່ຍປະມານ 8% ຕໍ່ປີ; ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຂະຫຍາຍຕົວໃນອັດຕາສະເລ່ຍ 12-13% ຕໍ່ປີ ແລະ ກວມ ປະມານ 24% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2015; ສ້າງຫ້ວໜ່ວຍເສດຖະກິດຮ່ວມມື ຂອງປະຊາຊົນໃຫ້ກວມປະມານ 50% ຂອງຈຳນວນກຸ່ມບ້ານ.
- ໃນໄລຍະແຜນການ 5 ປີ ສູ້ຊົນສ້າງໂຮງງານຜະລິດກະແສໄຟຟ້າ ໃຫ້ສຳເລັດ 7 ແຫ່ງ ດ້ວຍກຳລັງ ຕິດຕັ້ງ 3.436 ເມກາວັດ; ສູ້ຊົນຂະຫຍາຍສາຍສົ່ງແຮງກາງ 22 Kv ແລະ ໄຟຟ້ານອກລະບົບໄປສູ່ ເຂດຊົນນະບົດຫ່າງໄກສອກຫຼີກບ່ອນທີ່ຍັງບໍ່ມີໄຟຟ້າ ໃຫ້ໄດ້ 80% ຂອງຈຳນວນຄອບຄົວໃນທົ່ວປະ ເທດ.
- ສູ້ຊົນສ້າງແຜນທີ່ທໍລະສາດ-ບໍ່ແຮ່ ມາດຕາສ່ວນ 1/200.000 ໃຫ້ສຳເລັດຢ່າງໜ້ອຍ 75% ຂອງເນື້ອ ທີ່ທົ່ວປະເທດ ແລະ ສູ້ຊົນຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດສຳຄັນ ເຊັ່ນ: ທອງແຜ່ນ 86.200 ໂຕນຕໍ່ປີ , ຄຳແທ່ງ 6 ໂຕນຕໍ່ປີ, ຖ່ານຫີນ 728.000 ໂຕນຕໍ່ປີ.
- ສູ້ຊົນດຶງດູດນັກທ່ອງທ່ຽວໃຫ້ເພີ່ມຂຶ້ນປະມານ 2,8 ລ້ານຄົນ, ຂະຫຍາຍໂຮງແຮມໃຫ້ໄດ້ປະມານ 300 ແຫ່ງ, ຣີສອດມາດຕະຖານສູງ ແລະ ຮ້ານອາຫານປະມານ 850 ແຫ່ງ; ຂຸດຄົ້ນ ແລະ ຂະຫຍາຍ ແຫຼ່ງທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດໃຫ້ກາຍເປັນມໍລະດົກໂລກອີກ 2 ແຫ່ງ.
- ກໍ່ສ້າງ ແລະ ຂະຫຍາຍເສັ້ນທາງເຊື່ອມຕໍ່ກັບອະນຸພາກພື້ນໃຫ້ໄດ້ 100% ຂອງແຜນການ ແລະ ສູ້ ຊົນກໍ່ສ້າງເສັ້ນທາງຫຼວງຂອງເມືອງ, ຊົນນະບົດທີ່ເຊື່ອມໃສ່ເຂດຈຸດສຸມ ແລະ ກຸ່ມບ້ານພັດທະນາ ຈຳນວນໜຶ່ງ ໃຫ້ສາມາດສັນຈອນໄປມາໄດ້ຢ່າງໜ້ອຍໜຶ່ງລະດູ ໃຫ້ໄດ້ 100% ໃນປີ 2015; ການ ຂົນສົ່ງໂດຍສານການບິນ ເພີ່ມຂຶ້ນປະມານ 8-10% ຕໍ່ປີ; ສະໜອງນ້ຳປະປາໃຫ້ປະຊາຊົນໃນຕົວ ເມືອງ ໃຫ້ໄດ້ 67% ຂອງຈຳນວນປະຊາຊົນທັງໝົດທີ່ອາໄສໃນຕົວເມືອງ.
- ຂະຫຍາຍຕາໜ່າງ ແລະ ການບໍລິການໂທລະຄົມອອກສູ່ຊົນນະບົດໃຫ້ໄດ້ 90% ຂອງຈຳນວນບ້ານ ໃນທົ່ວປະເທດ ແລະ ກໍ່ສ້າງລະບົບສາຍກາບໃຍແສງໃຫ້ໄດ້ 17.192 ກິໂລແມັດ ແລະ ຂະຫຍາຍ ຈຳນວນເລກໝາຍໂທລະສັບມືຖື ແລະ ຕັ້ງໂຕະ ໃຫ້ໄດ້ 80% ຂອງຈຳນວນປະຊາກອນທັງໝົດ.

## 4.3. ຄາດໝາຍສູ້ຊົນດ້ານສັງຄົມ

- ສູ້ຊົນຫຼຸດຜ່ອນອັດຕາຄວາມທຸກຍາກໃຫ້ຕ່ຳກວ່າ 19% ຂອງຈຳນວນພົນລະເມືອງທັງໝົດ ແລະ ອັດຕາຄົວເຮືອນທຸກຍາກໃຫ້ຕ່ຳກວ່າ 11% ຂອງຄົວເຮືອນທັງໝົດ ໃນປີ 2015.
- ເພີ່ມອັດຕາການເຂົ້າຮຽນສຸດທິຂອງຊັ້ນປະຖົມໃຫ້ໄດ້ 98% ໃນປີ 2015;
- ເພີ່ມອັດຕາສ່ວນຂອງນັກຮຽນທີ່ເຂົ້າຮຽນຊັ້ນ ປ1 ທີ່ສືບຕໍ່ຮຽນຮອດຊັ້ນ ປ5 ໃຫ້ໄດ້ 95%, ອັດຕາການ ຮູ້ໜັງສືໃນກຸ່ມອາຍຸ 15-24ປີ ໃຫ້ໄດ້ 99%;

- ຫລຸດອັດຕາສ່ວນການຕາຍຂອງເດັກລຸ່ມ 5 ປີ ໃຫ້ຍັງເຫຼືອ 70 ຄົນ ຕໍ່ເດັກເກີດມີຊີວິດ 1.000 ຄົນ;
- ຫລຸດອັດຕາສ່ວນການຕາຍຂອງເດັກນ້ອຍຕ່ຳກວ່າ 1 ປີ ໃຫ້ຍັງເຫຼືອ 45 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນ;
- ຫຼຸດອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານໃຫ້ໄດ້ 20% ແລະ ເດັກນ້ອຍທີ່ເຕ້ຍໃຫ້ໄດ້ 34%;
- ຫລຸດອັດຕາສ່ວນການຕາຍຂອງແມ່ ບໍ່ໃຫ້ເກີນ 260 ຄົນ ຕໍ່ເດັກເກີດມີຊີວິດ 100.000 ຄົນ.
- ເພີ່ມອັດຕາສ່ວນປະຊາກອນລວມຊົມໃຊ້ນ້ຳສະອາດ ໃຫ້ໄດ້ 80% ແລະ ອັດຕາສ່ວນຊົມໃຊ້ວິດຖ່າຍໃຫ້ໄດ້ 60% ຂອງຈຳນວນປະຊາກອນທັງໝົດ;
- ເພີ່ມອາຍຸຍືນສະເລ່ຍໃຫ້ບັນລຸ 67 ປີ ຮອດປີ 2015
- ຄວບຄຸມອັດຕາການຫວ່າງງານສະເລ່ຍໃຫ້ຢູ່ໃນລະດັບ ບໍ່ເກີນ 2% ;
- ສຸ້ຊົນໃຫ້ສັດສ່ວນແຮງງານໃນຂະແໜງກະສິກຳ-ປ່າໄມ້ ຫຼຸດມາເປັນ 70%, ອຸດສາຫະກຳ-ກໍ່ສ້າງ-ບໍ່ແຮ່ ເພີ່ມຂຶ້ນເປັນ 7% ແລະ ຂະແໜງບໍລິການ ເພີ່ມຂຶ້ນເປັນ 23% ຂອງແຮງງານລວມ;
- ສູ້ຊົນສ້າງບ້ານວັດທະນະທຳໃຫ້ໄດ້ຫຼາຍກວ່າ 700 ບ້ານ, ສ້າງຄອບຄົວວັດທະນະທຳໃຫ້ໄດ້ຫຼາຍກວ່າ 100.000 ຄອບຄົວ, ສ້າງສວນສາທາລະນະຢູ່ສູນກາງໃຫ້ໄດ້ຢ່າງໜ້ອຍ 4 ແຫ່ງ ແລະ ລະດັບທ້ອງຖິ່ນໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງຕໍ່ແຂວງ;
- ສູ້ຊົນເພີ່ມອັດຕາສ່ວນເພດຍິງເຂົ້າໃນຄະນະນຳນັບແຕ່ຂັ້ນເມືອງຂຶ້ນໄປ ໃຫ້ໄດ້ 15% ຂຶ້ນໄປ ເພີ່ມອັດຕາສ່ວນເພດຍິງທີ່ເປັນສະມາຊິກສະພາແຫ່ງຊາດ ໃຫ້ໄດ້ 30% ຂຶ້ນໄປ ແລະເພີ່ມອັດຕາສ່ວນເພດຍິງກວມເອົາ 40% ຂອງກຳລັງແຮງງານທັງໝົດເພື່ອປະກອບສ່ວນເຂົ້າໃນການພັດທະນາຄ່ຽງຄູ່ກັບເພດຊາຍ.
- ສູ້ຊົນພັດທະນາຄຸນນະພາບຊີວິດຂອງປະຊາຊົນລາວໃຫ້ດີຂຶ້ນໂດຍພື້ນຖານ ຄ່ຽງຄູ່ກັບການສູ້ຊົນເພື່ອບັນລຸບັນດາເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (ລາຍລະອຽດຢູ່ເອກະສານຊ້ອນທ້າຍ).

## 4.4. ຄາດໝາຍສູ້ຊົນດ້ານສິ່ງແວດລ້ອມ ແລະ ຮັບພະຍາກອນທຳມະຊາດ

- ຮອດປີ 2015, ການພັດທະນາຕ້ອງຮັບປະກັນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດໃຫ້ຫນ້ອຍທີ່ສຸດ, ພັດທະນາ ແລະ ປົກປັກຮັກສາເນື້ອທີ່ປ່າໄມ້ກວມປະມານ 65% ຂອງເນື້ອທີ່ທົ່ວປະເທດ, ສ້າງ ສປປ ລາວ ໃຫ້ກາຍເປັນພື້ນທີ່ສີຂຽວຂອງໂລກ.
- ສຳເລັດການຈັດສັນ, ກຳນົດເຂດພັດທະນາ ແລະ ການນຳໃຊ້ດິນ, ໂດຍສະເພາະແມ່ນ ເຂດທີ່ມີປ່າໄມ້ປົກຫຸ້ມ: ເຂດປ່າສະຫງວນ, ເຂດປ່າຜະລິດ, ເຂດປ່າປ້ອງກັນ ແລະ ເຂດຍອດນ້ຳ.
- ເຂົ້າຮ່ວມຂະບວນການຕ້ານໂລກຮ້ອນ, ການປ່ຽນແປງດິນຟ້າອາກາດ, ຫຼຸດຜ່ອນການປ່ອຍມົນລະພິດ, ຮັກສາແຫຼ່ງຊັບພະຍາກອນແຮ່ທາດ (ຮັກສາເນື້ອທີ່ແຫຼ່ງສະສົມແຮ່ທາດໃຫ້ໄດ້ຫຼາຍກວ່າ 65% ຂອງແຫຼ່ງແຮ່ທາດທົ່ວປະເທດ), ຮັກສາຄວາມອຸດົມສົມບູນຂອງດິນ, ນ້ຳ ແລະ ອາກາດ.
- ຮັບປະກັນໃນລະດັບສູງຕໍ່ການປ້ອງກັນເຫດການໄພພິບັດທາງທຳມະຊາດ ເປັນຕົ້ນແມ່ນໄຟໄໝ້ປ່າ, ໄພແຫ້ງແລ້ງ, ນ້ຳຖ້ວມ, ການເຊາະເຈື່ອນຂອງແມ່ນ້ຳລຳເຊ ແລະ ພູເຂົາ.

## 4.5. ຄາດໝາຍສູ້ຊົນການເຊື່ອມໂຍງສາກົນ

- ສູ້ຊົນໃຫ້ການພົວພັນການຄ້າກັບຕ່າງປະເທດ ແລະ ອັດຕາການເຊື່ອມໂຍງກັບສາກົນ ໃຫ້ໄດ້ 100% ຂຶ້ນໄປ.
- ບັນລຸເປົ້າໝາຍການເຂົ້າຮ່ວມປະຊາຄົມອາຊຽນ ໃນປີ 2015 ເຊິ່ງລວມມີເປົ້າໝາຍປະຊາຄົມການເມືອງ ແລະ ຄວາມໝັ້ນຄົງ, ປະຊາຄົມເສດຖະກິດ ແລະ ປະຊາຄົມສັງຄົມ.
- ສູ້ຊົນໃຫ້ໄດ້ເຂົ້າເປັນສະມາຊິກຂອງອົງການ ການຄ້າໂລກ.
- ບັນລຸບັນດາແຜນງານຮ່ວມມືໃນກອບອະນຸພາກພື້ນແມ່ນ້ຳຂອງ, ເຂດສາມຫຼ່ຽມພັດທະນາ ລາວ-ຫວຽດນາມ-ກຳປູເຈຍ (CLV).

# 5. ຄາດຄະເນການດຸ່ນດ່ຽງມະຫາພາກ

## 5.1. ການດຸ່ນດ່ຽງການລົງທຶນ

ເພື່ອຮັບປະກັນໃຫ້ຈັງຫວະການຂະຫຍາຍຕົວຂອງເສດຖະກິດ ສຳລັບໄລຍະ 2011-2015 ໃຫ້ບັນລຸ 8% ຕໍ່ ປີຂຶ້ນໄປນັ້ນ, ມີຄວາມຕ້ອງການລົງທຶນລວມທັງໝົດ ປະມານ 127 ພັນຕື້ກີບ ຫຼື ປະມານ 32% ຂອງ GDP; ໃນນັ້ນ:

- <u>ການລົງທຶນຈາກງົບປະມານພາຍໃນຂອງລັດ</u> ກວມປະມານ 8-10% ຂອງການລົງທຶນທັງຫມົດ ຫລື ເທົ່າກັບປະມານ 10-12 ພັນຕື້ກີບ (1.200-1.400 ລ້ານໂດລາສະຫາລັດ). ຈຸດສຸມຂອງການລົງທຶນຈາກງົບປະມານຂອງລັດແມ່ນ: ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ, ຈັດຕັ້ງປະຕິບັດໂຄງການບູລິມະສິດຂອງລັດຖະບານ, ສົມທົບທຶນເພື່ອຈັດຕັ້ງປະຕິບັດໂຄງການຊ່ວຍເຫລືອລ້າ ແລະ ກູ້ຢືມ, ພັດທະນາສາທາລະນຸປະໂພກຂັ້ນພື້ນຖານ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ສົ່ງເສີມການສ້າງວຽກເຮັດງານທຳ, ວຽກງານຕ້ອແບບໃນການພັດທະນາ, ວຽກງານສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ພັດທະນາເຂດຫ່າງໄກສອກຫລີກ, ເຂດຊາຍແດນ, ເຂດທີ່ຍັງຈຳເປັນອື່ນໆ ແລະ ວຽກງານສົ່ງເສີມ ແລະ ຮັກສາວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ.
- <u>ການຊ່ວຍເຫລືອທາງການເພື່ອການພັດທະນາ (ODA)</u> ກວມປະມານ 26-28% ຂອງການລົງທຶນທັງຫມົດ ຫລື ເທົ່າກັບ 33-35 ພັນຕື້ກີບ (3.800-4.200 ລ້ານໂດລາສະຫະລັດ). ທຶນດັ່ງກ່າວຈະສຸມໃສ່ການບັນລຸເປົ້າຫມາຍສະຫັດສະຫວັດດ້ານການພັດທະນາ (MDGs) ແລະ ການພັດທະນາສັງຄົມອື່ນໆ ເປັນຕົ້ນ: ການພັດທະນາຊັບພະຍາກອນມະນຸດ ແລະ ການແກ້ໄຂຄວາມທຸກຍາກ, ສົ່ງເສີມໃຫ້ຄົນມີການສຶກສາທີ່ສູງ ແລະ ມີຄຸນນະພາບ, ມີລະດັບຊີວິດການເປັນຢູ່ທີ່ດີຂຶ້ນ, ມີສຸຂະພາບທີ່ແຂງແຮງ ແລະ ມີໂພຊະນາການທີ່ຖືກຫລັກອະນາໄມ. ສະນັ້ນ ເພື່ອບັນລຸເປົ້າຫມາຍດັ່ງກ່າວ ຕ້ອງລະດົມການຊ່ວຍເຫລືອໃຫ້ໄດ້ ໂດຍສະເລ່ຍ ປະມານ 776 ລ້ານໂດລາສະຫະລັດຕໍ່ປີ.
- <u>ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ (FDI) ລວມທັງ ການຫັນຊັບສິນເປັນທຶນ</u> ກວມປະມານ 50-56% ຂອງການລົງທຶນລວມທັງໝົດ ຫຼື ເທົ່າກັບ 64-70 ພັນຕື້ກີບ (ປະມານ 7.400-8.300 ລ້ານໂດລາສະຫະລັດ). ການລົງທຶນດັ່ງກ່າວແມ່ນສຸມໃສ່ບັນດາໂຄງການໃຫຍ່ລະດັບຊາດທີ່ມີທ່າແຮງໄດ້ປຽບ, ການສົ່ງເສີມກິດຈະກຳທາງເສດຖະກິດໂດຍສະເພາະແມ່ນການຊຸກຍູ້ການຜະລິດ ແລະ ພັດທະນາ

ພື້ນຖານໂຄງລ່າງທີ່ຈຳເປັນຈຳນວນໜຶ່ງ. ສະນັ້ນ ເພື່ອໃຫ້ສາມາດບັນລຸໄດ້ຕາມຄາດໝາຍທີ່ຕັ້ງໄວ້ຕ້ອງສູ້ຊົນລະດົມການລົງທຶນໃຫ້ໄດ້ໂດຍສະເລ່ຍປະມານ 1.700 ລ້ານໂດລາສະຫະລັດຕໍ່ປີ.

- <u>ການປ່ອຍສິນເຊື່ອຂອງທະນາຄານ ແລະ ການລົງທຶນຂອງຊຸມຊົນ</u> ກວມປະມານ 10-12% ຂອງການລົງທຶນລວມທັງໝົດ ຫຼື ເທົ່າກັບ ປະມານ 13-15 ພັນຕື້ກີບ (ປະມານ 1.500-1.800 ລ້ານໂດລາສະຫະລັດ), ສິນເຊື່ອດັ່ງກ່າວ ແມ່ນສຸມໃສ່ການສົ່ງເສີມການຜະລິດ, ຊຸກຍູ້ສົ່ງເສີມບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງ, ການຜະລິດຂອງຄົວເຮືອນ ແລະ ກຸ່ມການຜະລິດຂອງປະຊາຊົນ; ເພື່ອບັນລຸຄວາມຕ້ອງການດັ່ງກ່າວ ການປ່ອຍສິນເຊື່ອຕ້ອງໃຫ້ໄດ້ສະເລ່ຍປະມານ 3.000 ຕື້ກີບຕໍ່ປີ. ຖ້າວ່າຕະຫຼາດຫຸ້ນຫາກໄດ້ເປີດຂຶ້ນຕາມແຜນທີ່ໄດ້ກຳນົດໄວ້ ຄາດວ່າອັດຕາການລະດົມທຶນຈະເພີ່ມຂຶ້ນພໍສົມຄວນ ເຊິ່ງຈະເປັນຜົນດີຕໍ່ການພັດທະນາເສດຖະກິດ-ສັງຄົມ.
- ສັງລວມແລ້ວ ໃນການລົງທຶນລວມທັງໝົດ 127 ພັນຕື້ກີບນັ້ນ, ການລົງທຶນຈາກງົບປະມານຂອງລັດ (ທັງການລົງທຶນຂອງງົບປະມານພາຍໃນ ແລະ ງົບປະມານຊ່ວຍເຫຼືອລ້ຳ ແລະ ກູ້ຢືມ) ປະມານ 43-47 ພັນຕື້ກີບ, ການລົງທຶນຈາກເອກະຊົນພາຍໃນ, ເອກະຊົນຕ່າງປະເທດ ແລະ ການຫັນຊັບສິນເປັນທຶນ ປະມານ 64-70 ພັນຕື້ກີບ ແລະ ການປ່ອຍສິນເຊື່ອຂອງທະນາຄານ ປະມານ 13-15 ພັນຕື້ກີບ.

**+ ການຈັດສັນແຫຼ່ງທຶນຈາກງົບປະມານຂອງລັດໃຫ້ປະຕິບັດຕາມກົດໝາຍງົບປະມານ, ກົດໝາຍການລົງທຶນຂອງລັດ ແລະ ຂັ້ນການຄຸ້ມຄອງ:**

- **ຕາມການແບ່ງຂັ້ນຄຸ້ມຄອງ:** ສູນກາງ 40% ແລະ ທ້ອງຖິ່ນ 60%

A. ຂັ້ນສູນກາງ (ລັດຖະບານ): ແຜນງານ ແລະ ໂຄງການໃຫ່ຍລະດັບຊາດທີ່ເປັນບູລິມະສິດ

B. ຂັ້ນຂະແໜງການ, ແຂວງ ແລະ ເມືອງ:

B.1. ຂະແໜງການ: ແຜນງານ, ໂຄງການໃຫ່ຍລະດັບກະຊວງ-ອົງການລັດຖະບານ ແລະ ລະດັບພາກ (ປະເພດ I)

B.2. ແຂວງ: ແຜນງານ, ໂຄງການໃຫ່ຍລະດັບແຂວງ (ປະເພດ II)

B.3. ເມືອງ: ແຜນງານ, ໂຄງການໃຫ່ຍລະດັບເມືອງ (ປະເພດ III)

- **ຕາມຂະແໜງການ**

1. ຂະແໜງເສດຖະກິດ: ກວມປະມານ 30% ຂອງການລົງທຶນລວມທັງໝົດ ຫຼື ປະມານ 38.000 ຕື້ກີບ, (ປະມານ 4.500 ລ້ານໂດລາສະຫະລັດ), ທຽບໃສ່ແຜນການ 5 ປີຄັ້ງທີ VI ເພີ່ມຂຶ້ນ 15 ເທື່ອ ຫລື ປະມານ 6% ຂອງການລົງທຶນໃສ່ຂະແໜງເສດຖະກິດໃນແຜນການ 5 ປີ ຄັ້ງນີ້; ຖ້າສະເລ່ຍໃນແຕ່ລະປີ ປະມານ 7.600 ຕື້ກີບ (ປະມານ 900 ລ້ານໂດລາສະຫະລັດ), ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມໂຄງປະກອບດັ່ງກ່າວ ທະນາຄານຄວນປ່ອຍສິນເຊື່ອເພື່ອກະຕຸ້ນການຜະລິດ ສະເລ່ຍປະມານ 1.220 ຕື້ກີບຕໍ່ປີ (ປະມານ 143 ລ້ານໂດລາສະຫະລັດຕໍ່ປີ) ສົມທົບກັບການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ສະເລ່ຍປະມານ 6.400 ຕື້ກີບຕໍ່ປີ (ປະມານ 752 ລ້ານໂດລາສະຫະລັດຕໍ່ປີ).

2. ຂະແໜງສັງຄົມ: ກວມປະມານ 35% ຂອງການລົງທຶນລວມທັງໝົດ ຫຼື ປະມານ 44.370 ຕື້ກີບ (ປະມານ 5.220 ລ້ານໂດລາສະຫະລັດ), ທຽບໃສ່ແຜນການ 5 ປີຄັ້ງທີ VI ເພີ່ມຂຶ້ນ 7 ເທື່ອ ຫລື ປະມານ 14% ຂອງການລົງທຶນໃສ່ຂະແໜງສັງຄົມໃນແຜນການ 5 ປີ ຄັ້ງນີ້; ຖ້າສະເລ່ຍໃນແຕ່ລະປີ ປະມານ 8.874 ຕື້ກີບ (1.044 ລ້ານໂດລາສະຫະລັດຕໍ່ປີ) ເຊິ່ງການລົງທຶນແມ່ນສຸມໃສ່ການບັນລຸເປົ້າໝາຍສະຫັດສະ

ຫວັດດ້ານການພັດທະນາ. ເພື່ອສາມາດຕອບສະໜອງໄດ້ຕາມຄາດໝາຍດັ່ງກ່າວ ລັດຖະບານຕ້ອງມີທຶນສົມທົບເພື່ອຈັດຕັ້ງປະຕິບັດບັນດາໂຄງການຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ ສະເລ່ຍປະມານ 2.000 ຕື້ກີບຕໍ່ປີ ຫຼື ປະມານ 240 ລ້ານໂດລາສະຫະລັດຕໍ່ປີ.

3. ການກໍ່ສ້າງໂຄ່ງລ່າງພື້ນຖານ (ທາງ ແລະ ເຄຫາສະຖານ): ກວມປະມານ 35% ຂອງການລົງທຶນທັງໝົດ ຫຼື ປະມານ 44.370 ຕື້ກີບ (ປະມານ 5.220 ລ້ານໂດລາສະຫະລັດ), ທຽບໃສ່ແຜນການ 5 ປີຄັ້ງທີ VI ເພີ່ມຂຶ້ນ 5 ເທື່ອ ຫລື ປະມານ 18% ຂອງການລົງທຶນໃສ່ໂຄງລ່າງພື້ນຖານໃນແຜນການ 5 ປີຄັ້ງນີ້; ຖ້າສະເລ່ຍໃນແຕ່ລະປີ ປະມານ 8.874 ຕື້ກີບ (1.044 ລ້ານໂດລາສະຫະລັດຕໍ່ປີ) ຊຶ່ງການລົງທຶນດັ່ງກ່າວແມ່ນສຸມໃສ່ການກໍ່ສ້າງໂຄງລ່າງພື້ນຖານທາງເສດຖະກິດ-ສັງຄົມ. ເພື່ອບັນລຸຄາດໝາຍດັ່ງກ່າວຈະຕ້ອງໄດ້ລະດົມການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ແລະ ຈາກສິນເຊື່ອທະນາຄານ ປະມານ 8.215 ຕື້ກີບຕໍ່ປີ ຫຼື ປະມານ 960 ລ້ານໂດລາສະຫາລັດຕໍ່ປີ.

**+ ການລົງທຶນໃສ່ໂຄງການລົງທຶນທີ່ສືບຕໍ່, ສະເໜີໃໝ່ ແລະ ການຊໍາລະໜີ້ສິນ**

1. ບັນຫາສໍາຄັນ ແລະ ຈໍາເປັນຮີບດ່ວນແມ່ນຕ້ອງຮັບປະກັນໃຫ້ການຊໍາລະໜີ້ສິນຢູ່ ໃນລະດັບ 35% ຂອງລາຍຈ່າຍລົງທຶນພາຍໃນ ເພື່ອປະສິດທິພາບຂອງການລົງທຶນ. ໃນແຜນການ 5 ປີຄັ້ງທີ VII ຕ້ອງເຮັດໃຫ້ການລົງທຶນມີປະສິດທິຜົນຢ່າງພົ້ນເດັ່ນ ໂດຍສະເພາະແມ່ນ ການລົງທຶນຂອງລັດ.

2. ສືບຕໍ່ຈັດສັນທຶນໃສ່ບັນດາໂຄງການສືບຕໍ່ໃຫ້ສໍາເລັດຕາມແຜນການທີ່ວາງໄວ້ ແລະ ໃຫ້ເກີດປະສິດທິຜົນສູງທີ່ສຸດ.

3. ໂຄງການສະເໜີໃໝ່ ..... ຕື້ກີບ ກວມ ....% ເຊິ່ງຕ້ອງມີການປະເມີນ ແລະ ສຶກສາຄວາມເປັນໄປໄດ້ເບື້ອງຕົ້ນກ່ອນ ຈຶ່ງນໍາສະເໜີເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ.

## 5.2. ການດຸ່ນດ່ຽງງົບປະມານແຫ່ງລັດ

ຄາດຄະເນລາຍຮັບລວມໃນແຜນການ 5 ປີ ຈະໄດ້ປະມານ.....ຕື້ກີບ, ເພີ່ມຂຶ້ນ ..... ທຽບໃສ່ 5 ປີຜ່ານມາ ຫຼື ສະເລ່ຍເພີ່ມຂຶ້ນ ..... %ຕໍ່ປີ, ໃນນັ້ນ ລາຍຮັບພາຍໃນ ປະມານ ..... ຕື້ກີບ, ທຽບໃສ່ລວມຍອດຜະລິດຕະພັນພາຍໃນ ກວມປະມານ..... %. ລາຍຮັບຈາກສ່ວຍສາອາກອນ ຕື້ກີບ ກວມປະມານ .....ຂອງລາຍຮັບພາຍໃນ, ລາຍຮັບຈາກພາສີ ປະມານ ..... ຕື້ກີບ ກວມ ປະມານ .....% , ລາຍຮັບຈາກພາສີທີ່ດິນ ປະມານ ..... ຕື້ກີບ ກວມປະມານ .....%, ລາຍຮັບ ຈາກຊັບສິນຂອງລັດ ..... .ຕື້ກີບ ກວມປະມານ .....%, ລາຍຮັບຈາກການຊ່ວຍເຫຼືອລ້າ ປະມານ ..... ຕື້ກີບ ກວມປະມານ .....%.

ຄາດຄະເນລາຍຈ່າຍງົບປະມານທັງໝົດ ຈະມີປະມານ ..... ຕື້ກີບ ກວມປະມານ ຂອງລວມຍອດ ຜະລິດຕະພັນພາຍໃນ, ໃນນັ້ນ ສະເພາະລາຍຈ່າຍລົງທຶນຂອງລັດ ກວມປະມານ .....% ຂອງລວມຍອດ ຜະລິດຕະພັນພາຍໃນ.

ການຂາດດຸນງົບປະມານ ຄາດວ່າ ..... ຕື້ກີບ ກວມປະມານ ..... ຂອງລວມຍອດຜະລິດ ຕະພັນພາຍໃນ.

## 5.3. ການດຸ່ນດ່ຽງການຊົມໃຊ້ ແລະ ການສະສົມ

- ສູ້ຊົນໃຫ້ອັດຕາການສະສົມໃນລະບົບທະນາຄານມີທ່າກ້າວຂຶ້ນ ໃຫ້ຢູ່ໃນລະດັບປະມານ 30% ຂອງ GDP ຕໍ່ປີຂຶ້ນໄປ.

- ສູ້ຊົນໃຫ້ຄັງສະສົມແຫ່ງລັດຢູ່ລະຫວ່າງ 3-5% ຕໍ່ປີຂຶ້ນໄປ ຂອງລາຍຮັບພາຍໃນ ເພື່ອສາມາດນຳໃຊ້ໃນເວລາຈຳເປັນຮີບດ່ວນ ໂດຍສະເພາະ ສະສົມໃນຄັງແຮງກາງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ໄພພິບັດທາງດ້ານທຳມະຊາດ ທີ່ສົ່ງຜົນກະທົບຕໍ່ການຂາດສະບຽງອາຫານ, ແນວພັນ, ຊີວິດການເປັນຢູ່ຂອງ ປະຊາຊົນ; ລາຄານ້ຳມັນປ່ຽນແປງ ແລະ ຄັງເງິນສົດ; ຄຸ້ມຄອງ ແລະ ດັດສົມມະຫາພາກ ແລະ ວຽກງານທີ່ ຈຳເປັນອື່ນໆ.

## 5.4. ການດຸ່ນດ່ຽງຂາອອກ-ຂາເຂົ້າ

ເພື່ອໃຫ້ສາມາດດຸ່ນດ່ຽງຂາອອກ-ຂາເຂົ້າໃນລະບົບເສດຖະກິດໄດ້ ການສຶກສາເຖິງທ່າອ່ຽງຂອງທຶນໄຫຼ ເຂົ້າຈາກຕ່າງປະເທດໂດຍສະເພາະແມ່ນ ທຶນໄລຍະສັ້ນທີ່ຄາດວ່າຈະເພີ່ມຂຶ້ນ ຫຼັງຈາກການເປີດຕະຫຼາດຫຸ້ນຢູ່ ສປປ ລາວໃນປີ 2010 ແລະ ການສົ່ງອອກພະລັງງານໄຟຟ້າຈາກເຂື່ອນນ້ຳເທີນ 2 ທີ່ຈະເລີ່ມໃນປີ 2010 ຈະເປັນປັດໄຈບວກທີ່ສຳຄັນ ແລະ ເປັນເງື່ອນໄຂຮອງຮັບເພື່ອບັນລຸຄາດໝາຍສູ້ຊົນດ້ານດຸ່ນການຊຳລະໃຫ້ຢູ່ ໃນລະດັບປົກກະຕິ ຫຼື ເກີນດຸນເປັນສ່ວນໃຫ່ຍ; ສູ້ຊົນໃຫ້ຄັງສຳຮອງເງິນຕາຕ່າງປະເທດຂະຫຍາຍຕົວຢ່າງຕໍ່ ເນື່ອງ ແລະ ກຸ້ມການນຳເຂົ້າໃຫ້ໄດ້ຫຼາຍກວ່າ 6 ເດືອນ.

## 5.5. ການດຸ່ນດ່ຽງແຮງງານ

ເພື່ອໃຫ້ໂຄງປະກອບຂອງແຮງງານໄປຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສອດ ຄ່ອງກັບອັດຕາການຂະຫຍາຍຕົວຂອງບັນດາຂະແໜງການ, ຮອດປີ 2015 ຕ້ອງເຮັດໃຫ້ອັດຕາສ່ວນ ແຮງ ງານທີ່ມີວຽກເຮັດງານທຳໃນຂົງເຂດກະສິກຳຫຼຸດລົງຈາກ 75,1% ໃນປີ 2010 ມາເປັນ 70%, ຂົງເຂດ ອຸດສາຫະກຳ ເພີ່ມຂຶ້ນຈາກ 5,5% ມາເປັນ 7% ແລະ ຂົງເຂດການບໍລິການເພີ່ມຂຶ້ນຈາກ 19,5% ມາເປັນ 23% ຂອງແຮງງານລວມ. ຄວາມຕ້ອງການຈ້າງງານ 3,26 ລ້ານຄົນ, ແຕ່ກຳລັງແຮງງານທີ່ຈະສາມາດຕອບ ສະໜອງໄດ້ມີພຽງ 3,17 ລ້ານຄົນ; ໃນນີ້, ແຮງງານທີ່ເພີ່ມຂຶ້ນໃໝ່ ປະມານ 276.828 ຄົນ (ສະເລ່ຍ 55.365 ຄົນຕໍ່ປີ), ໃນນັ້ນ: ຂົງເຂດກະສິກຳປະມານ 209.669 ຄົນ, ຂົງເຂດອຸດສາຫະກຳ ປະມານ 14.272 ຄົນ ແລະ ຂົງເຂດບໍລິການ ປະມານ 52.431 ຄົນ. ເຖິງວ່າຈະມີການເຄື່ອນຍ້າຍແຮງງານຈາກຂົງ ເຂດກະສິກຳ ແລະ ຜູ້ທີ່ຫວ່າງງານໃນຂົງເຂດດັ່ງກ່າວກໍ່ຕາມ ໃນ 5 ປີ ຕໍ່ໜ້າ ຂົງເຂດອຸດສາຫະກຳ ແລະ ການບໍລິການ ຍັງມີຄວາມຕ້ອງການກຳລັງແຮງງານຕື່ມຈຳນວນໜຶ່ງ. ສະນັ້ນ ການດຸ່ນດ່ຽງແຮງງານໃນຂະແໜ ງການຕ່າງໆ ຕ້ອງມີການໄລ່ລຽງຢ່າງຊັດເຈນ ແລະ ຕ້ອງມີນະໂຍບາຍໃນການສ້າງ ແລະ ພັດທະນາສີມືແຮງ ງານ ເປັນຕົ້ນແມ່ນ ການສ້າງໂຮງຮຽນ ຫຼື ສູນຝຶກອົບຮົມວິຊາຊີບ ເຕັກນິກຕ່າງໆ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ການເຄື່ອນຍ້າຍແຮງງານຈາກຂະແໜງກະສິກຳ-ປ່າໄມ້ ກໍ່ແມ່ນວິທີທາງໜຶ່ງທີ່ສາມາດສະໜອງ ແຮງງານໃຫ້ຕະຫຼາດແຮງງານໄດ້ ແຕ່ການເຄື່ອນຍ້າຍນັ້ນ ຕ້ອງມີແບບແຜນທີ່ຊັດເຈນຄົບຊຸດ ເພື່ອສາມາດ ສ້າງແຮງງານທີ່ເໝາະສົມກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ. ນອກນັ້ນ ຈະ ຕ້ອງກຳນົດນະໂຍບາຍ

ດຸ່ນດ່ຽງແຮງງານພາຍໃນ ແລະ ແຮງງານຕ່າງປະເທດຢ່າງຮັດກຸມ, ມີຄວາມສອດຄ່ອງກັບສະພາບການໃນພາກພື້ນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານໃນແຕ່ລະໄລຍະ.

# II. ທິດທາງ ແລະ ໜ້າທີ່ຕົ້ນຕໍ ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII

## 1. ການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ຫລຸດຜ່ອນຄວາມດ້ອຍພັດທະນາ.

### [1]. ທິດທາງ:

ຄວາມທຸກຍາກຂອງປະຊາຊົນ ແລະ ການພັດທະນາຊົນນະບົດສີຂຽວເປັນບັນຫາພື້ນຖານທາງດ້ານເສດຖະກິດ, ສັງຄົມ ແລະ ການເມືອງທັງໃນປະຈຸບັນ ແລະ ສົ່ງຜົນກະທົບໃນໄລຍະຍາວຂອງປະເທດເຮົາ, ເຊິ່ງມະຕິກອງປະຊຸມໃຫຍ່ຂອງພັກຫລາຍຄັ້ງ, ພ້ອມທັງຮ່າງລາຍງານການເມືອງຄັ້ງທີ IX ໄດ້ຖືເປັນໜ້າທີ່ການເມືອງໃຫຍ່ອັນໜຶ່ງຂອງພັກ, ລັດຖະບານ, ດ້ວຍເຫດນີ້ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VII ໄດ້ຍຶດຖືການແກ້ໄຂຄວາມທຸກຍາກ ແລະ ການພັດທະນາຊົນນະບົດ ເປັນເປົ້າໝາຍ ແລະ ໜ້າທີ່ສຳຄັນ ແຖວໜ້າ, ເຊິ່ງທິດທາງສຳຄັນແມ່ນສ້າງໃຫ້ໄດ້ການຫັນປ່ຽນຮອບດ້ານຢູ່ເຂດຊົນນະບົດເຂດພື້ນຖານການປະ ຕິວັດເກົ່າຢ່າງຕັ້ງໜ້າ; ເຮັດໃຫ້ຊົນນະບົດກາຍເປັນເຂດພັດທະນາໃໝ່ສີຂຽວ, ສະອາດ, ອຸດົມໄປດ້ວຍປ່າໄມ້ ແຫລ່ງນ້ຳ, ຊຸ່ມຊື່ນ, ອາກາດສົດໃສໂດຍຍູ້ແຮງການພັດທະນາເສດຖະກິດ, ຂະຫຍາຍບ້ານວັດທະນະທຳ ສັງຄົມ, ປັບປຸງລະບົບການເມືອງ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍຖືເອົາບ້ານ ແລະ ຄອບຄົວ ທຸກຍາກເປັນຈຸດເລີ່ມ ແລະ ເປັນເປົ້າໝາຍແກ້ໄຂຕາມ 4 ເນື້ອໃນ 4 ຄາດໝາຍທີ່ກົມການເມືອງ ແລະ ຄຳສັ່ງແນະນຳ ເລກທີ 13/ນຍ ກຳນົດໄວ້.

ຖືເອົາການລຶບລ້າງຄວາມທຸກຍາກ ແລະ ການສ້າງຄວາມຮັ່ງມີໃຫ້ແກ່ຄອບຄົວ ເປັນໃຈກາງຂອງການພັດທະນາຊົນນະບົດ; ສະນັ້ນ, ການລຶບລ້າງຄວາມທຸກຍາກ ໃນໄລຍະປີ 2011-2015 ແມ່ນຖືເອົາບ້ານ ແລະ ກຸ່ມບ້ານທີ່ທຸກຍາກໃນທົ່ວປະເທດເປັນເປົ້າຫມາຍ ແລະ ຈຸດສຸມໃນການພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກ.

### [2]. ຄາດໝາຍຕົ້ນຕໍ:

- ສູ້ຊົນຫຼຸດຜ່ອນອັດຕາຄວາມທຸກຍາກໃຫ້ຕ່ຳກວ່າ 19% ຂອງຈຳນວນພົນລະເມືອງທັງໝົດ ແລະ ອັດຕາຄົວເຮືອນທຸກຍາກໃຫ້ ຕ່ຳກວ່າ 11% ຂອງຄົວເຮືອນທັງໝົດ ໃນປີ 2015.
- ສູ້ຊົນສ້າງບ້ານໃຫ້ຫລຸດພົ້ນຈາກຄວາມດ້ອຍພັດທະນາ ແລະ ກາຍເປັນບ້ານພັດທະນາໃຫ້ໄດ້ 50% ຂອງຈຳນວນບ້ານໃຫຍ່ໃນທຸກເມືອງ ແລະ ສ້າງກຸ່ມບ້ານໃຫ້ເປັນຕົວເມືອງນ້ອຍຢູ່ຊົນນະບົດໃຫ້ໄດ້ເມືອງລະ 1-2 ກຸ່ມບ້ານ ແລະ ສູ້ຊົນພັດທະນາບັນດາເມືອງທີ່ຍັງທຸກຍາກໃຫ້ຫລຸດພົ້ນອອກຈາກຄວາມທຸກຍາກໃຫ້ໄດ້ ໂດຍພື້ນຖານ.
- ສູ້ຊົນຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ ໃນເຂດເປົ້າຫມາຍໃຫ້ສຳເລັດໂດຍພື້ນຖານ, ຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ ໃຫ້ໄດ້ຢ່າງສິ້ນເຊີງ.

- ສູ້ຊົນຂະຫຍາຍຕາຫນ່າງເສັ້ນທາງລົງສູ່ບັນດາເມືອງທີ່ທຸກຍາກໃນທົ່ວປະເທດໃຫ້ສາມາດແລ່ນໄດ້ຕະຫຼອດປີ ໂດຍສະເພາະແມ່ນເມືອງດັກຈຶງ, ເມືອງກະລຶມ, ເມືອງສະໜ້ວຍ, ເມືອງໄຊສະຖານ, ເມືອງໂພນທອງ, ເມືອງໄຊຈຳພອນ ແລະ ຂະຫຍາຍລົງສູ່ບັນດາເຂດຈຸດສຸມ ແລະ ບັນດາບ້ານທີ່ເປັນໃຈກາງກຸ່ມບ້ານ ແລະ ເຂົ້າເຖິງທຸກບ້ານທີ່ມີເງື່ອນໄຂ.
- ສູ້ຊົນເຮັດໃຫ້ອັດຕາຄອບຄົວທຸກຍາກໄດ້ຊົມໃຊ້ໄຟຟ້າກວມ 80% ຂອງຄອບຄົວທັງຫມົດໃນທົ່ວປະເທດ ແລະ ເທດສະບານທຸກເມືອງໃນທົ່ວປະເທດໄດ້ຊົມໃຊ້ໄຟຟ້າຕາຂ່າຍແບບຖາວອນ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

+ ໂຄງການ <u>ຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນ</u> ຄົງທີ່ຖາວອນໃຫ້ປະຊາຊົນ: ຈັດສັນເຕົ້າໂຮມບ້ານນ້ອຍທີ່ຢູ່ກະແຈກກະຈາຍບໍ່ມີເງື່ອນໄຂໃນການພັດທະນາ ເຂົ້າເປັນບ້ານໃຫຍ່ ຫລື ຈັດສັນໃຫມ່ ໂດຍໃຫ້ເປັນໃຈກາງທາງດ້ານເສດຖະກິດ-ວັດທະນະທຳຂອງເຂດຈຸດສຸມ ແລ້ວກາຍເປັນຕົວເມືອງນ້ອຍໃນຊົນນະບົດ ຕາມທິດການສ້າງບ້ານ ແລະ ກຸ່ມບ້ານພັດທະນາ.

+ ໂຄງການ <u>ຊົນນະບົດສີຂຽວ, ຊຸ່ມຊື່ນ ແລະ ງົດງາມ</u> (ໂຄງການ LPP) ໂດຍໃຫ້ພິຈາລະນາມີນະໂຍບາຍການມອບດິນ-ມອບປ່າ ຕິດພັນກັບຢຸດຕິການຖາງປ່າເຮັດໄຮ່ເລື່ອນລອຍຢ່າງສິ້ນເຊີງ ດ້ວຍການຫັນໄປສູ່ການຄຸ້ມຄອງປ່າໄມ້ແບບຍືນຍົງ, ປ່ອຍໃຫ້ປ່າໄມ້ຂຽວຊຸ່ມເປັນປ່າທຳມະຊາດຄືນໃໝ່. ທຸກເມືອງໃນເຂດຊົນນະບົດຕ້ອງສ້າງໃຫ້ໄດ້ໂຄງການ <u>ສີຂຽວ, ສະອາດ</u> ໂດຍນຳໃຊ້ກອງທຶນ LPP ແລະ ແຫລ່ງອື່ນຢ່າງກວ້າງຂວາງ.

+ ໂຄງການ <u>ຊຸກຍູ້ ສົ່ງເສີມການຜະລິດເປັນສິນຄ້າ ແລະ ການບໍລິການ</u> ສອດຄ່ອງກັບທ່າແຮງ ແລະ ມູນເຊື້ອຂອງປະຊາຊົນ ໂດຍມີການສະໜັບສະໜູນດ້ານນະໂຍບາຍ, ທຶນຮອນ, ວິຊາການ ແລະ ການຕະຫຼາດ ເພື່ອຮັບປະກັນການສ້າງລາຍໄດ້ໃຫ້ແຕ່ລະຄອບຄົວ: ຂະຫຍາຍສູນບໍລິການເຕັກນິກກະສິກຳລົງສູ່ບັນດາເມືອງ ແລະ ກຸ່ມບ້ານຕ່າງໆໃຫ້ທົ່ວເຖິງ, ຂະຫຍາຍລະບົບການບໍລິການສິນເຊື່ອຊົນນະບົດເຊັ່ນ: ທະນາຄານນະໂຍບາຍ, ກອງທຶນພັດທະນາບ້ານ, ກຸ່ມທ້ອນເງິນ, ສະຫະກອນສິນເຊື່ອ ແລະ ອື່ນໆ, ສົ່ງເສີມເສດຖະກິດຮ່ວມມື ຫລື ກຸ່ມການຜະລິດ-ບໍລິການຂອງປະຊາຊົນ ແລະ ຊຸກຍູ້ສົ່ງເສີມພາກສ່ວນທຸລະກິດຕ່າງໆ ເປັນຕົ້ນທຸລະກິດຂະຫນາດນ້ອຍ ແລະ ກາງ ລົງສູ່ຊົນນະບົດ ໂດຍການນຳໃຊ້ສັນຍາຜູກພັນສອງສົ້ນກັບກຸ່ມການຜະລິດຂອງປະຊາຊົນ; ຂະຫຍາຍຕະຫລາດຊົນນະບົດລົງສູ່ກຸ່ມບ້ານຕ່າງໆ, ພ້ອມທັງສ້າງກົນໄກ ຫລື ລະບົບທີ່ມີປະສິດທິຜົນ ໃນການສະຫນອງຂໍ້ມູນດ້ານການຕະຫລາດ, ການຄ້ຳປະກັນຕໍ່ຄວາມສ່ຽງດ້ານການຕະຫລາດ ແລະ ລາຄາຜົນຜະລິດຂອງປະຊາຊົນ, ສ້າງໃຫ້ໄດ້ບັນດາຕົວແບບໃນການຜະລິດເປັນສິນຄ້າຢູ່ບ້ານ ຫລື ກຸ່ມບ້ານ ເພື່ອເປັນບ່ອນສາທິດ ແລະ ຖ່າຍທອດບົດຮຽນໃຫ້ຊາວບ້ານ.

+ <u>ສົ່ງເສີມການຜະລິດກະສິກຳຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການບໍລິການ</u> ຢູ່ເຂດຊົນນະບົດ ໂດຍສືບຕໍ່ຄົ້ນຄວ້າ ກຳນົດທ່າແຮງ ແລະ ຄວາມສາມາດດ້ານການປູກ ການລ້ຽງສັດ ແລະ ການບໍລິການຢູ່ກັບທີ່ໃຫ້ເລີກເຊິ່ງຕື່ມອີກ.

+ <u>ພັດທະນາພື້ນຖານໂຄງລ່າງ ທາງດ້ານເສດຖະກິດ-ສັງຄົມ</u> ຢູ່ຊົນນະບົດ ເປັນຕົ້ນ ກໍ່ສ້າງສ້ອມແປງ ແລະ ຂະຫຍາຍເສັ້ນທາງເຂົ້າຫາໃຈກາງຂອງບັນດາກຸ່ມບ້ານ, ກຸ່ມບ້ານຫາບ້ານ, ເຂດການຜະລິດ ໃຫ້ໄປມາໄດ້ຢ່າງສະດວກ; ປັບປຸງ, ກໍ່ສ້າງ ແລະ ຂະຫຍາຍລະບົບຊົນລະປະທານ ເຫມືອງຝາຍຂະຫນາດຕ່າງໆ, ຕາ

ໜ່ວຍໂທລະຄົມມະນາຄົມ, ໄຟຟ້າ, ໂຮງຮຽນ, ສຸກສາລາ, ລະບົບນ້ຳສະອາດ, ສູນຝຶກວິຊາຊີບ ແລະ ພັດທະນາສີມືແຮງງານ, ລະບົບຂົນສົ່ງໂດຍສານລົງສູ່ກຸ່ມບ້ານ ແລະ ບ້ານຕ່າງໆໃຫ້ທົ່ວເຖິງ.

+ ປັບປຸງຄຸນນະພາບການບໍລິການດ້ານການສຶກສາ ແລະ ຂະຫຍາຍໂອກາດ ການເຂົ້າເຖິງການສຶກສາຢູ່ຊົນນະບົດ (ໃນລະບົບ ແລະ ນອກລະບົບ) ໃຫ້ຫຍັບເຂົ້າໃກ້ກັບມາດຕະຖານຂອງຕົວເມືອງ; ສູ້ຊົນແກ້ໄຂບັນຫາການຂາດຄູສອນ ແລະ ຄູບໍ່ໄດ້ມາດຕະຖານໃຫ້ໄດ້. ສ້າງ ແລະ ດຳເນີນລະບົບປະກັນສຸຂະພາບຂັ້ນພື້ນຖານຂອງຊຸມຊົນ ແລະ ເພີ່ມທະວີການເຂົ້າເຖິງການບໍລິການສຸຂະພາບ, ເອົາໃຈໃສ່ເປັນພິເສດຕໍ່ການຮັກສາສຸຂະພາບ ແລະ ໂພຊະນາການຂອງແມ່ ແລະ ເດັກ, ສົ່ງເສີມວຽກງານສຸຂະສຶກສາຢ່າງແຂງແຮງ.

+ ໂຄງການສ້າງຕົວແບບບ້ານ ແລະ ກຸ່ມບ້ານພັດທະນາ

+ ໂຄງການ ປັບປຸງຄວາມສາມາດຂອງອົງການປົກຄອງຂັ້ນຮາກຖານ

+ ໂຄງການ ດຳເນີນການສຳຫລວດເກັບກຳຂໍ້ມູນ ແລະ ປະເມີນຄອບຄົວ, ບ້ານ ແລະ ເມືອງທຸກຍາກຄືນໃຫມ່ ຕາມມາດຕະຖານຄວາມທຸກຍາກສະບັບປັບປຸງໃຫມ່ ເພື່ອເປັນຂໍ້ມູນອ້າງແຜນການ, ກຳນົດໂຄງການ, ຄາດໝາຍສູ້ຊົນ ແລະ ວ້າງມາດຕະການແກ້ໄຂໃຫ້ຊັດເຈນ ແລະ ສອດຄ່ອງກັບຕົວຈິງ.

**[4]. ມາດຕະການ:**

- ສືບຕໍ່ທັນລົງຮາກຖານ ສຸມໃສ່ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ກໍຄືການກໍ່ສ້າງຮາກຖານການເມືອງ ຕາມ 4 ເນື້ອໃນ 4 ຄາດໝາຍ, ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂັ້ນເມືອງ ແລະ ຂັ້ນບ້ານ ໃຫ້ສາມາດນຳພາປະຊາຊົນເຮັດຕົວຈິງ.
- ປັບປຸງກົງຈັກການຈັດຕັ້ງທີ່ຮັບຜິດຊອບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ເຂັ້ມແຂງສາມາດປະຕິບັດໜ້າທີ່, ຊີ້ນຳນຳພາຕິດຕາມກວດກາໃນການ ຈັດຕັ້ງປະຕິບັດຕົວຈິງ.
- ຈັດສັນແຫລ່ງທຶນໃນລະດັບທີ່ເໝາະສົມ ແລະ ແນ່ນອນເພື່ອຈັດຕັ້ງປະຕິບັດແຜນການ ແລະ ໂຄງການໃຫ້ປະກົດຜົນເປັນຈິງ ໂດຍການນຳໃຊ້ແຫລ່ງທຶນຕ່າງໆ ເຊັ່ນ: ການລົງທຶນຂອງລັດ, ການປະກອບສ່ວນຂອງປະຊາຊົນ, ທະນາຄານນະໂຍບາຍ, ກອງທຶນພັດທະນາບ້ານ, ການຫັນຊັບສິນເປັນທຶນ, ທຶນຊ່ວຍເຫລືອ ລ້າ ແລະ ກູ້ຢືມຈາກຕ່າງປະເທດ, ສະຖາບັນການເງິນ, ອົງການຈັດຕັ້ງສາກົນ, ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGO), ລະດົມທຶນຈາກພາກສ່ວນເສດຖະກິດ ແລະ ສັງຄົມທັງພາຍໃນ ແລະ ຕ່າງປະເທດ, ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ. ໃນໄລຍະ 5 ປີຕໍ່ໜ້າການລົງທຶນໃສ່ເຂດຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃຫ້ເພີ່ມຂຶ້ນ 10-15% ຂອງການລົງທຶນທັງໝົດ. ພ້ອມກັນນັ້ນ, ກໍປັບປຸງລະບຽບ ແລະ ກົນໄກການຄຸ້ມຄອງ ແລະ ນຳໃຊ້ແຫລ່ງທຶນ " ກອງທຶນຫລຸດຜ່ອນຄວາມທຸກຍາກ", ກອງທຶນພັດທະນາບ້ານ ຂອງຊຸມຊົນ ມີປະສິດທິຜົນສູງ ກະທົບໂດຍກົງຕໍ່ການແກ້ໄຂຄວາມທຸກຍາກ ແລະ ພັດທະນາເຂດຊົນນະບົດ.
- ປະຕິບັດນະໂຍບາຍດ້ານພາສີ, ອາກອນ, ສິນເຊື່ອ, ນະໂຍບາຍກ່ຽວກັບການນຳໃຊ້ຊັບພະຍາກອນກັບທີ່ ແລະ ກົນໄກຕ່າງໆທີ່ເໝາະສົມ; ສົ່ງເສີມໃຫ້ນັກລົງທຶນ, ຜູ້ປະກອບການທີ່ໄປລົງທຶນໃນເຂດຊົນນະບົດ ແລະ ກິດຈະການທີ່ກະທົບຕໍ່ການແກ້ໄຂຄວາມທຸກຍາກໂດຍກົງ ຕາມກົດໝາຍສົ່ງເສີມການລົງທຶນສະບັບໃໝ່.
- ຄົ້ນຄວ້າ ແລະ ສ້າງບັນດານິຕິກຳຈຳນວນຫນຶ່ງຕື່ມອີກ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

# 2. ການພັດທະນາຂະແໜງການ

## 2.1. ການພັດທະນາຂົງເຂດເສດຖະກິດ

### 2.1.1. ກະສິກຳ-ປ່າໄມ້

**[1]. ທິດທາງ:**

ພັດທະນາກະສິກຳ-ປ່າໄມ້ຮອບດ້ານ, ຄົບຊຸດ ແລະ ປະສົມປະສານຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ ຢູ່ເຂດທີ່ມີທ່າແຮງ ແລະ ມີເງື່ອນໄຂເໝາະສົມ; ຮັບປະກັນຄວາມໝັ້ນທ່ຽງທາງດ້ານສະບຽງອາຫານ; ສົ່ງເສີມການຜະລິດກະສິກຳເປັນສິນຄ້າເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ, ຍົກສູງສະມັດຕະພາບການຜະລິດ ແລະ ປັບປຸງຄຸນນະພາບຂອງຜົນຜະລິດ ໂດຍການສົ່ງເສີມການນຳໃຊ້ຜົນສຳເລັດໃໝ່ທາງດ້ານວິທະຍາສາດ, ເຕັກນິກ-ວິທະຍາການເຂົ້າໃນການຜະລິດ ແລະ ຖືເອົາການສ້າງຄອບຄົວຕົວແບບເປັນມາດຕະການຕົ້ນຕໍ. ສືບຕໍ່ຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ແກ່ຄອບຄົວທີ່ຢຸດຕິຖາງປ່າເຮັດໄຮ່ແບບເລື່ອນລອຍ ໄປເຮັດອາຊີບອື່ນທີ່ໝັ້ນຄົງ, ປົກປັກຮັກສາ ແລະ ຟື້ນຟູປ່າໄມ້ໃຫ້ມີເນື້ອທີ່ປົກຫຸ້ມຫຼາຍຂຶ້ນ ເຮັດໃຫ້ ສປປ ລາວ ກາຍເປັນປະເທດສີຂຽວ; ທັນຊົນລະປະທານເປັນຊົນລະກະເສດຮອບດ້ານ ເພື່ອຍົກສູງສະມັດ ຕະພາບການຜະລິດ; ປັບປຸງຮູບແບບການຜະລິດຂອງຊາວກະສິກອນດ້ວຍການສ້າງເປັນຟາມ, ກຸ່ມການຜະ ລິດ, ວິສາຫະກິດຊົນນະບົດ ແລະ ຄອບຄົວ.

**[2]. ຄາດໝາຍຕົ້ນຕໍ:**

ສູ້ຊົນໃຫ້ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນກະສິກຳ-ປ່າໄມ້ ລວມທັງການປຸງແຕ່ງເພີ່ມຂຶ້ນສະເລ່ຍໃນລະດັບ 3,5% ຕໍ່ປີ, ເຮັດໃຫ້ໂຄງປະກອບໃນຂະແໜງກະສິກຳ-ປ່າໄມ້ ກວມປະມານ 23% ໃນປີ 2015. ຄາດໝາຍລະອຽດແຕ່ລະດ້ານມີດັ່ງນີ້:

1. ດ້ານສະບຽງອາຫານ:

ໃນແຜນການ 5 ປີ 2011-2015 ຕ້ອງຜະລິດສະບຽງອາຫານໃຫ້ພຽງພໍ, ມີສ່ວນໜຶ່ງແຮໄວ້ ແລະ ສົ່ງເປັນສິນຄ້າ, ປະເພດສະບຽງອາຫານທີ່ຕ້ອງເອົາໃຈໃສ່ມີດັ່ງນີ້:

1.1. ຜະລິດເຂົ້າໃຫ້ບັນລຸໄດ້ປະມານ 4 ລ້ານໂຕນ ໃນເນື້ອທີ່ 1,04 ລ້ານເຮັກຕາ ໃນປີ 2015; ໃນນັ້ນ, ເຂົ້ານາປີ ປະມານ 2,9 ລ້ານໂຕນ ໃນ 740 ພັນເຮັກຕາ ແລະ ຜົນຜະລິດເຂົ້ານາແຊງ ໃຫ້ໄດ້ ປະມານ 1 ລ້ານໂຕນ ໃນ 200 ພັນເຮັກຕາ, ຜົນຜະລິດ ເຂົ້າເນີນສູງ ໃຫ້ໄດ້ປະມານ 0,2 ລ້ານໂຕນ ໃນ 100 ເຮັກຕາ. ຄາດວ່າສະມັດຕະພາບໃນການຜະລິດເຂົ້າ ສະເລ່ຍປະມານ 3,9 ໂຕນຕໍ່ເຮັກຕາ. ຮອດປີ 2015, ຜົນຜະລິດເຂົ້າກິນ ສະເລ່ຍໃຫ້ໄດ້ປະມານ 450-500 ກິໂລຕໍ່ຄົນຕໍ່ປີ ແລະ ຮັບປະກັນພະລັງງານໃຫ້ໄດ້ 2.400-2.500 ກິໂລກະລໍລີຕໍ່ຄົນຕໍ່ວັນ;

1.2. ຜະລິດຊີ້ນ ແລະ ປາ: ສູ້ຊົນຜະລິດຊີ້ນໃຫ້ໄດ້ 221,5 ພັນໂຕນ ແລະ ສັດນ້ຳ (ປາ, ກົບ, ກຸ້ງ) ໃຫ້ໄດ້ 157,2 ພັນໂຕນ; ຕອບສະໜອງການບໍລິໂພກ ສະເລ່ຍໃຫ້ໄດ້ 53 ກິໂລຕໍ່ຄົນຕໍ່ປີ, ໃນນັ້ນ ເຂດຕົວເມືອງ ໃຫ້ໄດ້ 66 ກິໂລຕໍ່ຄົນຕໍ່ປີ ແລະ ເຂດຊົນນະບົດ 48 ກິໂລຕໍ່ຄົນຕໍ່ປີ ດ້ວຍຮູບການສົ່ງເສີມທາງກົງ ແລະ ທາງອ້ອມ; ຍົກມູນຄ່າຜະລິດຕະພັນຂະແໜງລ້ຽງສັດ ແລະ ການປະມົງ ໃຫ້ກວມອັດຕາສ່ວນ ປະມານ 42-45% ຂອງລວມຍອດມູນຄ່າຜະລິດຕະພັນຂະແໜງກະສິກຳ-ປ່າໄມ້ ໂດຍສືບຕໍ່ເຮັດໃຫ້ລະດັບການຂະ

ຫຍາຍພັນຂອງຝູງສັດ ຢູ່ໃນລະດັບ 4-5% ຕໍ່ປີ; ໃນນັ້ນ, ງົວ, ຄວາຍ ປະມານ 2-3%, ໝູ ແລະ ສັດປີກ ປະມານ 6%. ສູ້ຊົນໃຫ້ມີອາສາສະໝັກລ້ຽງສັດ-ສັດຕະວະແພດປະຈຳຢູ່ທຸກກຸ່ມບ້ານ, ບຸກລະດົມສັກຢາປ້ອງ ກັນສັດໃຫຍ່ ງົວ-ຄວາຍ ໃຫ້ໄດ້ 75-80% ຂອງຝູງສັດເຂດຊານເມືອງ ແລະ 45-50% ຂອງຝູງສັດຢູ່ເຂດ ຊົນນະບົດ.

1.3. ຜັກ ແລະ ໝາກໄມ້: ສາລີຫວານ ຄາດຄະເນຜົນຜະລິດປະມານ 80 ພັນໂຕນ ໃນເນື້ອທີ່ 20 ພັນເຮັກຕາ; ປູກເຜືອກມັນ ຜົນຜະລິດ 200 ພັນໂຕນ ໃນເນື້ອທີ່ 25 ພັນເຮັກຕາ; ໝາກໄມ້ໃຫ້ໝາກ ຜົນ ຜະລິດ 690 ພັນໂຕນ ໃນເນື້ອທີ່ 45 ພັນເຮັກຕາ ແລະ ພືດຜັກອື່ນໆ ຜົນຜະລິດ 1,3 ລ້ານໂຕນ ໃນເນື້ອທີ່ 100 ພັນເຮັກຕາ.

2. <u>ດ້ານຜະລິດເປັນສິນຄ້າ:</u>

2.1. ພືດ: ສົ່ງເສີມການປູກເຂົ້າ ເປັນຕົ້ນ ເຂົ້ານ່ຳ, ເຂົ້າໄກ່ນ້ອຍ, ເຂົ້າຕາຂຽດ, ເຂົ້າຫອມ, ພັນເຂົ້າ ຍີ່ປຸ່ນ, ເຂົ້າເຊແອ 203; ເພີ່ມເນື້ອທີ່ ໂດຍສະເລ່ຍໃຫ້ໄດ້ປະມານ 250-300 ພັນເຮັກຕາຕໍ່ປີ ເພື່ອໃຫ້ມີເຂົ້າ ສຳລັບເປັນສິນຄ້າຫຼາຍກວ່າ 1/3 ຂອງປະລິມານເຂົ້າໃນຄອບຄົວ ແລະ ສາມາດສະໜອງໃຫ້ແກ່ຕະຫລາດ ໃນ ແຕ່ລະໄລຍະ ປະມານ 500-1.000 ພັນໂຕນຕໍ່ປີ; ປູກສາລີອາຫານສັດ: ຜົນຜະລິດໃຫ້ໄດ້ 1.170 ພັນໂຕນ ໃນເນື້ອທີ່ 225 ພັນເຮັກຕາ; ກາເຟ: ຜົນຜະລິດໃຫ້ໄດ້ ຫລາຍກວ່າ 55,3 ພັນໂຕນ ໃນເນື້ອທີ່ປູກ 65 ພັນ ເຮັກຕາ; ຖົ່ວເຫລືອງ: ຜົນຜະລິດໃຫ້ໄດ້ 26,25 ພັນໂຕນ, ໃນເນື້ອທີ່ 17,5 ພັນເຮັກຕາ; ອ້ອຍ: ຜົນຜະລິດ 2,15 ລ້ານໂຕນ ໃນເນື້ອທີ່ 50 ພັນເຮັກຕາ.

ສູ້ຊົນຜະລິດແນວພັນເຂົ້າທີ່ມີປະສິດທິພາບສູງ ໃຫ້ໄດ້ 100.000 ໂຕນ ໃນປີ 2015; ສູ້ຊົນຜະລິດ ແນວພັນສາລີແຂງໃຫ້ບັນລຸໄດ້ປະມານ 40.000 ໂຕນ ໃນ 150.000 ເຮັກຕາ ເພື່ອສົ່ງອອກ.

2.2. ລ້ຽງສັດ: ສຸມໃສ່ປະເພດສັດໃຫຍ່ ເປັນຕົ້ນ ງົວ, ຄວາຍ ເພື່ອສົ່ງອອກຕາມຊາຍແດນ ຈາກ ປະມານ 100 ພັນໂຕ ໃນປີ 2010 ເພີ່ມຂຶ້ນເປັນ 120 ພັນໂຕ ໃນປີ 2015.

2.3. ເຄື່ອງປ່າຂອງດົງ: ຄາດຄະເນຜົນຜະລິດ ຮອດປີ 2015 ບັນລຸໄດ້ 667,6 ພັນໂຕນ, ໃນນັ້ນ ຜົນຜະລິດຈາກດອກແຂມ ບັນລຸໄດ້ 300 ພັນໂຕນ, ໝາກນາວ 100 ພັນໂຕນ, ຂີ້ຄັງ 28.500 ໂຕນ, ໝາກ ແໜ່ງ 4.500 ໂຕນ ແລະ ອື່ນໆ.

2.4. ພືດອຸດສາຫະກຳ: ຄາດຄະເນຮອດທ້າຍໄລຍະແຜນການ 5 ປີ ປູກໄມ້ອຸດສາຫະກຳໃຫ້ໄດ້ ປະມານ 80% ຂອງເນື້ອທີ່ປູກໄມ້ທັງໝົດ; ການຂຸດຄົ້ນໄມ້ປູກອຸດສາຫະກຳ ຄາດຄະເນປະມານ 621 ພັນ ແມັດກ້ອນ, ໃນນັ້ນ ໄມ້ສັກ ກວມສັດສ່ວນຫຼາຍກວ່າໝູ່ ປະມານ 96% ຂອງການຂຸດຄົ້ນໄມ້ທັງໝົດ ( 600 ພັນແມັດກ້ອນ ) , ໄມ້ວີກ ປະມານ 10 ພັນແມັດກ້ອນ ແລະ ອື່ນໆ.

3. <u>ດ້ານປ່າໄມ້:</u>

3.1. ຍົກລະດັບການປົກຫຸ້ມຂອງປ່າໄມ້ ໃຫ້ໄດ້ 65% ໃນປີ 2015, ຟື້ນຟູປ່າທຳມະຊາດໃຫ້ໄດ້ 3,9 ລ້ານເຮັກຕາ ແລະ ປູກໄມ້ໃຫ້ໄດ້ 2 ແສນເຮັກຕາ ໃນປີ 2015.

3.2. ສຳຫລວດຈັດສັນສາມປະເພດປ່າ ໃຫ້ໄດ້ 60% ແລະ ຂະຫຍາຍເຂດຍັ້ງຢືນປ່າໄມ້ ໃຫ້ໄດ້ 10% ຂອງປ່າຜະລິດທັງໝົດ ໃນປີ 2015.

3.3. ປັບປຸງການຄຸ້ມຄອງປ່າໄມ້ໃຫ້ມີຄວາມເຂັ້ມແຂງ, ສະກັດກັ້ນໃຫ້ໄດ້ການທຳລາຍປ່າໄມ້ ໂດຍການປັບປຸງການຄຸ້ມຄອງ ແລະ ການນຳໃຊ້ກອງທຶນປ່າໄມ້ໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິຜົນ;

3.4. ປົກປັກຮັກສາສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ

4. <u>ດ້ານຊົນລະປະທານ:</u>

ທັນຈາກການພັດທະນາຊົນລະປະທານໄປສູ່ການພັດທະນາຊົນລະກະເສດ ທີ່ຕິດພັນກັບການນຳໃຊ້ກົນຈັກ ແລະ ໄຟຟ້າ ໂດຍໃຫ້ກວມອັດຕາສ່ວນ 60-70% ຂອງເນື້ອທີ່ປູກຝັງໃນເຂດທົ່ງພຽງ ແລະ ພູດອຍ ຫຼື 50% ຂອງເນື້ອທີ່ການຜະລິດເຂົ້າ, ປູກພືດເສດຖະກິດ, ໄມ້ໃຫ້ໝາກ, ຂະຫຍາຍທົ່ງຫຍ້າລ້ຽງສັດ, ລ້ຽງປາ ແລະ ສັດນ້ຳທີ່ມີທ່າແຮງຕາມຄວາມຕ້ອງການຂອງສັງຄົມ. ຮອດປີ 2015 ເນື້ອທີ່ຫົດຊົນລະປະທານໃນລະດູແລ້ງ ຈະເພີ່ມຂຶ້ນ ແລະ ບັນລຸປະມານ 5 ແສນເຮັກຕາ, ໃນນັ້ນ ສະໜອງໃຫ້ແກ່ນາແຊງ 3 ແສນເຮັກຕາ; ເນື້ອທີ່ຫົດໃນລະດູຝົນ ຈະໄດ້ປະມານ 9,5 ແສນ ເຮັກຕາ, ໃນນັ້ນ ຫົດນາປີ 7,5 ແສນເຮັກຕາ. ສູ້ຊົນຜະລິດກະສິກຳລະດູແລ້ງໃຫ້ໄດ້ 2 ແສນເຮັກຕາ ແລະ ລະດູຝົນ ໃຫ້ໄດ້ 4 ແສນເຮັກຕາ ໃນປີ 2015.

5. <u>ການຄົ້ນຄວ້າທົດລອງ ແລະ ນຳໃຊ້ເຕັກນິກ:</u>

ຄົ້ນຄວ້າ ແລະ ປັບປຸງສູນເຕັກນິກກະສິກຳ-ປ່າໄມ້ ທີ່ມີແລ້ວ ຈຳນວນ 168 ສູນໃຫ້ມີຄວາມເຂັ້ມແຂງ ແລະ ສາມາດຖ່າຍທອດເຕັກນິກ ແລະ ເຮັດໜ້າທີ່ບໍລິການໃຫ້ແກ່ຊາວກະສິກອນ ແລະ ກາຍເປັນຕາໜ່າງ ຮັບໃຊ້ໃຫ້ແກ່ການຜະລິດໂດຍກົງ ແລະ ຂະຫຍາຍຕື່ມອີກໃຫ້ໄດ້ຫຼາຍກວ່າ 500 ສູນໃນທົ່ວປະເທດ ຮອດປີ 2015.

ຍົກສູງປະສິດທິຜົນຂອງການຜະລິດ ເປັນຕົ້ນ ການນຳໃຊ້ທີ່ດິນ ແລະ ແນວພັນ. ທັນການກະສິກຳເປັນອຸດສາຫະກຳ ແລະ ທັນສະໄໝ, ການພັດທະນາຊົນນະບົດຕິດພັນກັບການແກ້ໄຂຄວາມທຸກຍາກ, ຊົນລະປະທານ ແລະ ການຄົ້ນຄວ້າທົດລອງກະສິກຳ ແລະ ສ້າງໃຫ້ໄດ້ຕົວແບບໃນການຜະລິດກະສິກຳຕ່າງໆ ເຊັ່ນ: ການພັດທະນາຊົນລະກະເສດ, ການຜະລິດແນວພັນເຂົ້າ, ການຜະລິດແນວພັນສັດທີ່ມີຄຸນນະພາບ.

ຄົ້ນຄວ້າມາດຕະການຕ່າງໆເພື່ອການຈຳໜ່າຍ ແລະ ມາດຖານຄຸນນະພາບຂອງຜະລິດຕະພັນກະສິກຳ (SPS) ໃຫ້ໄດ້ໃນທຸກດ່ານສາກົນ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງກະສິກຳ-ປ່າໄມ້ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ .....ແຜນງານ.....ໂຄງການ, ມູນຄ່າເທົ່າກັບ**.....**ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ……).

**[4]. <u>ມາດຕະການ:</u>**

1. ການນຳໃຊ້ເຕັກນິກ-ເຕັກໂນໂລຍີທັນສະໄໝ, ຍົກສູງສະມັດທະພາບການຜະລິດ:

- ນຳໃຊ້ເຕັກນິກ-ເຕັກໂນໂລຍີທີ່ທັນສະໄໝ ເຊັ່ນ: ການນຳໃຊ້ເຄື່ອງຈັກຢອດເມັດພືດປູກ, ຈັກປັກດຳ, ຈັກເກັບກ່ຽວ, ຈັກປ້ອງກັນພືດ ແລະ ອື່ນໆ ເພື່ອຍົກສະມັດຕະພາບການຜະລິດໃຫ້ສູງຂຶ້ນ; ພ້ອມກັນນັ້ນ, ກໍ່ຂະຫຍາຍເນື້ອທີ່ນາທີ່ຈຳເປັນຈຳນວນໜຶ່ງຢູ່ເຂດທີ່ມີເງື່ອນໄຂ ເພື່ອໃຫ້ສາມາດນຳໃຊ້ເຕັກນິກ ແລະ ຫຼຸດຜ່ອນຕົ້ນທຶນໃນການຜະລິດ ລວມທັງຫຼຸດຜ່ອນການນຳໃຊ້ແຮງງານໂດຍກົງ.
- ສ້າງກຸ່ມບ້ານພັດທະນາຕິດພັນກັບການພັດທະນາຂະແໜງການກະສິກຳ-ປ່າໄມ້ ໂດຍການສຸມໃສ່ສ້າງສູນບໍລິການເຕັກນິກ ແລະ ຂໍ້ມູນຂ່າວສານໃນເຂດຈຸດສຸມກຸ່ມບ້ານພັດທະນາ ເປັນຕົ້ນແມ່ນ ເມືອງທີ່ມີການຈັດສັນພູມລຳເນົາ.

2. ການນຳໃຊ້ແຫຼ່ງທຶນ ແລະ ນະໂຍບາຍດ້ານອາກອນ:

- ນຳໃຊ້ແຫຼ່ງທຶນ ຈາກແຫລ່ງງົບປະມານຂອງລັດ, ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ, ການຊ່ວຍເຫຼືອລ້າ ແລະ ກູ້ຢືມ ແລະ ການລົງທຶນຈາກທະນາຄານ (ສິນເຊື່ອ) ແລະ ທຶນຂອງປະຊາຊົນເອງ.
- ມີນະໂຍບາຍພາສີອາກອນ ແລະ ນະໂຍບາຍການຄ້າທີ່ມີລັກສະນະກະຕຸກຊຸກຍູ້ໃຫ້ມີການຂະຫຍາຍຕາໜ່າງການຕະຫຼາດ ນັບແຕ່ຂອດຂາຍຍົກ-ຂາຍຍ່ອຍ, ຂອດການເກັບມ້ຽນ ແລະ ປຸງແຕ່ງ ລວມໄປເຖິງຂອດບໍລິການຂົນສົ່ງ ເຊັ່ນ: ການສ້າງສາງເຢັນ, ໂຮງອົບ, ຂະຫຍາຍໂຮງງານປຸງແຕ່ງ, ມີລະບົບໂຮງສີເຂົ້າ, ໂຮງຂ້າສັດຂະໜາດນ້ອຍ ແລະ ໂຮງງານອາຫານສັດ ທີ່ໄດ້ມາດຕະຖານ.
- ຄົ້ນຄວ້າ ແລະ ຖອດຖອນບົດຮຽນຮູບແບບການລົງທຶນປູກໄມ້ ໂດຍການສຳປະທານ 100%, ຮູບແບບ 2+3 ຫຼື ແບບອື່ນໆ ເພື່ອຫຼີກລ້ຽງຊ່ອງຫວ່າງ ເຊິ່ງພາໃຫ້ລັດ ແລະ ປະຊາຊົນເສຍຜົນປະໂຫຍດ, ສ້າງຖານຂໍ້ມູນກ່ຽວກັບທີ່ດິນປູກໄມ້ ແລະ ໃຫ້ບໍລິການສະໜອງຂໍ້ມູນ-ຂ່າວສານຕ່າງໆທີ່ກ່ຽວຂ້ອງເພື່ອການລົງທຶນປູກໄມ້ເປັນສິນຄ້າ.

3. ການຜະລິດ:

- ທັນການຜະລິດກະສິກຳຕິດພັນກັບການເຮັດຊົນລະກະເສດ ເພື່ອຊຸກຍູ້ການຜະລິດ ແລະ ເພີ່ມຜະລິດຕະພາບຂອງສິນຄ້າກະເສດໃຫ້ສູງຂຶ້ນ; ສະຫງວນພື້ນທີ່ດິນກະສິກຳໄວ້ໃຫ້ພຽງພໍສຳລັບການຜະລິດສະບຽງອາຫານ, ພ້ອມທັງສຸມໃສ່ພັດທະນາຢ່າງເປັນລະບົບຄົບຊຸດ 7 ທົ່ງພຽງບູລິມະສິດ ແລະ ບັນດາທົ່ງພຽງນ້ອຍຢູ່ພາກເໜືອ ແລະ ເຂດພູດອຍ.
- ປັບປຸງການຈັດຕັ້ງການຜະລິດ ແລະ ໂຄງປະກອບເສດຖະກິດແຕ່ຮາກຖານຂຶ້ນມາໂດຍການເສີມສ້າງຄວາມເຂັ້ມແຂງໃຫ້ກຸ່ມຜະລິດໃນເຂດທີ່ມີໜໍ່ແໜງແລ້ວ ແລະ ທົດລອງສ້າງເປັນໜໍ່ແໜງສະໜະກອນແບບໃໝ່ ທີ່ເຊື່ອມໂຍງກັບການບໍລິການ, ລະບົບການຊື້-ຂາຍ, ລະບົບການປຸງແຕ່ງ, ຄົ້ນຄວ້າ ແລະ ສິນເຊື່ອ.

4. ການສ້າງບຸກຄະລາກອນ ແລະ ການຝຶກອົບຮົມ:

- ພັດທະນາບຸກຄະລາກອນໂດຍການທັນເອົາພະນັກງານທີ່ມີຄວາມຮູ້ ຄວາມຊຳນານ ກ່ຽວກັບສັດຕະວະແພດບ້ານ, ພະນັກງານສົ່ງເສີມລົງແນະນຳ ແລະ ຊ່ວຍເຫຼືອທ້ອງຖິ່ນທີ່ຍັງຂາດແຄນ, ກຳນົດຄວາມຕ້ອງການພັດທະນາໃຫ້ລະອຽດໃນແຕ່ລະເຂດຈຸດສຸມ, ໂດຍໃຫ້ກຸ່ມບ້ານໜຶ່ງ ມີປະມານ 3-5 ຄົນ ລົງໄປນຳພາປະຊາຊົນໃນການເຮັດຕົວຈິງ.

- ຈັດຝຶກອົບຮົມ ແລະ ສາທິດ ໃຫ້ປະຊາຊົນ ກ່ຽວກັບການປູກຝັງ ແລະ ລ້ຽງສັດໄປຄຽງຄູ່ກັບການ ບົວລະບັດຮັກສາ, ເຕັກນິກວິທະຍາການໃໝ່ ແລະ ອື່ນໆ ຢ່າງເປັນປົກກະຕິ ເພື່ອຮັບປະກັນສະມັດຕະພາບ ຂອງຜົນຜະລິດໃຫ້ສູງ.

5. ການຄຸ້ມຄອງ, ນິຕິກຳ ແລະ ນະໂຍບາຍ:

- ມີມາດຕະການ ແລະ ນະໂຍບາຍດ້ານການກວດກາຄຸນນະພາບ, ມາດຕະຖານ (SPS) ແລະ ການປ້ອງກັນພະຍາດ.
- ປັບປຸງ ແລະ ທົບທວນຄືນລະບຽບນິຕິກຳຕ່າງໆທີ່ໄດ້ປະກາດໃຊ້ແລ້ວ ເພື່ອເຫັນໄດ້ບັນຫາຊ່ອງ ຫວ່າງ ຫຼື ອຸປະສັກໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນ□າໃຊ້ປ່າໄມ້ ແລະ ທີ່ດິນທີ່ມີປ່າໄມ້ປົກ ຫຸ້ມ.
- ປະຕິບັດນະໂຍບາຍມອບດິນ-ມອບປ່າໃຫ້ຊາວບ້ານ ປົກປັກຮັກສາ ແລະ ນຳໃຊ້; ສ້າງເງື່ອນໄຂໃຫ້ ແຕ່ລະຄອບຄົວຊາວກະສິກອນ ຢູ່ຊົນນະບົດມີທີ່ດິນຜະລິດເປັນຂອງຕົນເອງ; ຢຸດຕິການຖາງປ່າ ເຮັດໄຮ່ ຕິດ ພັນກັບການແກ້ໄຂຄວາມທຸກຍາກ.
- ຄຸ້ມຄອງປ່າໄມ້ໃຫ້ເຂັ້ມງວດ ແລະ ມີປະສິດທິຜົນສູງກວ່າເກົ່າ ແນໃສ່ເພີ່ມເນື້ອທີ່ສີຂຽວດ້ວຍການ ເຮັດໃຫ້ເນື້ອທີ່ປົກຫຸ້ມຂອງປ່າໄມ້ທຳມະຊາດ ກວມເນື້ອທີ່ສ່ວນໃຫຍ່ຂອງປະເທດ ດ້ວຍການແກ້ໄຂບັນຫາການ ຕັດໄມ້ທຳລາຍປ່າໃຫ້ມີຜົນສັກສິດ, ຟື້ນຟູບູລະນະປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດໃຫ້ໄປຕາມທິດທີ່ ຍືນຍົງຢ່າງແທ້ຈິງ.
- ດຳເນີນມາດຕະການຟື້ນຟູປ່າ ໂດຍກຳນົດໃຫ້ໄດ້ເຂດສຳລັບຟື້ນຟູ ເພື່ອອະນຸລັກ ແລະ ປົກປັກ ຮັກສາໃຫ້ປ່າຟື້ນຟູໂດຍທຳມະຊາດ, ປັບປຸງຄຸນນະພາບ ແລະ ໂຄງສ້າງຂອງປ່າຟື້ນຟູດ້ວຍການປູກເສີມບາງ ຊະນິດພັນໄມ້.

### 2.1.2. ອຸດສາຫະກຳ ແລະ ການຄ້າ

**[1]. <u>ທິດທາງ:</u>**

ພັດທະນາຂະແໜງການອຸດສາຫະກຳ ແລະ ການຄ້າ ໃຫ້ຂະຫຍາຍຕົວໄວ ຮັບປະກັນທາງດ້ານ ປະລິມານ ແລະ ຄຸນນະພາບ, ມີຄວາມສົມດຸນລະຫວ່າງການສະໜອງ ແລະ ຄວາມຕ້ອງການ, ຍົກສູງຄວາມ ສາມາດໃນການແຂ່ງຂັນ, ທັງຕິດແໜ້ນກັບການປຸງແຕ່ງຜົນຜະລິດກະສິກຳ ແລະ ມີການສົ່ງອອກ-ນຳເຂົ້າ ເຮັດໃຫ້ການສົ່ງອອກໃຫ້ມີຈັງຫວະເຕີບໂຕທີ່ໝັ້ນຄົງ ກາຍເປັນກຳລັງແຮງຊຸກຍູ້ເສດຖະກິດໃຫ້ມີການເຕີບໂຕ ໄວ; ການພັດທະນາຂະແໜງດັ່ງກ່າວນີ້ ຕ້ອງຕິດພັນໂດຍກົງກັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຢູ່ຂະແໜງການທີ່ມີທ່າແຮງ ແລະ ສາມາດແຂ່ງຂັນໄດ້ ເຊັ່ນ: ຫົວໜ່ວຍທຸລະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ດຶງດູດທຸກພາກສ່ວນເສດຖະກິດ, ສົ່ງເສີມການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ເຂົ້າໃນການຂະຫຍາຍອຸດສາຫະກຳປຸງແຕ່ງຫຼາຍຂະໜາດ, ຫລາຍລະດັບ, ສ້າງໃຫ້ໄດ້ນິຄົມອຸດສາຫະກຳ ຫລື ເຂດອຸດສາຫະກຳລະດັບຕ່າງໆ; ຄຽງຄູ່ກັນນັ້ນ, ກໍ່ສົ່ງເສີມການຜະລິດ ຫັດຖະກຳທີ່ເປັນມູນເຊື້ອຂອງປະຊາຊົນ, ຂະຫຍາຍຜະລິດຕະພັນທີ່ມີຕະຫຼາດຮອງຮັບແລ້ວ ໃຫ້ກ້າວສູ່ຄຸນນະພາບໃໝ່; ສືບຕໍ່ເປີດກວ້າງການພົວພັນ ຮ່ວມມືເສດຖະກິດກັບຕ່າງປະເທດ ໂດຍຮັບປະກັນຜົນປະໂຫຍດ ຈາກການເຊື່ອມໂຍງເສດຖະກິດກັບພາກພື້ນ

ແລະ ສາກົນ, ກະກຽມເຂົ້າເປັນສາມາຊິກອົງການການຄ້າໂລກ; ນຳໃຊ້ເຕັກໂນໂລຍີທີ່ທັນສະໄໝ, ເຝິກອົບຮົມບຸກຄະລາກອນທີ່ຊຳນານງານເຂົ້າໃນຂະບວນການຜະລິດທຸລະກິດໃຫ້ຫຼາຍຂຶ້ນ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

1). ດ້ານອຸດສາຫະກຳປຸງແຕ່ງ:

ສູ້ຊົນໃຫ້ອຸດສາຫະກຳປຸງແຕ່ງ ຂະຫຍາຍຕົວໃນອັດຕາສະເລ່ຍ 12-13% ຕໍ່ປີ, ອັດຕາສ່ວນອຸດສະຫະກຳປຸງແຕ່ງ ກວມປະມານ ບໍ່ຫລຸດ 24% ຂອງລວມຍອດຜະລິດຕະພັນພາຍໃນ (GDP) ໃນປີ 2015, ໃນນັ້ນ ອຸດສາຫະກຳປຸງແຕ່ງໄມ້, ອຸດສາຫະກຳຕັດຫຍິບ, ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ, ອຸດສາຫະກຳວັດສະດຸກໍ່ສ້າງ ແລະ ເຄື່ອງໃຊ້ສອຍ ກວມອັດຕາ 80% ໃນອຸດສາຫະກຳປຸງແຕ່ງລວມ.

2). ຫັດຖະກຳ:

ພັດທະນາຫັດຖະກຳໃຫ້ຂະຫຍາຍຕົວ ໃນອັດຕາສະເລ່ຍ ປະມານ 15% ຕໍ່ປີ ໂດຍການຊຸກຍູ້ສົ່ງເສີມຜະລິດຕະພັນຕົ້ນຕໍ ເຊັ່ນ: ແຜ່ນແພ, ຝ້າຍ ແລະ ໄໝ ເພີ່ມຂຶ້ນປະມານ 20% ຕໍ່ປີ, ຕີເງິນ-ຄຳ ເພີ່ມຂຶ້ນ 18% ຕໍ່ປີ, ຄວັດໄມ້ ເພີ່ມຂຶ້ນ 16% ຕໍ່ປີ.

2). ການຄ້າ:

ສູ້ຊົນໃຫ້ມູນຄ່າຈໍລະຈອນສິນຄ້າຂະຫຍາຍຕົວສະເລ່ຍ ປະມານ 11% ຕໍ່ປີ; ສູ້ຊົນໃຫ້ມູນຄ່າການສົ່ງອອກສິນຄ້າຂະຫຍາຍຕົວສະເລ່ຍ 18% ຕໍ່ປີ ແລະ ການນຳເຂົ້າ ຂະຫຍາຍຕົວສະເລ່ຍ 8% ຕໍ່ປີ; ສູ້ຊົນໃຫ້ການຂາດດຸນການຄ້າຢູ່ໃນລະດັບທີ່ສາມາດຊຳລະສະສາງໄດ້ ຫຼື ເກີນດຸນການຄ້າໃນບາງປີ; ສູ້ຊົນໃຫ້ອັດຕາສ່ວນການຂາຍຍົກ ບໍ່ຫຼຸດ 50% ຂອງສ່ວນແບ່ງຕະຫຼາດ ສຳລັບສິນຄ້າຕົ້ນຕໍຂອງທ້ອງຖິ່ນ.

3). ການຂະຫຍາຍຕະຫລາດ:

ສູ້ຊົນຂະຫຍາຍຕະຫຼາດຂາຍຍ່ອຍປະເພດຕ່າງໆ ຫຼື ຮ້ານຄ້າໃຫ້ກວມໃນ 80% ຂອງຈຳນວນກຸ່ມບ້ານ (ໃຈກາງຂອງກຸ່ມເສດຖະກິດ ວັດທະນະທຳຊົນນະບົດ) ໃນປີ 2015; ສູ້ຊົນສ້າງຫ້ວໜ່ວຍເສດຖະກິດຮ່ວມມືທຸລະກິດຂອງປະຊາຊົນ ຫລື ວິສາຫະກິດຊົນນະບົດ ໃຫ້ກວມປະມານ 30% ຂອງຈຳນວນບ້ານ; ຂະຫຍາຍ ຫລື ສ້າງຕະຫລາດຊົນນະບົດເຂດຫ່າງໄກສອກຫລີກ ໃຫ້ໄດ້ 70% ຂອງບັນດາບ້ານ.

- ຕະຫລາດສົ່ງອອກ: ເພີ່ມອັດຕາສ່ວນສົ່ງອອກໄປຕະຫລາດໃນພາກພື້ນອາຊີ ໃຫ້ກວມປະມານ 60% ໂດຍສະເພາະ ຕະຫລາດອາຊຽນ, ຈີນ, ຍີ່ປຸ່ນ, ເກົາຫລີໃຕ້, ໄຕ້ຫວັນ; ຕະຫລາດພາກພື້ນເອີລົບ ກວມປະມານ 30% (ທັງໃນກຸ່ມ ອີຢູ ແລະ ກຸ່ມຕະຫລາດອື່ນ ເຊັ່ນ: ນໍເວ, ສະວິດເຊີແລນ ແລະ ລັດເຊຍ); ໂອເຊອານີ ກວມປະມານ 10% ແລະ ຕະຫລາດທະວີບອາເມລິກາ ແລະ ອາຟລິກາ ກວມ 3-4%.

- ຕະຫລາດນຳເຂົ້າ: ຕະຫລາດພາກພື້ນອາຊີ ກວມປະມານ 75%, ນຳເຂົ້າຈາກຕະຫລາດເອີລົບ ປະມານ 18-19%, ຕະຫລາດອາເມລິກາ ປະມານ 2-3% ແລະ ຈາກໂອເຊອານີ ແລະ ອາຟລິກາ ກວມ ປະມານ 2-3%, ໂດຍເພີ່ມການນຳເຂົ້າເຄື່ອງອຸປະກອນການຜະລິດ ສຳລັບຂະແໜງອຸດສາຫະກຳຕາມໂຄງການລົງທຶນ; ຫລຸດຜ່ອນການນຳເຂົ້າວັດຖຸດິບ ເພື່ອຊຸກຍູ້ການຜະລິດພາຍໃນໃຫ້ກວມອັດຕາສ່ວນສູງຂຶ້ນ.

4). ການດັດສົມ ແລະ ຄຸ້ມຄອງລາຄາ:

ສ້າງອົງກອນຊັບພະຍາກອນຕະຫລາດ ເພື່ອຄົ້ນຄວ້າ, ວິໄຈ, ຕິດຕາມ ສະພາບການສະໜອງ ແລະ ຄວາມຕ້ອງການ ຫລື ຄາດຄະເນເຫດການລ່ວງໜ້າຂອງຕະຫລາດ (ສິນຄ້າ ແລະ ລາຄາ) ໃຫ້ເປັນລະບົບທີ່ເຊື່ອຖືໄດ້ ໃນແຕ່ລະໄລຍະ.

[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງອຸດສາຫະກຳ-ການຄ້າ ຈະຕ້ອງ ສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ **.....**ໂຄງການ, ມູນຄ່າເທົ່າກັບ**.....**ຕື້ກີບ. (ລາຍລະອຽດຢູ່ ເອກະສານຊ້ອນທ້າຍທີ.....).

[4]. <u>ມາດຕະການ:</u>

1). ນຳໃຊ້ເຕັກນິກ ແລະ ເຕັກໂນໂລຍີທີ່ທັນສະໄໝ ເຂົ້າໃນຂະບວນການຜະລິດ ເປັນຕົ້ນແມ່ນ ການ ປຸງແຕ່ງເພື່ອຍົກສູງຄຸນນະພາບສິນຄ້າສົ່ງອອກ ໃຫ້ມີມູນຄ່າສູງຂຶ້ນ ແລະ ສາມາດແຂ່ງຂັນໄດ້.

2). ນະໂຍບາຍສົ່ງເສີມການຜະລິດເປັນສິນຄ້າ, ລາຄາ ແລະ ສິນເຊື່ອ:

- ດຶງດູດການລົງທຶນ ແລະ ນຳໃຊ້ກຳລັງແຮງງານສັງລວມຂອງທຸກພາກສ່ວນເສດຖະກິດເຂົ້າໃສ່ການ ກໍ່ສ້າງພື້ນຖານໂຄງລ່າງ ເປັນຕົ້ນ ການສ້າງຕະຫລາດປະເພດຕ່າງໆເຊັ່ນ: ຕະຫລາດຂາຍຍົກ-ຂາຍຍ່ອຍຜົນ ຜະລິດກະສິກຳ, ຕະຫລາດຊົນນະບົດ, ຕະຫລາດຊາຍແດນ; ສ້າງລະບົບສາງ, ສິ່ງອຳນວຍຄວາມສະດວກໃນ ການເກັບຮັກສາ ແລະ ປຸງແຕ່ງຜົນຜະລິດຫລັງເກັບກ່ຽວ.
- ສົ່ງເສີມ ແລະ ຄົ້ນຄວ້າສ້າງກອງທຶນຄ້ຳປະກັນລາຄາສິນຄ້າ ກະສິກຳຕົ້ນຕໍ; ສ້າງກຸ່ມ ຫລື ຫົວ ໜ່ວຍເສດຖະກິດຮ່ວມມືຂອງປະຊາຊົນ ໂດຍນຳໃຊ້ຮູບການບໍລິການຜູກພັນສອງສົ້ນ ລະຫວ່າງຜູ້ຜະລິດ ແລະ ຜູ້ລົງທຶນເກັບຊື້. ຄຸ້ມຄອງຕະຫລາດສິນຄ້າ ແລະ ລາຄາເພື່ອຮັກສາສະຖຽນລະພາບຂອງເສດຖະກິດ ແລະ ປົກປ້ອງຜູ້ຊົມໃຊ້.
- ສ້າງກົນໄກ, ນະໂຍບາຍທາງດ້ານການເງິນ-ສິນເຊື່ອ ໃຫ້ເປັນລະບົບ ເພື່ອອຳນວຍຄວາມສະດວກ ແກ່ທຸລະກິດການນຳເຂົ້າ-ສົ່ງອອກ. ເພີ່ມທະວີກົນໄກປະສານງານລະຫວ່າງ ຂະແໜງການທີ່ມີໜ້າທີ່ຊຸກຍູ້ ສົ່ງເສີມການຜະລິດ ແລະ ການຄ້າໃຫ້ມີຄວາມເປັນເອກະພາບກັນ. ອຳນວຍຄວາມສະດວກ, ຊຸກຍູ້ສົ່ງເສີມ ໃຫ້ການຜະລິດຕິດພັນກັບການຈຳໜ່າຍ (ຕະຫຼາດພາຍໃນ ແລະ ຕ່າງປະເທດ) ຕັ້ງແຕ່ຫົວທີ.
- ນຳໃຊ້ທຸກຮູບການສົ່ງເສີມການສົ່ງອອກໃຫ້ມີປະສິດທິຜົນ ເຊັ່ນ: ການຈັດວາງສະແດງສິນຄ້າ ທັງ ພາຍໃນ ແລະ ຕ່າງປະເທດ, ໂຄສະນາສິນຄ້າໂດຍຜ່ານພາຫະນະ ສື່ມວນຊົນທຸກຮູບແບບ ລວມທັງຜ່ານ ສະຖານທູດລາວຢູ່ຕ່າງປະເທດ, ຜູ້ຕາງໜ້າການຄ້າ, ການຈັດຝຶກອົບຮົມສະໜອງຂໍ້ມູນໃຫ້ນັກທຸລະກິດ, ເປີດ ກວ້າງຕະຫລາດຈຳໜ່າຍ ແລະ ພັດທະນາຍີ່ຫໍ້ຂອງສິນຄ້າໃຫ້ໄດ້ມາດຕະຖານສາກົນ.

3). ສ້າງບຸກຄະລາກອນ ແລະ ການຝຶກອົບຮົມ:

- ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາອຸດສາຫະກຳ-ການຄ້າແຫ່ງຊາດ; ບຳລຸງສ້າງພະນັກງານ, ກຳມະ ກອນທີ່ມີສີມືຮັບໃຊ້ໃຫ້ແກ່ກິດຈະກຳການຜະລິດ, ທຸລະກິດ ແລະ ການນຳເຂົ້າ-ສົ່ງອອກ.
- ເອົາໃຈໃສ່ຈັດຕັ້ງການຝຶກອົບຮົມ ການສຳມະນາໃຫ້ແກ່ນັກທຸລະກິດ ແລະ ທຸກພາກສ່ວນເສດຖະກິດ ໂດຍສະເພາະ ແມ່ນຄວາມຮູ້ ເຕັກນິກດ້ານການຕະຫລາດ, ດຳເນີນທຸລະກິດໃນກົນໄກເສດຖະກິດຕະຫລາດ ແລະ ການເຊື່ອມໂຍງເສດຖະກິດກັບສາກົນ; ຄວາມຮູ້ທາງດ້ານລະບຽບກົດໝາຍທຸລະກິດ.

4). ດ້ານນິຕິກຳ ແລະ ລະບຽບກົດໝາຍ: ທັນເອົາການຄຸ້ມຄອງອຸດສາຫະກຳ ແລະ ການຄ້າ ເຂົ້າສູ່ການຄຸ້ມຄອງຕາມລະບຽບກົດໝາຍ ແລະ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ

ທັງພາຍໃນ ແລະ ສາກົນເທື່ອລະກ້າວ, ໂດຍການຄົ້ນຄວ້າ ປັບປຸງ ແລະ ສ້າງໃໝ່ບັນດາຂໍ້ກຳນົດ, ລະບຽບ ການ ແລະ ນິຕິກຳຕ່າງໆ ແລະ ປະຕິບັດຢ່າງເປັນເອກະພາບ.

### 2.1.3. ພະລັງງານ-ບໍ່ແຮ່

**[1]. <u>ທິດທາງ</u>:**

ຂະແໜງພະລັງງານ-ບໍ່ແຮ່ ແມ່ນໜຶ່ງໃນຂະແໜງການຍຸດທະສາດທີ່ສຳຄັນທັງໃນສະເພາະໜ້າ ແລະ ຍາວນານ, ເປັນຂະແໜງສະໜອງແຫລ່ງພະລັງງານ ແລະ ສະສົມທຶນຮອນໃຫ້ແກ່ການພັດທະນາປະເທດ, ການຜະລິດ, ທຸລະກິດ ແລະ ຮັບໃຊ້ສັງຄົມ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ກາຍເປັນ ແຫລ່ງພົ້ໄພທີ່ສຳຄັນຂອງອາຊຽນ, ເປັນຫົວຈັກທີ່ສຳຄັນໃນການຫັນປະເທດອຸດສາຫະກຳ ແລະ ທັນສະໄໝ; ການຂະຫຍາຍແຫລ່ງໄຟຟ້າ ແລະ ບໍ່ແຮ່ ຕິດພັນກັບການປົກປັກຮັກສາທຳມະຊາດ-ສິ່ງແວດລ້ອມໃຫ້ຍືນຍົງ ແລະ ຮັບປະກັນການນຳໃຊ້ຊັບພະຍາກອນທຳມະຊາດ, ແຫຼ່ງນ້ຳ ບໍ່ໃຫ້ບົກແຫ້ງ ແລະ ນຳໃຊ້ແຮ່ທາດຢ່າງ ມີ ປະສິດທິຜົນ.

ການພັດທະນາຂະແໜງໄຟຟ້າ ແມ່ນສຸມໃສ່ 2 ຫົວງານໃຫຍ່ ເຊັ່ນ: 1) ການພັດທະນາແຫຼ່ງຜະລິດ ໄຟຟ້າຈາກພະລັງງານນ້ຳ, ຖ່ານຫີນ, ພະລັງງານທົດແທນ; 2) ການຂະຫຍາຍລະບົບສາຍສົ່ງໄຟຟ້າ ເພື່ອ ຕອບສະໜອງ 2 ເປົ້າໝາຍ ຄື: ສະໜອງກະແສໄຟຟ້າໃຫ້ແກ່ການພັດທະນາພາຍໃນປະເທດ ແລະ ເປັນສິນ ຄ້າສົ່ງອອກ; ການພັດທະນາຂະແໜງບໍ່ແຮ່ແມ່ນສຸມໃສ່ສຳຫລວດ, ສ້າງແຜນທີ່ທໍລະນີສາດແຮ່ທາດຂັ້ນພື້ນ ຖານ ແລະ ດຳເນີນການຊອກຄົ້ນຕີລາຄາຈຸດປະກົດແຮ່ທາດ, ປະລິມານສະສົມ ແລະ ຄຸນນະພາບຂອງ ແຮ່ ທາດໃນຂອບເຂດທົ່ວປະເທດເພື່ອເປັນຂໍ້ມູນພື້ນຖານແກ່ການລົງທຶນ. ຊຸກຍູ້, ດຶງດູດແຫຼ່ງທຶນຈາກສາກົນ ເພື່ອ ລົງທຶນຂຸດຄົ້ນ, ປຸງແຕ່ງຍົກຄຸນນະພາບຂອງແຮ່ທາດດ້ວຍການສ້າງຕັ້ງໂຮງງານຫຼອມແຮ່ໃຫ້ເປັນຜະລິດ ຕະ ພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ, ຫຼຸດຜ່ອນການສົ່ງອອກແຮ່ທາດເປັນວັດຖຸດິບໃນປະຈຸບັນ ແລະ ຢຸດເຊົາ ຢ່າງສິ້ນເຊີງ ໃນຕໍ່ໜ້າ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

1). ເຂື່ອນໄຟຟ້າ:

ສຸມໃສ່ພັດທະນາໄຟຟ້ານ້ຳຕົກຂະໜາດກາງ ແລະ ຂະໜາດໃຫຍ່ ຢູ່ເຂດພາກເໜືອ-ກາງ-ໃຕ້ ເພື່ອ ສະໜອງໄຟຟ້າຮັບໃຊ້ພາຍໃນໃຫ້ພຽງພໍໃນປີ 2012; ສູ້ຊົນໃຫ້ໄດ້ລົງມືກໍ່ສ້າງເຂື່ອນຂະໜາດໃຫຍ່ 10 ໂຄງ ການ ລວມປະມານ 5.015 ເມກາວັດ ມູນຄ່າກໍ່ສ້າງທັງໝົດ 11.295 ລ້ານໂດລາ ຄຽງຄູ່ກັບການກໍ່ສ້າງ ເຂື່ອນຂະໜາດນ້ອຍ ແລະ ກາງຈຳນວນໜຶ່ງ; ແຕ່ໄລຍະປີ 2011-2015 ສ້າງໃຫ້ສຳເລັດໂຮງງານ ຜະລິດ ກະແສໄຟຟ້າ 7 ແຫ່ງ ດ້ວຍກຳລັງຕິດຕັ້ງ 3.436 ເມກາວັດ, ສະເພາະປີ 2010 ຈະສຳເລັດ 2 ແຫ່ງ ປະຈຸ ບັນກຳລັງຕິດຕັ້ງ 103 ເມກາວັດ.

2). ສາຍສົ່ງໄຟຟ້າ:

ສູ້ຊົນຂະຫຍາຍສາຍສົ່ງແຮງດັນກາງ 22 Kv ແລະ ໄຟຟ້ານອກລະບົບ (off-grid) ໄປສູ່ເຂດຊົນນະ ບົດຫ່າງໄກສອກຫຼີກ ບ່ອນທີ່ຍັງບໍ່ມີໄຟຟ້າ ເພື່ອຮັບປະກັນໃຫ້ໄດ້ 80% ຂອງຈຳນວນຄອບຄົວໃນທົ່ວປະ ເທດ ໃຫ້ມີໄຟຟ້າໃຊ້ ໃນປີ 2015; ສູ້ຊົນໃຫ້ສຳເລັດການເຊື່ອມຕໍ່ສາຍສົ່ງພາກເໜືອ-ກາງ ແລະ ພາກໃຕ້ເຂົ້າ ກັນ

ດ້ວຍລະບົບແຮງດັນ 115 Kv ເພື່ອສາມາດດຸນດ່ຽງການຕອບສະໜອງຄວາມຕ້ອງການໄຟຟ້າ; ສູ້ຊົນໃຫ້ສຳເລັດການເຊື່ອມໂຍງລະບົບສາຍສົ່ງກັບບັນດາປະເທດໃກ້ຄຽງ ໂດຍສະເພາະ ໄທ ແລະ ຫວຽດນາມ ດ້ວຍລະບົບແຮງດັນ 500 Kv.

3). ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ:

ສູ້ຊົນສ້າງແຜນທີ່ທໍລະນີສາດ-ບໍ່ແຮ່ມາດຕາສ່ວນ 1/200.000 ໃຫ້ສຳເລັດຢ່າງໜ້ອຍ 75% ຂອງເນື້ອທີ່ທົ່ວປະເທດ ແລະ ມາດຕາສ່ວນ 1/500.000 ໃຫ້ສຳເລັດຢູ່ເຂດທີ່ມີເງື່ອນໄຂຈຳນວນໜຶ່ງ; ສູ້ຊົນໃຫ້ໄດ້ຂຸດຄົ້ນ-ປຸງແຕ່ງບັນດາແຮ່ທາດສຳຄັນ ໃຫ້ເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບກ່ອນການຈຳໜ່າຍ ເຊັ່ນ: ທອງແຜ່ນ (86.200 ໂຕນຕໍ່ປີ), ຄຳແທ່ງ (6 ໂຕນຕໍ່ປີ), ຖ່ານຫີນ (728.000 ໂຕນຕໍ່ປີ), ທອງຝຸ່ນ (298.000 ໂຕນຕໍ່ປີ), ຫີນກາວ (600.000 ໂຕນຕໍ່ປີ); ສູ້ຊົນໃຫ້ສຳເລັດການສ້າງຕັ້ງໂຮງງານຫຼອມເຫຼັກພາກເໜືອ (ເມືອງວັງວຽງ), ໂຮງງານປຸງແຕ່ງເກືອກາລີ (ນະຄອນຫຼວງວຽງຈັນ) ແລະ ສູ້ຊົນໃຫ້ໄດ້ສ້າງຕັ້ງໂຮງງານປຸງແຕ່ງອາລູມີນາຢູ່ເຂດພາກໃຕ້...

4). ການສ້າງລາຍຮັບໃຫ້ງົບປະມານ:

- ນຳເຂົ້າ ໄຟຟ້າຈຳນວນ 3.669 ລ້ານກິໂລວັດໂມງ ມູນຄ່າ 322,8 ລ້ານໂດລາສະຫະລັດ
- ສົ່ງອອກໄຟຟ້າ ຈຳນວນ 46,750 ລ້ານກິໂລວັດໂມງ ມູນຄ່າ 2157,1 ລ້ານໂດລາສະຫະລັດ
- ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ມູຄ່າ 46.946,6 ລ້ານໂດລາສະຫະລັດ

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງພະລັງງານ-ບໍ່ແຮ່ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດໂຄງການໄຟຟ້າ 47 ໂຄງການ, ມູນຄ່າ 17840,7 ລ້ານໂດລາສະຫະລັດ, ໂຄງການບໍ່ແຮ່ 7 ໂຄງການ ມູນຄ່າ 4443,6 ລ້ານໂດລາສະຫະລັດ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

1). ການລະດົມທຶນເຂົ້າສູ່ການພັດທະນາ:

- ເອົາໃຈໃສ່ຂົນຂວາຍທຶນຊ່ວຍເຫຼືອ ຫຼື ກູ້ຢືມດອກເບ້ຍຕ່ຳຈາກຕ່າງປະເທດ ແລະ ນຳໃຊ້ຢ່າງມີ ປະສິດທິຜົນເຂົ້າໃນການພັດທະນາພື້ນຖານໂຄງລ່າງດ້ານໄຟຟ້າ, ລົງທຶນພັດທະນາແຮ່ທາດ ທີ່ເຫັນວ່າມີທ່າ ແຮງ ໂດຍເນັ້ນໃສ່ເຮັດໃຫ້ພາກລັດໄດ້ຮັບຜົນປະໂຫຍດສູງສຸດ, ຄຽງຄູ່ກັບການລະດົມການລົງທຶນຈາກທຸກ ພາກສ່ວນ ເສດຖະກິດຂອງສັງຄົມ.

2). ການນຳໃຊ້ເຕັກນິກໃໝ່ໃນການສຳຫລວດ, ຂຸດຄົ້ນ ແລະ ປຸງແຕ່ງ:

- ຫັນການຂຸດຄົ້ນ, ປຸງແຕ່ງແຮ່ທາດເຂົ້າສູ່ລະບຽບກົດໝາຍ, ຮັບປະກັນຜົນປະໂຫຍດສູງສຸດໃຫ້ຊາດ ແລະ ປະຊາຊົນ, ດຳເນີນມາດຕະການຕ່າງໆຕໍ່ພາກສ່ວນກະທຳຜິດກົດໝາຍທຸລະກິດແຮ່ທາດ.
- ຫັນຊັບສິນເປັນທຶນໃນໂຄງການໄຟຟ້າ ແລະ ບໍ່ແຮ່ຈຳນວນໜຶ່ງທີ່ເຫັນວ່າມີຂໍ້ມູນຄົບຖ້ວນ ເຊິ່ງລັດຖະບານຈະໄດ້ຮັບຜົນປະໂຫຍດສູງສຸດ.

3). ການປັບປຸງລະບຽບການ ແລະ ກົດໝາຍ:

- ສຸມໃສ່ປັບປຸງນະໂຍບາຍ, ກົດໝາຍ, ລະບຽບການ, ກົນໄກ ແລະ ຂັ້ນຕອນການປະສານງານ, ການຄົ້ນຄວ້າເອກະສານຂອງອົງການບໍລິຫານໃຫ້ກະທັດຮັດວ່ອງໄວ ແລະ ໂປ່ງໃສ ເພື່ອດຶງດູດການລົງທຶນ ເຂົ້າສູ່ຂະແໜງການນັບມື້ນັບຫຼາຍຂຶ້ນ.
- ທັນແຜນຍຸດທະສາດໃຫ້ກາຍເປັນແຜນງານ ແລະ ໂຄງການລະອຽດເພື່ອສາມາດຈັດຕັ້ງປະຕິບັດ ໃຫ້ເກີດຜົນເປັນຈິງ.

4). ການຮັກສາສິ່ງແວດລ້ອມ, ພັດທະນາບຸກຄະລາກອນ:

- ນຳໃຊ້ຊັບພະຍາກອນທຳມະຊາດ, ແຫຼ່ງນ້ຳ, ແຫຼ່ງແຮ່ທາດ ຢ່າງມີປະສິດທິຜົນ ແລະ ຄຸ້ມຄ່າ ໂດຍ ຕິດພັນກັບການປົກປັກຮັກສາທຳມະຊາດ-ສິ່ງແວດລ້ອມໃຫ້ຍືນຍົງ.
- ກໍ່ສ້າງບຸກຄະລາກອນໃຫ້ມີຄວາມເຂັ້ມແຂງ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ເປັນ ຕົ້ນ ໃນຂະແໜງທໍລະນີສາດ-ບໍ່ແຮ່.
- ປັບປຸງກົງຈັກການຈັດຕັ້ງຂອງຂະແໜງການໃຫ້ມີຄວາມສອດຄ່ອງ, ຍົກປະສິດທິພາບການປະຕິບັດ ວຽກງານຂອງພະນັກງານທຸກຂັ້ນ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອເປັນເຈົ້າການພັດທະນາຂະແໜງ ການໃຫ້ມີການຂະຫຍາຍຕົວໄວ.

## 2.1.4. ການຄຸ້ມຄອງ ແລະ ການພັດທະນາທີ່ດິນ

**[1]. <u>ທິດທາງ:</u>**

ໃນໄລຍະຂອງແຜນການ 5 ປີ ຄັ້ງທີ VII ເຮັດແນວໃດໃຫ້ການຈັດສັນປະເພດດິນ, ສິດການນຳໃຊ້, ສິດໃຊ້ທີ່ດິນໃຫ້ຄົບຖ້ວນສົມບູນ. ເອົາໃຈໃສ່ແກ້ໄຂບັນຫາຫຍຸ້ງຍາກໃນການຈັດຫາທີ່ດິນ ເພື່ອການຜະລິດຂະ ໜາດໃຫຍ່ໃຫ້ມີຄວາມສະຫງົບ, ຄົ້ນຄວ້າວິໄຈລະອຽດສູນການພັດທະນາທີ່ດິນຕາມທິດນຳໃຊ້ດິນເປັນທັງເປົ້າ ໝາຍການຜະລິດ, ເປັນທັງຊັບພະຍາກອນທຳມະຊາດ ເປັນທັງທຶນຮອນຂອງການພັດທະນາ, ທັງໃຫ້ປະຊາຊົນ ພົນລະເມືອງລາວມີທີ່ດິນຕາມລະບຽບກົດໝາຍເປັນສົມບັດ ທັຽຍາວນານ ແລະ ນຳໃຊ້ທີ່ດິນໃຫ້ມີປະໂຫຍດ ເພື່ອດຳລົງຊີວິດ. ຂຸດຄົ້ນດ້ວຍການເລືອກເອົາເຂດທີ່ດິນປ່າສະຫງວນ ແລະ ປ່າປ້ອງກັນແຫຼ່ງນ້ຳເປັນທ່າແຮງ ໃນການພັດທະນາ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

*1. ສຳຫຼວດຈັດສັນ, ແບ່ງເຂດ ແລະ ຈັດປະເພດທີ່ດິນ:*

- ສ້າງແຜນຈັດສັນທີ່ດິນຂັ້ນມະຫາພາກ, ແຜນແມ່ບົດຈັດສັນການນຳໃຊ້ທີ່ດິນແຫ່ງຊາດ, ແຜນຈັດສັນ ການນຳໃຊ້ທີ່ດິນລະດັບແຂວງ, ລະດັບເມືອງ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ.
- ສ້າງແຜນຈັດສັນທີ່ດິນຈຸນລະພາກ ( ແຜນຈັດສັນລະອຽດ ) ໂດຍສະເພາະແມ່ນແຜນການນຳໃຊ້ທີ່ ດິນລະດັບບ້ານ ແລະ ກຸ່ມບ້ານໃຫ້ສຳເລັດໃນຂອບເຂດທົ່ວປະເທດ.
- ສູ້ຊົນອອກໃບຕາດິນໃຫ້ສຳເລັດ 1 ລ້ານຕອນ ເພື່ອເຮັດໃຫ້ການຄຸ້ມຄອງທີ່ດິນເຂົ້າສູ່ລະບຽບ, ມີ ຄວາມສະຫງົບ ແລະ ຍຸຕິທຳ.

*2. ເກັບກຳລາຍຮັບຈາກທີ່ດິນ:*

- ສູ້ຊົນເກັບກຳລາຍຮັບຈາກທີ່ດິນໃຫ້ໄດ້ຄົບຖ້ວນ ເຊັ່ນ: ຄ່າທຳນຽມການນຳໃຊ້ທີ່ດິນ, ຄ່າເຊົ່າ, ຄ່າສຳປະທານ, ຄ່າໂອນສິດການນຳໃຊ້ທີ່ດິນ ແລະ ລາຍຮັບອື່ນໆຈາກທີ່ດິນຕາມກົດໝາຍກຳນົດໄວ້ ເພື່ອສ້າງລາຍຮັບເຂົ້າງົບປະມານແຫ່ງຊາດ ໃຫ້ເພີ່ມຂຶ້ນ 15% ຕໍ່ປີ.
- ສູ້ຊົນສ້າງລາຍຮັບຈາກທີ່ດິນໃຫ້ເພີ່ມຂຶ້ນ 3 ເທົ່າຕົວ ຫຼື ເທົ່າກັບ 5% ຂອງລາຍຮັບງົບປະມານແຫ່ງຊາດ.

*3. ສ້າງ ແລະ ປັບປຸງນະໂຍບາຍ, ນິຕິກຳ ທີ່ກ່ຽວຂ້ອງກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ:*

- ປັບປຸງກົດໝາຍວ່າດ້ວຍທີ່ດິນໃຫ້ສຳເລັດ.
- ປັບປຸງລັດຖະບັນຍັດ, ດຳລັດ ແລະ ນິຕິກຳຕ່າງໆ ໃຫ້ສອດຄ່ອງຕາມກົດໝາຍທີ່ໄດ້ປະກາດໃຊ້.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງຄຸ້ມຄອງ ແລະ ການພັດທະນາທີ່ດິນ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

1). ການຈັດສັນ ແລະ ນຳໃຊ້ທີ່ດິນ:

ດຳເນີນການສຳຫລວດເກັບກຳຂໍ້ມູນ, ຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ, ສ້າງແຜນທີ່ດິນ ແລະ ສ້າງແຜນແມ່ບົດ ເພື່ອວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ແລະ ຊັບພະ ຍາກອນທຳມະຊາດໃນລະດັບທ້ອງຖິ່ນ, ເຂດແຄວ້ນ ແລະ ທົ່ວປະເທດ ໂດຍການປະສານສົມທົບລະຫວ່າງ ອົງການຄຸ້ມຄອງທີ່ດິນ, ຂະແໜງການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອສະເໜີ ລັດຖະບານ ແລະ ສະພາແຫ່ງຊາດພິຈາລະນາຮັບຮອງເອົາໃນປີ 2010-2011.

2). ການກວດກາ ແລະ ໂຄສະນາເຜີຍແຜ່ລະບຽບການຕ່າງໆ:

- ດຳເນີນການກວດກາ ການນຳໃຊ້ທີ່ດິນທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງອົງການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນ ຖ້າຫາກພົບເຫັນວ່າມີການກະທຳທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບກົດໝາຍຈະຕ້ອງດຳເນີນການຢ່າງເດັດຂາດຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.
- ໂຄສະນາເຜີຍແຜ່, ສຶກສາອົບຮົມໃຫ້ທົ່ວສັງຄົມຮັບຮູ້, ເຄົາລົບ ແລະ ປະຕິບັດນະໂຍບາຍ, ລະບຽບກົດໝາຍທີ່ກ່ຽວຂ້ອງກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ດ້ວຍຮູບການຈັດປະຊຸມ, ສຳມະນາ, ອອກຂ່າວສື່ມວນຊົນ ແລະ ກຳນົດເຂົ້າໃນຫລັກສູດການສຶກສາ.

3). ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຄຸ້ມຄອງທີ່ດິນແຕ່ລະຂັ້ນ ດ້ວຍການບຳລຸງກໍ່ສ້າງພະນັກງານລັດຖະກອນໃຫ້ມີຄຸນທາດການເມືອງ, ມີຄວາມຊື່ສັດບໍລິສຸດ ແລະ ຄວາມຮູ້ຄວາມສາມາດດ້ານວິຊາສະເພາະ ເພື່ອໃຫ້ສາມາດນຳໃຊ້ເຕັກນິກວິຊາການທີ່ທັນສະໄໝ ເຂົ້າໃນການປະຕິບັດໜ້າທີ່ຕາມຄວາມຮັບຜິດຊອບຂອງຕົນ.

## 2.1.5. ໂຍທາທິການ-ຂົນສົ່ງ

**[1]. <u>ທິດທາງ:</u>**

ສືບຕໍ່ພັດທະນາຂະແໜງໂຍທາທິການ ແລະ ຂົນສົ່ງ ໃຫ້ເປັນປາຍແຫລມ, ເປັນປັດໃຈພື້ນຖານຂອງ ການຍົກປະສິດທິຜົນ ຂອງການຜະລິດທຸລະກິດ, ສ້າງບາດກ້າວ ແລະ ປູພື້ນໃຫ້ແກ່ການຫັນເປັນອຸດສາຫະ ກຳ ແລະ ທັນສະໄໝ, ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວການຈໍລະຈອນສິນຄ້າໃນຂອບເຂດທົ່ວ ປະເທດໃຫ້ໄດ້ໂລ່ງລ່ຽນ ແລະ ຮັບປະກັນການປ້ອງກັນຊາດປ້ອງກັນຄວາມສະຫງົບ. ເຊື່ອມໂຍງກັບພາກພື້ນ ຢ່າງສະດວກສະບາຍ, ສ້າງປະເທດໃຫ້ກາຍເປັນແລວເສດຖະກິດເໜືອ-ໃຕ້, ຕາເວັນອອກ-ຕາເວັນຕົກ..

**[2]. <u>ຄາດໝາຍຕົ້ນຕໍ:</u>**

*1). ການກໍ່ສ້າງເສັ້ນທາງ ແລະ ການຂົນສົ່ງທາງບົກ:*

- ພັດທະນາບັນດາຕາໜ່າງຄົມມະນາຄົມຂົນສົ່ງ ເຊື່ອມໂຍງເສັ້ນທາງພາຍໃນປະເທດກັບບັນດາປະ ເທດໃກ້ຄຽງ ຕາມແລວເສດຖະກິດໃນລະດັບພາກພື້ນ, ແລວເສດຖະກິດເໜືອ-ໃຕ້, ຕາເວັນອອກ-ຕາເວັນຕົກ ໃຫ້ໄດ້ມາດຖານສາກົນ, ກໍ່ສ້າງທາງດ່ວນ ໂດຍໃນໄລຍະ 5 ປີໃຫ້ບັນລຸໄດ້ 920 ກິໂລແມັດ.
- ສູ້ຊົນກໍ່ສ້າງເສັ້ນທາງຫຼວງຂອງເມືອງ, ທາງຊົນນະບົດທີ່ເຊື່ອມເຂົ້າໃສ່ເຂດຈຸດສຸມ ແລະ ກຸ່ມບ້ານ ພັດທະນາຈຳນວນໜຶ່ງ ໃຫ້ເປັນທາງປູຫີນທີ່ໄດ້ມາດຕະຖານ ຫຼື ໃຫ້ສາມາດສັນຈອນໄປມາໄດ້ຢ່າງໜ້ອຍ ໜຶ່ງລະດູ ໃຫ້ໄດ້ 100% ໃນປີ 2015.
- ສ້າງບັນດາເສັ້ນທາງເຊື່ອມໂຍງທີ່ສຳຄັນ ແລະ ຈຳເປັນຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ, ສິ່ງແວດລ້ອມ, ປົກປັກຮັກສາທຳມະຊາດ, ແຫລ່ງຊີວະນາໆພັນ ແລະ ແຫລ່ງທ່ອງທ່ຽວ.
- ຍົກສູງຄຸນນະພາບການບໍລິການດ້ານການຂົນສົ່ງ ແລະ ລະດັບຄວາມປອດໄພໃນການສັນຈອນຂອງ ຜູ້ໂດຍສານ ແລະ ການຂົນສົ່ງສິນຄ້າ ເພື່ອເພີ່ມບໍລິມາດຂົນສົ່ງໂດຍສານ ໃຫ້ບັນລຸ ປະມານ 320 ລ້ານຄົນ ເພີ່ມຂຶ້ນສະເລ່ຍແຕ່ລະປີ 9% ແລະ ບໍລິມາດຈໍລະຈອນໂດຍສານ ໃຫ້ບັນລຸ 18.000 ລ້ານຄົນ/ກິໂລແມັດ, ເພີ່ມຂຶ້ນສະເລ່ຍແຕ່ລະປີ 10%; ສູ້ຊົນໃຫ້ບໍລິມາດການຂົນສົ່ງສິນຄ້າ ບັນລຸໄດ້ປະມານ 23 ລ້ານໂຕນ ຫຼື ເພີ່ມຂຶ້ນສະເລ່ຍແຕ່ລະປີ ປະມານ 7%; ສູ້ຊົນເພີ່ມບໍລິມາດຂົນສົ່ງຈໍລະຈອນສິນຄ້າບັນລຸ ໃຫ້ໄດ້ປະມານ 2,2 ຕື້ໂຕນ/ກິໂລແມັດ, ເພີ່ມຂຶ້ນສະເລ່ຍ 7% ຕໍ່ປີ.

*2). ການພັດທະນາການກໍ່ສ້າງ ແລະ ການຂົນສົ່ງທາງນ້ຳ:*

- ສືບຕໍ່ເປີດກວ້າງ ແລະ ປັບປຸງເສັ້ນທາງການເດີນເຮືອຕາມລຳແມ່ນ້ຳຂອງ ແລະ ສາຂາ ໃຫ້ມີປະ ສິດທິຜົນ ແລະ ມີຄວາມປອດໄພ, ຄຸ້ມຄອງພື້ນຖານໂຄງລ່າງໃຫ້ໄດ້ມາດຕະຖານສາກົນ ແລະ ສາມາດ ຮັກສາສະພາບແວດລ້ອມ.
- ກໍ່ສ້າງທ່າເຮືອຕາມຈຸດຕ່າງໆທີ່ເໝາະສົມ ແລະ ຈຳເປັນ, ສົ່ງເສີມໃຫ້ບັນດານັກລົງທຶນເອກະຊົນ ເຂົ້າມາມີສ່ວນຮ່ວມໃນການພັດທະນາການຂົນສົ່ງທາງນ້ຳຢ່າງກວ້າງຂວາງ.
- ສືບຕໍ່ລະດົມທຶນໃນການກໍ່ສ້າງບັນດາກິດຈະກຳປ້ອງກັນຕາຝັ່ງເຈື່ອນຕາມລຳແມ່ນ້ຳຂອງ ແລະ ນ້ຳ ສາຂາ ໂດຍສະເພາະແມ່ນຈຸດທີ່ມີການເຊາະເຈື່ອນຮ້າຍແຮງໃຫ້ໄດ້ 50%.
- ກໍ່ສ້າງລະບົບການຂົນສົ່ງອອກສູ່ທະເລຫວຽດນາມ (ຈຸງອາງ) ໃຫ້ສຳເລັດ.

*3). ພັດທະນາການກໍ່ສ້າງ ແລະ ການຂົນສົ່ງທາງອາກາດ:*

- ປັບປຸງລະບົບການບໍລິການການບິນໃຫ້ທັນສະໄຫມຄົບຊຸດ, ນຳໃຊ້ເຄື່ອງບິນທີ່ທັນສະໄຫມ ແລະ ຮັບປະກັນຄວາມປອດໄພສູງ, ປັບປຸງບັນດາບໍລິສັດການບິນໃຫ້ມີຄວາມເຂັ້ມແຂງ ແລະ ສະຫນອງການບໍລິການໃຫ້ມີຄຸນນະພາບຂຶ້ນກວ່າເກົ່າ ແລະ ເປີດກວ້າງສາຍການບິນໄປສູ່ຫລາຍປະເທດທັງອາຊີ ແລະ ຢູໂຣບ.
- ຄົ້ນຄວ້າຍົກລະດັບ ແລະ ປັບປຸງສະຫນາມບິນພາຍໃນທີ່ມີແລ້ວໃຫ້ໄດ້ມາດຕະຖານກວ່າເກົ່າ; ຄົ້ນຄວ້າສ້າງສະຫນາມບິນໃຫມ່ທີ່ສາມາດຮອງຮັບເຄື່ອງບິນປະເພດ Boeing 747 ຢູ່ນະຄອນຫລວງວຽງຈັນ, ສະຫນາມບິນທີ່ສາມາດຮອງຮັບເຄື່ອງບິນປະເພດ Boeing 737 ໃຫ້ໄດ້ 4ແຫ່ງ (ຫລວງພະບາງ, ຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ), ຍົກລະດັບເດີ່ນບິນ ບໍ່ແກ້ວ, ໄຊຍະບູລີ, ຜົ້ງສາລີ, ຫົວພັນ, ສາລະວັນ ແລະ ອັດຕະປື ໃຫ້ສາມາດຮອງຮັບເຄື່ອງບິນຢ່າງຫນ້ອຍຂະຫນາດ 30 ບ່ອນນັ່ງ ໄດ້ຢ່າງມີຄຸນນະພາບ. ຮັບປະກັນຄວາມຕ້ອງການໃນການຂົນສົ່ງທາງອາກາດ ລະຫວ່າງລາວກັບບັນດາປະເທດໃນເຂດລຸ່ມແມ່ນ້ຳຂອງ (GMS) ແລະ ອາຊຽນ.
- ເພີ່ມເຄື່ອງບິນຈຳນວນຫນຶ່ງ, ປັບປຸງພື້ນຖານໂຄງລ່າງການບິນ ແລະ ຄຸນນະພາບການບໍລິການຄືນໃຫມ່, ຮັບປະກັນຄວມປອດໄພເວລາບິນ, ປັບປຸງບັນດາລະບົບການບັນຊາການບິນໃຫ້ມີຄວາມທັນສະໄຫມ. ຂະຫຍາຍເສັ້ນທາງການບິນໃຫມ່ຈຳນວນຫນຶ່ງ ດ້ວຍການຄົ້ນຄວ້າເປີດສາຍການບິນໂດຍກົງໄລຍະກາງ ແລະ ໄລຍະໄກ ເພື່ອເພີ່ມຈຳນວນຜູ້ໂດຍສານເຂົ້າ-ອອກ ແລະ ສ້າງຄວາມສະດວກໃຫ້ແກ່ການທ່ອງທ່ຽວ.
- ສູ້ຊົນໃຫ້ການຂົນສົ່ງໂດຍສານການບິນ ເພີ່ມຂຶ້ນປະມານ 8-10% ຕໍ່ປີ.
- ສູ້ຊົນເພີ່ມເຮືອບິນຜ່ານນ່ານຟ້າສະເລ່ຍ ໃຫ້ໄດ້ປະມານ 4,5-6,5% ຕໍ່ປີ.

*4). ການພັດທະນາການກໍ່ສ້າງ ແລະ ການຂົນສົ່ງທາງລົດໄຟ:*

- ສູ້ຊົນກໍ່ສ້າງພື້ນຖານໂຄງລ່າງ ແລະ ການບໍລິການຕົວເມືອງ ໃຫ້ສຳເລັດ ຕື່ມອີກ 21 ຕົວເມືອງ.
- ກໍ່ສ້າງທາງລົດໄຟ ພ້ອມດ້ວຍລະບົບໂຄງລ່າງພື້ນຖານທີ່ຄົບຊຸດ ແລະ ສາມາດໃຫ້ບໍລິການໄດ້ຢ່າງມີຄຸນນະພາບ, ສ້າງເງື່ອນໄຂໃຫ້ມີການຂົນສົ່ງສິນຄ້າຜ່ານແດນ ຫລື ລົດຂົນສົ່ງຕູ້ສິນຄ້າ (Container) ຫລາຍຂຶ້ນ, ຫັນຈາກການຂົນສົ່ງທາງລົດ ມາເປັນການຂົນສົ່ງທາງລົດໄຟ ເພື່ອສາມາດຫລຸດຕົ້ນທຶນການຂົນສົ່ງໄດ້.
- ສືບຕໍ່ເອົາໃຈໃສ່ສ້າງແຜນແມ່ບົດເພື່ອສຳຫລວດ, ອອກແບບກໍ່ສ້າງ ແລະ ກຳນົດແລວທາງເຊື່ອມຕໍ່ອະນຸພາກພື້ນ ໂດຍສະເພາະແຕ່ຈຸດທີ່ມີໃນປະຈຸບັນໄປຫາສະຖານີຢູ່ນະຄອນຫລວງວຽງຈັນ ແລະ ຂະຫຍາຍອອກສູ່ທະເລທາງດ້ານຕາເວັນອອກ (ຫວຽດນາມ), ເຊື່ອມຕໍ່ຈີນ ແລະ ເສັ້ນທາງຕິດຈອດເໜືອ-ໃຕ້.
- ສ້າງບົດວິພາກເສດຖະກິດເຕັກນິກທາງລົດໄຟແຕ່ວຽງຈັນ-ຊາຍແດນລາວ-ຈີນ ແລະ ແຕ່ທ່າແຂກ ຫາປາກເຊ.

*5). ການພັດທະນາຜັງເມືອງ ແລະ ນ້ຳປະປາ:*

- ປັບປຸງແຜນຜັງຊີ້ນຳລວມ, ກຳນົດເຂດປົກປັກຮັກສາມໍລະດົກທາງສະຖາປັດຕະຍະກຳ, ຕົວເມືອງ ແລະ ທົ່ວທັດທຳມະຊາດ, ສ້າງແຜນຜັງເມືອງລະອຽດຂອງແຕ່ລະກຸ່ມບ້ານໃນຕົວເມືອງ, ປັບປຸງ ແລະ ກໍ່ສ້າງຕາໜ່າງເສັ້ນທາງໃນຕົວເມືອງໃຫ້ໄດ້ມາດຕະຖານ ແລະ ເປັນລະບົບເຊື່ອມຕໍ່ ເຮັດໃຫ້ການຈໍ່ຈອນມີຄວາມສະດວກ, ປອດໄພ, ປັບປຸງສະພາບແວດລ້ອມຕົວເມືອງຕິດພັນກັບການສ້າງເຂດສີຂຽວ ແລະ ສວນສາທາລະນະ, ຈັດສັນທີ່ພັກອາໄສທີ່ເໝາະສົມ ແລະ ຖືກຫຼັກສຸຂະອະນາໄມ.

- ສູ້ຊົນຫຼຸດຜ່ອນອຸປະຕິເຫດໃນທ້ອງຖະໜົນ ໂດຍການເຮັດໃຫ້ອັດຕາການເສຍຊີວິດບໍ່ກາຍ 5 ຄົນຕໍ່ພາຫະນະ 10.000 ຄັນ.
- ສືບຕໍ່ປັບປຸງລະບົບນ້ຳປະປາຢູ່ບັນດາຕົວເມືອງໃຫຍ່ ສູ້ຊົນສະໜອງນ້ຳປະປາໃຫ້ປະຊາຊົນໃນຕົວເມືອງ ໃຫ້ບັນລຸໄດ້ປະມານ 67% ຂອງຈຳນວນປະຊາຊົນທັງໝົດທີ່ອາໄສໃນຕົວເມືອງໃນທົ່ວປະເທດ.
- ກໍ່ສ້າງລະບົບນ້ຳປະປາຢູ່ບັນດາຕົວເມືອງນ້ອຍ ແລະ ກຸ່ມບ້ານ ເພື່ອຮັບປະກັນການສະໜອງ ນ້ຳປະປາທີ່ສະອາດ, ປອດໄພ ແລະ ມີການບໍລິການທີ່ດີ ແລະ ຮັບປະກັນໃຫ້ປະຊາຊົນໄດ້ຊົມໃຊ້ຢ່າງທົ່ວເຖິງ ແລະ ຍືນຍົງ.

*6). ການບໍລິການຜ່ານ:*

- ສືບຕໍ່ປັບປຸງ, ສ້າງ ແລະ ນຳໃຊ້ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ແລະ ເໜືອ-ໃຕ້ ຂອງອະນຸພາກພື້ນແມ່ນ້ຳຂອງທີ່ຜ່ານ ສປປ ລາວ ເຊັ່ນ: ທາງລົດໄຟໜອງຄາຍ-ວຽງຈັນ, ທາງລົດໄຟສີງກະໂປ-ຄຸນມິງ ທີ່ຜ່ານ ສປປ ລາວ, ທາງລົດໄຟເໜືອໃຕ້ຕາມເສັ້ນທາງເລກທີ 13, ທາງລົດໄຟສາຍຂວາງຫ້ວຍຊາຍ-ບໍ່ເຕັນ ແລະ ພູຄູນ-ໜອງແຮດ ແຂວງຊຽງຂວາງ, ແລວທາງສາຍຕັ້ງເໜືອໃຕ້ ແລະ ບັນດາແລວທາງສາຍຂວາງຕາເວັນອອກ-ຕາເວັນຕົກ ແລະ ຍົກລະດັບສະໜາມບິນສາກົນ ແລະ ສະໜາມບິນພາຍໃນປະເທດໃຫ້ທັນສະໄໝຂຶ້ນ.
- ສືບຕໍ່ສ້າງ ແລະ ຂະຫຍາຍເຂດເສດຖະກິດພິເສດຕາມບັນດາແລວທາງຜ່ານຂອງພາກພື້ນ ແລະ ເຂດເສດຖະກິດຊາຍແດນ ເປັນຕົ້ນແມ່ນ ສະຫວັນນະເຂດ-ເຊໂນ, ແດນສະຫວັນ ແຂວງສະຫວັນນະເຂດ, ນະຄອນຫລວງວຽງຈັນ, ຫ້ວຍຊາຍ-ຕົ້ນເຜິ້ງ, ແກ່ນທ້າວ ແຂວງໄຊຍະບູລີ, ບໍ່ເຕັນ ແຂວງຫລວງນ້ຳທາ, ໜອງແຮດ ແຂວງຊຽງຂວາງ ແລະ ສຶກສາຈຸດອື່ນໆອີກທີ່ເໝາະສົມ.
- ສືບຕໍ່ສ້າງ ແລະ ປັບປຸງລະບົບການບໍລິການ ການຜະລິດ ແລະ ການຂົນສົ່ງ (Logistics) ໃຫ້ຫລາກຫລາຍ ແລະ ທັນສະໄໝຂຶ້ນ ເປັນຕົ້ນແມ່ນຂັ້ນຕອນເອກະສານການອະນຸຍາດນຳເຂົ້າ-ສົ່ງອອກ ສິນຄ້າ , ການເສຍພາສີອາກອນ, ການຂົນສົ່ງ ແລະ ນຳໃຊ້ຕູ້ສິນຄ້າ (Container) ໃຫ້ເປັນລະບົບ ແລະ ມີຄວາມສະດວກວ່ອງໄວຂຶ້ນ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງໂຍທາທິການ ແລະ ຂົນສົ່ງ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ**.....**ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

*1). ການລະດົມທຶນເຂົ້າສູ່ການພັດທະນາພື້ນຖານໂຄງລ່າງ:*

- ອອກແຮງຂົນຂວາຍແຫຼ່ງທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກພາຍໃນ ແລະຕ່າງປະເທດ ໂດຍສະເພາະ ເລັ່ງໃສ່ແຫຼ່ງທຶນທີ່ບໍ່ມີເງື່ອນໄຂຜູກມັດຫຼາຍ.

- ຜັນຂະຫຍາຍອອກກົດໝາຍສົ່ງເສີມການລົງທຶນອອກເປັນນະໂຍບາຍຕົວຈິງ ແລະ ກົນໄກປະຕິບັດ ໃນແຕ່ລະກົດຈະການໃຫ້ເໝາະສົມເພື່ອລະດົມການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດລົງທຶນ ເຂົ້າໃນການພັດທະນາຂົວທາງ, ໂດຍສົ່ງເສີມຮູບການ (BOT) ແລະ ຫັນຊັບສິນເປັນທຶນ, ຍທຂ ນຳໃຊ້ທຶນ ກູ້ ຢືມເປັນຈຸດໜັກ.
- ຂຸດຄົ້ນແຫຼ່ງລາຍຮັບໃນຂະແໜງ ຍທຂ ໃຫ້ເພີ່ມຂຶ້ນ, ເອົາໃຈໃສ່ຄຸ້ມຄອງລາຍຮັບທີ່ເກັບໄດ້ຈາກ ຜູ້ ທີ່ຊົມໃຊ້ພື້ນຖານໂຄງລ່າງໃຫ້ດີ ບໍ່ໃຫ້ມີຊ່ອງຫວ່າງ ແລະ ຖືກຮົ່ວໄຫຼ ແລະ ກຳນົດມາດຕະການອັນເດັດ ຂາດ ຕໍ່ຜູ້ທີ່ລະເມີດ.

*2).ປັບປຸງ ແລະ ນຳໃຊ້ລະບຽບການກົດໝາຍທີ່ກ່ຽວຂ້ອງໃຫ້ເຂັ້ມງວດ;*

- ເພີ່ມທະວີນຳໃຊ້ຂໍ້ກຳນົດ, ກົດລະບຽບ, ດຳລັດ, ກົດໝາຍ ແລະ ມາດຕະຖານເຕັກນິກຕ່າງໆທີ່ຈຳ ເປັນເຂົ້າໃນການກໍ່ສ້າງ, ປົກປັກຮັກສາພື້ນຖານໂຄງລ່າງທີ່ໄດ້ພັດທະນາແລ້ວ, ເພີ່ມທະວີການຄຸ້ມຄອງກວດ ກາດ້ານມາດຖານຕໍ່ການກໍ່ສ້າງ, ການນຳໃຊ້ພາຍໃນຂະແໜງ ຍທຂ.
- ຕິດຕາມກວດກາ ແລະ ປະເມີນຜົນບັນດາໂຄງການທີ່ນຳໃຊ້ທຶນລັດ, ທຶນກູ້ຢືມ, ຊ່ວຍເຫລືອລ້າ ໃຫ້ ເຂົ້າສູ່ລະບຽບກົດໝາຍ, ມີປະສິດທິຜົນ ໂປ່ງໃສ, ນຳໃຊ້ໄປສູ່ປະຊາຊົນຢ່າງແທ້ຈິງ.

*3).* ຫັນຂະແໜງ ຍທຂ ເປັນອຸດສາຫະກ□າ ແລະ ທັນສະໄໝ, ນຳໃຊ້ເຕັກນິກ, ເຕັກໂນໂລຊີໃໝ່ ເຂົ້າໃນການຂົນສົ່ງ, ສ້ອມແປງເຄຫາສະຖານ, ຂົວທາງ ແລະ ການບໍລິການການຂົນສົ່ງ.

*4).* ສ້າງ ແລະ ພັດທະນາຖັນແຖວນັກວິຊາການ ແລະ ບຸກຄະລາກອນຂະແໜງ ຍທຂ ໃຫ້ພຽງພໍ ກັບຄວາມຕ້ອງການ, ຫລຸດຜ່ອນການນຳໃຊ້ນັກວິສາວະກອນຈາກຕ່າງປະເທດທີ່ບໍ່ຈຳເປັນ, ປັບປຸງໂຮງຮຽນ, ສະຖາບັນ ຍທຂ, ຝຶກອົບຮົມວິຊາການໃຫ້ພະນັກງານ ຍທຂ ຢູ່ຂັ້ນຮາກຖານໃຫ້ມີຄວາມສາມາດສູງຂຶ້ນ.

### 2.1.6. ໄປສະນີ ແລະ ໂທລະຄົມມະນາຄົມ

**[1]. <u>ທິດທາງ:</u>**

ສົ່ງເສີມການພັດທະນາໂຄງລ່າງພື້ນຖານດ້ານໄປສະນີ ໂທລະຄົມມະນາຄົມ ແລະ ໄອຊີທີ ທີ່ມີຄວາມ ໄວສູງໃຫ້ເຕີບໃຫຍ່ຂະຫຍາຍຕົວ ເພື່ອສ້າງໃຫ້ເປັນຂະແໜງບໍລິການທີ່ທັນສະໄໝ, ເປັນຜູ້ຂັບເຄື່ອນອັດຕາ ຄວາມໄວຂອງການພັດທະນາເສດຖະກິດ ແລະ ສັງຄົມ ໃຫ້ເຂັ້ມແຂງ, ແລະ ກາຍເປັນສູນກາງ (ໄອຊີທີ) ເຊື່ອມໂຍງກັບອະນຸພາກພື້ນ ແລະ ສາກົນ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ຂະຫຍາຍຕາໜ່າງ ໄປສະນີ ໃຫ້ໄດ້ທຸກເມືອງໃນທົ່ວປະເທດ ແລະ ເຂດບ້ານຈຸດສຸມທີ່ມີເງື່ອນໄຂ, ໃນນີ້ ຂະຫຍາຍສະຖາບັນເງິນຝາກປະຢັດ ໃຫ້ໄດ້ຫຼາຍກວ່າ 50% ຂອງຫ້ອງການໄປສະນີຊັ້ນ 2 ຫຼື ໄປສະນີ ຂັ້ນເມືອງ ແລະ ໄປສະນີເຂດຈຸດສຸມທີ່ມີການຂະຫຍາຍຕົວດ້ານເສດຖະກິດ-ສັງຄົມ, ສະໜອງສິນເຊື່ອແກ່ຜູ້ຜະ ລິດຂະໜາດນ້ອຍ, ປ່ອຍເງິນກູ້ແກ່ສະມາຊິກ ແລະ ພະນັກງານລັດວິສາຫະກິດຕ່າງໆ.
- ຂະຫຍາຍຕາໜ່າງ ແລະ ການບໍລິການໂທລະຄົມອອກສູ່ຊົນນະບົດໃຫ້ໄດ້ 90% ຂອງຈຳນວນ ບ້ານທົ່ວປະເທດ ແລະ ກໍ່ສ້າງລະບົບສາຍກາບໃຍແສງ ໃຫ້ໄດ້ຕື່ມ 17.192 ກິໂລແມັດ.

- ຂະຫຍາຍຈຳນວນເລກໝາຍໂທລະສັບ ຈາກ 7 ຕົວເລກເປັນ 8 ຕົວເລກ ເພື່ອສຸມໃສ່ຂະຫຍາຍ ການບໍລິການໂທລະສັບມືຖື ແລະ ຕັ້ງໂຕະ ໃຫ້ໄດ້ 80% ຂອງຈຳນວນປະຊາກອນທັງໝົດ.
- ສູ້ຊົນສ້າງລາຍຮັບວິຊາການຂອງ ອປທ ແຫ່ງຊາດ ໃຫ້ໄດ້ 175 ຕື້ກີບ, ລາຍຮັບຂອງບັນດາ ບໍລິສັດໄປສະນີ ແລະ ໂທລະຄົມ ໃຫ້ໄດ້ 10 ພັນຕື້ກີບ ແລະ ມອບພັນທະເຂົ້າງົບປະມານໃຫ້ໄດ້ 3 ພັນ ຕື້ ກີບ.
- ສ້າງໃຫ້ມີຜະລິດຕະພັນໃໝ່ຂຶ້ນ ໂດຍການນຳໃຊ້ເຕັກໂນໂລຍີທີ່ທັນສະໄໝເຂົ້າໃນການບໍລິການຈັດ ສົ່ງເມແບບຄົບວົງຈອນ (Logistics), ການຊຳລະຄ່າບໍລິການໄປສະນີດ້ວຍບັດເຄຣດິດ (Credit Cards), ຈົດໝາຍຜ່ານທາງເອເລັກໂຕຣນິກ (E-mail) ແລະ ການບໍລິການດ້ານການເງິນຜ່ານທາງໄປສະນີ ດ້ວຍຮູບ ແບບເອເລັກໂຕຣນິກ (E-post), ສ້າງຕັ້ງລະບົບເອເລັກໂຕນິກ ແບບອອນລາຍ ທົ່ວປະເທດ.
- ສ້າງຄວາມເປັນເອກະພາບໃນການນຳໃຊ້ເລກລະຫັດໄປສະນີ 5 ຕົວເລກ ທີ່ໄດ້ນຳໃຊ້ໃນປະຈຸບັນ ໃຫ້ສອດຄ່ອງກັບການກຳນົດຂອງຝັ່ງເມືອງ.
- ກໍ່ສ້າງສະຖານີກວດກາ ແລະ ຄຸ້ມຄອງຄື້ນຄວາມຖີ່ຂອງວິທະຍຸ ໃຫ້ໄດ້ 3 ແຫ່ງ ໃນທົ່ວປະເທດ.
- ກໍ່ສ້າງປະຕູເຂົ້າອອກສາກົນ ແລະ ສູນລວມອິນເຕີແນັດແຫ່ງຊາດ (Internet Gateway) ໃຫ້ໄດ້ 2 ແຫ່ງ ໃນທົ່ວປະເທດ.
- ພັດທະນາພາສາລາວ ເອເລັກໂຕນິກ ໃສ່ອຸປະກອນການສື່ສານທຸກປະເພດ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງໄປສະນີ ແລະ ໂທລະຄົມມະນາຄົມ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ**.....**ຕື້ກີບ. (ລາຍລະອຽດຢູ່ ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

*1). ການນຳໃຊ້ເຕັກນິກ-ເຕັກໂນໂລຊີໃໝ່* ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ບັນດາຜູ້ປະກອບ ການໄປສະນີ, ໂທລະຄົມມະນາຄົມ ແລະ ໄອຊີທີ ໂດຍການພັດທະນາໂຄງລ່າງ ແລະ ບໍລິການທີ່ນຳໃຊ້ ເຕັກ ໂນໂລຍີທີ່ທັນສະໄໝ, ໃຫ້ສັງຄົມໄດ້ຮຽນຮູ້ ແລະ ຊົມໃຊ້ການບໍລິການໄດ້ຢ່າງສະດວກ ແລະ ທັ່ງຮັບ ປະກັນ ຄຸນນະພາບ ແລະ ລາຄາສົມເຫດສົມຜົນ.

*2). ການເຜີຍແຜ່ ແລະ ປັບປຸງນະໂຍບາຍ, ນິຕິກຳ:*

- ປັບປຸງບັນດານິຕິກຳທີ່ຈຳເປັນ ໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ຂອງຍຸກໂລກາພິວັດ; ເອົາໃຈໃສ່ໂຄສະນາເຜີຍແຜ່ນະໂຍບາຍ ແລະ ແຜນຍຸດທະສາດການພັດທະນາໄປສະນີ-ໂທລະຄົມມະນາຄົມ ແລະ ໄອຊີທີໃຫ້ສັງຄົມຢ່າງທົ່ວເຖິງ, ຕໍ່ເນື່ອງ ແລະ ເປັນປະຈຳ.
- ຮີບຮ້ອນຈັດຕັ້ງປະຕິບັດບັນດາຄາດໝາຍຂ້າງເທິງໃຫ້ມີປະສິດທິຜົນ, ຕິດຕາມກວດກາ, ປະເມີນ ຜົນ ແລະ ສະຫຼຸບຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດແຜນຍຸດທະສາດເປັນແຕ່ລະໄລຍະ.

*3).* ເພີ່ມທະວີການບຳລຸງສ້າງພະນັກງານບຸກຄະລາກອນຂະແໜງໄປສະນີ-ໂທລະຄົມ ໃຫ້ຫຍັບໃກ້ ເຂົ້າກັບສາກົນ, ມີປະລິມານພຽງພໍກັບຄວາມຕ້ອງການທັງໃນຂະແໜງການຂອງລັດ, ພາກທຸລະກິດ, ຜູ້ປະ ກອບການ, ຜູ້ໃຫ້ບໍລິການໃຫ້ທົ່ວສັງຄົມ.

## 2.1.7. ການທ່ອງທ່ຽວ

**[1]. <u>ທິດທາງ:</u>**

ຖືຂະແໜງການທ່ອງທ່ຽວເປັນຂະແໜງຍຸດທະສາດໜຶ່ງ ທີ່ສຳຄັນໃນການພັດທະນາສະເພາະໜ້າ ແລະ ຍາວນານ, ປັບປຸງໃຫ້ເປັນຂະແໜງບໍລິການ ແລະ ຈຳໜ່າຍສິນຄ້າພາຍໃນຢູ່ກັບທີ່, ສ້າງລາຍໄດ້ເພີ່ມໃຫ້ແກ່ປະຊາຊົນ, ຂະຫຍາຍແຫລ່ງທ່ອງທ່ຽວທຳມະຊາດ ເຮັດໃຫ້ປະເທດລາວກາຍເປັນປະເທດ "ທ່ອງທ່ຽວສີຂຽວ" ຕິດພັນກັບການປັບປຸງ ແລະ ຂະຫຍາຍແຫລ່ງທ່ອງທ່ຽວວັດທະນະທຳ ແລະ ປະຫວັດສາດທີ່ມີຫລາຍສີສັນ; ພັດທະນາຂະແໜງທ່ອງທ່ຽວໃຫ້ກາຍເປັນອຸດສາຫະກຳທີ່ຄົບຊຸດ, ທັນສະໄໝ ແລະ ຍືນຍົງ; ເປີດກວ້າງການມີສ່ວນຮ່ວມຂອງປະຊາຊົນ, ດຶງດູດນັກທ່ອງທ່ຽວຫລາຍທິດ ແລະ ຫລາຍສາຂາ, ສົ່ງເສີມນັກລົງທຶນຊັ້ນສູງໃຫ້ຫລາຍຂຶ້ນ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ຮອດປີ 2015 ສູ້ຊົນໃຫ້ຈຳນວນນັກທ່ອງທ່ຽວເພີ່ມຂຶ້ນເປັນປະມານ 2,8 ລ້ານຄົນ ສ້າງລາຍຮັບເປັນເງິນຕາໃຫ້ໄດ້ປະມານ 350 ລ້ານໂດລາສະຫະລັດຕໍ່ປີ.
- ຂຸດຄົ້ນ ແລະ ຂະຫຍາຍແຫລ່ງທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດໃຫ້ກາຍເປັນມໍລະດົກໂລກ 2 ແຫ່ງ ແລະ ມໍລະດົກແຫ່ງຊາດ 29 ແຫ່ງ; ສຸມໃສ່ພັດທະນາເມືອງຈຳນວນໜຶ່ງໃຫ້ເປັນແຫລ່ງທ່ອງທ່ຽວ ເຊັ່ນ: ເມືອງວຽງໄຊ (ແຂວງຫົວພັນ); ຄອນພະເພັງ (ແຂວງຈຳປາສັກ); ໂພນສະຫັວນ (ແຂວງຊຽງຂວາງ); ນາກາຍ, ຖ້ຳກອງລໍ, ຖ້ຳນ້ຳລອດ (ແຂວງຄຳມ່ວນ); ດົງນາຕາວແຂວງ(ສະຫວັນນະເຂດ); ພູເຂົາຄວາຍ (ນະຄອນຫລວງວຽງຈັນ) ແລະ ອື່ນໆ.
- ຂະຫຍາຍ ແລະ ປັບປຸງສະຖານທີ່ພັກ ເຊັ່ນ: ໂຮງແຮມ, ຣີສອດ ທີ່ມີມາດຕະຖານ, ຮອດປີ 2015 ໃນທົ່ວປະເທດ ສູ້ຊົນໃຫ້ມີໂຮງແຮມ ປະມານ 300 ແຫ່ງ; (ຫ້ອງນອນ...ຕຽງ.) ແລະ ຮ້ານອາຫານ ປະມານ 850 ແຫ່ງ ເພື່ອສະໜອງໃຫ້ພຽງພໍກັບຄວາມຕ້ອງການຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.
- ສືບຕໍ່ຮັກສາບັນຍາກາດການທ່ອງທ່ຽວເມືອງຫລວງພະບາງເມືອງມໍລະດົກໂລກ, ຍູ້ການພັດທະນາການທ່ອງທ່ຽວແຂວງຈຳປາສັກຮອບດ້ານ ເຮັດໃຫ້ການຂະຫຍາຍຂອງລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນເທົ່າຕົວທຽບໃສ່ປະຈຸບັນ ໂດຍການພັດທະນາ ແລະ ສ້າງໃຫ້ໄດ້ແຫຼ່ງທ່ອງທ່ຽວມະຫານະທີສີພັນດອນໂດຍການສ້າງຂົວຂ້າມເຊື່ອມຕໍ່ລະຫວ່າງເກາະດອນຕ່າງໆເຂົ້າກັນໃຫ້ໄດ້ 10 ແຫ່ງ, ສ້າງພູພຽງບໍລິເວນໃຫ້ກາຍເປັນແຫຼ່ງທ່ອງທ່ຽວທາງການປູກຝັງ-ລ້ຽງສັດ 1 ແຫ່ງ.
- ຈັດປີທ່ອງທ່ຽວລາວ ໃນປີ 2012 ໃຫ້ຄຶກຄື້ນ.
- ຈັດຕັ້ງການໂຄສະນາ ແລະ ສ້າງຂະບວນການ ເພື່ອກະກຽມເປັນເຈົ້າພາບກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ ແລະ ງານວາງສະແດງການທ່ອງທ່ຽວ ATF ໃນປີ 2013 (ASEAN Tourism Forum 2013).

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງທ່ອງທ່ຽວ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດບັນດາໂຄງການດັ່ງນີ້:

1). ໂຄງການທ່ອງທ່ຽວລາວສີຂຽວ, ສະອາດ, ງົດງາມ

2). ໂຄງການທ່ອງທ່ຽວຕາມແມ່ນ້ຳ ແລະ ນ້ຳຕົກຕາດຕ່າງໆ

3). ໂຄງການທ່ອງທ່ຽວວັດທະນະທຳ

4). ໂຄງການທ່ອງທ່ຽວປະຫວັດສາດ

(ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

1). ຈັດວາງແຫລ່ງ ແລະ ຕາໜ່າງການທ່ອງທ່ຽວເປັນຈຸດ ແລະ ເປັນວົງຈອນ ລະຫວ່າງບັນດາບ້ານ, ເມືອງ ແລະ ແຂວງຕ່າງໆໃນທົ່ວປະເທດ ເຊິ່ງມີລາຍການທ່ອງທ່ຽວທີ່ຊັດເຈນ, ປັບປຸງແຫລ່ງທ່ອງທ່ຽວທີ່ມີແລ້ວ ໃຫ້ໄດ້ມາດຕະຖານ, ສ້າງໂຄງການໃໝ່ທີ່ເຊື່ອມໂຍງ ແລະ ຕໍ່ເຕີມໃຫ້ແກ່ໂຄງການເກົ່າ.

2). ເຜີຍແຜ່ຂໍ້ມູນຂ່າວສານການທ່ອງທ່ຽວໃຫ້ທົ່ວເຖິງ, ຈັດຕັ້ງປະຊາຊົນຢູ່ເຂດທີ່ມີແຫລ່ງທ່ອງທ່ຽວ ຜະລິດເຄື່ອງທີ່ລະນຶກ, ສ້າງທີ່ຢູ່ອາໄສ ແລະ ການບໍລິການທີ່ຖືກຫລັກອານາໄມ ແລະ ມີຄຸນນະພາບ.

3). ປັບປຸງກົນໄກການບໍລິການການທ່ອງທ່ຽວໃຫ້ມີຄຸນນະພາບ ໂດຍການສ້າງເງື່ອນໄຂອຳນວຍຄວາມສະດວກໃນການເຂົ້າ-ອອກປະເທດ ກໍຄືການບໍລິການທ່ອງທ່ຽວ ໃຫ້ມີຄວາມສະດວກ, ວ່ອງໄວ, ສ້າງຄວາມໂປ່ງໃສໃນການເສຍຄ່າວີຊາ ແລະ ຄ່າທຳນຽມຕ່າງໆ; ມີການຈັດປະເພດໂຮງແຮມ ແລະ ສະຖານທີ່ທ່ອງທ່ຽວຕາມມາດຖານສາກົນ.

4). ສົ່ງເສີມການທ່ອງທ່ຽວເຊື່ອມຕໍ່ກັບປະເທດໃກ້ຄຽງເປັນຕົ້ນປະເທດອະນຸພາກພື້ນແມ່ນ້ຳຂອງ (GMS) ແລະ ປະເທດອາຊຽນ.

5). ປັບປຸງ ແລະ ຮັດກຸມບັນດານິຕິກຳຕ່າງໆ ທີ່ໄດ້ຖືກຈັດຕັ້ງປະຕິບັດແລ້ວ ແລະ ກຳລັງຈະສ້າງຂຶ້ນໃໝ່ໃຫ້ແທດເໝາະກັບສະພາບເສດຖະກິດ ແລະ ສັງຄົມທີ່ກຳລັງພັດທະນາ ແລະ ສະພາບໂລກາພິວັດຂອງໂລກ; ພັດທະນາບຸກຄະລາກອນໃນຂະແໜງທ່ອງທ່ຽວໃຫ້ມີຄວາມຮູ້ທາງດ້ານປະຫວັດສາດ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງລາວ, ມີລະບຽບວິໄນ, ການບໍລິການທີ່ດີ ແລະ ມີຄຸນະພາບ.

## 2.1.8. ການເງິນ-ການທະນາຄານ

### 1. ການເງິນ:

**[1]. <u>ທິດທາງ</u>:**

ສ້າງພື້ນຖານການເງິນ-ເງິນຕາໃຫ້ມີຄວາມເຂັ້ມແຂງ ແລະ ໂປ່ງໃສແນໃສ່ປະຕິບັດນະໂຍບາຍເສດຖະກິດມະຫາພາກໃຫ້ມີປະສິດທິຜົນ ແລະ ມີສະຖຽນລະພາບ; ເພີ່ມທະວີການຂຸດຄົ້ນ ແລະ ນຳໃຊ້ລາຍຮັບພາຍໃນ ແລະ ຕ່າງປະເທດຢ່າງປະຢັດ ແລະ ມີປະສິດທິຜົນສູງ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ສູ້ຊົນຫຼຸດຜ່ອນການຂາດດຸນງົບປະມານ ເທື່ອລະກ້າວ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ປະຕິບັດລາຍຮັບງົບປະມານທັງຫມົດ ໃນ 5 ປີ ໃຫ້ບັນລຸ 18-19% ຂອງ GDP ຂຶ້ນໄປ, ໂດຍເພີ່ມຂຶ້ນສະເລ່ຍໃນແຕ່ລະປີ ຢູ່ໃນລະຫວ່າງ 0,2% ຫາ 0,3% ຂອງ GDP ຂຶ້ນໄປ.

- ປະຕິບັດລາຍຈ່າຍງົບປະມານ ໃຫ້ບັນລຸ 20-22% ຂອງ GDP, ເພີ່ມຂຶ້ນສະເລ່ຍໃນແຕ່ລະປີ ຢູ່ໃນລະຫວ່າງ 0,20% ຫາ 0,25% ຂອງ GDP.
- ການຂາດດຸນ ບໍ່ໃຫ້ເກີນ 3% ຫາ 5% ຂອງ GDP.
- ສູ້ຊົນຮອດປີ 2015 ການລົງທຶນຈາກງົບປະມານຂອງລັດ 9,5% ຂອງ GDP.

**[3]. ແຜນງານ ແລະ ໂຄງການຈຸດສຸມ:**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງການເງິນ ຈະຕ້ອງສຸມໃສ່ຈັດຕັ້ງ ປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍ ທີ.....).

**[4]. <u>ມາດຕະການ:</u>**

*1).* ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນວຽກງານການເງິນ ເພື່ອຄວາມສະດວກ ແລະ ວ່ອງໄວ ໃນການຮັບຮູ້ສະພາບການ ແລະ ສາມາດສ້າງມາດຕະການທາງດ້ານການເງິນ ເພື່ອຮອງຮັບຜົນກະທົບຈາກ ພາຍນອກ ທີ່ບໍ່ສາມາດຄາດຄະເນໄດ້ລ່ວງໜ້າ.

*2). ການຄຸ້ມຄອງ ແລະ ນະໂຍບາຍຕ່າງໆ:*

- ປະຕິບັດກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26/12/2006 ແລະ ວິໄນການເງິນຢ່າງເຂັ້ມງວດ, ກວດກາຄືນກົດໝາຍພາສີ ແລະ ອາກອນ, ບັນດານະໂຍບາຍ ແລະ ລະບຽບການຕ່າງໆ ເພື່ອດັດແປງແກ້ໄຂອັນບໍ່ສອດຄ່ອງ ແລະ ເພີ່ມເຕີມອັນທີ່ບໍ່ທັນມີ ເພື່ອຮັບປະກັນລາຍຮັບ ຂອງລັດ, ທັງເປັນການກະຕຸກຊຸກຍູ້ການຜະລິດ ຂອງບັນດາພາກສ່ວນເສດຖະກິດຕ່າງໆ ເປັນຕົ້ນແມ່ນບັນດາ ປະເພດສິນຄ້າສົ່ງອອກ; ສ້າງນະໂຍບາຍພາສີ-ອາກອນທີ່ເໝາະສົມ, ນະໂຍບາຍການຫັນຊັບສິນຄົງທີ່ເປັນທຶນ ແລະ ນະໂຍບາຍການເງິນທີ່ກ່ຽວຂ້ອງ ເພື່ອກະກຽມເຂົ້າເປັນສະມາຊິກອົງການການຄ້າໂລກ, ຊຸກຍູ້ສົ່ງເສີມບັນ ດາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ເພື່ອເປັນແຫລ່ງລາຍຮັບທີ່ໝັ້ນຄົງ.

- ຄຸ້ມຄອງຢ່າງເຄັ່ງຄັດຕໍ່ທຸກແຫລ່ງລາຍຮັບ, ເກັບລາຍຮັບຢ່າງທັນການ, ປະຕິບັດລາຍຮັບແບບມອບ ເໜົາໃຫ້ຂັ້ນທ້ອງຖິ່ນ ແລະ ຂະແໜງການທີ່ມີລາຍຮັບຢ່າງສົມເຫດສົມຜົນ; ລວມສູນລາຍຮັບເປັນເງິນຕາຕ່າງ ປະເທດ ເຂົ້າໃນຄັງເງິນຕາຕ່າງປະເທດຂອງລັດຖະບານ ເປັນຕົ້ນແມ່ນລາຍຮັບຈາກການຂາຍໄມ້, ການຂາຍ ໄຟຟ້າ, ເງິນຄ່າບໍລິການບິນຜ່ານ.

- ຈັດວາງໂຄງປະກອບ ແລະ ອັດຕາສ່ວນ ລົງທຶນກໍ່ສ້າງພື້ນຖານໃຫ້ສອດຄ່ອງ, ດຸ່ນດ່ຽງລະຫວ່າງ ລາຍຈ່າຍລົງທຶນ ແລະ ລາຍຈ່າຍບໍລິຫານສຳລັບການຄຸ້ມຄອງ ແລະ ບຳລຸງຮັກສາພື້ນຖານໂຄງລ່າງທີ່ສ້າງຂຶ້ນ ໃຫ້ມີຄວາມຍືນຍົງ, ອອກຂໍ້ກຳນົດກ່ຽວກັບການຄຸ້ມຄອງການລົງທຶນກໍ່ສ້າງພື້ນຖານ, ເດັດຂາດຫ້າມ ແລະ ຢຸດຕິການກູ້ຢືມສິນເຊື່ອການຄ້າ ເພື່ອລົງທຶນກໍ່ສ້າງພື້ນຖານໂຄງລ່າງ;

- ປະຕິບັດມາດຕະການປະຢັດລາຍຈ່າຍຢ່າງເຂັ້ມງວດ ເພື່ອໃຫ້ສາມາດຫລຸດຜ່ອນການເກື້ອກູນໄດ້ ຢ່າງຂາດຕົວ ແລະ ປັບປຸງມາດຖານ, ກຳນົດຫມາຍການໃຊ້ຈ່າຍບໍລິຫານໃຫ້ແທດເໝາະກັບສະພາບເສດ ຖະກິດໃນແຕ່ລະໄລຍະຂຶ້ນຕື່ມ.

*3).* ຍົກລະດັບຄວາມຮູ້ ແລະ ຈັດຝຶກອົບຮົມກ່ຽວກັບວຽກງານການເງິນຢ່າງເປັນປະຈຳ ພ້ອມທັງ ລະບຽບການຕ່າງໆ ທີ່ຜູ້ປະກອບການຄວນຮັບຮູ້ ແລະ ເຜີຍແຜ່ຂໍ້ມູນຢ່າງເປັນປະຈຳແກ່ຫົວໜ່ວຍທຸລະກິດຕ່າງໆ.

**2. ການທະນາຄານ:**

**[1]. <u>ທິດທາງ:</u>**

ຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ ພ້ອມທັງ ປະກອບສ່ວນຍູ້ແຮງການພັດທະນາເສດຖະກິດ-ສັງຄົມໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້. ປັບປຸງຂະແໜງການທະນາຄານໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕ່ຳກວ່າອັດຕາການຂະຫຍາຍຕົວຂອງເສດຖະກິດ.
- ຄຸ້ມຄອງອັດຕາແລກປ່ຽນໃຫ້ມີຄວາມສະຫງົບປົກກະຕິ.
- ຮັບປະກັນຄັງສຳຮອງເງິນຕາຕ່າງປະເທດໃຫ້ສາມາດກຸ້ມການນຳເຂົ້າສິນຄ້າ ຫຼາຍກວ່າ 6 ເດືອນ.
- ລະດົມເງິນຝາກໃຫ້ເພີ່ມຂຶ້ນໂດຍສະເລ່ຍໃນແຕ່ລະປີ 25% ຫຼື ກວມເອົາ 39% ຂອງ GDP.
- ສູ້ຊົນໃຫ້ອັດຕາສ່ວນເງິນຝາກເປັນເງິນກີບຕໍ່ເງິນຝາກທັງໝົດ ເພີ່ມຂຶ້ນໂດຍສະເລ່ຍ 49% ຕໍ່ປີ ແລະ ບໍ່ຫຼຸດ 50% ຂອງຍອດເງິນຝາກທັງໝົດ ໃນປີ 2015.
- ສູ້ຊົນໃຫ້ການສະສົມເພີ່ມຂຶ້ນ ໂດຍການຂະຫຍາຍສິນເຊື່ອໃຫ້ພາກສ່ວນເສດຖະກິດເພີ່ມຂຶ້ນໂດຍສະເລ່ຍໃນແຕ່ລະປີ 23% ຫຼື ກວມເອົາ 33% ຂອງ GDP ໂດຍເລັ່ງໃສ່ພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ.
- ສູ້ຊົນເຮັດໃຫ້ການຈັດທະບຽນຮຸ້ນໃນຕະຫຼາດຫຼັກຊັບໃຫ້ໄດ້ປະມານ 20 ບໍລິສັດໃນປີ 2015
- ສູ້ຊົນເປີດກະດານຊື້-ຂາຍພັນທະບັດ ແລະ ຮຸ້ນກູ້ໃຫ້ໄດ້ເຄື່ອນໄຫວຢ່າງເປັນປົກກະຕິ

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງທະນາຄານ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ...ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ...).

**[4]. <u>ມາດຕະການ:</u>**

1). ເພີ່ມທະວີການຄຸ້ມຄອງເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງຍາວນານ ດ້ວຍການນຳໃຊ້ນະໂຍບາຍເງິນຕາ, ນະໂຍບາຍອັດຕາແລກປ່ຽນ ແລະ ນະໂຍາບາຍການຄຸ້ມຄອງເງິນຕາຕ່າງປະເທດຢ່າງມີໄຫວພິບ

2). ເພີ່ມທະວີວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ແລະ ຊຸກຍູ້ໃຫ້ມີຫຼາຍຮູບຫຼາຍສີ.

3). ສ້າງຄວາມເຂັ້ມແຂງ ແລະ ໝັ້ນຄົງໃຫ້ແກ່ລະບົບທະນາຄານ ແລະ ພັດທະນາຕະຫຼາດທຶນເປັນແຕ່ລະບາດກ້າວຢ່າງໝັ້ນທ່ຽງ, ຄົບວົງຈອນ ແລະ ເຊື່ອມໂຍງກັບສາກົນເທື່ອລະກ້າວ;

4). ພັດທະນາຕະຫຼາດທຶນໃຫ້ກາຍເປັນສະຖານທີ່ການລົງທຶນ ແລະ ການລະດົມທຶນໂດຍກົງ ແລະ ທຶນໄລຍະຍາວໃນ ສປປ ລາວ ທີ່ມີປະສິດທິພາບ ແນ່ໃສ່ສ້າງຄວາມເຊື່ອໝັ້ນໃນສັງຄົມ.

## 2.2. ການພັດທະນາຂົງເຂດສັງຄົມ

### 2.2.1. ການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ

**[1]. <u>ທິດທາງ:</u>**

ການພັດທະນາການສຶກສາແຕ່ນີ້ເຖິງປີ 2015 ມີຄວາມຈຳເປັນພາວະວິໄສ " ໃນການຂະຫຍາຍໂອກາດການສຶກສາທີ່ມີຄຸນນະພາບຢ່າງຕໍ່ເນື່ອງ" ດ້ວຍວິໄສທັດທີ່ຈະແຈ້ງໃນການສູ້ຊົນພັດທະນາການສຶກສາທຸກລະດັບໄປຕາມທ່າອ່ຽງຂອງການພັດທະນາ, ປັບປຸງລະບົບການສຶກສາໃຫ້ໄປຕາມທິດທາງທັນສະໄໝ, ຮັບໃຊ້ປະຊາຊົນຢ່າງທົ່ວເຖິງ ແລະ ຫຍັບເຂົ້າໃກ້ກັບມາດຖານສາກົນຢ່າງເປັນລະບົບ. ສືບຕໍ່ປະຕິຮູບລະບົບການສຶກສາແຫ່ງຊາດຢ່າງຕັ້ງໜ້າ ໂດຍໃຫ້ຄວາມສຳຄັນແກ່ການຍົກສູງຄຸນນະພາບໄປຄຽງຄູ່ກັບການຂະຫຍາຍໂອກາດດ້ານການສຶກສາໃຫ້ກວ້າງຂວາງ ແລະ ທົ່ວເຖິງກວ່າເກົ່າ ໂດຍສະເພາະແມ່ນ ຊົນເຜົ່າ, ເພດຍິງ ແລະ ຜູ້ດ້ອຍໂອກາດ; ຮັບປະກັນໃຫ້ການສຶກສາດຳເນີນໄປຢ່າງກົມກຽວທັງສາມດ້ານ: ການຍະສຶກສາ, ປັນຍາສຶກສາ ແລະ ຄຸນສົມບັດສຶກສາ, ທັງມີລັກສະນະຊາດ, ກ້າວໜ້າ ແລະ ທັນສະໄໝ.

ພັດທະນາການສຶກສາໃຫ້ກາຍເປັນແກ່ນສານ ແລະ ເສົາຄ້ຳອັນໜັກແໜ້ນໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ ຖືຄົນເປັນປັດໃຈຕັດສິນ ແລະ ເປັນເປົ້າໝາຍບູລິມະສິດຂອງການພັດທະນາຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ ແລະ ມີຄວາມຍືນຍົງ ໂດຍການສ້າງໃຫ້ມີຄວາມຮູ້ສະຕິປັນຍາ, ມີຄຸນສົມບັດສິນທຳປະຕິວັດ, ມີທັດສະນະ ແລະ ໂລກະທັດກ້າວໜ້າ, ຮູ້ອະນຸລັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳທີ່ດີງາມຂອງຊາດ, ຮູ້ຮັບເອົາສິ່ງທີ່ມີຄຸນຄ່າຈາກວັດທະນະທຳນາໆຊາດ ແລະ ມີສຸຂະພາບພະລາໄມສົມບູນ; ສ້າງບຸກຄະລາກອນປະເພດຕ່າງໆ ເຊັ່ນ: ກຳມະກອນວິຊາຊີບ, ນາຍຊ່າງ, ນັກວິຊາການ, ວິສະວະກອນ, ຜູ້ຄຸ້ມຄອງບໍລິຫານ, ຜູ້ຈັດການ ແລະ ອື່ນໆ, ເຮັດໃຫ້ຄົນລາວທຸກຊັ້ນຄົນມີຄວາມຮູ້ຄວາມສາມາດ ແລະ ມີຄວາມສີວິໄລທາງດ້ານຈິດໃຈ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການສ້າງສາ ແລະ ພັດທະນາປະເທດຊາດ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ສູ້ຊົນໃຫ້ເດັກ ອາຍຸ 3-5 ປີ ໃຫ້ໄດ້ເຂົ້າໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມ 39%.
- ຂະຫຍາຍຫຼັກສູດສ້າງຄູອະນຸບານລະບົບຊັ້ນສູງ ໃຫ້ໄດ້ຕື່ມ 3 ສະຖາບັນ (ໂຮງຮຽນດົງຄຳຊ້າງ, ແຂວງສາລະວັນ ແລະ ແຂວງຫຼວງນ້ຳທາ).
- ສູ້ຊົນໃຫ້ອັດຕາເຂົ້າຮຽນລວມ ຂອງເດັກອາຍຸ 5 ປີ ເພື່ອກຽມຄວາມພ້ອມເຂົ້າຮຽນປະຖົມ ໃຫ້ໄດ້ 26% ໃນປີ 2015.
- ສູ້ຊົນເຮັດໃຫ້ອັດຕາເຂົ້າຮຽນສຸດທີ່ຊັ້ນປະຖົມ ເພີ່ມຂຶ້ນເປັນ 98% ຮອດປີ 2015.
- ຂະຫຍາຍໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ໃຫ້ສາມາດຮັບນັກຮຽນເພີ່ມໃຫ້ໄດ້ຢ່າງໜ້ອຍ 22% ຂຶ້ນໄປ ໃນປີ 2015.

- ສ້າງເງື່ອນໄຂໃຫ້ອັດຕາຄ້າງຫ້ອງ ແລະ ປະລະການຮຽນຂອງນັກຮຽນ ໂດຍສະເພາະແມ່ນນັກຮຽນຊັ້ນປະຖົມສຶກສາ ຫຼຸດລົງຢ່າງໜ້ອຍ 2% ຫາ 3% ຕໍ່ປີ ຕາມລຳດັບ.
- ເພີ່ມອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ໃຫ້ໄດ້ 75% ຮອດປີ 2015.
- ເພີ່ມອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນປາຍ ໃຫ້ໄດ້ 75% ໃນປີ 2015.
- ສ້າງເງື່ອນໄຂເພື່ອສູ້ຊົນລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນບັນດາເຜົ່າ ໃນກຸ່ມເປົ້າໝາຍອາຍຸ 15-24 ປີ ໃຫ້ໄດ້ 99% ຮອດປີ 2015.
- ສູ້ຊົນລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນບັນດາເຜົ່າ ໃນກຸ່ມເປົ້າໝາຍອາຍຸ 15 ປີຂຶ້ນໄປໃຫ້ໄດ້ 87% ຮອດປີ 2015.
- ເພີ່ມນັກຮຽນຢູ່ສາຍອາຊີວະສຶກສາ ໃຫ້ໄດ້ຢ່າງໜ້ອຍ 40.000 ຄົນ, ໃນນັ້ນ 50% ເປັນເພດຍິງ ແລະ 30% ມາຈາກຄອບຄົວທຸກຍາກ ແລະ ຫ່າງໄກສອກຫຼີກ.
- ເພີ່ມການເຂົ້າຮຽນຊັ້ນສູງ ແລະ ມະຫາວິທະຍາໄລຂອງນັກສຶກສາ ໃຫ້ບັນລຸ 1.640 ຄົນຕໍ່ ປະຊາກອນ 100.000 ຄົນ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງສຶກສາ ຈະຕ້ອງສຸມໃສ່ຈັດຕັ້ງ ປະຕິບັດ .....ແຜນງານ.....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍ ທີ.....).

**[4]. <u>ມາດຕະການ:</u>**

1). ສະໜອງພື້ນຖານໂຄງລ່າງໃຫ້ການສຶກສາ, ປະກອບວັດຖຸອຸປະກອນ, ເຄື່ອງທົດລອງ, ຂະຫຍາຍ ຫ້ອງທົດລອງ ແລະ ວິທະຍາການໃໝ່ ເຂົ້າໃນການສິດສອນ, ຮ່ຳຮຽນ ແລະ ຄົ້ນຄ້ວາ ເພື່ອເຮັດໃຫ້ນັກຮຽນ-ນັກສຶກສາ ເຫັນປະຈັກຕາ ແລະ ເຂົ້າໃຈງ່າຍ ແລະ ເພື່ອຍົກຄຸນນະພາບຂອງນັກຮຽນ-ນັກສຶກສາສູງຂຶ້ນທຽບ ເທົ່າກັບຂົງເຂດ ແລະ ສາກົນ.

2). ເພີ່ມການລະດົມທຶນ ແລະ ໃຫ້ນະໂຍບາຍຕໍ່ການສຶກສາຫລາຍຂຶ້ນຕື່ມ:

- ເພີ່ມການລົງທຶນໃຫ້ຂະແໜງການສຶກສາໃນ 5 ປີ ຕໍ່ໜ້າ ໃຫ້ໄດ້ 18% ຂອງການລົງທຶນລວມ ໂດຍການຄົ້ນຄວ້າ, ລະດົມແຫຼ່ງທຶນຈາກພາກສ່ວນຕ່າງໆ.
- ເອົາໃຈໃສ່ການຮ່ວມມື ແລະ ສະແຫວງຫາການຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງ ສາກົນຕ່າງໆ ນັບທັງບົດຮຽນ ແລະ ທຶນຮອນ.
- ຂະຫຍາຍການສຶກສາໄປສູ່ເຂດຫ່າງໄກສອກຫຼີກ, ເພື່ອສ້າງເງື່ອນໄຂໃຫ້ລູກຫຼານຜູ້ດ້ອຍໂອກາດ ໂດຍສະເພາະແມ່ນ ຜູ້ທີ່ທຸກຍາກຂາດເຂີນ, ເພດຍິງ, ຊົນເຜົ່າສ່ວນໜ້ອຍ ແລະ ຄົນພິການ ໄດ້ຮັບການສຶກສາ ຮ່ຳຮຽນ.
- ມີນະໂຍບາຍສົ່ງເສີມຜູ້ມີພອນສະຫວັນພິເສດ ເພື່ອສ້າງເຂົ້າເຈົ້າເປັນນັກວິທະຍາສາດ ແລະ ເປັນ ນັກບໍລິຫານທີ່ມີຄວາມສາມາດສູງ.
- ສືບຕໍ່ປະຕິບັດນະໂຍບາຍເສຍຄ່າ ແລະ ບໍ່ເສຍຄ່າໃນຂະແໜງການສຶກສາທຸກລະດັບ, ທຸກຂັ້ນ ແລະ ຫລຸດຜ່ອນການເສຍຄ່າໃນຂັ້ນສຶກສາອານຸບານ, ຊັ້ນປະຖົມ ໂດຍລັດເພີ່ມງົບປະມານໃຫ້ຊັ້ນຮຽນດັ່ງກ່າວ.

3). ບຳລຸງຖັນແຖວຄູ, ອາຈານ, ນັກວິທະຍາສາດໃຫ້ມີປະລິມານພຽງພໍ ແລະ ມີຄຸນນະພາບນັບມື້ ສູງຂຶ້ນ, ດ້ວຍການສົ່ງເສີມໃຫ້ນາມມະຍົດຄູສອນດີ, ສອນເກັ່ງໃນທຸກລະດັບ, ນາມມະຍົດ, ວຸດທິການສຶກສາ ໃຫ້ຄູສອນມະຫາວິທະຍາໄລຕ່າງໆ, ພິຈາລະນາຄ່າແຮງງານດ້ານມັນສະໝອງໃຫ້ເປັນທຳ, ຈູງໃຈຕໍ່ຖັນແຖວ ນັກວິທະຍາ ສາດ.

4). ສົ່ງເສີມໃຫ້ທົ່ວສັງຄົມ ເຂົ້າຮ່ວມໃນວຽກງານການສຶກສານັບມື້ນັບມື້ກ້ວາງຂວາງ, ສ້າງເງື່ອນໄຂ ແລະ ຊຸກຍູ້ໃຫ້ພາກສ່ວນເອກະຊົນ, ພໍ່ແມ່ນັກຮຽນ ແລະ ບຸກຄົນທີ່ມີສ່ວນຮ່ວມໃນການພັດທະນາການສຶກສານັບມື້ນັບຫຼາຍຂຶ້ນກ່ວາເກົ່າ; ຂະຫຍາຍໂຮງຮຽນເອກະຊົນ ແລະ ຖືໂຮງຮຽນດັ່ງກ່າວເປັນພາກສ່ວນໜຶ່ງທີ່ສຳຄັນ ຂອງລະບົບການສຶກສາແຫ່ງຊາດ.

## 2.2.2. ສາທາລະນະສຸກ ແລະ ໂພຊະນາການ

### 1. ການພັດທະນາດ້ານສາທາລະນະສຸກ:

#### [1]. ທິດທາງ:

ເສີມສ້າງຄວາມເຂັ້ມແຂງທາງດ້ານຮ່າງກາຍ ຄຽງຄູ່ກັບການສ້າງຄົນໃຫ້ມີສະຕິປັນຍາ, ມີຄວາມຮູ້ ແລະ ມີຄຸນສົມບັດສິນທຳປະຕິວັດ; ສ້າງເງື່ອນໄຂໃຫ້ປະຊາຊົນໄດ້ເຂົ້າເຖິງ ແລະ ໄດ້ຮັບການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງທົ່ວເຖິງ ແລະ ມີຄວາມສະເໝີພາບ; ພັດທະນາວຽກງານສາທາລະນະສຸກ ໃຫ້ສົມສ່ວນລະຫວ່າງ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ເພື່ອປັບປຸງຊີວິດການເປັນຢູ່ຂອງ ປະຊາຊົນໃຫ້ນັບມື້ນັບດີຂຶ້ນ, ບັນລຸໃຫ້ໄດ້ບັນດາຄາດໝາຍທີ່ກຳນົດໄວ້ໃນເປົ້າໝາຍສະຫັດສະຫວັດດ້ານການ ພັດທະນາ ໃນປີ 2015.

#### [2]. ຄາດໝາຍຕົ້ນຕໍ:

ຂະຫຍາຍການບໍລິການສຸຂະພາບໃຫ້ປະຊາຊົນບັນດາເຜົ່າ ໂດຍສະເພາະແມ່ນ ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ, ປັບປຸງຄຸນນະພາບການບໍລິການຢູ່ໂຮງໝໍສູນກາງ ແລະ ໂຮງໝໍແຂວງ ທີ່ມີເງື່ອນໄຂໃຫ້ກາຍເປັນໂຮງໝໍພາກ ໂດຍການປັບປຸງຄຸນະພາບຂອງເຄື່ອງມືຮັບໃຊ້ໃຫ້ແກ່ວຽກງານອະນາໄມ ແລະ ສົ່ງເສີມ ສຸຂະພາບ, ຍົກສູງຄຸນນະພາບໃນການຄວບຄຸມ ແລະ ສະກັດກັ້ນໂລກລະບາດຕ່າງໆ. ຄາດໝາຍ ຮອດປີ 2015 ມີດັ່ງນີ້:

**1). ສຸຂະພາບແມ່ ແລະ ເດັກ:**

- ຫຼຸດອັດຕາການຕາຍຂອງແມ່ ໃຫ້ຍັງເຫຼືອ 260 ຕໍ່ເດັກເກີດມີຊີວິດ 100.000 ຄົນ;
- ຫຼຸດອັດຕາການຕາຍຂອງເດັກນ້ອຍຕໍ່ກວ່າ 1 ປີ ໃຫ້ຍັງເຫຼືອ 45 ຕໍ່ເດັກເກີດມີຊີວິດ 1.000 ຄົນ;
- ຫຼຸດອັດຕາການຕາຍຂອງເດັກນ້ອຍຕໍ່ກວ່າ 5 ປີ ໃຫ້ຍັງເຫຼືອ 70 ຕໍ່ເດັກເກີດມີຊີວິດ 1.000 ຄົນ;
- ເພີ່ມອັດຕາການສັກຢາກັນໝາກແດງໃນເດັກນ້ອຍ 1 ປີ ໃຫ້ໄດ້ 90% ຂອງເດັກນ້ອຍກຸ່ມເປົ້າໝາຍ
- ຫຼຸດອັດຕາສ່ວນເດັກນ້ອຍ ລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ໃຫ້ໄດ້ 20%;
- ຫຼຸດອັດຕາສ່ວນເດັກນ້ອຍ ລຸ່ມ 5 ປີ ທີ່ເຕ້ຍ ໃຫ້ໄດ້ 34%;
- ເພີ່ມອັດຕາການເກີດໂດຍມີແພດຊ່ວຍໃຫ້ໄດ້ 50% ຂອງແມ່ຍິງຖືພາ.
- ເພີ່ມອັດຕາຄຸມກຳເນີດ ໃຫ້ໄດ້ 55%.

- ເພີ່ມອັດຕາກວດທ້ອງກ່ອນກຳເນີດ ໃຫ້ໄດ້ 69%.

**2). ນ້ຳສະອາດ ແລະ ສຸຂະອານາໄມ:**

- ເພີ່ມອັດຕາສ່ວນປະຊາກອນລວມຊົມໃຊ້ນ້ຳສະອາດ ໃຫ້ໄດ້ 80% ຂອງຈຳນວນປະຊາກອນທັງໝົດ
- ເພີ່ມອັດຕາສ່ວນປະຊາກອນໃນເຂດຊົນນະບົດຊົມໃຊ້ນ້ຳສະອາດໃຫ້ໄດ້ 80% ຂອງຈຳນວນປະຊາກອນທັງໝົດ.
- ເພີ່ມອັດຕາສ່ວນປະຊາກອນຊົມໃຊ້ວິດຖ່າຍ ໃຫ້ໄດ້ 60% ຂອງຈຳນວນປະຊາກອນທັງໝົດ.

**3). ສະກັດກັ້ນການແຜ່ລາມຂອງພະຍາດເອດ, ໄຂ້ຍຸງ ແລະ ພະຍາດຕິດຕໍ່ອື່ນໆ:**

- ຫລຸດອັດຕາສ່ວນການຕິດເຊື້ອໄວລັດ HIV ໃນປະຊາກອນທົ່ວໄປ ໃຫ້ຢູ່ໃນລະດັບຕ່ຳກວ່າ 1%.
- ຫລຸດອັດຕາສ່ວນການຕິດເຊື້ອໄວລັດ HIV ໃນກຸ່ມສ່ຽງ ອາຍຸ 15-24 ປີ ໃຫ້ຢູ່ໃນລະດັບຕ່ຳກວ່າ 5%.
- ຫລຸດອັດຕາສ່ວນການຕິດເຊື້ອໄວລັດ HIV ໃນກຸ່ມສາວບໍລິການ ອາຍຸ 15-49 ປີ ໃຫ້ຢູ່ໃນລະດັບຕ່ຳກວ່າ 5%.
- ຫລຸດອັດຕາການຕາຍ ຍ້ອນໄຂ້ຍຸ້ງ 0,2 ຕໍ່ປະຊາກອນ 100.000 ຄົນ.
- ເພີ່ມອັດຕາສ່ວນເດັກນ້ອຍນອນໃນມຸ້ງ ໃຫ້ໄດ້ 95% ຂອງເດັກນ້ອຍເປົ້າໝາຍ.
- ຫລຸດອັດຕາການເປັນວັນນະໂລກ ແມ່ນ 240 ຕໍ່ປະຊາກອນ 100.000 ຄົນ.
- ອັດຕາຄົນເປັນວັນນະໂລກທີ່ກວດພົບ ແລະ ໄດ້ຮັບການປິ່ນປົວໂດຍມີແພດຕິດຕາມໂດຍກົງ (DOTS) 70%.
- ເພີ່ມອັດຕາຄົນເປັນວັນນະໂລກທີ່ໄດ້ຮັບການປິ່ນປົວໂດຍມີແພດຕິດຕາມໂດຍກົງ 85%.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງສາທາລະນະສຸກ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍ ທີ.....).

**[4]. <u>ມາດຕະການ:</u>**

1). ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທັນສະໄໝ ເຂົ້າໃນການບໍລິການສາທາລະນະສຸກ.

2). ນຳໃຊ້ແຫລ່ງທຶນ ແລະ ນະໂຍບາຍ:

- ສືບຕໍ່ສ້າງໜ່ວຍກົດ ປິ່ນປົວພະຍາດເຄື່ອນທີ່ ເພື່ອລົງຊ່ວຍທ້ອງຖິ່ນທີ່ຍັງທຸກຍາກໃຫ້ໄດ້ແຕ່ລະບ້ານ ໂດຍສະເພາະແມ່ນ ເຂດທີ່ມີຄວາມສ່ຽງສູງຕໍ່ການເຈັບເປັນ, ການຕາຍຂອງແມ່ ແລະ ເດັກ ປະມານ 4 ເທື່ອຕໍ່ປີ.
- ສຸມການລົງທຶນໃສ່ວຽກງານປ້ອງກັນ ແລະ ຮັກສາສຸຂະພາບຂັ້ນພື້ນຖານ ແລະ ສືບຕໍ່ກໍ່ສ້າງສຸກສາລາຢູ່ທ້ອງຖິ່ນທີ່ບໍ່ທັນມີ, ປັບປຸງສຸກສາລາທີ່ມີແລ້ວມີມາດຕະຖານສູງຂຶ້ນສາມາດໃຫ້ ການບໍລິການ ແລະ ປິ່ນປົວສຸຂະພາບແກ່ປະຊາຊົນໄດ້ຢ່າງທັນການ.

3). ການສ້າງບຸກຄະລາກອນ, ຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ:

- ຍົກສູງຄຸນນະພາບຂອງຄວາມສາມາດປ້ອງກັນພະຍາດ ແລະ ປິ່ນປົວຂອງໂຮງໝໍຂັ້ນຕ່າງໆ; ສືບຕໍ່ກໍ່ສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານແພດພະດຸງຄັນ ໂດຍສະເພາະແມ່ນເພດຍິງ, ພະນັກງານແພດໃນການຊ່ວຍເກີດລູກໃຫ້ທົ່ວເຖິງໃນແຕ່ລະທ້ອງຖິ່ນ.
- ສະໜອງ ແລະ ຍົກລະດັບພະນັກງານແພດທີ່ປະຈຳຢູ່ສຸກສາລາ ໃຫ້ມີແພດຊັ້ນກາງ ແລະ ຊັ້ນສູງ, ສ່ວນໂຮງໝໍເມືອງ ຮັບປະກັນໃຫ້ມີທ່ານໝໍຢ່າງໜ້ອຍ 4 ຄົນ ເພື່ອບັນຈຸເຂົ້າຂະແໜງແມ່ ແລະ ເດັກ ແລະ ປິ່ນປົວພາຍໃນ; ເພີ່ມການລົງຮາກຖານຂອງພະນັກງານທີ່ມີຄວາມຊຳນິຊຳນານງານ ຢູ່ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.
- ປຸກລະດົມທຸກພາກສ່ວນ ໃຫ້ເຂົ້າຮ່ວມປະກັນສຸຂະພາບ ຢ່າງກວ້າງຂວາງ ເພື່ອຮັບປະກັນໃຫ້ແກ່ການປິ່ນປົວສຸຂະພາບ ແລະ ສ້າງຄວາມເຂັ້ມແຂງ ດ້ານການເງິນສາທາລະນະສຸກ.
- ໂຄສະນາເຜີຍແຜ່ການຮັກສາສຸຂະພາບໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈ ເພື່ອໃຫ້ເຂົາເຈົ້າສາມາດປົກປ້ອງ ແລະ ສົ່ງເສີມສຸຂະພາບຂອງຕົນເອງ.

4). ດ້ານການຄຸ້ມຄອງ, ນິຕິກຳ ແລະ ນະໂຍບາຍ:

- ຊຸກຍູ້ການເຄື່ອນໄຫວ ດ້ານສາທາລະນະສຸກໃຫ້ກາຍເປັນຂອງທົ່ວສັງຄົມ, ສ້າງສະພາບແວດລ້ອມເພື່ອໃຫ້ເອກະຊົນເຂົ້າມາມີສ່ວນຮ່ວມໃນການສະໜອງການບໍລິການ ດ້ານສາທາໃຫ້ກ້ວາງຂວາງ.

### 3. ການພັດທະນາວຽກງານໂພຊະນາການ:

#### [1]. ທິດທາງ:

ເຮັດໃຫ້ປະຊາຊົນລາວທຸກທົ່ວໜ້າມີໂພຊະນາການທີ່ດີ ແລະ ສາມາດຄ້ຳປະກັນສະບຽງອາຫານຢ່າງພຽງພໍ ປະກອບສ່ວນໃນການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ.

– ສຸມໃສ່ແກ້ໄຂບັນຫາການຂາດສານອາຫານ ໂດຍສະເພາະແມ່ນ ກຸ່ມຜູ້ດ້ອຍໂອກາດ, ແມ່ຍິງໃນ ໄວຈະເລີນພັນ ໂດຍເນັ້ນໃສ່ແມ່ຍິງຖືພາ, ແມ່ຍິງຫຼັງເກີດລູກ ແລະ ລ້ຽງລູກດ້ວຍນົມແມ່, ເດັກອ່ອນລຸ່ມ 2 ປີ, ເດັກນ້ອຍອາຍຸຕ່ຳກວ່າ 5 ປີ ແລະ ເດັກໃນເກນເຂົ້າຮຽນ.

– ປັບປຸງທັດສະນະຄະຕິໃນການບໍລິໂພກອາຫານ ໃຫ້ຖືກຕ້ອງ, ປ້ອງກັນ ແລະ ຫຼຸດຜ່ອນການເກີດພະຍາດຈາກອາຫານ ແລະ ພາຫະນະນຳເຊື້ອ, ເອົາໃຈໃສ່ການເຂົ້າເຖິງ ແລະ ການມີສະບຽງອາຫານ ຢ່າງພຽງພໍ.

– ໃຫ້ການສຶກສາດ້ານໂພຊະນາການ ແລະ ສຸຂະພາບ, ປັບປຸງວຽກງານອະນາໄມສິ່ງແວດລ້ອມ; ສຸມໃສ່ສ້າງຄວາມເຂັ້ມແຂງໃນການປະສານງານ ລະຫວ່າງຂະແໜງການດ້ວຍກັນ ແລະ ລະຫວ່າງຂະແໜງການ ແລະ ທ້ອງຖິ່ນໃຫ້ມີປະສິດທິພາບສູງ ເພື່ອເຊື່ອມສານວຽກງານໂພຊະນາການເຂົ້າໃນແຜນພັດທະນາຂອງຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເປັນແຕ່ລະໄລຍະ.

#### [2]. ຄາດໝາຍຕົ້ນຕໍ:

- ຫຼຸດອັດຕາສ່ວນການຂາດສານອາຫານຊຳເຮື້ອ ຂອງເດັກຕ່ຳກວ່າ 5 ປີ ໃຫ້ຢູ່ໃນລະດັບ 34%.
- ຫຼຸດອັດຕາສ່ວນການຂາດສານອາຫານກະທັນຫັນຂອງເດັກຕ່ຳກວ່າ 5 ປີ ໃຫ້ຢູ່ໃນລະດັບ 4%.
- ຫຼຸດອັດຕາການເປັນເລືອດຈາງໃນເດັກອາຍຸຕ່ຳກວ່າ 5 ປີ ໃຫ້ຢູ່ໃນລະດັບ 30%.
- ຫຼຸດອັດຕາການເປັນເລືອດຈາງໃນແມ່ຍິງໄວຈະເລີນພັນໃຫ້ຢູ່ໃນລະດັບ 30%.

- ຫຼຸດອັດຕາການຂາດທາດໄອໂອດີນຂອງເດັກໃນຊັ້ນປະຖົມໃຫ້ຢູ່ໃນລະດັບ 17%.
- ຫຼຸດອັດຕາການຂາດທາດໄອໂອດີນໃນແມ່ຍິງໄວຈະເລີນພັນໃຫ້ຢູ່ໃນລະດັບ 9%.
- ຫຼຸດອັດຕາການຂາດວິຕາມິນອາຂອງເດັກອາຍຸຕ່ຳກວ່າ 5 ປີ ໃຫ້ຢູ່ໃນລະດັບ 30%.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ດ້ານໂພຊະນາການ ຈະຕ້ອງສຸມໃສ່ຈັດຕັ້ງ ປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍ ທີ.....).

**[4]. <u>ມາດຕະການ:</u>**

1). ສະໜອງພື້ນຖານໂຄງລ່າງ ແລະ ປະກອບອຸປະກອນທີ່ໄດ້ມາດຕະຖານໃຫ້ຂະແໜງສາທາລະ ນະ ສຸກ, ປັບປຸງໂຮງໝໍຕ່າງໆໃຫ້ມີເງື່ອນໄຂດີຂຶ້ນກວ່າເກົ່າເພື່ອຮອງຮັບການປິ່ນປົວພະຍາບານຄົນເຈັບ.

2). ຊຸກຍູ້ຄົ້ນຄວ້າວິທະຍາສາດດ້ານການແພດ, ເພີ່ມຄວາມສາມາດດ້ານການຢາ ແລະ ຄວາມປອດ ໄພຂອງສະບຽງອາຫານ.

3). ເພີ່ມການລົງທຶນເຂົ້າໃຫ້ຂະແໜງສາທາລະນະສຸກເປັນຕົ້ນໃນຂົງເຂດວຽກງານໂພຊະນາການ ໂດຍ ສະເລ່ຍຜູ້ໜຶ່ງບໍ່ຫລຸດ 160 ໂດລາ/ຄົນ/ປີ ແລະ ລະດົມພາກເອກະຊົນລົງທຶນ ໃສ່ຂະແໜງສາທາລະນະສຸກ ຕາມກົດໝາຍສົ່ງເສີມການລົງທຶນ.

4). ເພີ່ມທະວີການໂຄສະນາປະຊາສຳພັນຕໍ່ຫຼັກການອະນາໄມ 3 ສະອາດ, ການປ້ອງກັນ ແລະ ຕ້ານ ພະຍາດລະບາດຕ່າງໆໃຫ້ປະຊາຊົນຢ່າງກວ້າງຂວາງ, ເລິກເຊິ່ງ ແລະ ນຳໄປປະຕິບັດໃນການດຳລົງ ຊີວິດ ປະຈຳວັນຂອງເຂົາເຈົ້າ.

5). ປະຕິບັດນະໂຍບາຍປະກັນສຸຂະພາບລະດົມການປະກອບທຶນພະນັກງານ-ລັດຖະກອນ, ປະຊາ ຊົນ. ສືບຕໍ່ຮັກສາການປິ່ນປົວເສຍຄ່າ ແລະ ບໍ່ເສຍຄ່າ (ຜູ້ທຸກຍາກບໍ່ເສຍຄ່າການປິ່ນປົວຂັ້ນຕົ້ນ).

## 2.2.3. ແຮງງານ ແລະ ສະຫວັດດີການສັງຄົມ

**[1]. <u>ທິດທາງ:</u>**

ພັດທະນາ ແລະ ສ້າງກຳລັງແຮງງານລາວ ໃຫ້ມີສີມືດີ, ມີຄວາມຮູ້, ຄວາມສາມາດ, ມີຄວາມຊຳ ນານງານ, ມີທັດສະນະຄະຕິ ແລະ ລະບຽບວິໄນ, ມີວຽກເຮັດງານທຳທີ່ເໝາະສົມ. ເຮັດໃຫ້ຜູ້ອອກແຮງງານໄດ້ ຮັບການປົກປ້ອງຄຸ້ມຄອງ ແລະ ໄດ້ຮັບສະຫວັດດີການ ທີ່ດີກວ່າເກົ່າ. ສ້າງເງື່ອນໄຂໃຫ້ຜູ້ດ້ອຍໂອກາດ ແລະ ຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆໄດ້ຮັບການດູແລຊ່ວຍເຫຼືອຢ່າງທັນສະພາບການ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

1). ການພັດທະນາແຮງງານ:

- ສ້າງກຳລັງແຮງງານໃຫ້ໄດ້ທ້ຽງປະລິມານ ແລະ ຮັບປະກັນຄວາມຮູ້, ຄວາມສາມາດ ແລະ ມີສີມືໃຫ້ ຫຍັບເຂົ້າໃກ້ກັບມາດຖານຂອງພາກພື້ນເທື່ອລະກ້າວ, ມີຄວາມຊຳນານງານປະດິດສ້າງ ແລະ ມີຄວາມກະຕືລື

ລົ້ນໃນການພັດທະນາຕົນເອງ, ສ້າງໄດ້ພື້ນຖານການພັດທະນາວຽກງານແຮງງານໃຫ້ມີການຫັນປ່ຽນໃໝ່ທີ່ກ້າວກະໂດດທັງປະລິມານ ແລະ ຄຸນນະພາບ.

- ສ້າງ ແລະ ພັດທະນາສີມືແຮງງານໃນສາຂາວິຊາຊີບຕ່າງໆໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແລະ ນັບມື້ຫຍັບເຂົ້າໃກ້ມາດຖານອາຊຽນ.
- ຮັບປະກັນລະບົບການບໍລິການຈັດຫາງານ ແລະ ສ້າງໂອກາດໃນການມີວຽກເຮັດງານທຳ, ມີລາຍໄດ້, ມີຄວາມປອດໄພ ທັງໄດ້ຮັບການປົກປ້ອງສິດ-ຜົນປະໂຫຍດອັນຊອບທຳຕາມລະບຽບກົດໝາຍ.
- ສຶກສາອົບຮົມຜູ້ອອກແຮງງານໃຫ້ມີສະຕິຊາດ, ເຄົາລົບລະບຽບກົດໝາຍ, ຮູ້ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ຕິດພັນກັບຜົນປະໂຫຍດລວມໝູ່ ແລະ ປະເທດຊາດ, ເພີ່ມທະວີການຄຸ້ມຄອງແຮງງານລາວທີ່ເຮັດວຽກຢູ່ພາຍໃນປະເທດ ແລະ ຕ່າງປະເທດ ລວມທັງແຮງງານຕ່າງປະເທດທີ່ເຮັດວຽກຢູ່ລາວ ໃຫ້ທົ່ວເຖິງ.

ຄາດໝາຍລະອຽດ ມີດັ່ງນີ້:

– ສູ້ຊົນສ້າງແຮງງານໃຫ້ໄດ້ ປະມານ 3,26 ລ້ານຄົນ ເພື່ອພັດທະນາ ແລະ ສະໜອງແຮງງານຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ; ໃນນັ້ນ, ຂົງເຂດກະສິກຳ ປະມານ 2,29 ລ້ານຄົນ, ຂົງເຂດອຸດສາຫະກຳປຸງແຕ່ງ ແລະ ກໍ່ສ້າງ ປະມານ 226 ພັນຄົນ, ຂົງເຂດການບໍລິການປະມານ 739 ພັນຄົນ.

– ໃນປີ 2015 ເຮັດໃຫ້ສັດສ່ວນຂອງແຮງງານໃນຂະແໜງກະສິກຳ-ປ່າໄມ້ ຫຼຸດລົງມາເປັນ 70%; ເພີ່ມອັດສ່ວນແຮງງານໃນຂະແໜງອຸດສາຫະກຳ, ກໍ່ສ້າງ ແລະ ພະລັງງານບໍ່ແຮ່ ຂຶ້ນເປັນ 7%; ເພີ່ມສັດສ່ວນແຮງງານໃນຂົງເຂດການບໍລິການ ຂຶ້ນເປັນ 23% ຂອງແຮງງານລວມ.

– ຄວບຄຸມອັດຕາຫວ່າງງານສະເລ່ຍໃຫ້ຢູ່ໃນລະດັບບໍ່ເກີນ 2%.

– ສ້າງມາດຖານສີມືແຮງງານ ແລະ ເຮັດການທົດສອບມາດຖານສີມືແຮງງານ ທີ່ມີທັດສະນະຄະຕິອຸດສາຫະກຳໃຫ້ໄດ້ 20 ວິຊາຊີບ; ໃນນັ້ນ: ຂະແໜງກໍ່ສ້າງ 10 ວິຊາຊີບ, ຂະແໜງບໍລິການ 10 ວິຊາຊີບ.

– ສ້າງສູນພັດທະນາສີມືແຮງງານຂັ້ນແຂວງໃຫ້ໄດ້ 7 ສູນ.

– ສ້າງສະຖາບັນພັດທະນາສີມືແຮງງານໃຫ້ໄດ້ 1 ແຫ່ງ.

– ສ້າງສູນບໍລິການຈັດຫາງານ ແລະ ຂໍ້ມູນຂ່າວສານ ໃຫ້ໄດ້ 3 ແຫ່ງ ແລະ ຈຸດທົດລອງຈັດຫາງານໃຫ້ໄດ້ 10 ແຂວງ.

– ໂຄສະນາເຜີຍແຜ່ກົດໝາຍຕາມຫົວໜ່ວຍແຮງງນຕ່າງໆໃຫ້ໄດ້ 100 ແຫ່ງ.

2). ການພັດທະນາສະຫວັດດີການສັງຄົມ:

- ພັດທະນາລະບົບປະກັນສັງຄົມຕ່າງໆທີ່ມີຢູ່ໃຫ້ກາຍເປັນລະບົບປະກັນສັງຄົມແຫ່ງຊາດທີ່ເຂັ້ມແຂງ.
- ພັດທະນາລະບົບບໍລິການສັງຄົມສົງເຄາະໃຫ້ແກ່ເດັກນ້ອຍ, ຜູ້ດ້ອຍໂອກາດ ແລະ ຜູ້ປະສົບໄພພິບັດຕ່າງໆ ລວມທັງສ້າງເງື່ອນໄຂເພື່ອປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ.
- ປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ ຢ່າງເໝາະສົມ ແລະ ທົ່ວເຖິງ.

ຄາດໝາຍລະອຽດ ມີດັ່ງນີ້:

– ກວດກາການປະຕິບັດຄວາມປອດໄພໃນການອອກແຮງງານ, ການປົກປ້ອງສິດຜົນປະໂຫຍດ ແລະ ສະຫວັດດີການຕ່າງໆຂອງຜູ້ອອກແຮງງານຕາມຫົວໜ່ວຍທຸລະກິດ ແລະ ໂຄງການໃຫ້ໄດ້ 3.500 ແຫ່ງ.

– ຂະຫຍາຍລະບົບກັນສັງຄົມທີ່ມີຢູ່ລົງສູ່ບັນດາແຂວງໃນຂອບເຂດທົ່ວປະເທດ ເຮັດໃຫ້ປະຊາຊົນໄດ້ຮັບການປະກັນສຸຂະພາບກວມ 50% ຂອງພົນລະເມືອງທັງໝົດ.

– ປະຕິບັດນະໂຍບາຍຕໍ່ຜູ້ມີຄວາມງາມຄວາມດີຕໍ່ປະເທດຊາດ ໃຫ້ໄດ້ 51.337 ທ່ານ (ພະນັກງານ ປະຕິວັດກ່ອນປີ 1954 ຄືນຫຼັງ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ) ປຸກເຮືອນໃຫ້ພະນັກງານເສຍອົງຄະພິເສດໃຫ້ສຳເລັດ 100%. ພັດທະນາຄຸນນະພາບຊີວິດການເປັນຢູ່ ຂອງຜູ້ອາຍຸສູງ, ຜູ້ທຸກຍາກ ແລະ ປ່ຽວພອຍ ຢູ່ 6 ແຂວງ.

3). ການແກ້ໄຂບັນຫາລະເບີດບໍ່ທັນແຕກ:

- ເຮັດໃຫ້ປະຊາຊົນໃນຊຸມຊົນສາມາດດຳລົງຊີວິດ ໂດຍປັດສະຈາກໄພຂົ່ມຂູ່ຈາກລະເບີດບໍ່ທັນແຕກ, ເຮັດໃຫ້ປະຊາຊົນສາມາດທຳມາຫາກິນຢ່າງປອດໄພ ແລະ ກ້າວໄປສູ່ການຫຼຸດຜ່ອນຄວາມທຸກຍາກ.
- ສຸມໃສ່ສຳຫຼວດຂໍ້ມູນລະເບີດຕົກຄ້າງຢູ່ຕາມໜ້າດິນໃນເຂດບ້ານທີ່ມີຄວາມສ່ຽງສູງ, ຕັ້ງສູນຮັບຟັງ ການລາຍງານຈາກປະຊາຊົນໃຫ້ກະຈາຍຫຼາຍຂຶ້ນ; ຝຶກອົບຮົມ ແລະ ຍົກລະດັບວິຊາການດ້ານວຽກງານເກັບກູ້ ລະເບີດໃຫ້ພະນັກງານທີ່ເຮັດວຽກດ້ານນີ້ໃຫ້ມີຄວາມຊຳນານ ແລະ ເຂົ້າໃຈກຳມະວິທີ ຕ່າງໆທີ່ຖືກຕ້ອງ.
- ເກັບກູ້ລູກລະເບີດບໍ່ທັນແຕກອອກຈາກເນື້ອທີ່ດິນທຳການຜະລິດ 11.875 ເຮັກຕາ, ດິນທີ່ເອື້ອອຳ ນວຍ ໃຫ້ແກ່ການພັດທະນາ ແລະ ການປຸກສ້າງຕ່າງໆ 625 ເຮັກຕາ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງແຮງງານ ແລະ ສະຫວັດດີການ ສັງຄົມ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍ ລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

1). ປຸກລະດົມແຫລ່ງທຶນຈາກຫລາຍພາກສ່ວນລວມທັງພາກລັດ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງກອງທຶນໃນການພັດທະນາສີມືແຮງງານ ແລະ ສ້າງມີວຽກເຮັດງານທຳຕາມກົດໝາຍ ແຮງງານ ໄດ້ກຳນົດໄວ້ ທັງເປັນການສ້າງເງື່ອນໄຂໃນການປະກອບອາຊີບດ້ວຍຕົນເອງຫລາຍຂຶ້ນ.

2). ເປີດກ້ວາງການຮ່ວມມືກັບທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດເພື່ອສ້າງເງື່ອນ ໄຂການມີວຽກເຮັດງານທຳ ແລະ ສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດ.

3). ການພັດທະນາສີມືແຮງງານ: ຊຸກຍູ້ສົ່ງເສີມໃຫ້ນັກທຸລະກິດພາຍໃນ ແລະ ຕ່າງປະເທດ ປະກອບ ສ່ວນພັດທະນາສີມືແຮງງານ ແລະ ເຝິກອົບຮົມວິຊາຊີບໃຫ້ກຳລັງແຮງງານລາວຢ່າງກວ້າງຂວາງ.

4). ການເຜີຍແຜ່, ນິຕິກຳ ແລະ ນະໂຍບາຍຕ່າງໆ: ປະສານສົບທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ ຄົ້ນຄວ້າສ້າງແຜນຍຸດທະສາດແຮງງານ ແລະ ສະຫວັດດີການສັງຄົມ, ປັບປຸງນິຕິກຳ ແລະ ລະບຽບ ຫລັກການ ຕ່າງໆທີ່ກ່ຽວຂ້ອງກັບການພັດທະນາແຮງງານ ແລະ ສະຫວັດດີການສັງຄົມ, ພ້ອມທັງເຜີຍແຜ່, ແນະນຳ ການຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດແຮງງານ ແລະ ສະຫວັດດີການ-ສັງຄົມໃຫ້ມີປະສິດທິຜົນ.

## 2.2.4. ຖະແຫຼ່ງຂ່າວ ແລະ ວັດທະນະທຳ

**[1]. <u>ທິດທາງ:</u>**

ຮັບປະກັນໃຫ້ວັດທະນະທຳເປັນພື້ນຖານຄວາມຍືນຍົງຂອງຊາດ, ເສີມສ້າງອະລິຍະທຳທາງຈິດໃຈ, ປູກແນວຄິດ ແລະ ຄຸນສົມບັດສິນທຳປະຕິວັດ; ສ້າງຄົນທີ່ມີຊີວະທັດ ແລະ ໂລກະທັດກ້າວໜ້າ, ຮູ້ຮັບເອົາສິ່ງທີ່ມີຄຸນຄ່າຈາກວັດທະນະທຳຂອງນາໆຊາດ. ສົ່ງເສີມການຜະລິດຄິດແຕ່ງ, ການອ່ານ, ການຂຽນ ແລະ ການສະແດງ ເພື່ອປະກອບສ່ວນພັດທະນາຄົນໃຫ້ມີຄວາມສີວິໄລທາງດ້ານຈິດໃຈ ໄປຄຽງຄູ່ກັບ ການຂະຫຍາຍຕົວຂອງໂລກໂລກາພິວັດບົນພື້ນຖານອະນຸລັກຮັກສາ ແລະ ສືບທອດ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ.

ພັດທະນາວຽກງານຖະແຫລ່ງຂ່າວ ແລະ ສື່ມວນຊົນໃຫ້ສາມາດປະຕິບັດໜ້າທີ່ເປັນກະບອກສຽງໂຄສະນາວຽກງານການເມືອງແນວຄິດ, ເຜີຍແຜ່ແນວທາງຂອງພັກ ແລະ ລະບຽບກົດໝາຍຂອງລັດ ຢ່າງ ມີປະສິດທິຜົນສູງ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

1. ດ້ານວັດທະນະທຳ:

- ສືບຕໍ່ສ້າງພື້ນຖານໃຫ້ວຽກງານວັດທະນະທຳ ໄດ້ຮັບການປັບປຸງ ແລະ ພັດທະນາຢ່າງຕໍ່ເນື່ອງ.
- ສືບຕໍ່ເສີມຂະຫຍາຍອີດຄອງປະເພນີ, ວັດທະນະທຳອັນດີງາມໃຫ້ມີຄວາມຫລາກຫລາຍ ແລະ ມີລັກສະນະຊາດ, ລັກສະນະມະຫາຊົນ, ສ້າງໃຫ້ຄົນລາວແຕ່ລະຄົນມີອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈສົມບູນຂຶ້ນຢ່າງບໍ່ຢຸດຢັ້ງ.
- ຊຸກຍູ້ຂະບວນການສ້າງຄອບຄົວ-ບ້ານວັດທະນະທຳ ຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ປັບປຸງ ແລະ ຂະຫຍາຍພື້ນຖານວັດຖຸເຕັກນິກ ແລະ ສະຖານທີ່ວັດທະນະທຳທາງປະຫວັດສາດ, ຮ່ອງຮອຍການປະຕິວັດ, ສິລະປະວັນນະຄະດີພື້ນເມືອງຂອງບັນດາເຜົ່າ.
- ສືບຕໍ່ສຳຫລວດຂຸດຄົ້ນຄຸນຄ່າທາງວັດທະນະທຳ ແລະ ອະລິຍະທຳອັນໂດດເດັ່ນຂອງບັນດາເຜົ່າໃຫ້ມີຄວາມຍືນຍົງ, ສະກັດກັ້ນບັນດາກຸ່ມສວຍໃຊ້ວັດທະນະທຳ ເພື່ອຫວັງມ້າງເພທຳລາຍກ້ອນກຳລັງຄວາມສາມັກຄີຂອງປະຊາຊົນລາວ.
- ເສີມຂະຫຍາຍຄຸນຄ່າຂອງຜູ້ນຳປະຕິວັດ, ປັບປຸງຫໍພິພິທະພັນຕ່າງໆ ລວມທັງອະນຸສອນສະຖານປະທານໄກສອນພົມວິຫານ, ອະນຸສອນສະຖານປະທານ ສຸພານຸວົງ ແລະ ອະນຸສອນສະຖານທີ່ສຳຄັນອື່ນໆ ເພື່ອອຳນວຍຄວາມສະດວກໃນການບໍລິການແຂກທີ່ເຂົ້າມາຫ່ຽວຊົມ ໃຫ້ນັບມື້ຫຼາຍຂຶ້ນ.
- ສືບຕໍ່ໂຄສະນາເຜີຍແຜ່ຄຸນງາມຄວາມດີ, ຜົນງານອັນໃຫຍ່ຫຼວງຂອງປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ, ບັນດາຜູ້ນຳພັກ-ລັດ ອື່ນໆ ຕໍ່ພາຍໃນ ແລະ ຕ່າງປະເທດ ໃຫ້ຮັບຮູ້ຢ່າງກວ້າງຂວາງ ໂດຍສະເພາະແມ່ນ ນັກຮຽນ, ນັກສຶກສາ ແລະ ປັນຍາຊົນຕ່າງໆ.
- ໂຄສະນາສຶກສາອົບຮົມ ເພື່ອຕ້ານການເຊື່ອຖືແບບງົມງວາຍ, ຫລ້າຫລັງ ແລະ ປະກິດການຫຍໍ້ທໍ້ຕ່າງໆທາງສັງຄົມ, ປົກປັກຮັກສາວັດທະນະທຳ ແລະ ເສີມຂະຫຍາຍອີດຄອງປະເພນີອັນດີງາມໄປຄຽງຄູ່ກັບການພັດທະນາໃນໄລຍະໃໝ່ ເພື່ອຊຸກຍູ້ສົ່ງເສີມການເຄື່ອນໄຫວດ້ານວັດທະນະທຳຂອງສັງຄົມໃຫ້ມີຫລາຍສີສັນ.

ຄາດໝາຍລະອຽດມີດັ່ງນີ້:

- ຮອດປີ 2015 ສູ້ຊົນສ້າງບ້ານວັດທະນະທຳໃຫ້ໄດ້ຫລາຍກວ່າ 700 ບ້ານ ແລະ ຄອບຄົວວັດທະນະທຳໃຫ້ໄດ້ຫລາຍກວ່າ 100.000 ຄອບຄົວ, ສ້າງສວນສາທາລະນະຢູ່ສູນກາງຢ່າງຫນ້ອຍ ໃຫ້ໄດ້ 4 ແຫ່ງ ແລະ ລະດັບທ້ອງຖິ່ນໃຫ້ໄດ້ຢ່າງຫນ້ອຍ 1 ແຫ່ງຕໍ່ແຂວງ.
- ດຳເນີນການສຳຫລວດບັນດາແຫລ່ງວັດທະນະທຳຮ່ອງຮອຍປະຫວັດສາດ, ບູຮານສະຖານ ແລະ ສະຖານທີ່ທາງປະຫວັດສາດ ເພື່ອສະເຫນີຂໍຮັບຮອງເຂົ້າເປັນມໍລະດົກແຫ່ງຊາດ 19 ແຫ່ງ ແລະ ມໍລະດົກໂລກ 2 ແຫ່ງ.
- ກໍ່ສ້າງ ແລະ ຕິດຕັ້ງຮູບປັ້ນ ປະທານໄກສອນ ພົມວິຫານ ຢູ່ເມືອງວຽງໄຊ ແລະ ສະຫວັນນະເຂດ.
- ກໍ່ສ້າງ ແລະ ຕິດຕັ້ງອະນຸສາວະລີ ທ່ານ ໝູຮັກ ພູມສະຫວັນ, ທ່ານ ພູມີ ວົງວິຈິດ, ທ່ານ ສີສົມພອນ ລໍວັນໄຊ, ທ່ານ ພູນ ສີປະເສີດ, ທ່ານ ສີທົນ ກົມມະດຳ, ທ່ານໄຟດ່າງ ລໍເປຍຢາວ ແລະ ທ່ານ ຕູ້ຢາ ໄຊຈູ.

2. ດ້ານຖະແຫຼງຂ່າວ:

– ສ້າງພື້ນຖານວຽກງານສື່ມວນຊົນໃຫ້ເປັນລະບົບຄົບຊຸດ ແລະ ທັນສະໄໝ ໂດຍການນຳໃຊ້ລະບົບ Digital ຢ່າງສົມບູນ ເພື່ອຮັບປະກັນໃຫ້ຂໍ້ມູນຂ່າວສານດ້ານຕ່າງໆ ເຊັ່ນ: ສຶກສາອົບຮົມແນວຄິດ, ຄຸນສົມບັດສິນທຳປະຕິວັດທີ່ສອດຄ່ອງກັບຍຸກສະໄຫມ, ນຳເອົາຄຸນຄ່າສິລະປະ-ວັດທະນະທຳຊຶມເລິກເຂົ້າສູ່ຊັ້ນຄົນຕ່າງໆ ໃນສັງຄົມຢ່າງກ້ວາງຂວາງ, ເປັນກຳລັງແຮງໃຫ້ແກ່ພາລະກິດປ່ຽນແປງໃຫມ່ ແລະ ການພັດທະນາຢ່າງຮອບດ້ານຂອງພັກຢ່າງຕໍ່ເນື່ອງ.

– ສືບຕໍ່ສຸມໃສ່ປັບປຸງພື້ນຖານໂຄງລ່າງທີ່ຈຳເປັນ ແລະ ຍົກລະດັບວຽກງານຖະແຫລງຂ່າວໃຫ້ນັບມື້ນັບສູງຂຶ້ນ ທັງປະລິມານ ແລະ ຄຸນນະພາບ, ປັບປຸງວິທະຍຸກະຈາຍສຽງ ແລະ ໂທລະພາບໃຫ້ມີຄຸນນະພາບ ແລະ ທັນສະໄຫມຄົບຊຸດ, ເຮັດໃຫ້ພື້ນຖານດ້ານການໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ສາລະບັນເທີງ ມີການຫັນປ່ຽນຢ່າງຕັ້ງຫນ້າ ແລະ ໄປເຖິງປະຊາຊົນບັນດາເຜົ່າຢ່າງກ້ວາງຂວາງ ແລະ ທົ່ວໄປ ເພື່ອສຶກສາອົບຮົມໃຫ້ທຸກພາກສ່ວນມີນ້ຳໃຈຮັກຊາດຢ່າງດູດດື່ມ ເພື່ອປົກປັກຮັກສາຜືນແຜ່ນດິນລາວໃຫ້ຍືນຍາວ.

– ຍົກລະດັບຄວາມຮູ້ດ້ານວິຊາການໃຫ້ບັນດານັກຂ່າວໃຫ້ມີຫົວຄິດປະດິດສ້າງໃຫມ່ໆ ສາມາດອອກຂ່າວ ແລະ ຂຽນເນື້ອໃນຂ່າວສານໃຫ້ມີຄວາມອຸດົມສົມບູນ ແລະ ສ້າງສັນ; ສ້າງຄວາມສົນໃຈ ແລະ ປະທັບໃຈໃຫ້ຜູ້ອ່ານ. ພັດທະນາຫນັງສືພິມຂັ້ນສູນກາງ ໃຫ້ເປັນສື່ໃນການນຳເອົາເນື້ອຫາສາລະ, ຫລັກຫມັ້ນ, ທັດສະນະ ກ່ຽວກັບເຫດການຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ໄປເຖິງປະຊາຊົນບັນດາເຜົ່າຢ່າງທົ່ວເຖິງ ແລະ ເປັນປົກກະຕິ.

ຄາດໝາຍລະອຽດມີດັ່ງນີ້:

- ສູ້ຊົນຂະຫຍາຍສະຖານີວິທະຍຸກະຈາຍສຽງລົງເມືອງ ແລະ ບ້ານໃຫ້ກວມຫລາຍກວ່າ 95% ຂອງພື້ນທີ່ທົ່ວປະເທດ.
- ສ້າງລາຍການຂ່າວເປັນພາສາເຜົ່າຈຳນວນຫນຶ່ງ ເພື່ອໃຫ້ຊົນເຜົ່າໄດ້ຮັບຮູ້ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.
- ຂະຫຍາຍສະຖານີຮັບສັນຍານພາບ ແລະ ປັບປຸງຄຸນນະພາບຂອງລາຍການໂທລະພາບຢູ່ບັນດາແຂວງ ແລະ ເຂດຫ່າງໄກສອກຫລີກ ໃຫ້ສາມາດອອກອາກາດໄດ້ຢ່າງຫນ້ອຍ 10 ຊົ່ວໂມງຕໍ່ວັນ ແລະ ກວມເອົາ 80% ຂອງພື້ນທີ່ທົ່ວປະເທດ.

[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ຂະແໜງຖະແຫລ່ງຂ່າວ ແລະ ວັດທະນະທຳ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ..... ແຜນງານ.....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ ເອກະສານຊ້ອນທ້າຍທີ.....).

[4]. <u>ມາດຕະການ:</u>

1). ການພັດທະນາ ແລະ ສົ່ງເສີມ:

- ຮັບປະກັນດ້ານແນວຄິດວັດທະນະທຳ ໂດຍການເປີດກວ້າງຂະບວນການສ້າງຊີວິດວັດທະນະທຳທີ່ສີວິໄລທ່ວປວງຊົນ ໃຫ້ມີຄວາມທັນສະໄໝ ແລະ ມີລັກສະນະຊາດ.
- ປຸກລະດົມກຳລັງແຮງຂອງທຸກຊັ້ນຄົນໃນສັງຄົມປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະນາວຽກງານຖະແຫຼງຂ່າວ-ວັດທະນາທຳໃຫ້ມີປະສິດທິພາບສູງຂຶ້ນ.
- ສົ່ງເສີມການແລກປ່ຽນວັດທະນະທຳຂອງບັນດາເຜົ່າ, ຕັ້ງໜ້າປົກປັກຮັກສາມູນເຊື້ອວັດທະນະທຳທີ່ມີຄຸນຄ່າອັນດີງາມ ເພື່ອເຮັດໃຫ້ວັດທະນະທຳຂອງຊາດມີຄວາມອຸດົມສົມບູນຍິ່ງຂຶ້ນ.

2). ການຄົ້ນຄ້ວາ ແລະ ປະດິດຄິດແຕ່ງ:

- ເອົາໃຈໃສ່ຊຸກຍູ້ການປະດິດຄິດແຕ່ງ ແລະ ຄົ້ນຄວ້າປະຫວັດສາດ, ວັດທະນະທຳ ພ້ອມທັງຈັດ ພິມເຜີຍແຜ່ໃຫ້ທ່ວສັງຄົມໄດ້ຮັບຊາບ ໂດຍສະເພາະແມ່ນກຸ່ມຄົນໄວໜຸ່ມ, ປັບປຸງຫໍສະໝຸດແຫ່ງຊາດ, ຫໍສະ ໝຸດຢູ່ ໃນໂຮງຮຽນ ເພື່ອສົ່ງເສີມການຮຽນຮູ້ຂໍ້ມູນຂ່າວສານຕ່າງໆດ້ວຍການອ່ານຂອງເດັກນ້ອຍ ແລະ ມວນ ຊົນ.

3). ການເຜີຍແຜ່:

- ເພີ່ມທະວີການປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໃນການປົກປັກຮັກສາ ແລະ ເຜີຍ ແຜ່ຜົນງານຂອງຜູ້ນຳປະຕິວັດໃຫ້ນັບມື້ກວ້າງຂວາງ.

## 2.2.5. ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ

### 1. ການພັດທະນາ, ປົກປ້ອງແມ່ຍິງ ແລະ ເດັກນ້ອຍ

[1]. <u>ທິດທາງ:</u>

ຊຸກຍູ້ສົ່ງເສີມການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ, ສ້າງເງື່ອນໄຂ ໃຫ້ ແມ່ຍິງໄດ້ຍົກລະດັບການສຶກສາດ້ານຄວາມຮູ້ວິຊາຊີບ ແລະ ດ້ານວິຊາການຕ່າງໆ ເພື່ອເຂົ້າຮ່ວມຂະບວນ ການພັດທະນາຕົນເອງ ແລະ ປະເທດຊາດຢ່າງມີຄຸນນະພາບ, ສ້າງວຽກເຮັດງານທຳ, ປຸກລະດົມຂະບວນການ 3 ດີ, ບົດບາດຍິງຊາຍ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃຫ້ຖືກຕ້ອງ, ເລິກເຊິ່ງ ແລະ ກວ້າງ ຂວາງ. ກຳຈັດຮັດແຄບທຸກການຈຳແນກ ແລະ ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ສ້າງພະນັກງານ ເພດຍິງຊົນເຜົ່າໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ.

ສືບຕໍ່ທັນລົງຮາກຖານ ເພື່ອສຶກສາອົບຮົມແນວຄິດ ແລະ ເຕົ້າໂຮມຄວາມສາມັກຄີ ຂອງບັນດາແມ່ຍິງ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ສາມາດເຂົ້າຮ່ວມໃນຂະບວນການພັດທະນາຢ່າງຫ້າວຫັນ ແລະ ນັບມື້ ຫຼາຍຂຶ້ນ; ຊຸກຍູ້ສົ່ງເສີມງານສິລະປະທາງດ້ານຫັດຖະກຳທີ່ເປັນທ່າແຮງຂອງແມ່ຍິງ ເພື່ອສ້າງໂອກາດການມີ ວຽກເຮັດງານທຳ ແລະ ສ້າງລາຍໄດ້ໃຫ້ແກ່ຄອບຄົວ ແລະ ແມ່ຍິງເອງ.

[2]. <u>ຄາດໝາຍຕົ້ນຕໍ:</u>

- ສຶກສາອົບຮົມການເມືອງແນວຄິດຂອງແມ່ຍິງລາວບັນດາເຜົ່າໃຫ້ເຊື່ອມຊຶມແນວທາງນະໂຍບາຍຂອງ ພັກ ແລະ ລັດຖະບານ ຢ່າງໜັກແໜ້ນ, ເຂັ້ມແຂງ ແລະ ມີສະຕິລະວັງຕົວຕໍ່ກັນອຸບາຍຫັນປ່ຽນໂດຍສັນຕິຂອງ ສັດຕູ ໃຫ້ໄດ້ 85% ຂອງເພດຍິງໃນເກນອາຍຸ 15 ປີຂຶ້ນໄປ.
- ກໍ່ສ້າງພະນັກງານເພດຍິງໃຫ້ກາຍເປັນພະນັກງານຫຼັກແຫຼ່ງໃຫ້ໄດ້ ໃຫ້ໄດ້ 20% ຂອງພະນັກງານ ຫຼັກແຫຼ່ງທັງໝົດ.
- ຝຶກອົບຮົມຍົກລະດັບຄວາມຮູ້ທາງດ້ານທິດສະດີ ແລະ ດ້ານວິຊາການໃຫ້ແກ່ແມ່ຍິງໃຫ້ໄດ້ 80% ຂອງສະມາຊິກທັງໝົດ.
- ເຮັດໃຫ້ແມ່ຍິງໄດ້ຮັບຂໍ້ມູນຂ່າວສານຕ່າງໆ ກວມເອົາ 50% ຂອງຈຳນວນສະມາຊິກ.

[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ໃນການປົກປ້ອງແມ່ຍິງ ແລະ ເດັກນ້ອຍ ຈະ ຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ ເອກະສານຊ້ອນທ້າຍທີ.....).

[4]. <u>ມາດຕະການ:</u>

1). ປັບປຸງກົນໄກການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງ ໃຫ້ມີປະສິດທິຜົນສູງກວ່າເກົ່າ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍທີ່ມີຄວາມສ່ຽງ ຕໍ່ການກົດຂີ່ຂູດຮີດທາງ ເພດ ແລະ ການຄ້າມະນຸດ.

2). ການໂຄສະນາອົບຮົມ ແລະ ເຜີຍແຜ່:

- ເພີ່ມທະວີການໂຄສະນາ ເຜີຍແຜ່ ກ່ຽວກັບພາລະບົດບາດ, ສິດ ແລະ ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ໃຫ້ກວ້າງຂວາງ.
- ສຶກສາອົບຮົມ, ສ້າງຄວາມເຂົ້າໃຈ ແລະ ປັບປຸງແມ່ຍິງໃຫ້ມີທັດສະນະຄະຕິທີ່ຖືກຕ້ອງ ກ່ຽວກັບ ບົດບາດຍິງ-ຊາຍ ເພື່ອໃຫ້ເຂົາເຈົ້າມີພຶດຕິກຳທີ່ເໝາະສົມໃນການສຶກສາອົບຮົມ ແລະ ເບິ່ງແຍງດູແລລູກ ເປັນ ຕົ້ນແມ່ນ: ການເຊື່ອຖືຮີດຄອງປະເພນີທີ່ເປັນຜົນກະທົບຕໍ່ການດູແລຮັກສາສຸຂະພາບ, ການນິຍົມໃຫ້ເດັກຍິງ ຊ່ວຍວຽກຄອບຄົວຫຼາຍກວ່າທີ່ຈະໃຫ້ເຂົ້າຮຽນ ແລະ ອື່ນໆ.

3). ການພັດທະນາແມ່ຍິງ ແລະ ເດັກນ້ອຍ:

- ເພີ່ມທະວີການປະສານສົມທົບກັບອຳນາດການປົກຄອງທຸກຂັ້ນໃນການປັບປຸງ ແລະ ເສີມຂະ ຫຍາຍການຈັດຕັ້ງປະຕິບັດວຽກງານການພັດທະນາແມ່ຍິງໃຫ້ເຂົ້າໃນການພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ.
- ສ້າງຂີດຄວາມສາມາດໃຫ້ແກ່ແມ່ຍິງໂດຍການຝຶກອົບຮົມ, ຍົກລະດັບຄວາມຮູ້ຄວາມສາມາດທາງ ດ້ານວິຊາການຕ່າງໆໃຫ້ແກ່ແມ່ຍິງ.
- ສົ່ງເສີມແມ່ຍິງ ແລະ ເດັກນ້ອຍໃຫ້ໄດ້ຮັບການຍົກລະດັບທາງດ້ານການສຶກສາເທົ່າທຽມກັບເພດຊາຍ ໃນທຸກລະດັບ ແລະ ສາມາດເຂົ້າເຖິງການບໍລິການສາທາລະນະສຸກຢ່າງທົ່ວເຖິງ.

## 2. ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ

### [1]. ທິດທາງ:

ຮັບປະກັນການປະຕິບັດສິດທິ ແລະ ການໄດ້ຮັບການພັດທະນາທີ່ເທົ່າທຽມກັນ ລະຫວ່າງຍິງ-ຊາຍໃນດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ ເພື່ອໃຫ້ເຂົາເຈົ້າກາຍເປັນກຳລັງແຮງອັນສຳຄັນໃນການສ້າງສາພັດທະນາປະເທດ.

ຮັບປະກັນໃຫ້ຍຸດທະສາດການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ, ຄວາມຕ້ອງການຂອງເພດຍິງ-ເພດຊາຍ ໄດ້ຮັບການແກ້ໄຂຢ່າງສະເໝີພາບກັນລວມທັງຫຼຸດຜ່ອນຄວາມແຕກໂຕນກັນທາງດ້ານເງື່ອນໄຂ, ໂອກາດທາງດ້ານການສຶກສາ, ການເຂົ້າເຖິງ ແລະ ໄດ້ຮັບການບໍ ລິການສາທາລະນະສຸກ, ສົ່ງເສີມການມີວຽກເຮັດງານທຳໃນລະບົບຈ້າງງານໃຫ້ຫຼາຍຂຶ້ນ.

### [2]. ຄາດໝາຍຕົ້ນຕໍ:

ສ້າງຂະບວນການແມ່ຍິງຢ່າງມີຈຸດສຸມ ແນໃສ່ເຮັດໃຫ້ແມ່ຍິງໄດ້ຮັບການພັດທະນາໃນທຸກດ້ານ, ສົ່ງ ເສີມສິດສະເໝີພາບລະຫວ່າງຍິງ-ຊາຍ ໃນຄອບຄົວ ແລະ ສັງຄົມເທື່ອລະກ້າວ; ເປີດກວ້າງການເຂົ້າຮ່ວມຂອງ ແມ່ຍິງບັນດາເຜົ່າ ໂດຍສະເພາະແມ່ນ ຂະບວນການແກ້ໄຂຄວາມທຸກຍາກ, ຫຼຸດຜ່ອນການຖາງປ່າເຮັດໄຮ່ ແລະ ຂະບວນການຜະລິດເປັນສິນຄ້າ; ເຮັດໃຫ້ແມ່ຍິງໄດ້ປະກອບເຂົ້າໃນຕຳແໜ່ງຕັດສິນບັນຫາຕ່າງໆມີຈຳ ນວນເພີ່ມຂຶ້ນ ເຮັດໃຫ້ແມ່ຍິງ ແລະ ເດັກນ້ອຍໄດ້ຮັບການໂພຊະນາການທີ່ດີ, ການບໍລິການສາທາລະນະສຸກທີ່ ມີຄຸນນະພາບ ໂດຍສະເພາະແມ່ນ ການບໍລິການກ່ອນເກີດລູກ, ການເກີດລູກທີ່ສະອາດ ແລະ ປອດໄພ.

ຄາດໝາຍລະອຽດ ມີດັ່ງນີ້:

- ສູ້ຊົນເພີ່ມຈຳນວນເພດຍິງເຂົ້າໃນຄະນະນຳ ນັບແຕ່ຂັ້ນເມືອງຂຶ້ນໄປ ໃຫ້ໄດ້ 15% ຂຶ້ນໄປ.
- ສູ້ຊົນໃຫ້ມີຈຳນວນເພດຍິງເປັນສະມາຊິກສະພາແຫ່ງຊາດ ໃຫ້ໄດ້ 30% ຂຶ້ນໄປ.
- ເພີ່ມຈຳນວນເພດຍິງໄດ້ຮັບການຝຶກອົບຮົມ ກ່ຽວກັບເຕັກນິກການຜະລິດກະສິກຳ, ປຸງແຕ່ງ, ຫັດ ຖະກຳ ແລະ ການບໍລິການໃຫ້ໄດ້ 20% ຂຶ້ນໄປ.
- ສູ້ຊົນໃຫ້ຈຳນວນແມ່ຍິງ ກວມເອົາ 40% ຂອງກຳລັງແຮງງານທັງໝົດ ເພື່ອປະກອບສ່ວນເຂົ້າໃນ ການພັດທະນາ.
- ເພີ່ມການມີສ່ວນຮ່ວມຂອງເພດຍິງເຂົ້າໃນການວາງແຜນ ແລະ ນະໂຍບາຍການພັດທະນາຕ່າງໆ ຂອງຂະແໜງການໃຫ້ນັບມື້ຫຼາຍຂຶ້ນ.
- ສ້າງໂອກາດໃຫ້ເພດຍິງ, ເດັກຍິງໄດ້ເຂົ້າເຖິງການບໍລິການຕ່າງໆທາງສັງຄົມໃຫ້ເທົ່າທຽມກັບເພດ ຊາຍ.

### [3]. ແຜນງານ ແລະ ໂຄງການຈຸດສຸມ:

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ ເອກະສານຊ້ອນທ້າຍທີ.....).

### [4]. ມາດຕະການ:

- ເພີ່ມທະວີຄວາມສາມັກຄີແມ່ຍິງລາວບັນດາເຜົ່າ ແລະ ບັນດາຊັ້ນຄົນໃຫ້ເປັນປຶກແຜ່ນ ໂດຍການຈັດຕັ້ງຝຶກອົບຮົມທາງດ້ານການເມືອງແນວຄິດ, ລັດຖະທຳມະນູນ, ກົດໝາຍເປັນແຕ່ລະໄລຍະ.
- ປະສານສົມທົບກັບພາກສ່ວນຕ່າງໆ ຄົ້ນຄວ້າຫຼັກສູດຝຶກອົບຮົມ ແລະ ດຳເນີນການຝຶກອົບຮົມໃຫ້ແກ່ແມ່ຍິງ.
- ສືບຕໍ່ຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ; ພ້ອມທັງເຊື່ອມສານບົດບາດຍິງ-ຊາຍ ແລະ ແຜນຈັດຕັ້ງປະຕິບັດຍຸດທະສາດເຂົ້າໃນແຜນພັດທະນາຂອງບັນດາຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນ.
- ເພີ່ມທະວີການຄົ້ນຄວ້າ, ເກັບກຳຂໍ້ມູນ ເພື່ອນຳໃຊ້ໃນການສົ່ງເສີມການເຂົ້າຮ່ວມຂອງແມ່ຍິງໃນຂະບວນການພັດທະນາທຸກລະດັບ.

### 2.2.6. ການພັດທະນາເຍົາວະຊົນ ແລະ ຊາວໜຸ່ມ

**[1]. <u>ທິດທາງ:</u>**

ສ້າງຄົນລຸ້ນໜຸ່ມໃຫ້ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ໄປພ້ອມໆກັບການພັດທະນາຄວາມຮູ້ຄວາມສາມາດ ແລະ ທັກສະຊີວິດ ເພື່ອຮອງຮັບຄວາມກ້າວໜ້າທາງ ດ້ານເຕັກນິກ-ວິທະຍາສາດ ແລະ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝຂອງປະເທດ.

- ສຶກສາອົບຮົມການເມືອງແນວຄິດ ດ້ວຍຫລາຍຮູບຫລາຍວິທີ ເພື່ອສ້າງໃຫ້ເຍົາວະຊົນ-ຊາວໜຸ່ມ ມີນ້ຳໃຈຮັກຊາດ, ມີຄວາມສາມັກຄີກັບໝູ່ເພື່ອນທັງພາຍໃນ ແລະ ພາຍນອກດີ, ຈຳແນກມິດ ແລະ ສັດຕູຢ່າງຈະແຈ້ງ, ຖືເອົາການແຂ່ງຂັນ 2 ສາມັກຄີ 3 ດີ 4 ພັດທະນາ ຂອງຊາວໜຸ່ມ ແລະ 3 ດີ 4 ຮູ້ ຂອງເຍົາວະຊົນ ເປັນໃຈກາງໃນການເຄື່ອນໄຫວ.
- ສ້າງໃຫ້ຊາວໜຸ່ມຮູ້ຄຸນຄ່າຂອງການອອກແຮງງານ, ຮັກອາຊີບ, ຮັກສຸຂະພາບຂອງຕົນເອງ, ປົກປັກຮັກສາ ແລະ ນຳໃຊ້ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມໃຫ້ຍືນຍົງ.
- ສ້າງໄວໜຸ່ມໃຫ້ເປັນຜູ້ປະກອບການ ແລະ ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ໂດຍສະເພາະ ຕະຫລາດແຮງງານທັງພາຍໃນ ແລະ ຕ່າງປະເທດ.
- ສົ່ງເສີມໃຫ້ຊາວໜຸ່ມເຂົ້າຮ່ວມທຸກການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ, ໃຫ້ກາຍເປັນນັກຮຽນ, ນັກສຶກສາປັນຍາຊົນທີ່ປ່ຽມລົ້ນດ້ວຍຄວາມຮູ້ຄວາມສາມາດ ບໍ່ວ່າຢູ່ໃນເວລາຮຽນ ແລະ ປະກອບສ່ວນເຂົ້າໃນວຽກງານສັງຄົມຕ່າງໆ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

ເອົາໃຈໃສ່ພັດທະນາໃຫ້ຊາວໜຸ່ມ ແລະ ເຍົາວະຊົນ ມີສຸຂະພາບພາລະນະໄມເຂັ້ມແຂງທາງດ້ານຮ່າງກາຍ ແລະ ມັນສະໜອງ ເຮັດໃຫ້ຄົນລຸ້ນໜຸ່ມກາຍເປັນກ້ອນກຳລັງແຮງ ແລະ ເປັນກະດູກສັນຫລັງຂອງຊາດ. ຄາດໝາຍລະອຽດມີດັ່ງນີ້:

- ສ້າງໜ່ວຍຊາວໜຸ່ມແບບຢ່າງ 2 ສາມັກຄີ 3 ດີ 4 ພັດທະນາ ແລະ ກອງເຍົາວະຊົນນຳໜ້າໃຫ້ໄດ້ ຫລາຍກວ່າ 50% ຂອງຈຳນວນໜ່ວຍທັງໝົດ.

- ສ້າງເງື່ອນໄຂໃຫ້ບັນດາຊາວໜຸ່ມ ແລະ ເຍົາວະຊົນ ໄດ້ມີໂອກາດພັດທະນາຕົນເອງ, ຮຽນຈົບການສຶກສາແຕ່ລະຂັ້ນໃຫ້ນັບມື້ນັບກວມອັດຕາສ່ວນຫລາຍຂຶ້ນ.
- ສົມທົບກັບກະຊວງສຶກສາ ຈັດເຝິກອົບຮົມວິຊາຊີບເຄື່ອນທີ່ໃຫ້ກັບຊາວໜຸ່ມໃນຂະແໜງອາຊີບທີ່ມີຄວາມຕ້ອງການຂອງຕະຫລາດແຮງງານ, ສ້າງ ແລະ ສົ່ງເສີມຜູ້ປະກອບການໜຸ່ມ ໃຫ້ນັບມື້ນັບຫລາຍຂຶ້ນ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ໃນການພັດທະນາເຍົາວະຊົນ ແລະ ຊາວໜຸ່ມ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

- ຈັດຕັ້ງຜັນຂະຫຍາຍຜົນສຳເລັດ ແລະ ມະຕິກອງປະຊຸມໃຫຍ່ຂອງຊາວໜຸ່ມກໍຄືພັກຢ່າງກ້ວາງຂວາງເລິກເຊິ່ງໃນໝູ່ຊາວໜຸ່ມ. ພ້ອມກັນນີ້, ຕ້ອງຫັນທິດທາງວຽກງານອອກເປັນໂຄງການ, ແຜນການ ແລະ ກິດຈະກຳ ເພື່ອຈັດຕັ້ງປະຕິບັດຕົວຈິງໃນແຕ່ລະໄລຍະ.
- ຄົ້ນຄວ້າດັດແປງແບບວິທີນຳພາ, ແບບວິທີເຮັດວຽກ, ລະບອບປະສານງານລະຫວ່າງຂັ້ນເທິງ, ຂັ້ນລຸ່ມ, ສາຍຕັ້ງ, ສາຍຂວາງ ໃຫ້ລະອຽດກວ່າເກົ່າ.
- ຊຸກຍູ້ຂະບວນການແຂ່ງຂັນ 2 ສາມັກຄີ 3 ດີ 4 ພັດທະນາ ຢ່າງແຂງແຮງ ຕິດພັນກັບການສ້າງໜ່ວຍພັກແຂງ ຮູ້ນຳພາຮອບດ້ານ.
- ສຸມໃສ່ຫັນພະນັກງານລົງກໍ່ສ້າງຮາກຖານ ໂດຍສະເພາະຢ່າງຍິ່ງແມ່ນຫັນລົງປັບປຸງ ແລະ ສ້າງຄະນະຊາວໜຸ່ມຂັ້ນບ້ານ, ບ້ານຈຸດສຸມພັດທະນາໃຫ້ມີຄວາມຫນັກແໜ້ນທາງດ້ານການເມືອງແນວຄິດ ແລະ ການຈັດຕັ້ງ, ຮັບປະກັນການຈັດຕັ້ງປະຕິບັດ 4 ເນື້ອໃນ 4 ຄາດໝາຍ ຂອງການກໍ່ສ້າງຮາກຖານ.

## 2.2.7. ການພັດທະນາກິລາກາຍະກຳ

**[1]. <u>ທິດທາງ:</u>**

ສ້າງຂະບວນການກິລາໃຫ້ມີບັນຍາກາດຟົດຟື້ນ ແລະ ເຮັດໃຫ້ຊັ້ນຄົນຕ່າງໆ ໂດຍສະເພາະແມ່ນ ຊາວໜຸ່ມຕິດພັນກັບການກິລາຫລາຍຂຶ້ນ, ຖືເອົາວຽກງານກິລາເປັນສ່ວນປະກອບສຳຄັນໃນການພັດທະນາຄົນ, ເປັນພາຫະນະໃນການປະຕິບັດນະໂຍບາຍຕ່າງປະເທດຂອງພັກ-ລັດ ເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມືຢ່າງຕັ້ງໜ້າ; ຫັນກິລາບາງປະເພດ ແລະ ພັດທະນານັກກິລາລາວ ໃຫ້ກາຍເປັນກິລາອາຊີບທຽບເທົ່າລະດັບພາກພື້ນເທື່ອລະກ້າວ. ພັດທະນາກິລາພື້ນບ້ານຂອງບັນດາເຜົ່າ ເພື່ອເປັນການແລກປ່ຽນບົດຮຽນ ແລະ ສ້າງຄວາມສາມັກຄີພາຍໃນດ້ວຍກັນ; ຍູ້ແຮງຂະບວນການກິລາ-ກາຍະກຳມວນຊົນ ເຂົ້າສູ່ທຸກຂົງເຂດວຽກງານຊຸມຊົນ ນັບແຕ່ເມືອງຮອດຊົນນະບົດ ເຮັດໃຫ້ກິລາ-ກາຍະກຳໄດ້ຫັນເຂົ້າສູ່ຊີວິດ-ສັງຄົມຕົວຈິງ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ສູ້ຊົນປຸກລະດົມມະຫາຊົນ ໃຫ້ໄດ້ 75% ຂອງຈຳນວນປະຊາກອນເຂົ້າຮ່ວມຂະບວນການກິລາ ກາຍະກຳຢ່າງເປັນປົກກະຕິ, ສ້າງຄອບຄົວກິລາໃຫ້ໄດ້ 25% ຂອງຄອບຄົວທັງໝົດ, 90% ຂອງຈຳນວນ

ແຂວງ, ນະຄອນຫລວງ 75% ຂອງຈຳນວນເມືອງ ແລະ ໃນທົ່ວປະເທດ ໃຫ້ມີພື້ນຖານໂຄງລ່າງກິລາ ກາຍະກຳຂັ້ນແຂວງ ເຊັ່ນ: ເດີ່ນກິລາ, ສະລອຍນ້ຳ, ເດີ່ນກິລາຫລາຍປະເພດ.

- ສ້າງນັກກິລາປະພດຕ່າງໆໃຫ້ໄດ້ 15% ຂອງຜູ້ມີອາຍຸ ແຕ່ 5-35 ປີ ແລະ ພັດທະນາການກິລາ ກາຍະກຳຂອງລາວໃຫ້ຫຍັບເຂົ້າໃກ້ກັບກິລາສາກົນ.
- ຈັດງານມະຫາກຳກິລາແຫ່ງຊາດ ຄັ້ງທີ 9 ໃນປີ 2011 ທີ່ແຂວງຫຼວງພະບາງ.
- ເອົາໃຈໃສ່ກໍ່ສ້າງ-ບຳລຸງ, ເລືອກເຝັ້ນ ຕົວນັກກິລາ, ບຸກຄະລາກອນກິລາໃນຂອບເຂດທົ່ວປະເທດ ເພື່ອກຽມພ້ອມເຂົ້າແຂ່ງຂັນທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະແມ່ນການກະກຽມເຂົ້າຮ່ວມງານມະຫາກຳກິລາຊີເກມຄັ້ງທີ 26 ທີ່ປະເທດ ອິນໂດເນເຊຍ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ໃນການພັດທະນາວຽກງານກິລາ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

- ເປີດກ້ວາງການກໍ່ສ້າງນັກກິລາທີ່ມີພອນສະຫວັນປະເພດຕ່າງໆ ເພື່ອເຮັດໃຫ້ຄຸນນະພາບຂອງນັກກິລາສູງຂຶ້ນເທື່ອລະກ້າວ. ພ້ອມກັນນັ້ນ ກໍສຸມໃສ່ການສະໜອງອຸປະກອນເຝິກຊ້ອມຈຳນວນໜຶ່ງ ເພື່ອປະກອບສ່ວນເຊີດຊູຄວາມສາມາດຂອງນັກກິລາ.
- ເພີ່ມທະວີການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນແຜນກໍ່ສ້າງ-ບຳລຸງນັກກິລາ, ບຸກຄະລາກອນກິລາ ດ້ານປະລິມານ ແລະ ຄຸນນະພາບ ເພື່ອຮອງຮັບໃນການເຂົ້າຮ່ວມງານລະດັບພາກພື້ນ ແລະ ສາກົນ.
- ຊຸດຄົ້ນກຳລັງແຮງບົ່ມຊ້ອນ ຂອງມະຫາຊົນ ແຕ່ສູນກາງ ຈົນຮອດທ້ອງຖິ່ນ-ຮາກຖານ ລວມທັງອົງການຈັດຕັ້ງຂອງສັງຄົມ ໃນການພັດທະນາກິລາຂອງລາວ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

## 2.2.8. ວິທະຍາສາດ ແລະ ເຕັກໂນໂລຊີ

**[1]. <u>ທິດທາງ:</u>**

ຖືການຄົ້ນຄ້ວານຳໃຊ້ວິທະຍາສາດ-ເຕັກໂນໂລຢີໃໝ່ ເປັນວຽກງານບູລິມະສິດໜຶ່ງທີ່ສຳຄັນ ເພື່ອບັນລຸຄາດໝາຍພັດທະນາເສດຖະກິດ-ສັງຄົມ ຊຶ່ງກຳນົດໝາຍຕົ້ນຕໍແມ່ນຮັບໃຊ້ໃຫ້ຂົງເຂດງານການຜະລິດສິນຄ້າ, ການທຸລະກິດ, ການບໍລິການໃຫ້ມີມາດຖານສາມາດແຂ່ງຂັນກັບສາກົນ, ເປັນກົນໄກຫັນການຄຸ້ມຄອງບໍລິຫານລັດເຂົ້າສູ່ຄວາມທັນສະໄໝລັດຖະບານ<u>ເອເລັກໂຕນິກ</u>, ສຸມການຄົ້ນຄວ້າຜະລິດຕະພັນພະລັງງານທີ່ເປັນຍຸດທະສາດໃນອານາຄົດ: ນ້ຳມັນໄບ່ໂອດີເຊວ (Bio-diesel) ທີ່ຜະລິດຈາກພືດ, ຈາກສັດ; ພະລັງງານແສງຕາ ເວັນ , ພະລັງງານປະລະມະນູ, ແນວພັນໃໝ່. ສົ່ງເສີມຫົວຄິດປະດິດສ້າງຂອງປະຊາຊົນ. ໄປສູ່ເສດຖະກິດ-ພູມປັນຍາ, ແລະຫັນການຄົ້ນຄວ້າໃຫ້ວິທະຍາສາດຕິດພັນການສອນ, ການຮຽນ, ການນຳໃຊ້ໃນພາກທຸລະກິດ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ສຳເລັດໂຄງການຄຸ້ມຄອງລະບົບບໍລິຫານລັດດ້ວຍເອເລັກໂທນິກໃຫ້ກວ້າງຂວາງ, ຂະຫຍາຍລະບົບຕາໜ່າງໃຫ້ເຊື່ອມຕໍ່ທຸກເມືອງ ແລະ ຂັ້ນບ້ານ ໃຫ້ໄດ້ 20% ຂອງບ້ານທັງໝົດໃນປີ...ທັນການບໍລິຫານຂອງທຸກຫ້ອງການລັດ ໃຫ້ເປັນແບບອັດຕະໂນມັດໃຫ້ກວມເອົາອັດຕາສ່ວນ 30% ຂອງອົງການຈັດຕັ້ງທັງໝົດ.
- ສ້າງສຳເລັດມາດຖານການຂຶ້ນທະບຽນການຄ້າ ແລະ ຊັບສິນທາງປັນຍາ, ແນໃສ່ເພີ່ມປະສິດທິພາບ ແລະ ຄວາມສາມາດໃນການແຂ່ງຂັນທາງດ້ານເສດຖະກິດ.
- ຄົ້ນຄວ້າແນວພັນເຂົ້າ ແລະ ປຸ່ຍຊີວະພາບ ເພື່ອນຳໃຊ້ເຂົ້າໃນການຜະລິດ ເພື່ອເປັນສິນຄ້າທີ່ມີຄວາມຕ້ອງການສູງໃນທ້ອງຕະຫລາດ.
- ສູ້ຊົນຄົ້ນຄວ້າວິທະຍາສາດໃນຂົງເຂດຊີວະເຕັກໂນໂລຊີ, ນິເວດວິທະຍາ, ພະລັງງານທົດແທນ ແລະ ພະລັງງານປາລະມະນູເພື່ອເສດຖະກິດ.
- ສ້າງໃຫ້ມີດາວທຽມ ແລະ ຕຳແໜ່ງວົງໂຄຈອນ ເພື່ອສະໜອງການບໍລິການລະບົບສື່ສານໂທລະຄົມ, ວິທະຍຸ, ໂທລະພາບ ແລະ ພາບຖ່າຍທາງດາວທຽມ.
- ຄົ້ນຄວ້າຍຸດທະສາດສັງຄົມ, ພຶດຕິກຳຂອງການພັດທະນາເສດຖະກິດ-ສັງຄົມ, ຫົວຂໍ້ບັນຫາຕ່າງໆທີ່ສັງຄົມສົນໃຈ ແລະ ເລັ່ງທວງໃຫ້ມີຄຳຕອບໃຫ້ໄດ້ໂດຍພື້ນຖານ.

[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ໃນການພັດທະນາວິທະຍາ-ສັງຄົມ, ວິທະຍາສາດ-ເຕັກໂນໂລຊີ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

[4]. <u>ມາດຕະການ:</u>

- ຊຸກຍູ້ສົ່ງເສີມການຄົ້ນຄວ້າວິທະຍາສາດໃນຫົວຂໍ້ຕ່າງໆ ເພື່ອຮັບໃຊ້ໃຫ້ແກ່ຂະບວນການພັດທະນາເສດຖະກິດ-ສັງຄົມ, ປະສານສົມທົບລະຫວ່າງການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຍີກັບການສຶດສອນ ແລະ ການຜະລິດຕົວຈິງ.
- ນຳໃຊ້ຜົນສຳເລັດຂອງການຄົ້ນຄວ້າວິທະຍາສາດຂອງພາກພື້ນ ແລະ ສາກົນເຂົ້າໃນການພັດທະນາວິທະຍາສາດຂອງປະເທດ ເພື່ອຍົກລະດັບຄຸນນະພາບຂອງວຽກງານວິທະຍາສາດ ກໍຄືການສ້າງສາ ແລະ ພັດທະນາເສດຖະກິດ-ສັງຄົມຂອງປະເທດ.
- ລັດຖະບານສັ່ງຈອງ ແລະ ກຳນົດຫົວຂໍ້ບົດຄົ້ນຄວ້າ, ທົດລອງ ແລະ ສະໜອງທຶນທີ່ຈຳເປັນເຂົ້າໃນການຄົ້ນຄວ້າ ແລະ ພັດທະນາທາງວິທະຍາສາດທຳມະຊາດ ແລະ ສັງຄົມ; ໂດຍສະເລ່ຍ 1-2% ຂອງງົບປະມານການລົງທຶນໃນແຕ່ລະປີ.
- ເຕົ້າໂຮມນັກວິທະຍາສາດ, ນັກຄົ້ນຄວ້າພາຍໃນຢ່າງກວ້າງຂວາງ ແລະ ມີນະໂຍບາຍຈູງໃຈຕໍ່ຜູ້ມີຜົນງານ, ຄົ້ນພົບບັນຫາໃໝ່ໃນສາຂາຕ່າງໆ, ເພີ່ມທະວີການພົວພັນຮ່ວມມືດ້ານຄົ້ນຄວ້າວິທະຍາສາດ, ພຶດ ຕິກຳດ້ານຕ່າງໆ, ປັບປຸງສະຖາບັນຄົ້ນຄວ້າ, ສະພາວິທະຍາສາດຂະແໜງຕ່າງໆໃຫ້ເປັນອົງການເຕົ້າໂຮມປັນຍາຊົນ, ເຕົ້າໂຮມກ້ອນສະໝອງຂອງສັງຄົມ.

## 2.2.9. ການເສີມສ້າງຄວາມສາມັກຄີທົ່ວປວງຊົນ

- ເພີ່ມທະວີຄວາມປອງດອງລະຫວ່າງເຜົ່າ, ຊັ້ນຄົນ, ເພດໄວ, ສາດສະໜາ ແລະ ສ້າງມະຫາສາມັກຄີທົ່ວປວງຊົນລາວ ໃນຂອບເຂດທົ່ວປະເທດໃຫ້ເປັນປຶກແຜ່ນແໜ້ນໜາ ເພື່ອຕໍ່ຕ້ານທຸກກົນອຸບາຍຂອງສັດຕູທີ່ຫວັງທຳລາຍມ້າງເພລະບອບປະຊາທິປະໄຕປະຊາຊົນລາວຂອງພວກເຮົາ; ສະນັ້ນ, ເອົາໃຈໃສ່ສຶກສາອົບຮົມທາງດ້ານແນວຄິດການເມືອງ; ເສີມຂະຫຍາຍບົດບາດຂອງເຈົ້າກົມ-ເຈົ້າເຫຼົ່າ, ພະນັກງານບຳນານ-ອາວຸໂສ ແລະ ຜູ້ມີບົດບາດໃນສັງຄົມ ໃຫ້ມີສ່ວນຮ່ວມໃນການສຶກສາອົບຮົມລູກຫຼານ ແລະ ຄົນລຸ້ນໜຸ່ມໃຫ້ກວ້າງຂວາງ ແລະ ເລິກເຊິ່ງກວ່າເກົ່າ.

- ເອົາໃຈໃສ່ແກ້ໄຂບັນຫາສາສະໜາໃຫ້ມີຄວາມສະຫງົບ ໂດຍການຂົນຂວາຍ, ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ຄຸ້ມຄອງສາສະໜາຕ່າງໆ ໃຫ້ເຄື່ອນໄຫວຕາມຫຼັກສິນທຳຂອງສາສະໜາ ແລະ ດຳລັດ 92/ນຍ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ.

- ປຸກລະດົມຊັ້ນຄົນຕ່າງໆ ໂດຍສະເພາະແມ່ນອົງການຈັດຕັ້ງສັງຄົມຕ່າງໆໃຫ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຢ່າງຕັ້ງໜ້າ; ອອກແຮງສຶກສາອົບຮົມຊາວໜຸ່ມ, ເຍົາວະຊົນ ແລະ ອະນຸຊົນໃຫ້ກາຍເປັນກຳລັງແຮງຂອງຊາດທີ່ມີຄຸນນະພາບ, ເປັນຄົນຍຸກໃໝ່ທີ່ປ່ຽມລົ້ນໄປດ້ວຍຄວາມສີວິໄລທາງດ້ານຈິດໃຈ, ມີຄວາມຮູ້, ຄວາມສາມາດ ແລະ ມີວິໄສທັດອັນກວ້າງໄກ ໃນການພັດທະນາປະເທດຊາດໃນໄລຍະໃໝ່.

- ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ມີໂອກາດຍົກລະດັບຄວາມຮູ້ຄວາມສາມາດ ຄຽງຄູ່ກັບເພດຊາຍ, ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃຫ້ກວ້າງຂວາງ; ເອົາໃຈໃສ່ສ້າງພະນັກງານເພດຍິງຊົນເຜົ່າໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ; ເຮັດໃຫ້ຄົນລາວຮັບຮູ້ໄດ້ຄຸນຄ່າຂອງການອອກແຮງງານ ເຊິ່ງເປັນແຫລ່ງບໍ່ເກີດແຫ່ງຄວາມຮັ່ງມີ ທາງດ້ານວັດຖຸ ແລະ ຈິດໃຈ, ມີລະບຽບວິໄນ, ຮັກການອອກແຮງງານ ມີນ້ຳໃຈຊ່ວຍເຫຼືອເຊິ່ງກັນ ແລະ ກັນ; ຮັບປະກັນການປະຕິບັດລະບຽບຫຼັກການ ແລະ ປົກປ້ອງສິດຜົນປະໂຫຍດຂອງກຳມະກອນ ແລະ ຊາວຜູ້ອອກແຮງງານໃຫ້ໄດ້ຮັບຄວາມເປັນທຳ ແລະ ຜົນປະໂຫຍດອັນຊອບທຳ.

- ເພີ່ມທະວີການໂຄສະນາ, ຂົນຂວາຍ, ດຶງດູດພີ່ນ້ອງເຊື້ອຊາດລາວທີ່ໄປດຳລົງຊີວິດຢູ່ຕ່າງປະເທດ ໃຫ້ອ່ວຍໜ້າມາສູ່ປະເທດຊາດ ປະກອບສ່ວນສະຕິປັນຍາ ແລະ ຊັບສິນເຂົ້າໃນການພັດທະນາປະເທດໃຫ້ມັ່ງຄັ່ງເຂັ້ມແຂງ.

- ລັດສົ່ງເສີມໃຫ້ກຸ່ມວິຊາຊີບຕ່າງໆສ້າງຕັ້ງສະມາຄົມຂອງຕົນຕາມດຳລັດນາຍົກລັດຖະມົນຕີ ວ່າດ້ວຍສະມາຄົມ ສະບັບ ເລກທີ 115/ນຍ, ລົງວັນທີ 29 ເມສາ 2009 ຊຶ່ງການຈັດຕັ້ງສະມາຄົມເຫລົ່ານັ້ນສ້າງຂຶ້ນເພື່ອເຕົ້າໂຮມຄວາມສາມັກຄີ, ເຕົ້າໂຮມວິຊາການ, ເຕົ້າໂຮມທຶນຮອນເພື່ອດຳເນີນການຜະລິດ, ທຸລະກິດ, ເຄື່ອນໄຫວລັດຖະການ, ແຕ່ລັດບໍ່ສົ່ງເສີມໃຫ້ສ້າງຕັ້ງສະມາຄົມເຄື່ອນໄຫວດ້ານການເມືອງໃດໆ, ສະມາຄົມເຫລົ່ານັ້ນ ຕ້ອງເຄື່ອນໄຫວພາຍໃຕ້ກົດໝາຍຂອງ ສປປ ລາວ ແລະ ມີແນວທາງອັນດຽວຄື: ເສີມສ້າງຄວາມສາມັກຄີຮັກຊາດ ແລະ ພັດທະນາຊາດລາວ ໃຫ້ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນາຖາວອນ.

## 2.2.10. ການແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມ

### 1. ການແກ້ໄຂບັນຫາຢາເສບຕິດ

**[1]. ທິດທາງ:**

ສືບຕໍ່ປະຕິບັດຍຸດທະສາດການແກ້ໄຂບັນຫາການຜະລິດ, ຊົມໃຊ້, ການລັກລອບຄ້າຂາຍ ແລະ ການກໍ່ອາດຊະຍາກຳ ທີ່ຕິດພັນກັບຢາເສບຕິດທີ່ຜິດກົດໝາຍ ທີ່ກຳລັງແຜ່ຂະຫຍາຍ ຢູ່ໃນ ສປປ ລາວ ເພື່ອໃຫ້ບັນຫາຢາເສບຕິດໄດ້ຮັບການແກ້ໄຂ ທັງເປັນການປະກອບສ່ວນເຮັດໃຫ້ປະຊາຄົມອາຊຽນໄດ້ປອດຈາກຢາເສບຕິດພາຍໃນປີ 2015.

**[2]. ຄາດໝາຍ**

- ສູ້ຊົນພັດທະນາບ້ານ ເພື່ອຫັນປະຊາຊົນໄປປະກອບອາຊີບອື່ນໃຫ້ໄດ້ປະມານ 300 ບ້ານ ຕໍ່ປີ
- ສູ້ຊົນປິ່ນປົວຄົນຕິດຢູ່ຕາມບ້ານຕ່າງໆໃຫ້ໄດ້ ປະມານ 3.000 ຄົນ ຕໍ່ປີ ຂອງຄົນຕິດຝິ່ນທັງໝົດ
- ສູ້ຊົນປິ່ນປົວຄົນຕິດຢາບ້າໃຫ້ໄດ້ປະມານ 2.000 ຄົນ ຕໍ່ປີ ຂອງຄົນຕິດຢາບ້າທັງໝົດ
- ສູ້ຊົນທຳລາຍເນື້ອທີ່ລັກລອບປູກຝິ່ນໃຫ້ໄດ້ ປະມານ 700 ເຮັກຕາ ຕໍ່ປີ ຂອງເນື້ອທີ່ລັກລອບປູກຝິ່ນທັງໝົດ
- ສູ້ຊົນເພີ່ມຈຳນວນປະຊາຊົນເຂົ້າຮ່ວມການຝຶກອົບຮົມ ແລະ ການເຜີຍແຜ່ໝົນຮ້າຍຂອງຢາເສບຕິດໃຫ້ໄດ້ ປະມານ 300.000 ຄົນ ຕໍ່ປີ

**[3]. ແຜນງານ ແລະ ໂຄງການ**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນຂ້າງເທິງ ໃນການແກ້ໄຂບັນຫາຢາເສບຕິດ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ .....ໂຄງການ, ມູນຄ່າເທົ່າກັບ .....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. ມາດຕະການ**

- ເປີດຂະບວນການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ຢ່າງກ້ວາງຂວາງ, ແທດເຖິງ ແລະ ເລິກເຊິ່ງ ດ້ວຍຫລາຍຮູບການ ເພື່ອປຸກຈິດສຳນຶກໃຫ້ຄົນໃນທົ່ວສັງຄົມ ເຫັນໄດ້ເຖິງພິດໄພ ແລະ ໝົນຮ້າຍຂອງຢາເສບຕິດ, ປຸກລະດົມໃຫ້ເຂົາເຈົ້າໄດ້ເປັນເຈົ້າການເຂົ້າຮ່ວມໃນການສະກັດກັ້ນ ແລະ ຕ້ານຢາເສບຕິດປະເພດຕ່າງໆ
- ລົງທຶນຈັດສັນພູມລຳເນົາບ່ອນທຳມາຫາກິນຕິດພັນກັບການຫັນເອົາປະຊາຊົນບັນດາເຜົ່າໄປປະກອບອາຊີບອື່ນທີ່ໝັ້ນຄົງ ເພື່ອທົດແທນການປູກຝິ່ນ
- ດຳເນີນການປິ່ນປົວຄົນຕິດຝິ່ນທີ່ຍັງເຫລືອໃຫ້ສຳເລັດໄດ້ໂດຍພື້ນຖານ ແລະ ສືບຕໍ່ປັບປຸງ ແລະ ນຳໃຊ້ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດແຫ່ງຕ່າງໆໃຫ້ມີປະສິດທິຜົນ
- ດຳເນີນການພົວພັນຮ່ວມມືກັບບັນດາປະເທດທີ່ມີຊາຍແດນຮ່ວມກັນ ເພື່ອພ້ອມກັນສະກັດກັ້ນ ແລະ ຕ້ານການຄ້າຂາຍ ແລະ ລຳລຽງຂົນສົ່ງຢາເສບຕິດ ແລະ ສານເຄມີຕົ້ນ ທີ່ເປັນເຄືອຂ່າຍເຊື່ອມຕໍ່ລະຫວ່າງປະເທດໃຫ້ມີປະສິດທິຜົນສູງ; ສືບຕໍ່ຍາດແຍ່ງການຊ່ວຍເຫລືອດ້ານທຶນຮອນຈາກສາກົນ ເພື່ອນຳມາໝັ້ນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດແຫ່ງຊາດ ເພື່ອຄວບຄຸມຢາເສບຕິດໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍ.

**2. ການແກ້ໄຂປະກົດການຫຍໍ້ທໍ້ອື່ນໆ**

**[1]. <u>ທິດທາງ:</u>**

ໄປຄຽງຄູ່ກັບໜ້າທ້າທາຍຂອງການພັດທະນາເສດຖະກິດໃນກົນໄກເສດຖະກິດຕະຫຼາດ ໄດ້ເກີດມີປະກົດການຫຍໍ້ທໍ້ຕ່າງໆທີ່ຫຼີກລ້ຽງບໍ່ໄດ້. ປະກົດການດັ່ງກ່າວເປັນການກົດໜ່ວງ ຖ່ວງດຶງ ບາດກ້າວການພັດທະນາ ແລະ ຄວາມເຫຼື້ອມໃສຂອງລະບອບໃໝ່. ດັ່ງນັ້ນ ການປ້ອງກັນ ແລະ ການແກ້ໄຂປະກົດການຫຍໍ້ທໍ້ ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ຕ້ອງສຸມໃສ່ດຳເນີນການຢ່າງແຂງແຮງ ໂດຍເຮັດແນວໃດໃຫ້ຜູ້ທີ່ປະຕິບັດຕາມລະບຽບກົດໝາຍໄດ້ຮັບການປົກປ້ອງ ແລະ ຜູ້ທີ່ລະເມີດລະບຽບກົດໝາຍຖືກລົງໂທດ; ຈຳກັດການແຜ່ຂະຫຍາຍປະກົດການຫຍໍ້ທໍ້ແຕ່ຫົວທີ ໂດຍການອີງໃສ່ປະຊາຊົນ, ມະຫາຊົນ ແລະ ທຸກພາກສ່ວນຂອງສັງຄົມເຂົ້າຮ່ວມໃນການແກ້ໄຂບັນຫາ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

1). ແກ້ໄຂບັນຫາຢາເສບຕິດໃຫ້ລຸດລົງ ກ້າວໄປເຖິງການສ້າງປະເທດລາວໃຫ້ປອດຈາກຢາເສບຕິດ ໃນປີ 2015.

2). ຈຳກັດ ແລະ ຕ້ານການສໍ້ລາດບັງຫຼວງໃນສັງຄົມ ດ້ວຍການສຶກສາອົບຮົມແນວຄິດໃຫ້ທຸກຄົນມີຄຸນສົມບັດສິນທຳປະຕິວັດ, ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ ແລະ ມີລະບົບຕິດຕາມກວດກາ ຢ່າງເປັນລະບົບປົກກະຕິ.

3). ຫລຸດຜ່ອນການເກີດອຸປະຕິເຫດ ດ້ວຍການໂຄສະນາ ເຜີຍແຜ່ໃຫ້ທຸກຄົນປະຕິບັດກົດລະບຽບຈໍລະຈອນຢ່າງເຄັ່ງຄັດ ແລະ ຈຳກັດຄວາມມຶນເມົາສຸລາ.

4). ແກ້ໄຂບັນຫາປະກົດການການເລື້ອມລ້ຳໃນສັງຄົມ ກໍຄືການຫລຸດໂຕນດ້ານລາຍໄດ້ ຂອງກຸ່ມຄົນ ແລະ ຫລຸດຜ່ອນໄລຍະຫ່າງກັນ ແລະ ຫລຸດໂຕນລະຫວ່າງເຂດແຄວ້ນ, ຕົວເມືອງ-ຊົນນະບົດ.

5). ແກ້ໄຂບັນການຫວ່າງງານໃຫ້ພົນລະເມືອງດ້ວຍການຈັດຫາງານຕາມລະດູການໃຫ້ຊາວຊົນນະບົດ ແລະ ການກັບຄືນຂອງແຮງງານລາວຈາກຕ່າງປະເທດ, ລະດົມທຶນພັດທະນາສີມືແຮງງານໃນກິດຈະການຂອງຕົນຢ່າງມີມາດຖານຄົບຖ້ວນ.

6). ປ້ອງກັນ ແລະ ແກ້ໄຂປະກົດການໂສເພນີ, ການປຸ້ນຈີ້ ແລະ ປະກົດຫລີ້ນກົນຟູມເຟືອຍດ້ວຍການສຶກສາອົບຮົມ, ການກ່າວເຕືອນ ແລະ ດຳເນີນການຕາມລະບຽບກົດໝາຍ.

## 2.3. ການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການພັດທະນາແບບຍືນຍົງ

**[1]. <u>ທິດທາງ:</u>**

ຮັບປະກັນໃຫ້ການພັດທະນາເສດຖະກິດທີ່ຍືນຍົງ ສົມຄູ່ກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາສັງຄົມ ໂດຍການນຳໃຊ້ຊັບພະຍາກອນທຳມະຊາດຢ່າງສົມເຫດສົມຜົນ ແລະ ມີປະສິດທິຜົນ; ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດຊຽວທີ່ຮັບປະກັນການປ່ອຍກາກບອນຕ່ຳ, ເອົາໃຈໃສ່ຄວາມປອດໄພຂອງຊຸມຊົນອ້ອມຂ້າງການຜະລິດ ທຸລະກິດ ດ້ວຍການດຳເນີນມາດຕະການປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມ ເຮັດໃຫ້ປະຊາຊົນບັນດາເຜົ່າດຳລົງຊີວິດຢູ່ໃນສິ່ງແວດລ້ອມສີຂຽວ, ສະອາດ, ງາມຕາ ແລະ ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ພິເສດແມ່ນໄພນ້ຳຖ້ວມ ແລະ ແຫ້ງແລ້ງ, ໂລກຮ້ອນ ເພື່ອສ້າງໃຫ້ໄດ້ການພັດທະນາທີ່ຍືນຍົງ.

ຊຸກຍູ້ສົ່ງເສີມຝຫ້ບັນດາໂຄງການລົງທຶນດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຢ່າງມີຄຸນນະພາບ; ພ້ອມທັງສົ່ງເສີມ ແລະ ດຳເນີນການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານຢູ່ພາຍ ໃນປະເທດ ໂດຍຕິດພັນສະໜິດແໜ້ນກັບການພັດທະນາ ແລະ ນຳໃຊ້ຊັບພະຍາກອນນ້ຳໃນອ່າງແມ່ນ້ຳຂອງ ຕອນລຸ່ມ ແລະ ກັບບັນດາປະເທດຄູ່ຮ່ວມເຈລະຈາໃນອ່ງແມ່ນ້ຳຂອງຕອນເທິງ.

ປັບປຸງຂໍ້ມູນຂ່າວສານອຸຕຸນິຍົມ-ອຸທົກກະສາດ (ຂ່າວສານສະພາບອາກາດ ແລະ ນ້ຳ) ໃຫ້ເປັນລະບົບ ພ້ອມສະໜອງຂໍ້ມູນທີ່ຊັດເຈນ ແລະ ທັນການ ເພື່ອກະກຽມການເຕືອນໄພລ່ວງໜ້າຢູ່ໃນເຂດທີ່ມີຄວາມສ່ຽງ, ສົ່ງເສີມການຄົ້ນຄວ້າວິໄຈ ແລະ ເພີ່ມທະວີການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາ ກົນ ແລະ ສະຖາບັນການເງິນສາກົນໃນຂົງເຂດວຽກງານຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ອຸຕຸນິຍົມ-ອຸທົກ ກະສາດແລະການປ່ຽນແປງດິນຟ້າອາກາດ, ການຮ່ວມມືໃນອ່າງແມ່ນ້ຳຂອງກໍ່ຄືການຈັດຕັ້ງປະຕິບັດສົນທິສັນ ຍາສາກົນຢ່າງຕັ້ງໜ້າ.

**[2]. <u>ຄາດໝາຍຕົ້ນຕໍ ແລະ ມາດຕະການ:</u>**

1. <u>ຂົງເຂດຊັບພະຍາກອນນ້ຳ, ອຸຕຸນິຍົມ ອຸທົກກະສາດ:</u>

- ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ແຜນດຳເນີນງານ ແລະ ບັນດານິຕິກຳຕ່າງໆກ່ຽວກັບ ຊັບພະຍາກອນນ້ຳ ເພື່ອຮັບປະກັນເຮັດໃຫ້ການນຳໃຊ້ຊັບພະຍາກອນນ້ຳໄດ້ຮັບປະໂຫຍດສູງສຸດ ແລະ ສົ່ງຜົນ ກະທົບຕໍ່ລະບົບນິເວດໜ້ອຍທີ່ສຸດ ພ້ອມທັງຮັກສາປ່າຍອດນ້ຳ.
- ດຳເນີນການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານໃນລະດັບອ່າງແມ່ນ້ຳ ແລະ ສ້າງຕັ້ງຄະ ນະກຳມະການອ່າງແມ່ນ້ຳ ໃຫ້ໄດ້ 5 ອ່າງ: ນ້ຳງື່ມ, ນ້ຳເທີນ-ກະດິງ, ເຊບັ້ງໄຟ, ເຊບັ້ງໜຽງ ແລະ ເຊກອງ. ພ້ອມດຽວກັນນັ້ນ ສ້າງຕັ້ງກອງທຶນຄຸ້ມຄອງ ແລະ ພັດທະນາອ່າງແມ່ນ້ຳ ໂດຍອີງໃສ່ຫລັກການຜູ້ສ້າງຜົນ ກະທົບເປັນຜູ້ຈ່າຍ.
- ສ້າງ ແລະ ປັບປຸງລະບົບນິຕິກຳໃຫ້ເປັນລະບົບຄົບຊຸດ ເປັນຕົ້ນ: ປັບປຸງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ, ສ້າງ ແລະ ຈັດຕັ້ງປະຕິບັດແຜນການລະອຽດກ່ຽວກັບບັນດາເອກະສານທາງດ້ານ ນິຕິກຳ ເພື່ອຮັບໃຊ້ການພັດທະນາ ແລະ ຄຸ້ມຄອງຊັບພະຍາກອນນ້ຳໃຫ້ມີຄວາມຍືນຍົງ.
- ເຂົ້າຮ່ວມຢ່າງຕັ້ງໜ້າໃນການເຄື່ອນໄຫວຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ຄູ່ຮ່ວມ ງານສາກົນ ເພື່ອຄຸ້ມຄອງ ແລະ ພັດທະນາຊັບພະຍາກອນນ້ຳໃຫ້ມີຄວາມຍືນຍົງ.
- ສ້າງນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃນວຽກງານອຸຕຸນິຍົມ ແລະ ອຸທົກກະສາດ; ປັບປຸງ ແລະ ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ, ອຸທົກກະສາດ, ອຸຕຸການບິນ, ສະຖານີວັດແທກອາກາດຍານສູງໃຫ້ ໄດ້ມາດຕະຖານ ເພື່ອແນໃສ່ການສະໜອງຂໍ້ມູນທີ່ມີຄຸນນະພາບດີກວ່າເກົ່າ.
- ປະເມີນຄວາມຕ້ອງການ ແລະ ດຳເນີນການສ້າງຕັ້ງລະບົບເຕືອນໄພລ່ວງໜ້າຢູ່ບັນດາພື້ນທີ່ທີ່ມີ ຄວາມສ່ຽງສູງ ເປັນຕົ້ນ ແຂວງຫລວງນ້ຳທາ, ໄຊຍະບູລີ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື

2. <u>ຂົງເຂດສິ່ງແວດລ້ອມ:</u>

- ປັບປຸງກົງຈັກການຈັດຕັ້ງ ແລະ ສ້າງຄວາມເຂັ້ມແຂງດ້ານວິຊາການ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ສາມາດດຳເນີນວຽກງານວິຊາສະເພາະຂອງຕົນໃຫ້ມີປະສິດທິຜົນກວ່າເກົ່າ; ສ້າງຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຫ້ອງການຕິດຕາມກວດກາ ສິ່ງແວດລ້ອມ ຢູ່ 25 ຕົວເມືອງ.
- ປັບປຸງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ສ້າງນິຕິກຳອື່ນທີ່ຕິດພັນກັບການຄວບຄຸມມົນລະພິດ ເພື່ອບັງຄັບໃຊ້ຕາມມາດຕະຖານສິ່ງແວດລ້ອມ ແລະ ການຄຸ້ມຄອງສານເຄມີ.
- ສົ່ງເສີມໃຫ້ທຸກໂຄງການລົງທຶນຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຢ່າງເຂັ້ມງວດ; ດຳເນີນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງບັນດາໂຄງການພັດທະນາຢ່າງເປັນລະບົບ ແລະ ມີປະສິດທິຜົນກວ່າເກົ່າ.
- ສືບຕໍ່ແກ້ໄຂບັນຫາທີ່ເຄັ່ງຮ້ອນ ແລະ ພົ້ນເດັ່ນ ທີ່ເກີດຂຶ້ນໃນໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ ຈຳນວນໜຶ່ງໃຫ້ສຳເລັດ ລວມທັງການຄວບຄຸມການນຳໃຊ້ສານເຄມີ, ການກຳຈັດສິ່ງເສດເຫຼືອ, ມົນລະພິດ, ຂີ້ຝຸ່ນໃນຕົວເມືອງນ້ອຍ-ໃຫຍ່, ຕາມເສັ້ນທາງຫຼວງ, ແມ່ນ້ຳລຳເຊ, ຫ້ວຍຮອງໜອງບຶງ ແລະ ຄອງລະບາຍນ້ຳ.
- ສົ່ງເສີມ ແລະ ພັດທະນາ ການຄົ້ນຄວ້າວິໃຈ, ສ້າງຫ້ອງທົດລອງແຫ່ງຊາດ ໃຫ້ກາຍເປັນຫ້ອງທົດລອງຕົວແບບ ແລະ ຂະຫຍາຍໄປສູ່ການສ້າງຫ້ອງທົດລອງຢູ່ບັນດາແຂວງ ຫລື ພາກ ທີ່ມີໂຄງການພັດທະນາ ກໍ່ຄືຂະຫຍາຍຕາໜ່າງຫ້ອງສະໝຸດ ແລະ ຝຶກອົບຮົມປະຈຳພາກ, ແຂວງ ແລະ ບາງເມືອງຈຸດສຸມ.
- ສົ່ງເສີມໃຫ້ຂະແໜງການສຶກສາ ນຳເອົາວິຊາສິ່ງແວດລ້ອມ ເຂົ້າໃນຫຼັກສູດການສອນໃນທຸກລະດັບ, ຊຸກຍູ້ ສົ່ງເສີມຂະບວນການສ້າງປະເທດລາວໃຫ້ເປັນປະເທດສີຂຽວ, ສະອາດ ແລະ ງາມຕາ ດ້ວຍຫຼາຍຮູບການ ເປັນຕົ້ນ ຂະບວນການໂຮງຮຽນຂຽວ, ການສ້າງຈິດສຳນຶກແກ່ສັງຄົມ ໃຫ້ນັບມື້ນັບກວ້າງຂວາງ
- ປັບປຸງ ແລະ ເສີມຂະຫຍາຍກົນໄກດ້ານການເງິນ ເພື່ອຮອງຮັບການເຄື່ອນໄຫວວຽກງານວິຊາສະເພາະໃຫ້ໝັ້ນຄົງຂຶ້ນເທື່ອລະກ້າວ.
- ເພີ່ມທະວີການຮ່ວມມືສາກົນ, ເຂົ້າຮ່ວມການເຄື່ອນໄຫວ ແລະ ເຈລະຈາໃນເວທີສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານວິຊາການ ແລະ ທຶນຮອນມາສະໜັບສະໜູນການເຄື່ອນໄຫວວຽກງານສິ່ງແວດລ້ອມໃນ ສປປ ລາວ.

3. <u>ຂົງເຂດການປ່ຽນແປງດິນຟ້າອາກາດ:</u>

- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຫຼັກ ເຊັ່ນ: ກະສິກຳ, ປ່າໄມ້, ພະລັງງານ, ອຸທົກກະສາດ, ໂຄງລ່າງຕົວເມືອງ, ອຸດສະຫະກຳ ແລະ ສາທາລະນະສຸກ ເພື່ອດຳເນີນການຄົ້ນຄວ້າທີ່ເລິກເຊິ່ງກ່ຽວກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ແຫຼ່ງປ່ອຍອາຍພິດເຮືອນແກ້ວ, ກຳນົດທາງເລືອກທີ່ເໝາະສົມໃນການປັບຕົວ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ສ້າງເປັນແຜນງານ 5 ປີ ຄັ້ງທີ 1 (2011-2015) ເພື່ອຜັນຂະຫຍາຍຍຸດທະສາດວ່າດ້ວຍການປ່ຽນແປງດິນຟ້າອາກາດ ໃຫ້ຕິດພັນກັບແຜນພັດທະນາຂະແໜງການຂ້າງເທິງນີ້, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຍຸດທະສາດການລຶບລ້າງຄວາມທຸກຍາກແຫ່ງຊາດ.
- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງປັບປຸງ ແລະ ເຊື່ອມສານລະບົບນິຕິກຳທີ່ກ່ຽວກັບການປ່ຽນແປງດິນຟ້າອາກາດ ເປັນຕົ້ນ: ລະບຽບການກ່ຽວກັບການປ່ອຍອາຍພິດເຮືອນແກ້ວ ແລະ ການນຳໃຊ້ເຕັກໂນໂລຍີສະອາດທີ່ເປັນມິດຕໍ່ສິ່ງແວດລ້ອມເຂົ້າໃນລະບົບນິຕິກຳຂອງຂະແໜງການທີ່ກ່ຽວຂ້ອງ.

- ສ້າງຕັ້ງກົນໄກ ແລະ ສົ່ງເສີມການພັດທະນາສະອາດ (CDM) ແລະ ສິນເຊື່ອການກ່ອນ (C) ໂດຍຮັບປະກັນ ໃຫ້ເກີດຜົນປະໂຫຍດສູງສຸດ ແກ່ສປປ ລາວ.
- ສົ່ງເສີມການຄົ້ນຄວ້າວິໄຈ, ສ້າງຖານຂໍ້ມູນ, ສະຖິຕິ ແລະ ການຄາດຄະເນລ່ວງໜ້າກ່ຽວກັບການປ່ຽນແປງດິນຟ້າອາກາດ ໂດຍການສ້າງຕັ້ງລະບົບເຕືອນໄພລ່ວງໜ້າ ແລະ ຕິດຕັ້ງຕົວແບບຈຳລອງຕິດຕາມສະພາບການປ່ຽນແປງດິນຟ້າອາກາດກັບຕົວຊີ້ບອກທີ່ກ່ຽວຂ້ອງອື່ນໆ.
- ນຳເອົາການສຶກສາກ່ຽວກັບວິທະຍາສາດດ້ານຊັ້ນບັນຍາກາດ, ລະບົບພູມອາກາດ(ລະດູການຕ່າງໆ), ສະພາບອຸນະພູມສະເລ່ຍຂອງໂລກ, ສະພາບການປ່ຽນແປງດິນຟ້າອາກາດ ເຂົ້າໃນລະບົບການສຶກສາສາມັນໃນທຸກລະດັບຕາມຄວາມເໝາະສົມ ຄຽງຄູ່ກັນນັ້ນ ກໍ່ສົ່ງເສີມວຽກງານການສ້າງຈິດສຳນຶກໃຫ້ແກ່ມວນຊົນກ່ຽວກັບບັນຫາດັ່ງກ່າວ.
- ເຂົ້າຮ່ວມການເຈລະຈາໃນເວທີສາກົນ, ສູ້ຊົນຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ, ທາງດ້ານທຶນຮອນ ເພື່ອສະໜອງໃຫ້ແກ່ການເຄື່ອນໄຫວປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ການຫລຸດຜ່ອນຜົນກະທົບການປ່ອຍອາຍພິດເຮືອນແກ້ວໃນ ສປປ ລາວ.

4. <u>ວຽກງານຄຸ້ມຄອງໄພພິບັດ:</u>

- ສຸມໃສ່ທັນຈາກການແກ້ໄຂການຊ່ວຍເຫຼືອບັນເທົາທຸກ ແລະ ຟື້ນຟູຫຼັງຈາກໄພພິບັດ ມາເປັນການຫ້າງຫາກະກຽມຄວາມພ້ອມ ເພື່ອຕ້ານກັບໄພພິບັດ ເປັນຕົ້ນ ໄພນ້ຳຖ້ວມ, ແຫ້ງແລ້ງ, ດິນເຈື່ອນ ແລະ ອັກຄີໄພ.
- ສຸມໃສ່ສ້າງຂີດຄວາມສາມາດ ແລະ ການມີສ່ວນຮ່ວມຂອງຊຸມຊົນໃຫ້ຫຼາຍຂຶ້ນ ໂດຍເອົາຊຸມຊົນເປັນໃຈກາງ ແລະ ເປັນເຈົ້າການໃນການແກ້ໄຂບັນຫາໄພພິບັດ.
- ສຸມໃສ່ການສ້າງລະບົບເຕືອນໄພລ່ວງໜ້າໂດຍເອົາໃຈໃສ່ປັບປຸງ ແລະ ຂະຫຍາຍລະບົບຕາໜ່າງສະຖານີເກັບກຳຂໍ້ມູນອຸຕຸນິຍົມ ແລະ ອຸທົກກະສາດໃນເຂດສ່ຽງໄພ ແລະ ຕາມອ່າງແມ່ນ້ຳໃນທົ່ວປະເທດ.
- ເອົາໃຈໃສ່ເກັບກຳຂໍ້ມູນອຸຕຸນິຍົມ ແລະ ອຸທົກກະສາດ ພ້ອມທັງຕິດຕາມການພະຍາກອນອາກາດ ແລະ ນ້ຳໃຫ້ຊັດເຈນ ເພື່ອການອອກຂ່າວເຕືອນໄພສະພາບສຸກເສີນທາງດ້ານສະພາບອາກາດ ແລະ ນ້ຳໄດ້ທັນເວລາ.
- ສ້າງລະບົບສາງ ເພື່ອເກັບເຄື່ອງບັນເທົາທຸກສຸກເສີນ ທີ່ຈຳເປັນຢູ່ແຕ່ລະພາກ ແລະ ບາງແຂວງທີ່ມີຄວາມສ່ຽງສູງກັບການເກີດໄພພິບັດ ເພື່ອຮັບປະກັນໃນການຊ່ວຍເຫຼືອປະຊາຊົນຜູ້ປະສົບໄພພິບັດໄດ້ຢ່າງທັນການ ແລະ ການຟື້ນຟູໄພພິບັດຢ່າງມີປະສິດທິຜົນ.
- ປະສານງານ ແລະ ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ, ອຳນາດການປົກຄອງທ້ອງຖິ່ນ, ອົງກອນເສດຖະກິດທັງພາກລັດ ແລະ ເອກະຊົນ ເພື່ອພ້ອມກັນຈັດຕັ້ງປະຕິບັດແຜນຍຸດທະສາດຫລຸດຜ່ອນໄພພິບັດ ແລະ ແກ້ໄຂບັນຫາລະເບີດທີ່ຍັງບໍ່ທັນແຕກໃຫ້ສຳເລັດຜົນ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ໃນການປົກປັກຮັກສາສິ່ງແວດລ້ອມ, ການພັດທະນາ ຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປ້ອງກັນໄພພິບັດ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ ..... ແຜນງານ.....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

# 3. ການພັດທະນາວິສາຫະກິດ

ພັດທະນາທຸກພາກສ່ວນເສດຖະກິດ ແລະ ບັນດາທຸລະກິດຢ່າງກົມກຽວ ແລະ ເປັນລະບົບ, ເອົາໃຈໃສ່ ປັບປຸງ, ຊຸກຍູ້ສົ່ງເສີມ ແລະ ຍົກສູງບົດບາດທີ່ສຳຄັນຂອງລັດວິສາຫະກິດ ໃນການເປັນເຈົ້າພາບໃນທຸກ ພາກສ່ວນເສດຖະກິດ ເພື່ອຮັກສາສະເຖຍລະພາບທາງດ້ານເສດຖະກິດມະຫາພາກ, ສ້າງເງື່ອນໄຂ ແລະ ຂໍ້ ສະດວກໃນການກະຕຸກຊຸກຍູ້ທຸກພາກສ່ວນເສດຖະກິດ ລວມທັງການລົງທຶນຂອງພາກເອກະຊົນໃຫ້ເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວໄວ, ດຳເນີນຕາມລະບຽບກົດໝາຍທີ່ກຳນົດໄວ້ ເພື່ອໃຫ້ກາຍເປັນພະລັງທີ່ສຳຄັນ ໃນລະບົບເສດຖະກິດ, ສ້າງເງື່ອນໄຂສະດວກໃຫ້ແກ່ການລົງທຶນໂດຍກົງຂອງເອກະຊົນຕ່າງປະເທດໃຫ້ມາລົງ ທຶນຫຼາຍຂຶ້ນ, ເຂັ້ມແຂງຂຶ້ນ ແລະ ສອດຄ່ອງຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

## 3.1. ວິສາຫະກິດຂອງລັດ

**[1]. <u>ທິດທາງ:</u>**

ສ້າງວິສາຫະກິດຂອງລັດໃຫ້ເຂັ້ມແຂງ ແລະ ກາຍເປັນເຈົ້ານຳໜ້າພາທາງໃນທຸກພາກສ່ວນເສດຖະກິດ ຢ່າງແທ້ຈິງ ເພື່ອປະຕິບັດພາລະບົດບາດທີ່ສຳຄັນໃນລະບົບເສດຖະກິດຕະຫລາດຕາມທິດສັງຄົມນິຍົມ ແລະ ຮັບປະກັນໃຫ້ເສດຖະກິດມະຫາພາກມີສະເຖຍລະພາບ.

ປັບປຸງ ແລະ ພັດທະນາວິສາຫະກິດຂອງລັດຄືນໃໝ່ ໂດຍເລັ່ງໃສ່ຖານະການເງິນ, ການຈັດຕັ້ງ-ບຸກ ຄະລາກອນ ແລະ ການຄຸ້ມຄອງບໍລິຫານ ເພື່ອກ້າວໄປສູ່ການຫັນເປັນລະບົບບໍລິສັດຂອງລັດທີ່ເຂັ້ມແຂງຮອບ ດ້ານ ພ້ອມທັງຮັບປະກັນໃຫ້ການດຳເນີນທຸລະກິດມີປະສິດທິຜົນສູງ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ສ້າງແຜນຍຸດທະສາດການພັດທະນາວິສາຫະກິດ-ທຸລະກິດຂອງລັດ ແລະ ກຳນົດຄືນໃຫ້ຈະແຈ້ງ ພາລະບົດບາດຂອງບໍລິສັດ ເຊັ່ນ: ດຳເນີນທຸລະກິດເພື່ອຫາກຳໄລ ແລະ ຮັບໃຊ້ໜ້າທີ່ການເມືອງຕາມແນວ ທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ເປີດກວ້າງສິດເປັນເຈົ້າຕົນເອງ ແລະ ຄວາມຮັບຜິດຊອບ ຕໍ່ຊັບສິນຂອງລັດທີ່ມອບໃຫ້.

- ຈັດຕັ້ງ ແລະ ພັດທະນາບັນດາກຸ່ມວິສາຫະກິດເພື່ອສ້າງຖານກຳລັງແຮງທາງດ້ານຊັບສິນ, ຄວາມຮູ້ ສະຕິປັນຍາ ແລະ ເຕັກນິກວິທະຍາການຕ່າງໆທີ່ສາມາດແຂ່ງຂັນໃນຕະຫຼາດພາຍໃນ ແລະ ສາກົນ ເຊັ່ນ: ກຸ່ມ ການຜະລິດ-ການບໍລິການ ແລະ ການກໍ່ສ້າງ ໃຫ້ເຕີບໃຫຍ່ຂະຫຍາຍຕົວຕາມກົນໄກຕະຫຼາດທີ່ມີການວາງ ແຜນ.

- ຈັດຕັ້ງປະຕິບັດ ແລະ ກວດກາ-ດັດແກ້ ບັນດານິຕິກຳຕ່າງໆ ທີ່ຕິດພັນເຖິງທຸລະກິດ-ວິສາຫະກິດ ໃຫ້ສອດຄ່ອງກັບແນວທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ ທັງໃຫ້ສອດຄ່ອງກັບກົນໄກເສດຖະ

ກິດຕະຫຼາດ; ສ້າງເງື່ອນໄຂ ແລະ ກາລະໂອກາດອັນສະດວກໃຫ້ແກ່ການເຄື່ອນໄຫວທຸລະກິດ-ວິສາຫະກິດ ເທື່ອລະກ້າວ.

- ດຳເນີນການສຳຫຼວດກວດກາເພື່ອຈັດຕັ້ງຄືນໃໝ່, ວິສາຫະກິດຂອງລັດ ອັນໃດທີ່ເປັນຍຸດທະສາດ, ອັນໃດຄວນຮັກສາໄວ້ເປັນຂອງລັດ 100%, ອັນໃດຄວນຫັນເປັນວິສາຫະກິດປະສົມ ແລະ ຫຸ້ນສ່ວນ, ອັນໃດ ຄວນປັບປຸງໃຫ້ມີປະສິດທິພາບສູງຂຶ້ນ, ອັນໃດຄວນຫັນໄປສູ່ຮູບການອື່ນ, ອັນໃດຄວນຍຸບເລີກ ຫຼື ປະກາດລົ້ມ ລະລາຍ.

- ຄົ້ນຄວ້າສ້າງຕັ້ງບໍລິສັດທີ່ເປັນຍຸດທະສາດ ໂດຍທີ່ລັດຈະຕ້ອງລົງທຶນ 100%. ວິສາຫະກິດທີ່ລັດຖືຫຸ້ນ 51% ຂຶ້ນໄປ ລັດຈະຕ້ອງເປັນເຈົ້າການໃນການຄຸ້ມຄອງບໍລິຫານໂດຍກົງ ເຊັ່ນ: ອຸດສາຫະກຳປ້ອງກັນ ຊາດ, ອຸດສາຫະກຳຜະລິດໄຟຟ້າ, ອຸດສາຫະກຳຜະລິດວັດຖຸກໍ່ສ້າງ, ບໍລິສັດທັນຍາຫານ, ສື່ສານ, ໂທລະຄົມ, ການບິນ ແລະ ວິສາຫະກິດຍຸດທະສາດອື່ນໆ.

- ສ້າງໃຫ້ໄດ້ບັນດາວິສາຫະກິດທີ່ເຂັ້ມແຂງທຸກດ້ານ, ເປີດກວ້າງທຸລະກິດປະສົມພາຍໃນ ແລະ ກັບ ຕ່າງປະເທດ, ສ້າງທຸກເງື່ອນໄຂໃຫ້ທຸລະກິດ-ວິສາຫະກິດຂອງທຸກພາກສ່ວນເສດຖະກິດຕ່າງໆປະຕິບັດຕາມ ລະບຽບກົດໝາຍຂອງລັດຢ່າງຄົບຖ້ວນ, ເຂັ້ມງວດ ແລະ ຖືກຕ້ອງ.

- ສູ້ຊົນໃຫ້ລັດມອບສິດເປັນເຈົ້າຢ່າງຂາດຕົວຕໍ່ຊັບສິນ-ທຶນຮອນທີ່ລັດມອບໃຫ້ບໍລິສັດລັດ ເພື່ອຄວາມ ສະດວກໃນການດຳເນີນທຸລະກິດຕາມເປົ້າໝາຍ, ແນວທາງ ແລະ ກົດໝາຍຂອງລັດ.

- ສຸມໃສ່ກໍ່ສ້າງ ແລະ ຂະຫຍາຍໃຫ້ໄດ້ກຳລັງການຜະລິດໃນບັນດາພາກສ່ວນເສດຖະກິດຕ່າງໆຢ່າງ ແຂງແຮງ ແລະ ຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດ ທີ່ມີພື້ນຖານເຕັກນິກທີ່ທັນສະໄໝ, ມີສີມື ແຮງງານເກັ່ງ ໂດຍເລີ່ມຈາກຫົວໜ່ວຍຄອບຄົວ, ບ້ານ ແລະ ຫົວໜ່ວຍທຸລະກິດຂຶ້ນມາ.

- ສູ້ຊົນເປີດກວ້າງ ແລະ ແບ່ງຂັ້ນຄຸ້ມຄອງລັດວິສາຫະກິດ-ວິສາຫະກິດປະສົມພາຍໃນ ແລະ ຕ່າງ ປະເທດ, ທຸລະກິດຮ່ວມມືປະຊາຊົນຢູ່ໃນຂະແໜງການ ແລະ ທ້ອງຖິ່ນຢ່າງຊັດເຈນ ຕາມເຈົ້າທຶນ-ຂະໜາດທຶນ ແລະ ເຕັກນິກຢ່າງຂາດຕົວຕາມແຕ່ລະໄລຍະຂອງການພັດທະນາ.

- ສູ້ຊົນສ້າງໃຫ້ໄດ້ແຜນຍຸດທະສາດການພັດທະນາທຸລະກິດ-ວິສາຫະກິດທຸກພາກສ່ວນ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ການພັດທະນາວິສາຫະກິດຂອງລັດ ຈະຕ້ອງສຸມ ໃສ່ຈັດຕັ້ງປະຕິບັດ..... ແຜນງານ.....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານ ຊ້ອນທ້າຍທີ.....).

**[4]. <u>ມາດຕາການ:</u>**

– ສຶກສາອົບຮົມໃຫ້ທຸກພາກສ່ວນທີ່ມີໜ້າທີ່ຊີ້ນຳ, ຄຸ້ມຄອງ ແລະ ສົ່ງເສີມ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວ ກັບກົນໄກເສດຖະກິດຕະຫຼາດທີ່ມີການວາງແຜນ ເພື່ອສ້າງຄວາມເປັນເອກະພາບ ແລະ ພ້ອມກັນຕັດສິນໃຈສູ້ ຊົນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ແລະ ສອດຄ່ອງກັບແນວທາງ ແລະ ນະໂຍບາຍຂອງລັດຖະບານ.

– ຕ້ອງຫັນທິດທາງ, ເປົ້າໝາຍ, ຄາດໝາຍສູ້ຊົນ ແລະ ແຜນງານທີ່ວາງອອກໃຫ້ເປັນນິຕິກຳ ແລະ ແຜນການລະອຽດ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນທັງຢູ່ສູນກາງ ແລະ ທ້ອງຖິ່ນ.

– ຕ້ອງມີຄວາມຕັດສິນໃຈສູງໃນການລົງທຶນເຂົ້າໃສ່ບາງທຸລະກິດທີ່ເປັນຂໍ້ກຸນແຈສຳຄັນ ແລະ ເປັນເຈົ້າພາທາງໃຫ້ແກ່ວິສາຫະກິດອື່ນໆ, ພ້ອມທັງ ປຸກລະດົມທຸກພາກສ່ວນທຸລະກິດເຂົ້າຮ່ວມໃນຂະບວນກໍ່ສ້າງເສດຖະກິດຢ່າງມີປະສິດທິຜົນສູງ.

– ສ້າງໃຫ້ມີອົງກອນ, ກົງຈັກຊ່ວຍວຽກທີ່ເຂັ້ມແຂງ ສອດຄ່ອງກັບການຂະຫຍາຍຕົວຂອງກຳລັງການຜະລິດ, ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ເພື່ອເຮັດໜ້າທີ່ຄຸ້ມຄອງຕໍ່ວິສາຫະກິດທັງຂັ້ນມະຫາພາກ ແລະ ຈຸນລະພາກ.

– ມີລະບົບປະສານງານ ແລະ ແບ່ງຂັ້ນຄຸ້ມຄອງທີ່ຈະແຈ້ງລະຫວ່າງບັນດາກະຊວງ ຂະແໜງການ ແລະ ທ້ອງຖິ່ນ ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ສົ່ງເສີມວິສາຫະກິດສາມາດເຄື່ອນໄຫວຢ່າງມີປະສິດທິຜົນ ແລະ ກ້າວເຂົ້າສູ່ລະບົບບໍລິສັດທີ່ມີຄວາມເຂັ້ມແຂງຮອບດ້ານ ສາມາດແກ່ງແຍ່ງຕະຫຼາດພາຍໃນ ແລະ ສາກົນໄດ້.

## 3.2. ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs):

### [1]. <u>ທິດທາງ</u>:

ສ້າງ ແລະ ປັບປຸງໃຫ້ບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວ ແລະ ສາມາດເຊື່ອມໂຍງເຂົ້າກັບເສດຖະກິດໃນຂະບວນການຜະລິດ ແລະ ແລກປ່ຽນສິນຄ້າ ຂອງພູມີພາກ ແລະ ສາກົນ ແລະ ສາມາດແຂ່ງຂັນພາຍໃຕ້ຂອບການເປີດເສລີທາງການຄ້າ ເປັນຕົ້ນແມ່ນ ການສ້າງປະຊາຄົມເສດຖະກິດອາຊຽນ ພາຍໃນປີ 2015.

### [2]. <u>ຄາດໝາຍຕົ້ນຕໍ:</u>

- ສູ້ຊົນໃຫ້ອັດຕາການຂະຫຍາຍຕົວຂອງຜົນຜະລິດ ສະເລ່ຍບັນລຸ 15% ຕໍ່ປີຂຶ້ນໄປ.
- ສູ້ຊົນໃຫ້ອັດຕາການຂະຫຍາຍຕົວຂອງຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະ ກາງ ຂຶ້ນທະບຽນ 13% ຕໍ່ປີຂຶ້ນໄປ.
- ສູ້ຊົນໃຫ້ອັດຕາການສ້າງວຽກເຮັດງານທຳ ເພີ່ມຂຶ້ນ 10% ຕໍ່ປີຂຶ້ນໄປ.
- ສູ້ຊົນໃຫ້ອັດຕາສ່ວນແຮງງານໃນວິສາຫະກິດຂະໜາດນ້ອຍ ແລະ ກາງ ກວມເອົາຫຼາຍກວ່າ 85% ຂອງ ຈຳນວນແຮງງານທັງໝົດໃນຂົງເຂດທຸລະກິດ.

ເພື່ອສຳເລັດຄາດໝາຍດັ່ງກ່າວ ຕ້ອງສຸມໃສ່ບັນດາວຽກງານຈຸດສຸມດັ່ງນີ້:

– ປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງລັດຕໍ່ການເຄື່ອນໄຫວທຸລະກິດ ໂດຍການທົບທວນ ແລະ ປັບປຸງບັນດາລະບຽບການ ແລະ ວິທີປະຕິບັດທີ່ເປັນອຸປະສັກຕໍ່ການຈັດຕັ້ງ ແລະ ການດຳເນີນທຸລະກິດ, ພິຈາລະນາສ້າງກົນໄກທີ່ເໝາະສົມໃນການປະເມີນຜົນກະທົບຂອງບັນດາລະບຽບການໃນຂົງເຂດເສດຖະກິດທີ່ສ້າງຂຶ້ນແລ້ວ ແລະ ກຳລັງຈະສ້າງຂຶ້ນໃໝ່.

– ປັບປຸງການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງໂດຍການເພີ່ມຄວາມສາມາດຂອງສະຖາບັນການເງິນທີ່ໃຫ້ບໍລິການສິນເຊື່ອ, ພັດທະນາໃຫ້ມີຜະລິດຕະພັນ ແລະ ການບໍລິການດ້ານການເງິນໃຫ້ມີຫຼາຍຮູບຫຼາຍສີ ໂດຍສະເພາະແມ່ນວິທີການສະໜອງສິນເຊື່ອທີ່ບໍ່ອາໄສຫຼັກຊັບຄ້ຳປະກັນ ແລະ ມີໄລ

ຍະຍາວ ເຊັ່ນ: ການຄ້ຳປະກັນເງິນກູ້, ກອງທຶນເພື່ອລົງທຶນຮ່ວມ, ການເຊົ່າຊື້ອຸປະກອນ ແລະ ພາຫະນະການຜະລິດ.

– ກໍ່ສ້າງຜູ້ປະກອບການໃໝ່ໂດຍການຊຸກຍູ້, ສົ່ງເສີມໃຫ້ຊາວໜຸ່ມ, ປັນຍາຊົນ, ແມ່ຍິງເຂົ້າມາມີບົດບາດເປັນຜູ້ປະກອບການເພີ່ມຂຶ້ນ, ສ້າງໃຫ້ມີສູນບ່ົມເພາະທຸລະກິດ, ມີກົນໄກໃນການສົ່ງເສີມການສຳປະທານທຸລະກິດ SME, ສະໜອງການຝຶກອົບຮົມ ແລະ ໃຫ້ການປຶກສາແບບຄົບວົງຈອນແກ່ຜູ້ເລີ່ມຕົ້ນທຸລະກິດໃໝ່.

– ເພີ່ມທະວີການໃຫ້ຄວາມຊ່ວຍເຫຼືອ ແລະ ການບໍລິການພັດທະນາທຸລະກິດ.

– ເພີ່ມທະວີການຮ່ວມມືທຸລະກິດລະຫວ່າງວິສາຫະກິດຂະໜາດໃຫຍ່, ຂະໜາດກາງ ແລະ ນ້ອຍ ໂດຍການສັງລວມ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບໂອກາດດ້ານທຸລະກິດຂອງ SMEs ຈາກການລົງທຶນ ແລະ ການດຳເນີນທຸລະກິດຂອງວິສາຫະກິດຂະໜາດໃຫຍ່; ສ້າງກົນໄກ, ນະໂຍບາຍ ແລະ ສິ່ງຈູງໃຈໃຫ້ວິສາຫະກິດຂະໜາດໃຫຍ່ມາໃຊ້ບໍລິການ ແລະ ການສະໜອງຂອງ SMEs.

– ສົ່ງເສີມການເພີ່ມຜະລິດຕະພາບເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຂອງຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ, ສ້າງໃຫ້ມີແຜນດຳເນີນງານແຫ່ງຊາດ ເພື່ອຍົກສູງຜະລິດຕະພາບຂອງການຜະລິດ ແລະ ການອອກແຮງງານໃນທົ່ວສັງຄົມ.

– ສົ່ງເສີມການເຂົ້າຫາຕະຫຼາດ ແລະ ການຂະຫຍາຍຕະຫຼາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

- ເພີ່ມທະວີການປະສານງານກັບທຸກພາກສ່ວນເສດຖະກິດ ເພື່ອເຮັດໃຫ້ການປະຕິບັດວຽກງານດຳເນີນໄປຢ່າງມີຈຸດສຸມ ຫຼີກລ້ຽງການຊ້ຳຊ້ອນ ແລະ ຫຼຸດຜ່ອນຊ່ອງຫວ່າງຄວາມຮັບຜິດຊອບ.
- ກຳນົດແຫຼ່ງທຶນ, ລະດົມທຶນ ແລະ ຈັດສັນທຶນຢ່າງເໝາະສົມ.
- ຍົກສູງບົດບາດ ແລະ ຄວາມຮັບຜິດຊອບຂອງໜ່ວຍງານທີ່ກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ.
- ເພີ່ມທະວີການປະກອບສ່ວນຂອງພາກເອກະຊົນ ແລະ ຜູ້ມີສ່ວນຮ່ວມຫຼາຍຂຶ້ນ, ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການຫຼາຍຂຶ້ນ. ຊອກຫາຕະຫຼາດ ແລະ ສ້າງຄວາມສາມາດໃນການແຂ່ງຂັນໃຫ້ຜະລິດຕະພັນລາວຫຼາຍຂຶ້ນ.

## 3.3. ວິສາຫະກິດປະຊາຊົນ, ວິສາຫະກິດປະສົມ ແລະ ຫຸ້ນສ່ວນ

**[1]. <u>ທິດທາງ:</u>**

ພັດທະນາວິສາຫະກິດປະສົມໃຫ້ມີຄວາມຫລາກຫລາຍ, ມີຄວາມເປັນເອກະພາບ, ມີຄວາມເປັນເຈົ້າການ, ມີຄວາມຮັບຜິດຊອບສູງ ແລະ ມີຜົນປະໂຫຍດຮ່ວມກັນ. ປັບປຸງສະມັດຕະພາບຂອງການຜະລິດ ແລະ ຄວາມສາມາດແຂ່ງຂັນໃຫ້ສູງຂຶ້ນ. ສົ່ງເສີມການເຂົ້າຫາຕະຫລາດ.

[2]. <u>ຄາດໝາຍຕົ້ນຕໍ:</u>

ຮອດປີ 2015, ສູ້ຊົນໃຫ້ທ້ອປະເທດຈະຕ້ອງມີຫ້ອໜ່ວຍວິສາຫະກິດທ້ຽໝົດ.....ຫ້ອໜ່ວຍ, ໂດຍໃຫ້ເພີ່ມຂຶ້ນ.....% ທຽບໃສ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006–2010) ເພີ່ມຂຶ້ນ.....%, ໃນນັ້ນ ວິສາຫະກິດຂອງລັດ ກວມ.....%, ໃນໄລຍະ 5 ປີ (2011–2015) ສ້າງວິສາຫະກິດຂຶ້ນໃຫມ່ ໃຫ້ໄດ້ປະມານ.....ຫ້ອໜ່ວຍ.

[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ການພັດທະນາວິສາຫະກິດຂອງປະຊາຊົນ, ວິສາຫະກິດປະສົມ ແລະ ຮຸ້ນສ່ວນ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ..... ແຜນງານ.....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

[4]. <u>ມາດຕະການ:</u>

– ປັບປຸງ ສ້າງອົງການ ຫລື ໜ່ວຍງານຮັບຜິດຊອບສະເພາະໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ຊຸກຍູ້ ສົ່ງເສີມການດຳເນີນງານຂອງພາກສ່ວນທຸລະກິດ ຫລື ວິສາຫະກິດຢ່າງເປັນຮູບປະທຳ ແລະ ໄປຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

– ສ້າງເງື່ອນໄຂ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍດ້ານເສດຖະກິດ, ສັງຄົມ ແລະ ດ້ານນິຕິກຳຕ່າງໆເພື່ອພັດທະນາວິສາຫະກິດໃຫ້ເຕີບໃຫຍ່ຂະຫຍາຍຕົວ ໂດຍການທົບທວນ ແລະ ປັບປຸງຄົບບັນດານິຕິກຳຕ່າງໆ ທີ່ກ່ຽວພັນກັບທຸລະກິດ ແລະ ວິສາຫະກິດໃຫ້ສອດຄ່ອງກັບແນວທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ, ສ້າງກາລະໂອກາດ ແລະ ເງື່ອນໄຂອັນດີໃຫ້ທຸລະກິດ ແລະ ວິສາຫະກິດໄດ້ເຄື່ອນໄຫວຢ່າງຄ່ອງຕົວ, ເພີ່ມຄວາມສາມາດໃນການແຂ່ງຂັນພາຍໃນ ແລະ ຕ່າງປະເທດ ເທື່ອລະກ້າວ ຕາມກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງ ດັດສົມຂອງລັດຢ່າງມີປະສິດທິຜົນສູງ.

– ເອົາໃຈໃສ່ ຝຶກອົບຮົມບຸກຄະລາກອນຂັ້ນຜູ້ບໍລິຫານ, ພະນັກງານ ແລະ ສ້າງສີມືແຮງງານໃຫ້ນາຍຊ່າງ, ກຳມະກອນ ໂດຍຍົກລະດັບຄວາມຮູ້ຄວາມສາມາດທາງດ້ານເຕັກນິກ ວິຊາການຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ ເພື່ອສ້າງໃຫ້ໄດ້ບັນດາວິສາຫະກິດທີ່ເປັນຍຸດທະສາດທີ່ມີຄວາມເຂັ້ມແຂງທຸກດ້ານ, ເປີດກວ້າງທຸລະກິດປະສົມພາຍໃນ ແລະ ກັບຕ່າງປະເທດ.

– ປັບປຸງນິຕິກຳ, ນະໂຍບາຍ ລະບຽບການ ໃຫ້ແທດເໝາະກັບເງື່ອນໄຂຕົວຈິງຂອງປະເທດ.

– ສືບຕໍ່ປັບປຸງ ແລະ ຫັນເປັນທັນສະໄໝລະບົບການຂຶ້ນທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ ເພື່ອໃຫ້ມີຄວາມກະທັດຮັດງ່າຍດາຍ ແລະ ວ່ອງໄວຂຶ້ນກວ່າເກົ່າ ເພື່ອໃຫ້ບັນດາວິສາຫະກິດທີ່ຍັງບໍ່ທັນຂຶ້ນທະບຽນຫັນເຂົ້າສູ່ລະບົບຫຼາຍຂຶ້ນ.

– ສືບຕໍ່ຈັດເວທີປຶກສາຫາລື ແລະ ແລກປ່ຽນຄວາມຄິດເຫັນລະຫວ່າງພາກລັດ ແລະ ພາກສ່ວນ ທຸລະກິດ ເພື່ອພ້ອມກັນແກ້ໄຂບັນຫາ ຫຼື ອຸປະສັກໃນການດຳເນີນທຸລະກິດຢ່າງທັນການ.

– ຈັດຕັ້ງການເຜີຍແຜ່ລະບຽບການທີ່ກ່ຽວຂ້ອງໃນການຂຶ້ນທະບຽນການປະທັບ ແລະ ລະບຽບການກ່ຽວກັບພາສີ, ສະໜອງຂໍ້ມູນຂ່າວສານກ່ຽວກັບຫ້ອໜ່ວຍທຸລະກິດໃຫ້ກັບທະນາຄານ ເພື່ອເປັນບ່ອນອີງໃນເວລາຫ້ອໜ່ວຍທຸລະກິດຂໍກູ້ຢືມເງິນ, ເພີ່ມທະວີຄວາມສັກສິດໃນການຈັດຕັ້ງປະຕິບັດບັນດາກົດໝາຍໃນຂົງເຂດເສດ

ຖະກິດ ເພື່ອສ້າງຫຼັກຄ້ຳປະກັນໃຫ້ແກ່ຜູ້ສະໜອງສິນເຊື່ອ ແລະ ທັງເປັນການປັບປຸງການເຂົ້າເຖິງແຫຼ່ງທຶນຂອງ ຫ້ວໜ່ວຍທຸລະກິດ.

– ສືບຕໍ່ພັດທະນາເອົາຫຼັກສູດສ້າງຜູ້ປະກອບກິດຈະການເຂົ້າໃນລະບົບການສຶກສາສາມັນ, ອາຊີວະສຶກ ສາ ແລະ ການສຶກສາຊັ້ນສູງເພື່ອໃຫ້ພວກເຂົາເຈົ້າໄດ້ມີວິທີການຈັດຕັ້ງ, ການບໍລິຫານທຸລະກິດໃນເວລາ ປະກອບການດ້ານທຸລະກິດ.

– ປັບປຸງດ້ານການປະສານງານ ແລະ ການຄຸ້ມຄອງ: ໃຫ້ມີຄວາມໂປ່ງໃສໃນຂະບວນການພິຈາລະນາ ຄຳຮ້ອງຂໍອະນຸຍາດລົງທຶນ, ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງທີ່ມີບົດບາດໃນການໃຫ້ຄວາມຊ່ວຍເຫຼືອ ການພັດທະນາທຸລະກິດທັງພາກລັດ ແລະ ພາກທຸລະກິດ ເພື່ອສາມາດສະໜອງການບໍລິການ ແລະ ຂໍ້ມູນ ຂ່າວສານຕ່າງໆ ໃຫ້ແກ່ບັນດາຫ້ວໜ່ວຍວິສາຫະກິດຢ່າງມີປະສິດທິພາບ.

– ເພີ່ມທະວີການນຳໃຊ້ເຄື່ອງມື ແລະ ເຕັກນິກຕ່າງໆຈາກສາກົນ ແລະ ພາກພື້ນເຂົ້າໃນວຽກງານສົ່ງ ເສີມວິສາຫະກິດ ແລະ ທຸລະກິດ ໂດຍສະເພາະແມ່ນ ການວິໄຈ ແລະ ການໃຫ້ຄຳປຶກສາດ້ານທຸລະກິດ, ການ ວິໄຈຕ່ອງໂສ້ມູນຄ່າເພີ່ມ.

– ສ້າງສູນກາງລວບລວມບັນດາເອກະສານນິຕິກຳ ແລະ ເຄື່ອງມືຕ່າງໆທີ່ກ່ຽວຂ້ອງກັບການພັດທະນາ ພາກວິສາຫະກິດ ແລະ ພາກເອກະຊົນ ເພື່ອໃຫ້ມີຈຸດສັງລວມ ຈະສະດວກໃນການຕິດຕາມ ແລະ ສາມາດ ກວດສອບໄດ້ງ່າຍຂຶ້ນ.

– ສ້າງກົນໄກເພື່ອອຳນວຍຄວາມສະດວກໃນການຮ່ວມມື ລະຫວ່າງວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອໃຫ້ທັງສອງກຸ່ມໄດ້ມີການນຳໃຊ້ຜະລິດຕະພັນ ແລະ ມີການ ແລກປ່ຽນປະສົບການເຊິ່ງກັນ ແລະ ກັນ ອັນເປັນການຍົກລະດັບຕະຖານຜະລິດຕະພັນ ແລະ ການບໍລິການ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຂຶ້ນໄປເປັນກ້າວໆ.

# 4. ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ

## 4.1. ການພັດທະນາຕາມພາກ

**[1]. <u>ທິດທາງ:</u>**

ການພັດທະນາເຂດແຄວ້ນເປັນສິ່ງຈຳເປັນພາະວິໄສ ເພື່ອສ້າງເງື່ອນໄຂໃຫ້ທຸກເຂດແຄວ້ນໃນທົ່ວປະເທດ ຂະຫຍາຍຕົວຢ່າງສົມສ່ວນ ແລະ ວ່ອງໄວບົນພື້ນຖານການເສີມຂະຫຍາຍທ່າແຮງຂອງແຕ່ລະພາກ ແລະ ມີ ໂຄງປະກອບເສດຖະກິດແທດເໝາະກັບແຕ່ລະເຂດ; ພ້ອມດຽວກັນນັ້ນ, ກໍ່ສ້າງສາຍພົວພັນເຊື່ອມໂຍງ ລະຫວ່າງບັນດາເຂດໃຫ້ມີຄວາມກົມກຽວ, ຂະຫຍາຍຕົວໄວ ແລະ ຫມັ້ນທ່ຽງ, ມີປະສິດທິຜົນສູງສຸດ, ມີຄວາມ ອາດສາດມາດແຂ່ງຂັນ, ສາມາດຫລຸດຜ່ອນຄວາມແຕກໂຕນ ລະຫວ່າງການພັດທະນາໃນແຕ່ລະພາກ.

ສຸມໃສ່ລົງທຶນຢ່າງມີຈຸດສຸມເຂົ້າໃນການພັດທະນາສູນກາງເສດຖະກິດຂອງ 3 ພາກ ທີ່ມີທ່າກ້າວກະ ໂດດໃນການຂະຫຍາຍຕົວບົນພື້ນຖານຂອງການພັດທະນາຕົວເມືອງແກນກາງທີ່ມີພື້ນຖານໂຄງລ່າງ ແລະ ການບໍລິການທັນສະໄຫມ, ບັນດາເຂດອຸດສາຫະກຳຈຸດສຸມ ດ້ວຍການເອົາໃຈໃສ່ພັດທະນາຂະແຫນງການອຸດ ສາຫະກຳທີ່ສ້າງມູນຄ່າເພີ່ມສູງ ແລະ ມີຂະຫນາດໃຫຍ່ ເຊັ່ນ: ອຸດສາຫະກຳຜະລິດໄຟຟ້າ, ປຸງແຕ່ງເຂົ້າ ແລະ ສະບຽງອາຫານ, ປຸງແຕ່ງໄມ້, ຜະລິດຝຸ່ນຊີວະພາບ, ຕັດຫຍິບ, ຊຸດຄົ້ນ ແລະ ປຸງແຕ່ງແຮ່ທາດ (ຄຳ, ກົ່ວ, ເຫລັກ, ແຮ່ບ໊ອກໄຊ...), ອຸດສາຫະກຳຜະລິດວັດຖຸກໍ່ສ້າງ, ກົນຈັກ, ສິນຄ້າເອເລັກໂຕນິກ, ເຄື່ອງຊົ່ມໃຊ້ຊັ້ນສູງ

ບົນພື້ນຖານຂອງການສ້າງຕັ້ງເຂດອຸດສາຫະກຳ, ກຸ່ມອຸດສາຫະກຳ ແລະ ເຂດຜະລິດເພື່ອສົ່ງອອກ ເພື່ອສ້າງ ແຮງກະຕຸ້ນໃຫ້ແກ່ການພັດທະນາເສດຖະກິດຂອງເຂດແຄວ້ນ, ພ້ອມທັງສົ່ງຜົນກະທົບໄປຊຸກດັນການພັດທະ ນາເຂດໃກ້ຄຽງທີ່ມີທ່າແຮງທາງດ້ານວັດຖຸດິບ ແລະ ຕະຫລາດຜະລິດຕະພັນຂະຫຍາຍຕົວ.

ຈັດສັນ ແລະ ພັດທະນາຕົວເມືອງແກນກາງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງບັນດາເຂດ ເຊັ່ນ: ເມືອງຫລວງພະບາງ (ແຂວງຫລວງພະບາງ), ເມືອງໄຊ (ແຂວງອຸດົມໄຊ) ຢູ່ພາກເໜືອ, ນະຄອນ ຫລວງວຽງຈັນ ແລະ ເມືອງໄກສອນ ພົມວິຫານ (ແຂວງສະຫວັນນະເຂດ) ຢູ່ພາກກາງ ແລະ ເມືອງປາກເຊ (ແຂວງຈຳປາສັກ) ຢູ່ພາກໃຕ້ ໃຫ້ມີບົດບາດເປັນແກນກາງການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ທັງ ເປັນແນວໜ້າ ໃຫ້ແກ່ຂະບວນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ດ້ວຍລະບົບພື້ນຖານໂຄງລ່າງ ທັນສະໄໝ ຮັບປະກັນໃຫ້ແກ່ການພັດທະນາ ບັນດາຂະແໜງການອຸດສາຫະກຳ ແລະ ການບໍລິການປາຍ ແຫລມ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການເຊື່ອມໂຍງກັບສາກົນ. ບັນດາຕົວເມືອງແກນກາງ ຂອງແຕ່ລະເຂດ, ນອກຈາກບົດບາດເປັນສູນກາງການເມືອງ, ເສດຖະກິດ, ວັດທະນະທຳ ແລະເຕັກນິກ ວິທະຍາສາດ ແລ້ວຍັງຮັກສາບົດບາດການເຊື່ອມຕໍ່ພາຍໃນເຂດ ແລະ ບັນດາເຂດ ເພື່ອກ້າວສູ່ການນຳໃຊ້ ແຫລ່ງກຳລັງແຮງງານຢ່າງເໝາະສົມ, ຫັນປ່ຽນໂຄງສ້າງການຜະລິດ ແລະ ພັດທະນາຕະຫລາດສິນຄ້າ. ພ້ອມດຽວກັນນັ້ນ, ກໍເອົາໃຈໃສ່ການຮ່ວມມືລົງທຶນ, ການຄ້າ ແລະ ການບໍລິການກັບບັນດາປະເທດໃນພາກ ພື້ນ.

ອີງໃສ່ຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງ, ການພັດທະນາແຕ່ລະພາກພື້ນມີດັ່ງນີ້:

### 4.1.1. ເຂດພາກເໜືອ

**[1]. <u>ຄາດໝາຍຕົ້ນຕໍ:</u>**

ຍູ້ແຮງການຂະຫຍາຍຕົວທາງດ້ານເສດຖະກິດຂອງເຂດ. ສູ້ຊົນຮອດປີ 2015 ລວມຍອດຜະລິດຕະພັນ ພາຍໃນໄດ້ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 1.700 ໂດລາສະຫະລັດ. ຫັນປ່ຽນໂຄງປະກອບເສດຖະກິດຢ່າງຕັ້ງໜ້າ ໂດຍຂະແໜງກະສິກຳກວມ 42%, ອຸດສາຫະກຳກວມ 34% ແລະ ບໍລິການກວມ 27% ຂອງໂຄງປະກອບ GDP. ການຂະຫຍາຍຕົວຂອງພົນລະເມືອງສະເລ່ຍ 2% ຕໍ່ປີ, ຮອດປີ 2015 ຄາດວ່າຈະມີພົນລະເມືອງ ປະມານ 2,7 ລ້ານຄົນ. ສູ້ຊົນຫຼຸດຜ່ອນອັດຕາຄວາມທຸກຍາກໃຫ້ຕ່ຳກວ່າ 8% ໃນປີ 2015 ແລະ ອັດຕາ ບ້ານທຸກຍາກ ໃຫ້ຕ່ຳກວ່າ 20% ໃນປີ 2015.

**[2]. <u>ຂະແໜງບູລິມະສິດ:</u>**

1. <u>ພັດທະນາພື້ນຖານໂຄງລ່າງ-ທີ່ຈຳເປັນຕົ້ນຕໍເຊັ່ນ:</u>

+ <u>ທາງລົດໄຟ:</u>

ສາຍຕັ້ງ ຄື: ບໍ່ເຕັນ ຫລວງນ້ຳທາ-ວຽງຈັນ (ທາງລົດໄຟ ອາຊຽນ-ຈີນ, ເຊື່ອມຕໍ່ໄປຫາກຳປູເຈຍ ແລະ ສິງກະໂປ ໂດຍຜ່ານ ສປປ ລາວ).

ສາຍຂວາງ ຄື: (1) ທາງພູຄູນ-ໂພນສະຫວັນ-ຊາຍແດນຫວຽດນາມ (ທາງເຊື່ອມຕໍ່ ສິງກະໂປ-ລາວ-ຫວຽດນາມ) ແລະ (2) ທາງເມືອງເງິນ (ຊາຍແດນລາວ-ໄທ) ໄຕຈາງ (ຊາຍແດນລາວ-ຫວຽດນາມ, ທາງ ເຊື່ອມຕໍ່ໄທ-ລາວ-ຫວຽດນາມ).

+ ທາງບົກ:

ສ້າງເສັ້ນທາງ 3 ສາຍ ຄື: (1) ແຕ່ລານຕຸຍ ແຂວງຜົ້ງສາລີ (ຊາຍແດນລາວ-ຈີນ) ຜ່ານແຂວງອຸດົມໄຊ, ຫລວງພະບາງ ເຖິງ ວຽງຈັນ, (2) ແຕ່ເມືອງແອດ ແຂວງຊຽງຂວາງ (ຊາຍແດນລາວ-ຫວຽດນາມ) ຮອດເມືອງທ່າໂທມ ແລະ (3) ແຕ່ເມືອງສີງ ແຂວງຫລວງນ້ຳທາ (ຊາຍແດນລາວ-ຈີນ) ຜ່ານແຂວງບໍ່ແກ້ວ ຫາເມືອງແກ່ນທ້າວ ແຂວງໄຊຍະບູລີ (ຊາຍແດນລາວ-ໄທ).

ສ້າງເສັ້ນທາງສາຍຂວາງ 5 ສາຍ ຄື: (1) ແຕ່ເມືອງໃຫມ່ (ຊາຍແດນລາວ-ຫວຽດນາມ) ຮອດຫ້ວຍຊາຍ (ຊາຍແດນລາວ-ໄທ), (2) ແຕ່ດ່ານປາຫ່າງ (ຊາຍແດນລາວ-ຫວຽດນາມ) ຫາ ຊຽງຮອນ (ຊາຍແດນລາວ-ໄທ), (3) ແຕ່ດ່ານຊາຍແດນສາກົນຫ້ວຍຊາຍ ຫາເມືອງວຽງທອງ, (4) ແຕ່ດ່ານຊາຍແດນນ້ຳກັ່ນ (ຊາຍແດນລາວ-ຫວຽດນາມ) ຮອດເມືອງເງິນ (ຊາຍແດນລາວ-ໄທ) ແລະ (5) ແຕ່ເມືອງຫມອກໃຫມ່ (ຊາຍແດນລາວ-ຫວຽດນາມ) ຮອດເມືອງຊຽງ.

ສ້າງບັນດາເສັ້ນທາງເຊື່ອມຕໍ່ບັນດາທາງຫລວງແຫ່ງຊາດ ແລະ ທາງທ້ອງຖິ່ນຕ່າງໆທີ່ມີຄວາມຈຳເປັນ ແລະ ມີປະສິດທິຜົນ.

+ ພັດທະນາທາງນ້ຳ: ປັບປຸງເສັ້ນທາງນ້ຳຂອງຕອນເໜືອໃຫ້ເຮືອບັນທຸກສິນຄ້າຂະໜາດ 300 ໂຕນ ສາມາດຄົມມະນາຄົມໄປ-ມາໄດ້.

+ ພັດທະນາສະໜາມບິນ:

- ສຸມໃສ່ຍົກລະດັບສະໜາມບິນ ຫລວງພະບາງ, ຕາມມາດຖານ 4C, ເຮືອບິນຂະໜາດກາງ (ປະເພດ C ຄື: B737, A320...), ອາຄານໂດຍສານໃຫ້ສາມາດຮັບໄດ້ປະມານ ປີລະ 1,2 ລ້ານເທື່ອຄົນ, ເປັນສະໜາມບິນສາກົນອັນດັບ 2 ຮອງຈາກນະຄອນຫລວງວຽງຈັນ ແລະ ຕອບສະໜອງໃຫ້ເຮືອບິນປະເພດ D ຂຶ້ນ-ລົງໄດ້.

- ສຸມໃສ່ປັບປຸງສະໜາມບິນຢູ່ພາກເໜືອ ໂດຍສະເພາະແມ່ນຢູ່ ຫລວງນ້ຳທາ, ບໍ່ແກ້ວ ແລະ ຮັບປະກັນໃຫ້ເຮືອບິນຂະໜາດ 70 ບ່ອນນັ່ງ ຂຶ້ນ-ລົງໄດ້ປົກກະຕິ. ປັບປຸງຍົກລະດັບເດີ່ນບິນ ຢູ່ເມືອງວຽງໄຊ ແຂວງຫົວພັນ ໃຫ້ສາມາດນຳໃຊ້ຢ່າງເປັນປົກກະຕິ ເພື່ອສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ໄປຢ້ຽມຢາມສະຖານທີ່ປະຫວັດສາດດັ່ງກ່າວ ປະກອບສ່ວນໃນການພັດທະນາເຂດການປະຕິວັດເກົ່າໃຫ້ທຽບທັນກັບເຂດອື່ນ ຂອງປະເທດ.

- ຂະຫຍາຍການກໍ່ສ້າງສະຖານີ ແລະ ລານຈອດຍົນ, ສະຖານີຄຸ້ມຄອງ, ສາງນ້ຳມັນ, ໂທລະຄົມສື່ສານ, ການບັນຊາ ແລະ ອື່ນໆ.

2. ພັດທະນາ 4 ຂະແໜງການຕົ້ນຕໍຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ :

ກ. ກະສິກຳ-ປ່າໄມ້:

• ຊຸກຍູ້ການພັດທະນາອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້ ທີ່ມີທ່າແຮງແຂ່ງຂັນ: ສ້າງສູນກ້າເບ້ຍໄມ້ ແລະ ທົດລອງແນວພັນ ເພື່ອສົ່ງເສີມແນວພັນທີ່ດີຢ່າງກ້ວາງຂວາງ, ເລັ່ງປັບປຸງຊະນິດແນວພັນພືດລົ້ມລຸກ, ໄມ້ເສດຖະກິດ ແລະ ສັດ.

- ຊຸກຍູ້ການຜະລິດສະບຽງອາຫານ: ສ້າງສູນຜະລິດແນວພັນເຂົ້າທີ່ດີມີຄຸນນະພາບ ຢູ່ແຂວງຫຼວງນ້ຳທາ, ໄຊຍະບູລີ ແລະ ແຂວງວຽງຈັນ; ສ້າງສູນຜະລິດແນວພັນສາລີ ຢູ່ແຂວງຫົວພັນ, ໄຊຍະບູລີ, ຫຼວງນ້ຳທາ ແລະ ບໍ່ແກ້ວ, ສ້າງສູນຜະລິດແນວພັນຖົ່ວເຫຼືອງ ຢູ່ແຂວງຫົວພັນ ແລະ ແຂວງຊຽງຂວາງ, ສ້າງສູນຜະ

ລິດແນວພັນມັນຕົ້ນຢູ່ ແຂວງອຸດົມໄຊ ແລະ ຫຼວງນ້ຳທາ; ນອກນັ້ນ ຍັງສ້າງສູນຜະລິດແນວພັນພືດເສດຖະກິດທີ່ມີຄຸນນະພາບຢູ່ບັນດາແຂວງພາກເໜືອ ເຊັ່ນ: ມັນ, ອ້ອຍ, ໄມ້ໃຫ້ຫມາກ, ພືດຜັກ ແລະ ຊາ. ສ້າງສູນແນວພັນຫມູ ຢູ່ ເມືອງໄຊ; ສ້າງສູນລ້ຽງງົວພັນເຂດສູງ ຢູ່ແຂວງຊຽງຂວາງ ແລະ ຫົວພັນ; ສ້າງສູນສາທິດລ້ຽງປາ ແລະ ຜະລິດແນວພັນປານ້ຳຈືດ ຢູ່ ແຂວງໄຊຍະບູລີ ແລະ ແຂວງວຽງຈັນ....,

- ຊຸກຍູ້ການຜະລິດກະສິກຳ-ປ່າໄມ້ແບບທຸລະກິດ: ກະສິກຳສີຂຽວ, ພັດທະນາຍີ່ຫໍ້ ແລະ ເຄືອຄ່າຍ ຈຳຫນ່າຍ ຄຽງຄູ່ກັບການດຶງດູດການລົງທຶນ ແລະ ອື່ນໆ.

• ສ້າງສູນພັດທະນາໄມ້ເສດຖະກິດ:

- ສົ່ງເສີມການປູກໄມ້ເສດຖະກິດທີ່ມີທ່າແຮງ ຢູ່ເຂດທີ່ມີເງື່ອນໄຂເຫມາະສົມ ແລະ ລາຄາແພງເພື່ອສົ່ງອອກ ເຊັ່ນ: ຢາງພາລາ, ອ້ອຍ, ຫມາກເຍົ່າ, ຄັ່ງ, ໄມ້ປ່ອງ, ຫວາຍ, ນ້ຳມັນພືດ, ອາຫານສັດ, ໄມ້ ແລະ ອື່ນໆ.

ຂ. <u>ອຸດສາຫະກຳພະລັງງານໄຟຟ້າ ແລະ ບໍ່ແຮ່:</u>

– ສຸມໃສ່ພັດທະນາເຂື່ອນໄຟຟ້ານ້ຳຕົກຂະຫນາດໃຫຍ່ຕາມລຳແມ່ນ້ຳຂອງ, ສາຂາແມ່ນ້ຳຂອງ ແລະ ພະລັງງານຄວາມຮ້ອນຈາກຖ່ານຫີນລິກໄນ (ທີ່ຫົງສາ ແຂວງໄຊຍະບູລີ).

– ສຸມໃສ່ການພັດທະນາເຂື່ອນໄຟຟ້າຂະຫນາດນ້ອຍທີ່ມີປະສິດທິຜົນທາງດ້ານເສດຖະກິດ.

– ຂະຫຍາຍຕາຫນ່າງໄຟຟ້າສູ່ຕ່າງປະເທດ ເພື່ອຊຸກຍູ້ການສົ່ງອອກ ແລະ ເປີດກວ້າງຕະຫລາດ.

– ເຊື່ອມໂຍງການພັດທະນາຂະແຫນງໄຟຟ້າ ໄປພ້ອມກັບການພັດທະນາຂະແຫນງບໍ່ແຮ່ ເພື່ອຍົກສູງຄວາມອາດສາມາດຂອງຂະແຫນງພະລັງງານ ໃນການພັດທະນາເສດຖະກິດ-ສັງຄົມ.

– ສຳຫລວດ ແລະ ຂຸດຄົ້ນບໍ່ແຮ່ ທີ່ເປັນທ່າແຮງພັດທະນາຂອງພາກເໜືອ.

– ພັດທະນາອຸດສາຫະກຳຫລອມໂລຫະທີ່ມີຢູ່ໃຫ້ນັບມື້ນັບເຂັ້ມແຂງ ໂດຍຖືເອົາອຸດສາຫະກຳຫລອມເຫລັກ, ຊີນ, ກົ່ວ, ສັງກະສີ, ຄຳ ເປັນຕົ້ນຕໍ.

– ການຜະລິດວັດສະດຸກໍ່ສ້າງ ໂດຍສຸມໃສ່ການຜະລິດຊີມັງ, ຊີມັງເສີມເຫລັກ, ດິນຈີ່, ດິນຂໍ, ປູນ ແລະ ອື່ນໆ.

– ພັດທະນາອຸດສາຫະກຳເຄມີ ເປັນຕົ້ນແມ່ນ ເຄມີກຸ໋ລ໊ວ, ດ່າງ, ເກືອໂຊດຽມ, ປຸຍກາລີ ໂດຍສະເພາະແມ່ນ ຢູ່ແຂວງວຽງຈັນ.

ຄ. <u>ການບໍລິການ, ການຄ້າ ແລະ ການທ່ອງທ່ຽວ:</u>

– ສຸມໃສ່ວຽກງານພົວພັນການຄ້າ ແລະ ການຄ້າຊາຍແດນ ກັບປະເທດອ້ອມຂ້າງ, ເປັນຕົ້ນແມ່ນ ສສ ຫວຽດນາມ, ສປ ຈີນ, ພະມ້າ ແລະ ໄທ ລວມທັງຊອກຫາຕະຫລາດ.

– ສ້າງ ແລະ ປັບປຸງລະບົບການບໍລິການຜ່ານຕາມເສັ້ນທາງ ເລກທີ 3, ເລກທີ 2 ແລະ ເລກທີ 13 ໃຫ້ເປັນລະບົບຄົບຊຸດ, ສະດວກ ແລະ ວ່ອງໄວ.

– ສ້າງສູນການວ່າງສະແດງ ແລະ ຈຳຫນ່າຍຜະລິດຕະພັນປອດສານພິດ (ຢູ່ ຫລວງພະບາງ, ຫລວງນ້ຳທາ, ຫ້ວຍຊາຍ, ອຸດົມໄຊ ແລະ ຜົ້ງສາລີ).

– ສຸມໃສ່ພັດທະນາການທ່ອງທ່ຽວ ໂດຍການຍາດແຍ່ງເອົາຜົນປະໂຫຍດສູງສຸດຈາກການຮ່ວມມືກັບພາກພື້ນ ແລະ ສາກົນ, ເປັນຕົ້ນແມ່ນ ການປະຕິບັດແຜນງານທ່ອງທ່ຽວຂອງ GMS, ອາຊຽນ, ເຄືອຄ່າຍຮ່ວມມືທ່ອງທ່ຽວສາກົນ, ສາມລ່ຽມພັດທະນາ, ສີ່ລ່ຽມພັດທະນາ ແລະ ປະເທດອ້ອມຂ້າງ.

– ສຸມໃສ່ພັດທະນາວຽກງານໄປສະນີ ແລະ ໂທລະຄົມມະນາຄົມເພື່ອເຊື່ອມໂຍງ, ເປັນທາງຜ່ານໃຫ້ ສປ ຈີນ, ພະມ້າ, ໄທ ແລະ ຫວຽດນາມ.

3. ຂະແໜງສັງຄົມ:

ສຸມໃສ່ວຽກງານການສຶກສາ ເປັນຕົ້ນແມ່ນ ການສຶກສາພາກບັງຄັບໃຫ້ບັນລຸຜົນ ໃນປີ 2015, ຂະຫຍາຍ ແລະ ປັບປຸງມະຫາວິທະຍາໄລສຸພານຸວົງ ເພື່ອຮອງຮັບນັກສຶກສາຈາກບັນດາແຂວງພາກເໜືອໃຫ້ຫລາຍຂຶ້ນ, ສ້າງໂຮງຮຽນວິຊາຊີບສຳລັບແຂວງພາກເໜືອ ຢູ່ ແຂວງອຸດົມໄຊ, ສຸມໃສ່ຫລຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ, ການຂາດສານອາຫານ, ກໍ່ສ້າງ ແລະ ປັບປຸງໂຮງໝໍຫລວງພະບາງໃຫ້ສາມາດຮອງຮັບການປິ່ນປົວປະຊາຊົນຢູ່ບັນດາແຂວງພາກເໜືອ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕິດພັນກັບການພັດທະນາກຸ່ມບ້ານ ແລະ ການຈັດສັນອາຊີບຄົງທີ່.

4. ຂະແໜງສິ່ງແວດລ້ອມ:

ເອົາໃຈໃສ່ການປົກປັກຮັກສາສິ່ງແວດລ້ອມແລະການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ. ບັນດາການລົງທຶນທີ່ຕິດພັນກັບການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ຕິດພັນກັບການຕັດໄມ້, ການນຳໃຊ້ທີ່ດິນປ່າໄມ້, ການຂຸດຄົ້ນບໍ່ແຮ່ ແລະ ອື່ນໆ ທີ່ໄດ້ປ່ອຍມົນລະພິດຕ້ອງໄດ້ມີການດຳເນີນການສຶກສາລະອຽດເຖິງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ສຸມໃສ່ປົກປັກຮັກສາປ່າຍອດນ້ຳຢ່າງຈິງຈັງເພື່ອຮັກສາແຫລ່ງຕົ້ນນ້ຳ, ຊີວະນາໆພັນ, ຊັບພະຍາກອນປ່າໄມ້ໃຫ້ອຸດົມສົມບູນ ແລະ ເພື່ອການທ່ອງທ່ຽວທຳມະຊາດ.

**[3]. ຈັດວາງຈຸດສຸມການພັດທະນາຕາມຮູບແບບ “1334” ດັ່ງນີ້:**

– ສຸມໃສ່ພັດທະນາ 1 ສູນກາງເສດຖະກິດຂອງພາກເໜືອ ຢູ່ ແຂວງຫລວງພະບາງ;

– ສຸມໃສ່ພັດທະນາ 3 ເຂດອຸດສາຫະກຳ ຢູ່ 3 ແຂວງ ຄື: ແຂວງວຽງຈັນ, ຊຽງຂວາງ ແລະ ແຂວງອຸດົມໄຊ;

– ສຸມໃສ່ພັດທະນາ 3 ແລວທາງເສດຖະກິດ ຄື: ບໍ່ເຕັນ-ວຽງຈັນ, ຫ້ວຍຊາຍ-ໄຕຈາງ ແລະ ເມືອງເງິນ-ໜອງແຮດ;

– ສຸມໃສ່ພັດທະນາ 4 ເຂດເສດຖະກິດຊາຍແດນ ຄື: ບໍ່ເຕັນ, ຫ້ວຍຊາຍ-ຕົ້ນເຜີ້ງ, ໜອງແຮດ ແລະ ແກ່ນທ້າວ.

**ຈຸດສຸມໃນການພັດທະນາຂອງບັນດາແຂວງພາກເໜືອ ມີດັ່ງນີ້:**

**ຜົ້ງສາລີ:**

- ສົ່ງເສີມການປູກພືດ ແລະ ຕົ້ນໄມ້ອຸດສາຫະກຳເປັນສິນຄ້າ ທີ່ມີຕະຫລາດຮັບຮອງແລ້ວ ເຊັ່ນ: ຫມາກແໜ່ງ, ຊາ, ຫມາກຂ່ຽ, ຫມາກເດືອຍ, ຫມາກກ໋ວ, ສາລີ, ອ້ອຍ, ຕົ້ນປໍສາ, ໄມ້ເກດສະໜາ ແລະ ອື່ນໆ ໂດຍຕິດພັນກັບການປຸງແຕ່ງເຄື່ອງສຳເລັດຮູບຢູ່ກັບທີ່.
- ສ້າງຕັ້ງໂຮງງານປຸງແຕ່ງຜະລິດຕະພັນກະສິກຳທີ່ໄດ້ມາດຕະຖານ ເຊັ່ນ: ໂຮງງານປຸງແຕ່ງຊາ, ໂຮງງານບົດແປ້ງ, ໂຮງງານນ້ຳຕານທີ່ມີຂະໜາດການຜະລິດ 1.000 ໂຕນ/ປີ, ໂຮງງານປຸງແຕ່ງຢາງພາລາຂັ້ນຕົ້ນ.
- ຂະຫຍາຍຕາໜ່າງໄຟຟ້າໄປສູ່ຊົນນະບົດ.

- ຊຸກຍູ້ການສຳຫຼວດ ແລະ ກໍ່ສ້າງເຂື່ອນໄຟຟ້ານ້ຳອູ 8.

**ຫຼວງນ້ຳທາ:**

- ສົ່ງເສີມການປູກພືດສະບຽງອາຫານ ເຊັ່ນ: ເຂົ້າ, ສາລີ, ອ້ອຍ ແລະ ອື່ນໆ.
- ສົ່ງເສີມການປູກຢາງພາລາ ໂດຍຕິດພັນກັບການປຸງແຕ່ງ.
- ເອົາໃຈໃສ່ການຄຸ້ມຄອງການຂຸດຄົ້ນແຮ່ທາດ ເຊັ່ນ: ຖ່ານຫີນ, ຄຳ ແລະ ທອງແດງ.
- ຂະຫຍາຍຕາຫນ່າງໄຟຟ້າໄປສູ່ຊົນນະບົດ.
- ສືບຕໍ່ສຸມໃສ່ປັບປຸງສ້າງເຂດເສດຖະກິດພິເສດບໍ່ເຕັນ-ແດນຄຳ ໃຫ້ໄດ້ຮັບການພັດທະນາຢ່າງມີຄຸນນະພາບ.
- ສົ່ງເສີມກໍ່ສ້າງເປັນສູນກາງເຊື່ອມຕໍ່ດ້ານໄປສະນີ ແລະ ໂທລະຄົມມະນາຄົມ

**ແຂວງບໍ່ແກ້ວ:**

- ປັບປຸງ ແລະ ສ້າງສູນພັດທະນາກະສິກຳ ເພື່ອຕອບສະຫນອງແນວພັນພືດ-ພັນສັດ; ສົ່ງເສີມການປູກພືດປອດສານພິດ ແລະ ເພີ່ມມູນຄ່າສິນຄ້າໂດຍຜ່ານການປຸງແຕ່ງ ເຊັ່ນ: ສາລີ, ຖົ່ວ; ສົ່ງເສີມການລ້ຽງສັດແບບເປັນຟາມ.
- ປັບປຸງແຫຼ່ງທ່ອງທ່ຽວດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ລຽບຕາມແຄມຂອງ ແລະ ເສັ້ນທາງ R3.
- ກໍ່ສ້າງຕາຝັ່ງເຈື່ອນ ຕາມລຳແມ່ນ້ຳຂອງ ຢູ່ ເມືອງຕົ້ນເຜິ້ງ ແລະ ເມືອງຫ້ວຍຊາຍ.
- ກໍ່ສ້າງ ແລະ ຍົກລະດັບເສັ້ນທາງແຕ່ ເມືອງຜາອຸດົມ-ເມືອງປາກແບ່ງ; ເສັ້ນທາງເມືອງຜາອຸດົມ-ເມືອງຮຸນ; ເສັ້ນທາງລຽບແຄມຂອງຕອນເໜືອ ແຕ່ບ້ານມອມ-ຊຽງກົກ ແຂວງຫຼວງນ້ຳທາ; ເສັ້ນທາງລຽບແຄມຂອງຕອນໃຕ້ ແຕ່ປາກທາ-ກ້ອນຕື່ນ-ບ້ານຫ້ວຍເລົາ ຊາຍແດນແຂວງໄຊຍະບູລີ.
- ສ້ອມແປງ ແລະ ປັບປຸງບັນດາທ່າເຮືອຂົນສົ່ງສິນຄ້າ ແລະ ໂດຍສານທີ່ມີແລ້ວຕາມລຳແມ່ນ້ຳຂອງ.
- ກໍ່ສ້າງ ແລະ ຂະຫຍາຍລະບົບສະໜາມບິນ “Runway, Taxi way “.
- ສຸມໃສ່ສ້າງເຂດເສດຖະກິດພິເສດເມືອງຕົ້ນເຜິ້ງໃຫ້ສຳເລັດໂດຍພື້ນຖານ
- ປັບປຸງລະບົບໄປສະນີ ແລະ ໂທລະຄົມມະນາຄົມເປັນເສັ້ນທາງເຊື່ອມໂຍງກັບປະເທດໄທ ແລະ ພະມ້າ ເພື່ອຊຸກຍູ້ຂະແໜງການໃຫ້ເປັນທັນສະໄໝ.

**ອຸດົມໄຊ:**

- ສົ່ງເສີມປູກພືດສິນຄ້າ (ສາລີ, ຖົ່ວເຫລືອງ, ຖົ່ວດິນ ແລະ ພືດອື່ນໆ); ນອກນັ້ນ ສຸມໃສ່ຜະລິດຊາຫອມ, ປຸງແຕ່ງມັນຕົ້ນ.
- ສົ່ງເສີມປູກໄມ້ອຸດສາຫະກຳ (ປູກ ແລະ ປຸງແຕ່ງຢາງພາລາ, ປູກໄມ້ວີກ, ໄມ້ສັກ ແລະ ໄມ້ເກດສະຫນາ),
- ສຸມໃສ່ສ້າງໂຮງງານປຸງແຕ່ງແຮ່ທາດຢູ່ເຂດອຸດສາຫະກຳ ຢູ່ເມືອງນາໝໍ້ ໂດຍຖືເອົາເປົ້າໝາຍ ແຮ່ເຫລັກ ຢູ່ເມືອງຫລາ, ແຮ່ທອງແດງ ເມືອງປາກແບ່ງ, ເມືອງຮຸນ ແລະ ນາໝໍ້, ແຮ່ຊີນ-ສັງກະສີ ເມືອງນາໝໍ້ ແລະ ອື່ນໆ.
- ສູ້ຊົນໃຫ້ສຳເລັດການສ້າງຕັ້ງໂຮງງານຊີມັງ ແລະ ໂຮງງານປຸງແຕ່ງເກືອ ຢູ່ເມືອງນາໝໍ້.

- ສ້າງເຂດເສດຖະກິດສະເພາະ ຕິດພັນກັບການທ່ອງທ່ຽວເມືອງປາກແບ່ງ.
- ສ້າງສູນກາງຄຸ້ມຄອງຄົ້ນຄວ້າມຖີພາກເໜືອ

**ຫຼວງພະບາງ:**

- ສ້າງໃຫ້ ແຂວງຫລວງພະບາງ ກາຍເປັນແຫລ່ງທ່ອງທ່ຽວທາງດ້ານວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດອັນສຳຄັນ ຂອງ ສປປ ລາວ, ອະນຸລັກມໍລະດົກໂລກທາງດ້ານວັດທະນາະທຳ, ທຳມະຊາດໄວ້ໃຫ້ຍືນຍົງ ແລະ ພັດທະນາໃຫ້ມີຄຸນຄ່າ ເປັນທີ່ດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.
- ສົ່ງເສີມ ແລະ ພັດທະນາຜະລິດຕະພັນທ່ອງທ່ຽວ ເຊັ່ນ: ການແກະສະລັກ, ຜະລິດຕະພັນຈັກສານໄມ້ ປ່ອງ, ຫວາຍ, ເຄື່ອງເງິນ, ເຄື່ອງຄຳ, ສ້າງພື້ນຖານການປຸງແຕ່ງຜະລິດຕະພັນຫັດຖະກຳ ທີ່ຕິດພັນກັບຮູບແບບການດຳລົງຊີວິດແບບດັ່ງເດີມ.
- ຍົກລະດັບສະໜາມບິນຫລວງພະບາງໃຫ້ເປັນສະໜາມບິນອະນຸພາກພື້ນ, ສາມາດຮອງຮັບ ເຄື່ອງບິນ ແອບັດສ໌ A320.
- ສຳຫລວດ, ອອກແບບ ແລະ ກໍ່ສ້າງຂົວຂ້າມນ້ຳຂອງ ເມືອງຫລວງພະບາງ-ເມືອງຈອມເພັດ.
- ສູ້ຊົນສ້າງໃຫ້ໄດ້ທ່າເຮືອໃຫຍ່ ເພື່ອຮອງຮັບໃນການຂົນສົ່ງສິນຄ້າ ແລະ ໂດຍສານຈາກຊາຍແດນຈີນ-ຫລວງພະບາງ.
- ຊຸກຍູ້ການສຳຫຼວດ ແລະ ກໍ່ສ້າງເຂື່ອນໄຟຟ້າຕາມລຳແມ່ນ້ຳຂອງ....
- ສ້າງສູນກາງອິນເຕີເນັດຄວາມໄວສູງ ແລະ ສູນຂໍ້ມູນຂ່າວສານ ເພື່ອຊຸກຍູ້ການໂຄສະນາ ວັດທະນະທຳ ແລະ ຮີດຄອງປະເພນີຂອງເມືອງມໍລະດົກໂລກໃຫ້ກວ້າງຂວາງໄປສູ່ສາກົນ.

ນອກນັ້ນ, ສົ່ງເສີມການປູກຖົ່ວແຮ ເພື່ອປ່ອຍຄັ່ງ, ປູກຫມາກເດືອຍ, ປູກພືດປອດສານພິດ ແລະ ລ້ຽງສັດ ເພື່ອສະໜອງໃຫ້ແກ່ການບໍລິການການທ່ອງທ່ຽວ.

**ໄຊຍະບູລີ:**

- ສຸມໃສ່ປູກພືດສະບຽງອາຫານ ເປັນຕົ້ນແມ່ນ: ເຂົ້າ, ສາລີ, ຫມາກເດືອຍ, ຜັກປອດສານພິດ ເພື່ອບໍລິໂພກພາຍໃນ ແລະ ປ້ອນໂຮງງານປຸງແຕ່ງ;
- ສຸມໃສ່ປູກຕົ້ນໄມ້ອຸດສາຫະກຳ ເຊັ່ນ: ໄມ້ສັກ, ຢາງພາລາ;
- ລົງມືກໍ່ສ້າງໂຮງງານໄຟຟ້າຖ່ານຫີນລິກໄນ ຢູ່ເມືອງຫົງສາ;
- ສ້າງເຂດການຄ້າຊາຍແດນ ຢູ່ ເມືອງເງິນ ແລະ ເມືອງແກ່ນທ້າວ;
- ກໍ່ສ້າງຕາຝັ່ງເຈື່ອນ ຕາມລຳນ້ຳເຫືອງ;
- ກໍ່ສ້າງຂົວຂ້າມນ້ຳຂອງ ຢູ່ເມືອງປາກລາຍ (ທ່າເດື່ອ ເມືອງໄຊຍະບູລີ, ປາກຄອນ ຫລວງພະບາງ).

**ຊຽງຂວາງ**

- ສົ່ງເສີມການລ້ຽງສັດໃຫຍ່ ເພື່ອເປັນສິນຄ້າປາຍແໝມສົ່ງອອກປະເທດເພື່ອນບ້ານ ແລະ ການປຸງແຕ່ງສະບຽງອາຫານ;
- ສົ່ງເສີມການທ່ອງທ່ຽວທາງດ້ານທຳມະຊາດ, ວັດຖຸບູຮານ ແລະ ປະຫວັດສາດ;

- ສ້າງຕັ້ງເຂດອຸດສາຫະກຳ ໂດຍເນັ້ນໃສ່ການປຸງແຕ່ງແຮ່ທາດ ເຊັ່ນ: ຄຳ ແລະ ສຳເລັດການສຳຫຼວດ ແຮ່ເຫຼັກ ເພື່ອສາມາດດຳເນີນການຂຸດຄົ້ນ.
- ສຸມໃສ່ສຳເລັດການສ້າງຊົນລະປະທານນ້ຳແທ້ ເພື່ອສົ່ງເສີມການປູກເຂົ້າ, ສາລີ ແລະ ພືດສະບຽງອາຫານອື່ນໆ.
- ສ້າງເສັ້ນທາງຜ່ານດ້ານໄປສະຍີ ແລະ ໂທລະຄົມມະນາຄົມ ເພື່ອເຊື່ອມໂຍງກັບພາກເໜືອ ຫວຽດນາມ

**ຫົວພັນ:**

- ພັດທະນາການທ່ອງທ່ຽວປະຫວັດສາດ, ວັດທະນະທຳ;
- ສຳຫຼວດຄວາມເປັນໄປໄດ້ໃນການສ້າງສະຫນາມບິນຫົວພັນ;
- ຂະຫຍາຍຕາຂ່າຍໄຟຟ້າໄປສູ່ບັນດາເມືອງ ແລະ ຊົນນະບົດໃຫ້ສຳເລັດໂດຍພື້ນຖານ;
- ກໍ່ສ້າງເສັ້ນທາງ 6A, 6B ອອກສູ່ຊາຍແດນຫວຽດນາມ;
- ສຳຫຼວດຄວາມເປັນໄປໄດ້ໃນການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກນ້ຳແອດ.....
- ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນ ໃຫ້ແກ່ການທ່ອງທ່ຽວປະຫວັດສາດ ແລະ ວັດທະນະທຳ.
- ສ້າງເສັ້ນທາງຜ່ານດ້ານໄປສະຍີ ແລະ ໂທລະຄົມມະນາຄົມ ເພື່ອເຊື່ອມໂຍງກັບພາກເໜືອ ຫວຽດນາມ

**ແຂວງວຽງຈັນ:**

- ສົ່ງເສີມການປູກພືດທີ່ເປັນປາຍແຫຼມ ເຊັ່ນ: ເຂົ້າຈ້າວເພື່ອປ້ອນໂຮງງານເບຍ ຢູ່ 4 ເມືອງທົ່ງພຽງ ແລະ ຊະນາຄາມ, ສາລີ ເພື່ອປ້ອນໂຮງງານຫົວອາຫານສັດ ຢູ່ເຂດລ້ອງງື່ມ ເມືອງທຸລະຄົມ, ວັງວຽງ, ກາສີ ແລະ ຊະນະຄາມ, ຫມາກເດືອຍ, ແລະ ພືດຜັກຕ່າງໆ.
- ກໍ່ສ້າງຂົວຂ້າມນ້ຳງື່ມ ຢູ່ທີ່ບ້ານເມືອງເກົ່າ;
- ຊຸກຍູ້ການກໍ່ສ້າງເຂື່ອນໄຟຟ້າໃຫ້ສຳເລັດ ເຊັ່ນ: ນ້ຳງື່ມ II, ນ້ຳງື່ມ III, ນ້ຳເລີກ ½, ນ້ຳເລີກ I, ນ້ຳແກນ...
- ກໍ່ສ້າງຕາຝັ່ງເຈື່ອນ ຕາມລຳແມ່ນ້ຳຂອງ;
- ສ້າງເຂດຈຸດສຸມເສດຖະກິດ-ວັດທະນະທຳ ຢູ່ເມືອງໂພນໂຮງ ແລະ ເມືອງວັງວຽງ ເປັນໃຈກາງການທ່ອງທ່ຽວ-ບໍລິການ ໂດຍຫັນໃຫ້ເປັນຕົວເມືອງນ້ອຍທັນສະໄຫມ.
- ພັດທະນາການທ່ອງທ່ຽວອ່າງນ້ຳງື່ມເຂດໜ້າເຂື່ອນ, ສ້າງຕັ້ງສູນບໍລິການການທ່ອງທ່ຽວ ຢູ່ວັງວຽງ ແລະ ບັນດາການທ່ອງທ່ຽວເຊື່ອມຕໍ່ ບັນດາແຂວງພາກກາງ ແລະ 4 ແຂວງພາກເໜືອຕອນລຸ່ມ.

### 4.1.2. ເຂດພາກກາງ

**[1]. <u>ຄາດໝາຍຕົ້ນຕໍ:</u>**

ສູ້ຊົນເຮັດໃຫ້ການຂະຫຍາຍຕົວທາງດ້ານເສດຖະກິດໃນລະດັບສູງ ແລະ ຫມັ້ນທ່ຽງ ໂດຍເລັ່ງໃສ່ພັດທະນາອຸດສາຫະກຳການປຸງແຕ່ງທີ່ດຶງດູດແຮງງານຫຼາຍ ແນໃສ່ເພື່ອເຮັດໃຫ້ອັດຕາສ່ວນແຮງງານໃນບັນດາຂະແໜງທີ່ບໍ່ແມ່ນກະສິກຳເພີ່ມຂຶ້ນ. ສູ້ຊົນຮອດປີ 2015 ລວມຍອດຜະລິດຕະພັນພາຍໃນໄດ້ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 2.200 ໂດລາສະຫະລັດ. ໂຄງປະກອບເສດຖະກິດໃນປີ 2015 ຂະແໜງກະສິກຳກວມ 23%,

ອຸດສາຫະກຳກວມ 42% ແລະ ບໍລິການກວມ 35% ຂອງໂຄງປະກອບ GDP. ການຂະຫຍາຍຕົວຂອງພົນລະເມືອງສະເລ່ຍ 2% ຕໍ່ປີ, ຮອດປີ 2015 ຄາດວ່າຈະມີພົນລະເມືອງ ປະມານ 3 ລ້ານຄົນ.

ລະດົມກຳລັງແຮງສັງລວມ, ຂຸດຄົ້ນທ່າແຮງບົ່ມຊ້ອນ ແລະ ທ່າແຮງໄດ້ປຽບຂອງເຂດຢ່າງມີປະສິດທິຜົນ ເພື່ອເຮັດໃຫ້ເຂດພາກກາງກາຍເປັນເຂດຈຸດສຸມພັດທະນາໄວ, ຫມັ້ນທ່ຽງ, ນຳຫນ້າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄຫມ, ກາຍເປັນກຳລັງແຮງໃນຂະບວນການພັດທະນາເສດຖະກິດ-ສັງຄົມຂອງທົ່ວປະເທດ ແລະ ເປັນຈຸດເຊື່ອມຕໍ່ເສດຖະກິດພາກເໜືອ ແລະ ພາກໃຕ້ຂອງປະເທດ, ເປັນຈຸດໃຈກາງການບໍລິການຜ່ານຂອງພາກພື້ນ ເຊັ່ນ: ທ່າເຮືອເທິງບົກ (Dry sea-port), ເຂດເສດຖະກິດພິເສດ, ການບໍລິການຜ່ານ, ສະໜາມບິນສາກົນ.

**[2]. <u>ຂະແໜງບູລິມະສິດ:</u>**

1. <u>ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນຕົ້ນຕໍເຊັ່ນ:</u>

ຄົ້ນຄ້ວາສ້າງທາງດ່ວນ ຫຼື ທາງລົດໄຟ ເຊື່ອມຕໍ່ລະຫວ່າງພາກເໜືອ, ພາກກາງ ແລະ ພາກໃຕ້ ເພື່ອຮັບໃຊ້ວຽກງານຄົມມະນາຄົມ ໂດຍສະເພາະແມ່ນການຂົນສົ່ງສິນຄ້າໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ໂດຍໃຊ້ເວລາສັ້ນ.

- ສ້າງພື້ນຖານໂຄງລ່າງທີ່ຈຳເປັນ ແລະ ສາມາດນຳໃຊ້ຮ່ວມກັນ ລະຫວ່າງບັນດາແຂວງ.

2. <u>ພັດທະນາ 4 ຂະແໜງການຕົ້ນຕໍຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ :</u>

ກ. <u>ຂະແໜງກະສິກຳ-ປ່າໄມ້:</u> ສຸມໃສ່ການປູກເຂົ້າ, ອ້ອຍ, ຢາງພາລາ, ມັນຕົ້ນ, ປູກມອນລ້ຽງມ້ອນ, ໄມ້ເກດສະໜາ, ໄມ້ອີກ, ຕົ້ນໄມ້ກິນໝາກ, ພືດຜັກອຸດສາຫະກຳໄລຍະສັ້ນ, ລ້ຽງສັດນ້ອຍ ເຊັ່ນ: ໝູ, ແບ້, ສັດປີກ ແລະ ສົ່ງເສີມການລ້ຽງປາ.

ຂ. <u>ຂະແໜງອຸດສາຫະກຳ, ພະລັງງານໄຟຟ້າ ແລະ ບໍ່ແຮ່:</u> ສືບຕໍ່ຍູ້ແຮງພັດທະນາຂະແໜງອຸດສາຫະກຳຈຳນວນໜຶ່ງ ທີ່ເປັນທ່າແຮງ ແລະ ດຶງດູດແຮງງານຈຳນວນຫຼາຍ ເຊັ່ນ: ອຸດສາຫະກຳປຸງແຕ່ງ-ກະສິກຳ-ປ່າໄມ້, ພະລັງງານ-ໄຟຟ້າ, ບໍ່ແຮ່, ໂຮງງານປະກອບຊິ້ນສ່ວນ, ຕັດຫຍິບ, ວັດສະດຸກໍ່ສ້າງ.

ຄ. <u>ຂະແໜງບໍລິການ, ການຄ້າ ແລະ ທ່ອງທ່ຽວ:</u>

– ສຸມໃສ່ພັດທະນາບໍລິການແບບຄົບວົງຈອນ (Logistic) ໂດຍສະເພາະ ການອຳນວຍຄວາມສະດວກດ້ານການຄ້າ ແລະ ການຂົນສົ່ງຜ່ານແດນໃຫ້ວ່ອງໄວຂຶ້ນກວ່າເກົ່າທີ່ຜ່ານເສັ້ນທາງເລກ 9, 8 ແລະ 12;

– ດ້ານການຄ້າ: ສຸມໃສ່ຂະຫຍາຍຕາໜ່າງການຄ້າພາຍໃນ, ການສົ່ງອອກສິນຄ້າທີ່ມີທ່າແຮງໄດ້ປຽບເປັນຕົ້ນແມ່ນ: ໄຟຟ້າ, ແຮ່ທາດ, ສິນຄ້າຫັດຖະກຳ, ຜະລິດຕະພັນກະສິກຳ, ການຄ້າຜ່ານ ແລະ ການຄ້າຊາຍແດນ;

– ດ້ານການທ່ອງທ່ຽວ: ສຸມໃສ່ຂຸດຄົ້ນ ແລະ ພັດທະນາແຫຼ່ງທ່ອງທ່ຽວແບບອະນຸລັກ ເຊັ່ນ: ທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ; ໂດຍສະເພາະ ສະເໜີແຫຼ່ງທ່ອງທ່ຽວທຳມະຊາດບໍລິເວນ ພູພຽງນາກາຍພູຫີນປູນ ໃຫ້ອົງການ UNESCO ພິຈາລະນາເປັນທຳມະຊາດມໍລະດົກໂລກ, ພັດທະນາແຫຼ່ງທ່ອງທ່ຽວຮ່ອງຮອຍໄດໂນເສົາ ຢູ່ແຂວງສະຫວັນນະເຂດ, ກຳແພງຫີນ ຢູ່ແຂວງຄຳມ່ວນ, ປັບປຸງການບໍລິການ ການທ່ອງທ່ຽວທັງທາງດ້ານປະລິມານ ແລະ ຄຸນນະພາບ ເປັນຕົ້ນ: ເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວ, ພາຫະນະຂົນສົ່ງ, ທີ່ພັກອາໄສ, ການບໍລິການທາງດ້ານອາຫານ ແລະ ເຄື່ອງດື່ມ, ການບໍລິການນຳທ່ຽວ ເພື່ອຕອບ ສະ

ໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດທ່ອງທ່ຽວ; ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ມີຄວາມຫລາກຫລາຍ ແລະ ມີສີສັນຕາມລະດູການທ່ອງທ່ຽວ ໂດຍສຸມໃສ່ສົ່ງເສີມການທ່ອງທ່ຽວເຊື່ອມຕໍ່ 3 ປະເທດ ຫວຽດນາມ-ລາວ-ໄທ ຕາມເສັ້ນທາງເລກ 8, 9, ແລະ ເລກ 12 ໃຫ້ມີລັກສະນະຄົບວົງຈອນ.

– ດ້ານໄປສະນີ ແລະ ໂທລະຄົມມະນາຄົມ: ສ້າງສູນກາງດ້ານໄປສະນີເຊື່ອມໂຍງກັບອະນຸພາກພື້ນ ແລະ ສ້າງສູນກາງໂທລະຄົມມະນາຄົມໃຫ້ເປັນພື້ນຖານໂຄງລ່າງແຫ່ງຊາດ.

3. <u>ຂະແໜງສັງຄົມ:</u>

ສຸມໃສ່ພັດທະນາດ້ານສັງຄົມ ເພື່ອຕອບສະໜອງການພັດທະນາຂະແໜງບູລິມະສິດທາງດ້ານເສດຖະກິດ ເຊັ່ນ:

+ ດ້ານສຶກສາ: ຂະຫຍາຍໂຮງຮຽນອາຊີວະສຶກສາສຳລັບພາກກາງໃນຂະແໜງວິຊາຕ່າງໆ ເຊັ່ນ: ວິຊາໄຟຟ້າ, ບໍ່ແຮ່, ຫັດຖະກຳ, ກໍ່ສ້າງ, ການນຳທ່ຽວ, ການປຸງແຕ່ງ, ການບໍລິການທາງຜ່ານ ເພື່ອຕອບສະໜອງຄວາມຕ້ອງການຂອງຂະແໜງການບູລິມະສິດ, ຂະຫຍາຍມະຫາວິທະຍາໄລສະຫວັນນະເຂດໃຫ້ເປັນມະຫາວິທະຍາໄລ ສຳລັບພາກກາງທີ່ສາມາດຮອງຮັບນັກສຶກສາໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ.

+ ດ້ານສາທາ: ສືບຕໍ່ປັບປຸງ ແລະ ຍົກລະດັບເຄື່ອງມືອຸປະກອນການແພດຂອງໂຮງໝໍພາກກາງທີ່ແຂວງສະຫວັນນະເຂດໃຫ້ທັນສະໄໝໃຫ້ຂຶ້ນກວ່າເກົ່າ, ຍົກລະດັບຈັນຍາບັນຂອງແພດປິ່ນປົວ, ປັບປຸງການບໍລິການການປິ່ນປົວ.

+ ດ້ານແຮງງານ: ສຸມໃສ່ຄຸ້ມຄອງແຮງງານເຄື່ອນຍ້າຍ ແລະ ຍົກລະດັບສີມືແຮງງານພາຍໃນ ເພື່ອຕອບສະໜອງກັບຄວາມຕ້ອງການແຮງງານຂອງຂະແໜງທີ່ເປັນບູລິມະສິດ ເຊັ່ນ: ໄຟຟ້າ, ບໍ່ແຮ່, ຫັດຖະກຳ, ກໍ່ສ້າງ, ການນຳທ່ຽວ, ການປຸງແຕ່ງ ແລະ ການບໍລິການຜ່ານ.

4. <u>ຂະແໜງສິ່ງແວດລ້ອມ:</u>

ສຸມໃສ່ຄຸ້ມຄອງ, ປົກປັກຮັກສາສະພາບແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ເປັນຕົ້ນ: ປ່າໄມ້, ບໍ່ແຮ່, ແຫຼ່ງນ້ຳ, ທີ່ດິນໃຫ້ມີຄວາມຍືນຍົງ ແລະ ສົ່ງຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ. ໃນເຂດ ທີ່ມີການສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່ ຕ້ອງມີການຕິດຕາມ ແລະ ກວດກາຢ່າງເປັນປົກກະຕິ ເພື່ອໃຫ້ ເຈົ້າຂອງໂຄງການ ຫຼື ຜູ້ລົງທຶນ ປະຕິບັດຕາມສັນຍາຢ່າງເຄັ່ງຄັດ ໂດຍສະເພາະການປັບປຸງປົວແປງໃຫ້ຢູ່ໃນ ສະພາບທີ່ດີ.

**[3]. <u>ຈັດວາງຈຸດສຸມການພັດທະນາ:</u>**

ສຸມໃສ່ພັດທະນາສູນກາງເສດຖະກິດຢູ່ນະຄອນຫຼວງວຽງຈັນ, ເຂດອຸດສາຫະກຳ ຢູ່ແຂວງສະຫວັນນະເຂດ, ສູນກາງທ່ອງທ່ຽວ ແລະ ບໍລິການ ຢູ່ແຂວງຄຳມ່ວນ, ສີ່ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ແລະ ເໜືອ-ໃຕ້ ຄື: ບ້ານເລີ່ຍ-ແກ່ວເໜືອ (ທາງເລກທີ 8), ສະຫວັນນະເຂດ-ແດນສະຫວັນ (ທາງເລກທີ 9), ທ່າແຂກ-ກົ່ວມູຍາ (ທາງເລກທີ 12), ນະຄອນຫລວງ-ສະຫວັນນະເຂດ (ທາງເລກທີ 13ໃຕ້).

ສຸມໃສ່ພັດທະນາເສດຖະກິດພິເສດສະຫວັນ-ເຊໂນ ແລະ ເຂດການຄ້າເສລີແດນສະຫວັນ (ສະຫວັນນະເຂດ) ຕິດກັບຊາຍແດນລາວ-ຫວຽດນາມ ຢູ່ແຂວງກວາງຈິ. ພ້ອມດຽວກັນນັ້ນ, ກຳພັດທະນາບັນດາເຂດເສດຖະກິດດ່ານຊາຍແດນລາວ-ຫວຽດນາມ.

**ຈຸດສຸມໃນການພັດທະນາຂອງບັນດາແຂວງພາກກາງ ມີດັ່ງນີ້:**

**ນະຄອນຫຼວງວຽງຈັນ:**

- ສຸມໃສ່ການປູກເຂົ້າຈ້າວປ້ອນໂຮງງານອຸດສາຫະກຳປຸງແຕ່ງພາຍໃນໂດຍສຸມໃສ່ 3 ເມືອງ: ເມືອງຫາດຊາຍຟອງ, ໄຊທານີ ແລະ ປາກງື່ມ;
- ປູກສາລີແຂງປ້ອນໂຮງງານຫົວອາຫານສັດ;
- ປູກມອນ ເພື່ອພັດທະນາອາຊີບລ້ຽງມ້ອນ ເພື່ອສະໜອງໄຫມໃຫ້ແກ່ຕະຫຼາດພາຍໃນ ໂດຍເລັ່ງໃສ່ເມືອງປາກງື່ມ, ສັງທອງ ແລະ ເມືອງໄຊທານີ;
- ປູກມັນຕົ້ນ ເພື່ອສະໜອງໂຮງງານຜະລິດແປ້ງມັນຕົ້ນ ໂດຍເລັ່ງໃສ່ 5 ເມືອງ: ສັງທອງ, ປາກງື່ມ, ສີໂຄດຕະບອງ, ນາຊາຍທອງ ແລະ ເມືອງໄຊທານີ;
- ສຸມໃສ່ພັດທະນາຕະຫຼາດໃຫຍ່ ເຊັ່ນ: ຕະຫຼາດເຊົ້າ, ຕະຫຼາດໜອງຈັນ, ຕະຫຼາດຫາດຫຼວງ, ຕະຫຼາດສີໄຄ ໃຫ້ກາຍເປັນຕະຫຼາດທີ່ທັນສະໄໝ;
- ສ້າງເຂດອຸດສາຫະກຳເພື່ອສົ່ງອອກ ແລະ ນິຄົມອຸດສາຫະກຳ ແລະ ການຄ້າຫຼັກ 21 ໃຫ້ສຳເລັດ ເພື່ອເປັນເງື່ອນໄຂຊຸກຍູ້ໃຫ້ຕະຫຼາດຈຳໜ່າຍສິນຄ້າ ແລະ ຂະຫຍາຍຕາໜ່າງການຄ້າ;
- ສຳຫຼວດ ແລະ ກໍ່ສ້າງທາງດ່ວນ ວຽງຈັນ-ວັງວຽງ;
- ກໍ່ສ້າງຕາຝັ່ງເຈື່ອນຕາມລຳແມ່ນ້ຳຂອງຈຸດທີ່ມີຄວາມສ່ຽງສູງ.
- ສ້າງສູນກາງເຊື່ອມໂຍງກັບອະນຸພາກພື້ນ ໃນດ້ານໄປສະຍີ, ໂທລະຄົມ, ອິນເຕີເນັດ, ໄອທີ ໂດຍສະເພາະ ສູນຄຸ້ມຄອງການຊຳລະສະສາງດ້ານການເງິນອອນລາຍ, ສູນຂໍ້ມູນເອເລັກໂຕຣນິກແຫ່ງຊາດ, ສູນຮັກສາຄວາມປອດໄພດ້ານຂໍ້ມູນອິນເຕີເນັດ, ລະບົບເຕືອນໄພພິບັດ, ສູນກາງ e-application, ສູນຄຸ້ມຄອງຄື້ນຄວາມຖີ່ວິທະຍຸແຫ່ງຊາດ, ສູນຄຸ້ມຄອງລະຫັດອິນເຕີເນັດແຫ່ງຊາດ, ສູນຄຸ້ມຄອງການເປັນທາງຜ່ານດ້ານໄອຊີທີ.

**ແຂວງບໍລິຄຳໄຊ:**

- ສົ່ງເສີມການປູກພືດໄລຍະສັ້ນ ເຊັ່ນ: ເຂົ້າ, ຢາສູບ, ສາລີ, ມັນຕົ້ນ ແລະ ພືດຜັກອື່ນໆ ເພື່ອບໍລິໂພກພາຍໃນ ແລະ ສະໜອງໃຫ້ແກ່ອຸດສາຫະກຳປຸງແຕ່ງ;
- ສົ່ງເສີມການລ້ຽງສັດເປັນຟາມ;
- ຊຸກຍູ້ການກໍ່ສ້າງເຂື່ອນໄຟຟ້າ: ນ້ຳເທີນ1, ເທີນຫີນບູນພາກຂະຫຍາຍ, ນ້ຳງຽບ1, ນ້ຳເທີນ4;
- ດຳເນີນການສຳຫຼວດແຮ່ທາດຕ່າງໆ: ແຮ່ຄຳ ນາກະດົມ, ແຮ່ກົ່ວ, ຫີນປູນ ແລະ ຫີນຖານິດ;
- ກໍ່ສ້າງຍົກລະດັບເສັ້ນທາງເລກ ID, ເສັ້ນທາງວຽງທອງ-ໄຊຈຳພອນ-ຊາຍແດນແທງທຸຍ ສສ. ຫວຽດນາມ, ສຳຫຼວດ ແລະ ກໍ່ສ້າງທາງ IE (ຄຳເກີດ-ນາກາຍ);
- ສ້າງຕັ້ງເຂດອຸດສາຫະກຳ ໂດຍເນັ້ນໃສ່ອຸດສາຫະກຳປຸງແຕ່ງ: ຢາງພາລາ, ໄມ້ເກດສະໜາ, ຫົວອາຫານສັດໃຫຍ່ ແລະ ປຸງແຕ່ງແຮ່ທາດ;
- ກໍ່ສ້າງຕາຝັ່ງເຈື່ອນຕາມລຳແມ່ນ້ຳຈຸດເມືອງທ່າພະບາດ, ເມືອງປາກຊັນ ແລະ ເມືອງປາກກະດິງ.
- ສ້າງລະບົບເຊື່ອມໂຍງເປັນທາງຜ່ານ ດ້ານໄທລະຄົມມະນາຄົມ ແລະ ອິນເຕີເນັດ.

**ຄຳມ່ວນ:**

- ສົ່ງເສີມການປູກເຂົ້າກ້າກີບດຽວ ຢູ່ເຂດເຊບັ້ງໄຟ, ຫີນບູນ. ພັດທະນາເຂດລຸ່ມເຮືອນຈັກນ້ຳເທີນ 2 ແລະ ເທີນຫີນບູນ ເພື່ອປູກເຂົ້າ ແລະ ພືດກະສິກຳຕ່າງໆ;
- ພັດທະນາຕົວເມືອງທ່າແຂກເປັນເມືອງທ່ອງທ່ຽວໂດຍເຊື່ອມຕໍ່ທາງເລກ 12;
- ພັດທະນາເຂດຫົວຂົວເປັນເຂດເສດຖະກິດພິເສດ;
- ສົ່ງເສີມການບໍລິການຜ່ານ;
- ສຳເລັດການກໍ່ສ້າງຂົວຂ້າມແມ່ນ້ຳຂອງ ລາວ-ໄທ;
- ກໍ່ສ້າງຕາຝັ່ງເຈື່ອນຕາມລຳແມ່ນ້ຳຈຸດເມືອງຫີນບູນ.

**ສະຫວັນນະເຂດ:**

- ປັບປຸງສູນຄົ້ນຄວ້າ, ວິໄຈ, ສູນບໍລິການເຕັກນິກແນວພັນໃຫ້ແກ່ຊາວກະສິກອນ;
- ສົ່ງເສີມການປູກພືດ ແລະ ຕົ້ນໄມ້ອຸດສາຫະກຳຕ່າງໆ ເພື່ອສະໜອງໃຫ້ແກ່ການບໍລິໂພກ ແລະ ປຸງແຕ່ງພາຍໃນ ເຊັ່ນ: ເຂົ້າ, ຖົ່ວ, ສາລີ, ອ້ອຍ, ຜັກປອດສານພິດ, ມັນຕົ້ນ, ຝ້າຍ, ປູກມອນ ແລະ ອື່ນໆ;
- ສຳຫຼວດ ແລະ ກໍ່ສ້າງເຂື່ອນໄຟຟ້າເຊບັ້ງໜຽງ 3 (ນ້ຳເຊໂປນ), ເຂື່ອນໄຟຟ້າຕາດສະແລນ;
- ສົ່ງເສີມການທ່ອງທ່ຽວທຳມະຊາດ, ນິເວດວິທະຍາ, ມູນເຊື້ອປະຫວັດສາດ ແລະ ວັດທະນະທຳ ໂດຍເນັ້ນໃສ່ການພັດທະນາເສັ້ນທາງເລກ 9;
- ສ້າງເຂດການຄ້າຊາຍແດນ ແດນສະຫວັນ ໃຫ້ກາຍເປັນຕົວເມືອງນ້ອຍ ແລະ ເປັນສູນກາງຄ້າຂາຍ-ບໍລິການດ້ານຕາເວັນອອກ;
- ສຸມໃສ່ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ເຂດເສດຖະກິດພິເສດສະຫວັນ-ເຊໂນ.
- ສູນກາງຄຸ້ມຄອງການບໍລິການໄປສະນີທາງຜ່ານກັບໄທ ແລະ ຫວຽດນາມ, ສ້າງສູນອິນເຕີເນັດແຫ່ງຊາດສຳຮອງ, ສ້າວລະບົບເຊື່ອມໄຍງເປັນທາງຜ່ານດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ.

### 4.1.3. ເຂດພາກໃຕ້

**[1]. <u>ຄາດໝາຍຕົ້ນຕໍ:</u>**

ຍູ້ແຮງການຂະຫຍາຍຕົວທາງດ້ານເສດຖະກິດໃນຈັງຫວະໄວ ໂດຍເລັ່ງໃສ່ພັດທະນາອຸດສາຫະກຳ ປຸງແຕ່ງທີ່ດຶງດູດແຮງງານຫຼາຍ ແນໃສ່ເຮັດໃຫ້ອັດຕາສ່ວນແຮງງານໃນບັນດາຂະແໜງທີ່ບໍ່ແມ່ນກະສິກຳເພີ່ມຂຶ້ນ. ສູ້ຊົນຮອດປີ 2015 ລວມຍອດຜະລິດຕະພັນພາຍໃນໄດ້ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 1.300 ໂດລາ ສະຫະລັດ. ໂຄງປະກອບເສດຖະກິດໃນປີ 2015 ຂະແໜງກະສິກຳກວມ 30%, ອຸດສາຫະກຳກວມ 36% ແລະ ບໍລິການກວມ 34% ຂອງໂຄງປະກອບ GDP. ການຂະຫຍາຍຕົວຂອງພົນລະເມືອງສະເລ່ຍ 2% ຕໍ່ປີ, ຮອດປີ 2015 ຄາດວ່າຈະມີພົນລະເມືອງ ປະມານ 1,4 ລ້ານຄົນ.

**[2]. <u>ຂະແໜງບູລິມະສິດ</u>:**

1. <u>ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນຕົ້ນຕໍເຊັ່ນ:</u>

- ຄົ້ນຄວ້າສ້າງທາງດ່ວນ ຫຼື ທາງລົດໄຟ ລະຫວ່າງພາກກາງ ແລະ ພາກໃຕ້ ເພື່ອຮັບໃຊ້ວຽກງານຄົມມະນາຄົມ ແລະ ຂົນສົ່ງສິນຄ້າ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ.

- ປັບປຸງສ້າງພື້ນຖານໂຄງລ່າງທີ່ຈຳເປັນທີ່ສາມາດນຳໃຊ້ຮ່ວມກັນຢ່າງມີປະສິດທິຜົນ ລະຫວ່າງບັນດາແຂວງພາກໃຕ້ ເຊັ່ນ: ເສັ້ນທາງຫຼວງສາຍຕັ້ງ 1J ຈາກຊາຍແດນກຳປູເຈຍ-ອັດຕະປື ຜ່ານເມືອງພູວົງ-ເສັ້ນທາງ 1I ເມືອງລະມາມ-ເສັ້ນທາງເລກທີ 16-ເສັ້ນທາງ 1H-1G-ເມືອງນອງ-ເມືອງພິນ-ເສັ້ນທາງເລກ 9 (ເສັ້ນທາງ GMS). ເສັ້ນທາງສາຍຂວາງ: (1) ເສັ້ນທາງ 18A (ອັດຕະປື-ປະທຸມພອນ)-ເສັ້ນທາງ 13 ໃຕ້. (2) ເສັ້ນທາງ 10B-ເມືອງປາກເຊ-ເສັ້ນທາງ 13 ໃຕ້-ດ່ານວັງເຕົ່າ (ຊາຍແດນລາວ-ໄທ); (3) ເສັ້ນທາງເລກທີ 15A (ຊາຍແດນລາວ-ຫວຽດນາມ)-ເສັ້ນທາງ 15B-ເສັ້ນທາງເລກທີ 13 ໃຕ້ ເຂດນາປ່ຽງ ແຂວງສາລະວັນ. ສ້າງບັນດາເສັ້ນທາງເຊື່ອມຕໍ່ບັນດາທາງຫຼວງແຫ່ງຊາດ ແລະ ທາງທ້ອງຖິ່ນຕ່າງໆທີ່ມີຄວາມຈຳເປັນ ແລະ ມີປະສິດທິຜົນສູງ.

2. <u>ພັດທະນາ 4 ຂະແໜງການຕົ້ນຕໍຕາມທິດທັນເປັນອຸດສາຫະກຳ ແລະທັນສະໄໝ :</u>

ກ. <u>ຂະແໜງການກະສິກຳ-ປ່າໄມ້:</u> ສຸມໃສ່ການຜະລິດສິນຄ້າສະບຽງອາຫານ ເປັນຕົ້ນແມ່ນ ເຂົ້າ, ຜັກ, ກາເຟ, ຊາ, ໝາກແໜ່ງ, ໝາກຖຸລຽນ, ຜະລິດພືດ ແລະ ຕົ້ນໄມ້ອຸດສາຫະກຳ ເປັນຕົ້ນ: ຢາງພາລາ, ໝາກມ່ວງຫິມະພານ, ຕົ້ນມອນ; ສຸມໃສ່ລ້ຽງປາ, ສັດປີກ, ໝູ, ແບ້.

ຂ. <u>ຂະແໜງອຸດສາຫະກຳ, ພະລັງງານໄຟຟ້າ ແລະ ບໍ່ແຮ່:</u> ສຸມໃສ່ພັດທະນາໄຟຟ້າພະລັງງານນ້ຳ ເຊັ່ນ: ເຊຂະຫມານ1, ເຊຂະຫມານ0, ນ້ຳກົງ1, ນ້ຳກົງ2, ນ້ຳກົງ3, ເຊປຽນ-ເຊນ້ຳນ້ອຍ, ເຊປຽນ-ຫ້ວຍຊອຍ, ເຊກອງ3, ເຊກອງ4 ແລະ ເຊກອງ5, ບັນດາໂຄງການຂຸດຄົ້ນ ແລະ ປຸງແຕ່ງທອງແດງ ຢູ່ແຂວງ ຈຳປາສັກ, ບົກຊິດ (ອາລູມິນຽມ) ຢູ່ແຂວງ ອັດຕະປື ແລະ ແຂວງຈຳປາສັກ, ຂຸດຄົ້ນແຮ່ຄຳ ວັງຕັດ ແຂວງອັດຕະປື, ຖ່ານຫີນ ຢູ່ແຂວງສາລະວັນ ແລະ ແຂວງເຊກອງ, ອຸດສາຫະກຳປຸງແຕ່ງໄມ້, ປຸງແຕ່ງສະບຽງອາຫານ, ຫັດຖະກຳ ເຊັ່ນ: ຕ່ຳແຜ່ນ, ຕ່ຳຜ້າໄຫມ, ເຄື່ອງປັ້ນດິນເຜົາ.

ຄ. <u>ການບໍລິການ, ການຄ້າ ແລະ ທ່ອງທ່ຽວ:</u>

- ການຄ້າ: ສຸມໃສ່ຂະຫຍາຍຕາໜ່າງການຄ້າ ລະຫວ່າງບັນດາແຂວງພາກໃຕ້, ການຄ້າຊາຍແດນ, ການສົ່ງອອກສິນຄ້າກະສິກຳ ເປັນຕົ້ນ: ເຂົ້າກິນ, ກາເຟ, ຊາ, ໝາກແໜ່ງ ແລະ ປະເພດຜັກຕ່າງໆ.

- ການທ່ອງທ່ຽວ: ສຸມໃສ່ພັດທະນາແຫລ່ງ ແລະ ການບໍລິການທ່ອງທ່ຽວທຳມະຊາດ ແລະ ປະຫວັດສາດ ເປັນຕົ້ນແມ່ນ ວັດພູຈຳປາສັກ, ນ້ຳຕົກຄອນພະເພັງ-ຫລີ່ຜີ, ເຂດມະຫານະທີສີພັນດອນ ແລະ ແຫລ່ງທ່ອງທ່ຽວອື່ນໆ ຢູ່ແຕ່ລະແຂວງ.

- ສ້າງສູນກາງຄຸ້ມຄອງຄື້ນຄວາມຖີ່ໃຫ້ສາມາດຄຸ້ມຄອງວຽກງານດັ່ງກ່າວໃນທົ່ວພາກໃຕ້, ສ້າງລະບົບເຊື່ອມໂຍງດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດເຊື່ອມກັບໄທ, ກຳປູເຈ້ຍ ແລະ ພາກໃຕ້ຂອງຫວຽດນາມ.

3. <u>ຂະແໜງສັງຄົມ:</u>

- ດ້ານສຶກສາ: ຂະຫຍາຍໂຮງຮຽນອາຊີວະສຶກສາສຳລັບພາກໃຕ້ໃນຂະແໜງວິຊາຕ່າງໆ ເຊັ່ນ: ວິຊາໄຟຟ້າ, ຫັດຖະກຳ, ກໍ່ສ້າງ, ການນຳທ່ຽວ, ການປຸງແຕ່ງ ເພື່ອຕອບສະໜອງຄວາມຕ້ອງການຂອງຂະແໜງ

ການບູລິມະສິດ, ຂະຫຍາຍມະຫາວິທະຍາໄລຈຳປາສັກ ໃຫ້ເປັນມະຫາວິທະຍາໄລ ສຳລັບພາກໃຕ້ທີ່ສາມາດ ຮອງຮັບນັກສຶກສາໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ປັບປຸງໂຮງຮຽນວິຊາຊີບຢູ່ແຕ່ລະແຂວງ.

- ດ້ານສາທາ: ສືບຕໍ່ປັບປຸງ ແລະ ຍົກລະດັບເຄື່ອງມືອຸປະກອນການແພດຂອງໂຮງໝໍພາກໃຕ້ ທີ່ ແຂວງຈຳປາສັກ ໃຫ້ທັນສະໄໝຂຶ້ນກວ່າເກົ່າ, ຍົກລະດັບຈັນຍາບັນຂອງແພດປິ່ນປົວ, ປັບປຸງການບໍລິການ ສາທາລະນະສຸກໃຫ້ມີປະສິດທິພາບສູງຂຶ້ນ.

- ດ້ານແຮງງານ: ສຸມໃສ່ພັດທະນາສີມືແຮງງານໃນດ້ານຕ່າງໆ ເຊັ່ນ: ການຝຶກອົບຮົມທາງດ້ານການ ຜະລິດກະສິກຳ-ຫັດຖະກຳ, ຊ່າງກໍ່ສ້າງ, ຊ່າງໄຟຟ້າ, ສ້ອມແປງ, ການນຳທ່ຽວ, ການປຸງແຕ່ງ ເພື່ອຍົກສະມັດ ຕະພາບແຮງງານໃຫ້ສູງຂຶ້ນ.

4. <u>ຂະແໜງສິ່ງແວດລ້ອມ:</u>

ສຸມໃສ່ຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ເປັນຕົ້ນ: ປ່າໄມ້, ແຫຼ່ງນ້ຳ, ທີ່ດິນໃຫ້ມີຄວາມຍືນຍົງ ແລະ ສົ່ງຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ. ເອົາໃຈໃສ່ວຽກງານຟື້ນຟູປ່າໄມ້ ໃຫ້ ຢູ່ໃນສະພາບທີ່ດີໂດຍໄວ, ສ້າງລະບົບເຕືອນໄພ ແລະ ປ້ອງກັນໄພພິບັດທາງທຳມະຊາດ ໂດຍສະເພາະ ໄພ ນ້ຳຖ້ວມ ຄຽງຄູ່ກັບການຄົ້ນຄວ້າ ແລະ ສ້າງແຜນຟື້ນຟູທີ່ມີປະສິດທິຜົນ.

**[3]. <u>ຈັດວາງຈຸດສຸມການພັດທະນາ:</u>**

ສຸມໃສ່ພັດທະນາໜຶ່ງສູນກາງເສດຖະກິດຂອງພາກໃຕ້ ຢູ່ແຂວງຈຳປາສັກ; ເອົາໃຈໃສ່ພັດທະນາສາມ ເຂດອຸດສາຫະກຳຢູ່ ແຂວງອັດຕະປື, ແຂວງເຊກອງ ແລະ ແຂວງສາລະວັນ; ສຸມໃສ່ພັດທະນາ 4 ແລວທາງ ເສດຖະກິດ ຄື: ຈຳປາສັກ-ເວີນຄາມ (ຊາຍແດນກຳປູເຈຍ); ວັງເຕົ່າ-ຈຳປາສັກ-ສາລະວັນ-ຊາຍແດນຫວຽດ ນາມ ແລະ ຈຸດແຍກທາງເລກທີ 13 ໃຕ້-ບ້ານແຫດ (ຊາຍແດນລາວ-ຫວຽດນາມ). ສຸມໃສ່ພັດທະນາເຂດ ເສດຖະກິດຊາຍແດນ ຄື: ວັງເຕົ່າ ແຂວງຈຳປາສັກ, ພູເກືອ ແຂວງອັດຕະປື, ດາກຕະອອກ ແຂວງເຊກອງ, ລະໄລ ແຂວງສາລະວັນ ແລະ ພູວົງ ແຂວງອັດຕະປື.

**ຈຸດສຸມໃນການພັດທະນາຂອງບັນດາແຂວງພາກໃຕ້ ມີດັ່ງນີ້:**

**ແຂວງຈຳປາສັກ:**

- ສົ່ງເສີມການປູກກາເຟ, ພືດຜັກປອດສານພິດ, ຊາ ແລະ ໝາກໄມ້ໃຫ້ໝາກ ຢູ່ເຂດພູພຽງບໍລິເວນ ເມືອງປາກຊ່ອງ. ປູກຢາງພາລາ, ໝາກມ່ວງຫິມະພານ ແລະ ໝາກໄມ້ໃຫ້ໝາກຢູ່ເຂດເຊື່ອມຕໍ່ພູພຽງ ບໍລິເວນກັບທົ່ງພຽງ. ປູກເຂົ້າ, ການລ້ຽງປາ, ການປູກມອນລ້ຽງມ້ອນ ແລະ ການປູກພືດຕະກຸນຖົ່ວ ຢູ່ ເຂດລຽບແຄມແມ່ນ້ຳຂອງ ກວມເອົາ 8 ຕົວເມືອງ. ລ້ຽງສັດ, ການປູກມັນຕົ້ນ ແລະ ໝາກເຍົ່າ ເພື່ອ ການຜະລິດທົນແທນພະລັງງານ.
- ພັດທະນາແຫຼ່ງທ່ອງທ່ຽວທຳມະຊາດເກາະດອນຕອນໃຕ້ສີພັນດອນ, ເຂດອະນຸລັກປາຂ່ານ້ຳຂອງ ແລະ ບັນດາເກາະດອນຕ່າງໆ. ພັດທະນາແຫຼ່ງທ່ອງທ່ຽວວັດທະນະທຳ-ວັດຖຸບູຮານ ວັດພູຈຳປາສັກຕິດພັນ ກັບການທ່ອງທ່ຽວທຳມະຊາດ.
- ຊຸກຍູ້ສົ່ງເສີມບໍລິສັດສຳປະທານ ຂຸດຄົ້ນແຮ່ບົກສິດ.

- ກໍ່ສ້າງພື້ນຖານໂຄງລ່າງເພື່ອເອື້ອອຳນວຍຄວາມສະດວກຢູ່ເຂດຈັດສັນການຜະລິດອຸດສາຫະກຳຫລັກ 16 ເມືອງບາຈຽງ, ຫລັກ 12 ເມືອງ ໂພນທອງ, ຫລັກ 30 ເມືອງ ຊະນະສົມບູນ ແລະ ເຂດ ບໍລິການການຄ້າຊາຍແດນອັງເຕົ່າເມືອງໂພນທອງ, ຫນອງນົກຂຽນ ເມືອງໂຂງ.
- ສ້າງຂົວຂ້າມແມ່ນ້ຳຂອງ ຈຸດບ້ານຫາດ-ດອນໂຂງ, ຫົວໂຂງແຫລມ-ດອນສັນ, ສ້າງທ່າຍັກຫົວໂຂງ-ບ້ານນາຕານ ແນໃສ່ເພື່ອຮັບໃຊ້ວົງຈອນການທ່ອງທ່ຽວ. ກໍ່ສ້າງຂົວຂ້າມນ້ຳເຊໂດນ ແຫ່ງທີສາມ, ສືບຕໍ່ກໍ່ສ້າງເສັ້ນທາງປາກຊ່ອງຫ້ວຍກອງ ເພື່ອເຊື່ອມຕໍ່ກັບ ບ້ານໃຫມ່ ແຂວງອັດຕະປື, ສືບຕໍ່ກໍ່ສ້າງປູຢາງ ເສັ້ນທາງ14C ແຕ່ເມືອງມູນ-ບ້ານປ່າກ້ວຍ ເພື່ອເຊື່ອມຕໍ່ໂຄງການສາມລ່ຽມມໍລະກົດ. ເສັ້ນທາງບ້ານ ເສັດ-ບ້ານໂສດ-ນາປາກງຽບ ເພື່ອເຊື່ອມຕໍ່ໂຄງການສາມຫລ່ຽມເສດຖະກິດ.
- ປັບປຸງເສັ້ນທາງການເດີນເຮືອທາງນ້ຳຂອງ (ແຕ່ບ້ານໃຫມ່ສີງສຳພັນ ລົງຮອດດອນຄອນ ເມືອງໂຂງ) ແລະ ເສັ້ນທາງເດີນເຮືອຕາມລຳນ້ຳເຊໂດນ.
- ຍົກລະດັບເດີ່ນບິນປາກເຊ ແລະ ບໍລິການໃຫ້ໄດ້ມາດຕະຖານສາກົນ.
- ສ້າງສູນຄຸ້ມຄອງຄວາມຖີ່ວິທະຍຸ, ລະບົບເຊື່ອມໄຍງດ້ານໂທລະຄົມກັບປະເທດໄທ ແລະ ກຳປູເຈ້ຍ

**ອັດຕະປື:**

- ສຳເລັດ ແລະ ນຳໃຊ້ໂຄງການກໍ່ສ້າງຊົນລະປະທານເຊປຽນ 1.500 ເຮັກຕາ.
- ສົ່ງເສີມການປູກເຂົ້າຢູ່ເຂດທົ່ງພຽງ, ປູກຢາງພາລາ ແລະ ຕົ້ນໄມ້ອຸດສາຫະກຳເຈ້ຍ.
- ລົງມືກໍ່ສ້າງເຂື່ອນໄຟຟ້າ ເຊຂະຫມານ1, ສຳຫຼວດເຂື່ອນໄຟຟ້າ ເຊປຽນ-ຫ້ວຍຊອຍ, ນ້ຳກົງ1, ນ້ຳກົງ 2, ນ້ຳກົງ 3, ເຊປຽນ-ເຊນ້ຳນ້ອຍ
- ລົງມືຂຸດຄົ້ນບໍ່ຄຳ ວັງຕັດ, ສຳຫຼວດບໍ່ທອງແດງ, ບົກຊິດ, ຊີນ, ສັງກະສີ.
- ກໍ່ສ້າງເສັ້ນທາງ 18A ອັດຕະປື-ປະທຸມພອນ, ທາງ 1J ແລະ ຂົວເຊຂະຫມານ ອັດຕະປື-ຊາຍແດນ ກຳປູເຈຍ ແລະ ເສັ້ນທາງ ອັດຕະປື-ຈຳປາສັກ; ອັດຕະປື-ເຊກອງ.
- ສຳຫຼວດ ແລະ ປັບປຸງສະຫນາມບິນອັດຕະປື.
- ກໍ່ສ້າງໂຮງໝໍຂະຫນາດ 200 ຕຽງ.
- ສ້າງລະບົບເຊື່ອມໂຍງດ້ານໂທລະຄົມກັບປະເທດຫວຽດນາມ

**ສາລະວັນ:**

- ສົ່ງເສີມການປູກເຂົ້າ, ລ້ຽງສັດ, ພືດອຸດສາຫະກຳ: ກາເຟ, ມັນຕົ້ນ, ມັນດ້ຽງ, ສາລີ, ກ້ວຍ, ຢາງ ພາລາ;
- ກໍ່ສ້າງຕະຫຼາດຊາຍແດນລາວ-ຫວຽດນາມ (ເມືອງສະໜ້ວຍ) ແລະ ພັດທະນາເຂດອຸດສາຫະກຳປຸງ ແຕ່ງກະສິກຳ;
- ສືບຕໍ່ກໍ່ສ້າງໂຄງການແກ້ງຄອງຫຼວງ ເມືອງລະຄອນເພັງ;
- ກໍ່ສ້າງເສັ້ນທາງ 15B (ສາລະວັນ-ນາປົ່ງ), ທາງ 1G (ແຍກ 15B-ຊາຍແດນສະຫວັນນະເຂດ); ກໍ່ ສ້າງເສັ້ນທາງ 15A-ເມືອງຕຸ້ມລານ;
- ກໍ່ສ້າງຕາຝັ່ງເຈື່ອນຕາມລຳແມ່ນ້ຳຂອງ ແລະ ແມ່ນ້ຳເຊໂດນ;

- ຂອກຄົ້ນສຳຫຼວດແຮ່ທາດ ເຊັ່ນ: ແຮ່ກົ່ວ, ດິນຂາວ, ຖ່ານຫີນ, ເຫຼັກ, ທອງ, ຄຳ;
- ສຳເລັດການກໍ່ສ້າງໂຮງງານຊີມັງ.

**ເຊກອງ:**

- ສົ່ງເສີມການເຮັດກະເສດສຸມຢູ່ 2 ເມືອງທ່າແຕງ ແລະ ລະມາມ; ສົ່ງເສີມການລ້ຽງສັດແບບເປັນຟາມ;
- ສົ່ງເສີມການປູກກາເຟ ແລະ ປູກພືດທາດແປ້ງ ແລະ ພືດອຸດສາຫະກຳເຊັ່ນ: ເຜືອກ, ມັນ, ມັນຕົ້ນ, ຖົ່ວເຫຼືອງ, ຖົ່ວດິນ ແລະ ພືດຜັກ ເພື່ອເປັນສິນຄ້າສະໜອງພາຍໃນ;
- ລົງມືກໍ່ສ້າງຊົນລະປະທານເຊປຽນ-ເຊນ້ຳນ້ອຍ;
- ກໍ່ສ້າງເສັ້ນທາງເຊກອງ-ກະລຶມ; ເຊກອງ-ດາກຈຶງ-ຊາຍແດນຫວຽດນາມ;
- ຊຸກຍູ້ການກໍ່ສ້າງເຂື່ອນໄຟຟ້າ: ຫ້ວຍລຳພັນ, ເຊຂະຫມານ 4, ເຊກອງ 4, ເຊກອງ 5, ເຊກອງ 3 ແລະ ຫ້ວຍດາກອີເມີນ;
- ຊຸກຍູ້ການສຳຫຼວດແຮ່ທາດ ເຊັ່ນ: ແຮ່ຄຳ, ແຮ່ບົກຊິດ, ແຮ່ເຫຼັກ, ແຮ່ຖ່ານຫີນ;
- ສຳຫຼວດ ແລະ ກໍ່ສ້າງເສັ້ນທາງອອກສູ່ຊາຍແດນລາວ-ຫວຽດນາມ; ພັດທະນາການທ່ອງທ່ຽວແບບທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ.

## 4.2. ການພັດທະນາຕາມພູມສັນຖານ

1) <u>ເຂດພູດອຍ ແລະ ເຂດຫ່າງໄກສອກຫລີກ:</u> ສຸມໃສ່ແກ້ໄຂຄວາມທຸກຍາກຕາມທິດເສີມຂະຫຍາຍກຳລັງແຮງງານພາຍໃນຂອງແຕ່ລະທ້ອງຖິ່ນຢ່າງເຕັມສ່ວນ ສົມທົບກັບການນຳໃຊ້ງົບປະມານ ຂອງລັດຢ່າງມີປະສິດທິຜົນ.

ສຸມໃສ່ສ້າງພື້ນຖານໂຄງລ່າງເສດຖະກິດ-ສັງຄົມ, ຊ່ວຍໜູນ ແລະ ສ້າງເງື່ອນໄຂທີ່ອຳນວຍ ໃຫ້ແກ່ການຜະລິດ, ຍົກລະດັບຄວາມຮູ້ຄວາມສາມາດຂອງຄົວເຮືອນທຸກຍາກ, ເຂດທຸກຍາກ ເພື່ອສາມາດປົນຕົວດ້ວຍຕົວເອງ, ກ້າວສູ່ການຫລຸດພົ້ນອອກຈາກຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນຢ່າງໜັ້ນຄົງ.

ສຸມໃສ່ຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຄົງທີ່ຖາວອນໃຫ້ປະຊາຊົນ ໃນເຂດເປົ້າໜາຍໂດຍສືບຕໍ່ດຳເນີນການມອບດິນ-ມອບປ່າຕິດພັນກັບການຢຸດຕິການຖາງປ່າເຮັດໄຮ່ເລື່ອນລອຍຢ່າງສິ້ນເຊີງດ້ວຍການຫັນໄປສູ່ການຄຸ້ມຄອງປ່າໄມ້ແບບຍືນຍົງ ໂດຍມີຄວາມສົມດຸນລະຫວ່າງການນຳໃຊ້ ແລະ ການປົກປັກຮັກສາ.

ເສີມຂະຫຍາຍທ່າແຮງດ້ານທີ່ດິນເພື່ອພັດທະນາກະສິກຳເປັນສິນຄ້າ ເປັນຕົ້ນແມ່ນ ຕົ້ນໄມ້ອຸດສາຫະກຳ, ຕົ້ນໄມ້ກິນໝາກເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ, ປູກປ່າເພື່ອເປັນວັດຖຸດິບຕິດພັນກັບການອຸດສາຫະກຳປຸງແຕ່ງທີ່ມີເຕັກໂນໂລຢີທັນສະໄໝ.

ເອົາໃຈໃສ່ພັດທະນາແຫລ່ງທ່ອງທ່ຽວທຳມະຊາດ ແລະ ວັດທະນະທຳບັນດາເຜົ່າ ເພື່ອເສີມຂະຫຍາຍມູນຄ່າທາງດ້ານຊັບພະຍາກອນທຳມະຊາດ, ປະຫວັດສາດ, ວັດທະນະທຳຂອງບັນດາເຂດ; ພ້ອມດຽວກັນນັ້ນກໍເປີດກວ້າງການຄ້າກັບບັນດາປະເທດໃກ້ຄຽງ.

2) <u>ເຂດທົ່ງພຽງ</u>: ສຸມໃສ່ພັດທະນາພື້ນຖານໂຄງລ່າງຕາມທິດທັນສະໄໝ ເພື່ອຮັບໃຊ້ການຜະລິດ ແລະ ການຂົນສົ່ງສິນຄ້າ ໂດຍມີການເຊື່ອມຕໍ່ບັນດາເຂດ ແລະ ພາກພື້ນ ແນໃສ່ເພີ່ມມູນຄ່າຜະລິດຕະພັນກະສິກຳ ແລະ ຍົກສູງຄຸນນະພາບກະສິກຳ, ລ້ຽງສັດ; ເອົາໃຈໃສ່ວຽກງານຄ້ຳປະກັນທາງດ້ານສະບຽງອາຫານໃຫ້

ທ່ອປະເທດດ້ວຍການຈັດວາງການຜະລິດຄືນໃຫມ່ຕາມທິດທລາກາທລາຍອາຊີບ ແລະ ນຳໃຊ້ທີ່ດິນຢ່າງມີປະສິດທິຜົນ, ຕິດພັນກັບການຍົກສູງເຕັກໂນໂລຍີ, ປັບປຸງແນວພັນ ແລະ ພັດທະນາອຸດສາຫະກຳປຸງແຕ່ງ. ພັດທະນາບັນດາເຂດຜະລິດຜະລິດຕະພັນກະສິກຳເປັນສິນຄ້າຈຸດສຸມ (ເຂົ້າ, ຕົ້ນໄມ້ອຸດສາຫະກຳ, ຕົ້ນໄມ້ກິນໝາກ, ສັດນ້ຳ...).

ສຸມໃສ່ພັດທະນາບັນດາຂະແໜງອຸດສາຫະກຳທີ່ມີບົດບາດເປັນຫົວຈັກແກ່ດຶງ, ຄຽງຄູ່ກັບການເອົາໃຈໃສ່ພັດທະນາອຸດສາຫະກຳທີ່ນຳໃຊ້ເຕັກໂນໂລຊີສູງ ເພື່ອປັບປຸງພື້ນຖານການຜະລິດຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄຫມ.

ພັດທະນາຢ່າງແຂງແຮງບັນດາຂະແໜງການຕົ້ນຕໍ ແລະ ຂະແໜງການສະໜັບສະໜູນຕ່າງໆ ເຊັ່ນ: ການເງິນ, ການທ່ອງທ່ຽວ, ການສຶກສາ, ສາທາລະນະສຸກ, ວິທະຍາສາດ-ເຕັກໂນໂລຍີ, ການບໍລິການທີ່ມີມູນຄ່າເພີ່ມ ແລະ ປະສິດທິຜົນສູງ.

ເພີ່ມທະວີການກໍ່ສ້າງຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ ເພື່ອຮອງຮັບຄວາມຕ້ອງການໃນການພັດທະນາ ໂດຍສະເພາະບັນດາຂະແໜງການປາຍແຫລມ.

3) <u>ເຂດຊາຍແດນ:</u>

ສຸມໃສ່ພັດທະນາເຂດຊາຍແດນ ໂດຍເລີ່ມຈາກການຄັດເລືອກເອົາຕົວເມືອງທີ່ສະພາບແວດລ້ອມເອື້ອອຳນວຍ ໂດຍຖືເອົາເສັ້ນທາງຫຼວງແຫ່ງຊາດເປັນຍຸດທະສາດຫຼັກ, ປັບປຸງ ແລະ ຈັດສັນເຂດຊານເມືອງຄືນໃຫມ່; ດຳເນີນຕາມຮູບແບບ 6 ປັດໃຈ ເຊັ່ນ: ເສັ້ນທາງ, ໄຟຟ້າ, ນ້ຳປະປາ, ໄປສະນີ, ໂທລະຄົມ ແລະ ລົດໂດຍສານ; ສ້າງຕະຫຼາດໃຫ້ເປັນສູນກາງທາງດ້ານການຄ້າເພື່ອເຕົ້າໂຮມປະຊາຊົນໃນເຂດຊານເມືອງ ແລະ ຊາຍແດນໃຫ້ເປັນກຸ່ມເປັນກ້ອນ. ສຸມໃສ່ພັດທະນາພື້ນຖານໂຄງລ່າງເຂດເສດຖະກິດຊາຍແດນທີ່ສຳຄັນ ເຊັ່ນ: ຊຽງກົກ (ຊາຍແດນລາວ-ພະມ້າ), ບໍ່ເຕັນ (ຊາຍແດນລາວ-ຈີນ), ນ້ຳກັ່ນ-ໄຕຈາງ (ຊາຍແດນລາວ-ຫວຽດນາມ), ບໍ່ແຕນ (ຊາຍແດນລາວ-ໄທ), ເຂດດ່ານໜູເກືອ-ວັງຕັດ ຊາຍແດນ ລາວ-ກຳປູເຈຍ-ຫວຽດນາມ ເພື່ອສ້າງເງື່ອນໃນການດຳເນີນທຸລະກິດຂາເຂົ້າ-ຂາອອກ, ທ່ອງທ່ຽວ ແລະ ການບໍລິການຂົນສົ່ງຜ່ານແດນ. ໃຫ້ບູລິມະສິດພິເສດໃນການຍົກລະດັບເສັ້ນທາງຫລວງເຊື່ອມຕໍ່ກັບບັນດາດ່ານຊາຍແດນ ແລະ ລະບົບເສັ້ນທາງອອກຫາດ່ານຊາຍແດນຂຶ້ນກັບເຂດສາມຫລ່ຽມພັດທະນາລາວ-ຫວຽດນາມ-ກຳປູເຈຍ (ແຂວງສາລະວັນ, ອັດຕະປື, ເຊກອງ, ຈຳປາສັກ); ເຂດສາມລ່ຽມພັດທະນາລາວ-ໄທ-ກຳປູເຈຍ (ແຂວງສາລະວັນ, ຈຳປາສັກ). ຖ້າມີເງື່ອນໄຂກໍ່ເອົາໃຈໃສ່ກໍ່ສ້າງທາງລຽບຕາມຊາຍແດນ ເພື່ອໃຫ້ສາມາດຕິດຕາມກວດກາສະພາບຢ່າງເປັນປົກກະຕິທັງເປັນການກະຕຸ້ນການພັດທະນາຢູ່ເຂດດັ່ງກ່າວ. ພ້ອມດຽວກັນນັ້ນ, ກໍຕ້ອງຈັດສັນທຶນເຂົ້າໃສ່ການພັດທະນາເຂດຫຍຸ້ງຍາກ, ເປີດກວ້າງການແລກປ່ຽນຜ່ານຊາຍແດນ, ສ້າງເງື່ອນໄຂໃຫ້ແກ່ເຂດທຸກຍາກໃນການດຳເນີນກິດຈະກຳເພື່ອສ້າງລາຍຮັບເພີ່ມ, ເອົາໃຈໃສ່ວຽກງານສະຫວັດດີການສັງຄົມ, ຫລຸດຜ່ອນຄວາມແຕກໂຕນໃນການພັດທະນາທຽບກັບເຂດຕ່າງໆ, ຊຸກດັນການພັດທະນາເສດຖະກິດເຂດຫຍຸ້ງຍາກ, ປະຕິບັດໜ້າທີ່ພັດທະນາເສດຖະກິດຄຽງຄູ່ກັບການປົກປັກຮັກສາອຳນາດອະທິປະໄຕຂອງຊາດ.

## 4.3. ການພັດທະນາຕົວເມືອງ

### 1. ການຈັດວາງຈຸດສຸມຕົວເມືອງ:

ຖືເອົາເມືອງເທດສະບານເປັນຈຸດສຸມໃຈກາງພັດທະນາ ແລະ ຈຸດພົບເສັ້ນທາງຂອງເມືອງເປັນຈຸດສຸມໃນການເຊື່ອມໂຍງ. ວາງແຜນປັບປຸງລະບົບຕົວເມືອງ, ຈັດສັນທີ່ຢູ່ອາໄສຄືນໃຫມ່ໃຫ້ສອດຄ່ອງ ແລະ ເຫມາະສົມ. ພັດທະນາບັນດາຕົວເມືອງຕິດພັນກັບການຈັດວາງເຂດອຸດສາຫະກຳ, ສູນກາງເສດຖະກິດຂອງເຂດ. ສ້າງຕົວເມືອງໃຫ້ມີຫລາຍຮູບຫລາຍສີສັນ. ເລັ່ງສ້າງຕາຫນ່າງການຄົມມະນາຄົມເຂດຊານເມືອງ, ຊຸກຍູ້ການພັດທະນາຕົວເມືອງນ້ອຍທີ່ມີລັກສະນະພິເສດໃນທຸກຮູບແບບໃຫ້ກາຍເປັນລະບົບຕົວເມືອງທີ່ເຫມາະສົມ. ສ້າງໃຫ້ມີຜະລິດຕະພັນທີ່ເປັນເອກະລັກຂອງຕົນເອງ. ເຮັດໃຫ້ຕົວເມືອງນ້ອຍກາຍເປັນບ່ອນຮອງຮັບຂອງການເຄື່ອນຍ້າຍກຳລັງແຮງງານຢ່າງພຽງພໍ, ຂະຫຍາຍການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໃນເຂດດັ່ງກ່າວ, ຄຽງຄູ່ກັນນັ້ນກໍຊຸກຍູ້ສົ່ງເສີມກຳລັງແຮງງານຊົນນະບົດໃຫ້ເຂົ້າສູ່ຂະແຫນງອຸດສາຫະກຳ ແລະ ການບໍລິການຫລາຍຂຶ້ນ.

- **ພາກເຫນືອ:** ສ້າງຫລວງພະບາງໃຫ້ກາຍເປັນສູນກາງຂອງພາກເຫນືອ, ສ້າງເມືອງໄຊ ແຂວງອຸດົມໄຊ, ເມືອງແປກ ແຂວງຊຽງຂວາງ ໃຫ້ກາຍເປັນສູນກາງດ້ານອຸດສາຫະກຳ ແລະ ເປັນຈຸດເຊື່ອມໂຍງເພື່ອນຳໃຊ້ທີ່ຕັ້ງຂອງຕົວເມືອງເປັນທ່າແຮງ ແລະ ສົ່ງຜົນປະໂຫຍດໄປສູ່ຂົງເຂດອື່ນ. ພ້ອມດຽວກັນນັ້ນ ກຳລັງທຶນກໍ່ສ້າງລະບົບຄົມມະນາຄົມ, ໄຟຟ້າ, ນ້ຳປະປາ ແລະ ສາທາລະນະສຸກ ຢູ່ບັນດາຕົວເມືອງປິ່ນອ້ອມທ່າແຮງ ເຊັ່ນ: ເມືອງຊຳເຫນືອ (ແຂວງຫົວພັນ) ແລະ ເມືອງຜົ້ງສາລີ ດ້ວຍຫນ້າທີ່ເປັນສູນກາງທາງດ້ານການເຜີຍແຜ່ຂໍ້ມູນຂ່າວສານ, ຊົມໃຊ້ຜະລິດຕະພັນຂອງທ້ອງຖິ່ນ, ປະກອບສ່ວນໃນການດັດສົມການເຄື່ອນຍ້າຍ ຂອງປະຊາຊົນເຂົ້າໃນສູນກາງຂອບເຂດ ແລະ ສ້າງຄວາມສົມດຸນໃນການພັດທະນາ.

- **ພາກກາງ:** ຖືເອົານະຄອນຫລວງວຽງຈັນ ເປັນກຳລັງໜູນໃນການຂະຫຍາຍຕົວຂອງເສດຖະກິດ ຄຽງຄູ່ກັບແຂວງສະຫວັນນະເຂດ ເພື່ອໃຫ້ກາຍເປັນສູນກາງການຂະຫຍາຍຕົວຂອງພາກ, ຊຸກຍູ້ການລົງທຶນ, ເປີດກວ້າງ ແລະ ຫັນເປັນທັນສະໄໝຂອງບັນດາຕົວເມືອງປິ່ນອ້ອມ ເຊັ່ນ: ເມືອງວຽງຄຳ (ແຂວງວຽງຈັນ), ປາກຊັນ (ແຂວງບໍລິຄຳໄຊ), ທ່າແຂກ (ແຂວງຄຳມ່ວນ). ພ້ອມດຽວກັນ ກຳລັງທຶນພັດທະນາບັນດາຕົວເມືອງ ທີ່ນອນຢູ່ຕາມເສັ້ນທາງຕາເວັນອອກ-ຕາເວັນຕົກ ທີ່ຂຶ້ນກັບແຂວງສະຫວັນນະເຂດ ເຊັ່ນ: ເມືອງອຸທຸມພອນ, ອາດສະພັງທອງ, ທ່າພະລານໄຊ, ເມືອງພິນ ແລະ ເຊໂປນ.

- **ພາກໃຕ້:** ຖືເອົາປາກເຊ (ແຂວງຈຳປາສັກ) ເປັນສູນກາງເສດຖະກິດ ແລະ ເຕັກນິກວິທະຍາສາດ, ເປັນຂົວຕໍ່ຕົ້ນຕໍ ໃນການພົວພັນເສດຖະກິດກັບເຂດພາກກາງ, ພາກເໜືອ ແລະ ບັນດາປະເທດໃກ້ຄຽງ. ລົງທຶນກໍ່ສ້າງພື້ນຖານໂຄງລ່າງບັນດາຕົວເມືອງປິ່ນອ້ອມ ເຊັ່ນ: ສາລະວັນ, ສາມັກຄີໄຊ, ໄຊເສດຖາ (ແຂວງອັດຕະປື), ລະມາມ (ແຂວງເຊກອງ), ບັນດາຕົວເມືອງເປັນຂົວຕໍ່ໃນການພັດທະນາລະຫວ່າງສູນກາງພັດທະນາກັບບັນດາເຂດຜະລິດສິນຄ້າ ແລະ ຕະຫຼາດພາຍໃນ ເຊັ່ນ: ໄຊເສດຖາ, ສາມັກຄີໄຊ (ແຂວງອັດຕະປື), ຄົງເຊໂດນ (ແຂວງ ສາລະວັນ), ທ່າແຕງ (ແຂວງເຊກອງ), ປາກຊ່ອງ, ປະທຸມພອນ (ແຂວງຈຳປາສັກ).

## 2. ການພັດທະນາພື້ນຖານໂຄງລ່າງຂອງເມືອງ, ການຈັດວາງເຂດເມືອງຊາຍແດນ ແລະ ດ່ານຊາຍແດນ:

ກຳນົດ ແລະ ຈັດວາງຜັງເມືອງໃຫ້ສົມບູນ ໂດຍສະເພາະແມ່ນ ການສະໜອງລະບົບນ້ຳປະປາ, ລະບົບກຳຈັດນ້ຳເປື້ອນ, ຕາໜ່າງໄຟຟ້າ, ໄປສະນີໂທລະຄົມ, ເສັ້ນທາງ, ຂົວ, ການຮັກສາຄວາມສະອາດສິ່ງແວດລ້ອມ ແລະ ການກຳຈັດຂີ້ເຫຍື້ອສິ່ງເສດເຫຼືອ. ພ້ອມກັນນັ້ນ, ກໍ່ເພີ່ມທະວີວຽກງານກໍ່ສ້າງສິ່ງທີ່ຕິດພັນກັບການບໍລິການໃຫ້ສົມບູນແບບຂຶ້ນ.

ເລັ່ງໃສ່ການພັດທະນາເມືອງ ແລະ ດ່ານຊາຍແດນ ໂດຍເລີ່ມຈາກການຄັດເລືອກ ເອົາເມືອງທີ່ມີ ສະພາບແວດລ້ອມທີ່ເອື້ອອຳນວຍ, ມີການພັດທະນາໃນລະດັບໜຶ່ງ ແລະ ມີສະພາບເສດຖະກິດທີ່ເຂັ້ມແຂງ ເປັນຈຸດສຸມແລ້ວຄ່ອຍໆຂະຫຍາຍອອກສູ່ເຂດອື່ນ. ຖືເອົາເສັ້ນທາງຫຼວງແຫ່ງຊາດເປັນຍຸດທະສາດຫຼັກ, ປັບປຸງ ແລະ ຈັດສັນເຂດຊານເມືອງຄືນໃໝ່. ດຳເນີນຕາມໂຄງການ " 6 ປັດໄຈ " ເຊັ່ນ: ເສັ້ນທາງ, ໄຟຟ້າ, ນ້ຳ ປະປາ, ໄປສະນີ, ລົດໂດຍສານ ແລະ ໂທລະສັບ. ເອົາໃຈໃສ່ວຽກງານການສະໜອງຕ່າງໆ ໂດຍສະເພາະ ການສະໜອງໄຟຟ້າ ແລະ ການລະບາຍນ້ຳໃນຂົງເຂດເທດສະບານເມືອງ ແລະ ແຂວງ, ຊຸກຍູ້ການພັດທະນາ ເຂດຊານເມືອງ, ເພື່ອເຕົ້າໂຮມປະຊາຊົນໃນເຂດຊານເມືອງ ແລະ ເຂດຊາຍແດນ ໃຫ້ຢູ່ເປັນກຸ່ມກ້ອນ, ສ້າງ ຕະຫຼາດເປັນສູນກາງທາງດ້ານການຄ້າ, ເອົາໃຈໃສ່ປຸງແຕ່ງຜະລິດຕະພັນ ເພື່ອສົ່ງອອກໄປສູ່ຕະຫຼາດຂອງຈີນ ແລະ ບັນດາປະເທດອາຊຽນ.

- **ພາກເໜືອ:** ພັດທະນາດ່ານຕົ້ນຕໍ ເຊັ່ນ: ບໍ່ເຕັນ (ແຂວງຫຼວງນ້ຳທາ), ຫ້ວຍຊາຍ-ຕົ້ນເຜິ້ງ (ແຂວງບໍ່ແກ້ວ), ໜອງແຮດ (ແຂວງຊຽງຂວາງ), ແລະ ແກ່ນທ້າວ (ແຂວງໄຊຍະບູລີ). ພັດທະນາດ່ານນ້ຳເງິນ (ເມືອງ ເງິນ, ແຂວງໄຊຍະລູລີ), ດ່ານນາແມວ (ແຂວງຫົວພັນ), ດ່ານລານຕຸຍ ແລະ ດ່ານໄຕຈ່າງ (ແຂວງຜົ້ງສາລີ) ໃຫ້ເປັນດ່ານລະດັບຊາດ.

- **ພາກກາງ:** ພັດທະນາດ່ານຕົ້ນຕໍ ເຊັ່ນ: ນ້ຳພາວ (ເມືອງຄຳເກີດ ແຂວງບໍລິຄຳໄຊ), ນ້ຳເພີ້ງ, ທ່າ ແຂກ (ແຂວງຄຳມ່ວນ), ແດນສະຫວັນ (ແຂວງສະຫວັນນະເຂດ), ພັດທະນາດ່ານ ບ້ານວັງ (ແຂວງວຽງຈັນ) ໃຫ້ເປັນດ່ານສາກົນ.

- **ພາກໃຕ້:** ພັດທະນາດ່ານ ວັງເຕົ່າ-ຊ່ອງເມັກ (ແຂວງຈຳປາສັກ) ແລະ ດ່ານພູເກືອ (ແຂວງອັດຕະ ປື) ໃຫ້ໄດ້ມາດຕະຖານ.

ເພີ່ມທະວີການກໍ່ສ້າງເຂດດ່ານຊາຍແດນ ແລະ ດ່ານສາກົນທີ່ສຳຄັນຢູ່ແຂວງທີ່ມີເງື່ອນໄຂ, ປັບປຸງ ເສັ້ນທາງເຂດຊາຍແດນ, ລະບົບໂຄງລ່າງພື້ນຖານ ເຊັ່ນ: ໄຟຟ້າ, ນ້ຳປະປາ ແລະ ອື່ນໆ. ກວດກາລະບົບ ການເກັບພາສີຊາຍແດນ, ລະບົບກວດຜ່ານສິນຄ້າຜ່ານແດນ, ປັບປຸງລະບົບການເຮັດວຽກໃຫ້ວ່ອງໄວ ແລະ ຊັດເຈນໂດຍການນຳໃຊ້ເທັກໂນໂລຢີທີ່ທັນສະໄໝ ແລະ ຫຼຸດຜ່ອນຂັ້ນຕອນການກວດກາສິນຄ້າ, ພາຫະນະ ຜ່ານເຂົ້າ-ອອກ ທັນໄປສູ່ລະບົບຜ່ານປະຕູດຽວ ແລະ ສະຖານີດຽວ.

## 4.4. ການສ້າງບ້ານພັດທະນາ ແລະ ເຂດຈຸດສຸມ

### 4.4.1. ການສ້າງບ້ານພັດທະນາ

ປະຕິບັດຍຸດທະສາດການພັດທະນາແບບມີຈຸດສຸມ, ສ້າງກຸ່ມບ້ານ ຫລື ເຂດທີ່ມີເງື່ອນໄຂ ແລະ ມີທ່າ ແຮງໄດ້ປຽບໃຫ້ເປັນເຂດກຳລັງແຮງ ແລະ ເປັນຕົວເມືອງທັນສະໄໝ ເພື່ອສ້າງພື້ນຖານໃຫ້ແກ່ການພັດທະນາ ເສດຖະກິດ, ໂດຍສະເພາະແມ່ນ ເອົາໃຈໃສ່ພັດທະນາຂະແໜງການຜະລິດ ແລະ ບໍລິການທີ່ມີມູນຄ່າເພີ່ມສູງ ແລະ ມີຄວາມສາມາດໃນການຂະຫຍາຍການຜະລິດ. ພ້ອມດຽວກັນນັ້ນ ກໍ່ລົງທຶນຢ່າງເໝາະສົມເພື່ອຊຸກດັນ ການພັດທະນາເສດຖະກິດຢູ່ບັນດາເຂດທີ່ມີການພັດທະນາຊັກຊ້າ, ໂດຍການສຸມໃສ່ພັດທະນາພື້ນຖານໂຄງ ລ່າງ ເປັນຕົ້ນແມ່ນ ຄົມມະນາຄົມຊົນນະບົດ, ຊົນລະປະທານ, ໄຟຟ້າ, ໂຮງຮຽນ ແລະ ພື້ນຖານສາທາລະນະ ສຸກເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ການພັດທະນາເສດຖະກິດ ແນໃສ່ຍົກສູງຄຸນນະພາບຊີວິດການເປັນຢູ່ໃຫ້ ແກ່ປະຊາຊົນໃນເຂດດັ່ງກ່າວໃຫ້ດີຂຶ້ນ.

ເສີມຂະຫຍາຍທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນຢູ່ແຕ່ລະເຂດໃນການຊ່ວຍເຫລືອເຊິ່ງກັນ ແລະ ກັນທາງດ້ານເສດຖະກິດ ເພື່ອສ້າງຕັ້ງ ແລະ ນຳໃຊ້ຢ່າງມີປະສິດທິຜົນໃນການກໍ່ສ້າງ, ການຈັດສັນ ແຫລ່ງກຳລັງແຮງ, ຄຸ້ມຄອງ ແລະ ຕິດຕາມແຜນດຳເນີນງານຂອງບັນດາໂຄງການ ເພື່ອບັນລຸເປົ້າຫມາຍຂອງ ການພັດທະນາແຕ່ລະເຂດແຄວ້ນ ແລະ ຂະແຫນງການ.

**+ ການເຄື່ອນຍ້າຍ ແລະ ຈັດສັນພູມລຳເນົາປະຊາຊົນ:**

ຊຸກຍູ້ສົ່ງເສີມການເຄື່ອນຍ້າຍປະຊາຊົນທີ່ຢູ່ກະແຈກກະຈາຍມາຢູ່ເຕົ້າໂຮມກັນເປັນຈຸດສຸມ ເພື່ອແກ້ໄຂ ບັນຫາຄວາມທຸກຍາກ. ເລືອກເອົາເຂດທີ່ມີເງື່ອນໄຂສະດວກໃນການພັດທະນາລຸ່ມຕາມເສັ້ນທາງ ຫລື ເຂດທີ່ ໃກ້ກັບຕົວເມືອງ (ຊານເມືອງ), ຍົກຍ້າຍປະຊາຊົນຜູ້ທຸກຍາກທີ່ອາໃສຢ່າງກະແຈກກະຈາຍໃນເຂດພູສູງເຂົ້າມາ ອາໃສໃນເຂດທີ່ກຳນົດໄວ້, ເພື່ອປັບປຸງພື້ນຖານການດຳລົງຊີວິດໃຫ້ດີຂຶ້ນ, ຊ່ວຍເຫລືອທາງດ້ານວິຊາການປູກ ຝັງ, ລ້ຽງສັດ, ການພັດທະນາຫັດຖະກຳ ແລະ ການບໍລິການ ການທ່ອງທ່ຽວ ເພື່ອເຮັດໃຫ້ປະຊາຊົນທີ່ຍົກ ຍ້າຍເຂົ້າມາອາໄສຕາມເຂດທີ່ກຳນົດໄວ້ສາມາດເຂົ້າຮ່ວມຂະບວນການພັດທະນາການຜະລິດ ແລະ ຫລຸດພົ້ນ ອອກຈາກຄວາມທຸກຍາກເທື່ອລະກ້າວ.

ສຸມທຶນເຂົ້າໃນການປະຕິບັດນະໂຍບາຍ ແລະ ບັນດາໂຄງການບູລິມະສິດຂອງລັດຖະບານ, ຊຸກຍູ້ສົ່ງ ເສີມການພັດທະນາເຂດທີ່ທຸກຍາກກັນດານ ໂດຍການປັບປ່ຽນຮູບແບບການແກ້ໄຂຄວາມທຸກຍາກຢ່າງກະແຈກ ກະຈາຍມາເປັນຈຸດສຸມ. ຍາດແຍ່ງເອົາການຊ່ວຍເຫລືອຈາກອົງການສາກົນ ແລະ ບັນດາປະເທດຕ່າງໆ ເພື່ອ ກໍ່ສ້າງພື້ນຖານໂຄງລ່າງຊົນນະບົດ. ຖືເອົາຫມູ່ບ້ານທຸກຍາກ ແລະ ກຸ່ມບ້ານທຸກຍາກເປັນຈຸດສຸມ ໃນການແກ້ ໄຂບັນຫາຄວາມທຸກຍາກຢ່າງສະຫມ່ຳສະເຫມີ.

ເອົາໃຈໃສ່ພັດທະນາອຸດສາຫະກຳໃນເຂດຊົນນະບົດ ໂດຍການນຳໃຊ້ທ່າແຮງໄດ້ປຽບທາງດ້ານຊັບພະ ຍາກອນທຳມະຊາດ ແລະ ການກະສິກຳ ໄປຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄຫມ, ພັດທະນາ ຕາມຮູບແບບ “ບໍລິສັດ+ແຮງງານ+ຕະຫລາດ“ ແລະ ຮູບແບບການສັ່ງຈອງລ່ວງຫນ້າ ເພື່ອເຮັດໃຫ້ກາຍເປັນ ອຸດສາຫະກຳ.

ພ້ອມດຽວກັນນັ້ນ ກໍເອົາໃຈໃສ່ຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ປະຊາຊົນຕິດພັນກັບການແກ້ໄຂ ຄວາມທຸກຍາກຢ່າງສະຫນິດແຫນ້ນ. ການຍົກຍ້າຍປະຊາຊົນຜູ້ທຸກຍາກໄປຕັ້ງຖິ່ນຖານໃຫມ່ຕ້ອງມີການສຳ ຫລວດ, ວາງແຜນ ແລະ ກຳນົດນະໂຍບາຍຢ່າງລະອຽດຈະແຈ້ງ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາ ຊົນໃຫ້ນັບມື້ນັບດີຂຶ້ນ.

**+ ສ້າງຕັ້ງເຂດຜະລິດສິນຄ້າກະສິກຳ ຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ໃຫ້ບູລິມະສິດແກ່ການ ຜະລິດເພື່ອສົ່ງອອກ:**

ຈັດສັນບັນດາເຂດຜະລິດເຂົ້າທີ່ມີສະມັດຕະພາບສູງ, ເຂດປູກຕົ້ນໄມ້ອຸດສາຫະກຳໄລຍະສັ້ນ, ເຂດປູກ ຜັກປອດສານພິດ, ເຂດລ້ຽງສັດນ້ຳຈຸດສຸມ ແລະ ເຂດລ້ຽງສັດຂະຫນາດໃຫຍ່ຢ່າງແທດເຫມາະ ໂດຍການນຳ ໃຊ້ທ່າແຮງໄດ້ປຽບທາງດ້ານຊັບພະຍາກອນທຳມະຊາດ ແລະ ແຫລ່ງກຳລັງແຮງຂອງແຕ່ລະເຂດເພື່ອຕອບ ສະຫນອງຄວາມຕ້ອງການໃນການຊົມໃຊ້ພາຍໃນ ແລະ ຜະລິດເປັນສິນຄ້າສົ່ງອອກ ເປັນຕົ້ນ: ເຂົ້າ, ກາເຟ, ຊີ້ນ, ປາ, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງສົມທົບກັບການຂຸດຄົ້ນ ແລະ ການພັດທະນາຊັບພະຍາກອນ

ປ່າແບບຍືນຍົງເພື່ອສ້າງແຫລ່ງວັດຖຸດິບໃຫ້ແກ່ຂະແໜງອຸດສາຫະກຳປຸງແຕ່ງ ໂດຍສະເພາະແມ່ນການປຸງແຕ່ງເພື່ອສົ່ງອອກ.

ສ້າງຕັ້ງກຸ່ມບ້ານຈຸດສຸມໃຫ້ແກ່ການຈັດສັນທີ່ຢູ່ອາໃສ ແລະ ສ້າງວຽກເຮັດງານທຳໃຫ້ປະຊາຊົນ, ສ້າງຕັ້ງຕົວເມືອງຊົນນະບົດທີ່ເປັນຈຸດສຸມໃຫ້ມີຫລາຍອາຊີບ, ດ້ວຍການເອົາໃຈໃສ່ການພັດທະນາບັນດາອາຊີບຫັດຖະກຳທີ່ເປັນມູນເຊື້ອ, ຊຸກຍູ້ ແລະ ສົ່ງເສີມກິດຈະກຳທີ່ບໍ່ແມ່ນກະສິກຳທີ່ມີທ່າແຮງ ໂດຍສະເພາະແມ່ນ ອຸດສາຫະກຳປຸງແຕ່ງ ເພື່ອສະໜອງຄວາມຕ້ອງການພາຍໃນ ແລະ ສົ່ງອອກ ເພື່ອຫັນແຮງງານທີ່ເຮັດວຽກຢູ່ໃນກະສິກຳ ຢູ່ຊົນນະບົດມາເຮັດວຽກໃນຂະແໜງອຸດສາຫະກຳ-ຫັດຖະກຳ ແລະ ການບໍລິການ.

### 4.4.2. ການພັດທະນາເຂດຈຸດສຸມ

ເລັ່ງໃສ່ພັດທະນາ 6 ຈຸດສຸມ ຢູ່ ແຂວງວຽງຈັນ (ກຸ່ມບ້ານລ່ອງແຈ້ງ, ກຸ່ມບ້ານເມືອງອອມ, ກຸ່ມບ້ານເມືອງອ່າວ ເມືອງໄຊສົມບູນ ແລະ ກຸ່ມຜາລະແວກ ເມືອງຮົ່ມ), ແຂວງຊຽງຂວາງ (ກຸ່ມບ້ານສັນຫຼວງ ເມືອງພູຄູນ ແລະ ກຸ່ມບ້ານນ້ຳສຽມ ເມືອງຜາໄຊ ) ແລະ ຈຸດສຸມຈຳນວນໜຶ່ງຕື່ມອີກຢູ່ພາກໃຕ້ ໂດຍການສືບຕໍ່ຈັດສັນບ້ານ, ກຸ່ມບ້ານ ແລະ ສ້າງອາຊີບຄົງທີ່ໃຫ້ປະຊາຊົນ; ກໍ່ສ້າງພື້ນຖານໂຄງລ່າງຈຳນວນໜຶ່ງທີ່ຈຳເປັນ ໂດຍສະເພາະແມ່ນເສັ້ນທາງເຊື່ອມຕໍ່ລະຫວ່າງບ້ານ, ກຸ່ມບ້ານໃຫ້ສາມາດໜຽວໄດ້ສອງລະດູ ເພື່ອສ້າງເງື່ອນໄຂເອື້ອອຳນວຍໃນການດຳລົງຊີວິດຂອງປະຊາຊົນ; ຊຸກຍູ້ ແລະ ສົ່ງເສີມການຜະລິດເປັນສິນຄ້າຂອງປະຊາຊົນ, ສ້າງກຸ່ມບ້ານ ແລະ ຄອບຄົວຕົວແບບໃນການຜະລິດເປັນສິນຄ້າ; ສົ່ງເສີມ ແລະ ຍົກລະດັບການສຶກສາ, ສາທາລະນະສຸກໃຫ້ກວ້າງຂວາງ ແລະ ທົ່ວເຖິງ; ສົ່ງເສີມ ແລະ ອະນຸລັກມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ຂອງບັນດາເຜົ່າ; ບູລະນະ ແລະ ປັບປຸງກົງຈັກອຳນາດການປົກຄອງຢູ່ທ້ອງຖິ່ນຮາກຖານ ໃຫ້ມີຄຸນນະພາບໃຫມ່, ມີຄວາມປອດໃສ.

## 4.5. ການພັດທະນາເຂດເສດຖະກິດພິເສດ

ເພື່ອເຮັດໃຫ້ກົດໝາຍການລົງທຶນສະບັບໃໝ່ໄດ້ຮັບການຈັດຕັ້ງປະຕິບັດ ແລະ ຂັນຂະຫຍາຍຢ່າງຕັ້ງໜ້າ ດັ່ງນັ້ນ ໄປຄຽງຄູ່ກັບການພັດທະນາຂະແໜງການ ຕ້ອງມີການພັດທະນາແບບພິເສດ ໃນໄລຍະ 5 ປີຕໍ່ໜ້າສຸມໃສ່ບັນດາເຂດເສດຖະກິດພິເສດທີ່ໄດ້ຮັບການສ້າງຕັ້ງແລ້ວ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃນການສ້າງຕັ້ງເຂດເສດຖະກິດສະເພາະໃຫ້ບັນດາເຂດອື່ນໆໃນທົ່ວປະເທດ ໂດຍຖືເອົາປະເທດອ້ອມຂ້າງເປັນຕະຫຼາດທີ່ສຳຄັນເພື່ອດຶງດູດການລົງທຶນຂອງຕ່າງປະເທດເຂົ້າລາວນັບມື້ນັບຫຼາຍຂຶ້ນ; ເອົາໃຈໃສ່ສ້າງ ແລະ ພັດທະນາອຸດສາຫະກຳປຸງແຕ່ງຜະລິດຕະພັນເພື່ອສົ່ງອອກເປັນຕົ້ນຕໍ, ສ້າງ ແລະ ປັບປຸງລະບົບການຄ້າທາງເອເລັກໂຕນິກ (E-Commerce) ເພື່ອຊຸກຍູ້ຜະລິດຕະພັນສິນຄ້າສົ່ງອອກຂອງລາວ ສາມາດແຂ່ງຂັນໃນຕະຫຼາດສາກົນໄດ້ ໂດຍສະເພາະແມ່ນກັບ ສປ ຈີນ, ສສ ຫວຽດນາມ, ໄທ ແລະ ບັນດາປະເທດອາຊຽນອື່ນໆ.

ເອົາໃຈໃສ່ພັດທະນາເຂດເສດຖະກິດພິເສດ ເຊັ່ນ:

- <u>ພັດທະນາເຂດເສດຖະກິດພິເສດ ຢູ່ ບໍ່ເຕັນ ແຂວງຫຼວງນ້ຳທາ:</u> ໃຫ້ເປັນເຂດການຄ້າທີ່ມີການສົ່ງອອກໂດຍພື້ນຖານ ເພື່ອດຶງດູດນັກທຸລະກິດຈີນ ແລະ ນັກລົງທຶນຕ່າງປະເທດອື່ນໆ ເຂົ້າມາລົງທຶນຢູ່ເຂດດັ່ງກ່າວ. ສົ່ງເສີມກິດຈະກຳການສົ່ງອອກ ເພື່ອສ້າງລາຍຮັບເປັນເງິນຕາຕ່າງປະເທດ ແລະ ສິນຄ້າສົ່ງອອກຕາມ

ຄວາມຕ້ອງການຂອງຕະຫຼາດ ສປຈີນ ແລະ ປະເທດອື່ນໆ ເພື່ອຊຸກຍູ້ພາກເໜືອຂອງລາວ ມີການພັດທະນາ ໄວ ແລະ ດີຂຶ້ນ.

- <u>ພັດທະນາເຂດເສດຖະກິດພິເສດ ຢູ່ ຕົ້ນເຜິ້ງ ແຂວງ ບໍ່ແກ້ວ:</u> ຢ່າງຮອບດ້ານ ເພື່ອເຮັດໃຫ້ເຂດ ດັ່ງກ່າວ ເປັນສູນກາງທາງອຸດສາຫະກຳ-ການຄ້າ, ການເງິນ, ການບໍລິການ, ການທ່ອງທ່ຽວ ແລະ ເປັນເຂດ ການຜະລິດສິນຄ້າເພື່ອສົ່ງອອກ ຕາມຄວາມຕ້ອງການຂອງຕະຫຼາດຕ່າງປະເທດ ພ້ອມທັງພັດທະນາເປັນຕົວ ເມືອງໃຫມ່ທັນສະໄຫມ ເພື່ອຊຸກຍູ້ການພັດທະນາເຂດພາກເໜືອໃຫ້ໄວຂຶ້ນ.

- <u>ພັດທະນາເຂດເສດຖະກິດພິເສດ ສະຫວັນ-ເຊໂນ</u>: ໃຫ້ເປັນສູນກາງແຫ່ງການຮ່ວມມືທາງດ້ານເສດ ຖະກິດ, ອຸດສາຫະກຳ-ການຄ້າ, ການເງິນ, ການບໍລິການ ແລະການພັດທະນາດ້ານເຕັກໂນໂລຍີທີ່ທັນສະໄໝ ໂດຍນຳໃຊ້ທ່າແຮງທາງດ້ານທີ່ຕັ້ງ ໃນການເປັນທາງຜ່ານຂອງອະນຸພາກພື້ນ ແນໃສ່ເຊື່ອມໂຍງເສດຖະກິດ ຂອງຊາດເຂົ້າກັບເສດຖະກິດຂອງພາກພື້ນ ແລະ ສາກົນ. ເພື່ອເປັນແຫຼ່ງສະໜອງວຽກເຮັດງານທຳ ແລະ ຝຶກ ອົບຮົມໃຫ້ແກ່ພະນັກງານ, ກຳມະກອນ ໃຫ້ມີຄວາມຮູ້, ຄວາມສາມາດ, ຖອດຖອນບົດຮຽນ ແລະ ປະສົບການ ດ້ານການບໍລິຫານ ແລະ ຄວາມຊຳນານງານລະດັບສູງ ປະກອບສ່ວນໃຫ້ແກ່ການຍົກລະດັບຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນເທື່ອລະກ້າວ.

- ພ້ອມດຽວກັນນັ້ນໃນແຜນການ 5 ປີ 2011-2015 ສູ້ຊົນສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃນເຂດທີ່ມີເງື່ອນໄຂ ເພື່ອສ້າງເປັນເຂດເສດຖະກິດພິເສດຕື່ມອີກ ເຊັ່ນ: ເຂດເສດຖະກິດພິເສດ ທີ່ຈຳປາສັກ, ທ່າແຂກ (ແຂວງຄຳມ່ວນ), ທີ່ແຂວງຫົວພັນ ແລະ ແຂວງໄຊຍະບູລີ..

ນອກຈາກການພັດທະນາເຂດເສດຖະກິດພິເສດແລ້ວ ມີຄວາມຈຳເປັນຕ້ອງໄດ້ພັດທະນາເຂດເສດຖະ ກິດສະເພາະຕື່ມອີກ ເພື່ອເປັນພື້ນຖານໃຫ້ແກ່ການພັດທະນາເຂດແຄວ້ນ, ໃນນັ້ນ ເອົາໃຈໃສ່ສ້າງໃຫ້ເປັນສ່ວນ ອຸດສາຫະກຳທີ່ນະຄອນຫຼວງວຽງຈັນ, ເຂດຮ່ວມມືເສດຖະກິດຊາຍແດນ ຫຼື ສູນການຄ້າຊາຍແດນແຫ່ງໃຫມ່ ຢູ່ ເມືອງແກ່ນທ້າວ ແຂວງໄຊຍະບູລີ, ເມືອງຫນອງແຮດ ແຂວງຊຽງຂວາງ, ເມືອງຄຳເກີດ ແຂວງບໍລິຄຳໄຊ, ເມືອງທ່າແຂກ ແຂວງຄຳມ່ວນ, ເຂດການຄ້າເສລີ ແດນສະຫວັນ ແຂວງສະຫວັນນະເຂດ ແລະ ແຂວງ ຈຳປາສັກ ເພື່ອເປັນການດຶງດູດນັກລົງທຶນ ຈາກບັນດາປະເທດແຖບອາຊີຕາເວັນອອກສ່ຽງໃຕ້ ແລະ ບັນດາ ປະເທດທີ່ພັດທະນາແລ້ວ ໂດຍນຳໃຊ້ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ເພື່ອພັດທະນາອຸດສາຫະ ກຳປຸງແຕ່ງຜະລິດຕະພັນທີ່ເປັນເອກະລັກ ແລະ ສາມາດແຂ່ງຂັນ ເພື່ອສົ່ງອອກຕາມຄວາມຕ້ອງການຂອງ ຕະຫຼາດອາຊຽນ ແລະ ຕະຫຼາດສາກົນ. ນຳໃຊ້ຊັບພະຍາກອນທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາ ອຸດສາຫະກຳເບົາ ແລະ ສິນຄ້າໃຊ້ສອຍປະຈຳວັນ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ພາຍ ໃນ.

ເອົາໃຈໃສ່ເຂດສາມຫຼ່ຽມພັດທະນາ ລາວ-ຫວຽດນາມ-ກຳປູເຈຍ (CLV):

- ສ້າງເຂດຮ່ວມມືເສດຖະກິດຊາຍແດນລາວ-ຫວຽດນາມຢູ່ພູເກືອແຂວງອັດຕະປື ໃຫ້ເປັນເຂດການ ຄ້າຊາຍແດນທີ່ມີການສົ່ງອອກເປັນພື້ນຖານ ແລະ ເປັນຕະຫຼາດທຸລະກິດສະເພາະ ເພື່ອດຶງດູດນັກລົງທຶນ ຈາກ ສສ ຫວຽດນາມ ແລະ ປະເທດອື່ນໆ ເຂົ້າມາລົງທຶນຢູ່ເຂດດັ່ງກ່າວ. ພັດທະນາກິດຈະກຳ ການສົ່ງອອກ ເພື່ອ ສ້າງລາຍຮັບເປັນເງິນຕາຕ່າງປະເທດ ແລະ ສະໜອງສິນຄ້າສົ່ງອອກຕາມຄວາມຕ້ອງການຂອງຕະຫຼາດ ຫວຽດນາມ ແລະ ປະເທດອື່ນໆ.

- ພັດທະນາເຂດດ່ານຊາຍແດນດາກຕະອອກ ໃຫ້ເປັນເຂດເສດຖະກິດພິເສດໂດຍອາໄສທ່າແຮງ ຂອງດ່ານສາກົນ ແລະ ເຂດພັດທະນາອຸດສາຫະກຳ ຢູ່ ເມືອງດາກຈຶງ ແລະ ມີເສັ້ນທາງທີ່ສັ້ນໃນການອອກ ສູ່ທ່າເຮືອດານັງ ສສ ຫວຽດນາມ, ສ້າງເຂດດັ່ງກ່າວ ເພື່ອດຶງດູດການລົງທຶນຈາກຕ່າງປະເທດ, ກໍສ້າງລະບົບ ບໍລິການການທ່ອງທ່ຽວທີ່ມີເອກະລັກຂອງທ້ອງຖິ່ນ ແລະ ເຂດການຜະລິດສິນຄ້າ ເພື່ອສົ່ງອອກຕາມຄວາມ ຕ້ອງການຂອງຕະຫຼາດຕ່າງປະເທດ ເພື່ອຊຸກຍູ້ໃຫ້ເຂດສາມຫຼ່ຽມພັດທະນາມີການພັດທະນາໄວຂຶ້ນ.

- ສ້າງເຂດຮ່ວມມືເສດຖະກິດຊາຍແດນ ຫຼື ສູນການຄ້າຊາຍແດນແຫ່ງໃຫມ່ ຢູ່ເມືອງ ສະໜ້ວຍ ແຂວງ ສາລະວັນ ເພື່ອດຶງດູດນັກລົງທຶນຈາກຕ່າງປະເທດ ເຂົ້າໃນຂະແໜງອຸດສາຫະກຳປຸງແຕ່ງຜະລິດຕະ ພັນທີ່ເປັນເອກະລັກ ແລະ ສາມາດແຂ່ງຂັນໄດ້; ເອົາໃຈໃສ່ຜະລິດສິນຄ້າໃຊ້ສອຍປະຈຳວັນ ເພື່ອຕອບສະ ໜອງຄວາມຕ້ອງການ ຂອງເຂດສາມຫຼ່ຽມພັດທະນາແລະພາຍໃນປະເທດພ້ອມທັງສົ່ງເສີມການສົ່ງອອກ ຕາມ ຄວາມຕ້ອງການຂອງຕະຫຼາດອາຊຽນ.

- ສ້າງເຂດ ເມືອງພູວົງ ແຂວງ ອັດຕະປື ເປັນເຂດຮ່ວມມືເສດຖະກິດຊາຍແດນ ລາວ-ກຳປູເຈຍ ໂດຍເນັ້ນເອົາການຄ້າຊາຍແດນ ແລະ ການສົ່ງອອກເປັນພື້ນຖານ ດຶງດູດນັກລົງທຶນ ຈາກ ກຳປູເຈຍ, ຫວຽດ ນາມ ແລະ ປະເທດອື່ນໆ ເຂົ້າມາພັດທະນາອຸດສາຫະກຳການຜະລິດສຳລັບສົ່ງອອກ ທີ່ລາວມີທ່າແຮງ ແລະ ໄດ້ປຽບ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດຕ່າງປະເທດ ໂດຍສະເພາະແມ່ນກຳປູເຈຍ.

**<u>ມາດຕະການ</u>:**

+ ປັບປຸງ ແລະ ຍົກລະດັບຄຸນນະພາບ ແລະ ປະສິດທະພາບຂອງລະບົບຄຸ້ມຄອງບໍລິຫານໃຫ້ມີຄວາມ ເຂັ້ມແຂງ ແລະ ທັນສະໄໝ, ສົ່ງເສີມການນຳໃຊ້ເຕັກໂນໂລຍີ ຂ່າວສານທີ່ກ້າວໜ້າ ເຂົ້າໃນວຽກງານການຄຸ້ມ ຄອງບໍລິຫານ.

+ ເພີ່ມທະວີການໂຄສະນາ ຂົນຂວາຍດຶງດູດການລົງທຶນ ຢ່າງກວ້າງຂວາງ ດ້ວຍຫຼາຍວິທີ ໂດຍສຸມ ໃສ່ໂຄສະນາທາງສື່ມວນຊົນ, ສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ; ໂຄສະນາເຜີຍແຜ່ຜ່ານທາງສະຖານທູດ, ສະຖານກົງສູນທີ່ປະຈຳຢູ່ຕ່າງປະເທດ ແລະ ບັນດາໜ່ວຍງານຂອງລັດ, ນອກນັ້ນ ກໍ່ເຜີຍແຜ່ໃນເວທີກອງ ປະຊຸມສຳມະນາ, ງານວາງສະແດງສິນຄ້າ ແລະ ກິດຈະກຳຕ່າງໆ ຊຶ່ງຜ່ານການຮ່ວມມືກັບບັນດາປະເທດໃນ ອະນຸພາກພື້ນ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນ ຫຼື ການພົບປະກັບນັກລົງທຶນໂດຍກົງ ເພື່ອ ສ້າງໂອກາດ ໃນການສົ່ງເສີມການລົງທຶນ.

+ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການລົງທຶນ ໂດຍການສຸມໃສ່ພັດທະນາພື້ນຖານໂຄງ ລ່າງ, ລະບົບສາທາລະນູປະໂພກ, ລະບົບບຳບັດນ້ຳເປື້ອນ, ສິ່ງເສດເຫຼືອ; ສ້າງກຳລັງແຮງງານໃຫ້ໄດ້ທັງ ປະລິມານ ແລະ ຄຸນນະພາບ.

+ ພັດທະນາຂີດຄວາມສາມາດຂອງພະນັກງານ ແລະ ບຸກຄະລາກອນໃຫ້ສູງຂຶ້ນ, ພ້ອມທັງປັບປຸງກົນ ໄກການບໍລິການຂອງເຂດໃຫ້ເປັນລະບົບຄ່ອງຕົວ ເພື່ອໃຫ້ການບໍລິການແກ່ຜູ້ລົງທຶນຢ່າງມີປະສິດທິພາບ ແລະ ເປັນທີ່ປະທັບໃຈ.

+ ຮັບປະກັນການພັດທະນາແບບຍືນຍົງ ໂດຍເອົາການພັດທະນາເຂດດັ່ງກ່າວ ຕິດພັນກັບການພັດທະ ນາສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ໂດຍການເອົາໃຈໃສ່ຢ່າງຈິງຈັງສຶກສາຜົນກະທົບທາງດ້ານ ສິ່ງແວດລ້ອມ ກ່ອນຈະພິຈາລະນາອະນຸມັດໂຄງການລົງທຶນຕັ້ງແຕ່ຫົວທີ; ຊຸກຍູ້ຂະແໜງການຜະລິດທີ່ບໍ່ສົ່ງຜົນ

ກະທົບຕໍ່ສິ່ງແວດລ້ອມ, ສົ່ງເສີມການນຳໃຊ້ເຕັກໂນໂລຍີທີ່ສະອາດ, ສົ່ງເສີມການສ້າງເຂດສີຂຽວ, ບຳບັດນ້ຳເປື້ອນ ແລະ ສິ່ງເສດເຫຼືອໃນເຂດອຸດສາຫະກຳ.

# 5. ການພັດທະນາຂົງເຂດລັດ

ເພື່ອເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ດຳເນີນໄປຕາມທິດທາງ ແລະ ຈຸດໝາຍທີ່ວາງໄວ້, ໃນຖານະທີ່ລັດເປັນອົງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ລັດຕ້ອງປະຕິບັດພາລະບົດບາດຄຸ້ມຄອງເສດຖະກິດຕາມທິດຕົວບົດກົດໝາຍ, ທັງສັກສິດ, ມີປະສິດທິຜົນ, ຮັບປະກັນໃຫ້ເສດຖະກິດ-ສັງຄົມຂະຫຍາຍຕົວມີຄວາມຕໍ່ເນື່ອງ ແລະ ໝັ້ນທ່ຽງ, ເສີມສ້າງຄວາມສະເໝີພາບ ແລະ ຄວາມຍຸດຕິທຳໃນຂະບວນວິວັດແຫ່ງການພັດ ທະນາ; ຫລຸດຜ່ອນຄວາມແຕກໂຕນລະຫວ່າງຄົນທຸກ-ຮັ່ງໃນສັງຄົມ, ລະຫວ່າງຕົວເມືອງ ແລະ ຊົນນະບົດໃຫ້ໄດ້ ລະຫວ່າງເຂດແຄ້ວນຕ່າງໆເປັນກ້າວໆ.

## 5.1. ຂົງເຂດບໍລິຫານ

### 5.1.1. ການສ້າງຄວາມຍຸຕິທຳ ແລະ ຄວາມສະເໝີພາບໃນສັງຄົມ

**[1]. <u>ທິດທາງ:</u>**

ສຸມໃສ່ຄົ້ນຄວ້າ ແລະ ປັບປຸງບັນດາກົດໝາຍ, ນິຕິກຳ ທີ່ປະກາດໃຊ້ແລ້ວນັ້ນໃຫ້ສອດຄ່ອງກັບການພັດ ທະນາເສດຖະກິດ-ສັງຄົມ ຂອງປະເທດໃນໄລຍະໃໝ່; ສ້າງກົດໝາຍ ແລະ ນິຕິກຳຈຳນວນໜຶ່ງທີ່ຈຳເປັນ ຂຶ້ນ ຕື່ມ ເພື່ອຮັບໃຊ້ໃຫ້ການພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວໄວກວ່າເກົ່າ.

ຍູ້ແຮງການໂຄສະນາສຶກສາອົບຮົມກົດໝາຍ ແລະ ສະຕິກົດໝາຍໃຫ້ແກ່ປະຊາຊົນ ເພື່ອໃຫ້ພົນ ລະ ເມືອງລາວທຸກຊັ້ນຄົນເຄົາລົບ ແລະ ປະຕິບັດກົດໝາຍ; ປະຕິບັດສິດແລະພັນທະຂອງພົນລະເມືອງຕາມ ກົດໝ າຍ. ສ້າງຂະບວນການເຂົ້າຮ່ວມປົກປ້ອງກົດໝາຍຂອງປະຊາຊົນໃນການສະກັດກັ້ນ ແລະ ຕ້ານການລະ ເມີດ ກົດໝາຍ ເປັນຕົ້ນແມ່ນ: ການສໍ້ລາດບັງຫຼວງ, ບັນຫາຢາເສບຕິດ, ໂສເພນີ, ຄ້າຂາຍເຖື່ອນ, ຂີ້ລັກງັດ ແງະ, ລະເມີດກົດຈໍລະຈອນ, ການໂຄສະນາແບ່ງພັກແຍກພວກ, ການສວາຍໃຊ້ໜ້າທີ່ຕຳແໜ່ງ, ຄວາມບໍ່ ສະເໝີ ພາບຕໍ່ໜ້າກົດໝາຍ, ການເອົາລັດເອົາປຽບກັນຢູ່ໃນສັງຄົມ ແລະ ປະກົດການທາຍໍ້ທໍ້ຕ່າງໆຂອງສັງຄົມ, ສ້າງ ບ້ານປອດຄະດີ, ຄອບຄົວປອດຄະດີຢ່າງກວ້າງຂວາງແຂງແຮງ.

ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນ, ເຄື່ອງມືອຸປະກອນອັນຈຳເປັນ ໃຫ້ແກ່ອົງການ ປົກປ້ອງຄວາມຍຸຕິທຳ, ປົກປ້ອງກົດໝາຍ ເປັນຕົ້ນແມ່ນ: ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງ ການສືບສວນ-ສອບສວນ, ທະນາຍຄວາມ, ອົງການກວດກາລັດ ແລະ ອົງການອື່ນໆ ເພື່ອໃຫ້ອົງການເຫຼົ່າ ນັ້ນມີການຈັດຕັ້ງ, ບຸກຄະລາກອນທີ່ເຂັ້ມແຂງ, ສາມາດປະຕິບັດໜ້າທີ່ປົກປ້ອງກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳໃຫ້ແກ່ປະຊາຊົນ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາ ແລະ ພັດທະ ນາປະເທດຊາດ, ສ້າງລັດເຮົາໃຫ້ກາຍເປັນລັດແຫ່ງກົດໝາຍ ຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະ ຊາຊົນເທື່ອລະກ້າວ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

+ ຈັດຝຶກອົບຮົມໄລຍະສັ້ນໃຫ້ພະນັກງານຫຼັກແຫຼ່ງ 1-2 ຊຸດ ຕໍ່ປີ;

+ ບຳລຸງທິດສະດີໄລຍະສັ້ນ ໃຫ້ໄດ້ປະມານ 250 ຄົນ;

+ ສົ່ງພະນັກງານຫຼັກແຫຼ່ງໄປຍົກລະດັບ ດ້ານທິດສະດີການເມືອງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ຢ່າງໜ້ອຍ 10 ຄົນ, ໃນນີ້ ຂັ້ນແຂວງຕ້ອງກວມເອົາ 50 ສ່ວນຮ້ອຍ.

+ ໃນປີ 2015 ປະກອບພະນັກງານຂະແໜງຍຸຕິທຳ ໃຫ້ໄດ້ 1.670 ຄົນ ໃນຂອບເຂດທົ່ວປະເທດ, ໃນນັ້ນ: ຂັ້ນກະຊວງໃຫ້ໄດ້ 287 ຄົນ, ຂັ້ນແຂວງ 690 ຄົນ ແລະ ຂັ້ນເມືອງ 693 ຄົນ.

+ ຈັດຝຶກອົບຮົມກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ໄດ້ຢ່າງໜ້ອຍ 10 ຄັ້ງ.

+ ລົງຊຸກຍູ້, ຕິດຕາມການກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ຂັ້ນທ້ອງຖິ່ນ ໃຫ້ໄດ້ປະມານ ປີລະ 5 ຄັ້ງ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ການສ້າງຄວາມຍຸຕິທຳ ແລະ ຄວາມສະເໝີພາບໃນສັງຄົມ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

- ອອກແຮງສ້າງ ແລະ ປັບປຸງລະບົບກົດໝາຍແພ່ງ, ເສດຖະກິດ, ອາຍາ, ຂົງເຂດການປົກຄອງ, ວັດທະນະທຳ-ສັງຄົມ, ຊັບພະຍາກອນ ແລະ ສິ່ງແວດລ້ອມໃຫ້ຄົບຊຸດ ເພື່ອຮັບປະກັນ ໃຫ້ສອດຄ່ອງກັບກົນໄກເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ.
- ປັບປຸງກົນໄກການປະສານງານລະຫວ່າງຂະແໜງຍຸຕິທຳ ກັບຂະແໜງການອື່ນໆ ໃຫ້ມີຄວາມສະດວກ ແລະ ຄ່ອງຕົວກວ່າເກົ່າ.
- ເພີ່ມທະວີຄວາມເຂັ້ມແຂງຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ຫ້ອງການທະບຽນສານ, ອົງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ກາຍເປັນຫົວໜ່ວຍບໍລິການຂອງລັດ ພ້ອມທັງເສີມຂະຫຍາຍບົດບາດໜ່ວຍໄກ່ເກ່ຍຂັ້ນບ້ານໃຫ້ເປັນໜ່ວຍງານຍຸຕິທຳຮາກຖານທີ່ນັບມື້ເຂັ້ມແຂງ.

### 5.1.2. ການຍົກສູງປະສິດທິພາບໃນການຄຸ້ມຄອງລັດ

+ ບັນດາກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງສູນກາງ ປະສານສົມທົບຄົ້ນຄວ້ານະໂຍບາຍ ແລະ ວິທີການຄຸ້ມຄອງລັດໃຫ້ຄົບຊຸດ.

+ ແຕ່ລະຂະແໜງການສ້າງຂະແໜງການພັດທະນາ ແລະ ນະໂຍບາຍຄຸ້ມຄອງມະຫາພາກ ໃນຂະແໜງການຂອງຕົນໂດຍສອດຄ່ອງກັບນະໂຍບາຍ ແລະ ຍຸດທະສາດການພັດທະນາແຫ່ງຊາດ.

+ ສ້າງໜ່ວຍງານຄຸ້ມຄອງມະຫາພາກໃນລະດັບຂະແໜງການ ແລະ ໃນລະດັບຊາດ.

+ ປັບປຸງກົງຈັກຂອງອົງການບໍລິຫານລັດຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ເໝາະສົມ, ກະທັດຮັດ ແລະ ສ້າງລະບົບກົນໄກປະສານງານທີ່ສອດຄ່ອງ ແລະ ກົມກຽວ, ຊັບຊ້ອນພະນັກງານນຳພາທີ່ມີລະດັບວິຊາສະເພາະທີ່ເໝາະສົມກັບແຕ່ລະໜ້າວຽກ.

+ ປັບປຸງລະບຽບການທີ່ພົວພັນເຖິງການເຄື່ອນໄຫວທຸລະກິດ, ການເງິນ, ການຄ້າ, ທະນາຄານ, ການລົງທຶນ ແລະ ອື່ນໆ, ສືບຕໍ່ປັບປຸງການບໍລິການຕາມກົນໄກບໍລິຫານຜ່ານປະຕູດຽວ.

+ ສືບຕໍ່ຄົ້ນຄວ້າເງື່ອນໄຂດ້ານຕ່າງໆໃນການສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ເພື່ອເປັນອົງການຕົວແທນສິດຜົນປະໂຫຍດ ຂອງປະຊາຊົນ ແລະ ເປັນກົນໄກຕິດຕາມ, ກວດກາການບໍລິຫານລັດ.

### 5.1.3. ການສົ່ງເສີມຄວາມສາມາດ ແລະ ຄວາມເປັນເຈົ້າການຂອງການບໍລິຫານຂັ້ນເມືອງ ແລະ ບ້ານ

ເອົາໃຈໃສ່ຍົກສູງປະສິດທິຜົນໃນການບໍລິຫານຂອງອົງການປົກຄອງຂັ້ນເມືອງ ແລະ ບ້ານ ເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງມະຫາພາກ. ຮັບປະກັນຂອດການວາງແຜນ ແລະ ງົບປະມານຂອງເມືອງ ແລະ ຂອດຈັດຕັ້ງປະຕິບັດຂອງບ້ານໃຫ້ມີປະສິດທິຜົນສູງ. ເມືອງເປັນຂອດວາງແຜນການໃຫ້ຖືກກັບສະພາບຕົວຈິງຂອງເມືອງ ໂດຍອີງໃສ່ທິດທາງ ແລະ ແຜນຍຸດທະສາດຂອງແຂວງ, ນຳໃຊ້ທ່າແຮງບົ່ມຊ້ອນຕົວຈິງຂອງເມືອງເພື່ອປະກອບສ່ວນຈັດຕັ້ງປະຕິບັດຍຸດທະສາດຂອງແຂວງ. ຫ້ອງການຕ່າງໆຂອງເມືອງ ຕ້ອງສາມາດເກັບກຳບັນດາລັກສະນະສະເພາະຂອງຕົນ ສະໜອງໃຫ້ແກ່ແຂວງ ແລະ ສູນກາງ ເພື່ອປະກອບສ່ວນຄຸ້ມຄອງມະຫາພາກ. ເມືອງເປັນຜູ້ໃກ້ຊິດກັບບ້ານ ແລະ ປະຊາຊົນ, ສະນັ້ນ ເມືອງຕ້ອງສັງລວມເອົາບັນດາລັກສະນະ, ທ່າແຮງສະເພາະຂອງບ້ານເພື່ອບັນຈຸເຂົ້າໃນແຜນພັດທະນາ, ເຮັດໃຫ້ແຜນການໄດ້ຮັບການສ້າງຕັ້ງຂຶ້ນບົນພື້ນຖານການມີສ່ວນຮ່ວມຂອງປະຊາຊົນຢ່າງແທ້ຈິງ.

ສົ່ງເສີມຄວາມເປັນເຈົ້າການ ແລະ ການມີສ່ວນຮ່ວມຂອງອົງການຈັດຕັ້ງສັງຄົມ, ຊຸມຊົນ, ປະຊາຊົນ ເພື່ອຮັບປະກັນໃຫ້ສາມາດຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນການທີ່ວາງໄວ້ ໂດຍສອດຄ່ອງກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ. ດັ່ງນັ້ນ, ບ້ານເອງກໍຕ້ອງມີສ່ວນຮ່ວມໃນຂະບວນການວາງແຜນຂອງເມືອງ ເພື່ອຮັບປະກັນຄວາມເປັນເຈົ້າການ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງເປັນຮູບປະທຳ.

ເພີ່ມຈຳນວນພະນັກງານ, ລັດຖະກອນຜູ້ມີຄວາມຮູ້ຄວາມສາມາດໃຫ້ຂັ້ນເມືອງຫຼາຍຂຶ້ນ, ພ້ອມທັງແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ຈະແຈ້ງ ເຊິ່ງຈະໃຫ້ການຄຸ້ມຄອງມະຫາພາກມີລັກສະນະຊັດເຈນ ແລະ ມີປະສິດທິຜົນຍິ່ງຂຶ້ນ. ໃນໄລຍະຕໍ່ໜ້ານີ້ ຕ້ອງໄດ້ເອົາໃຈໃສ່ວຽກງານດັ່ງກ່າວ ເພື່ອຮັບປະກັນໃຫ້ບັນດາຄາດໝາຍ ແລະ ການຄຸ້ມຄອງການຈັດຕັ້ງປະຕິບັດແຜນການໃຫ້ມີປະສິດທິຜົນສູງຂຶ້ນ.

### 5.1.4. ການກໍ່ສ້າງ ແລະ ຝຶກອົບຮົມຍົກລະດັບຄວາມສາມາດຂອງຜູ້ບໍລິຫານຂັ້ນຕ່າງໆ

ເອົາໃຈໃສ່ຍົກສູງຄວາມສາມາດຂອງຜູ້ບໍລິຫານໃນແຕ່ລະຂັ້ນ, ສ້າງຫລັກສູດການຝຶກອົບຮົມສະເພາະຂອງແຕ່ລະຂະແໜງການ ເພື່ອຊ່ວຍໃຫ້ພະນັກງານມີຄວາມສາມາດປະຕິບັດວຽກງານທີ່ຕົນຮັບຜິດຊອບໄດ້ຢ່າງມີປະສິດທິຜົນ. ໃນໄລຍ 5 ປີຕໍ່ໜ້າ ຕ້ອງເອົາໃຈໃສ່ສ້າງຫລັກສູດຝຶກອົບຮົມ ແລະ ຈັດຝຶກອົບຮົມໃຫ້ຜູ້ບໍລິຫານໃນແຕ່ລະຂັ້ນ ໂດຍສຸມໃສ່ບາງວຽກງານ ດັ່ງນີ້:

+ ຄົ້ນຄວ້າກ່ຽວກັບຄຸນລັກສະນະ ແລະ ມາດຖານຂອງຜູ້ບໍລິຫານ ອີງໃສ່ພາລະບົດບາດ ແລະ ລັກສະນະຂອງວຽກງານແຕ່ລະຂະແໜງການ ແລະ ແຕ່ລະທ້ອງຖິ່ນ, ກຳນົດຄຸນລັກສະນະຂອງຜູ້ບໍລິຫານທີ່ຕ້ອງການໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນຕົນຢ່າງຈະແຈ້ງ; ສ້າງເອກະສານຄູ່ມື ທີ່ເປັນມາດຖານສະເພາະຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ເພື່ອຮັບປະກັນໃຫ້ວຽກງານການຄຸ້ມຄອງມະຫາພາກຂອງແຕ່ລະຂະແໜງການໄດ້ມີຜູ້ບໍລິຫານທີ່ໄດ້ມາດຕະຖານຕາມຄວາມຕ້ອງການຕົວຈິງຂອງວຽກງານ; ກົມຈັດຕັ້ງ ແລະ ພະນັກງານຕ້ອງເປັນເຈົ້າການໃນການກຳນົດມາດຕະຖານດັ່ງກ່າວ ໂດຍສົມທົບຢ່າງສະໜິດແໜ້ນກັບກົມ ຫຼື ຂະແໜງວິຊາການສະເພາະຂອງຂະແໜງການຕົນເອງ.

+ ກົມຈັດຕັ້ງ ແລະ ພະນັກງານ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຕ້ອງເປັນເຈົ້າການໃນ ການປະເມີນສະພາບຄວາມຮູ້-ຄວາມສາມາດຂອງຜູ້ບໍລຫານໃນຂະແໜງການ ແລະ ທ້ອງຖິ່ນຕົນ, ເກັບກຳສະ ພາບຂອງພະນັກງານ/ຜູ້ບໍລຫານຂອງຕົນ ເພື່ອວາງແຜນການຍົກລະດັບບຸກຄະລາກອນ ໃຫ້ແທດເໝາະກັບ ສະພາບຕົວຈິງ.

+ ສ້າງຄູ່ມື ແລະ ຫຼັກສູດການຝຶກອົບຮົມທີ່ແທດເໝາະກັບສະພາບຕົວຈິງຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ກ່ຽວກັບການຍົກລະດັບຄວາມຮູ້-ຄວາມສາມາດໃຫ້ແກ່ຜູ້ບໍລິຫານໃນຂົງເຂດຕົນ. ນຳໃຊ້ບັນດາ ສູນຝຶກອົບຮົມຂອງແຕ່ລະຂະແໜງການທີ່ມີ ເພື່ອເປັນສະຖາບັນຍົກລະດັບຄວາມຮູ້-ຄວາມສາມາດດ້ານການ ບໍລິຫານຂອງຜູ້ບໍລິຫານໃນຂະແໜງການ ແລະ ທ້ອງຖິ່ນ. ດຶງດູດ ແລະ ຍາດແຍ່ງເອົາທຶນຮອນ ລວມທັງບົດ ຮຽນຈາກບັນດາປະເທດເພື່ອນມິດອ້ອມຂ້າງ ຕະຫຼອດທັງບັນດາອົງການ ແລະ ປະເທດຜູ້ໃຫ້ທຶນຕ່າງໆ ເພື່ອ ຍາດແຍ່ງຄວາມຮູ້ທີ່ສອດຄ່ອງກັບຍຸກແຫ່ງການເຊື່ອມໂຍງເສດຖະກິດ ຢ່າງແທ້ຈິງ.

+ ເອົາໃຈໃສ່ຈັດຝຶກອົບຮົມຢ່າງເປັນປົກກະຕິ ເພື່ອໃຫ້ຜູ້ບໍລິຫານຂັ້ນຕ່າງໆກຳໄດ້ສະພາບການລວມ ທັງບັນດາຄວາມຮູ້, ເຕັກໂນໂລຊີທີ່ທັນສະໄໝ ແລະ ການເຜີຍແຜ່ຂໍ້ມູນຂ່າວສານທັງໃນລະດັບສາກົນ, ພາກ ພື້ນ, ປະເທດ ແລະ ທ້ອງຖິ່ນ.

## 5.2. ຂົງເຂດການປົກປ້ອງກົດໝາຍ

### 5.2.1. ດ້ານໄອຍະການ

**[1]. <u>ທິດທາງ:</u>**

ສຸມໃສ່ການຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ກົດໝາຍວ່າດ້ວຍອົງການໄອຍະການສະບັບປັບປຸງໃໝ່, ແຜນແມ່ບົດ ກ່ຽວກັບການພັດທະນາລັດ ແລະກົດໝາຍ ຂອງ ສປປ ລາວ ໂດຍການຫັນເປັນແຜນງານ, ໂຄງການເພື່ອຍົກສູງຄຸນນະພາບຮອບດ້ານຂອງອົງການໄອຍະການປະຊາຊົນທຸກຂັ້ນຂຶ້ນເທື່ອລະກ້າວ ເພື່ອປະ ຕິບັດຕາມທິດນຳຂອງພັກທີ່ວ່າ "ຜູ້ກະທຳຜິດຕ້ອງຖືກລົງໂທດຕາມກົດໝາຍ ແລະ ຜູ້ບໍ່ໄດ້ກະທຳຜິດຈະບໍ່ຖືກ ລົງໂທດ". ເອົາໃຈໃສ່ພັດທະນາ ແລະ ຍົກສູງຄຸນນະພາບການຕິດຕາມກວດກາ ການປະຕິບັດກົດໝາຍ; ຍົກ ສູງຄຸນນະພາບຂອງບຸກຄະລາກອນໃຫ້ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະ, ປັບປຸງການຈັດຕັ້ງ ແລະ ບໍລິຫານໃຫ້ມີຄວາມເຂັ້ມແຂງ ແລະ ຄ່ອງຕົວຂຶ້ນກວ່າເກົ່າ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

1). ການປັບປຸງກົງຈັກ ແລະ ການແກ້ໄຂຄະດີ:

- ສູ້ຊົນເຮັດໃຫ້ກົງຈັກມີຄວາມເຂັ້ມແຂງ, ສະຫງົບ ແລະ ມີປະສິດທິຜົນ, ເອົາໃຈໃສ່ເປັນພິເສດການ ປັບປຸງອົງການໄອຍະການປະຊາຊົນເຂດ ແລະ ພາກ ໃຫ້ສາມາດປະຕິບັດໜ້າທີ່ໄດ້ຕາມກົດໝາຍກຳນົດໄວ້.
- ສູ້ຊົນແກ້ໄຂຄະດີໃຫ້ໄດ້ 90 % ຂອງຈຳນວນຄະດີຄ້າງ ແລະ ຄະດີໃໝ່.

2). ການພັດທະນາບຸກຄະລະກອນ: ສ້າງ ແລະ ບຳລຸງພະນັກງານທາງດ້ານການເມືອງແນວຄິດ, ຄຸນສົມບັດ, ຈັນຍາທຳ, ຈັນຍາບັນ ຂອງໄອຍະການປະຊາຊົນສູງສຸດ; ບຳລຸງສ້າງພະນັກງານໃຫ້ມີຄວາມຮູ້ ຄວາມສາມາດທາງດ້ານວິຊາການ ເພື່ອຮັບປະກັນໃຫ້ມີພະນັກງານສືບທອດທົດແທນ ໂດຍມີຄາດໝາຍຕົ້ນຕໍ ດັ່ງນີ້:

- ສ້າງຫຼັກສູດການຝຶກອົບຮົມວຽກງານໄອຍະການໃຫ້ໄດ້ 3 ຫຼັກສູດ ພື້ນຖານ ເຊັ່ນ: ຫຼັກສູດກ່ຽວກັບ ວຽກງານການຄຸ້ມຄອງບໍລິຫານວຽກງານໄອຍະການ, ຫຼັກສູດສຳລັບພະນັກງານໄອຍະການປະຊາຊົນ ແລະ ຫຼັກສູດຜູ້ຊ່ວຍພະນັກງານໄອຍະການປະຊາຊົນ.
- ຝຶກອົບຮົມດ້ານວິຊາການສຳລັບພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍວຽກໄອຍະການໃຫ້ ໄດ້ ປີລະ 2 ຊຸດ.
- ສູ້ຊົນເພີ່ມຈຳນວນພະນັກງານໃຫ້ ອົງການໄອຍະການ ເພື່ອປະກອບເຂົ້າໃນ 39 ເຂດພັດທະນາ ແຕ່ລະເຂດໃຫ້ໄດ້ 20 ຄົນຂຶ້ນໄປ.

3). ການສະໜອງອຸປະກອນ ແລະ ຂໍ້ມູນຂ່າວສານ:

- ປະກອບວັດຖຸອຸປະກອນ ອັນຈຳເປັນໃຫ້ແກ່ການປະຕິບັດໜ້າທີ່ວິຊາສະເພາະ ເພື່ອຮັບປະກັນການ ແກ້ໄຂຄະດີໃຫ້ຖືກຕ້ອງຊັດເຈນ.
- ສ້າງພື້ນຖານໂຄງລ່າງ ໂດຍສະເພາະແມ່ນ ຫ້ອງການ ສະຖານທີ່ເຮັດວຽກຂອງອົງການໄອຍະການ ປະຊາຊົນແຕ່ລະຂັ້ນ ໃຫ້ສົມຄູ່ກັບພາລະບົດບາດ.
- ສ້າງເງື່ອນໄຂໃຫ້ປະຊາຊົນເຂົ້າເຖິງຂໍ້ມູນວຽກງານໄອຍະການປະຊາຊົນ ແລະ ສາມາດເຊື່ອມໂຍງ ເຂົ້າກັບພາກພື້ນເທື່ອລະກ້າວ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ການພັດທະນາວຽກງານໄອຍະການ ຈະຕ້ອງສຸມ ໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານ ຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

- ສ້າງກົນໄກຕິດຕາມກວດກາ ການເຄື່ອນໄຫວດ້ານວຽກງານວິຊາສະເພາະ ຂອງພະນັກງານພາຍໃນ ລະບົບອົງການໄອຍະການປະຊາຊົນ ເປັນຕົ້ນ ແມ່ນທາງສຽງວິພາກວິຈານຂອງສັງຄົມ ເພື່ອຊອກຫາວິທີການ ແກ້ໄຂ.
- ອອກຂໍ້ກຳນົດ, ຂໍ້ແນະນຳ ດ້ານວິຊາການ ກ່ຽວກັບການຕິດຕາມການປະຕິບັດກົດໝາຍຂອງເຈົ້າໜ້າ ທີ່ສືບສວນ-ສອບສວນໃຫ້ສອດຄ່ອງກັບກົດໝາຍ.
- ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຄົ້ນຄວ້າປັບປຸງຄົ້ນບັນດາຂໍ້ກຳນົດ, ຂໍ້ແນະນຳ ຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງ, ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ.

### 5.2.2. ດ້ານສານປະຊາຊົນ

**[1]. <u>ທິດທາງ:</u>**

ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ປະຊາຊົນໄດ້ເຂົ້າເຖິງຂະບວນການຍຸຕິທຳ, ໄດ້ຮັບການປົກ ປ້ອງ ແລະ ໄດ້ໃຊ້ສິດທິພື້ນຖານຂອງຕົນບົນພື້ນຖານກົດໝາຍ. ເອົາໃຈໃສ່ພັດທະນາຄຸນນະພາບຂອງສານໃນ ການຄົ້ນຄວ້າ, ສ້າງ, ປັບປຸງ ແລະ ຍົກສູງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສານ, ຮັບປະກັນ ໃຫ້ການພິຈາລະນາໄຕ່ສວນ ແລະ ຕັດສິນຄະດີ ຢູ່ໃນສານປະຊາຊົນຂັ້ນຕ່າງໆໃຫ້ມີຄວາມໂປ່ງໃສ ແລະ ມີຈັນ

ຍາທຳ ພ້ອມທັງຮັບປະກັນການປະຕິບັດກົດໝາຍ ໃນຂົງເຂດການຮ່ວມມືກັບຕ່າງປະເທດ ພາຍໃຕ້ຫຼັກການສະເໝີພາບ ຕ່າງຝ່າຍຕ່າງມີຜົນປະໂຫຍດ.

[2]. <u>ຄາດໝາຍຕົ້ນຕໍ:</u>

- ສ້ຊົນໃຫ້ລະບົບສານປະຊາຊົນໃຫ້ໄດ້ຮັບການພັດທະນາ ແລະ ຫຍັບເຂົ້າໃກ້ມາດຖານລະດັບພາກພື້ນ ແລະ ສາກົນເທື່ອລະກ້າວ.
- ສ້ຊົນເຮັດໃຫ້ລະບົບການຈັດຕັ້ງຂອງສານປະຊາຊົນໃຫ້ມີຄວາມເຂັ້ມແຂງ ແລະ ມີຄວາມໂປ່ງໃສຂຶ້ນກວ່າເກົ່າ.
- ສ້ຊົນສ້າງຕັ້ງສານປົກຄອງ, ສານແຮງງານ ແລະ ສານເດັກໃຫ້ເປັນລະບົບຄົບຊຸດ.
- ຝຶກອົບຮົມດ້ານວິຊາການໃຫ້ບຸກຄະລາກອນ 4 ຊຸດ/ປີ ຊຸດລະ 45-60 ຄົນ.
- ບຳລຸງສ້າງຜູ້ພິພາກສາ 1 ຄັ້ງ/ປີ (ໄລຍະ 6 ເດືອນ) ຄັ້ງລະ 50 ຄົນ.

[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສ້ຊົນ ການພັດທະນາວຽກງານສານປະຊາຊົນ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

[4]. <u>ມາດຕະການ:</u>

- ເພີ່ມທະວີການຄຸ້ມຄອງທາງດ້ານການຈັດຕັ້ງ, ປັບປຸງ ແລະ ສ້າງຂໍ້ກຳນົດຕ່າງໆ ກ່ຽວກັບການປະຕິບັດກົດໝາຍ ວ່າດ້ວຍສານປະຊາຊົນ.
- ສ້າງພື້ນຖານວັດຖຸເຕັກນິກຢູ່ໃນສານປະຊາຊົນຂັ້ນຕ່າງໆໃຫ້ມີຄວາມເຂັ້ມແຂງ ເຮັດໜ້າທີ່ຄຸ້ມຄອງມະຫາພາກຢ່າງມີປະສິດທິພາບ.
- ເພີ່ມທະວີການພັດທະນາສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໃຫ້ກາຍເປັນໂຮງຮຽນວິຊາຊີບຜູ້ພິພາກສາ, ຈ່າສານ ແລະ ອື່ນໆ.
- ເອົາໃຈໃສ່ຄົ້ນຄວ້າການສະໜອງ ແລະ ແລກປ່ຽນຂໍ້ມູນຂ່າວສານທາງດ້ານກົດໝາຍຂອງ ສປປ ລາວ ແລະ ກົດໝາຍ ໃນພາກພື້ນ ແລະ ສາກົນ.

## 5.3. ຂົງເຂດນິຕິບັນຍັດ

[1]. <u>ທິດທາງ:</u>

ໃນ 5 ປີຕໍ່ໜ້າ ຈະຕ້ອງສືບຕໍ່ສ້າງໃຫ້ໄດ້ເງື່ອນໄຂອຳນວຍຄວາມສະດວກໃນການດຳເນີນວຽກງານໃຫ້ແກ່ບັນດາອົງການທີ່ເຮັດໜ້າທີ່ກວດສອບ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ. ສືບຕໍ່ສ້າງ ແລະ ປັບປຸງລະບຽບກົດໝາຍ ໃຫ້ມີຄວາມສອດຄ່ອງກັບສະພາບການພັດທະນາໃນແຕ່ລະໄລຍະ ຄຽງຄູ່ກັບການເຜີຍແຜ່ໃຫ້ກວ້າງຂວາງ ແລະ ທົ່ວເຖິງໃນຂອບເຂດທົ່ວປະເທດ. ເພື່ອຮັບປະກັນການປະຕິບັດແນວທາງນະ

ໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດຢ່າງຖືກຕ້ອງ ແລະ ທັນການ ທັງເຮັດໃຫ້ປະຊາຊົນສາມາດເຂົ້າເຖິງຂະບວນການຍຸຕິທຳໄດ້ດີກວ່າເກົ່າ.

[2]. <u>ຄາດໝາຍຕົ້ນຕໍ:</u>

- ສ້າງ ແລະ ປັບປຸງກົດໝາຍແພ່ງ, ເສດຖະກິດ, ອາຍາ, ຂົງເຂດປົກຄອງ, ວັດທະນະທຳ-ສັງຄົມ, ຊັບພະຍາກອນ ແລະ ສິ່ງແວດລ້ອມໃຫ້ຄົບຊຸດ ແລະ ມີຄວາມກົມກຽວກັບສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.
- ສ້າງຕັ້ງໜ່ວຍງານນິຕິກຳຂອງແຕ່ລະຂະແໜງການໃຫ້ທົ່ວເຖິງ ແລະ ຊັບຊ້ອນບຳລຸງສ້າງພະນັກງານຂອງໜ່ວຍງານດັ່ງກ່າວໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ.

[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ການພັດທະນາວຽກງານນິຕິບັດຍັດ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

[4]. <u>ມາດຕະການ:</u>

- ເສີມຂະຫຍາຍພາລະບົດບາດ ແລະ ປະສິດທິຜົນຂອງລະບຽບກົດໝາຍ ເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ເພື່ອຮັບປະກັນຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ.
- ເພີ່ມທະວີການໂຄສະນາ, ຈັດຕັ້ງເຜີຍແຜ່ກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ໃຫ້ປະຊາຊົນຮັບຊາບ ແລະ ປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.
- ສົ່ງເສີມໃຫ້ມີການປະກອບສ່ວນຂອງນັກວິຊາການອາວຸໂສ ໃຫ້ມີສ່ວນຮ່ວມໃນການປັບປຸງ, ກໍ່ສ້າງ ລະບົບກົດໝາຍ ແລະ ຕິດຕາມການປະຕິບັດລະບຽບກົດໝາຍ ຂອງ ສປປ ລາວ.

# 6. ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

## 6.1. ການປ້ອງກັນຊາດ

[1]. <u>ທິດທາງ:</u>

ເພີ່ມທະວີຄວາມເຂັ້ມແຂງ ແລະ ຍົກສູງຄວາມສາມາດກຽມພ້ອມສູ້ຮົບຂອງກຳລັງປ້ອງກັນຊາດຂອງປະຊາຊົນ, ສຸມໃສ່ປັບປຸງພື້ນຖານໂຄງລ່າງ, ວັດຖຸ-ເຕັກນິກ, ປະກອບພາຫະນະ, ອາວຸດຍຸດໂທປະກອນທີ່ທັນສະໄໝເທື່ອລະກ້າວ; ຍົກລະດັບຄຸນນະພາບຊີວິດຂອງພະນັກງານພາຍໃນກຳລັງປະກອບອາວຸດໃຫ້ມີຄວາມພ້ອມໃນທຸກດ້ານ ໂດຍການລົງທຶນກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນ.

ອອກແຮງກໍ່ສ້າງກຳລັງ ປກຊ ໃຫ້ນັບມື້ໜັກແໜ້ນເຂັ້ມແຂງຮອບດ້ານ ເປັນຕົ້ນ ດ້ານຄຸນທາດການເມືອງ, ຍົກສູງກຳລັງແຮງສູ້ຮົບ, ເສີມຂະຫຍາຍທາດແທ້ປະຕິວັດ ແລະ ມູນເຊື້ອວິລະຊົນຂອງປະຊາຊົນລາວ; ກໍ່ສ້າງ-ບຳລຸງພະນັກງານ ໃຫ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີສະຕິລະວັງຕົວສູງ, ຈຳແນກມິດ-ສັດຕູຢ່າງຈະແຈ້ງ, ມີຄວາມອົງອາດກ້າແກ່ນ ເດັດດ່ຽວຜ່ານຜ່າຄວາມຫຍຸ້ງຍາກນາໆປະການເພື່ອຮັກສາອຳນາດອະທິປະໄຕຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ; ກຳແໜ້ນ ແລະ ຕັ້ງໜ້າປະຕິບັດ

ແນວທາງປ້ອງກັນຊາດທ່ວປວງຊົນ; ມີຄວາມເດັດຂາດ, ກ້າຫານ, ມີໄຫວພິກໃນການແກ້ໄຂບັນຫາ ຫຼື ກໍລະນີ ຕ່າງໆຢ່າງມີສະຕິ, ມີຄວາມກຽມພ້ອມ ແລະ ເສຍສະຫຼະສູງ, ເຄົາລົບ ແລະ ປະຕິບັດວິໄນຢ່າງເຂັ້ມງວດ.

ເດັດດ່ຽວຍຶດໝັ້ນແນວທາງການຕ່າງປະເທດຂອງພັກ ສືບຕໍ່ປະຕິບັດນະໂຍບາຍພົວພັນແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ; ສ້າງສະພາບແວດລ້ອມພາຍນອກທີ່ເອື້ອອຳນວຍໃຫ້ແກ່ການພັດທະນາ ເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາປະເທດຊາດ; ພ້ອງທັງປະກອບສ່ວນຢ່າງເໝາະສົມເຂົ້າໃນການ ຕໍ່ສູ້ກັບບັນດາປະຊາຊາດທີ່ກ້າວໜ້າໃນໂລກ; ສືບຕໍ່ເພີ່ມທະວີການພົວພັນຮ່ວມມືກັບກຳລັງ ປກຊ ຂອງບັນດາ ປະເທດເພື່ອນມິດຍຸດທະສາດ ແລະ ຂະຫຍາຍການພົວພັນມິດຕະພາບອັນເປັນມູນເຊື້ອ, ເສີມຂະຫຍາຍການ ພົວພັນຮ່ວມມືກັບບັນດາປະເທດໃກ້ຄຽງ, ຕັ້ງໜ້າເຂົ້າຮ່ວມການເຄື່ອນໄຫວໃນກອບອາຊຽນໃນການຕໍ່ຕ້ານອິດທິ ກຳການຮ້າຍ, ອາດສະຍາກຳຂ້າມຊາດ ແລະ ອື່ນໆ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ສູ້ຊົນຫັນເອົາພະນັກງານລົງກໍ່ສ້າງຮາກຖານການເມືອງຕິດພັນກັບການພັດທະນາຊົນນະບົດ ແລະ ການປັບປຸງກຳລັງ ປກຊ ຂັ້ນທ້ອງຖິ່ນ, ກຸ່ມບ້ານ ແລະ ບ້ານ ໃຫ້ເປັນລະບົບຄົບຊຸດ, ມີຄວາມເຂັ້ມແຂງທາງ ດ້ານວິຊາສະເພາະ, ສ້າງບ້ານໃຫ້ເຂັ້ມແຂງກຽມພ້ອມຕ້ານທຸກກົນອຸບາຍທຳລາຍຂອງກຸ່ມຄົນບໍ່ດີ, ເປັນປ້ອມ ໝັ້ນສູ້ຮົບ.

- ສູ້ຊົນປະກອບພາຫະນະ, ອຸປະກອນເຕັກນິກໃຫ້ແກ່ກຳລັງ ປກຊ ໃຫ້ມີຄວາມທັນສະໄໝ ແລະ ພຽງພໍ ກັບຄວາມຕ້ອງການໃນການເຄື່ອນໄຫວວິຊາສະເພາະປ້ອງກັນຊາດ.

- ສູ້ຊົນເອົາໃຈໃສ່ປັບປຸງກໍ່ສ້າງພື້ນຖານໂຄງລ່າງຂອງກຳລັງ ປກຊ, ມີຫ້ອງການສຳນັກງານ, ມີບ່ອນຝຶກ ແອບ ແລະ ບ່ອນເຮັດການຜະລິດ ເພື່ອແກ້ໄຂຊີວິດການເປັນຢູ່ຂອງພະນັກງານໃຫ້ດີຂຶ້ນ.

- ສູ້ຊົນກໍ່ສ້າງກຳລັງ ປກຊ ໃຫ້ທັນສະໄໝເປັນກ້າວໆ ປະກອບສ່ວນຢ່າງສົມກຽດເຂົ້າໃນພາລະກິດປົກ ປັກຮັກສາ ແລະ ສ້າງສາປະເທດຊາດ.

- ສູ້ຊົນເພີ່ມທະວີການຮ່ວມມືກັບຕ່າງປະເທດ ເປັນຕົ້ນ ບັນດາປະເທດສັງຄົມນິຍົມເພື່ອນມິດຍຸດທະສາດ , ບັນດາປະເທດໃກ້ຄຽງ ແລະ ໃນກອບການພັດທະນາຂອງອາຊຽນໃຫ້ສູງຂຶ້ນກວ່າເກົ່າ.

- ສູ້ຊົນເພີ່ມວິທີການນຳພາຂອງຄະນະນຳ-ອຳນາດການປົກຄອງຂັ້ນຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ຕໍ່ກຳລັງ ປກຊ ຢ່າງແຂງແຮງ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ການພັດທະນາວຽກງານປ້ອງກັນຊາດ ຈະຕ້ອງສຸມໃສ່ ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານ ຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

- ເພີ່ມທະວີພາຫະນະ ແລະ ອຸປະກອນ ຊ່ວຍຫນຸນໃຫ້ກຳລັງ ປກຊ ຢູ່ບັນດາພື້ນທີ່ຈຸດສຸມສຳຄັນ,

ພູດອຍ, ຊາຍແດນເພື່ອມີເງື່ອນໄຂພຽງພໍຕ້ານຢັນກັບທຸກກໍລະນີທີ່ສັບສົນ ແລະ ກໍ່ຄວາມສະຫງົບສຸກທາງການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

- ຄົ້ນຄ້ວາ ແລະ ກໍ່ສ້າງພື້ນຖານອຸດສາຫະກຳປ້ອງກັນຊາດທີ່ຈຳເປັນຈຳນວນຫນຶ່ງ ໃຫ້ແທດເໝາະກັບເງື່ອນໄຂຕົວຈິງຂອງລາວ ເພື່ອເປັນເຈົ້າການຮັບປະກັນການປະກອບໃຫ້ກຳລັງປ້ອງກັນຊາດໃຫ້ພຽງພໍ, ຖືສຳຄັນຕໍ່ລັກສະນະທີ່ມີຜົນຫລາຍດ້ານ ຂອງອຸດສາຫະກຳປ້ອງກັນຊາດ, ສັບຊ້ອນ ແລະ ປັບປຸງບັນດາທຸລະກິດ, ບັນດາພື້ນຖານປ້ອງກັນຊາດ ເພື່ອຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຫລາຍຂຶ້ນກວ່າເກົ່າ, ເສີມຂະຫຍາຍຄວາມສາມາດຮັບໃຊ້ວຽກງານປ້ອງກັນຊາດໃນເວລາທີ່ມີຄວາມຕ້ອງການ.

- ເພີ່ມທະວີຄວາມສາມາດໃນການຄຸ້ມຄອງ, ປ້ອງກັນຊາຍແດນ, ເຂດນ່ານຟ້າ ຂອງປະເທດຊາດ, ຖືເອົາວຽກງານຄຸ້ມຄອງ ແລະ ວຽກງານປ້ອງກັນຕິດພັນກັບວຽກງານການຈັດສັນຄືນໃຫ້ປະຊາຊົນຢູ່ເຂດຊາຍແດນ, ສ້າງເຂດເສດຖະກິດປ້ອງກັນຊາດຕ່າງໆຢູ່ບັນດາພື້ນທີ່ຍຸດທະສາດ, ກໍ່ສ້າງພື້ນຖານໂຄງລ່າງເສດ ຖະກິດ-ສັງຄົມຢູ່ຕາມເສັ້ນຊາຍແດນຕ່າງໆ ໂດຍສະເພາະແມ່ນຢູ່ບັນດາດ່ານຕ່າງໆ, ຊຸກຍູ້ການກໍ່ສ້າງລະບົບເສັ້ນທາງກວດການລາດຕະເວນຕາມຊາຍແດນ, ເສັ້ນທາງອອກສູ່ຊາຍແດນ, ລະບົບປິດຄ້າຍປ້ອງກັນຊາຍແດນ.

- ເຊີດຊູຄວາມຫນັກແຫນ້ນທາງການເມືອງ, ບູລະນະການຈັດຕັ້ງກຳລັງປະກອບອາວຸດ, ເພີ່ມທະວີຄວາມອາດສາມາດກຽມພ້ອມຕໍ່ສູ້, ພ້ອມທີ່ຈະປະເຊີນຫນ້າກັບບັນດາກຳລັງປໍລະປັກໃນທຸກສະຖານະການເພື່ອຮັກສາຄວາມສະຫງົບທາງການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ.

- ປັບປຸງ ແລະ ສ້າງວິທີຄຸ້ມຄອງແຫລ່ງລາຍຮັບແບບໃຫມ່, ປັບປຸງກົນໄກຮັບປະກັນທາງດ້ານການເງິນໃຫ້ແກ່ວຽກງານປ້ອງກັນຊາດ. ປົວແປງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ທະຫານ ໃຫ້ດີຂຶ້ນບາດກ້າວຫນຶ່ງ.

## 6.2. ການປ້ອງກັນຄວາມສະຫງົບ

**[1]. <u>ທິດທາງ:</u>**

ກໍ່ສ້າງ ແລະ ປັບປຸງກຳລັງປ້ອງກັນຄວາມສະຫງົບໃຫ້ໜັກແໜ້ນ ທາງດ້ານການເມືອງແນວຄິດ, ມີຈັນຍາທຳ ຈັນຍາບັນ, ເຂັ້ມແຂງທາງດ້ານການຈັດຕັ້ງບັນຊາ ແລະ ມີຄວາມສາມາດທາງດ້ານວິຊາສະເພາະ ເພື່ອເປັນຫລັກແຫລ່ງແກ່ນສານ ໃນການຮັກສາຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ; ເພີ່ມທະວີການກໍ່ສ້າງກຳລັງປ້ອງກັນຄວາມສະຫງົບ ຢູ່ຮາກຖານບ້ານ ໃຫ້ສາມາດຮັບປະກັນຄວາມສະຫງົບປອດໄພ; ປັບປຸງກົນໄກ ແລະ ລະບຽບການຕ່າງໆ ດ້ານການຕິດຕາມກວດກາການເຂົ້າ-ອອກເມືອງ, ການຄຸ້ມຄອງພົນລະເມືອງ ໃຫ້ມີຄວາມເປັນລະບຽບ ສະດວກ ແລະ ຮັດກຸມ.

**[2]. <u>ຄາດໝາຍຕົ້ນຕໍ:</u>**

- ຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພຂອງສັງຄົມ ສ້າງເງື່ອນໄຂໃຫ້ແກ່ການເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ.

- ຮັບປະກັນໃຫ້ກຳລັງປ້ອງກັນຄວາມສະຫງົບມີຢູ່ມີກິນ ມີສະຖານທີ່ຢູ່ອາໄສ ແລະ ມີຄ້າຍທີ່ໝັ້ນຄົງ ແລະ ພຽງພໍ ເປັນຕົ້ນ ສຸມໃສ່ກໍ່ສ້າງລະບົບໂຮງໝໍຂອງກຳລັງປ້ອງກັນຄວາມສະຫງົບໃຫ້ທັນສະໄໝ, ກໍ່ສ້າງລະບົບຄ້າຍກອງບັນຊາການ ປກສ ເມືອງ ແລະ ແຂວງ, ກໍ່ສ້າງລະບົບຄ້າຍຄຸ້ມຂັງ ເພື່ອປະຕິບັດນະໂຍບາຍຂອງພັກ ແລະ ແກ້ໄຂບັນຫາສິດທິມະນຸດ.

- ລະດົມທຸກກຳລັງແຮງສັງລວມຂອງສັງຄົມ ເພື່ອປະຕິບັດພັນທະປ້ອງກັນຄວາມສະຫງົບ ໃນທຸກພື້ນທີ່ຂອງປະເທດ.

- ສ້າງບ້ານປອດຄະດີໃຫ້ໄດ້ຫລາຍຂຶ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆໃຫ້ໄດ້ຢ່າງຂາດຕົວ.

- ທັນການປ້ອງກັນຄວາມສະຫງົບ ໃຫ້ທັນສະໄໝເປັນກ້າວໆ ທຽບທັນກັບສະພາບການໃໝ່ ໃນປະຈຸບັນ ແລະ ອະນາຄົດ.

**[3]. <u>ແຜນງານ ແລະ ໂຄງການຈຸດສຸມ:</u>**

ເພື່ອບັນລຸຕາມທິດທາງ ແລະ ຄາດໝາຍສູ້ຊົນ ການພັດທະນາວຽກງານປ້ອງກັນຊາດ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດ.....ແຜນງານ .....ໂຄງການ, ມູນຄ່າເທົ່າກັບ.....ຕື້ກີບ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍທີ.....).

**[4]. <u>ມາດຕະການ:</u>**

- ປຸກລະດົມພໍ່ແມ່ປະຊາຊົນປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບ ຖືເອົາວຽກງານປ້ອງກັນຄວາມສະຫງົບເປັນໜ້າທີ່ການເມືອງ ແລະ ເປັນຄວາມຮັບຜິດຊອບຂອງໝົດທຸກຄົນ.

- ເພີ່ມທະວີພື້ນຖານວັດຖຸ, ເຕັກນິກໃຫ້ແກ່ການປະຕິບັດໂຄງການແຫ່ງຊາດ ກ່ຽວກັບການປ້ອງກັນຝູ້ຝ່າຝືນກົດໝາຍ, ປາບປາມຢາເສບຕິດ, ຄວາມປອດໄພທາງຄົມມະນາຄົມ, ດັບເພີງ. ເພີ່ມທະວີຄວາມສາມາດຂອງກຳລັງສຸກເສີນ ເຊັ່ນ: ໄພທຳມະຊາດ ແລະ ການກໍ່ການຮ້າຍຕ່າງໆ.

- ສືບຕໍ່ສົ່ງພະນັກງານລົງກໍ່ສ້າງຮາກຖານ ພັດທະນາບ້ານຢ່າງຕໍ່ເນື່ອງ, ປັບປຸງກຳລັງກອງຫຼອນ-ປກສ ຂັ້ນບ້ານ ແລະ ກຸ່ມບ້ານໃຫ້ເປັນລະບົບຄົບຊຸດ ແລະ ມີຄວາມເຂັ້ມແຂງທາງດ້ານວິຊາສະເພາະ.

# 7. ການຮ່ວມມືກັບສາກົນ ແລະ ພາກພື້ນ

## 7.1. ການຮ່ວມມືກັບບັນດາຄູ່ຮ່ວມພັດທະນາ:

ສືບຕໍ່ຍຶດໝັ້ນໃນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ແລະ ເປີດກ້ວາງການພົວພັນກັບບັນດາປະເທດ, ເຂດແຄ້ວນແບບຫລາຍທິດ-ຫລາຍຝ່າຍ ແລະ ຫລາຍລະດັບ ບົນພື້ນຖານຍຶດໝັ້ນຜົນປະໂຫຍດຂອງຊາດ; ສ້າງສະພາບແວດລ້ອມພາຍນອກອັນອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາປະເທດຊາດ ດ້ວຍການຍຶດໝັ້ນໃນທັດສະນະເປັນເຈົ້າການ ແລະ ມີທ່າທີອັນຕັ້ງໜ້າ ເພື່ອເຊື່ອມໂຍງເຂົ້າກັບສາກົນ ແລະ ພາກພື້ນ, ເສີມຂະຫຍາຍກຳລັງແຮງພາຍໃນຊາດ ແລະ ກຳລັງແຮງຂອງຍຸກສະໄໝ ເຂົ້າໃນການພັດທະນາປະເທດເຮົາ; ສືບຕໍ່ປັບປຸງ, ເສີມຂະຫຍາຍການພົວພັນທີ່ດີກັບບັນດາປະເທດອ້າຍນ້ອງ, ຮັດແໜ້ນການພົວພັນຮ່ວມມືກັບບັນດາປະເທດໃກ້ຄຽງ ທີ່ມີຊາຍແດນຮ່ວມກັນ, ຕັ້ງໜ້າເຂົ້າຮ່ວມການເຄື່ອນໄຫວ ຂອງອາຊຽນ ບົນພື້ນ ຖານ ຜົນປະໂຫຍດລວມ ແລະ ຊ່ວຍເຫລືອເຊິ່ງກັນ ແລະ ກັນ ຕາມຫລັກການພື້ນຖານ ຂອງອາຊຽນ; ສືບຕໍ່ພົວພັນກັບບັນດາປະເທດພັດທະນາແລ້ວ ແລະ ບັນດາປະເທດທີ່ກຳລັງພັດທະນາ, ຂະບວນການບໍ່ຮ່ວມກຸ່ມ, ກຸ່ມ 77, ກຸ່ມປະເທດທີ່ໃຊ້ພາສາຝຣັ່ງ, ກຸ່ມປະເທດກຳລັງພັດທະນາ ທີ່ບໍ່ຕິດກັບທະເລ ແລະ ກັບບັນດາອົງການຈັດຕັ້ງສາກົນອື່ນໆ ໂດຍແນໃສ່ເຮັດໃຫ້ບັນດາປະເທດ ແລະ ອົງການຈັດຕັ້ງສາກົນ ກາຍເປັນຄູ່ຮ່ວມ ທີ່ເຂັ້ມແຂງ, ໝັ້ນຄົງ ແລະ ຍາວນານ.

ຊຸກຍູ້ສົ່ງເສີມການພົວພັນຮ່ວມມື, ຂົນຂວາຍ ແລະ ຍາດແຍ່ງທຶນຊ່ວຍເຫລືອທາງການ ເພື່ອການພັດທະນາ ໂດຍຜ່ານຂະບວນການໂຕະມົນ ຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນເລັ່ງລະດົມທຶນຈາກຄູ່ຮ່ວມພັດທະນາທີ່ສຳຄັນ ເຊັ່ນ:

+ ຄູ່ຮ່ວມພັດທະນາສອງຝ່າຍ ເປັນຕົ້ນແມ່ນ ຍີ່ປຸ່ນ, ສປ ຈີນ, ຝຣັ່ງ, ສ.ເກົາຫລີ, ສະຫະພາບຢູໂຣບ, ກູເວດ, ບັນດາປະເທດໃນຕາເວັນອອກກາງ ແລະ ບັນດາປະເທດສັງຄົມນິຍົມອ້າຍນ້ອງ ເຊັ່ນ: ສປ ຈີນ, ສສ. ຫວຽດນາມ, ອາດີດປະເທດສັງຄົມນິຍົມ ສາທາລະນະລັດອົງການີ ແລະ ອື່ນໆ.

+ ບັນດາກອງທັບລະຫວ່າງຊາດ ແລະ ບັນດາສະຖາບັນການເງິນສາກົນ ເປັນຕົ້ນແມ່ນ ທະນາຄານພັດທະນາອາຊີ, ທະນາຄານໂລກ, ກອງທຶນສາກົນເພື່ອການພັດທະນາກະສິກຳ ແລະ ອື່ນໆ.

+ ຄູ່ຮ່ວມພັດທະນາຫລາຍຝ່າຍ.

+ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.

## 7.2. ການຮ່ວມມືໃນຂອບອາຊຽນ:

(1) ສູ້ຊົນກະກຽມຄວາມພ້ອມເພື່ອບັນລຸເປົ້າໝາຍ ການສ້າງປະຊາຄົມເສດຖະກິດອາຊຽນໃຫ້ໄດ້ໃນ ປີ 2015 ຊຶ່ງມີບັນດາວຽກງານສຳຄັນດັ່ງນີ້:

+ ສ້າງລະບົບນິຕິກຳທີ່ສະໜັບສະໜູນການສ້າງຕະຫລາດຮ່ວມ ແລະ ຮາກຖານການຜະລິດດຽວ ຂອງອາຊຽນ ເຊັ່ນ: ສ້າງຄວາມສະດວກໃຫ້ແກ່ການເຄື່ອນຍ້າຍສິນຄ້າ, ການໃຫ້ການບໍລິການ, ການລົງທຶນ, ການໄຫລຂອງທຶນ, ການເຄື່ອນຍ້າຍແຮງງານ.

+ ປັບປຸງຈຸດປະສານງານອາຊຽນ ໃຫ້ມີປະສິດທິພາບຍິ່ງຂຶ້ນ.

+ ຈັດລຽງບັນດາຂະແໜງການບູລິມະສິດ ທີ່ຈະເຊື່ອມໂຍງກັບອາຊຽນ ແລະ ສືບຕໍ່ຂະຫຍາຍການເຊື່ອມໂຍງໃນຂະແໜງກະສິກຳ.

+ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ເກີດການແຂ່ງຂັນ ເປັນຕົ້ນແມ່ນ ການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະສ້າງຄວາມອາດສາມາດໃຫ້ພະນັກງານຂະແໜງທີ່ກ່ຽວຂ້ອງດ້ານວິຊາສະເພາະ, ພາສາຕ່າງປະເທດ ແລະ ຖອດຖອນບົດຮຽນໃນການຮ່ວມ ແລະ ຈັດຕັ້ງປະຕິບັດນະໂຍບາຍການແຂ່ງຂັນ, ສົ່ງເສີມຊັບສິນທາງປັນຍາ, ສືບຕໍ່ພັດທະນາພື້ນຖານໂຄງລ່າງໃນການຄົມມະນາຄົມ ເພື່ອສ້າງ ສປປ ລາວ ເປັນເຂດເຊື່ອມຕໍ່ (Land Link) ໃນທາງບົກ (ລວມທັງເສັ້ນທາງລົດໄຟ), ທາງນ້ຳ ແລະ ທາງອາກາດ ທັງໃນ ຂອບສອງຝ່າຍ ກໍຄືຂອບອາຊຽນ ປັບປຸງວຽກງານການເກັບອາກອນ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກ ງານການຄ້າແບບເອເລັກໂຕນິກ (E-commerce).

+ ສະໜັບສະໜູນການພັດທະນາທີ່ມີຄວາມສະເໝີພາບ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດ ເປົ້າໝາຍຍຸດທະສາດຂອງການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງອາຊຽນ ແລະ ກອບວຽກງານຂອງຂໍ້ລິເລີ່ມ ເພື່ອເຊື່ອມໂຍງອາຊຽນ (Initiative for ASEAN Integration ຫລື IAI).

+ ຂະຫຍາຍການເຊື່ອມໂຍງລະຫວ່າງອາຊຽນ ແລະ ເສດຖະກິດໂລກ ເຊັ່ນ: ການສ້າງຄວາມສອດຄ່ອງກັນລະຫວ່າງນະໂຍບາຍການພົວພັນກັບພາຍນອກຂອງປະເທດສະມາຊິກ ແລະ ລະດົມການຊ່ວຍເຫລືອ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ພາກອຸດສາຫະກຳຂອງບັນດາສະມາຊິກອາຊຽນໃໝ່ ກຳປູເຈຍ, ສປປ ລາວ, ມຽນມ້າ ແລະ ຫວຽດນາມ (CLMV) ເພື່ອໃຫ້ສາມາດເຂົ້າຮ່ວມຕ່ອງໂສ້ການຜະລິດຂອງສາກົນ.

+ ເຜີຍແຜ່ວຽກງານອາຊຽນ ໃຫ້ພາກລັດ ແລະ ພາກທຸລະກິດ ລວມທັງພາກເອກະຊົນ ເພື່ອສ້າງປະໂຫຍດ ແລະ ຄວາມພ້ອມ ໃນການເຂົ້າຮ່ວມປະຊາຄົມອາຊຽນ ໃນປີ 2015.

+ ຈັດສັນງົບປະມານສຳລັບການເຄື່ອນໄຫວວຽກງານອາຊຽນ ໃຫ້ສອດຄ່ອງກັບວຽກງານຕົວຈິງ.

(2) ສຸມໃສ່ປະຕິບັດພັນທະຜູກພັນໃນການສ້າງເຂດການຄ້າເສລີອາຊຽນ (AFTA), ເຊິ່ງມີໜ້າວຽກຕົ້ນຕໍດັ່ງນີ້:

+ ຍົກເລີກພາສີນຳເຂົ້າທຸກສິນຄ້າໃຫ້ໄດ້ 80% ໃນໄລຍະ 2012-2013, ຍົກເລີກລາຍການສິນຄ້າທີ່ອ່ອນໄຫວ (Sensitive List) ເຖິງປີ 2015 ແລະ ຄົ້ນຄ້ວາການໂຍະຍານໃຫ້ບາງລາຍການສິນຄ້າທີ່ອ່ອນໄຫວເຖິງປີ 2018.

+ ຍົກເລີກສິ່ງກີດຂວາງທີ່ບໍ່ແມ່ນພາສີໃຫ້ໄດ້ພາຍໃນປີ 2015 ແລະ ມີການໂຍະຍານໃຫ້ບາງລາຍການສິນຄ້າອ່ອນໄຫວເຖິງປີ 2018.

ມາດຕະການເພື່ອຈັດຕັ້ງປະຕິບັດມີດັ່ງນີ້:

+ ເອົາໃຈໃສ່ປັບປຸງຂັ້ນຕອນການນຳເຂົ້າ-ສົ່ງອອກ ໃຫ້ມີຄວາມສະດວກ, ໂປ່ງໃສ, ມີຄວາມເຊື່ອຖື ແລະ ຈຳກັດເວລາໃນການດຳເນີນການໃຫ້ໜ້ອຍລົງ.

+ ສ້າງຄວາມເປັນເອກະພາບ ແລະ ປັບປຸງມາດຖານກ່ຽວກັບຂັ້ນຕອນການຄ້າ ແລະ ດ່ານພາສີອາກອນ, ການສ້າງສິ່ງອຳນວຍຄວາມສະດວກໃນການຫມູນວຽນຂໍ້ມູນຂ່າວສານ ເພື່ອສ້າງຄວາມສະດວກໃນການຊຳລະສະສາງໃຫ້ແກ່ຜູ້ຊື້ ແລະ ຜູ້ຂາຍ.

## 7.3. ການຮ່ວມມືໃນຂອບຂອງການພັດທະນາອະນຸພາກພື້ນແມ່ນ້ຳຂອງ ( GMS )

ສືບຕໍ່ສົ່ງເສີມ ແລະ ຈັດຕັ້ງປະຕິບັດວຽກງານການຮ່ວມມື ໃນຂອບເຂດຂອງການພັດທະນາແມ່ນ້ຳຂອງຕອນລຸ່ມ (GMS) ໃຫ້ມີປະສິດທິຜົນໂດຍສະເພາະສຸມໃສ່ຈັດຕັ້ງປະຕິບັດແຜນປະຕິບັດງານວຽງຈັນ ເພື່ອການພັດທະນາ GMS ສຳລັບປີ 2009-2012 ເພື່ອໃຫ້ມີການເຕີບໂຕຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ, ສົ່ງເສີມການພັດທະນາສັງຄົມ ແລະ ສະຫນັບສະຫນູນການປົກປັກຮັກສາສິ່ງແວດລ້ອມ. ຈຸດສຸມຂອງແຜນປະຕິບັດງານວຽງຈັນແມ່ນ ການຈັດຕັ້ງປະຕິບັດບັນດາໂຄງການທີ່ສຳຄັນໃນຂະແໜງບູລິມະສິດຕ່າງໆ ໃນຂະແໜງການຂົນສົ່ງ, ພະລັງງານ, ກະສິກຳ, ການລົງທຶນ, ການສ້າງຄວາມສະດວກທາງການຄ້າ, ການພັດ ທະນາຊັບພະຍາກອນມະນຸດ, ສິ່ງແວດລ້ອມ ແລະ ການທ່ອງທ່ຽວ. ບາງວຽກຈຸດສຸມ ມີດັ່ງນີ້:

ສ້າງບັນດາເສັ້ນທາງເຊື່ອມຕໍ່ທີ່ສຳຄັນ GMS ເຊັ່ນ: ຊຸກຍູ້ການສ້າງຂົວຂ້າມນ້ຳຂອງຢູ່ແຂວງບໍ່ແກ້ວ ເພື່ອເຮັດໃຫ້ແລວທາງເຊື່ອມຕໍ່ເຫນືອ-ໃຕ້ ຢູ່ທາງພາກເຫນືອຂອງລາວມີຄວາມສົມບູນ; ສະຫນັບສະຫນູນໃຫ້ການຍົກລະດັບເສັ້ນທາງຫລວງພະບາງ-ທັນໂຮ (ຫວຽດນາມ) ໃຫ້ສຳເລັດຕາມແຜນ, ລະດົມເອົາການຊ່ວຍເຫລືອເພື່ອຂະຫຍາຍທາງລົດໄຟຈາກທ່ານາແລ້ງ ແລະ ຊຸກຍູ້ການສ້າງເສັ້ນທາງເຊື່ອມຕໍ່ຕາເວັນອອກ-ຕາເວັນອອກ ເສັ້ນທີ 2 ຜ່ານແຂວງຄຳມ່ວນ.

- ມາດຕະການຈັດຕັ້ງປະຕິບັດ ແລະ ສະຫນັບສະຫນູນວຽກງານທີ່ກ່ຽວຂ້ອງມີດັ່ງນີ້:

+ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃນການຫັນແລວທາງການຂົນສົ່ງເປັນແລວທາງເສດຖະກິດ.

+ ຊຸກຍູ້ໃຫ້ພາກສ່ວນເອກະຊົນມີສ່ວນຮ່ວມໃນຂະແໜງການຂົນສົ່ງ, ອຳນວຍຄວາມສະດວກໃຫ້ແກ່ການຈັດເຝິກອົບຮົມກ່ຽວຂ້ອງກັບການຂົນສົ່ງ.

+ ແກ້ໄຂບັນດາຜົນກະທົບດ້ານລົບຈາກການພັດທະນາການຂົນສົ່ງ.

+ ສ້າງຄວາມໝັ້ນໃຈທາງດ້ານເສດຖະກິດມະຫາພາກ ແລະ ຄວາມໝັ້ນຄົງທາງດ້ານການເມືອງ, ມີຄວາມໂປ່ງໃສໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ເປັນຕົ້ນແມ່ນ ຂະບວນການດຳເນີນເອກະສານການຄ້າຕ່າງໆ, ຄວາມສາມາດຄາດຄະເນຕໍ່ເສດຖະກິດ-ສັງຄົມ ແລະ ຄວາມໜ້າເຊື່ອຖືທາງດ້ານຂໍ້ມູນຂ່າວສານ.

+ ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນຕ່າງໆ ເພື່ອໃຫ້ສະໜອງການບໍລິການທີ່ສະດວກ ແລະ ວ່ອງໄວຫລາຍກວ່າເກົ່າ.

+ ສົ່ງເສີມການແຂ່ງຂັນລະຫວ່າງຫົວໜ່ວຍທຸລະກິດພາຍໃນ ເພື່ອສ້າງຄວາມກະຕືລືລົ້ນໃນການພັດທະນາຕົນເອງ ແລະ ສາມາດແຂ່ງຂັນກັບສາກົນໄດ້.

+ ສົ່ງເສີມ ແລະ ຊ່ວຍເຫລືອບັນດາຫົວໜ່ວຍທຸລະກິດໃຫ້ສ້າງຄວາມແຕກຕ່າງຂອງຜະລິດຕະພັນ, ໃຫ້ມີລັກສະນະສະເພາະ ເພື່ອສ້າງມູນຄ່າເພີ່ມ.

+ ສືບຕໍ່ເຜີຍແຜ່ຂໍ້ມູນຂ່າວສານທີ່ສຳຄັນ ເຊັ່ນ: ຂັ້ນຕອນການເຊື່ອມໂຍງຂອງລາວ, ບັນດາຜົນປະໂຫຍດ ແລະ ພັນທະຕ່າງໆຂອງລາວ ເພື່ອແນໃສ່ໃຫ້ທຸກພາກສ່ວນມີຄວາມເຂົ້າໃຈກ່ຽວກັບສິດ, ຜົນປະໂຫຍດ ແລະ ສິ່ງທ້າທາຍຈາກການເຊື່ອມໂຍງຕ່າງໆ.

## 7.4. ການກະກຽມເຂົ້າເປັນສະມາຊິກຂອງອົງການການຄ້າໂລກ

ເອົາໃຈໃສ່ເປີດກວ້າງຕະຫຼາດ, ຍາດແຍ່ງເອົາທຶນຮອນ ແລະ ເຕັກໂນໂລຍີເພື່ອເປັນການກະກຽມຄວາມພ້ອມໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ; ສູ້ຊົນປະຕິບັດບັນດາຄາດໝາຍຕ່າງໆ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ແລະ ຍຸດທະສາດແຜນພັດທະນາເສດຖະກິດ-ສັງຄົມ ຮອດປີ 2020 ໃຫ້ປະກົດຜົນເປັນຈິງ. ເພື່ອສືບຕໍ່ກະກຽມຄວາມພ້ອມໃນການເຂົ້າເປັນສະມາຊິກອົງການການຄ້າໂລກ, ໂດຍການສຸມໃສ່ບັນດາໜ້າວຽກມີດັ່ງນີ້:

+ ເພີ່ມທະວີການປະສານງານລະຫວ່າງກະຊວງ-ຂະແໜງການ ແລະ ຮ່ວມປຶກສາຫາລືກັບກົມວິຊາການທີ່ກ່ຽວຂ້ອງ ເພື່ອໃຫ້ມີຄວາມຄືບໜ້າໃນການປັບປຸງບັນດານິຕິກຳ ກຳຄືນະໂຍບາຍຕ່າງໆໃຫ້ຈະແຈ້ງໃນການຕອບຂໍ້ເຈາະຈີ້ມຂອງບັນດາສະມາຊິກອົງການການຄ້າໂລກ, ໃນນັ້ນ; ຕ້ອງມີການຈັດບູລິມະສິດໜ້າວຽກທີ່ສຳຄັນ ແລະ ຮີບດ່ວນ ພ້ອມທັງມີແຜນປະຕິບັດງານຂອງທຸກພາກສ່ວນເພື່ອສາມາດຕິດຕາມ, ປະເມີນຜົນ ແລະ ຂໍການຊີ້ນຳໃຫ້ທັນເວລາ.

+ ສືບຕໍ່ທົບທວນບັນດານິຕິກຳຕ່າງໆ ແລະ ປັບປຸງບັນດາລະບຽບຫລັກການໃຫ້ສອດຄ່ອງກັບກົດລະບຽບຂອງອົງການ ການຄ້າໂລກ ເປັນຕົ້ນແມ່ນ ກົດໝາຍວ່າດ້ວຍມາດຕະຖານ, ສິດທິທາງປັນຍາ, ຄວາມປອດໄພຂອງອາຫານ ແລະ ອື່ນໆ.

+ ສົ່ງເສີມການພັດທະນາຍຸດທະສາດກ່ຽວກັບການຕະຫລາດຂອງຫົວໜ່ວຍທຸລະກິດສົ່ງອອກ ເຊັ່ນ: ຂະແໜງເຄື່ອງນຸ່ງຫົ່ມ, ກາເຟ ແລະ ຜະລິດຕະພັນກະສິກຳ.

+ ສະໜັບສະໜູນການພັດທະນາຂະແໜງການປັ່ນອ້ອມ (Backward ແລະ Forward linkage) ຢູ່ ສປປ ລາວ ເພື່ອຊ່ວຍຫລຸດຜ່ອນການເອື່ອຍອີງການນຳເຂົ້າວັດຖຸດິບຈາກພາຍນອກ ເພາະວ່າ ນອກຈາກ

ຈະເປັນການສ້າງມູນຄ່າເພີ່ມ ແລະ ຮັກສາມູນຄ່າ (value retention) ໃຫ້ຜະລິດຕະພັນຫລາຍຂຶ້ນແລ້ວ ແລະ ຍັງຊ່ວຍແກ້ໄຂບັນຫາກ່ຽວກັບເຄົ້າກຳເນີດຂອງສິນຄ້າ (rule of origin) ເຊິ່ງຈະເຮັດໃຫ້ ສປປ ລາວ ນຳໃຊ້ບັນດາບູລິມະສິດ ຫລື ສິດທິພິເສດຕ່າງໆໄດ້ຢ່າງເຕັມທີ່.

+ ເພີ່ມທະວີງການເຜີຍແຜ່ກ່ຽວກັບການເຊື່ອມໂຍງເສດຖະກິດກັບສາກົນກໍຄືການເຂົ້າເປັນສະມາຊິກອົງການການຄ້າໂລກໃຫ້ແກ່ພະນັກງານ, ນັກຄົ້ນຄວ້າ, ນັກທຸລະກິດ ແລະ ທຸກຄົນໃນສັງຄົມໃຫ້ຮັບຮູ້ ກ່ຽວກັບຂະບວນການກະກຽມຄວາມພ້ອມໂດຍຜ່ານການຝຶກອົບຮົມ, ສຳມະນາ ແລະ ຜ່ານສື່ໂຄສະນາໃນຫຼາຍຮູບແບບຢ່າງຕໍ່ເນື່ອງ.

## 7.5. ການພັດທະນາສາມຫລ່ຽມລາວ-ຫວຽດນາມ-ກຳປູເຈຍ ແລະ ຂົງເຂດອື່ນໆໃຫ້ສຸມໃສ່ປະຕິບັດຍຸດທະສາດໂດຍຮອດປີ 2020 ແລະ ພັນທະອື່ນໆທີ່ໄດ້ກຳນົດໄວ້ກັບປະເທດພາຄີດັ່ງກ່າວ.

# 8. ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ

### [1]. ທິດທາງການຫັນເປັນອຸດສາຫະກຳ ແລະ ທັນສະໄໝຢູ່ປະທດເຮົາ:

ສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເຊິ່ງແມ່ນໜ້າທີ່ຮີບດ່ວນສະເພາະໜ້າ ແລະ ຍາວນານບົນເສັ້ນທາງແຫ່ງການສ້າງຄວາມມັ່ງຄັ່ງເຂັ້ມແຂງໃຫ້ແກ່ປະເທດຊາດ ແລະ ຄວາມຮັ່ງມີຜາສຸກແກ່ປະຊາຊົນບັນດາເຜົ່າຢ່າງຕັ້ງໜ້າ; ຊຸກຍູ້ການຫັນປ່ຽນແບບແຜນວິທີການທຳມາຫາກິນທີ່ຫລ້າຫລັງ, ນຳໃຊ້ກຳລັງແຮງບົ່ມຊ້ອນດ້ານຊັບພະຍາກອນທຳມະຊາດ ແລະ ສັງຄົມຂອງປະເທດໃຫ້ເກີດປະໂຫຍດສູງສຸດ; ກຳນົດຂະແໜງການ ແລະ ບໍລິເວນເຂດແຄວ້ນທີ່ມີເງື່ອນໄຂ, ມີທ່າແຮງຢ່າງຕັ້ງໜ້າ ແລະ ມີຈຸດສຸມເພື່ອຫຼຸດຜ່ອນຄວາມແຕກໂຕນໃນລະດັບການພັດທະນາກັບປະເທດອື່ນໆໄດ້ໄວຂຶ້ນ ດ້ວຍການສະສົມທັງທາງດ້ານເງິນຕາ, ປະສົບການ ແລະ ຄວາມຮູ້ຄວາມສາມາດໃຫ້ຫຼາຍຂຶ້ນ, ເສີມສ້າງຄວາມສາມາດແຂ່ງຂັນຂອງເສດຖະກິດໃຫ້ສູງຂຶ້ນ. ສຸມໃສ່ພັດທະນາຂະແໜງການຫລັກທີ່ເປັນທ່າແຮງ (ຂະແໜງກະສິກຳ-ປຸງແຕ່ງ, ອຸດສາຫະກຳພະລັງງານໄຟຟ້າ, ອຸດສາຫະກຳທ່ອງທ່ຽວ, ອຸດສາຫະກຳບໍ່ແຮ່ ແລະ ອຸດສາຫະກຳວັດສະດຸກໍ່ສ້າງ) ຕັ້ງແຕ່ຫົວທີ ຄຽງຄູ່ກັບການພັດທະນາບັນດາຂະແໜງການທີ່ເປັນພື້ນຖານໃນການຊຸກຍູ້ ແລະ ເອື້ອອຳນວຍໃຫ້ແກ່ຂະບວນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເຊັ່ນ: ການພັດທະນາຊັບພະຍາກອນມະນຸດ, ການພັດທະນາ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ, ພັດທະນາພື້ນຖານໂຄງລ່າງ ແລະ ການບໍລິການຜ່ານ.

### [2]. ບາດກ້າວໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ:

ແນວຄວາມຄິດໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຢູ່ ສປປ ລາວ ໄດ້ລິເລີ່ມຕັ້ງແຕ່ ສປປ ລາວ ໄດ້ຮັບການສະຖາປະນາ ໃນປີ 1975 ເປັນຕົ້ນມາ ໂດຍໄດ້ກຳນົດຢູ່ໃນເອກະສານມະຕິຕ່າງໆ ຂອງພັກປະຊາຊົນປະຕິວັດລາວ ນັບແຕ່ກອງປະຊຸມໃຫ່ຍຄັ້ງທີ III ເປັນຕົ້ນມາ; ພາຍຫລັງກອງປະຊຸມໃຫ່ຍຄັ້ງທີ VII, ໄດ້ມີການຄົ້ນຄວ້າ ແລະ ຮັບຮອງຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝເຖິງປີ 2020, ຈາກນັ້ນກອງປະຊຸມໃຫ່ຍຄັ້ງທີ VIII ໄດ້ກຳນົດແຈ້ງວ່າ "ພວກເຮົາຕ້ອງຕັ້ງໜ້າປະຕິບັດແຜນຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ ເພື່ອບັນລຸເປົ້າໝາຍອັນຍາວໄກຂອງພັກ". ສຳລັບ

ຂັ້ນຕອນໃນການພັດທະນາ ໄລຍະ 2001-2020 ໄດ້ກຳນົດຢູ່ໃນຍຸດທະສາດທັນເປັນອຸດສາຫະກຳ ແລະ ທັນສະໄໝ ດັ່ງນີ້:

- ຂັ້ນຕອນທີ 1: ແຕ່ປີ 2001-2005 ສຳເລັດການກະກຽມສ້າງຄວາມເຂັ້ມແຂງຂອງຂະແໜງການອຸດສາຫະກຳ ແລະ ຂະແໜງການອື່ນໆ ທີ່ປິ່ນອ້ອມ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດຢູ່ລອດໄດ້ດ້ວຍການແຂ່ງຂັນ ພາຍຫລັງປີ 2008 ດ້ວຍການປະຕິບັດລະບຽບການ ຂອງການຄ້າເສລີ AFTA.

- ຂັ້ນຕອນທີ 2: ແຕ່ປີ 2006-2010 ໄດ້ສືບຕໍ່ປັບປຸງ ແລະ ກໍ່ສ້າງເງື່ອນໄຂທີ່ເປັນປະຖົມປັດໃຈຂອງຂະແໜງການຕ່າງໆໃຫ້ໄດ້ໂດຍພື້ນຖານຄື: ມີລະບົບການປົກຄອງ ແລະ ຄຸ້ມຄອງທີ່ເຂັ້ມແຂງ ໜ້າເຊື່ອຖື, ຊັບພະຍາກອນມະນຸດພຽງພໍໃນລະດັບໜຶ່ງ, ມີພື້ນຖານໂຄງລ່າງດ້ານເສດຖະກິດ-ສັງຄົມສະດວກດີໂດຍພື້ນຖານ, ຮັກສາເສດຖະກິດມະຫາພາກທີ່ມີຄວາມໝັ້ນທ່ຽງ, ລຶບລ້າງຄວາມທຸກຍາກ ແລະ ການຖາງປ່າເຮັດໄຮ່ແບບເລື່ອນລອຍ,ພັດທະນາອຸດສາຫະກຳບາງຂະແໜງທີ່ເປັນປາຍແຫລມ ແລະ ທີ່ເປັນພື້ນຖານ ເປັນຕົ້ນ ຂະແໜງໄຟຟ້າ, ການສຶກສາ, ການນຳໃຊ້ວິທະຍາສາດເຕັກໂນໂລຊີ ທັງດ້ານປະລິມານ ແລະ ຄຸນນະພາບ.

- ຂັ້ນຕອນທີ 3: ແຕ່ປີ 2011-2020 ສ□າເລັດໂດຍພື້ນຖານການສ້າງປະຖົມປັດໄຈຕ່າງໆ ໃຫ້ແກ່ການ ທັນເປັນອຸດສາຫະກຳ ແລະ ທັນສະໄໝໃນຂົງເຂດຕົ້ນຕໍ, ພື້ນຖານອຸດສາຫະກຳທີ່ເປັນທ່າແຮງ ແລະ ປາຍແຫລມຈຳນວນໜຶ່ງ.

**[3]. <u>ເນື້ອໃນ ແລະ ຄາດໝາຍສຳລັບແຜນ 5 ປີ:</u>**

1. ທັນປ່ຽນໂຄງປະກອບເສດຖະກິດ:

ໂຄງປະກອບເສດຖະກິດໄດ້ມີການທັນປ່ຽນຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝສ່ອງແສງໃຫ້ເຫັນອັດຕາສ່ວນອຸດສາຫະກຳໃນໂຄງປະກອບນັບມື້ນັບກວມອັດຕາຫລາຍຂຶ້ນເຊັ່ນ: ໃນປີ 1985 ຂະແໜງກະສິກຳ ກວມເອົາ 70,7%, ອຸດສາຫະກຳ ກວມພຽງ 10,9% ແລະ ບໍລການ ກວມ 18,4% ຂອງລວມຍອດຜະລິດຕະພັນພາຍໃນ; ມາຮອດສົກປີ 2009-2010 ຂະແໜງກະສິກຳ ກວມເອົາພຽງສ່ວນນ້ອຍຂອງເສດຖະກິດ ເປັນ 29%, ອຸດສາຫະກຳເພີ່ມຂຶ້ນເປັນ 25,5% ແລະ ການບໍລິການ ເພີ່ມຂຶ້ນເປັນ 39,2%. ອີງໃສ່ທ່າອ່ຽງດັ່ງກ່າວ ໃນປີ 2015 ສູ້ຊົນໃຫ້ໂຄງປະກອບເສດຖະກິດມີທ່າອ່ຽງທັນປ່ຽນຕາມທິດການທັນເປັນອຸດສາຫະກຳ ແລະ ທັນສະໄໝຢ່າງຕັ້ງໜ້າ, ໂດຍໃຫ້ກະສິກຳ-ປ່າໄມ້ ກວມປະມານ 23%, ອຸດສາຫະກ□າ ກວມປະມານ 39% ແລະ ການບໍລິການກວມປະມານ 38%.

2. ທັນເປັນທັນສະໄໝ:

ສົ່ງເສີມການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການຜະລິດ ເພື່ອເພີ່ມປະສິດທິພາບຂອງຜົນຜະລິດ ແລະ ແຮງງານ; ເອົາໃຈໃສ່ຄົ້ນຄວ້າ ແລະ ນຳໃຊ້ເຕັກໂນໂລຊີຢ່າງມີປະສິດທິຜົນ, ຂະຫຍາຍນິເວດເຕັກນິກ ຫລື ນິເວດເຕັກນິກກະສິກຳ; ຄົ້ນຄວ້າເຕັກໂນໂລຊີສຳລັບການປັບປຸງການຜະລິດແບບພື້ນບ້ານ ເພື່ອສາມາດຄ້ຳປະກັນສະບຽງອາຫານ ແລະ ຫາວິທີການຫລຸດຜ່ອນຄວາມສ່ຽງຈາກໄພທຳມະຊາດ.

- ນຳໃຊ້ເຕັກນິກເຂົ້າໃນອຸດສາຫະກຳປຸງແຕ່ງ; ຜະລິດວັດສະດຸກໍ່ສ້າງ; ພະລັງງານບໍ່ແຮ່ ໂດຍຊອກໃຫ້ໄດ້ການຜະລິດທີ່ສາມາດຫລຸດຕົ້ນທຶນ, ແລະ ນຳໃຊ້ພະລັງງານໜ້ອຍກວ່າ.

- ນຳໃຊ້ລະບົບການບໍລິການຜ່ານ ທີ່ຄົບຊຸດ (Logistic).

- ໃນຂະແໜງວັດທະນະທຳ-ສັງຄົມ ເພີ່ມສັດສ່ວນການນຳໃຊ້ເຄື່ອງມືອຸປະກອນທີ່ເປັນດີຈີຕອນຕໍ່ປະຊາກອນໃຫ້ສູງຂຶ້ນ, ເພີ່ມອັດຕາການເຂົ້າເຖິງອິນເຕີເນັດຂອງປະຊາກອນ.

- ໃນຂະແໜງການເງິນ-ທະນາຄານນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການບໍລິການຈັດການແບບຄົບວົງຈອນ, ການບໍລິການດ້ານການເງິນຜ່ານທາງໄປສະນີ, ດ້ວຍຮູບແບບເອເລັກໂຕຣນິກ, ດ້ວຍບັດເຄດິດ.

3. ສ້າງຄວາມສາມາດແຂ່ງຂັນຂອງເສດຖະກິດ ແລະ ສ້າງການສະສົມການພັດທະນາໃນຂະແໜງການຕົ້ນຕໍຈຳນວນໜຶ່ງ:

+ ທັນເປັນອຸດສາຫະກຳ ແລະ ທັນສະໄໝໃນຂະແໜງກະສິກຳ ໂດຍເນັ້ນໜັກການທັນເປັນຊົນລະກະເສດ, ທັນເປັນກົນຈັກ, ປົດປ່ອຍແຮງງານຂອງຊາວນາຈາກການປັກດຳນາມາໃຊ້ເຄື່ອງຈັກໄດ້ແທນ ແລະ ຈັດຕັ້ງກຸ່ມການຜະລິດໃຫ້ເຂັ້ມແຂງ ໂດຍສະເພາະແມ່ນ ສຸມການລົງທຶນໃສ່ບັນດາໂຄງການລົງທຶນທີ່ມີປະສິດທິຜົນ, ສ້າງສູນຄົ້ນຄວ້າທົດລອງການຜະລິດແນວພັນໃໝ່, ຝຸ່ນ, ຢາປາບສັດຕູພືດ...

+ ໃນຂະແໜງອຸດສາຫະກຳ: ເນັ້ນໜັກການຜະລິດອຸປະກອນກໍ່ສ້າງ, ຫລອມເຫລັກກ້າ, ຂຸດຄົ້ນປຸງແຕ່ງແຮ່ທາດ, ອັນຍາມະນີ, ເຂື່ອນໄຟຟ້ານ້ຳຕົກ, ໄຟຟ້າດ້ວຍຖ່ານຫີນ; ອຸດສາຫະກຳປຸງແຕ່ງໄມ້ຄຸນນະພາບສູງ, ສ້າງເຂດອຸດສາຫະກຳ...

+ ໃນຂະແໜງ ຍທຂ: ເນັ້ນໜັກ ການກໍ່ສ້າງພື້ນຖານໂຄງລ່າງ: ທາງລົດໄຟ, ທາງລົດດ່ວນ, ປັບປຸງ, ຂະຫຍາຍສະໜາມບິນ, ສ້າງເຂດບໍລິການຄົບຊຸດ (Logistics).

+ ໃນຂະແໜງໂທລະຄົມ-ຂ່າວສານ: ເນັ້ນໜັກການຂະຫຍາຍໂຄງລ່າງດ້ານໄອຊີທີ ເຊັ່ນ: ສູນຂໍ້ມູນຂ່າວສານ, ອິນເຕີເນັດ, e-application, ການຈັດສັນຄື້ນຄວາມຖີ່ວິທະຍຸ, ໂທລະພາບ, ວິທະຍຸ.

+ ໃນຂະແໜງໂທລະຄົມ-ຂ່າວສານ: ເນັ້ນໜັກການຂະຫຍາຍຄວາມຖີ່ຂອງເຄືອຂ່າຍ ICT, ໂທລະພາບ, ວິທະຍຸ, ອິນເຕີເນັດ, ໂທລະພິມທາງໄກ...

+ ໃນຂະແໜງການປົກຄອງບໍລິຫານ, ວັດທະນະທຳສັງຄົມ: ເນັ້ນໜັກການຂະຫຍາຍອັດຕາສ່ວນນຳໃຊ້ຄອມພິວເຕີ, ການຊຳລະສະສາງດ້ວຍບັດເຄຣດິດ, E-ການສຶກສາທາງໄກ, E-ການເງິນ-ທະນາຄານ, E-ການຄ້າ.

+ ໃນຂະແໜງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເນັ້ນໜັກການຂະຫຍາຍອຸປະກອນ, ກວດສ່ອງວົງຈອນ, ລາດາ, ປະກອບຍຸດໂທປະກອນປ້ອງກັນຕົວທັນສະໄໝ.

**[4]. ມາດຕະການ:**

1). ປະຕິບັດນະໂຍບາຍຊຸກຍູ້ສົ່ງເສີມການຜະລິດພາຍໃນ ໂດຍສະເພາະແມ່ນການຜະລິດ-ທຸລະກິດຂະໜາດນ້ອຍ, ຂະໜາດກາງ ໃຫ້ສາມາດນຳໃຊ້ເຕັກນິກ ແລະ ວິທະຍາການໃໝ່ ເພື່ອຍົກສູງສະມັດຕະພາບການຜະລິດ ແລະ ປະສິດທິຜົນທາງດ້ານເສດຖະກິດໃຫ້ສູງຂຶ້ນ; ສົມທົບການກໍ່ສ້າງໃຫ້ມີກົດຈະການໃຫຍ່ ເພື່ອມີທຶນຮອນຕິດພັນກັບການສົ່ງເສີມການຜະລິດຂອງປະຊາຊົນ ແລະ ການແກ້ໄຂຄວາມທຸກຍາກ; ເສີມສ້າງຄວາມສາມາດແຂ່ງຂັນຂອງເສດຖະກິດຂອງປະເທດໃຫ້ສູງຂຶ້ນເປັນກ້າວໆ ໂດຍຕິດພັນກັບການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃຫ້ສອດຄ່ອງກົມກຽວ;

2). ຈັດສັນ ແລະ ນຳໃຊ້ແຫຼ່ງຊັບພະຍາກອນຢ່າງມີປະສິດທິຜົນ ເພື່ອຮັບປະກັນທິດແຫ່ງການພັດທະນາແບບຍືນຍົງ, ຊຸກຍູ້ສົ່ງເສີມການນຳໃຊ້ເຕັກນິກ-ວິທະຍາສາດໃໝ່ເຂົ້າໃນການຜະລິດກະສິກຳ; ປະຢັດພະລັງງານ, ປະຢັດວັດຖຸດິບ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.

3). ດຳເນີນການຈັດສັນບັນດາໂຮງງານອຸດສາຫະກຳອອກສູ່ເຂດພື້ນທີ່ໃກ້ກັບແຫລ່ງວັດຖຸດິບ, ເຂດທີ່ມີຜົນກະທົບໜ້ອຍຕໍ່ສັງຄົມ ແລະ ສິ່ງແວດລ້ອມ, ເຂດທີ່ມີແຮງງານຫລາຍ ແນໃສ່ເພື່ອເພີ່ມການຈ້າງງານ ແລະ ຫຼຸດຜ່ອນການເຄື່ອນຍ້າຍແຮງງານເຂົ້າສູ່ຕົວເມືອງ.

4). ເອົາໃຈໃສ່ພັດທະນານາຕົວເມືອງໃຫຍ່ໃຫ້ເປັນສູນກາງຊຸກຍູ້ ຫລື ແກ່ດຶງການພັດທະນາໃນເຂດພື້ນທີ່ອ້ອມຮອບ ຫລື ເຂດໃກ້ຄຽງ ເຮັດໃຫ້ຕົວເມືອງເປັນຕົວກະຕຸ້ນການພັດທະນາຊົນນະບົດ ເພື່ອຫລຸດຜ່ອນຄວາມແຕກໂຕນດ້ານການພັດທະນາລົງເປັນກ້າວໆ; ປະຕິບັດນະໂຍບາຍສ້າງສອນອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ແລະ ເຂດເສດຖະກິດສະເພາະ ຢູ່ບໍລິເວນທີ່ເໝາະສົມ; ເອົາໃຈໃສ່ຊຸກຍູ້ສົ່ງເສີມກິດຈະການສົ່ງອອກຄຽງຄູ່ກັບກິດຈະການການຜະລິດເພື່ອຊົມໃຊ້ພາຍໃນ.

5). ສືບຕໍ່ປະຕິບັດນະໂຍບາຍເປີດກວ້າງການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເພື່ອດຶງດູດການລົງທຶນ ແລະ ການຊ່ວຍເຫຼືອ-ກູ້ຢືມ ເຂົ້າໃນການພັດທະນາຂະແໜງການ ແລະ ບໍລິເວນເຂດແຄ້ວນທີ່ມີທ່າແຮງ ໂດຍສະເພາະແມ່ນ ໂຄງການຂະໜາດໃຫຍ່ເພື່ອສ້າງຖານການເຕີບໂຕໃຫ້ເຂັ້ມແຂງ ແລະ ຮັບໃຊ້ການເຊື່ອມໂຍງລະຫວ່າງປະເທດ ເປັນຕົ້ນແມ່ນ ພື້ນຖານໂຄງລ່າງທີ່ສະດວກ ແລະ ທັນສະໄໝ ເຊັ່ນ: ທາງລົດໄຟ, ທາງດ່ວນ, ສະໜາມບິນ, ລະບົບບໍລິການຂົນສົ່ງ ແລະ ຄ່ຽນຖ່າຍສິນຄ້າ ແລະ ອື່ນໆ.

# III. ມາດຕະການ ແລະ ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII

## 1. ການລະດົມທຶນ ແລະ ຍົກສູງປະສິດທິຜົນຂອງການນຳໃຊ້ທຶນ

– ລະດົມ, ຂຸດຄົ້ນ ແລະ ນຳໃຊ້ແຫຼ່ງທຶນຈາກທຸກພາກສ່ວນເສດຖະກິດເຂົ້າໃສ່ການພັດທະນາ ເຊັ່ນ: ງົບປະມານຂອງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ, ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ, ສິນເຊື່ອທະນາຄານ ແລະ ທຶນຂອງປະຊາຊົນ. ຍົກສູງປະສິດທິຜົນ ແລະ ຄຸນນະພາບຂອງທຶນ, ຫລຸດຜ່ອນການຮົ່ວໄຫຼ ແລະ ການຟຸມເຟືອຍໃນການລົງທຶນຂອງລັດ.

– ເພີ່ມອັດຕາສ່ວນການລົງທຶນຂອງລັດຈາກງົບປະມານ ໂດຍການສູ້ຊົນເພີ່ມລາຍຮັບພາຍໃນໃຫ້ສູງຂຶ້ນ ແລະ ນຳໃຊ້ໃຫ້ມີປະສິດທິຜົນສູງສຸດ; ລົງທຶນຢ່າງມີຈຸດສຸມຕາມແຜນງານ ແລະ ໂຄງການບູລິມະສິດຂອງລັດຖະບານ; ປະຕິບັດນິຕິກຳ ແລະ ຂໍ້ກຳນົດຕ່າງໆ ທີ່ກ່ຽວຂ້ອງກັບການສ້າງ ແລະ ຄຸ້ມຄອງໂຄງການລົງທຶນຂອງລັດຢ່າງເຄັ່ງຄັດ ໂດຍສະເພາະໃຫ້ເອົາໃຈໃສ່ຂັ້ນຕອນການປະເມີນໂຄງການກ່ອນເອົາເຂົ້າແຜນ (ບົດວິພາກເສດຖະກິດທີ່ລະອຽດຄົບຊຸດ), ເຂັ້ມງວດຂັ້ນຕອນການຈັດຊື້-ຈັດຈ້າງ, ການຕິດຕາມກວດກາ-ປະເມີນຜົນ ແລະ ປະຕິບັດຫົວໜ່ວຍລາຄາກໍ່ສ້າງ; ຫ້າມປະຕິບັດໂຄງການທີ່ບໍ່ໄດ້ຮັບຮອງຈາກສະພາແຫ່ງຊາດ; ຕັ້ງໜ້າແກ້ໄຂໜີ້ສິນໃຫ້ຫຼຸດລົງເທື່ອລະກ້າວ; ປະຕິບັດວິໄນແຜນການ-ການເງິນ ຢ່າງເຂັ້ມງວດ.

– ສູ້ຊົນອອກແຮງລະດົມການຊ່ວຍເຫຼືອລ້າ ແລະ ກູ້ຢືມ ຈາກບັນດາປະເທດຮ່ວມມືສອງຝ່າຍ, ສະຖາບັນການເງິນສາກົນ ແລະ ຫຼາຍຝ່າຍທັງບັນດາຄູ່ຮ່ວມພັດທະນາເກົ່າ ແລະ ໃໝ່ ດ້ວຍຫຼາຍຮູບການທີ່ກວ້າງຂວາງ ທັງພາຍໃນ ແລະ ຕ່າງປະເທດ; ຕ້ອງມີການກຳນົດແຜນງານ ແລະ ສ້າງໂຄງການລະອຽດເພື່ອຮອງຮັບການຊ່ວຍເຫຼືອ ແລະ ຮູ້ໄດ້ຄວາມຕ້ອງການທີ່ແທ້ຈິງ.

– ເປັນເຈົ້າການໃນການຈັດຕັ້ງປະຕິບັດໂຄງການໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ ໂດຍ ຕ້ອງບັນລຸຕົວຊີ້ວັດພື້ນຖານຜົນການຈັດຕັ້ງປະຕິບັດໂຄງການ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຄູ່ຮ່ວມພັດທະນາ.

– ຕ້ອງສູ້ຊົນຍາດແຍ່ງລະດົມທຶນຈາກບັນດາທະນາຄານພັດທະນາອາຊີ ບໍ່ໃຫ້ຫຼຸດ 75 ລ້ານໂດລາສະ ຫະລັດຕໍ່ປີ, ໃນນັ້ນ ອາດຈະຢູ່ໃນຮູບການກູ້ຢືມ ເຊັ່ນ: ກູ້ຢືມດອກເບ້ຍຜ່ອນຜັນ ແລະ ກູ້ຢືມແບບທຸລະກິດ ເພື່ອສະໜັບສະໜູນໃຫ້ແກ່ການລົງທຶນຂອງພາກເອກະຊົນ, ກູ້ຢືມຈາກກອງທຶນພັດທະນາການຮ່ວມມືດ້ານ ເສດຖະກິດ ແລະ ສືບຕໍ່ຍາດແຍ່ງການຊ່ວຍເຫຼືອຈາກທະນາຄານໂລກ ໃຫ້ໄດ້ 80 ລ້ານໂດລາສະຫະລັດຕໍ່ປີ.

– ສືບຕໍ່ຍາດແຍ່ງການຊ່ວຍເຫຼືອຈາກຜູ້ໃຫ້ທຶນລາຍໃຫຍ່ ເປັນຕົ້ນ ຍີ່ປຸ່ນ ແລະ ບັນດາປະເທດຜູ້ໃຫ້ທຶນ ໃໝ່ ເຊັ່ນ: ປະເທດຄູເວດ ແລະ ອິນເດຍ; ຄຽງຄູ່ກັນນັ້ນ, ຍາດແຍ່ງເອົາການຊ່ວຍເຫຼືອກັບບັນດາປະເທດ ເພື່ອນມິດຍຸດທະສາດຕ່າງໆ.

– ອອກແຮງສຸດຂີດເພື່ອດຶງດູດການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ໂດຍການ ປະຕິບັດນະໂຍບາຍ, ກົນໄກສົ່ງເສີມຢ່າງຕັ້ງໜ້າ, ໂດຍສະເພາະ ໃຫ້ຮີບຮ້ອນສ້າງຕັ້ງໜ່ວຍງານບໍລິການຜ່ານ ປະຕູດຽວໃຫ້ມີຄວາມສະດວກ, ວ່ອງໄວ ແລະ ໂປ່ງໃສ, ມີການກຳນົດໜ້າວຽກ, ຄວາມຮັບຜິດຊອບໃຫ້ຈະ ແຈ້ງຊັດເຈນສະເພາະໜ່ວຍງານ ແລະ ຂອງຂະແໜງການທີ່ກ່ຽວຂ້ອງ.

– ສ້າງເປັນບັນຊີໂຄງການຮຽກການລົງທຶນໃໝ່ ເພື່ອໄປດຶງດູດເອົາການລົງທຶນຂອງພາກເອກະຊົນໃນ ແຕ່ລະໄລຍະ ໂດຍສະເພາະແມ່ນ ບັນດາໂຄງການໃຫ່ຍລະດັບຊາດ ເຊັ່ນ: ໂຄງການຊົນລະກະເສດ, ໂຄງການກໍ່ສ້າງທາງລົດໄຟ, ທາງດ່ວນ, ສະໜາມບິນ, ໂຮງໝໍທັນສະໄໝ, ໂຮງຮຽນປຸງແຕ່ງທາດ, ຂະແໜງ ບໍລິການທ່ອງທ່ຽວ ແລະ ໂຄງການອື່ນໆ ໃຫ້ທັນກັບການລິເລີ່ມຂອງແຜນການ 5 ປີ ຄັ້ງທີ VII.

– ເອົາໃຈໃສ່ສົ່ງເສີມຊ່ວຍເຫຼືອບັນດານັກລົງທຶນທີ່ໄດ້ຮັບອະນຸຍາດໄປແລ້ວ, ສຳລັບບໍລິສັດໃດທີ່ບໍ່ມີ ຄວາມສາມາດຈັດຕັ້ງປະຕິບັດໂຄງການໄດ້ຕາມກຳນົດເວລາຕ້ອງດຳເນີນການຖອນໃບອະນຸຍາດ ຫຼື ຍົກເລີກ ສັນຍາແລ້ວນຳເອົາໂຄງການນັ້ນເຂົ້າໃນບັນຊີ ເພື່ອໄປຂົນຂວາຍດຶງດູດເອົາຜູ້ລົງທຶນອື່ນທີ່ມີທ່າແຮງມາລົງທຶນ ແທນ.

– ການສະໜອງຂໍ້ມູນຂ່າວສານກ່ຽວກັບການລົງທຶນຄວນມີຫຼາຍຮູບແບບ ແລະ ຂໍ້ມູນຄວນລະອຽດຄົບ ຖ້ວນເພື່ອໃຫ້ຜູ້ທີ່ລົງທຶນສາມາດວິເຄາະ-ວິໄຈ ແລະ ຕັດສິນໃຈມາລົງທຶນໄດ້ ໂດຍສະເພາະແມ່ນ ການສະໜ ອງຂໍ້ມູນຜ່ານເວບຊາຍ ແລະ ຜ່ານຮູບແບບອື່ນໆ.

– ຈັດກອງປະຊຸມເຜີຍແຜ່ ແລະ ແລກປ່ຽນບົດຮຽນກ່ຽວກັບການລົງທຶນທົ່ວປະເທດໃຫ້ເປັນປົກກະຕິ, ມີ ການປັບປຸງຄະນະຄຸ້ມຄອງການລົງທຶນຂັ້ນສູນກາງ, ຂັ້ນທ້ອງຖິ່ນ ແລະ ໜ່ວຍງານລົງທຶນຂອງກະຊວງ ກ່ຽວຂ້ອງ ໃຫ້ສອດຄ່ອງໃນແຕ່ລະໄລຍະ ມີຄວາມເປັນເອກະພາບກ່ຽວກັບກົນໄກຄຸ້ມຄອງ, ນະໂຍບາຍ ແລະ ມາດຕະການອື່ນໆ ທີ່ກ່ຽວກັບການດຶງດູດ ແລະ ອະນຸມັດການລົງທຶນ.

– ຊຸກຍູ້ສົ່ງເສີມການລົງທຶນເຂົ້າໃສ່ບັນດາເຂດເສດຖະກິດສະເພາະ ເຊັ່ນ: ເຂດເສດຖະກິດບໍ່ເຕນ, ເຂດ ເສດຖະກິດເມືອງຕົ້ນເຜິ້ງ, ເຂດເສດຖະກິດສະຫວັນນະເຂດເຊໂນ ແລະ ເຂດອື່ນໆ ເພື່ອເຮັດໃຫ້ການລົງທຶນມີ ຈຸດສຸມ ແລະ ສ້າງຄວາມສະດວກໃນການຕິດຕາມກວດກາ.

## 2. ຍຶດໝັ້ນແນວທາງປ່ຽນແປງໃໝ່ທາງດ້ານເສດຖະກິດຮັບປະກັນທິດສັງຄົມ ນິຍົມ

– ກ່ອນອື່ນໝົດຕ້ອງສົ່ງເສີມ ແລະ ບູລະນະກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ຊຸດ ຄົ້ນ ແລະ ນຳໃຊ້ທ່າແຮງຂອງທຸກພາກສ່ວນເສດຖະກິດ ແລະ ຖືວ່າທຸກພາກສ່ວນເສດຖະກິດລ້ວນແຕ່ເປັນ ກຳລັງແຮງຂອງຊາດ ແລະ ມີສິດເທົ່າທຽມກັນໃນການດຳເນີນທຸລະກິດ, ຈັດຕັ້ງການຜະລິດ ແລະ ການ ບໍລິການ ພ້ອມທັງດຳເນີນການຄຸ້ມຄອງດັດສົມຢ່າງມີປະສິດທິພາບຕາມລະບຽບກົດໝາຍ; ປະຕິບັດນະໂຍ ບາຍເສດຖະກິດໂດຍໃຫ້ສອດຄ່ອງກັບກົນໄກຕະຫຼາດ ແລະ ຂໍ້ຜູກພັນກັບສາກົນ, ສ້າງສິ່ງແວດລ້ອມ ແລະ ປັບປຸງສະພາບຂອງການດຳເນີນທຸລະກິດ ທີ່ມີການແຂ່ງຂັນແບບຍຸຕິທຳ

– ຄົ້ນຄວ້າສ້າງຕັ້ງລັດວິສາຫະກິດຂຶ້ນໃນບາງຂະແໜງການ ທີ່ລັດຕ້ອງກຳມະສິດຄຸ້ມຄອງຈັດສັນດ້ານ ຊັບພະຍາກອນ ຫຼື ຂະແໜງການທີ່ຈຳເປັນສຳລັບສ້າງການສະສົມທຶນ ແລະ ການປະຕິບັດໜ້າທີ່ສາທາລະນະ ປະໂຫຍດ.

– ຊຸກຍູ້ສົ່ງເສີມການພັດທະນາວິສາຫະກິດ ເຮັດໃຫ້ຖານການຜະລິດໂດຍກົງຂອງສັງຄົມເພີ່ມຂຶ້ນ ໂດຍ ການເອົາໃຈໃສ່ເປັນພິເສດໃນການສົ່ງເສີມພັດທະນາວິສາຫະກິດ-ທຸລະກິດ ເປັນຕົ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ, ວິສາຫະກິດຊົນນະບົດ ແລະ ອື່ນໆ ເພື່ອສ້າງໃຫ້ມີຜະລິດຕະພັນທີ່ຫລາກຫລາຍ ແລະ ມີຄຸນ ນະພາບສູງ, ມີຕົ້ນທຶນທີ່ເໝາະສົມ ແລະ ສາມາດສະໜອງຕະຫລາດພາຍໃນ ແລະ ທັງສາມາດແຂ່ງຂັນໄດ້ ກັບອະນຸພາກພື້ນ ແລະ ກ້າວຂຶ້ນສູ່ມາດຕະຖານສາກົນເທື່ອລະກ້າວ.

– ເພີ່ມທະວີການປະຕິບັດລະບອບນະໂຍບາຍ ທີ່ເປັນລະບົບຄົບຊຸດ ຕໍ່ພາກສ່ວນເສດຖະກິດດັ່ງກ່າວ ເປັນຕົ້ນແມ່ນການສ້າງເງື່ອນໄຂເຂົ້າເຖິງແຫຼ່ງທຶນ, ແຫຼ່ງຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີໃໝ່ ລວມທັງການ ຊ່ວຍເຫຼືອທາງດ້ານວິຊາການ ແລະ ການຕະຫຼາດ.

– ສ້າງສາຍພົວພັນສະໜິດແໜ້ນລະຫວ່າງການຜະລິດ, ການປຸງແຕ່ງ ແລະ ການຈຳໜ່າຍ ທັງພາຍ ໃນ ແລະ ຕ່າງປະເທດ ພ້ອມທັງສ້າງໃຫ້ໄດ້ສູນກາງອຸດສາຫະກຳໃນແຕ່ລະເຂດແຄວ້ນ ເພື່ອຮັບປະກັນໃຫ້ ການພົວພັນການຜະລິດມີຄວາມສອດຄ່ອງກົມກຽວ ແລະ ຊ່ວຍດຶງການຂະຫຍາຍຕົວຂອງອຸດສາຫະກຳຂະ ໜາດນ້ອຍ ແລະ ກາງ.

– ມີນິຕິກຳທີ່ທັນກັບສະພາບໃນແຕ່ລະໄລຍະ ແລະ ເອື້ອອຳນວຍໃຫ້ແກ່ການລົງທຶນຂອງວິສາຫະກິດຂະ ໜາດນ້ອຍ ແລະ ກາງ; ມີຂໍ້ມູນຂ່າວສານທີ່ຊັດເຈນ ແລະ ມີຄຸນນະພາບ.

– ຄົ້ນຄວ້ານະໂຍບາຍ ແລະ ກົນໄກທີ່ເໝາະສົມລວມທັງທຶນຮອນ ເພື່ອສືບຕໍ່ປັບປຸງ ແລະ ກໍ່ສ້າງພື້ນ ຖານໂຄງລ່າງໃຫ້ສຳເລັດໂດຍພື້ນຖານ ເພື່ອສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງ ຄົມ.

## 3. ປະຕິບັດນະໂຍບາຍການທັນເປັນອຸດສາຫະກຳ ແລະ ທັນສະໄໝ, ສົ່ງເສີມ ການນຳໃຊ້ວິທະຍາສາດເຕັກໂນໂລຊີ

– ຕ້ອງທັນເປັນອຸດສາຫະກຳ ແລະ ທັນສະໄໝໃນທຸກຂົງເຂດວຽກງານ ທັງພາກລັດ ແລະ ທຸລະກິດ ຢ່າງເໝາະສົມ ໂດຍມີການຄົ້ນຄວ້າສ້າງເປັນແຜນງານ ແລະ ໂຄງການທີ່ສອດຄ່ອງກັບສະພາບຕົວຈິງ ແນໃສ່

ຍູ້ການພັດທະນາທຸກຂະແໜງການ ແລະ ທຸກຂົງເຂດວຽກງານ, ນຳໃຊ້ວິທະຍາການໃໝ່ ແລະ ບົດຮຽນຈາກ ປະເທດໃກ້ຄຽງ ເຂົ້າໃນການຊຸກຍູ້ສົ່ງເສີມການຜະລິດ ແລະ ການບໍລິການສ້າງລາຍໄດ້ໃຫ້ດຳເນີນໄປຕາມ ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ວິທະຍາການຂອງໂລກ.

– ພັດທະນາ ແລະ ນຳໃຊ້ຜົນສຳເລັດທາງວິທະຍາສາດ ແລະ ເຕັກໂນໂລຊີທີ່ກ້າວໜ້າ ໂດຍການຄັດ ເລືອກເຕັກນິກ-ວິທະຍາສາດທີ່ຈຳເປັນ ແລະ ແທດເໝາະກັບສະພາບເສດຖະກິດຂອງປະເທດ; ໃນນີ້, ເອົາໃຈ ໃສ່ຄົ້ນຄວ້າທົດລອງວິທະຍາສາດສຳລັບການຜະລິດ ແລະ ການປຸງແຕ່ງກະສິກຳ, ການພັດທະນາອຸດສາ ຫະ ກຳໃຫ້ທັນສະໄໝ ແລະ ເປັນຫົວຈັກຫຼັກຂອງການພັດທະນາປະເທດ ທັງເປັນການເພີ່ມຄວາມສາດໃນການ ແຂ່ງຂັນທາງດ້ານເສດຖະກິດ, ສັງຄົມ ເປັນຕົ້ນ: ເຄື່ອງມືການແພດ, ຄົ້ນຄວ້າປຸງແຕ່ງຢາທີ່ມີຄຸນນະພາບ ແລະ ມີເຕັກນິກທີ່ທັນສະໄໝໃນການປິ່ນປົວ ແລະ ສະກັດກັ້ນພະຍາດລະບາດອື່ນໆ

– ພັດທະນາອຸດສາຫະກຳພະລັງງານປະເພດຕ່າງໆ ເພື່ອຮັບປະກັນໃຫ້ມີພະລັງງານພຽງພໍກັບຄວາມ ຕ້ອງການຢູ່ພາຍໃນປະເທດ ແລະ ການສ້າງຄວາມໝັ້ນຄົງດ້ານພະລັງງານ; ປະຕິບັດໃຫ້ໄດ້ຄາດໝາຍການຊົມ ໃຊ້ໄຟຟ້າຢູ່ຊົນນະບົດ ແລະ ບັນດາໂຄງການລົງທຶນດ້ານອຸດສາຫະກຳແຮ່ທາດໃຫ້ເປັນຈິງ ຕາມທິດປຸງແຕ່ງ ເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ທີ່ມີມູນຄ່າເພີ່ມສູງຂຶ້ນ, ສົ່ງເສີມອຸດສາຫະກຳປຸງແຕ່ງຜົນ ຜະລິດກະສິກຳ ດ້ວຍນະໂຍບາຍທີ່ເໝາະສົມ ເພື່ອເຮັດໃຫ້ເກີດຕ່ອງໂສ້ລະຫວ່າງການຜະລິດກະສິກຳ ແລະ ອຸດສາຫະກຳ.

## 4. ພັດທະນາຊັບພະຍາກອນມະນຸດ, ສ້າງພະນັກງານບຸກຄະລາກອນ

– ເອົາໃຈໃສ່ພັດທະນາດ້ານຊັບພະຍາກອນມະນຸດຢ່າງກວ້າງຂວາງ ໂດຍການສຸມທຶນ ແລະ ສຸມກຳລັງ ເຂົ້າໃນການພັດທະນາຄົນ ໃຫ້ມີຄວາມຮູ້, ມີສະຕິປັນຍາ ແລະ ມີຄວາມຊຳນານງານ, ມີທັດສະນະຄະຕິທີ່ ຖືກຕ້ອງ. ເອົາໃຈໃສ່ພັດທະນາຄົນທາງດ້ານຈິດໃຈໃຫ້ສົມຄູ່ກັບຄວາມຈະເລີນທາງດ້ານວັດຖຸ, ສ້າງຄຸນສົມບັດ ສິນທຳປະຕິວັດອັນຈົບງາມ ເພື່ອໃຫ້ການພັດທະນາຄົນເປັນກຳລັງຊຸກດັນໃຫ້ແກ່ການພັດທະນາເສດຖະກິດ-ສັງ ຄົມ, ມີການຄາດຄະເນຄວາມຕ້ອງການ ແລະ ມີມາດຕະການເພື່ອຕອບສະໜອງແຮງງານໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ.

– ເອົາໃຈໃສ່ເພີ່ມທະວີສ້າງຄວາມກົມກຽວ ລະຫວ່າງການພັດທະນາເສດຖະກິດກັບການພັດທະນາສັງ ຄົມ-ວັດທະນະທຳ, ລະຫວ່າງຄວາມຈະເລີນ ແລະ ຄວາມຢູ່ດີກິນດີທາງດ້ານວັດຖຸກັບການສ້າງຄວາມສີວິໄລ ຫຼື ອະລິຍະທຳທາງດ້ານຈິດໃຈ.

– ເອົາໃຈໃສ່ສ້າງບຸກຄະລາກອນປະເພດຕ່າງໆເຊັ່ນ: ກຳມະກອນວິຊາຊີບ, ນາຍຊ່າງ, ນັກວິຊາການ, ວິສາວະກອນ, ຜູ້ຄຸ້ມຄອງບໍລິຫານ ແລະ ຜູ້ຈັດການ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜ ອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາ.

– ຊຸກຍູ້ການຜະລິດເພື່ອສ້າງວຽກເຮັດງານທຳ, ຍົກສູງຄຸນນະພາບຂອງແຮງງານ ແລະ ລະດັບສີມືແຮງ ງານໃຫ້ກ້າວຂຶ້ນສູ່ມາດຕະຖານສາກົນເທື່ອລະກ້າວ.

– ປັບປຸງກົນໄກການບໍລິການທາງດ້ານການສຶກສາ ແລະ ສາທາລະນະສຸກ ໃຫ້ແທດເໝາະກັບເງື່ອນໄຂ ຕົວຈິງ ເພື່ອສະໜອງໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ. ພ້ອມນັ້ນ ກໍເອົາໃຈໃສ່ຊຸກຍູ້ສົ່ງເສີມການ

ພັດທະນາຂົງເຂດວັດທະນະທຳ-ສັງຄົມ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດຂະຫຍາຍອອກຢ່າງທົ່ວເຖິງໃນ ຂອບເຂດທົ່ວປະເທດ.

– ສ້າງ ແລະ ຂະຫຍາຍຕາໜ່າງການບໍລິການສາທາລະນະສຸກໃຫ້ເຖິງປະຊາຊົນ ເປັນຕົ້ນ ທີ່ຢູ່ຫ່າງໄກ ສອກຫຼີກ ແລະ ທຸລະກັນດານ, ຮັບປະກັນການປ້ອງກັນ ແລະ ປິ່ນປົວພະຍາດ ທົ່ວເຖິງປະຊາຊົນທຸກຄົນ.

– ທຸກຂະແໜງການສາຍຕັ້ງ, ນັບທັງຫົວໜ່ວຍວິສາຫະກິດຂະໜາດໃຫຍ່ ຕ້ອງກໍ່ສ້າງ ແລະ ເຝິກອົບ ຮົມຄົ້ນແຖວພະນັກງານ, ກຳມະກອນປະເພດຕ່າງໆ ໃຫ້ພຽງພໍກັບຄວາມຕ້ອງການ ແຜນງານ-ໂຄງການ, ກິດຈະການ, ສົ່ງເສີມນັກວິຊາການຂອງລາວ ເປັນບູລິມະສິດຂອງການຈັດຫາຕຳແໜ່ງງານສຳຄັນ.

## 5. ເພີ່ມຄວາມສາມາດ ແລະ ປະສິດທິພາບຂອງການຄຸ້ມຄອງລັດ ຕໍ່ເສດຖະກິດ

– ປັບປຸງການປ່ຽນແປງໃໝ່ໃນຂົງເຂດເສດຖະກິດໃຫ້ດຳເນີນໄປຕາມທິດ ແລະ ຈຸດໝາຍທີ່ວາງໄວ້ໂດຍ ການຍົກສູງພາລະບົດບາດຂອງລັດໃຫ້ຄຸ້ມຄອງເສດຖະກິດຢ່າງມີປະສິດທິພາບ, ຮັບປະກັນໃຫ້ມີການຂະຫຍາຍ ຕົວຕໍ່ເນື່ອງ ແລະ ມີຄວາມໝັ້ນທ່ຽງ; ເສີມສ້າງຄວາມສະເໝີພາບ ແລະ ຄວາມຍຸຕິທຳໃນຂະບວນວິວັດແຫ່ງ ການພັດທະນາ, ຫລຸດຜ່ອນຄວາມແຕກໂຕນກັນລະຫວ່າງການພັດທະນາຕົວເມືອງ ແລະ ທ້ອງຖິ່ນ (ຊົນນະບົດ) ໃຫ້ໄດ້ເທື່ອລະກ້າວ, ຮັບປະກັນເຮັດໃຫ້ການກະຈາຍລາຍໄດ້ມີຄວາມເປັນທຳໃນລະດັບອັນແນ່ ນອນ ແລະ ທົ່ວເຖິງ; ແກ້ໄຂບັນຫາແບບຮອບດ້ານຄົບຊຸດ ເຊັ່ນ: ວາງນະໂຍບາຍຢ່າງຊັດເຈນ ແລະ ຈະແຈ້ງ ໂດຍເນັ້ນຄຸນນະພາບ ແລະ ຄວາມຮັບຜິດຊອບເປັນສຳຄັນບໍ່ຄວນເນັ້ນເບິ່ງແຕ່ບັນຫາທຶນຮອນພຽງຢ່າງດຽວ.

– ບັນດາກະຊວງ-ອົງການລັດຂັ້ນສູນກາງ ຕ້ອງໄດ້ເຮັດບົດບາດໃນການຄຸ້ມຄອງມະຫາພາກຢ່າງເຂັ້ມ ແຂງ ແລະ ປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງຂະແໜງການຕົນໃຫ້ປະກົດຜົນເປັນຈິງ; ຄົ້ນຄວ້າປັບປຸງ ແລະ ອອກນະໂຍບາຍລະບຽບກົດໝາຍໃຫ້ສອດຄ່ອງກັບສະພາບການພັດທະນາແຕ່ລະໄລຍະ; ພ້ອມທັງຕິດ ຕາມກວດກາ ແລະ ຊ່ວຍຊູຍູ້ໜູນທ້ອງຖິ່ນ ແລະ ຫົວໜ່ວຍຈຸລະພາກໃນການປະຕິບັດວຽກງານໃຫ້ຖືກຕ້ອງ ແລະ ໄດ້ຮັບຜົນດີ.

– ປັບປຸງອຳນາດລັດໃຫ້ມີປະສິດທິພາບ, ມີຄວາມສັກສິດ, ປອດໃສ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ ໂດຍການມີກົງຈັກການຈັດຕັ້ງທີ່ສົມຄູ່ ແລະ ກະທັດລັດສົມເຫດສົມຜົນ; ເດັດດ່ຽວກຳຈັດປັດເປົ່າພະຍາດ ອາດຍາສິດ, ການສໍ້ລັດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆໃນກົງຈັກລັດ ກໍ່ຄືໃນຄົ້ນແຖວພະນັກງານໃນ ການເຂົ້າຮ່ວມຂະບວນການພັດທະນາ ແລະ ສ້າງສາປະເທດຊາດ.

– ຮັບປະກັນການດຸ່ນດ່ຽງເສດຖະກິດມະຫາພາກ ເປັນຕົ້ນ ດຸ່ນດ່ຽງທຶນ, ດຸ່ນດ່ຽງແຮງງານ, ດຸ່ນດ່ຽງ ງົບປະມານ ແລະ ເງິນຕາໃຫ້ມີຄວາມສົມດຸນ.

– ເພີ່ມອັດຕາການສະສົມທັງຂອງພາກລັດ, ເອກະຊົນ ແລະ ທົ່ວລະບົບທະນາຄານ ເພື່ອຮັບປະກັນໄດ້ ແຫຼ່ງທຶນໃນການພັດທະນາ ພ້ອມທັງຮັບປະກັນສະຖຽນລະພາບຂອງເສດຖະກິດມະຫາພາກໂດຍລວມ.

– ສົ່ງເສີມກົນໄກເສດຖະກິດຕະຫຼາດທີ່ມີການວາງແຜນຢ່າງເປັນລະບົບຄົບຊຸດ, ຈຳກັດທຸກຮູບການ ເກື້ອກູນ, ຫຼີກລ້ຽງການໃຊ້ຈ່າຍຟຸມເຟືອຍໂດຍມີການໄລ່ລຽງປະໂຫຍດ, ຕົ້ນທຶນ ແລະ ປະສິດທິຜົນຂອງການ ລົງທຶນຢ່າງຊັດເຈນ.

– ປະຕິບັດລະບຽບການ, ບັນດາກົດໝາຍ ແລະ ມາດຕະການຕ່າງໆທີ່ລັດຖະບານຮັບຮອງຢ່າງເຄັ່ງຄັດ , ຄຽງຄູ່ກັນນັ້ນ ກໍ່ເດັດຂາດຮ່ວມກັນຕ້ານການສໍ້ລາດບັງຫຼວງຢ່າງຈິງຈັງ.

# 6. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ແລະ ການແບ່ງຂັ້ນຄຸ້ມຄອງ

## 6.1. ການແບ່ງຂັ້ນຄຸ້ມຄອງ ແລະ ຄວາມຮັບຜິດຊອບຂອງແຕ່ລະຂັ້ນ

ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ທີ່ວາງໄວ້ໃຫ້ໄດ້ໝາກຜົນບັນດາ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ, ບັນດາເຈົ້າແຂວງ-ເຈົ້ານະຄອນຫລວງຕ້ອງໄດ້ຍົກສູງຄວາມຮັບຜິດ ຊອບໃນການຊີ້ນຳໜ່ວຍງານຕ່າງໆ ທີ່ຂຶ້ນກັບຕົນເຮັດສຳເລັດໜ້າທີ່ທີ່ໄດ້ມອບໝາຍໂດຍມີການແບ່ງຄວາມຮັບ ຜິດຊອບໃຫ້ຈະແຈ້ງ ແຕ່ຂັ້ນສູນກາງຫາຂັ້ນທ້ອງຖິ່ນຮາກຖານ ເພື່ອໃຫ້ມີຄວາມສະດວກ ແລະ ສາມາດຈັດຕັ້ງ ປະຕິບັດໄດ້ຢ່າງມີຜົນສຳເລັດ ແລະ ປະສິດທິຜົນ. ແຕ່ລະຂັ້ນມີໜ້າທີ່ຮັບຜິດຊອບດັ່ງນີ້:

– ລັດຖະບານ: ເປັນຜູ້ສະເໜີຕໍ່ລັດຖະສະພາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງ ຊາດ ແລະ ແຜນການລົງທຶນຂອງລັດ ພາຍຫຼັງທີ່ມີມະຕິຕົກລົງຂອງສະພາແຫ່ງຊາດ.

– ກະຊວງແຜນການ ແລະ ການລົງທຶນ: ອອກບົດແນະນຳລະອຽດກ່ຽວກັບການຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ ພາຍຫຼັງທີ່ລັດຖະບານສະເໜີຕໍ່ລັດຖະ ສະພາ ແລະ ໄດ້ຮັບການຮັບຮອງ ຈາກສະພາແຫ່ງຊາດ.

– ກະຊວງການເງິນ: ເປັນຜູ້ຄຸ້ມຄອງ, ຕິດຕາມການສະໜອງ ແລະ ການນຳໃຊ້ງົບປະມານຂອງລັດ ເພື່ອຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ ຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງ ທ້ອງຖິ່ນ.

– ບັນດາກະຊວງ ແລະ ອົງການ: ມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດແຜນການ ລົງທຶນຂອງລັດ ໃນຂັ້ນຂອງຕົນໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ.

ໃນກໍລະນີທີ່ບັນດາກະຊວງ ແລະ ອົງການ ໄປຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຢູ່ທ້ອງຖິ່ນໃດ ຕ້ອງມີການປະສານສົມທົບວຽກງານກັບທ້ອງຖິ່ນນັ້ນ.

ໃນກໍລະນີທີ່ບັນດາກະຊວງ ແລະ ອົງການ ຈະມອບໂຄງການໃຫ້ທ້ອງຖິ່ນປະຕິບັດ ໃຫ້ມອບແຕ່ຫົວທີ ເລີ່ມແຕ່ຂັ້ນການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ.

– ອົງການປົກຄອງທ້ອງຖິ່ນ: ມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງ ລັດໃນຂັ້ນຂອງຕົນ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ; ໃນກໍລະນີ ທີ່ບັນດາກະຊວງ ແລະ ອົງການໄດ້ມອບໂຄງການລົງທຶນຂອງລັດໃຫ້ທ້ອງຖິ່ນຈັດຕັ້ງປະຕິບັດນັ້ນ ກໍໃຫ້ທ້ອງຖິ່ນປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ; ໃນກໍລະນີທີ່ມີລາຍຮັບເກີນແຜນໃນພູດລາຍຮັບຂອງແຂວງ, ນະຄອນຫຼວງ ກໍ ສາມາດນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມມາດຕາ 25 ແລະ ມາດຕາ 35 ຂອງກົດໝາຍລົງທຶນຂອງລັດ ແລະ ໃຫ້ມີການກວດກາຢ່າງເຂັ້ມງວດ; ໃນກໍລະນີ ລາຍຮັບທີ່ເປັນພູດຂອງທ້ອງຖິ່ນເກັບບໍ່ໄດ້ຕາມແຜນປະຈຳສົກປີ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານ ແຫ່ງລັດ.

ລັດຖະບານ ລາຍງານສະພາບຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການ ລົງທຶນຂອງລັດ ຕໍ່ກອງປະຊຸມສະພາແຫ່ງຊາດ.

ກະຊວງແຜນການ ແລະ ການລົງທຶນ ສະໜຸບ, ສັງລວມ, ຕີລາຄາ ແລະ ລາຍງານສະພາບການຈັດຕັ້ງ ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການການລົງທຶນຂອງລັດໃຫ້ລັດຖະບານຢ່າງເປັນ ປົກກະຕິ.

ກະຊວງການເງິນ ສະໜຸບ, ສັງລວມ ສະພາບການຈັດຕັ້ງປະຕິບັດແຜນການນຳໃຊ້ງົບປະມານເຂົ້າໃນ ການລົງທຶນຂອງລັດ ເປັນແຕ່ລະງວດ ແລ້ວສົ່ງເຖິງການຊວງແຜນການ ແລະ ການລົງທຶນ ກ່ອນວັນທີ 10 ຂອງເດືອນທ້າຍງວດ ພ້ອມທັງລາຍງານໃຫ້ລັດຖະບານຢ່າງເປັນປົກກະຕິ.

ບັນດາກະຊວງ ແລະ ອົງການສະລຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດໃນຂອບເຂດທີ່ຕົນຮັບຜິດຊອບ ເປັນແຕ່ລະງວດ ແລ້ວສົ່ງ ເຖິງການຊວງແຜນການ ແລະ ການລົງທຶນ ກ່ອນວັນທີ 10 ຂອງເດືອນທ້າຍງວດຢ່າງເປັນປົກກະຕິ.

- ອົງການປົກຄອງທ້ອງຖິ່ນ ສະໜຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ໃນຂອບເຂດທີ່ຕົນຮັບຜິດຊອບ ໃຫ້ກະຊວງແຜນການ ແລະ ການລົງທຶນ, ບັນດາກະຊວງ, ອົງການ ເປັນແຕ່ລະງວດຢ່າງເປັນປົກກະຕິ ພາຍຫຼັງທີ່ໄດ້ປະສານສົມທົບ ກັບຂະແໜງການຂັ້ນຂອງຕົນ ພ້ອມກັບຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ບັນດາ ກະຊວງ, ອົງການໄດ້ມອບໝາຍໃຫ້.

## 6.2. ການປະສານງານລະຫວ່າງສາຍຕັ້ງ-ສາຍຂວາງໃນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການ

ເພີ່ມທະວີວຽກງານການບໍລິຫານການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຢູ່ໃນບັນດາຂະແໜງ ການຂັ້ນຕ່າງໆ ດັ່ງນີ້:

– ຮັບປະກັນບັນລຸເປົ້າໝາຍພັດທະນາເສດຖະກິດ-ສັງຄົມທີ່ໄດ້ວາງໄວ້ ແລະ ປະຕິບັດໃຫ້ໄດ້ຮັບໝາກ ຜົນ, ບັນດາລັດຖະມົນຕີ , ຫົວໜ້າອົງການທີ່ຂຶ້ນກັບລັດຖະບານ, ບັນດາເຈົ້າແຂວງ ແລະ ເຈົ້າຄອງນະຄອນ ຫຼວງ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບໃນການຊີ້ນຳໜ່ວຍງານຕ່າງໆ ທີ່ຂຶ້ນກັບຕົນເຮັດສຳເລັດໜ້າທີ່ ທີ່ໄດ້ ຮັບມອບໝາຍ; ຊີ້ນຳໂດຍກົງເພື່ອແກ້ໄຂບັນດາຂໍ້ຫຍຸ້ງຍາກ, ສິ່ງຄົງຄ້າງ, ຂໍ້ສະເໜີ ແລະ ບັນຫາຕ່າງໆ ທີ່ ຮາກຖານສະເໜີຂຶ້ນມາ.

– ຕ້ອງຫັນບັນດາລະບຽບການ-ບໍລິຫານໃຫ້ງ່າຍດາຍກະທັດຮັດ. ຖືເອົາຜົນສຳເລັດ ແລະ ປະສິດທິຜົນ ໃນການເຄື່ອນໄຫວການຜະລິດ-ທຸລະກິດ ເຮັດໃຫ້ສະພາບເສດຖະກິດ-ສັງຄົມ ຢູ່ໃນແຕ່ລະແຂວງ, ຕົວເມືອງ ມີຄວາມສະຫງົບປອດໄພ ເປັນໄມ້ຫຼາວັດແທກຕົວຈິງ ເພື່ອຕີລາຄາຜົນງານຂອງຕົນ.

– ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການປະສານສົມທົບກັບກະຊວງການເງິນ ແລະ ທະນາຄານແຫ່ງລັດ ເພື່ອຊີ້ນຳການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງຂະຫຍາຍການຜະລິດສິນຄ້າ, ການ ລົງທຶນ ໂດຍກົງຕາມນະໂຍບາຍເສດຖະກິດ ການເງິນ-ເງິນຕາ ຢ່າງກົມກຽວ ແລະ ສົມສ່ວນ ທັງຮັບປະກັນ ໃຫ້ເສດຖະກິດມະຫາພາກມີສະຖຽນລະພາບຢ່າງຕັ້ງໜ້າ. ສ້າງລະບົບສະຖິຕິແຫ່ງຊາດໃຫ້ເຂັ້ມແຂງ, ມີຈຳນວນ ພະນັກງານສະຖິຕິທີ່ພຽງພໍໃນການເກັບກຳ ແລະ ສະໜອງບັນດາຂໍ້ມູນຂ່າວສານທີ່ຈຳເປັນໃນການວິເຄາະວິໄຈ ເພື່ອຮັບໃຊ້ໃຫ້ແກ່ການກຳນົດບັນດານະໂຍບາຍພັດທະນາເສດຖະກິດ-ສັງຄົມ. ສ້າງບັນດາໜ່ວຍງານສະຖິຕິ

ຂຶ້ນຢູ່ແຕ່ລະກະຊວງ ແລະ ທ້ອງຖິ່ນ. ຈັດຕັ້ງລະບົບຂໍ້ມູນຂ່າວສານກ່ຽວກັບເສດຖະກິດ-ສັງຄົມທົ່ວປະເທດ ລວມສູນ ຢູ່ກົມສະຖິຕິ.

– ກະຊວງແຜນການ ແລະ ການລົງທຶນ ເປັນເສນາທິການໃຫ້ແກ່ລັດຖະບານ ໃນການປະສານສົມທົບ ກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ໃນການສັງເກດຕີລາຄາສະພາບການເຄື່ອນໄຫວວຽກງານ ການພັດທະນາເສດຖະກິດ-ສັງຄົມ ເພື່ອສ້າງເປັນບົດລາຍງານສະເໜີຕໍ່ກອງປະຊຸມລັດຖະບານໃນແຕ່ລະໄລ ຍະ.

– ມີການປະສານງານລະຫວ່າງຂະແໜງການຂັ້ນສູນກາງດ້ວຍກັນ, ລະຫວ່າງຂະແໜງການກັບທ້ອງຖິ່ນ ແລະ ລະຫວ່າງທ້ອງຖິ່ນດ້ວຍກັນຢ່າງເປັນລະບົບປົກກະຕິ; ມີການປະສານຢ່າງກົມກຽວ ລະຫວ່າງຂະແໜງ ເສດຖະກິດ-ສັງຄົມ. ບັນດາຂະແໜງການ ຕ້ອງກຳນົດນະໂຍບາຍພັດທະນາຂະແໜງການຂອງຕົນຢ່າງຈະ ແຈ້ງ, ມີການແລກປ່ຽນຂໍ້ມູນຂ່າວສານຢ່າງເປັນລະບົບ, ມີແຜນພັດທະນາຂະແໜງການສາຍຕັ້ງແຕ່ສູນກາງລົງ ຮອດທ້ອງຖິ່ນຮາກຖານຂັ້ນບ້ານ.

– ການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VII ຕ້ອງສ້າງໃຫ້ໄດ້ຂອບປະເມີນຜົນທີ່ຊັດເຈນ, ມີກົນ ໄກຕິດຕາມກວດກາ ແລະ ຕີລາຄາສະພາບການຈັດຕັ້ງຢ່າງເປັນຮູບປະທຳ ແລະ ເປັນລະບົບ. ທຸກຂະແໜງ ການ ແລະ ທ້ອງຖິ່ນ ຕ້ອງໄດ້ສ້າງລະບົບການຕິດຕາມສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະ ກິດ-ສັງຄົມຂອງຕົນ ເພື່ອໃຫ້ສາມາດລາຍງານຜົນຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການພ້ອມທັງສະ ພາບການພົ້ນເດັ່ນທັງດ້ານດີ ແລະ ດ້ານອ່ອນ ໃຫ້ແກ່ອົງການຄຸ້ມຄອງມະຫາພາກ ກໍຄືລັດຖະບານຢ່າງຄົບ ຖ້ວນ ແລະ ຊັດເຈນ ເພື່ອຄົ້ນຄ້ວາມາດຕະການສົ່ງເສີມ ຫຼື ຕອບໂຕ້ໃຫ້ມີປະສິດທິຜົນຢ່າງທັນການ; ໃນນີ້, ບັນຫາໜຶ່ງທີ່ສຳຄັນ ແມ່ນການສ້າງແຜນເຄື່ອນໄຫວເພື່ອຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນຢ່າງເປັນ ລະບົບ ແຕ່ຂັ້ນສູນກາງ, ແຂວງ ແລະ ເມືອງ, ໂດຍໃຫ້ຕິດພັນກັບແຜນເງິນ ແລະ ແຜນຄົນ. ກະຊວງ ແຜນການ ແລະ ການລົງທຶນ ເປັນໃຈກາງໃນການປະສານງານກັບກະຊວງ-ອົງການທີ່ກ່ຽວຂ້ອງ ແລະ ທ້ອງ ຖິ່ນຕ່າງໆ ເພື່ອຕິດຕາມສະພາບການດຸ່ນດ່ຽງມະຫາພາກ ແລະ ການພັດທະນາ.

## 6.3. ການຕິດຕາມ ແລະ ການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ຄັ້ງທີ VII

ການຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຄັ້ງນີ້ ເປັນໜ້າທີ່ ທີ່ສຳຄັນ ໂດຍສະເພາະແມ່ນການຕີລາຖອດຖອນບົດຮຽນ ແລະ ປັບປຸງແຜນໃນແຕ່ລະປີໃຫ້ສອດຄ່ອງ ແລະ ສາມາດ ບັນລຸໄດ້ເຖິງຈຸດປະສົງຄາດຫມາຍທີ່ກຳນົດໄວ້. ທຸກພາກສ່ວນຂອງລັດຖະບານຕັ້ງແຕ່ສູນກາງລົງໄປເຖິງທ້ອງ ຖິ່ນຈະຕ້ອງມີສ່ວນຮ່ວມຢ່າງໃກ້ສິດ ແລະ ຫ້າວຫັນໃນຂະບວນການຕິດຕາມກວດກາ ແລະ ປະເມີນຜົນ ນີ້ ເນື່ອງຈາກວ່າທຸກຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນຄັ້ງນີ້ ລວມທັງການປະຕິບັດພັນທະໃນກອບຂອງ ເປົ້າຫມາຍສະຫັດສະຫວັດ ແລະ ແຜນດຳເນີນງານຂອງບຸກແຊນສຳລັບປະເທດດ້ອຍພັດທະນາລ້ວນແຕ່ຈະ ສະແດງໃຫ້ ເຫັນໄດ້ໃນຂະບວນການຕິດຕາມ ກວດກາ ແລະ ປະເມີນຜົນ.

ການຕິດຕາມກວດກາຕ້ອງໃຫ້ເຫັນໄດ້ໃນສອງລະດັບຄື: (1) ການຕິດຕາມກວດກາບັນດາປັດໃຈນຳ ເຂົ້າ ແລະ ຜົນງານຕ່າງໆ ຫລື ຮ້ອງວ່າການຕິດຕາມກວດກາການຈັດຕັ້ງປະຕິບັດ, (2) ການຕິດຕາມກວດກາ ຫມາກຜົນໂດຍລວມ ຫລື ຮ້ອງວ່າການຕິດຕາມກວດກາຜົນກະທົບ. ລັດຖະບານມີຄວາມສາມາດໃນການ

ຕິດຕາມການຈັດສັນບັນດາປັດໃຈການນຳເຂົ້າ ເພື່ອການຜະລິດທັງຫລາຍເຊັ່ນ: ລາຍຈ່າຍພາກລັດ ເຊິ່ງລວມມີ ການຊ່ວຍເຫລືອຂອງຕ່າງປະເທດ ແລະ ລາຍຈ່າຍຕໍ່ພະນັກງານ ແລະ ເຊັ່ນດຽວກັບການຕິດຕາມກວດ ກາ ຜົນໄດ້ຮັບ ຫລື ຜົນງານຕ່າງໆ ຕົວຢ່າງ: ຈ□ານວນເນື້ອທີ່ນາທີ່ນ□າໃຊ້ນ□າຈາກຊົນລະປະທານ, ການສະ ຫນອງແນວພັນຕ່າງໆ, ຈຳນວນສັດລ້ຽງ, ຈຳນວນໂຮງຮຽນ, ໂຮງຫມໍ, ຈຳນວນບ້ານທີ່ມີນ້ຳສະອາດ, ໄລຍະ ເສັ້ນທາງ ທີ່ສ້າງຂຶ້ນໃຫມ່ ແລະ ອື່ນໆ ເປັນຕົ້ນ.

– ທ້ອງຖິ່ນຕ້ອງເປັນຜູ້ທີ່ສາມາດນຳເອົາເປົ້າໝາຍຍຸດທະສາດລວມຂອງປະເທດ ເພື່ອຈັດຕັ້ງຜັນຂະ ຫຍາຍໃຫ້ເປັນອັນລະອຽດສະເພາະຂອງທ້ອງຖິ່ນ. ແຂວງສ້າງຍຸດທະສາດຂອງແຂວງ ໂດຍກຳນົດແຈ້ງກ່ຽວ ກັບຍຸດທະສາດ ຫຼື ເປົ້າໝາຍດ້ານມະຫາພາກໂດຍລວມຂອງແຂວງ ເຊິ່ງປະກອບສ່ວນໃຫ້ແກ່ການຈັດຕັ້ງປະຕິ ບັດເປົ້າໝາຍຂອງຊາດ. ພ້ອມດຽວກັນນັ້ນ, ແຂວງ ແລະ ແຕ່ລະຂະແໜງການຂອງແຂວງຕ້ອງພົວພັນກັບ ໜ່ວຍງານຄຸ້ມຄອງມະຫາພາກຂອງສູນກາງຢ່າງສະໜິດແໜ້ນ ແລະ ເປັນປົກກະຕິ ເພື່ອສາມາດຕິດຕາມການ ຈັດຕັ້ງປະຕິບັດຍຸດທະສາດໃນລະດັບແຂວງຢ່າງມີປະສິດທິຜົນ ໂດຍສອດຄ່ອງກັບການຈັດຕັ້ງປະຕິບັດໃນ ລະດັບສູນກາງຢ່າງຈະແຈ້ງ. ແຂວງຕ້ອງເກັບກຳ, ສັງລວມຂໍ້ມູນຂອງຕົນຢ່າງຄົບຖ້ວນ ແລະ ຊັດເຈນ ເປັນ ລະບົບ ເພື່ອສະໜອງໃຫ້ແກ່ສູນກາງ. ດັ່ງນັ້ນ, ແຂວງຕ້ອງມີລະບົບຂໍ້ມູນຂ່າວສານທີ່ດີ ແລະ ຕິດພັນກັບ ທ້ອງການຂອງເມືອງຢ່າງຈະແຈ້ງ.

– ປະຕິບັດລະບອບການຕິດຕາມກວດກາ ແລະ ການສະຫຼຸບຕີລາຄາ (ປະເມີນຜົນ) ການຈັດຕັ້ງປະ ຕິ ບັດແຜນການ ຢ່າງເປັນລະບົບປົກກະຕິ.

## 7. ເພີ່ມທະວີການພົວພັນຮ່ວມມືເສດຖະກິດສາກົນຍາດແຍ່ງການຊ່ວຍເຫລືອ ສະໜັບສະໜູນຈາກເພື່ອນມິດ ແລະ ຄູ່ຮ່ວມພັດທະນາ

– ເປີດກວ້າງການຮ່ວມມືກັບສາກົນ ເພື່ອການພັດທະນາ ໂດຍເລັ່ງໃສ່ສ້າງຍຸດທະສາດການຮ່ວມມືເພື່ອ ກຳນົດໃຫ້ໄດ້ເນື້ອໃນຈິດໃຈ ແລະ ເປົ້າໝາຍການຮ່ວມມືໃຫ້ສອດຄ່ອງກັບຍຸດທະສາດການຊ່ວຍເ◌ືອຂອງຜູ້ ໃຫ້ທຶນ, ຮັກສາບັນຍາກາດການຮ່ວມມືຊ່ວຍເຫຼືອກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆໃຫ້ປົກ ກະຕິ ແລະ ໃຫ້ນັບມື້ຂະຫຍາຍຕົວ, ບັນລຸການປະຕິບັດຂໍ້ຜູກພັນສັນຍາຕ່າງໆກັບອົງການສາກົນ, ຍົກສູງປະ ສິດທິຜົນຂອງການຮ່ວມມືໂດຍເລັ່ງໃສ່ປັບປຸງຂະບວນການໂຕະມົນ ແລະ ປັບປຸງບັນດາກົນໄກຄຸ້ມຄອງທຶນ, ນຳໃຊ້ ການຊ່ວຍເຫລືອເພື່ອການພັດທະນາໃຫ້ມີປະສິດທິຜົນ.

– ຮັບປະກັນການປະຕິບັດແນວທາງການຕ່າງປະເທດໃນການເປີດກວ້າງການພົວພັນກັບບັນດາປະເທດ, ເຂດແຄວ້ນ ແບບຫຼາຍທິດ-ຫຼາຍຝ່າຍ ແລະ ຫຼາຍລະດັບ ບົນພື້ນຖານຍຶດໝັ້ນຜົນປະໂຫຍດຂອງຊາດ; ພ້ອມ ທັງສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາປະ ເທດຊາດຢ່າງເປັນເຈົ້າການ.

– ເພີ່ມທະວີການພົວພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມືຮອບດ້ານກັບ ຫວຽດນາມ, ເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອກັບ ສປ ຈີນ ບົນຈິດໃຈເປັນເພື່ອນມິດທີ່ດີ ແລະ ເປັນຄູ່ຮ່ວມມືທີ່ໄວ້ ວາງໃຈ, ຮັດແໜ້ນການພົວພັນຮ່ວມມືກັບບັນດາປະເທດໃກ້ຄຽງທີ່ມີຊາຍແດນຮ່ວມກັນ, ຕັ້ງໜ້າເຂົ້າຮ່ວມການ ເຄື່ອນໄຫວຂອງອາຊຽນບົນພື້ນຖານຜົນປະໂຫຍດລວມ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນຕາມຫຼັກການພື້ນ ຖານຂອງອາຊຽນ.

– ເພີ່ມທະວີວຽກງານການທູດປະຊາຊົນ, ສ້າງເງື່ອນໄຂໃຫ້ພີ່ນ້ອງຮ່ວມຊາດ ທີ່ຢູ່ຕ່າງແດນໄດ້ປະກອບສ່ວນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດ.

## 8. ຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ໃຫ້ເຂົ້າສູ່ພາກຕົວຈິງຂອງຂະແໜງການ ແລະ ທ້ອງຖິ່ນ-ຮາກຖານ

– ບັນດາກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງສູນກາງ ເຮັດບົດບາດຄຸ້ມຄອງມະຫາພາກ, ເປັນຜູ້ຈັດການໃຫຍ່ໃນຂະແໜງການຂອງຕົນ ໂດຍຫັນບັນດາຄາດໝາຍ, ແຜນງານ, ໂຄງການຂອງແຜນການ 5 ປີ ອອກເປັນຂອງຂະແໜງການຕົນເອງເປັນແຜນການປະຈຳປີ ໂດຍໃຫ້ສອດຄ່ອງລະຫວ່າງແຜນງານ, ແຜນເງິນ, ມາດຕະການປະຕິບັດ, ພ້ອມດຽວກັນນັ້ນ, ກຳກົນໄກຂອບຕິດຕາມການປະຕິບັດຕົວຈິງ; ໃຫ້ຈັດຕັ້ງການໂຄສະນາເຜີຍແຜ່, ມອບໝາຍຄວາມຮັບຜິດຊອບໃຫ້ສາຍຕັ້ງຢູ່ແຂວງ, ເມືອງ ແລະ ປະກອບບຸກຄະລາກອນ, ຝຶກອົບຮົມວິຊາການຢ່າງເລິກເຊິ່ງ.

– ອົງການປົກຄອງແຂວງເປັນຜູ້ສັງລວມແຜນງານ-ໂຄງການລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນເຂົ້າເປັນແຜນພັດທະນາທ້ອງຖິ່ນໃຫ້ກົມກຽວ, ຖືໂຄງການໃຫ່ຍລະດັບຊາດທີ່ປະຕິບັດຢູ່ໃນແຂວງຕົນເປັນສ່ວນສຳຄັນຂອງການຍູ້ການເຕີບໂຕຂອງ GDP, ຕ້ອງເຂົ້າຮ່ວມຊຸກຍູ້, ຕິດຕາມ, ກວດກາ, ສະເໜີແນະວິທີປະຕິບັດ ແລະ ລະດົມປະຊາຊົນເຂົ້າຮ່ວມຢ່າງຕັ້ງໜ້າ; ປະສານເອົາໂຄງການລະດັບພາກເຂົ້າໃນແຜນງານຂອງແຂວງ ແລະ ຖືເປັນສ່ວນໜຶ່ງຂອງການລົງທຶນໃນແຂວງ ໂດຍໃຫ້ມີສ່ວນຮັບຜິດຊອບ, ທັງປະກອບສ່ວນກໍ່ສ້າງ ແລະ ບຳລຸງຮັກສາ.

– ສ້າງເມືອງໃຫ້ເປັນຫົວໜ່ວຍແຜນການ ແລະ ການເງິນ ທີ່ເຂັ້ມແຂງ ແລະ ສາມາດປະຕິບັດ ພາລະບົດບາດຂອງຕົນຢ່າງມີປະສິດທິຜົນ.

–ເພີ່ມທະວີການປະສານງານຂອງບັນດາຂະແໜງການສາຍຕັ້ງປະຈຳຢູ່ແຂວງ ໂດຍໃຫ້ມີການເຄື່ອນໄຫວໄປໃນລວງດຽວກັນ, ນຳໃຊ້ກົນໄກປະຕູດຽວ ໃນການຕິດຕາມ, ຄຸ້ມຄອງ ແລະ ສະໜຸບລາຍງານໝາກຜົນໃນການປະຕິບັດໃຫ້ສາຍຕັ້ງຂອງໃຜລາວ.

– ລັດຖະບານ, ອົງການປົກຄອງແຂວງ-ເມືອງ ອອກນິຕິກຳມອບໝາຍຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດເປັນແຕ່ລະປີໃຫ້ຊັດເຈນ, ກຳນົດຄວາມຮັບຜິດຊອບຂອງກະຊວງ-ອົງການກັບແຂວງ ແລະ ລະຫວ່າງແຂວງກັບແຂວງໃນພາກດຽວກັນ, ລະຫວ່າງແຂວງກັບເມືອງ ຢ່າງຈະແຈ້ງ.

– ເພີ່ມທະວີການປົກສາຫາລື ລະຫວ່າງພາກລັດກັບພາກທຸລະກິດ, ສົ່ງເສີມການມີສ່ວນຮ່ວມຂອງພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການສ້າງ ແລະ ປະຕິບັດແຜນປະຈຳປີ, 6 ເດືອນ, ປັບປຸງແກ້ໄຂໄວຂອດທີ່ເປັນອຸປະສັກໃຫ້ພາກທຸລະກິດຕາມສິດ ແລະ ໜ້າທີ່ຂອງອົງການບໍລິຫານລັດ.

# ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ 1: ສົມທຽບຄາດໝາຍ ລະຫວ່າງ ການການຈັດຕັ້ງປະຕິບັດ ແລະ ແຜນການ 5 ປີ ຄັ້ງທີ VI

| No. | ຕົວຊີ້ບອກ | ຫົວໜ່ວຍ | ສະເລ່ຍ 2006-2010 (ແຜນການ) | ສະເລ່ຍ 2006-2010 (ປະຕິບັດ) |
|---|---|---|---|---|
| 1 | **ພົນລະເມືອງທັງໝົດ*** | **ພັນຄົນ** | **5,945** | **5,994** |
| 2 | **ລວມຍອດຜະລິດຕະພັນພາຍໃນ (ລາຄາໃນປີ)** | **ຕື້ກີບ** | **46,023.40** | **43,959.19** |
| | ລວມຍອດຜະລິດຕະພັນພາຍໃນ (ລາຄາໃນປີ) | ລ້ານໂດລາ | 4,100.60 | 4,784.60 |
| 3 | **GDP ລາຄາປີ 2002** | **ຕື້ກີບ** | **1,897.00** | **26,727.72** |
| | ອັດຕາການເຕີບໂຕຂອງ GDP | % | 7.6 | 7.9 |
| | - ກະສິກຳ | % | 3.2 | 4.1 |
| | - ອຸດສາຫະກຳ | % | 13.7 | 12.5 |
| | - ບໍລິການ | % | 7.3 | 8.4 |
| 4 | **ການແບ່ງປັນຕາມສັດສ່ວນ GDP** | % | 100.0 | 100.0 |
| | - ກະສິກຳ | % | 39.6 | 30.4 |
| | - ອຸດສາຫະກຳ | % | 33.2 | 26.0 |
| | - ບໍລິການ | % | 27.2 | 37.2 |
| | - ອາກອນຜະລິດຕະພັນ ແລະ ພາສີຂາເຂົ້າ | % | na | 6.5 |
| | ສຸດທິ | | | |
| 5 | **ລາຍໄດ້ຕໍ່ຫົວຄົນ ຫຼື GDP ຕໍ່ຫົວຄົນ** | **ລ້ານກີບ** | **6.78** | **8.35** |
| | ລາຍໄດ້ຕໍ່ຫົວຄົນ ຫຼື GDP ຕໍ່ຫົວຄົນ | ໂດລາ | 800 | 986*** |
| 6 | **ລາຍຮັບ** | **ຕື້ກີບ** | **6,919.80** | **7,375.35** |
| | - ລາຍຮັບ (ລົບການຊ່ວຍເຫຼືອອອກ) | ຕື້ກີບ | 6,151.0 | 6,226.3 |
| | - ການຊ່ວຍເຫຼືອ | ຕື້ກີບ | 768.8 | 1,149.0 |
| 7 | **ລາຍຈ່າຍ** | **ຕື້ກີບ** | **9,927** | **9,396** |
| 8 | **ຂາດດຸນງົບປະມານ** | | | |
| | .- ຂາດດຸນງົບປະມານ ນັບທັງການຊ່ວຍເຫຼືອ | ຕື້ກີບ | -3,007.4 | -2,045.7 |
| | .- ຂາດດຸນງົບປະມານ ລົບການຊ່ວຍເຫຼືອ | ຕື້ກີບ | -3,776.2 | -3,194.7 |
| 9 | **ບໍລິມາດເງິນໃນຂອດຈໍລະຈອນ (M2)**** | **ຕື້ກີບ** | **11,525** | **8,888** |
| | - ອັດຕາໄພເງິນເຟີ້ (ທ້າຍໄລຍະ) | % | 7.0 | 4.3 |
| | - ອັດຕາໄພເງິນເຟີ້ (ສະເລ່ຍ) | % | 7.0 | 5.0 |

| | | | | |
|---|---|---|---|---|
| 10 | **ອັດຕາແລກປ່ຽນເງິນຕາຕ່າງປະເທດ** | | | |
| | - ກີບ/ໂດລາສະຫະລັດ* | ຕື້ກີບ | 11,179.8 | 9,312.1 |
| 11 | **ຂາດດຸນການຄ້າ*** | **ລ້ານໂດລາ** | **- 219.05** | **- 276.80** |
| | - ຂາອອກ* | ລ້ານໂດລາ | 715.1 | 1,022.2 |
| | - ຂາເຂົ້າ* | ລ້ານໂດລາ | 934 | 1,299.0 |
| 12 | **ດຸນການຊໍາລະປົກກະຕິ (CAB)** | **ລ້ານໂດລາ** | **- 72** | **29** |
| 13 | **ລົງທຶນທັງໝົດ (ລັດ + ເອກະຊົນ)** | **ຕື້ກີບ** | **14,788.00** | **12,551.17** |
| | ລັດລົງທຶນ | ຕື້ກີບ | 4,718 | 3,672.2 |
| | ເອກະຊົນລົງທຶນ | ຕື້ກີບ | 10,070.0 | 8,878.9 |
| 14 | **ສັດສ່ວນຕ່າງໆຕໍ່ GDP** | | | |
| | ບໍລິມາດເງິນໃນຂອດຈໍລະຈອນ (M2)/GDP | % | 25.0 | 19.6 |
| | ລາຍຮັບ (+ການຊ່ວຍເຫຼືອອອກ)/GDP | % | 14.9 | 16.5 |
| | ລາຍຮັບ (ຫັກການຊ່ວຍເຫຼືອອອກ)/GDP | % | - 8.4 | 14.0 |
| | ລາຍຈ່າຍ/GDP | % | 21.6 | 21.2 |
| | ຂາດດຸນງົບປະມານ/GDP | % | - 6.7 | |
| | .- ຂາດດຸນງົບປະມານ ນັບທັງການຊ່ວຍເຫຼືອ | % | na | - 4.7 |
| | .- ຂາດດຸນງົບປະມານ ລົບການຊ່ວຍເຫຼືອ | % | na | - 7.2 |
| | ດຸນຊໍາລະປົກກະຕິ (CAB)/GDP | % | na | - 0.8 |
| | ຂາດດຸນການຄ້າ/GDP | % | - 5.8 | - 5.3 |
| | ຂາອອກ/GDP* | % | 17.4 | 20.7 |
| | ຂາເຂົ້າ/GDP* | % | 23.2 | 26.1 |
| | ລວມການລົງທຶນ/GDP | % | 32.0 | 28.7 |
| | ລັດລົງທຶນທັງໝົດ/GDP | % | 11.3 | 8.4 |
| | ເອກະຊົນລົງທຶນທັງໝົດ/GDP | % | 20.6 | 20.3 |

ໝາຍເຫດ:

1. * ຂໍ້ມູນປີປະຕິທິນ
2. ມູນຄ່າການຄ້າ ຂາອອກ-ຂາເຂົ້າ 2010 ໄດ້ຄາດຄະເນໂດຍອີງໃສ່ທ່າອ່ຽງໃນໄລຍະ 2001-2009 ໂດຍອີງຕາມຂໍ້ມູນທີ່ໄດ້ຮັບຈາກທະນາຄານ ແຫ່ງ ສປປ ລາວ
3. ອັດຕາເງິນເຟີ້ ສົກ 2009/2010 ແມ່ນອັດຕາຄາດຄະເນ
4. ລາຍຮັບ ຈາກການຊ່ວຍເຫລືອ ແລະ ການຂາດດຸນງົບປະມານ ແມ່ນໄດ້ຈາກຂໍ້ມູນການສະຫລຸບໃນແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2009-2010
5. ** ປະລິມານເງິນ (M2) ປີ 2009 ແລະ 2010 ແມ່ນຂໍ້ມູນແຜນ
6. *** ຄາດຄະເນປະຕິບັດສົກປີ 2009-2010
7. ອັດຕາແລກປ່ຽນ ແມ່ນ 1 ໂດລາສະຫະລັດ ເທົ່າກັບ 8.470 ກີບ

## ເອກະສານຊ້ອນທ້າຍ 2: ຕາຕະລາງສັງລວມຄວາມທຸກຍາກ, ຊ່ອງວ່າງ, ຄວາມຮຸນແຮງຂອງຄວາມທຸກຍາກ ແລະ ຄວາມແຕກໂຕນຂອງສັງຄົມ

| ລ/ດ | ຊື່ແຂວງ ແລະ ເຂດ | ການຊົມໃຊ້ ຂອງຄົວເຮືອນ ສະເລ່ຍ ຕໍ່ເດືອນ | | ອັດຕາສ່ວນຄົນທຸກຍາກ | | ຊ່ອງວ່າງ ຄວາມທຸກຍາກ | | ຄວາມຮຸນແຮງຂອງຄວາມທຸກຍາກ | | ຄວາມບໍ່ສະເໜີພາບ | |
|---|---|---|---|---|---|---|---|---|---|---|---|
| | | 2002/2003 | 2007/2008 | 2002/2003 | 2007/2008 | 2002/2003 | 2007/2008 | 2002/2003 | 2007/2008 | 2002/2003 | 2007/2008 |
| | **ສ ປ ປ ລາວ** | **1,089.4** | **2,170.7** | **33.5** | **27.6** | **8.0** | **6.5** | **2.8** | **2.3** | **32.6** | **35.4** |
| | ຕົວເມືອງ | 1,703.0 | 2,950.2 | 19.7 | 17.4 | 4.1 | 3.4 | 1.3 | 1.1 | 34.8 | 36.3 |
| | ຊົນນະບົດ | 854.3 | 1,826.1 | 37.6 | 31.7 | 9.2 | 7.7 | 3.2 | 2.8 | 30.3 | 33.4 |
| **I** | **ພາກເໜືອ** | **975.5** | **1,975.7** | **37.9** | **32.5** | **9.4** | **7.7** | **3.3** | **2.7** | **30.7** | **35.2** |
| 1 | ຜົ້ງສາລີ | 762.5 | 1,258.6 | 50.8 | 46.0 | 11.8 | 11.8 | 4.0 | 4.2 | 22.2 | 29.8 |
| 2 | ຫຼວງນ້ຳທາ | 1,028.6 | 1,654.6 | 22.8 | 30.5 | 4.1 | 6.1 | 1.1 | 1.8 | 25.4 | 30.1 |
| 3 | ອຸດົມໄຊ | 802.6 | 1,734.9 | 45.1 | 33.7 | 10.8 | 8.6 | 3.6 | 3.3 | 24.7 | 31.6 |
| 4 | ບໍ່ແກ້ວ | 821.8 | 1,279.0 | 21.1 | 32.6 | 5.3 | 7.9 | 1.9 | 2.8 | 29.1 | 28.9 |
| 5 | ຫຼວງພະບາງ | 1,116.9 | 2,177.6 | 39.5 | 27.2 | 10.4 | 5.5 | 3.7 | 1.6 | 31.5 | 31.6 |
| 6 | ຫົວພັນ | 939.2 | 1,471.5 | 51.5 | 50.5 | 13.9 | 13.6 | 5.2 | 4.9 | 28.9 | 28.3 |
| 7 | ໄຊຍະບູລີ | 1,100.6 | 3,035.4 | 25.0 | 15.7 | 5.8 | 3.0 | 1.9 | 0.9 | 34.6 | 42.0 |
| **II** | **ພາກກາງ** | **1,236.7** | **2,389.1** | **35.4** | **29.8** | **7.1** | **6.9** | **2.6** | **2.5** | **31.0** | **34.0** |
| 1 | ນະຄອນຫຼວງວຽງຈັນ* | 1,898.9 | 3,183.1 | 16.7 | 15.2 | 3.4 | 3.4 | 1.0 | 1.2 | 36.0 | 38.0 |
| 2 | ຊຽງຂວາງ | 1,043.5 | 2,191.0 | 41.6 | 42.0 | 8.4 | 13.4 | 3.0 | 6.0 | 31.5 | 38.0 |
| 3 | ວຽງຈັນ | | | | | | | | | | |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| | | 1,189.5 | 1,857.5 | 19.0 | 28.0 | 12.3 | 6.2 | 5.5 | 2.0 | 31.5 | 32.1 |
| 4 | ບໍລິຄຳໄຊ | 961.5 | 2,019.1 | 28.7 | 21.5 | 3.4 | 4.3 | 0.9 | 1.3 | 27.9 | 33.9 |
| 5 | ຄຳມ່ວນ | 872.3 | 1,871.8 | 33.7 | 31.4 | 5.5 | 6.7 | 1.5 | 2.2 | 28.9 | 31.5 |
| 6 | ສະຫວັນນະເຂດ | 960.7 | 2,365.0 | 43.1 | 28.5 | 7.7 | 6.1 | 2.6 | 2.1 | 31.3 | 34.2 |
| **III** | **ພາກໃຕ້** | **909.3** | **1,948.0** | **32.6** | **22.8** | **7.6** | **5.6** | **2.5** | **2.1** | **31.4** | **32.2** |
| 1 | ສາລະວັນ | 683.8 | 1,455.9 | 54.3 | 36.3 | 13.1 | 9.1 | 4.3 | 3.3 | 27.1 | 30.0 |
| 2 | ເຊກອງ | 803.7 | 1,518.7 | 41.8 | 51.8 | 11.8 | 19.1 | 4.7 | 9.3 | 30.7 | 37.9 |
| 3 | ຈຳປາສັກ | 1,053.3 | 2,299.5 | 18.4 | 10.0 | 3.6 | 1.6 | 1.1 | 0.4 | 29.9 | 28.7 |
| 4 | ອັດຕະປື | 837.9 | 1,759.7 | 44.0 | 24.6 | 11.6 | 4.6 | 4.1 | 1.3 | 29.4 | 32.4 |

ໝາຍເຫດ: * ການຄິດໄລ່ອັດຕາສ່ວນຄວາມທຸກຍາກພາກ ລ ແມ່ນບໍ່ໄດ້ລວມເອົານະຄອນຫຼວງວຽງຈັນເຂົ້າ.

## ເອກະສານຊ້ອນທ້າຍ 3: ຄາດໝາຍແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015)

| ລ/ດ | ລາຍການ | ຄາດໝາຍ |
|---|---|---|
| 1 | ອັດຕາການເຕີບໂຕຂອງເສດຖະກິດ (GDP) | 8% ຂຶ້ນໄປ |
| | ຂະແໜງກະສິກຳ | 3% |
| | ຂະແໜງອຸດສະຫະກຳ | 15% |
| | ຂະແໜງບໍລິການ | 6,5% |
| 2. | ໂຄງປະກອບຕໍ່ GDP ປີ 2015 | 100% |
| | ຂະແໜງກະສິກຳ | 23% |
| | ຂະແໜງອຸດສະຫະກຳ | 39% |
| | ຂະແໜງບໍລິການ | 38% |
| 3. | ຂະແໜງການຄ້າ | |
| | ອັດຕາການສົ່ງອອກຕໍ່ປີ | 18% |
| | ອັດຕາການນຳເຂົ້າຕໍ່ປີ | 8% |
| | ດຸນການຄ້າ ຕໍ່ GDP | |
| 4. | ຂະແໜງທະນາຄານ | |
| | ອັດຕາເງິນເຟີ້ | ຕ່ຳກວ່າອັດຕາການຂະຫຍາຍ ຕົວຂອງເສດຖະກິດ |
| | ອັດຕາການຂະຫຍາຍຕົວສະເລ່ຍຕໍ່ປີ:<br>- ສິນເຊື່ອ<br>- ເງິນຝາກ<br>- ເງິນຝາກເປັນເງິນກີບຕໍ່ເງິນຝາກທັງໝົດ | <br>23%<br>25%<br>49% |
| | ອັດຕາສ່ວນຕໍ່ GDP:<br>- ສິນເຊື່ອ<br>- ເງິນຝາກ | <br>33%<br>39% |
| | ອັດຕາການສະສົມທີ່ວ່ລະບົບທະນາຄານ ຕໍ່ GDP | 30% |
| 5. | ຂະແໜງການເງິນ | |
| | ລາຍຮັບ ຕໍ່ GDP | 18-19% |
| | ລາຍຈ່າຍ ຕໍ່ GDP | 20-22% |
| | ຂາດດຸນງົບປະມານຕໍ່ GDP | 3-5% |

| | | |
|---|---|---|
| | ຄັງສະສົມແຫ່ງລັດ ຕໍ່ລາຍຮັບພາຍໃນ | 3-5% |
| 6. | ການລົງທຶນ | |
| | ການລົງທຶນທັງໝົດ ຕໍ່ GDP | 32% |
| | ສັດສ່ວນຕໍ່ການລົງທຶນລວມທັງໝົດ | |
| | ການລົງທຶນຂອງລັດ | 8-10% |
| | ການຊ່ວຍເຫຼືອລ້ຳ ແລະ ກູ້ຢືມ | 26-28% |
| | ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ | 50-56% |
| | ການປ່ອຍສິນເຊື່ອ ແລະ ການລົງທຶນຂອງປະຊາຊົນ | 10-12% |
| | ການລົງທຶນໃສ່ຂະແໜງເສດຖະກິດ | 40% |
| | ການລົງທຶນໃສ່ຂະແໜງສັງຄົມ | 30% |
| | ການລົງທຶນໃສ່ການກໍ່ສ້າງໂຄງລ່າງ (ທາງ ແລະ ເຄຫາ ສະຖານ) | 30% |
| 7. | ແຮງງານ ແລະ ການຈ້າງງານ | |
| | ກຳລັງແຮງງານທີ່ຕ້ອງການມີວຽກເຮັດງານທຳ | 3,24 ລ້ານຄົນ |
| | ຄວາມຕ້ອງການແຮງງານ | 3,33 ລ້ານຄົນ |
| | ກຳລັງແຮງງານໃນຂະແໜງກະສິກຳ | 70% |
| | ກຳລັງແຮງງານໃນຂະແໜງອຸດສະຫະກຳ | 7% |
| | ກຳລັງແຮງງານໃນຂະແໜງບໍລິການ | 23% |
| 8. | ຄາດໝາຍທາງສັງຄົມ | |
| | ຈຳນວນພົນລະເມືອງ ໃນປີ 2015 (ລ້ານຄົນ) | 6,9 |
| | ລາຍໄດ້ສະເລ່ຍຕໍ່ຫົວຄົນ (ໂດລາຕໍ່ຄົນຕໍ່ປີ) | 1.700 |
| | ອັດຕາຄວາມທຸກຍາກ (%) | 19 |
| | ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າ ມາດຕະຖານ (%) | 22 |
| | ອັດຕາຄອບຄົວທຸກຍາກໄດ້ຊົມໃຊ້ໄຟຟ້າ ຕໍ່ຄອບຄົວທັງໝົດ | 80% |

## ເອກະສານຊ້ອນທ້າຍ 4: ບັນດາເປົ້າໝາຍ, ຄາດໝາຍ ແລະ ຕົວຊີ້ວັດໃນ MDGs

### <u>ເປົ້າໝາຍທີ 1</u>: ລຶບລ້າງຄວາມທຸກຍາກ ແລະ ໄພອຶດຫິວ

| ລ/ດ | | 1990 | 2000 | 2005 | ຄາດໝາຍ 2015 | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **ຄາດໝາຍ 1A: ຫລຸດອັດຕາສ່ວນຂອງ ຈຳນວນປະຊາກອນທີ່ມີລາຍຮັບຕ່ຳກ່ວາ 1 ໂດລາ ຕໍ່ມື້ ລົງໃຫ້ໄດ້ເຄິ່ງໜຶ່ງ ລະຫວ່າງປີ 1990-2015** | | | | | | |
| 1 | ອັດຕາສ່ວນຂອງຈຳນວນປະຊາກອນທີ່ຢູ່ຕ່ຳກ່ວາເສັ້ນຄວາມທຸກຍາກ(%) | 46 (1992) | | 26,8 (2008) | 24 | ຫ້ອງການຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມ ທຸກຍາກ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ ການເງິນ, ກະຊວງ ກະສິກຳ, ກະຊວງສາທາລະນະສຸກ, ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນໆ |
| 2 | ອັດຕາສ່ວນລະດັບການຫລຸດໂຕນກັນຂອງຄວາມທຸກຍາກ (%) | 12 (1992) | | 8 (2002) | 6 | |
| 3 | ອັດຕາສ່ວນການຊົມໃຊ້ຕົວຈິງຂອງກຸ່ມປະຊາກອນທຸກຍາກທີ່ສຸດ (%) | 9 (1992) | | 8 (2002) | ບໍ່ມີ | |
| **ຄາດໝາຍ 1B: ຫລຸດອັດຕາສ່ວນຄົນຂາດ ສານອາຫານໃນ ປີ 1990 ລົງໃຫ້ໄດ້ເຄິ່ງໜຶ່ງ ໃນປີ 2005** | | | | | | |
| 4 | ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກ່ວາ ມາດຕະຖານ (%) | 44 (1993) | 40 | 37 (2006) | 22 | ຫ້ອງການຊີ້ນຳພັດທະນາຊົນນະບົດ ແລະລຶບລ້າງ ຄວາມ ທຸກຍາກແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງ ກະສິກຳ-ປ່າໄມ້, ກະຊວງສາທາລະນະສຸກ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ |
| 5 | ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ເຕ້ຍ (%) | 48 (1993) | 42 | 40 (2006) | 34 | |
| 6 | ອັດຕາສ່ວນປະຊາກອນທີ່ມີລະດັບການກິນອາຫານຕ່ຳກວ່າມາດຕະຖານ (%) | 32 (1993) | 28 | 22 (2006) | 21 | |
| **ຄາດໝາຍ 1C: ບັນລຸການຈ້າງງານ ແລະ ການມີວຽກເຮັດງານທຳຢ່າງເໝາະສົມ ລວມທັງແມ່ຍິງ ແລະ ໄວໜຸ່ມ** | | | | | | |
| 7 | ອັດຕາການເຕີບໂຕຂອງ GDP ຕໍ່ຄົນທີ່ເຮັດວຽກ (%) | | | 8,5 | ບໍ່ມີ | ກະຊວງແຜນການ ແລະ ການລົງທຶນ, ກະຊວງ |

| | | | | | | |
|---|---|---|---|---|---|---|
| 8 | ອັດຕາສ່ວນການມີວຽກເຮັດງານທຳຂອງປະຊາກອນ (%) | | | 49 | ບໍ່ມີ | ແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງ ການເງິນ, ກະຊວງ ສຶກສາ ແລະ ກະຊວງ ກະສິກຳ-ປ່າໄມ້ |
| 9 | ອັດຕາສ່ວນການເຮັດວຽກດ້ວຍຕົນເອງ(ລວມທັງຊ່ວຍຄອບຄົວ) ຕໍ່ການຈ້າງງານທັງໝົດ (%) | | | 88 | ບໍ່ມີ | |

ແຫລ່ງຂໍ້ມູນ: ບົດລາຍງານຄວາມຄືບໜ້າຈັດຕັ້ງປະຕິບັດ MDG II ຂອງ ສປປ ລາວ 2008, ການສຳຫຼວດພົນລະເມືອງ 1995, 2005, LECS1, LECS2, LECS3, LECS4, MICs2, MICs

## <u>ເປົ້າໝາຍທີ 2</u>: ໃຫ້ທຸກຄົນໄດ້ຮັບການສຶກສາຂັ້ນປະຖົມຢ່າງທົ່ວເຖິງ

| ລ/ດ | ຕົວຊີ້ບອກ | 1990 | 2000 | 2005 | ຄາດໝາຍ 2015 | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **ຄາດໝາຍ2: ຮັບປະກັນໃຫ້ເດັກທຸກຄົນຢູ່ທົ່ວທຸກ ຫົນແຫ່ງ, ທັງຍິງ ແລະ ຊາຍສາມາດຮຽນຈົບຫຼັກ ສູດຊັ້ນປະຖົມຢ່າງທົ່ວເຖິງກັນພາຍໃນ ປີ 2015.** | | | | | | |
| 1 | ອັດຕາເຂົ້າຮຽນສຸດທິຂອງຊັ້ນປະຖົມ (%) | 58 (1991) | | 89.2 (2008) | 98 | ຫ້ອງການຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມ ທຸກຍາກ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ ການເງິນ, ກະຊວງ ກະສິກຳ, ກະຊວງສາທາລະນະສຸກ, ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນໆ |
| 2 | ອັດຕາສ່ວນຂອງນັກຮຽນທີ່ເຂົ້າຮຽນຊັ້ນ ປ1 ທີ່ສືບຕໍ່ ຮຽນຮອດ ຊັ້ນ ປ 5 (% ) | 47.7 (1991) | | 67 (2008) | 95 | |
| 3 | ອັດຕາການຮູ້ໜັງສືໃນກຸ່ມອາຍຸ 15-24 ປີ ( % ) | | 78.5 (2001) | 84 | 99 | |

ແຫລ່ງຂໍ້ມູນ: ບົດສະຫລຸບລາຍງານປະຈຳປີ ຂອງກະຊວງສຶກສາ, ການສຳຫຼວດພົນລະເມືອງ2005, ການສຳຫຼວດຄວາມຮູ້ໜັງສືແຫ່ງຊາດ 2001

## <u>ເປົ້າໝາຍທີ 3</u>: ສົ່ງເສີມບົດບາດຍິງ-ຊາຍ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ

| ລ/ດ | | 1990 | 2000 | 2005 | ຄາດໝາຍ 2015 | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **ຄາດໝາຍ3: ລຶບລ້າງຄວາມບໍ່ສະເໝີພາບລະ ຫວ່າງຍິງ-ຊາຍ ຢູ່ໃນການສຶກສາທຸກລະດັບ** | | | | | | |

| | | | | | | |
|---|---|---|---|---|---|---|
| 1 | ອັດຕາສ່ວນການເຂົ້າຮຽນຂອງເດັກຍິງຕໍ່ເດັກຊາຍໃນ: | | | | | ກະຊວງສຶກສາ, ກະຊວງ ແຜນການ ແລະ ການ ລົງທຶນ, ກະຊວງການເງິນ, ສູນກາງຊາວໜຸ່ມ ປະຊາຊົນປະຕິວັດ ລາວ, ສູນກາງສະຫະພັນ ແມ່ຍິງ, ສູນກາງແນວລາວສ້າງ ຊາດ, ສະພາ ແຫ່ງຊາດ |
| | ຊັ້ນປະຖົມ (% ) | 77 (1991) | | 86 (2006) | 100 | |
| | ມັດທະຍົມຕົ້ນ (%) | 66 (1990) | | 78 (2006) | 100 | |
| | ມັດທະຍົມຕອນປາຍ(%) | 56 (1991) | | 74 (2006) | 100 | |
| | ແລະ ຊັ້ນສູງ(%) | 49 (1991) | | 62 (2006) | 100 | |
| | ອັດຕາສ່ວນແມ່ຍິງທີ່ຮູ້ໜັງສື ທຽບກັບ ຜູ້ຊາຍທີ່ຮູ້ໜັງສືໃນກຸ່ມອາຍຸ 15-24 ປີ (%) | 81.5 (1995) | | ບໍ່ມີ | 100 | |
| 2 | ອັດຕາສ່ວນແມ່ຍິງເຮັດວຽກ ໃນຂະແໜງ ທີ່ບໍ່ແມ່ນ ກະສິກຳ (%)) | 38 (1995) | | 50 (2006) | ບໍ່ມີ | |
| 3 | ອັດຕາສ່ວນສະມາຊິກສະພາທີ່ເປັນເພດຍິງ(%) | 6.3 | | 25 (2008) | ບໍ່ມີ | |

ແຫລ່ງຂໍ້ມູນ: ບົດສະຫລຸບລາຍງານປະຈຳປີ ຂອງກະຊວງສຶກສາ, ການສຳຫຼວດພົນລະເມືອງ2005, ການສຳຫຼວດຄວາມຮູ້ໜັງສືແຫ່ງຊາດ, ການສຳຫຼວດເສດຖະກິດ 2007

## <u>ເປົ້າໝາຍທີ 4</u>: ຫລຸດຜ່ອນການເສຍຊີວິດຂອງເດັກນ້ອຍ

| ລ/ດ | | 1990 | 2000 | 2005 | ຄາດໝາຍ 2015 | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **ຄາດໝາຍ4: ຫລຸດອັດຕາການຕາຍຂອງເດັກ ໃຫ້ໄດ້ 2/3 ໃນປີ 2015** | | | | | | |

| | | | | | | |
|---|---|---|---|---|---|---|
| 1 | ອັດຕາການຕາຍຂອງເດັກລຸ່ມ 5 ປີ ຕໍ່ເດັກເກີດມີຊີວິດ 1.000 ຄົນ | | | 98 | 80 | ກະຊວງສາທາລະນະສຸກ, ກະຊວງສຶກສາ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ ການເງິນ, ສູນກາງຊາວໜຸ່ມປະຊາຊົນປະຕິວັດ ລາວ, ສູນກາງສະຫະພັນແມ່ຍິງລາວ, ສູນກາງ ແນວລາວສ້າງຊາດ |
| 2 | ອັດຕາສ່ວນເດັກນ້ອຍຕ່ຳກວ່າ 1 ປີ ຕໍ່ເດັກເກີດມີຊີວິດ 1.000 ຄົນ | | | 70 | 49 | |
| 3 | ອັດຕາການສັກຢາກັນໝາກແດງໃຫ້ເດັກ ນ້ອຍ 1 ປີ (%) | | | 69 | 90 | |

ແຫລ່ງຂໍ້ມູນ: ການສຳຫຼວດພົນລະເມືອງ 1995, 2005 ແລະ ການສຳຫຼວດສຸຂະພາບຈະເລີນພັນ2000

## <u>ເປົ້າໝາຍທີ 5</u>: ສິ່ງເສີມສຸຂະພາບຂອງແມ່

| ລ/ດ | | 1990 | 2000 | 2005 | ຄາດໝາຍ 2015 | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **ຄາດໝາຍ5A: ຫລຸດຜ່ອນການຕາຍຂອງແມ່ລົງໃຫ້ໄດ້ 3/4** | | | | | | |
| 1 | ອັດຕາການຕາຍຂອງແມ່(ຕໍ່ເດັກເກີດມີຊີວິດ 100.000 ຄົນ) | | | 405 | 80 | ກະຊວງສາທາລະນະສຸກ, ສູນກາງຊາວໜຸ່ມປະ ຊາຊົນປະຕິວັດລາວ, ສູນກາງສະຫະພັນແມ່ຍິງ ລາວ |
| 2 | ອັດຕາການເກີດໂດຍມີແພດຊ່ວຍ (%) | | | 23 | 49 | |
| **ຄາດໝາຍ5B: ຮັບປະກັນການເຂົ້າເຖິງການບໍລິການສຸຂະພາບຈະເລີນພັນຢ່າງທົ່ວເຖິງ** | | | | | | |
| 1 | ອັດຕາຄຸມກຳເນີດ | | | 38 | 55 | ກະຊວງສາທາລະນະສຸກ, ກະຊວງ ສຶກສາ, ສູນ ກາງຊາວໜຸ່ມປະຊາ ຊົນປະຕິວັດລາວ, ສູນກາງ ສະ ຫະພັນແມ່ຍິງ |
| | ອັດຕາການຈະເລີນພັນ | | | 76 | ບໍ່ມີ | |
| 2 | ອັດຕາການປົກຄຸມການກວດກ່ອນເກີດ | | | 28,5 | 69 | |

| | | | | | | |
|---|---|---|---|---|---|---|
| 3 | ອັດຕາການຄຸມກຳເນີດທີ່ບໍ່ໄດ້ຮັບການບໍລິການ<br>Unmet need for family planning | | | 27 | 50 | |

ແຫລ່ງຂໍ້ມູນ: ການສຳຫຼວດພົນລະເມືອງ 1995, 2005 ແລະ ການສຳຫຼວດສຸຂະພາບຈະເລີນພັນ2000 ແລະ 2005

## <u>ເປົ້າໝາຍທີ 6</u>: ສະກັດກັ້ນການແຜ່ລະບາດ ຂອງ HIV, ໄຂ້ຍຸງ ແລະ ພະ ຍາດຕິດຕໍ່ອື່ນໆ

| ລ/ດ | | 1990 | 2000 | 2005 | ຄາດໝາຍ 2015 | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **ຄາດໝາຍ 6A: ສະກັດກັ້ນການແຜ່ລະບາດຂອງ HIV/AIDs** | | | | | | |
| 1 | ອັດຕາການຕິດເຊື້ອ HIV ໃນກຸ່ມປະຊາກອນທົ່ວໄປ (%) | | | 0.1 (2007) | < 1 | ກະຊວງສາທາລະນະສຸກ, ກະຊວງສຶກສາ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສູນກາງສະຫະພັນແມ່ຍິງ |
| | ອັດຕາການຕິດເຊື້ອ HIV ໃນກຸ່ມປະຊາກອນ 15 -24 ປີ (%) | | | ບໍ່ມີ | < 5 | |
| | ອັດຕາການຕິດເຊື້ອ HIV ໃນກຸ່ມສາວບໍລິການ 15-49 ປີ (%) | | | 2 (2004) | < 5 | |
| 2 | ອັດຕາການຊົມໃຊ້ຖົງຢາງອານາໄມໃນກຸ່ມສາວບໍລິການ (%) | | | 54,4 (2004) | ບໍ່ມີ | |
| **ຄາດໝາຍ6B: ສະກັດກັ້ນການແຜ່ລະບາດຂອງພະຍາດໄຂ້ຍຸງແລະພະຍາດຕິດຕໍ່ອື່ນໆ** | | | | | | |
| 1 | ອັດຕາການຕາຍຍ້ອນໄຂ້ຍຸງຕໍ່ປະຊາກອນ 100.000 ຄົນ | | | 0.4 (2006) | 0,2 | ກະຊວງສາທາລະນະສຸກສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສູນກາງສະຫະພັນແມ່ຍິງລາວ |
| | ອັດຕາການເປັນໄຂ້ຍຸງຕໍ່ປະຊາກອນ 1.000 ຄົນ | | | 3 (2006) | ບໍ່ມີ | |

| | | | | | | |
|---|---|---|---|---|---|---|
| | ອັດຕາສ່ວນເດັກນ້ອຍນອນໃນມຸ້ງ (%) | | | 87 (2006) | 95 | |
| | ອັດຕາການເປັນວັນນະໂລກ ຕໍ່ປະຊາ ກອນ 100.000 ຄົນ | | | 306 | 240 | |
| | ອັດຕາຄົນເປັນວັນນະໂລກທີ່ກວດພົບແລະໄດ້ຮັບການປິ່ນປົວໂດຍມີ ແພດຕິດຕາມໂດຍກົງ (DOTS) (%) | | | 72 (2007) | 70 | |
| 2 | ອັດຕາຄົນເປັນວັນນະໂລກ ແລະ ໄດ້ຮັບການປິ່ນປົວໂດຍມີແພດ ຕິດຕາມໂດຍກົງ (DOTS) (%) | | | 90 (2007) | 85 | |

ແຫລ່ງຂໍ້ມູນ: ສູນຕ້ານເອດ, ກະຊວງສາທາ, ອົງການອານາໄມໂລກ, UNAIDS, MICs2, MICs3

## <u>ເປົ້າໝາຍທີ 7</u>: ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ

| ລ/ດ | | 1990 | 2000 | 2005 | ຄາດໝາຍ 2015 | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **ຄາດໝາຍ7A: ຜັນຂະຫຍາຍບັນດາຫຼັກການພັດທະນາແບບຍືນຍົງເຂົ້າໃນນະໂຍບາຍ, ແຜນງານຂອງປະເທດ ແລະ ປັບປຸງສະພາບແວດລ້ອມທີ່ສູນເສຍ** | | | | | | |
| 1 | ອັດຕາສ່ວນການປົກຫຸ້ມຂອງປ່າໄມ້ % | | 42 (2002) | | ບໍ່ມີ | ກະຊວງກະສິກຳ-ປ່າໄມ້, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ອົງການວິທະຍາສາດ ເຕັກໂນໂລຍີແຫ່ງຊາດ, ກະຊວງສຶກສາທິການ, ອົງການຈັດຕັ້ງມະຫາຊົນ |
| | ອັດຕາການຊົມໃຊ້ ໂອຊີແຊນ | | | 18 (2006) | ບໍ່ມີ | |
| | ອັດຕາສ່ວນແຫຼ່ງນ້ຳທັງໝົດທີ່ນຳໃຊ | | | | ບໍ່ມີ | |
| **ຄາດໝາຍ7B: ຫລຸດຜ່ອນການສູນເສຍຊີວະນາໆພັນ** | | | | | | |

| | | | | | | |
|---|---|---|---|---|---|---|
| 1 | ອັດຕາສ່ວນພືດພັນໄມ້ຫລືສັດທີ່ທີ່ຖືກຮຸກຮານ ແລະ ຈະສູນພັນ | | | 1,6 (2004) | ບໍ່ມີ | ກະຊວງກະສິກຳ-ປ່າໄມ້, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ອົງການວິທະຍາສາດເຕັກໂນໂລຍີແຫ່ງຊາດ, ກະຊວງສຶກສາທິການ, ອົງການຈັດຕັ້ງມະຫາຊົນ |
| **ຄາດໝາຍ7C: ຫລຸດຜ່ອນອັດຕາສ່ວນປະຊາ ກອນບໍ່ສາມາດເຂົ້າເຖິງນ້ຳສະອາດໃຫ້ເຫລືອເຄິ່ງໜຶ່ງໃນປີ 2015** | | | | | | |
| 1 | ອັດຕາສ່ວນປະຊາກອນຊົມໃຊ້ນ້ຳສະອາດ (%) | | | 74 (2008) | 80 | ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ອົງການຈັດຕັ້ງມະຫາຊົນ |
| | ອັດຕາສ່ວນປະຊາກອນຊົມໃຊ້ວິດຖ່າຍ (%) | | | 49 (2008) | 60 | |

ແຫລ່ງຂໍ້ມູນ: ກົມປ່າໄມ້, ກະຊວງກະສິກຳ, ອົງການນ້ຳ ແລະ ສິ່ງແວດລ້ອມ, ກະຊວງສາທາ

## <u>ເປົ້າໝາຍທີ 8</u>: ສ້າງຄູ່ຮ່ວມງານດ້ານການພັດທະນາໃນຂອບເຂດທົ່ວໂລກ.

(ສຳລັບເປົ້າໝາຍນີ້ແມ່ນຍັງຢູ່ໃນຂັ້ນຕອນການກຳນົດຄາດໝາຍຂອງຕົວຊີ້ວັດຕ່າງໆ ດັ່ງນັ້ນ ຈຶ່ງບໍ່ທັນສາມາດຄາດຄະເນໄດ້ວ່າມີຄວາມຢັ້ນໄປໄດ້ທີ່ຈະບັນລຸ ຫລືບໍ່)

| ລ/ດ | | 1990 | 2000 | 2005 | ຄາດໝາຍ 2015 | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **ຄາດໝາຍ8A: ສ້າງລະບົບການຄ້າ ແລະ ການເງິນທີ່ເປີດກວ້າງບົນພື້ນຖານລະບຽບຫຼັກການ, ສາມາດຄາດຄະເນໄດ້ລ່ວງໜ້າ ແລະປາສະຈາກການກີດກັ້ນແບ່ງແຍກ** | | | | | | |
| 1 | ອັດຕາພາສີທີ່ເກັບຈາກການສົ່ງອອກຜະລິດຕະ ພັນກະສິກຳ, ເຄື່ອງນຸ່ງ ແລະ ແຜ່ນແພ ເພື່ອພັດທະ ນາເສດຖະກິດຕະຫຼາດໃຫ້ສອດຄ່ອງ ກັບສປປ ລາວ: | | | | | ກະຊວງອຸດສະຫະກຳ-ການຄ້າ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ ໂຍທາທິການ-ຂົນສົ່ງ, ອົງການໄປສະນີ ແລະ ໂທ ລະຄົມມະນາຄົມ, ອົງການ ວິທະຍາສາດເຕັກໂນໂລຍີແຫ່ງຊາດ |
| | ສະຖານະພາບ MFN | | | 8 | | |
| | ຂໍ້ຕົກລົງສິດທິພິເສດທາງການຄ້າ | | | 6 | ບໍ່ມີ | |

| | | | | | | |
|---|---|---|---|---|---|---|
| 2 | ສັດສ່ວນການສົ່ງອອກຜະລິດຕະພັນກະສິກຳ, ເຄື່ອງນຸ່ງ, ແຜ່ນແພ (ເປັນມູນຄ່າ) ເພື່ອພັດທະນາເສດຖະກິດຕະ ຫລາດຈາກການຍົກເວັ້ນພາສີ | | | 99 | ບໍ່ມີ | |
| 3 | ລາຄາພາສີທີ່ນຳເຂົ້າຕໍ່ 1 ຕູ້ container( U$) | | | 1.690 | ບໍ່ມີ | |
| 4 | ລາຄາພາສີທີ່ສົ່ງອອກຕໍ່ 1 ຕູ້ container( U$) | | | 1.420 | ບໍ່ມີ | |
| **ຄາດໝາຍ8B: ເພີ່ມຄວາມເອົາໃຈໃສ່ຕໍ່ກັບຄວາມຈຳເປັນພິເສດຂອງບັນດາປະເທດກຳລັງພັດທະນາ ທີ່ບໍ່ມີຊາຍແດນຕິດກັບທະເລ** | | | | | | |
| 1 | ອັດຕາສ່ວນການຊ່ວຍເຫຼືອສອງຝ່າຍ ຂອງປະເທດ OECD ຕໍ່ກັບການບໍລິການທາງສັງຄົມ | | | 35 (2004) | ບໍ່ມີ | ກະຊວງອຸດສະຫະກຳ-ການຄ້າ, ກະຊວງ ການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ ໂຍທາທິການ-ຂົນສົ່ງ, ອົງ ການໄປສະນີ ແລະ ໂທ ລະຄົມມະນາຄົມ, ອົງການວິທະຍາ ສາດເຕັກໂນໂລຍີແຫ່ງຊາດ |
| | ອັດຕາສ່ວນການຊ່ວຍເຫຼືອສອງຝ່າຍ ຂອງປະເທດ OECD ເພື່ອການພັດທະນາ | | | | ບໍ່ມີ | |
| | ສັດສ່ວນການຊ່ວຍເຫຼືອທຽບກັບ GDP, ລາຍຮັບຕໍ່ ຫົວຄົນ (US$) | | | 1.060 (2006) | ບໍ່ມີ | |
| | ສັດສ່ວນການຊ່ວຍເຫຼືອເພື່ອການພັດທະນາ ທຽບກັບ GNI | | | 12 (2006) | ບໍ່ມີ | |
| | ສັດສ່ວນການຊ່ວຍເຫຼືອເພື່ອສ້າງຂີດຄວາມສາມາດດ້ານການຄ້າ | | | | ບໍ່ມີ | |
| | ສັດສ່ວນການຊ່ວຍເຫຼືອລ້າຕໍ່ປະເທດດ້ອຍ ພັດທະນາຄື ສປປ ລາວ | | | 1,5 (2006) | ບໍ່ມີ | |
| | ສັດສ່ວນການຊ່ວຍເຫຼືອຂອງປະເທດ OECD ທີ່ ສປປ ລາວ ໄດ້ຮັບ ທຽບກັບ GDP | | | 5,4 (2006) | ບໍ່ມີ | |
| **ຄາດໝາຍ8C: ການແກ້ໄຂບັນຫາໜີ້ສິນ** | | | | | | |

| | | | | | | |
|---|---|---|---|---|---|---|
| 1 | % ການບໍລິການທາງໜ້ີສິນທຽບກັບການສົ່ງ ອອກສິນຄ້າ ແລະ ການບໍລິການ | | | 35 (2004) | ບໍ່ມີ | ກະຊວງອຸດສະຫະກຳ-ການຄ້າ, ກະຊວງ ການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ ໂຍທາທິການ-ຂົນສົ່ງ, ອົງ ການໄປສະນີ ແລະ ໂທ ລະຄົມມະນາຄົມ, ອົງການວິທະຍາ ສາດເຕັກໂນໂລຍີແຫ່ງຊາດ |
| **ຄາດໝາຍ8D: ການຮ່ວມມືກັບພາກເອກະຊົນ ເພື່ອເຮັດໃຫ້ປະຊາຊົນໄດ້ນຳໃຊ້ ເທັກໂນໂລຊີໃໝ່** | | | | | | |
| 1 | ການນຳໃຊ້ໂທລະສັບຕໍ່ 100 ຄົນ | | | 1,6 (2006) | ບໍ່ມີ | ກະຊວງອຸດສະຫະກຳ-ການຄ້າ, ກະຊວງ ການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ ໂຍທາທິການ-ຂົນສົ່ງ, ອົງການໄປສະນີ ແລະ ໂທ ລະຄົມມະນາຄົມ, ອົງການວິທະຍາ ສາດເຕັກໂນໂລຍີແຫ່ງຊາດ |
| | ການນຳໃຊ້ໂທລະສັບມືຖືຕໍ່ 100 ຄົນ | | | 13,5 (2006) | ບໍ່ມີ | |
| | ການນຳໃຊ້ອິນເຕີແນ໋ດຕໍ່ 100 ຄົນ | | | 0,08 (2006) | ບໍ່ມີ | |
| | ການເຂົ້າເຖິງລາຍການວິທະຍຸກະຈາຍສຽງ | | 46 (2002) | | ບໍ່ມີ | |
| | ການເຂົ້າເຖິງການຮັບຊົມໂທລະພາບ | | 41 (2002) | | ບໍ່ມີ | |

ແຫລ່ງຂໍ້ມູນ: ບົດລາຍງານການຊ່ວຍເຫລືອຂອງຕ່າງປະເທດ, UN, OECD